



# ການສົ່ງອອກໄປສະຫະພາບເອີຣົບ

## ໂດຍນຳໃຊ້ສິດທິພິເສດທາງການຄ້າ ຈາກ ແຜນ ງານ EBA (ທຸກຢ່າງ ຍົກເວັ້ນອາວຸດ)





ໂຄງການເຊື່ອມໂຍງ ສປປ ລາວ ໃນ ການເຊື່ອມໂຍງໃນພາກພື້ນອາຊຽນ ຈາກສະຫະພາບເອີຣົບ (ARISE Plus Lao PDR)

International Trade Centre

Funded by the European Union

ARISE+ Lao PDR

# ການສົ່ງອອກໄປສະຫະພາບເອີຣົບ

## ໂດຍນຳໃຊ້ສິດທິພິເສດທາງການຄ້າ ຈາກ ແຜນງານ EBA (ທຸກຢ່າງຍົກເວັ້ນອາວຸດ)

**ຄູ່ມືທຸລະກິດ EU EBA - ສຳລັບ ສປປ ລາວ**

ເອກະສານ ສັບບັບນີ້ ໄດ້ຖືກສ້າງຂື້ນ ໂດຍໄດ້ຮັບການຊ່ວຍເຫຼືອ ຈາກ ສະຫະພາບເອີຣົບ.

ເນື້ອໃນ ຂອງ ເອກະສານສະບັບນີ້ ບໍ່ສາມາດສະທ້ອນໃຫ້ເຫັນເຖິງມຸມມອງ ຂອງ ສະຫະພາບເອີຣົບ ຫຼື ສູນການຄ້າສາກົນ ບໍ່ວ່າຈະເປັນທາງໃດກໍຕາມ.

# ກ່ຽວກັບໂຄງການ

'ການສົ່ງອອກໄປສະຫະພາບເອີຣົບ – **ໂດຍນຳໃຊ້ສິດທິພິເສດ ທາງການຄ້າ ຈາກແຜນງານ** EBA (**ທຸກຢ່າງຍົກເວັ້ນອາວຸດ**)' (**ຊຶ່ງຕໍ່ໄປໝາຍເຖິງ ຄູ່ມື** EU EBA) ໄດ້ຖືກສ້າງຂຶ້ນ ເປັນສ່ວນໜຶ່ງ ຂອງ ໂຄງການເຊື່ອມໂຍງ ສປປ ລາວ ໃນການເຊື່ອມໂຍງ ໃນພາກພື້ນອາຊຽນ ຈາກສະຫະພາບເອີຣົບ (ARISE Plus Lao).

ສູນການຄ້າສາກົນ (ITC), ຊຶ່ງເປັນອົງການຈັດຕັ້ງຕົວແທນ ທີ່ຖືກສ້າງຂຶ້ນຮ່ວມກັນ ລະຫວ່າງ ອົງການການຄ້າໂລກ (WTO) ແລະ ອົງການສະຫະປະຊາຊາດ (UN), ເປັນຜູ້ໃຫ້ການສະໜັບສະໜູນ ລັດຖະບານ ແຫ່ງ ສປປ ລາວ ໃນການຈັດຕັ້ງປະຕິບັດ ໂຄງການ "ເຊື່ອມໂຍງ ສປປ ລາວ ໃນການເຊື່ອມໂຍງ ໃນພາກພື້ນອາຊຽນ ຈາກສະຫະພາບເອີຣົບ (ARISE Plus Lao PDR)" ຊຶ່ງເປັນໂຄງການ ທີ່ມີໄລຍະເວລາ 4 ປີ ທີ່ໄດ້ຮັບການສະໜັບສະໜູນທຶນ ຈາກ ສະຫະພາບເອີຣົບ (EU). ຄາດໝາຍ ຂອງໂຄງການ ແມ່ນການປັບປຸງສະພາບແວດລ້ອມທາງທຸລະກິດໂດຍລວມ ແລະ ເພີ່ມການມີສ່ວນຮ່ວມ ຢູ່ໃນຕ່ອງໂສ້ມູນຄ່າໂລກ.

ພາຍໃຕ້ ກອບ ຂອງໂຄງການ ARISE Plus Lao PDR, ສູນການຄ້າສາກົນ (ITC) ກຳລັງດຳເນີນກິດຈະກຳ ເພື່ອສ້າງຄວາມເຂັ້ມແຂງ ຕໍ່ຄວາມເຂົ້າໃຈ ຂອງຫົວໜ່ວຍທຸລະກິດຂອງລາວ ກ່ຽວກັບ ໂອກາດທີ່ມີຢູ່ໃນຕະຫຼາດ ຂອງ ສະຫະພາບເອີຣົບ, ໂດຍສະເພາະແມ່ນການເຂົ້າເຖິງຕະຫຼາດ ແບບປອດພາສີ, ແບບບໍ່ມີໂຄຕ້າ ທີ່ມີໃຫ້ແກ່ ສປປ ລາວ ພາຍໃຕ້ ແຜນງານ EBA (ທຸກຢ່າງຍົກເວັ້ນອາວຸດ) ຂອງສະຫະພາບເອີຣົບ; ພ້ອມກັນນັ້ນ ກໍປັບປຸງ ຄວາມອາດສາມາດ ໃຫ້ໄດ້ຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ເພື່ອໃຫ້ໄດ້ຜົນປະໂຫຍດຈາກການເຂົ້າເຖິງຕະຫຼາດດັ່ງກ່າວ ຂອງ ສະຫະພາບເອີຣົບ.

ກ່ຽວກັບບັນຫານີ້, ຄູ່ມືທຸລະກິດ ວ່າດ້ວຍ ແຜນງານ EBA ທີ່ໄດ້ຖືກລວບລວມຂຶ້ນມານີ້ ແມ່ນສ້າງຂຶ້ນ ເພື່ອຊ່ວຍໃຫ້ຫົວໜ່ວຍທຸລະກິດ ຂອງລາວເຂົ້າໃຈເຖິງ ການນຳໃຊ້ ແຜນງານ ການເຂົ້າເຖິງຕະຫຼາດ ຂອງ ສະຫະພາບເອີຣົບ ດ້ວຍສິດທິພິເສດ; ແລະ ທຳໜ້າທີ່ ເປັນສະເໝືອນ ຄູ່ມືແນະນຳເປັນແຕ່ລະບາດກ້າວ ແກ່ຫົວໜ່ວຍທຸລະກິດ ເພື່ອຕອບສະໜອງ ໃຫ້ໄດ້ຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ແລະ ຂັ້ນຕອນ ທີ່ຈະຕ້ອງໄດ້ປະຕິບັດຕາມ ເພື່ອທີ່ຈະສົ່ງອອກໄປສະຫະພາບເອີຣົບ ແລະ ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງຕະຫຼາດ ແບບປອດພາສີ ພາຍໃຕ້ແຜນງານ EBA.

**ຂໍ້ມູນ ທີ່ຢູ່ໃນຄູ່ມືທຸລະກິດສະບັບນີ້ ໄດ້ຖືກເກັບກຳ ໃນຊ່ວງໄລຍະ ລະຫວ່າງ ເດືອນກໍລະກົດ ປີ 2020 ຫາ ເດືອນມີນາ ປີ 2021. ຄູ່ມື ສະໜອງ ພາບລວມ ຂອງຂໍ້ມູນທີ່ກ່ຽວຂ້ອງ ແກ່ຜູ້ສົ່ງອອກ ຈາກ ສປປ ລາວ. ຄູ່ມື ບໍ່ແມ່ນຄຳແນະນຳ ທາງກົດໝາຍ ແລະ ບໍ່ໄດ້ສະໜອງ ຂໍ້ມູນຢ່າງທົ່ວເຖິງ ກ່ຽວກັບໝົດທຸກຂະແໜງການ. ມັນເປັນຄວາມຮັບຜິດຊອບ ຂອງຜູ້ສົ່ງອອກ ຈາກ ສປປ ລາວ ທີ່ຈະຮັບປະກັນໃຫ້ມີຄວາມຖືກຕ້ອງສອດຄ່ອງ ກັບ ບັນດາກົດລະບຽບ ທີ່ກ່ຽວຂ້ອງທັງໝົດ ທີ່ມີຢູ່ໃນ ສປປ ລາວ ແລະ ສະຫະພາບເອີຣົບ.**

© ສູນການຄ້າສາກົນ 2021

ສູນ ITC ຊຸກຍູ້ໃຫ້ມີການຕີພິມຄືນ ແລະ ແປ ເພື່ອໃຫ້ມີການເຜີຍແຜ່ ທີ່ກວ້າງຂວາງຂຶ້ນ. ບົດຄັດຈ້ອນ ອາດຈະພິມອອກໄດ້ ຢ່າງອິດສະຫຼະ ໂດຍໃຫ້ມີການສະແດງຄວາມຮັບຮູ້ ແລະ ບອກແຫຼ່ງທີ່ມາ ຂອງເນື້ອໃນ . ສຳລັບການຕີພິມຄືນ ຫຼື ການແປທີ່ມີຈຳນວນຫຼາຍຂຶ້ນ, ກະລຸນາຕິດຕໍ່ຫາ ສູນ ITC ໂດຍນຳໃຊ້ ແບບຟອມສະເໜີຂໍອະນຸຍາດ ທາງອອນລາຍ: https://www.intracen.org/Reproduction-Permission-Request/

**ສູນການຄ້າສາກົນ (The International Trade Centre)**

ທີ່ຢູ່ຖະໜົນ: ITC, 54–56, Rue de Montbrillant, 1202 Geneva, Switzerland

ທີ່ຢູ່ໄປສະນີ: ITC, Palais des Nations, 1211 Geneva, Switzerland

ໂທລະສັບ: (41-22) 730 01 11

ອີເມວ: itcreg@intracen.org, ເວັບໄຊ: http://www.intracen.org

ARISE+ Lao PDR

Funded by the European Union

# ບົດສະແດງຄວາມຮູ້ບຸນຄຸນ

ສູນການຄ້າສາກົນ (ITC) ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ມາຍັງທຸກພາກສ່ວນ ທີ່ມີສ່ວນຮ່ວມ ໃນການສ້າງ ຄູ່ມືທຸລະກິດ EBA EU ສໍາລັບ ສປປ ລາວ.

ທ່ານ ໂທບີແອັດ ໂດເລ (ທີ່ປຶກສາສາກົນ) ແລະ ທ່ານ ພຸດຕາວັນ ສີທໍາມະວັນ (ທີ່ປຶກສາພາຍໃນ) ເປັນຜູ້ຮັບຜິດຊອບ ໃນການເກັບກໍາຂໍ້ມູນ ແລະ ຮ່າງ ຄູ່ມື. ທ່ານ ຈິນ-ເຊບັດສະຕຽນ ຣິວ, ເຈົ້າໜ້າທີ່ອາວຸໂສ - ດ້ານນະໂຍບາຍທຸລະກິດ ແລະ ການຄ້າ, ແລະ ທ່ານ ວິດຍາ ນາທາເນວ, ທີ່ປຶກສາດ້ານນະໂຍບາຍການຄ້າ (ທັງສອງມາຈາກ ສູນ ITC), ໄດ້ເປັນຜູ້ທົບທວນຄືນ ຄູ່ມື ແລະ ໄດ້ຊີ້ນໍາ ການຮ່າງຄູ່ມື.

ກົມສົ່ງເສີມການຄ້າ ແລະ ກົມນໍາເຂົ້າ ແລະ ສົ່ງອອກ ຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ (MoIC) ແຫ່ງ ສປປ ລາວ ໄດ້ໃຫ້ຄໍາເຫັນ ແລະ ສະໜອງການສະໜັບສະໜູນ ທີ່ມີຄ່າ ຕໍ່ການສ້າງແນວຄວາມຄິດ ຂອງຄູ່ມື ແລະ ໄດ້ດໍາເນີນການທົບທວນຄືນ ຄູ່ມື.

ທ່ານ ເອມີລີ ດາຍລອນ, ທ່ານ ກົບນະພອນ ສູນທອງແດງ ແລະ ທ່ານ ພອນສະໜຸກ ມະຫາວົງ (ທັງໝົດ ຈາກສູນ ITC) ເປັນຜູ້ດໍາເນີນ ກິດຈະກໍາ ທີ່ກ່ຽວຂ້ອງກັບ ການປະສານງານໂຄງການ ເພື່ອສະໜັບສະໜູນ ການສ້າງ ແລະ ສໍາເລັດຄູ່ມື. ທ່ານ ອະເນສາ ຟິນໍຕິ ໄດ້ດັດແກ້ບົດລາຍງານ ແລະ ທ່ານ ນິລັນກິກາ ເຟີນັນໂດ ໄດ້ເປັນຜູ້ອອກແບບ ແລະ ຈັດຮູບແບບ ບົດລາຍງານ.

ຄູ່ມືທຸລະກິດ EBA ຂອງ ສະຫະພາບເອີຣົບ ໄດ້ຖືກສ້າງຂຶ້ນ ພາຍໃຕ້ ໂຄງການ ARISE Plus Lao PDR, ທີ່ໄດ້ຮັບທຶນຈາກ ສະຫະພາບເອີຣົບ.

# ສາລະບານ


ກ່ຽວກັບໂຄງການ ... 3

ບົດສະແດງຄວາມຮູ້ບຸນຄຸນ ... 4

ສາລະບານຕາຕະລາງ ... 9

ສາລະບານຮູບ ... 11

ສາລະບານຫ້ອງ ... 12

ຄໍາ ແລະ ອັກສອນຫຍໍ້ ... 13

ອະທິບາຍຄໍາສັບ ... 15

ກ່ຽວກັບ ຄູ່ມືທຸລະກິດ EU EBA ... 17

ພາກ A: ການທໍາຄວາມເຂົ້າໃຈ ກ່ຽວກັບ ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ ... 20

1.1. ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ EU – ແຜນງານ EBA, ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+ 20

1.2. ສະຖານະພາບ ການເຂົ້າເຖິງຕະຫຼາດ EU ຂອງ ສປປ ລາວ ພາຍໃຕ້ການຈັດສັນສິດທິພິເສດ ທາງການຄ້າ ຂອງຕົນ ... 25

i. ສປປ ລາວ ໃນນາມເປັນຜູ້ໄດ້ຮັບຜົນປະໂຫຍດ ຈາກແຜນງານ EBA ... 25

ii. ການສືບຕໍ່ ທົບທວນຄືນ ແຜນງານ GSP ຂອງ EU ແລະ ການປະຕິຮູບ ທີ່ເປັນໄປໄດ້ ... 26

iii. ຜົນກະທົບ ຈາກການຖອນຕົວ ຂອງ ປະເທດສະຫະລາດຊະອານາຈັກອັງກິດ ແລະ ການເຂົ້າເຖິງ ຕະຫຼາດ ຂອງ ສະຫະລາດຊະອານາຈັກອັງກິດ ດ້ວຍສິດທິພິເສດ ຂອງ ສປປ ລາວ ... 27

ພາກ B: ບັນດາຫຼັກການທົ່ວໄປ – ການສົ່ງອອກໄປ ສະຫະພາບເອີຣົບ (EU) ... 28

2.1. ສັງລວມ ບັນດາຂໍ້ກໍານົດ ຫຼື ຄວາມຕ້ອງການ ຕົ້ນຕໍ ຂອງ ສປປ ລາວ ສໍາລັບ ຜູ້ປະກອບການທີ່ຈະເຂົ້າຮ່ວມໃນການສົ່ງອອກ 28

i. ຮັບໃບຢັ້ງຢືນການຈົດທະບຽນວິສາຫະກິດ ... 28

ii. ຮັບເອົາ ເອກະສານສົ່ງອອກທີ່ກ່ຽວຂ້ອງ: ໃບອະນຸຍາດສົ່ງອອກ ຈາກ ກົມນໍາເຂົ້າ ແລະ ສົ່ງອອກ, ເອກະສານການອະນຸຍາດການສົ່ງອອກ ແລະ ໃບຢັ້ງຢືນອື່ນໆ ທີ່ກ່ຽວຂ້ອງ ... 28

iii. ອໍານວຍຄວາມສະດວກ ຂັ້ນຕອນການສະສາງພາສີ ສໍາລັບ ການສົ່ງອອກ ຜ່ານທາງລະບົບ ASYCUDA ... 29

iv. ການຄົ້ນຄ້ວາສຶກສາ ຄ່າທໍານຽມການສົ່ງອອກ: ພາສີ ແລະ ອາກອນ ... 30

2.2. ອົງປະກອບຕົ້ນຕໍ ສໍາລັບ ຜູ້ສົ່ງອອກ ຈາກ ສປປ ລາວ ໄປຫາ EU ທີ່ຈະໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA . 30

i. ເງື່ອນໄຂມາດຖານ ຂອງຜະລິດຕະພັນ ແລະ ອັດຕາພາສີ ທີ່ກ່ຽວຂ້ອງ ... 31

ii. ກອບ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ຢູ່ໃນ EU ... 31

iii. ກອບ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ຢູ່ໃນ EU ... 32

iv. ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງ ສະຫະພາບເອີຣົບ (EU's Registered Exporter system ຫຼື REX) ... 37

v. ຄ່າທໍານຽມຕ່າງໆ ນອກເໜືອຈາກ ພາສີອາກອນ ... 38

vi. ການນຳເຂົ້າສິນຄ້າ ໄປ EU – ເອກະສານແຈ້ງເສຍພາສີ ....39

vii. ຜົນນຳໃຊ້ ຂອງ ມາດຕະການປົກປ້ອງ ແບບພິເສດ ....39

2.3. ເຄື່ອງມື/ຊັບພະຍາກອນອື່ນໆ ທີ່ມີແກ່ ຜູ້ສົ່ງອອກ ຈາກ ສປປ ລາວ ໄປຫາ EU ....41

i. ເວັບໄຊ Access2Markets ຂອງ ສະຫະພາບເອີຣົບ ....41

ii. ເວັບໄຊ GSP Hub ຂອງ EU ....42

1. ເວັບໄຊ Lao Quality Compass ....43

2. ແຜນທີ່ມາດຕະຖານ ຂອງ ສູນ ITC ....43

3. ຕົວຊ່ວຍອຳນວຍຄວາມສະດວກ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງ ສູນ ITC ....44

4. ປະຕູການຄ້າ ຂອງ ສປປ ລາວ (Lao PDR Trade Portal) ....45

ພາກ C: ກົດລະບຽບ ສະເພາະຂະແໜງການ – ການສົ່ງອອກ ພາຍໃຕ້ EBA ຂອງ EU ....46

3.1. ຜະລິດຕະພັນ ເຄື່ອງນຸ່ງຫົ່ມ ແລະ ແຜ່ນແພ ....48

i. ບາດກ້າວຕົ້ນຕໍ ສຳລັບ ສົ່ງອອກ ເຄື່ອງນຸ່ງຫົ່ມ ແລະ ແຜນແພ ....48

ii. ເນື້ອໃນ ....48

iii. ກົດລະບຽບວິຊາການ ທີ່ມີຜົນນຳໃຊ້ກັບ ເຄື່ອງນຸ່ງຮົ່ມ ແລະ ຜະລິດຕະພັນແຜ່ນແພ ....50

iv. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ຜະລິດຕະພັນເຄື່ອງນຸ່ງຮົ່ມ ແລະ ແຜ່ນແພ ....58

v. ການຕິດສະຫຼາກ ຜະລິດຕະພັນເຄື່ອງນຸ່ງຫົ່ມ ແລະ ແຜ່ນແພ ....61

vi. ຂໍ້ມູນເພີ່ມຕື່ມ/ ການຕິດຕໍ່ ທີ່ສຳຄັນ ....65

3.2 ຜະລິດຕະພັນປະເພດເກີບ ....68

i. ບາດກ້າວຕົ້ນຕໍ ສຳລັບ ສົ່ງອອກ ຜະລິດຕະພັນປະເພດເກີບ ໄປຫາ EU ....68

ii. ເນື້ອໃນ ....69

iii. ກົດລະບຽບ ວິຊາການ ທີ່ມີຜົນນຳໃຊ້ກັບ ຜະລິດຕະພັນປະເພດເກີບ ....69

iv. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ຜະລິດຕະພັນປະເພດເກີບ ....71

v. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການຕິດສະຫຼາກ ແລະ ການຫຸ້ມຫໍ່ ສຳລັບ ຜະລິດຕະພັນປະເພດເກີບ ....74

vi. ຂໍ້ມູນເພີ່ມຕື່ມ/ລາຍລະອຽດການຕິດຕໍ່ ທີ່ສຳຄັນ ....78

3.3 ຜະລິດຕະພັນ ກະສິກຳດິບ ....81

i. ບາດກ້າວຕົ້ນຕໍ ສຳລັບ ສົ່ງອອກ ຜະລິດຕະພັນກະສິກຳດິບ ໄປຫາ EU ....81

ii. ເນື້ອໃນ ....82

iii. ກົດລະບຽບວິຊາການ ທີ່ມີຜົນນຳໃຊ້ກັບ ຜະລິດຕະພັນກະສິກຳດິບ ....83

iv. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ຜະລິດຕະພັນກະສິກຳດິບ ....87

v. ການຕິດສະຫຼາກ ຜະລິດຕະພັນກະສິກຳດິບ ....96

vi. ການຕິດສະຫຼາກ ຜະລິດຕະພັນ ກະສິກຳດິບ ....98

vii. ລະບຽບການສະເພາະ ກ່ຽວກັບ ຜະລິດຕະພັນປອດສານພິດ ....99

viii. ຂໍ້ມູນເພີ່ມຕື່ມ/ທີ່ຢູ່ຕິດຕໍ່ ທີ່ສຳຄັນ ......103

3.4 ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ......106

i. ບາດກ້າວຕົ້ນຕໍ ສຳລັບ ການສົ່ງອອກ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ໄປຫາ EU ......106

ເນື້ອໃນ ......107

ii. ບັນດາກິດລະບຽບວິຊາການ ທີ່ມີຜົນບັງໃຊ້ກັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ......109

iii. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ການສົ່ງອອກ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ......115

iv. ການຕິດສະຫຼາກ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ......125

v. ກົດລະບຽບທົ່ວໄປ ທີ່ຄວບຄຸມ ຜະລິດຕະພັນປອດສານພິດ ......130

vi. ຂໍ້ມູນເພີ່ມຕື່ມ/ທີ່ຢູ່ຕິດຕໍ່ ທີ່ສຳຄັນ ......132

3.5 ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ ......136

i. ບາດກ້າວຕົ້ນຕໍ ສຳລັບ ການສົ່ງອອກ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ ໄປຫາ EU ......136

ii. ເນື້ອໃນ ......137

iii. ບັນດາກິດລະບຽບວິຊາການ ທີ່ມີຜົນບັງໃຊ້ກັບ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ ......138

iv. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ການສົ່ງອອກ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ 141

v. ການຕິດສະຫຼາກ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ ......150

vi. ຂໍ້ມູນເພີ່ມຕື່ມ/ບັນດາອົງການຈັດຕັ້ງທີ່ສຳຄັນ ......155

ເອກະສານຊ້ອນທ້າຍ ......158

ເອກະສານຊ້ອນທ້າຍ I ......159

ແຜນງານ GSP ທີ່ເປັນມາດຕະຖານ ......159

**ເງື່ອນໄຂ ທີ່ຈະໄດ້ຮັບຜົນປະໂຫຍດ ຈາກ ແຜນງານ** GSP **ທີ່ເປັນມາດຕະຖານ** ......159

**ບັນດາຜະລິດຕະພັນ ທີ່ຖືກກວມເອົາ ແລະ ອັດຕາພາສີທີ່ ທີ່ຕອບສະໜອງ ພາຍໃຕ້ແຜນງານ** GSP **ທີ່ເປັນມາດຕະຖານ** ......159

**ຂະແໜງການຜະລິດຕະພັນ – ການຫຼຸດພົ້ນ** ......160

ການຢຸດຕິ ຜົນປະໂຫຍດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ ......160

ແຜນງານ GSP+ ......162

ບັນດາເງື່ອນໄຂ ທີ່ຈະໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP+ ......162

ຜະລິດຕະພັນທີ່ກວມເອົາ ແລະ ອັດຕາພາສີ ທີ່ຕອບສະໜອງ ພາຍໃຕ້ ແຜນງານ GSP+ ......162

ຄວາມຖືກຕ້ອງສອດຄ່ອງກັບ ສົນທິສັນຍາຕ່າງໆ ......163

ການຕິດຕາມ ແລະ ການລາຍງານ ຄວາມຖືກຕ້ອງສອດຄ່ອງ ໂດຍ ປະເທດຜູ້ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP+ 163

ການຢຸດຕິ ຜົນປະໂຫຍດ ຈາກ ແຜນງານ GSP+ ......164

ເອກະສານຊ້ອນທ້າຍ II ..... 165

**ພາກ** A: **ສົນທິສັນຍາຕົ້ນຕໍ ຂອງ ອົງການສະຫະປະຊາຊາດ** (UN )/**ອົງການແຮງງານສາກົນ** (ILO) **ວ່າດ້ວຍ ສິດທິ ຂອງ ມະນຸດ ແລະ ຂອງ ແຮງງານ** ..... 165

ພາກ B: **ບັນດາສົນທິສັນຍາ ທີ່ກ່ຽວຂ້ອງກັບ ສິ່ງແວດລ້ອມ ແລະ ຫຼັກການຄຸ້ມຄອງ** ..... 165

ແຫຼ່ງອ້າງອີງທ້າຍເອກະສານ ..... 167

# ສາລະບານຕາຕະລາງ


ຕາຕະລາງ 1: ຂໍ້ມູນທີ່ສຳຄັນ ກ່ຽວກັບ ການດຳເນີນງານ ຂອງ ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ EU ..... 21

ຕາຕະລາງ 2: ການໄດ້ຕາມເງື່ອນໄຂ ຂອງຜະລິດຕະພັນ ແລະ ອັດຕາພາສີ ໂດຍ ແຜນງານ GSP ຂອງ EU ..... 31

ຕາຕະລາງ 3: ປະເພດ cumulation ..... 33

ຕາຕະລາງ 4: ການສົ່ງອອກ ຂອງ ສປປ ລາວ ໄປທົ່ວໂລກ ແລະ ໄປຫາ ບາງປະເທດ ທີ່ເປັນສະມາຊິກ EU (2019) ..... 49

ຕາຕະລາງ 5: ບັນດາປະເທດຕົ້ນຕໍ ທີ່ເປັນແຫຼ່ງກຳເນີດ ການສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019 ..... 49

ຕາຕະລາງ 6: ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງສິນຄ້າ ສຳລັບບົດ 50, 52 ແລະ 61 (ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ) ..... 52

ຕາຕະລາງ 7: ການອະທິບາຍເພີ່ມຕື່ມ ກ່ຽວກັບ Tolerances (ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ) – ທີ່ກຳນົດອອກ ຢູ່ໃນເອກະສານນຳສະເໜີແນະ ທີ 6 ຂອງ ລະບຽບການ (EU) 2015/2446 ..... 55

ຕາຕະລາງ 8: ຄຳອະທິບາຍ ເພີ່ມຕື່ມ ກ່ຽວກັບ Tolerances – ທີ່ຖືກກຳນົດ ຢູ່ໃນ ໝາຍເຫດ ທີ່ໃຫ້ຄຳແນະນຳ ຂໍ້ 7 ຂອງ ລະບຽບການ (EU) 2015/2446 ..... 57

ຕາຕະລາງ 9: ລາຍຊື່ ສານເຄມີ ທີ່ບໍ່ອະນຸຍາດ ສຳລັບ ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ..... 59

ຕາຕະລາງ 10: ການສົ່ງອອກ ຂອງ ສປປ ລາວ ໄປຫາທົ່ວໂລກ ແລະ ບາງປະເທດ ທີ່ເປັນສະມາຊິກ EU ໃນປີ 2019 ..... 69

ຕາຕະລາງ 11: ປະເທດຕົ້ນຕໍ ທີ່ເປັນແຫຼ່ງກຳເນີດ ຂອງການສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019 ..... 69

ຕາຕະລາງ 12: ຂໍ້ມູນຄັດລ້ອນມາຈາກ ເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງ ຄະນະກຳມະການ (EU) 2015/2446 ສຳລັບຜະລິດຕະພັນປະເພດເກີດ ..... 70

ຕາຕະລາງ 13: ສານເຄມີ ທີ່ບໍ່ອະນຸຍາດໃຫ້ນຳໃຊ້ ສຳລັບ ຜະລິດຕະພັນ ປະເພດເກີບ ..... 71

ຕາຕລາງ 14: ການສົ່ງອອກ ຈາກ ສປປ ລາວ ໄປຫາ EU ໃນປີ 2019 ..... 82

ຕາຕະລາງ 15: ການສົ່ງອອກ ຂອງ ສປປ ລາວ ໄປທົ່ວໂລກ ແລະ ບາງປະເທດທີ່ເປັນສະມາຊິກ EU ໃນປີ 2019 ..... 82

ຕາຕະລາງ 16: ປະເທດທີ່ເປັນແຫຼ່ງກຳເນີດຕົ້ນຕໍ ຂອງການສົ່ງອອກ ບາງຜະລິດຕະພັນກະສິກຳ, ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019 ..... 83

ຕາຕະລາງ 17: ລະບຽບການສົ່ງອອກ ຂອງ ສປປ ລາວ ຕໍ່ກ ັບ ຜະລິດຕະພັນກະສິກຳ ທີ່ໄປຫາ EU ..... 96

ຕາຕະລາງ 18: ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ແລະ ບົດຕ່າງໆ ທີ່ກ່ຽວຂ້ອງ ..... 108

ຕາຕະລາງ 19: ບັນດາປະເທດຕົ້ນຕໍ ທີ່ເປັນແຫຼ່ງກຳເນີດສິນຄ້າສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປ ິ 2019 ..... 108

ຕາຕະລາງ 20: ການສົ່ງອອກ ຂອງ ສປປ ລາວ ໄປທົ່ວໂລກ ແລະ ໄປຫາ ບາງປະເທດສະມາຊິກ EU ຢູ່ໃນ 2019 ..... 108

ຕາຕະລາງ 21: ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ດັ່ງທີ່ໄດ້ກຳນົດໄວ້ ຢູ່ໃນ ເອກະສານຊ້ອນທ້າຍ 22-03 ..... 112

ຕາຕະລາງ 22: ບັນດາປະເທດຕົ້ນຕໍ່ ທີ່ເປັນແຫຼ່ງກຳເນີດ ຂອງສິນຄ້າສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019 ..... 137

**ຕາຕະລາງ 23: ການສົ່ງອອກ ຂອງ ສປປ ລາວ ໄປຫາ ບາງປະເທດ ທີ່ເປັນສະມາຊິກ EU ໃນປີ ໍ 2019** ........................................ 137

**ຕາຕະລາງ 24: ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ຜະລິດຕະພັນໄມ້ ຕາມທີ່ກຳນົດ ຢູ່ໃນ ເອກະສານຊ້ອນທ້າຍ 22-03** ........................................ 140

**ຕາຕະລາງ 25: ສານເຄມີ ທີ່ບໍ່ອະນຸຍາດ ສຳລັບ ໄມ້ ແລະ ຜະລິດຕະພັນໄມ້** ........................................ 146

# ສາລະບານຮູບ


ຮູບ 1: ການນໍາໃຊ້ສິດທິພິເສດ ແລະ ການສ້າງຄວາມຫຼາກຫຼາຍ ໃນການສົ່ງອອກ – ນໍາເຂົ້າ ຈາກ ສປປ ລາວ ໄປຫາ EU (ລ້ານເອີໂຣ) ..... 17

ຮູບ 2: ປະເພດ ການລັດສັນການຄ້າ ດ້ວຍສິດທິພິເສດ ຂອງ EU ..... 21

ຮູບ 3: ບາດກ້າວຕົ້ນຕໍ ທີ່ຈະມີສ່ວນກ່ຽວຂ້ອງ ໃນການສົ່ງອອກ ຈາກ ສປປ ລາວ ..... 28

ຮູບ 4: ຮູບພາບ ຂອງ ເວັບໄຊ Access2Markets ຂອງ EU ..... 42

ຮູບ 5: ຮູບພາບ ຈາກ ເວັບໄຊ GSP Hub ຂອງ EU ..... 43

ຮູບ 6: ຮູບພາບ ສະແດງໜ້າເວັບ ຂອງເວັບໄຊ GSP Hub ທີ່ສະແດງຂໍ້ມູນກ່ຽວກັບ ສປປ ລາວ ..... 43

ຮູບ 7: ຮູບພາບ ແຜນທີ່ມາດຕະຖານ ຂອງ ສູນ ITC ..... 44

ຮູບ 8: ຮູບພາບ ສະແດງເວທີຕົວຊ່ວຍອໍານວຍຄວາມສະດວກ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ຂອງສູນ ITC ..... 44

ຮູບ 9: ຮູບພາບ ຂອງ ປະຕູການຄ້າ ຂອງ ສປປ ລາວ ..... 45

ຮູບ 10: ຂໍ້ມູນທີ່ຄັດລ້ອນມາຈາກ ເອກະສານຊ້ອນທ້າຍ 22-03 ທີ່ກໍານົດ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ສໍາລັບ ບົດທ ີ 50, ວ່າດ້ວຍ ເສັ້ນໃຫມ ..... 51

ຮູບ 11: ຜະລິດຕະພັນອື່ນໆ ທີ່ຖືກຕິດສະຫຼາກ ເໝືອນກັບ ຜະລິດຕະພັນແຜ່ນແພ ..... 63

ຮູບ 12: ຄໍາແນະນໍາ ກ່ຽວກັບ ການຕິດສະຫຼາກ ສິ່ງແວດລ້ອມ ..... 65

ຮູບ 13: ຂໍ້ມູນທີ່ຄັດລ້ອນມາຈາກ ຄໍາແນະນໍາ ເລກທີ 94/11/EC- ..... 76

ຮູບ 14: ຂໍ້ມູນຄັດລ້ອນມາຈາກ ຄໍາແນະນໍາເລກທີ 94/11/EC – ບົດແນະນໍາ ວ່າດ້ວຍ ການກໍານົດ ສ່ວນຕ່າງໆ ຂອງເກີບ ..... 77

ຮູບ 15: ຂໍ້ມູນທີ່ຄັດລ້ອນ ຢູ່ໃນຕາຕະລາງ ທີ່ສະແດງໃຫ້ເຫັນ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ສໍາລັບຜະລິດຕະພັນກະສິກໍາ ..... 84

ຮູບ 16: ຂໍ້ມູນທີ່ຄັດລ້ອນ ຈາກ ຕາຕະລາງ ທີ່ຢູ່ໃນ ເອກະສານຊ້ອນທ້າຍ 22-04 ວ່າດ້ວຍວັດສະດຸ ທີ່ແຍກຈາກ regional cumulation ..... 86

ຮູບ 17: ຂໍ້ມູນທີ່ຄັດລ້ອນ ມາຈາກ ເອກະສານຊ້ອນທ້າຍ 1 ຂອງລະບຽບການ (EC) ເລກທີ. 1881/2006 ທີ່ກໍານົດລາຍຊື່ ສານປົນເປື້ອນ ແລະ ລະດັບທີ່ກ່ຽວຂ້ອງ ສູງສຸດ (ລະດັບສູງສຸດຂອງແຕ່ລະລາຍການ) ..... 92

ຮູບ 18: ໜັງສືຜ່ານແດນພືດ ຂອງ EU ..... 97

ຮູບ 19: ຂໍ້ມູນທີ່ຄັດລ້ອນ ມາຈາກ ຕາຕະລາງ ໃນເອກະສານຊ້ອນທ້າຍ 22-03 ກ່ຽວກັບກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ສໍາລັບ ຜະລິດຕະພັນອາຫານທີ່ໄດ້ຜ່ານການປຸງແຕ່ງ ..... 111

ຮູບ 20: ຂໍ້ມູນທີ່ຄັດລ້ອນມາຈາກ ຕາຕະລາງ ແຕ່ ເອກະສານຊ້ອນທ້າຍ 22-04 ທີ່ໃຫ້ລາຍລະອຽດ ກ່ຽວກັບ ບັນດາຜະລິດຕະພັນທີ່ຍົກເວັ້ນຈາກ Regional cumulation ..... 115

ຮູບ 21: ຂໍ້ມູນທີ່ຄັດລ້ອນມາຈາກ ເອກະສານຊ້ອນທ້າຍ ຂອງ ລະບຽບການ (EC) 1881/2006 ທີ່ກໍານົດ ລະດັບ ສູງສຸດ ຂອງ ສານປົນເປື້ອນ ສໍາລັບ ຜະລິດຕະພັນອາຫານບາງຢ່າງ ທີ່ໄດ້ຜ່ານການປຸງແຕ່ງ ..... 121

ຮູບ 22: ຂໍ້ມູນຄັດຫຍໍ້ຈາກເອກະສານຊ້ອນທ້າຍ 22-03 ກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ສໍາລັບໄມ້ ແລະ ຜະລິດຕະພັນໄມ້ ..... 138

ຮູບ 23: ຕົວຢ່າງ ຂອງ ກາລໍ້າ ISPM 15 ທີ່ຖືກນໍາໃຊ້ ສໍາລັບ ວັດສະດຸຫຸ້ມຫໍ່ອາຫານ ..... 148


ARISE⁺ Lao PDR

Funded by the European Union

# ສາລະບານຫ້ອງ

**ຫ້ອງ 1: ການຫຼຸດພົ້ນ ຂອງ ສປປ ລາວ ອອກຈາກ ສະຖານະພາບ ການເປັນປະເທດດ້ອຍພັດທະນາ** ........ 25
**ຫ້ອງ 2: ຂໍ້ກໍານົດທາງນິຕິກໍາ ຂອງ ສປປ ລາວ ຕໍ່ກັບ ການຍັ້ງຢືນຕົນເອງ ກ່ຽວກັບ ແຫຼ່ງກໍາເນີດ** ........ 40

# ຄຳ ແລະ ອັກສອນຫຍໍ້

| | |
|---|---|
| ASEAN | ສະມາຄົມປະຊາຊາດ ແຫ່ງອາຊີຕາເວັນອອກສ່ຽງໃຕ້<br>Association of Southeast Asian Nations |
| ASYCUDA | ລະບົບຄຸ້ມຄອງພາສີ ຜ່ານທາງຄອມພິວເຕີ<br>Automated System for Customs Data |
| CITES | ສົນທິສັນຍາ ວ່າດ້ວຍການຄ້າ ສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງປະເທດ<br>Convention on International Trade in Endangered Species of Wild Fauna and Flora |
| CN | ເຄື່ອງມືຈັດປະເພດສິນຄ້າ ຂອງສະຫະພາບເອີຣົບ<br>EU’s Combined Nomenclature |
| DIMEX | ກົມນຳເຂົ້າ ແລະ ສົ່ງອອກ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ<br>Lao PDR Ministry of Industry and Commerce’s Department of Import and Export |
| DOA | ກົມປູກຝັງ ແຫ່ງ ສປປ ລາວ<br>Lao PDR’s Department of Agriculture |
| EBA | ທຸກຢ່າງຍົກເວັ້ນອາວຸດ<br>Everything But Arms |
| EC | ຄະນະກຳມະການ ເອີຣົບ<br>European Commission |
| EU | ສະຫະພາບ ເອີຣົບ<br>European Union |
| FLEGT | ການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການຄ້າໄມ້ ແຫ່ງ ສະຫະພາບເອີຣົບ<br>European Union Forest Law Enforcement, Government and Trade |
| FSC | ສະພາຄຸ້ມຄອງປ່າໄມ້ (ອົງການຍັ້ງຍືນ ແລະ ສົ່ງເສີມ ການຄຸ້ມຄອງປ່າໄມ້ ແບບມີຄວາມຮັບຜິດຊອບ)<br>Forest Stewardship Council |
| GMO | ສິ່ງມີຊີວິດ ທີ່ຖືກດັດແປງພັນທຸກຳ<br>Genetically modified organism |
| GSP | ແຜນງານການໃຫ້ສິດທິພິເສດທົ່ວໄປ<br>Generalised Scheme of Preferences |
| GSP+ | ແຜນງານການໃຫ້ສິດທິພິເສດທົ່ວໄປ ບວກສິ່ງຈູງໃຈພິເສດ<br>Generalised Scheme of Preferences Plus |
| ISPM | ມາດຕະຖານສາກົນ ສຳລັບສຸຂານາໄມພືດ<br>International Standards for Phytosanitary Measures |
| ITC | ສູນການຄ້າສາກົນ<br>International Trade Centre |
| LDC | ປະເທດດ້ອຍພັດທະນາ<br>Least developed countries |
| MFN | ປະເທດທີ່ມີເງື່ອນໄຂໄດ້ຮັບສິດທິພິເສດຫຼາຍທີ່ສຸດ<br>Most-favoured nation |
| MoIC | ກະຊວງອຸດສາຫະກຳ<br>Ministry of Industry and Commerce |

| | |
|---|---|
| MRL | ລະດັບສານຕົກຄ້າງສູງສຸດ ທີ່ມາຈາກຢາຂ້າແມງໄມ້<br>Maximum residue level |
| REACH | ລະບຽບການ ວ່າດ້ວຍການຂຶ້ນທະບຽນ, ການປະເມີນຜົນ, ການອະນຸຍາດ ແລະ ການຈຳກັດສານເຄມີ<br>Registration, Evaluation, Authorisation and Restriction of Chemicals |
| REX | ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງສະຫະພາບເອີຣົບ<br>The EU’s Registered Exporter System |
| SAD | ເອກະສານແຈ້ງເສຍພາສີ ຂອງສະຫະພາບເອີຣົບ<br>EU’s single administrative document |
| TLAS | ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ<br>Timber legality assurance system |
| VAT | ອາກອນມູນຄ່າເພີ່ມ<br>Value-added tax |
| VPA | ສັນຍາ ວ່າດ້ວຍການເປັນຄູ່ຮ່ວມແບບສະໝັກໃຈ<br>Voluntary partnership agreement |
| WTO | ອົງການການຄ້າໂລກ<br>World Trade Organization |

# ອະທິບາຍຄຳສັບ

| ຄຳສັບ | ຄວາມໝາຍ/ ຄຳອະທິບາຍ |
|---|---|
| ***Cumulation*** *ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ* | Cumulation (ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ) ແມ່ນເປັນກົນໄກອັນໜຶ່ງ ທີ່ເຮັດໃຫ້ຫົວໜ່ວຍທຸລະກິດ ສາມາດພິຈາລະນາ ນຳໃຊ້ວັດສະດຸ ທີ່ມີແຫຼ່ງກຳເນີດ ມາຈາກບ່ອນອື່ນ ຫຼື ມີການດຳເນີນການປຸງແຕ່ງ ຢູ່ໃນປະເທດອື່ນ ໃຫ້ເປັນເໝືອນກັບວ່າ ມີແຫຼ່ງກຳເນີດ ຫຼື ດຳເນີນການຜະລິດ ໃນປະເທດ ຂອງ ຫົວໜ່ວຍທຸລະກິດນັ້ນໆ. |
| ***Diagonal cumulation*** *ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບໄຂວ່ກັນ* | ໃນແງ່ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, ລະບົບ diagonal cumulation (ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບໄຂວ່ກັນ) ມີຜົນກັບ ຫຼາຍກວ່າສອງປະເທດ ໂດຍທີ່ວ່າ ກົດລະບຽບວ່າດ້ວຍແຫຼ່ງກຳເນີດ ທີ່ຄ້າຍໆກັນ ແລະ ຂໍ້ກຳນົດ ວ່າດ້ວຍ cumulation ແມ່ນມີຜົນນຳໃຊ້ ລະຫວ່າງປະເທດເຫຼົ່ານັ້ນ. ມີພຽງສະເພາະແຕ່ ຜະລິດຕະພັນ ຫຼື ວັດຖຸດິບ ທີ່ມາຈາກແຫຼ່ງກຳເນີດເທົ່ານັ້ນ ທີ່ສາມາດໄດ້ຮັບປະໂຫຍດ ຈາກ ລະບົບ diagonal cumulation. |
| ***Everything But Arms (EBA)*** *ທຸກຢ່າງຍົກເວັ້ນອາວຸດ* | ການຈັດສັນພິເສດ ຂອງ ສະຫະພາບເອີຣົບ (EU) ແກ່ ບັນດາປະເທດດ້ອຍພັດທະນາ ພາຍໃຕ້ລະບຽບການ GSP. |
| ***EU's Combined Nomenclature (CN)*** *ເຄື່ອງມືຈັດປະເພດສິນຄ້າ ຂອງສະຫະພາບເອີ* | Combined Nomenclature (ເຄື່ອງມືຈັດປະເພດສິນຄ້າ ຂອງສະຫະພາບເອີຣົບ) ແມ່ນເປັນເຄື່ອງມືສຳລັບຈັດປະເພດສິນຄ້າ, ທີ່ຖືກກຳນົດຂຶ້ນມາ ເພື່ອໃຫ້ໄດ້ຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງ ພາສີອາກອນທົ່ວໄປ ແລະ ສະຖິຕິການຄ້າພາຍນອກ ຂອງ ສະຫະພາບເອີຣົບ.<br>ສະບັບລວບລວມ ຖືກເຜີຍແຜ່ ຢູ່ທີ່ https://eur-lex.europa.eu/legal-content/EN/ALL/?uri=celex%3A31987R2658 (ໄດ້ເຂົ້າເບິ່ງ ໃນວັນທີ 10 ພຶດສະພາ 2021). |
| ***Generalised Scheme of Preferences (GSP)*** *ແຜນງານການໃຫ້ສິດທິພິເສດທົ່ວໄປ* | ແຜນງານການໃຫ້ສິດທິພິເສດທົ່ວໄປ (GSP) ຂອງສະຫະພາບເອີຣົບ ຕັດພາສີນຳເຂົ້າ ອອກຈາກຜະລິດຕະພັນ ທີ່ມາຈາກ ບັນດາປະເທດກຳລັງພັດທະນາ ທີ່ເຂົ້າມາໃນ ສະຫະພາບເອີຣົບ ແລະ ຈະເປັນໂຕສະໜັບສະໜູນ ບັນດາປະເທດກຳລັງພັດທະນາ ຫຼຸດຜ່ອນຄວາມທຸກຍາກ ແລະ ເພີ່ມການສ້າງວຽກເຮັດງານທຳ ໂດຍອີງໃສ່ ຄຸນຄ່າ ແລະ ຫຼັກການສາກົນ ຊຶ່ງລວມມີ ສິດຂອງແຮງງານ ແລະ ຂອງມະນຸດ. |
| ***General or Standard GSP*** *ແຜນງານ GSP ທົ່ວໄປ ຫຼື ທີ່ເປັນມາດຕະຖານ* | Standard or General GSP (ແຜນງານ GSP ທົ່ວໄປ ຫຼື ທີ່ເປັນມາດຕະຖານ) ມີຜົນນຳໃຊ້ກັບບັນດາປະເທດ ທີ່ມີລາຍຮັບຕ່ຳ - ແລະ ທີ່ມີລາຍຮັບປານກາງລະດັບຕ່ຳ ແລະ ໃຫ້ການຕັດພາສີອາກອນບາງສ່ວນ ຫຼື ທັງໝົດ ທີ່ກວມສອງສ່ວນສາມ ຂອງລາຍການທີ່ຢູ່ໃນຕາຕະລາງພາສີ. |
| ***Generalised Scheme of Preferences Plus (GSP+)*** *ແຜນງານການໃຫ້ສິດທິພິເສດທົ່ວໄປ ບວກສິ່ງຈູງໃຈພິເສດ* | GSP+ (ແຜນງານການໃຫ້ສິດທິພິເສດທົ່ວໄປ ບວກສິ່ງຈູງໃຈພິເສດ) ແມ່ນເປັນການຈັດສັນ ສິ່ງຈູງໃຈພິເສດ ຂອງສະຫະພາບເອີຣົບ ເພື່ອໃຫ້ເກີດມີ ການພັດທະນາ ແບບຍືນນານ ແລະ ມີການຄຸ້ມຄອງທີ່ດີ. ມັນມີຜົນນຳໃຊ້ ໃນນາມເປັນ GSP ທີ່ເປັນມາດຕະຖານ ກັບ ລາຍການທີ່ຢູ່ໃນຕາຕະລາງພາສີ ດຽວກັນ ແລະ ຫຼຸດຜ່ອນ ພາສີທີ່ມີຜົນນຳໃຊ້ ລົງໄປຮອດ 0% ແກ່ ບັນດາປະເທດ ທີ່ບໍ່ທັນເຂັ້ມແຂງ ທີ່ມີລາຍຮັບຕ່ຳ ຫາ ລາຍຮັບປານກາງຢູ່ໃນລະດັບຕ່ຳ ທີ່ຈັດຕັ້ງປະຕິບັດ 27 ສົນທິສັນຍາສາກົນ ທີ່ພົວພັນກັບ ສິດທິມະນຸດ, ສິດທິຂອງແຮງງານ, ການປົກປ້ອງສິ່ງແວດລ້ອມ ແລະ ການຄຸ້ມຄອງທີ່ດີ. |
| ***Group I countries*** *ບັນດາປະເທດທີ່ນອນໃນກຸ່ມ I* | ຢູ່ໃນແງ່ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, "ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ພາຍໃນພາກພື້ນ" ແມ່ນເປັນຮູບແບບ ຂອງ ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບໄຂວ່ກັນ, ຊຶ່ງເກີດຂຶ້ນສະເພາະຢູ່ພາຍໃຕ້ ແຜນງານການໃຫ້ສິດ |

ທົ່ວໄປ (GSP) ແລະ ດຳເນີນການ ລະຫວ່າງບັນດາສະມາຊິກ ຂອງກຸ່ມປະເທດທີ່ໄດ້ຮັບປະໂຫຍດ ພາຍໃນພາກພື້ນ.[1]
*ກຸ່ມ* I ປະກອບມີ ບັນດາປະເທດສະມາຊິກ ASEAN ອື່ນໆ ທີ່ໄດ້ຮັບຜົນປະໂຫຍດ ຈາກ GSP ຂອງສະຫະພາບເອີຣົບ ຄື ກຳປູເຈຍ, ອິນໂດເນເຊຍ, **ສປປ ລາວ**, ມາເລເຊຍ, ພະມ້າ, ຟິລິປິນ, ໄທ ແລະ ຫວຽດນາມ.

***Regional cumulation***
***ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ພາຍໃນພາກພື້ນ***

ຢູ່ໃນແງ່ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, "ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ພາຍໃນພາກພື້ນ" ແມ່ນເປັນຮູບແບບ ຂອງ ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບໄຂວ່ກັນ, ຊຶ່ງເກີດຂຶ້ນສະເພາະຢູ່ພາຍໃຕ້ ແຜນງານການໃຫ້ສິດທິພິເສດທົ່ວໄປ (GSP) ແລະ ມີຜົນກັບ ບັນດາສະມາຊິກ ຂອງກຸ່ມປະເທດທີ່ໄດ້ຮັບປະໂຫຍດ ພາຍໃນພາກພື້ນ.

***Registered exporter***
***ຜູ້ສົ່ງອອກ ທີ່ໄດ້ຂຶ້ນທະບຽນແຫຼ່ງກຳເນີດຂອງສິນຄ້າ***

ຜູ້ສົ່ງອອກ ໄດ້ລົງທະບຽນ ກັບ ລະບົບລົງທະບຽນແຫຼ່ງກຳເນີດຂອງສິນຄ້າ ຂອງຜູ້ສົ່ງອອກ ຂອງ ສະຫະພາບເອີຫຼົບ ໂດຍອີງຕາມ ມາດຕາ 86 ຂອງລະບຽບການ ວ່າດ້ວຍການຈັດຕັ້ງປະຕິບັດ ຂອງຄະນະກຳມະການ (EU) 2015/2447 *ລົງວັນທີ* 24 *ພະຈິກ* 2015.

***Rules of origin***
***ກົດລະບຽບ ວ່າດ້ວຍແຫຼ່ງທີ່ມາ***

ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ແມ່ນເປັນກົດລະບຽບ ທີ່ພົວພັນກັບວ່າ ຜະລິດຕະພັນ ມີແຫຼ່ງກຳເນີດມາຈາກປະເທດໃດໜຶ່ງ.

**Qualifying operation**
***ການດຳເນີນງານທີ່ໄດ້ຕາມເງື່ອນໄຂ***

Qualifying operation (ການດຳເນີນງານທີ່ໄດ້ຕາມເງື່ອນໄຂ) ໝາຍເຖິງ ການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ, ທີ່ຖືກດຳເນີນກັບ ວັດສະດຸທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ, ທີ່ໃຫ້ສະຖານະພາບການເປັນແຫຼ່ງກຳເນີດ ແກ່ ສິນຄ້າ.

**Wholly obtained**
*ໄດ້ຮັບສິນສ່ວນມາທັງໝົດ*

ໃນແງ່ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, ສິນຄ້າ ແມ່ນຈະໄດ້ຮັບສິນສ່ວນມາທັງຫມົດ ເມື່ອການຜະລິດ ສຳເລັດຢູ່ໃນປະເທດດຽວ. ດັ່ງນັ້ນ, ມັນມີຜົນນຳໃຊ້ ສ່ວນໃຫຍ່ ກັບ ຜະລິດຕະພັນ ທີ່ເກີດຂຶ້ນເອງໂດຍທຳມະຊາດ ແລະ ສິນຄ້າທີ່ຖືກສ້າງຂຶ້ນທັງໝົດ ຈາກໂຕພວກມັນເອງ

**World Bank classification of income status**
*ການຈັດປະເພດ ສະຖານະພາບດ້ານລາຍຮັບ ຂອງ ທະນາຄານໂລກ*

ໃນດ້ານລາຍຮັບ, ທະນາຄານໂລກ ໄດ້ແບ່ງເສດຖະກິດຂອງໂລກ ອອກເປັນ 4 ກຸ່ມລາຍຮັບ ຄື: ລາຍຮັບສູງ, ລາຍຮັບປານກາງລະດັບສູງ, ລາຍຮັບປານກາງລະດັບຕ່ຳ ແລະ ລາຍຮັບຕ່ຳ. ການຈັດປະເພດລາຍຮັບແມ່ນອີງໃສ່ ການວັດແທກລາຍຮັບແຫ່ງຊາດຕໍ່ຄົນ. ການຈັດປະເພດນີ້ ແມ່ນໄດ້ຖືກອ້າງເຖິງ ໂດຍ EU ຢູ່ໃນລະບຽບການ GSP ເພື່ອກຳນົດ ປະເທດ ທີ່ໄດ້ຮັບຜົນປະໂຫຍດ

[1] ກຳນົດໄວ້ ຢູ່ໃນລະບຽບການຕົວແທນ ຂອງຄະນະກຳມະການ (EU) 2015/2446 ***ລົງວັນທີ*** 28 ***ກໍລະກົດ*** 2015, *ສາມາດເຂົ້າເບິ່ງໄດ້ທີ່* http://eur-lex.europa.eu/legal-content/EN/TXT/?uri=uriserv:OJ.L_.2015.343.01.0001.01.ENG.

# ກ່ຽວກັບ ຄູ່ມືທຸລະກິດ EU EBA

ໃນປັດຈຸບັນ, ສປປ ລາວ ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງຕະຫຼາດ ຂອງ ສະຫະພາບເອີຣົບ ດ້ວຍສິດທິພິເສດ ພາຍໃຕ້ແຜນງານ EBA (ທຸກຢ່າງຍົກເວັ້ນອາວຸດ), ຊຶ່ງເປັນໜຶ່ງ ໃນຈຳນວນ ການຈັດສັນສິດທິພິເສດທາງການຄ້າສາມຢ່າງ ທີ່ເນັ້ນໃຫ້ ຝ່າຍດຽວ ໂດຍການສະໜອງ ເງື່ອນໄຂການເຂົ້າເຖິງຕະຫຼາດ ແບບ ເອື້ອອຳນວຍ ໃຫ້ແກ່ຜະລິດຕະພັນ ທີ່ນຳເຂົ້າໄປໃນ ສະຫະພາບເອີຣົບ (ສ່ວນອີກສອງແຜນງານ ແມ່ນ ແຜນງານ GSP ທີ່ເປັນມາດຕະ ຖານ ແລະ ແຜນງານ GSP+). ການຈັດສັນສິດທິ EBA ແມ່ນເປັນ ແຜນງານ ທີ່ມີຜົນນຳໃຊ້ກັບ ບັນດາປະເທດດ້ອຍພັດທະນາ (LDC) ດ້ວຍການສະໜອງ **ການເຂົ້າເຖິງ** ຕະຫຼາດ ຂອງສະຫະພາບເອີຣົບ **ແບບປອດພາສີ, ແບບບໍ່ມີໂກຕາ** ສຳລັບໝົດທຸກຜະລິດຕະພັນ, ຍົກເວັ້ນອາວຸດຍຸດໂທປະກອນ.

ສປປ ລາວ ໄດ້ຖືກແນະນຳ ໃຫ້ຫຼຸດພົ້ນອອກຈາກ ສະຖານະພາບ ການເປັນປະເທດດ້ອຍພັດທະນາ ໃນປີ 2026. ພາຍຫຼັງການຫຼຸດພົ້ນ ທີ່ມີຄວາມເປັນໄປໄດ້, ສະຫະພາບເອີຣົບ ຈຳເປັນຈະຕ້ອງຕັດສິນໃຈ ເອົາ ສປປ ລາວ ອອກຈາກບັນຊີລາຍຊື່ ປະເທດທີ່ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ EBA ຂອງສະຫະພາບເອີຣົບ ແລະ ຈາກນັ້ນ ຜົນປະໂຫຍດຕ່າງໆກໍຈະຢຸດມີຜົນນຳໃຊ້ ພາຍຫຼັງໄລຍະໄວລາຊ່ວງ ຂ້າມຜ່ານສາມປີ. **ສະນັ້ນ, ສປປ ລາວ ຄວນຈະສາມາດ ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງຕະຫຼາດ ດ້ວຍສິດທິພິເສດ ພາຍໃຕ້ແຜນງານ EBA ຂອງສະຫະພາບເອີຣົບ ຈົນຮອດ ຢ່າງໜ້ອຍແມ່ນ ປີ 2029.**

ເກືອບ 85% ຂອງການສົ່ງອອກ ໃນປັດຈຸບັນ ຈາກ ສປປ ລາວ ໄປຫາ ຕະຫຼາດຂອງສະຫະພາບເອີຣົບ ແມ່ນມີເງື່ອນໄຂ ໄດ້ຮັບສິດທິພິເສດ EBA. ຈາກການສົ່ງອອກເຫຼົ່ານີ້ ທີ່ມີເງື່ອນໄຂ ເຂົ້າເຖິງຕະຫຼາດ ດ້ວຍສິດທິພິເສດ EBA, ເກືອບ 89% ຂອງການສົ່ງອອກຂອງລາວ ແມ່ນເປັນການສົ່ງອອກໄປຫາ ສະຫະພາບເອີຣົບ ທີ່ປອດພາສີ ເປັນທີ່ຮຽບຮ້ອຍແລ້ວ ໂດຍນຳໃຊ້ຜົນປະໂຫຍດຈາກ EBA ເຫຼົ່ານີ້.

ເຖິງຢ່າງໃດກໍ່ຕາມ, **ຜູ້ປະກອບການບາງຄົນ ຍັງຄົງບໍ່ທັນນໃຊ້ສິດທິພິເສດທາງການຄ້າທີ່ມີຢູ່**, ຊຶ່ງສາມາດເປັນຍ້ອນຫຼາຍເຫດຜົນ ເຊັ່ນ: ການຂາດ ຄວາມຮັບຮູ້ ກ່ຽວກັບແຜນງານການເຂົ້າເຖິງຕະຫຼາດ ດ້ວຍສິດທິພິເສດ EBA, ຂໍ້ຈຳກັດທີ່ປະເຊີນ ໃນການປະຕິບັດຕາມ ບັນດາກົດລະບຽບທີ່ກ່ຽວຂ້ອງ (ເຊັ່ນ: ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ) ເພື່ອທີ່ຈະໃຫ້ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງ ດ້ວຍສິດທິພິເສດ, ຫຼື ຍ້ອນການທີ່ບໍ່ສາມາດ ຢັ້ງຢືນ ຄວາມຖືກຕ້ອງສອດຄ່ອງກັບ ບັນດາກົດລະບຽບ ທີ່ກ່ຽວຂ້ອງ ຕໍ່ກັບ ເຈົ້າໜ້າທີ່ ຂອງ ສະຫະພາບເອີຣົບ[1].

ນອກຈາກນັ້ນ, ໃນຂະນະທີ່ ອັດຕາສ່ວນຂະໜາດໃຫຍ່ ຂອງການສົ່ງອອກ ຂອງ ສປປ ລາວ ໄປຫາ ສະຫະພາບເອີຣົບ ແມ່ນໄດ້ນຳໃຊ້ຜົນປະໂຫຍດ ຈາກແຜນງານ EBA ແທ້ ກໍຕາມ, ແຕ່ວ່າ ສປປ ລາວ **ຍັງມີທ່າແຮງການສົ່ງອອກ ໄປຫາ ສະຫະພາບເອີຣົບ ຈຳນວນຫຼວງຫຼາຍ ທີ່ຍັງບໍ່ທັນໄດ້ນຳໃຊ້**. ອີງຕາມການວິເຄາະ ຂອງ ສູນ ITC, ໃນປັດຈຸບັນ, ສປປ ລາວ ນຳໃຊ້ພຽງແຕ່ 27% ເທົ່ານັ້ນ ຂອງທ່າແຮງການສົ່ງອອກໄປຫາ EU ທີ່ມີຢູ່, ໃນຂະນະທີ່ 73% ຂອງທ່າແຮງ ແມ່ນຍັງບໍ່ທັນໄດ້ນຳໃຊ້[2]. ສິ່ງດັ່ງກ່າວນີ້ ຊີ້ໃຫ້ເຫັນວ່າ ຍັງຄົງມີໂອກາດ ສຳລັບເພີ່ມການສົ່ງອອກສິນຄ້າ ຈາກ ສປປ ລາວ ໄປຫາ ຕະຫຼາດຂອງສະຫະພາບເອີຣົບ.

**ສປປ ລາວ ຄວນໃຊ້ ຄວາມພະຍາຍາມ ໃນການນຳໃຊ້ທ່າແຮງການສົ່ງອອກນີ້** ແລະ ນີ້ກໍແມ່ນໂອກາດ ທີ່ຈະຊຸກຍູ້ ໃຫ້ຜູ້ປະກອບການຫຼາຍຄົນ ສົ່ງອອກສິນຄ້າ ໄປຫາ ຕະຫຼາດ EU – ໂດຍສະເພາະ ແມ່ນການນຳໃຊ້ ລະດັບການເຂົ້າເຖິງຕະຫຼາດ ທີ່ມີຢູ່ສຳລັບ ຜູ້ປະກອບການ ຈາກ ສປປ ລາວ ທີ່ກຳລັງຊອກຫາການເຂົ້າຮ່ວມໃນຕະຫຼາດ ຂອງ ສະຫະພາບເອີຣົບ.

**ຮູບ 1: ການນຳໃຊ້ສິດທິພິເສດ ແລະ ການສ້າງຄວາມຫຼາກຫຼາຍ ໃນການສົ່ງອອກ – ນຳເຂົ້າ ຈາກ ສປປ ລາວ ໄປຫາ EU (ລ້ານ ເອີໂຣ)**




***ແຫຼ່ງຂໍ້ມູນ:*** GSP Hub – EU https://gsphub.eu/country-info/Lao%20People's%20Democratic%20Republic.

ເມື່ອ ສປປ ລາວ ຈະສາມາດນຳໃຊ້ ສິດທິພິເສດ EBA ຂອງ ສະຫະພາບເອີຣົບ, ສປປ ລາວ ກໍຈະ**ໄດ້ຮັບຜົນປະໂຫຍດ ຈາກ ການປອດພາສີ, ການເຂົ້າເຖິງຕະຫຼາດ ແບບບໍ່ຈຳກັດໂກຕ້າ <u>ເປັນເວລາ ຢ່າງໜ້ອຍ ອີກແປດປີ</u>**, ສິ່ງດັ່ງກ່າວນີ້ ກໍເປັນໂອກາດສຳຄັນ ສຳລັບ ທຸລະກິດ ຂອງ ສປປ ລາວ ທີ່ຈະກ້າວເຂົ້າໄປຫາ ທ່າແຮງທີ່ບໍ່ທັນໄດ້ນຳໃຊ້ ແລະ ປະກົດໂຕ ຢູ່ ໃນຕະຫຼາດ ຂອງ EU ແລະ ສ້າງສາຍພົວພັນທາງການຄ້າ ທີ່ຍືນນານ. ຢູ່ໃນສະພາບເງື່ອນໄຂດັ່ງກ່າວນີ້, ຈຸດປະສົງ ຂອງຄູ່ມືສະບັບນີ້ ແມ່ນເພື່ອໃຫ້ ຜູ້ປະກອບການ ຂອງ ສປປ ລາວ ມີຄວາມເຂົ້າໃຈ:

- ແຜນງານການຄ້າດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ ທີ່ມີຢູ່ໃນປະຈຸບັນ, ແລະ ທ່າແຮງ ສຳລັບ ສປປ ລາວ ພາຍໃຕ້ແຜນງານ EBA, ແລະ ສິ່ງທີ່ ສປປ ລາວ ຈຳເປັນຈະຕ້ອງຮູ້ ກ່ຽວກັບ ແຜນງານການຄ້າ ດ້ວຍສິດທິພິເສດອື່ນໆ ຂອງ EU ທີ່ອາດຈະມີຜົນນຳໃຊ້ ກັບ ສປປ ລາວ ຫຼັງຈາກຫຼຸດພົ້ນອອກຈາກ ສະຖານະພາບ ຂອງການເປັນປະເທດດ້ອຍພັດທະນາ; ແລະ

- ຜູ້ປະກອບການ ຂອງ ສປປ ລາວ ສາມາດເຂົ້າເຖິງຕະຫຼາດຂອງສະຫະພາບເອີຣົບ ໄດ້ແນວໃດ - ໂດຍມີຄຳແນະນຳ ກ່ຽວກັບ ບັນດາກົດລະບຽບ ແລະ ຂັ້ນຕອນຕ່າງໆ ທີ່ກ່ຽວຂ້ອງ ທີ່ຈະຕ້ອງໄດ້ປະຕິບັດຕາມ ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຈາກແຜນງານການຄ້າ ດ້ວຍສິດທິພິເສດ ທີ່ມີຜົນນຳໃຊ້

ຄູ່ມືສະບັບນີ້ ແບ່ງອອກເປັນ 3 ພາກ ຄື:

**ພາກ A:** ການທຳຄວາມເຂົ້າໃຈ ການຈັດສັນ ການຄ້າດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ: ພາກທຳອິດ ໃຫ້ເຫັນພາບລວມຂອງແຜນງານການຄ້າດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ ຄື ແຜນງານ EBA ຂອງ ສະຫະພາບເອີຣົບ, ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+. ພາກນີ້ ພະຍາຍາມຊ່ວຍໃຫ້ຜູ້ອ່ານ ເຂົ້າໃຈ ຂໍ້ກຳນົດ ຫຼື ຄວາມຕ້ອງການ ສຳລັບການໄດ້ຮັບຜົນປະໂຫຍດ ຈາກແຕ່ລະແຜນງານເຫຼົ່ານີ້, ປະເພດຜະລິດຕະພັນທົ່ວໄປ ທີ່ນອນຢູ່ພາຍໃຕ້ ແຕ່ລະແຜນງານ ແລະ ພື້ນຖານ ສຳລັບການຖອນ ຫຼື ການອອກຈາກ ແຜນງານ ແບບຊົ່ວຄາວ, ແລະ ນອກນັ້ນ ກໍອັບເດດ ກ່ຽວກັບ ສະຖານະໃນປັດຈຸບັນ ຂອງ ການປະຕິຮູບ ແຜນງານ GSP ຂອງ ສະຫະພາບເອີຣົບ.

**ພາກ B:** ບົດແນະນຳທົ່ວໄປ ສຳລັບການສົ່ງອອກ ພາຍໃຕ້ ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ: ພາກທີສອງ ໃຫ້ຂໍ້ມູນທົ່ວໄປ ກ່ຽວກັບການສົ່ງອອກ ພາຍໃຕ້ ແຜນງານການຄ້າດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ, ໂດຍເນັ້ນໜັກໃສ່ ການເຂົ້າເຖິງ ຂອງ ສປປ ລາວ ພາຍໃຕ້ ແຜນງານ EBA. ຖ້າເວົ້າສະເພາະແລ້ວ, ພາກນີ້ ກວມເອົາ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດຂອງສິນຄ້າ, ການປົກປ້ອງ, ລະບົບການຂຶ້ນທະບຽນແຫຼ່ງກຳເນີດຂອງສິນຄ້າ ຂອງຜູ້ສົ່ງອອກ ຂອງ ສະຫະພາບເອີຣົບ (REX), ເອກະສານແຈ້ງເສຍພາສີ ຂອງສະຫະພາບເອີຣົບ (SAD), ຄ່າໃຊ້ຈ່າຍນອກເໜືອຈາກພາສີອາກອນ, ແລະ ບາດກ້າວທີ່ຕ້ອງການ ສຳລັບ ຜູ້ປະກອບການ ຂອງ ສປປ ລາວ ທີ່ຈະສົ່ງອອກໄປ ສະຫະພາບເອີຣົບ. ພາກນີ້ ຍັງໃຫ້ເຫັນ ພາບລວມ ຂອງ ຊັບພະຍາກອນເພີ່ມຕື່ມ, ທີ່ສາມາດເປັນປະໂຫຍດ ສຳລັບ ຫົວໜ່ວຍທຸລະກິດ ຂອງ ສປປ ລາວ ທີ່ມີຄວາມສົນໃຈ ໃນການສົ່ງອອກຜະລິດຕະພັນ ຂອງຕົນ ໄປຫາ ສະຫະພາບເອີຣົບ (ເຊັ່ນ: ແຫຼ່ງຂໍ້ມູນອອນລາຍ ແລະ ຂໍ້ມູນການຕິດຕໍ່ ທີ່ກ່ຽວຂ້ອງ).

**ພາກ C:** ບົດແນະນຳສະເພາະຂະແໜງການ ສຳລັບການສົ່ງອອກ ພາຍໃຕ້ ແຜນງານການຄ້າດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ: ພາກທີສາມ ສ້າງຂຶ້ນ ຕໍ່ຈາກ ພາກ B ເພື່ອໃຫ້ຄຳແນະນຳລະອຽດ ສຳລັບຂັ້ນຕອນ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງ ທີ່ຈະຕ້ອງໄດ້ປະຕິບັດຕາມ ສຳລັບຂະແໜງການໃດໜຶ່ງ. ສຳລັບຈຸດປະສົງ ຂອງ ຄູ່ມືສະບ◌ັບນີ້, ໄດ້ຄັດເລືອກເອົາ 5 ຂະແໜງການຜະລິດຕະພັນ ໂດຍຄຳນຶງເຖິງ ທ່າແຮງການສົ່ງອອກທີ່ມີຢູ່ແລ້ວ ແລະ ທ່າແຮງການສົ່ງອອກໃນອະນາຄົດ ສຳລັບ ສປປ ລາວ ຄື: ຜະລິດຕະພັນກະສິກຳ ທີ່ເປັນວັດຖຸດິບ; ຜະລິດຕະພັນອາຫານປຸງແຕ່ງ; ເຄື່ອງນຸ່ງຫົ່ມ/ແຜ່ນແພ; ເກີບ; ແລະ ຜະລິດຕະພັນໄມ້ແປຮູບ. ບົດແນະນຳເຫຼົ່ານີ້ ສາມາດ ຖືກນຳໃຊ້ ເປັນພື້ນຖານ ໃນການກຳນົດ ແລະ ປະຕິບັດຕາມຂັ້ນຕອນ ສຳລັບຂະແໜງການອື່ນໆ ນຳອີກດ້ວຍ.

ຜູ້ອ່ານ ສາມາດນຳໃຊ້ ອະທິບາຍຄຳສັບ ທີ່ໄດ້ກຳນົດໃຫ້ ເພື່ອເປັນບ່ອນອ້າງອີງ ສຳລັບບັນດາຄຳສັບວິຊາການ ທີ່ມີຢູ່ໃນ ຄູ່ມືທຸລະກິດ ສະບັບນີ້.

# ພາກ A: ການທຳຄວາມເຂົ້າໃຈ ກ່ຽວກັບ ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ

## 1.1. ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ EU – ແຜນງານ EBA, ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+

ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ - ໝາຍເຖິງ ແຜນງານການໃຫ້ສິດທິພິເສດທົ່ວໄປ (GSP) ແມ່ນເປັນລະບົບການຜ່ອນຜັນ ທາງການຄ້າແບບຝ່າຍດຽວ ທີ່ຫຼຸດ ຫຼື ລົບລ້າງອັດຕາພາສີ ຕໍ່ ການສົ່ງອອກຫຼາຍຢ່າງ ຈາກບັນດາປະເທດທີ່ກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ. ແຜນງານ GSP ຖືກນຳໃຊ້ ເພື່ອເພີ່ມລາຍຮັບການສົ່ງອອກໃນປະເທດກຳລັງພັດທະນາ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ສົ່ງເສີມ ການພັດທະນາ ແບບຍືນຍາວ ແລະ ການຄຸ້ມຄອງທີ່ດີ. ການຈັດສັນສິດທິພິເສດ GSP ແມ່ນເນັ້ນໃສ່ການໃຫ້ສິດທິພິເສດດ້ານພາສີ ແກ່ການຊື້ຂາຍສິນຄ້າ.

ແຜນງານ GSP ຂອງ ສະຫະພາບເອີຣົບ ແມ່ນມີມາຕັ້ງແຕ່ ປີ 1971, ເຖິງແມ່ນວ່າ ມັນຢູ່ພາຍໃຕ້ການທົບທວນຄືນຄວາມເລິກເຊິ່ງ ແລະ ຂອບເຂດ ທີ່ແຕກຕ່າງກັນໄປ ໃນແຕ່ລະໄລຍະກໍຕາມ. ການປ່ຽນແປງສ່ວນໃຫຍ່ ທີ່ມີຮັບຜົນກະທົບ ຕໍ່ບາງສ່ວນທີ່ກ່ຽວຂ້ອງ ແມ່ນເປັນບັນຫາ ກ່ຽວກັບ ການກວມເອົາຜະລິດຕະພັນ ຂອງ ແຜນງານ GSP, ໂກຕ້າ, ເພດານ, ການບໍລິຫານ, ຜູ້ໄດ້ຮັບຜົນປະໂຫຍດ ແລະ ຄວາມເລິກເຊິ່ງຂອງການຕັດຕາພາສີ. ໂຄງສ້າງ ຂອງແຜນງານ ຍັງໄດ້ປະສົບກັບການປ່ຽນແປງທີ່ສຳຄັນ ຕະຫຼອດເວລາ.

ແຜນງານ GSP ຂອງ ສະຫະພາບເອີຣົບ ແມ່ນສອດຄ່ອງກັບ ຂໍ້ກຳນົດ ວ່າດ້ວຍການໃຫ້ສິດ ຂອງ ອົງການການຄ້າໂລກ (WTO) ປີ 1979, ຊຶ່ງທຳໜ້າທີ່ ເປັນຂໍ້ຍົກເວັ້ນ ຕໍ່ກັບ ເສົາຫຼັກ ຂອງລະບົບ WTO, ພັນທະຂອງ ປະເທດທີ່ມີເງື່ອນໄຂໄດ້ຮັບສິດທິພິເສດຫຼາຍທີ່ສຸດ (MFN), ຊຶ່ງປ່ອຍໃຫ້ປະເທດທີ່ພັດທະນາແລ້ວ ສາມາດໃຫ້ການປະຕິບັດ ດ້ານພາສີ ຕາມຄວາມແຕກຕ່າງ ແລະ ມີສິດທິພິເສດຫຼາຍຂຶ້ນ ແກ່ ການນຳເຂົ້າ ຈາກບັນດາປະເທດທີ່ກຳລັງພັດທະນາ.

**ພື້ນຖານດ້ານນິຕິກຳ ໃນປັດຈຸບັນ ສຳລັບ GSP ຂອງ ສະຫະພາບເອີຣົບ ແມ່ນໄດ້ກຳນົດໄວ້ ຢູ່ໃນກົດລະບຽບ (EU) ເລກທີ 978/2012 (ຊຶ່ງຕໍ່ໄປນີ້ ໝາຍເຖິງ ລະບຽບການ GSP)[3].** ຢູ່ໃນຮູບແບບປັດຈຸບັນ, GSP ຂອງ ສະຫະພາບເອີຣົບ ປະກອບມີ ການຈັດສັນສິດທິພິເສດ 3 ປະເພດ.

ຕາຕະລາງ 1 ສະແດງໃຫ້ເຫັນພາບລວມ ກ່ຽວກັບຫຼັກການທີ່ສຳຄັນທີ່ມີຜົນນຳໃຊ້ກັບ ແຕ່ລະແຜນງານ ເຫຼົ່ານີ້ – ໃນດ້ານເງື່ອນໄຂ, ລະດັບການເຂົ້າເຖິງຕະຫຼາດ ແລະ ການຊື້ນສຸດ ສິດທິພິເສດ.

**ຮູບ 2: ປະເພດ ການຈັດສັນການຄ້າ ດ້ວຍສິດທິພິເສດ ຂອງ EU**

| ແຜນງານ GSP ທີ່ເປັນມາດຕະຖານ | ແຜນງານ GSP+ | ແຜນງານ EBA |
|---|---|---|
| ເປັນການຈັດສັນທົ່ວໄປ<br><br>ສາມາດມີຜົນນຳໃຊ້ ກັບ ບັນດາປະເທດກຳລັງພັດທະນາ ທີ່ໄດ້ຕາມເງື່ອນໄຂມາດຖານ ອັນແນ່ນອນ | ເປັນການຈັດສັນແບບພິເສດ<br><br>ສາມາດມີຜົນນຳໃຊ້ ກັບ ບັນດາປະເທດກຳລັງພັດທະນາ ທີ່ລົງນາມ ແລະ ຈັດຕັ້ງປະຕິບັດ 27 ສົນທິສັນຍາ ທີ່ກ່ຽວຂ້ອງກັບ ການພັດທະນາແບບຍືນນານ ແລະ ການຄຸ້ມຄອງທີ່ດີ | ເປັນການຈັດສັນແບບພິເສດ<br><br>ສາມາດມີຜົນນຳໃຊ້ ກັບ ບັນດາປະເທດດ້ອຍພັດທະນາ |

**ຕາຕະລາງ 1: ຂໍ້ມູນທີ່ສຳຄັນ ກ່ຽວກັບ ການດຳເນີນງານ ຂອງ ແຜນງານການຄ້າ ດ້ວຍສິດທິພິເສດ ຂອງ EU**

| | ແຜນງານ EBA | ແຜນງານ GSP ທີ່ເປັນມາດຕະຖານ | ແຜນງານ GSP+ |
|---|---|---|---|
| **ປະເທດໃດ ທີ່ມີເງື່ອນໄຂ?** | ໝົດທຸກປະເທດດ້ອຍພັດທະນາ.<br><br>**ໃນປັດຈຸບັນ, ມີ 48 ປະເທດ ທີ່ຖືກຈົດເຂົ້າໃນບັນຊີລາຍຊື່ ເປັນປະເທດ ທີ່ໄດ້ຮັບ ຜົນປະໂຫຍດ ຈາກ ແຜນງານ** EBA **ໃນເອກະສານຊ້ອນທ້າຍ** IV **ຂອງ ລະບຽບການ** GSP, **ຊຶ່ງລວມມີ ສປປ ລາວ ນຳ.**[4] | ປະເທດກຳລັງພັດທະນາ ທີ່:<br>(i) ບໍ່ທັນໄດ້ຖືກຈັດປະເພດ ຈາກ ທະນາຄານໂລກ ວ່າ ເປັນປະເທດ ທີ່ມີລາຍຮັບສູງ ຫຼື ລາຍປານກາງລະດັບສູງ ໃນຊ່ວງໄລຍະ ສາມປີ ລຽນກັນ; ແລະ<br>(ii) ບໍ່ໄດ້ຮັບຜົນປະໂຫຍດ ຈາກ ການຈັດສັນ ການເຂົ້າເຖິງຕະຫຼາດ ດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ ທີ່ໃຫ້ສິດທິພິເສດ ທີ່ເທົ່າທຽມກັນ ຫຼື ຫຼາຍກວ່າ ແຜນງານ GSP ທີ່ເປັນມາດຕະຖານ, ສຳລັບການຄ້າທັງໝົດ ທີ່ມີຄວາມສຳຄັນ (ເຊັ່ນ ຄູ່ຮ່ວມສັນຍາການຄ້າເສລີ, ຫຼື ອະນາເຂດຢູ່ຕ່າງປະເທດຂອງ EU).[5]<br><br>*ເອກະສານຊ້ອນທ້າຍ II ຂອງລະບຽບການ GSP ກຳນົດ ລາຍຊື່ບັນດາປະ* | ບັນດາປະເທດທີ່ໄດ້ຮັບຜົນປະໂຫຍດຈາກ ແຜນງານ GSP ທີ່ເປັນມາດຕະຖານ ທີ່:<br>(i) ໄດ້ຕາມເງື່ອນໄຂມາດຖານ ດ້ານຄວາມອ່ອນແອທາງດ້ານເສດຖະກິດ ທີ່ໄດ້ລະບຸໄວ້ ຢູ່ໃນມາດຕາ 9(1)(a) ແລະ ເອກະສານຊ້ອນທ້າຍ VII ຂອງລະບຽບການ GSP;[7] ແລະ<br>(ii) ໄດ້ລົງນາມ ແລະ ຈັດຕັ້ງປະຕິບັດ 27 ສົນທິສັນຍາສາກົນຢ່າງມີປະສິດທິພາບ ວ່າດ້ວຍສິດທິມະນຸດ, ສິ່ງແວດລ້ອມ ແລະ ສິດທິຂອງແຮງງານ ຊຶ່ງມີລາຍຊື່ ຢູ່ໃນເອະສານຊ້ອນທ້າຍ VIII ຂອງລະບຽບການ GSP.[8]<br><br>ປັດຈຸບ◌ັນ ມີແປດປະເທດ ທີ່ຖືກຈົດຊື່ ເປັນຜູ້ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP+. |

| | ແຜນງານ EBA | ແຜນງານ GSP ທີ່ເປັນມາດຕະຖານ | ແຜນງານ GSP+ |
|---|---|---|---|
| | | *ເທດ ທີ່ສາມາດ ໄດ້ຮັບຜົນປະໂຫຍດ ຈາກ GSP ທີ່ເປັນມາດຕະຖານ.*[6] | |
| **ຍື່ນສະເໜີ ແນວໃດ?** | ປະເທດຕ່າງໆ ບໍ່ຈຳເປັນຈະຕ້ອງຍື່ນສະເໜີ ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ EBA ແຕ່ຈະມີເງື່ອນໄຂ ແບບອັດຕະໂນມັດ ຖ້າວ່າ ປະເທດດັ່ງກ່າວ ຖືກກຳນົດວ່າເປັນປະເທດດ້ອຍພັດທະນາ ໂດຍອົງການສະຫະປະຊາຊາດ (UN).[9] | ປະເທດຕ່າງໆ ບໍ່ຈຳເປັນຕ້ອງສະເໜີຂໍຮັບເງື່ອນໄຂ ເພື່ອເຂົ້າເຖິງການຈັດສັນຈາກ ແຜນງານ GSP ທີ່ເປັນມາດຕະຖານ. ຄະນະກຳມະການເອີຣົບ (EC) ເປັນຜູ້ເພີ່ມ ຫຼື ຕັດ ປະເທດທີ່ໄດ້ຜ່ານເງື່ອນໄຂ ອອກຈາກບັນຊີລາຍຊື່ ຜ່ານທາງ ກົດໝາຍທີ່ມີຜົນສັກສິດ. | ບໍ່ເໝືອນກັບ ແຜນງານ EBA ແລະ ແຜນງານ GSP ທີ່ເປັນມາດຕະຖານ, ການຍື່ນສະເໜີ ແມ່ນບໍ່ເປັນອັດຕະໂນມັດ. ປະເທດທີ່ໄດ້ຮັບຜົນປະໂຫຍດຈາກແຜນງານ GSP ທີ່ເປັນມາດຕະຖານ ຕ້ອງໄດ້ຍື່ນຄຳຮ້ອງສະເໜີ, ພາຍຫຼັງທີ່ ຄະນະກຳມະການ EC ໄດ້ດຳເນີນ ການປະເມີນ ຄວາມຖືກຕ້ອງສອດຄ່ອງກັບບັນດາເງື່ອນໄຂ ແລະ ຂໍ້ກຳນົດ ຫຼື ຄວາມຕ້ອງການທີ່ກ່ຽວຂ້ອງ. |
| **ລະດັບການປົກຄຸມແມ່ນມີຫຍັງແດ່?** | ການເຂົ້າເຖິງ ແບບປອດພາສີ ສຳລັບ ໝົດທຸກຜະລິດຕະພັນ, ຍົກເວັ້ນອາວຸດ, ລູກປືນ ແລະ ຜະລິດຕະພັນທີ່ຄ້າຍໆກັນ (ນັ້ນກໍຄື ຜະລິດຕະພັນ ທີ່ຖືກຈັດປະເພດ ພາຍໃຕ້ ພາກທີ 93 ຂອງ ເຄື່ອງມືຈັດປະເພດສິນຄ້າຂອງສະຫະພາບເອີຣົບ).[10] | ປະມານ 66% ຂອງລາຍການທີ່ຢູ່ໃນຕາຕະລາງພາສີ ແມ່ນມີສິດເຂົ້າເຖິງຕະຫຼາດ EU[11] ແບບປອດພາສີ ຫຼື ຫຼຸດພາສີ.<br>ການຫຼຸດຜ່ອນພາສີ ແມ່ນຂຶ້ນກັບຫຼາຍປັດໃຈ, ໂດຍສະເພາະແມ່ນວ່າ ຜະລິດຕະພັນ ຖືກພິຈາລະນາ ວ່າເປັນຜະລິດຕະພັນທີ່ ຫຼໍ່ແຫຼມ ຫຼື ບໍ່.[12]<br><br>ຖ້າເວົ້າລະອຽດ ກໍຄືວ່າ:<br>▪ ຜະລິດຕະພັນທີ່ບໍ່ຫຼໍ່ແຫຼມ ແມ່ນຈະໄດ້ຮັບການເຂົ້າເຖິງແບບປອດພາສີ; ສ່ວນ<br>▪ ຜະລິດຕະພັນທີ່ຫຼໍ່ແຫຼມ ທີ່ມາຈາກບັນຊີນີ້ ແມ່ນຈະໄດ້ຮັບການເຂົ້າເຖິງ ແບບຫຼຸດພາສີ.<br><br>*ອີງຕາມ ເອກະສານຊ້ອນທ້າຍ I ສຳລັບ ລາຍລະອຽດເພີ່ມຕື່ມ.* | ແຜນງານ GSP+ ມີຜົນນຳໃຊ້ກັບຜະລິດຕະພັນດຽວກັນ ເໝືອນກັບແຜນງານ GSP ທີ່ເປັນມາດຕະຖານ (ກວມປະມານ 66% ຂອງລາຍການທີ່ຢູ່ໃນຕາຕະລາງພາສີ), ແຕ່ບໍ່ສ້າງຄວາມແຕກຕ່າງກັນ ລະຫວ່າງ ຜະລິດຕະພັນ ທີ່ຫຼໍ່ແຫຼມ ແລະ ບໍ່ຫຼໍ່ແຫຼມ ແລະ, ດັ່ງນັ້ນ, ຈຶ່ງຂະຫຍາຍໄລຍະ ຂອງບັນຊີລາຍການ ທີ່ຢູ່ໃນຕາຕະລາງພາສີ ທີ່ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ ແບບປອດພາສີ.[13] |

**ການຫຼຸດພົ້ນ ຈາກລະດັບຂະແໜງການ**

<table>
<tr><th></th><th>ແຜນງານ EBA</th><th>ແຜນງານ GSP ທີ່ເປັນມາດຕະຖານ</th><th>ແຜນງານ GSP+</th></tr>
<tr><td>ເມື່ອໃດ ການຢຸດຕິ ສິດທິພິເສດ ຈະມີຜົນນຳໃຊ້?</td><td>ເມື່ອຫຼຸດພົ້ນອອກຈາກ ສະຖານະພາບຄວາມເປັນປະເທດດ້ອຍພັດທະນາແລ້ວ, ໄລຍະຂ້າມຜ່ານສາມປີ ຈະມີຜົນນຳໃຊ້ ກ່ອນທີ່ ສິດທິພິເສດ EBA ຈະຖືກຖອນ[14] ຢ່າງສົມບູນ.</td><td colspan="2">ເມື່ອຫຼຸດພົ້ນ ໄປສູ່ ສະຖານະພາບ ຂອງ ປະເທດທີ່ມີລາຍຮັບປານກາງ ລະດັບສູງ ຫຼື ລາຍຮັບສູງ, ໄລຍະຂ້າມຜ່ານ ໜຶ່ງປີ ຈະມີຜົນນຳໃຊ້ ກ່ອນໝົດກຳນົດ ການໄດ້ຮັບຜົນປະໂຫຍດຈາກແຜນງານ GSP ສຳລັບໝົດທຸກຜະລິດຕະພັນ ທີ່ໄດ້ຕາມເງື່ອນໄຂ.[15]<br>ນອກຈາກນັ້ນ, ໃນກໍລະນີ ຂອງ ຜູ້ໄດ້ຮັບຜົນປະໂຫຍດຈາກແຜນງານ GSP+, ຜົນປະໂຫຍດ ຈາກແຜນງານ GSP+ ກໍຈະຢຸດຕິມີຜົນນຳໃຊ້ເຊັ່ນດຽວກັນ ຖ້າວ່າ ມັນບໍ່ຕອບສະໜອງຕາມເງື່ອນໄຂມາດຖານ ດ້ານຄວາມອ່ອນແອທາງດ້ານເສດຖະກິດ ຂອງຕົນ ອີກແລ້ວ (ຕາມທີ່ກຳນົດໄວ້ ຢູ່ໃນ ມາດຕາ 9(1) ແລະ ເອກະສານຊ້ອນທ້າຍ VII ຂອງລະບຽບການ GSP).[16]</td></tr>
<tr><td></td><td colspan="3">ການຫຼຸດພົ້ນ ທີ່ອີງຕາມຜະລິດຕະພັນ</td></tr>
<tr><td></td><td>ບໍ່ມີກົນໄກຫຼຸດພົ້ນ ສຳລັບຜະລິດຕະພັນ.</td><td colspan="2">ໂດຍທົ່ວໄປແລ້ວ, ຜົນປະໂຫຍດ ຈາກແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+ ຈະຖືກໂຈະ ສຳລັບຜະລິດຕະພັນໃດໜຶ່ງ ເມື່ອຄ່າສະເລ່ຍ ການນຳເຂົ້າຜະລິດຕະພັນດັ່ງກ່າວ ຂອງ EU, ໃນສາມປີລຽນກັນ, ເກີນ 57% ຂອງ ການນຳເຂົ້າທັງໝົດ ຂອງ EU ສຳລັບຜະລິດຕະພັນດັ່ງກ່າວ ທີ່ມາຈາກ ໝົດທຸກປະເທດທີ່ໄດ້ຮັບຜົນປະໂຫຍດຈາກແຜນງານ GSP.[17] ລະດັບອ້າງອີງພື້ນຖານນີ້ ຖືກກຳນົດ ຢູ່ທີ່ 47.2% ສຳລັບ ແຜ່ນແພ ແລະ ສິນຄ້າປະເພດເຄື່ອງນຸ່ງຫົ່ມ ແລະ ຢູ່ທີ່ 17.5% ສຳລັບຕົ້ນໄມ້ ແລະ ພືດ, ໄຂມັນ ແລະ ນ້ຳມັນ, ແລະ ສານເຄມີໃດໜຶ່ງ. ດັ່ງນັ້ນ, ຍົກຕົວຢ່າງວ່າ, ຖ້າ ການນຳເຂົ້າເຄື່ອງນຸ່ງຫົ່ມ ຈາກປະເທດໜຶ່ງ ເກີນ 47.2% ຂອງ ການນຳເຂົ້າທັງໝົດຂອງ EU ສຳລັບຜະລິດຕະພັນດັ່ງກ່າວ ຈາກ ໝົດທຸກປະເທດທີ່ໄດ້ຮັບຜົນປະໂຫຍດຈາກແຜນງານ GSP ເປັນເວລາສາມປີລຽນກັນ, EU ອາດຈະໂຈະ ສິດທິພິເສດທີ່ກ່ຽວຂ້ອງ ອອກຈາກປະເທດດັ່ງກ່າວ ສຳລັບ ຜະລິດຕະພັນນັ້ນໆ.<br>ສິ່ງດັ່ງກ່າວນີ້ ໄດ້ເປັນກໍລະນີ ສຳລັບ ຜະລິດຕະພັນບາງຢ່າງ ທີ່ມາຈາກ ປະເທດອິນເດຍ, ອິນໂດເນເຊຍ ແລະ ເຄັນຢ້າ.[18] ຄ່າສະເລ່ຍຂອງ ການນຳເຂົ້າ (i) ເຄື່ອງນຸ່ງຫົ່ມ ຂອງ EU ຈາກປະເທດອິນເດຍ; ແລະ (ii) ໄມ້ ແລະ ວັດຖຸທີ່ເປັນໄມ້ ແລະ ຖ່ານໄມ້ ຈາກ ອິນໂດເນເຊຍ ໄດ້ເກີນ ລະດັບອ້າງອີງພື້ນຖານ ທີ່ໄດ້ກຳນົດ ຢູ່ໃນລະບຽບການ GSP[19] ທີ່ກ່ຽວຂ້ອງ ໃນໄລຍະເວລາສາມປີລຽນກັນ, ຊຶ່ງສົ່ງຜົນເຮັດໃຫ້ EU ໂຈະສິດທິພິເສດ ສຳລັບ ຜະລິດຕະພັນເຫຼົ່ານີ້ ຈາກປະເທດນັ້ນໆ.</td></tr>
<tr><td></td><td colspan="3">ການເຮັດສັນຍາການຄ້າ ດ້ວຍສິດທິພິເສດ ກັບ EU</td></tr>
<tr><td></td><td>ສະຖານະພາບ EBA ແລະ ສິດທິພິເສດ ແມ່ນຈະບໍ່ຖືກຖອນ</td><td colspan="2">ຜົນປະໂຫຍດຈາກແຜນງານ GSP ແລະ GSP+ ຈະຖືກຕັດອອກ ເມື່ອມີການຈັດສັນ ການເຂົ້າເຖິງຕະຫຼາດ ດ້ວຍສິດທິພິເສດ ກັບ EU – ເຖິງແມ່ນວ່າ ຈະມີໄລຍະຂ້າມຜ່ານ ສອງປີ ນັບຈາກວັນທີ ທີ່ຈະມີຜົນນຳ</td></tr>
</table>

| ແຜນງານ EBA | ແຜນງານ GSP ທີ່ເປັນມາດຕະຖານ | ແຜນງານ GSP+ |
|---|---|---|
| ເມື່ອເຮັດສັນຍາການຄ້າດ້ວຍສິດທິພິເສດ ກັບ EU | ໃຊ້ ການຈັດສັນການເຂົ້າເຖິງຕະຫຼາດດ້ວຍສິດທິພິເສດກໍ່ຕາມ ກ່ອນມີການຕັດພັນປະໂຫຍດອອກອອກ ຢ່າງສົມບູນ.[20] | |

**ການຖອນສິດທິພິເສດ**

ສິດທິພິເສດ ສາມາດຖືກຖອນໄດ້ ໃນສະພາບທີ່ຜິດປົກກະຕິ ໂດຍສະເພາະໃນກໍລະນີຂອງ:[21]

- ການລ່ວງລະເມີດຫຼັກການ ທີ່ກຳນົດໄວ້ ຢູ່ໃນສົນທິສັນຍາພື້ນຖານ ວ່າດ້ວຍສິດທິມະນຸດ ແລະ ສິດທິຂອງແຮງງານ ແບບຮ້າຍແຮງ ແລະ ເປັນລະບົບ. ຍົກຕົວຢ່າງ, ໃນປີ 2020, EU ໄດ້ຕັດ ສິດທິພິເສດ EBA ຕໍ່ກັບຜະລິດຕະພັນໃດໜຶ່ງ ທີ່ມາຈາກປະເທດກຳປູເຈຍ ຍ້ອນມີຄວາມກັງວົນ ຢ່າງຮ້າຍແຮງ ແລະ ເປັນລະບົບທີ່ພົວພັນກັບ ສິດທິຂອງມະນຸດ ທີ່ໄດ້ເປີດເຜີຍ ໃນປະເທດ;[22]
- ການສົ່ງອອກສິນຄ້າ ທີ່ຜະລິດໂດຍ ແຮງງານທີ່ເປັນນັກໂທດ;
- ມີຂໍ້ບົກຜ່ອງ ຢ່າງຮ້າຍແຮງ ໃນການຄວບຄຸມພາສີ ການສົ່ງອອກ ຫຼື ການຜ່ານ ຂອງຢາເສບຕິດ, ຫຼື ບໍ່ສາມາດ ປະຕິບັດຕາມ ສົນທິສັນຍາສາກົນ ວ່າດ້ວຍ ການຕ້ານການກໍ່ການຮ້າຍ ແລະ ການຟອກເງິນ;
- ມີການປະຕິບັດ ການຄ້າທີ່ບໍ່ເປັນທຳ ແບບຮ້າຍແຮງ ແລະ ເປັນລະບົບ, ຊຶ່ງລວມມີ ອັນທີ່ສົ່ງຜົນກະທົບຕໍ່ການສະໜອງວັດຖຸດິບ ທີ່ມີຜົນກະທົບທາງລົບ ຕໍ່ ອຸດສາຫະກຳ ຂອງ EU ແລະ ທີ່ບໍ່ໄດ້ຮັບແກ້ໄຂ ໂດຍປະເທດທີ່ໄດ້ຮັບຜົນປະໂຫຍດ;
- ການລະເມີດຈຸດປະສົງ ທີ່ຖືກຮັບຮອງຈາກ ອົງການປະມົງພາຍໃນພາກພື້ນ ຢ່າງຮ້າຍແຮງ ແລະ ເປັນລະບົບ ຫຼື ທຸກການຈັດສັນຂອງສາກົນ ທີ່ EU ເປັນພາຄີ ກ່ຽວກັບ ການອະນຸລັກ ແລະ ຄຸ້ມຄອງ ຊັບພະຍາກອນການປະມົງ;
- ການສໍ້ໂກງ ຫຼື ຄວາມຜິດປົກກະຕິ ໃນການປະຕິບັດຕາມ, ຫຼື ຈັດຕັ້ງປະຕິບັດ, ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງ ຜະລິດຕະພັນທີ່ກວມເອົາ ລວມທັງ ການສໍ້ໂກງ ຫຼື ຄວາມຜິດປົກກະຕິ ໃນການໃຫ້ການຮ່ວມມືດ້ານການບໍລິຫານ ເພື່ອຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ ການຈັດສັນສິດທິພິເສດ.

ຍິ່ງໄປກວ່ານັ້ນ, ສຳລັບ **ຜູ້ໄດ້ຮັບປະໂຫຍດຈາກ ແຜນງານ GSP+, ສິດທິພິເສດ ສາມາດ ຖືກຖອນຊົ່ວຄາວ ເມື່ອ** EU ພິຈາລະນາ ປະເທດທີ່ໄດ້ຮັບຜົນປະໂຫຍດ ວ່າ ບໍ່ປະຕິບັດຕາມ ເງື່ອນໄຂສະເພາະ ສຳລັບແຜນງານ GSP+ ອີກແລ້ວ (ເຊັ່ນ ການໃຫ້ສັດຕະຍາບັນ ແລະ ການຈັດຕັ້ງປະຕິບັດ ສົນທິສັນຍາສາກົນທີ່ກວມເອົາ ຢ່າງມີຜົນສັກສິດ ຫຼື ໄດ້ທຳການຈັບຈອງ ທີ່ຖືກຫ້າມໂດຍ ຫຼື ບໍ່ສອດຄ່ອງກັບ ຈຸດປະສົງ ຫຼື ວັດຖຸປະສົງ ຂອງ ສົນທິສັນຍາ).[23]

## 1.2. ສະຖານະພາບ ການເຂົ້າເຖິງຕະຫຼາດ EU ຂອງ ສປປ ລາວ ພາຍໃຕ້ການຈັດສັນສິດທິພິເສດ ທາງການຄ້າ ຂອງຕົນ

### i. ສປປ ລາວ ໃນນາມເປັນຜູ້ໄດ້ຮັບຜົນປະໂຫຍດ ຈາກແຜນງານ EBA

ໃນຖານະເປັນປະເທດດ້ອຍພັດທະນາ, ສປປ ລາວ ສາມາດ ໄດ້ຮັບ ຜົນປະໂຫຍດ ຈາກການເຂົ້າເຖິງ ຕະຫຼາດ EU ແບບປອດພາສີ, ແບບບໍ່ມີໂກຕ້າ ສໍາລັບ ໝົດທຸກຜະລິດຕະພັນ ຍົກເວັ້ນອາວຸດ, ລູກປືນ ແລະ ຜະລິດຕະພັນ ທີ່ກ່ຽວຂ້ອງ.

ເນື່ອງຈາກວ່າ ສປປ ລາວ ໄດ້ຖືກແນະນໍາ ໃຫ້ຫຼຸດພົ້ນ ອອກຈາກ ສະຖານະພາບ ການເປັນປະເທດດ້ອຍພັດທະນາ ໃນ ປີ 2026, ສິດທິພິເສດ EBA ຈະມີຜົນນໍາໃຊ້ ຈົນຮອດຢ່າງໜ້ອຍ ປີ 2029. (*ອີງຕາມ ຫ້ອງທີ 1*) – ໂດຍທີ່ວ່າ ມີໄລຍະຂ້າມຜ່ານ 3 ປີຫຼັງຈາກຫຼຸດພົ້ນ ກ່ອນທີ່ສິດທິພິເສດຖືກຖອນ.

ຫຼັງຈາກຖອນຕົວອອກຈາກ ສິດທິພິເສດ EBA, ສປປ ລາວ ສາມາດມີເງື່ອນໄຂ ທີ່ຈະໄດ້ຮັບສິດທິພິເສດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ ຫຼື ສາມາດສະເໜີເຂົ້າຫາ ແຜນງານ GSP+ (ທີ່ສະໜອງ ສິດທິພິເສດທາງພາສີ ທີ່ລົງເລິກກວ່າ ແຜນງານ GSP ທີ່ເປັນມາດຕະຖານ) - ຊຶ່ງຂຶ້ນກັບວ່າ ສປປ ລາວ ໄດ້ຕາມ ເງື່ອນໄຂມາດຖານ ທີ່ກ່ຽວຂ້ອງ ຫຼື ບໍ.

*ອີງຕາມ ເອກະສານຊ້ອນທ້າຍ I ແລະ II ສໍາລັບ ຄວາມເຂົ້າໃຈ ທີ່ລະອຽດຂຶ້ນຕື່ມ ກ່ຽວກັບ ການຈັດຕັ້ງ ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+ ພາຍໃຕ້ ກົດລະບຽບ GSP ໃນປັດຈຸບັນ, ທີ່ມີຜົນນໍາໃຊ້ ຈົນຮອດ ປີ 2023.*

**ຫ້ອງ 1: ການຫຼຸດພົ້ນ ຂອງ ສປປ ລາວ ອອກຈາກ ສະຖານະພາບ ການເປັນປະເທດດ້ອຍພັດທະນາ**

ບັນຊີລາຍຊື່ປະເທດດ້ອຍພັດທະນາ ແມ່ນຈະຖືກທົບທວນຄືນທຸກໆ 3 ປີ ໂດຍ ສະພາເສດຖະກິດ ແລະ ສັງຄົມ ຂອງ ອົງການສະຫະປະຊາຊາດ, ໂດຍພິຈາລະນາ ຄໍາແນະນໍາ ຈາກ ຄະນະກໍາມະການນະໂຍບາຍດ້ານການພັດທະນາ (CDP), ຊຶ່ງເປັນອົງການຈັດຕັ້ງຍ່ອຍ ຂອງ ສະພາເສດຖະກິດ ແລະ ສັງຄົມ ຂອງ ອົງການສະຫະປະຊາຊາດ. 3 ມາດຖານ ທີ່ໃຊ້ເພື່ອກໍານົດ ສະຖານະພາບ ປະເທດດ້ອຍພັດທະນາ ປະກອບມີຄື i) ລາຍຮັບຕໍ່ຫົວຄົນ; ii) ຊັບສິນທີ່ເປັນມະນຸດ; ແລະ iii) ໂອກາດທີ່ຈະໄດ້ຮັບຜົນກະທົບທາງດ້ານເສດຖະກິດ.

ປະເທດໜຶ່ງ ສາມາດຫຼຸດພົ້ນອອກຈາກ ປະເພດການເປັນປະເທດດ້ອຍພັດທະນາໄດ້ ຖ້າຫາກສາມາດປະຕິບັດໄດ້ຕາມ 2 ໃນ 3 ເງື່ອນໄຂມາດຖານ ຢູ່ໃນກອງປະຊຸມທີ່ຈັດຂຶ້ນທຸກ 3 ປີ ສອງຄັ້ງຕິດຕໍ່ກັນ ຂອງ ຄະນະກໍາມະການ CDP ຂອງ ອົງການສະຫະປະຊາຊາດ. ໃນກອງປະຊຸມຄັ້ງທີສອງ, ຄະນະກໍາມະການ CDP ສາມາດແນະນໍາ ໃຫ້ປະເທດຫຼຸດພົ້ນ ແລະ ໂດຍປົກກະຕິແລ້ວ, ການຫຼຸດພົ້ນ ຈະເກີດຂຶ້ນພາຍຫຼັງສາມປີ.

ເປັນຄັ້ງທໍາອິດ, ຢູ່ໃນການທົບທວນຄືນທຸກໆສາມປີ ຂອງອົງສະຫະປະຊາຊາດ ທີ່ຈັດຂຶ້ນໃນປີ 2018, ໄດ້ຄົ້ນພົບວ່າ ສປປ ລາວ ມີເງື່ອນໄຂຫຼຸດພົ້ນອອກຈາກ ສະຖານະພາບການເປັນປະເທດດ້ອຍພັດທະນາ, ເນື່ອງຈາກວ່າ ສປປ ລາວ ໄດ້ຜ່ານ ລະດັບທຽບຖານພື້ນຖານ 2 ຢ່າງ ໃນຈໍານວນເງື່ອນໄຂມາດຖານ 3 ຢ່າງ ຄື ມາດຖານເງື່ອນໄຂ ກ່ຽວກັບລາຍຮັບລວມແຫ່ງຊາດຕໍ່ຫົວຄົນ ແລະ ດັດຊະນີຊັບສິນທີ່ເປັນມະນຸດ. ສ່ວນ ລະດັບທຽບຖານພື້ນຖານ ສໍາລັບມາດຖານເງື່ອນໄຂທີສາມ ຄື ດັດສະນີ ໂອກາດທີ່ຈະໄດ້ຮັບຜົນກະທົບທາງດ້ານເສດຖະກິດ, ແມ່ນຍັງບໍ່ທັນໄດ້ຕາມເງື່ອນໄຂ, ແຕ່ ສປປ ລາວ ໄດ້ຄຸ້ມຄອງ ເພື່ອຫຼຸດຜ່ອນດັດສະນີນີ້ແລ້ວ ເພື່ອໃຫ້ຢູ່ໃນລະດັບໃກ້ຄຽງກັບ ລະດັບທຽບຖານພື້ນຖານ ທີ່ຕ້ອງການ.

**ຕໍ່ມາ, ໃນການທົບທວນຄືນ ທຸກໆ 3 ປີ ຂອງ ອົງການສະຫະປະຊາຊາດ ທີ່ຈັດຂຶ້ນໃນປີ 2021, ຄະນະກຳມະການ CDP ໄດ້ແນະນຳໃຫ້ ສປປ ລາວ ຫຼຸດພົ້ນ ໂດຍມີໄລຍະເວລາກະກຽມທີ່ຕໍ່ອອກໄປ 5 ປີ ໂດຍກຳນົດໃຫ້ຫຼຸດພົ້ນ ໃນປີ 2026, ຊຶ່ງເປັນການສັນນິຖານເສັ້ນທາງການຫຼຸດພົ້ນໃນແງ່ບວກ ແລະ ສືບຕໍ່ຜ່ານຊ່ວງໄລຍະເວລາ ທີ່ຈະນຳໄປສູ່ ການຫຼຸດພົ້ນ.**

**ບົດບາດ ຂອງບັນດາຫົວໜ່ວຍທຸລະກິດ ຢູ່ໃນ ສປປ ລາວ:** ບັນດາຫົວໜ່ວຍທຸລະກິດ ຢູ່ໃນ ສປປ ລາວ ທີ່ນຳໃຊ້ຜົນປະໂຫຍດໃນປັດຈຸບັນ ຈາກ ແຜນງານ EBA ເພື່ອສົ່ງອອກໄປ ສະຫະພາບເອີຣົບ ຄວນຮັບຮູ້ວ່າ ໃນທີ່ສຸດ, ປະເທດກໍຈະໄດ້ຫຼຸດພົ້ນອອກຈາກ ສະຖານະພາບ ທີ່ໄດ້ຮັບສິດທິພິເສດຈາກ ແຜນງານ EBA ແລະ ນັ້ນ ກໍເປັນຄວາມຮັບຜິດຊອບ ຂອງ ລັດຖະບານ ແຫ່ງ ສປປ ລາວ ທີ່ຈະຮັບປະກັນວ່າ ຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ, ທີ່ຕິດມາກັບ ການໃຫ້ ແລະ ການຮັກສາ ສະຖານະພາບຜູ້ໄດ້ຮັບຜົນປະໂຫຍດ ຈາກແຜນງານ GSP+ ຂອງ ສະຫະພາບເອີຣົບ, ໄດ້ຖືກຈັດຕັ້ງປະຕິບັດ ແລະ ໄດ້ມີການປະຕິບັດຕາມ ຢ່າງມີປະສິດທິພາບ ໃນທົ່ວອະນາເຂດ ຂອງຕົນ ໂດຍ ຜູ້ປະກອບການພາຍໃນປະເທດ ຂອງຕົນ. ບັນດາກົດໝາຍ, ລະບຽບການ ແລະ ແຜນງານການບັງຄັບໃຊ້ ຕ້ອງໄດ້ຖືກຮັບຮອງ ແລະ ບັງຄັບໃຊ້ ໂດຍ ລັດຖະບານ ແຫ່ງ ສປປ ລາວ ເພື່ອໃຫ້ມີຜົນສັກສິດ.

ບັນດາຫົວໜ່ວຍທຸລະກິດ ຢູ່ໃນ ສປປ ລາວ ທີ່ສົ່ງອອກໄປຫາ EU ຍັງມີຄວາມສົນໃຈ ໃນການຮັບປະກັນວ່າ ສປປ ລາວ ປະຕິບັດຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການເຫຼົ່ານີ້ ເພື່ອຮັບປະກັນວ່າ ຕົນໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP+. ດັ່ງນັ້ນ, ມັນຍັງເປັນຜົນປະໂຫຍດ ທີ່ດີທີ່ສຸດ ຂອງ ຜູ້ສົ່ງອອກ ຈາກ ສປປ ລາວ ທີ່ຈະເປັນເຈົ້າການ ເພື່ອຮັກສາ ການປະຕິບັດຕາມ 27 ສົນທິສັນຍາ ທີ່ໄດ້ລະບຸໄວ້ ຢູ່ໃນ ເອກະສານຊ້ອນທ້າຍ VIII ຂອງລະບຽບການ GSP.[24] ສິ່ງດັ່ງກ່າວນີ້ ປະກອບມີ ການເຝົ້າລະວັງ ເພື່ອຮັບປະກັນວ່າ, ທຸລະກິດຂອງເຂົາເຈົ້າເອງ, ລວມທັງ ຫົວໜ່ວຍທຸລະກິດອື່ນໆ ຂອງ ສປປລາວ, ໃຫ້ສິດເທົ່າທຽມກັນ ຕໍ່ກັບ ແຮງງານຊາຍ ແລະ ຍິງ, ບໍ່ຈ້າງບຸກຄົນທີ່ມີອາຍຸຕໍ່າກວ່າທີ່ຄວນຈະເຮັດວຽກໄດ້, ບໍ່ເຂົ້າຮ່ວມໃນການບັງຄັບ ຫຼື ໃຊ້ແຮງງານແບບບັງຄັບ, ບໍ່ປະຕິບັດງານ ໃນສະພາບເງື່ອນໄຂທີ່ບໍ່ປອດໄພ ແລະ ໃຫ້ປະຕິບັດງານ ໃນລັກສະນະທີ່ເປັນມິດກັບສິ່ງແວດລ້ອມ. ຜູ້ສົ່ງອອກ ຈາກ ສປປ ລາວ ຄວນພິຈາລະນາ ຈັດຕັ້ງປະຕິບັດ ກົນໄກການປະຕິບັດຕາມໃຫ້ຖືກຕ້ອງ, ທີ່ລວມມີ ການຈ້າງເຈົ້າໜ້າທີ່ ມາເຮັດວຽກ ດ້ານການປະຕິບັດໃຫ້ມີຄວາມຖືກຕ້ອງສອດຄ່ອງ ແລະ/ຫຼື ສ້າງຕັ້ງພະແນກ ທີ່ຮັບຜິດຊອບດ້ານການປະຕິບັດໃຫ້ມີຄວາມຖືກຕ້ອງສອດຄ່ອງ ເພື່ອຮັບປະກັນ ໃຫ້ສາມາດປະຕິບັດຕາມຂໍ້ກຳນົດເຫຼົ່ານີ້.

## ii. ການສືບຕໍ່ ທົບທວນຄືນ ແຜນງານ GSP ຂອງ EU ແລະ ການປະຕິຮູບ ທີ່ເປັນໄປໄດ້

ລະບຽບການ GSP ສະບັບປັດຈຸບັນ ຂອງ ສະຫະພາບເອີຣົບ ເລີ່ມມີຜົນບັງຄັບໃຊ້ ໃນວັນທີ 1 ມັງກອນ 2014 ແລະ ໂດຍສ່ວນໃຫຍ່, ຈະໝົດກຳນົດ ໃນວັນທີ 31 ທັນວາ 2023.[25] ໃນປີ 2019, ສະຫະພາບເອີຣົບ ໄດ້ເປີດໂຕ ຂະບວນການທົບທວນຄືນ ແລະ ປະຕິຮູບ ລະບຽບການ GSP ແລະ ຄາດວ່າຈະມີ ຂໍ້ສະເໜີ ດ້ານນິຕິກຳ ໃນປີ 2021.

ໂດຍສະເພາະ, ແຜນງານ EBA ຂອງ ສະຫະພາບເອີຣົບ *ແມ່ນຈະບໍ່* ໝົດກຳນົດ ແລະ ຈະສືບຕໍ່ ມີຜົນນຳໃຊ້ ຫຼັງຈາກວັນທີ 31 ທັນວາ 2023. ດັ່ງນັ້ນ, ສປປ ລາວ ຄວນຈະສາມາດສືບຕໍ່ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA ອັນດຽວກັນ ຈົນກວ່າຈະຫຼຸດພົ້ນ ອອກຈາກ ສະຖານະພາບຄວາມເປັນປະເທດດ້ອຍພັດທະນາ ແລະ ໄລຍະເວລາຂ້າມຜ່ານ 3 ປີ ຫຼັງຈາກນັ້ນ.

ເຖິງຢ່າງໃດກໍ່ຕາມ, ມັນຍັງມີຄວາມສຳຄັນ ສຳລັບ ສປປ ລາວ ທີ່ຈະຕິດຕາມ ຂະບວນການປະຕິຮູບ ທີ່ກຳລັງດຳເນີນຢູ່ ໃນປັດຈຸບັນ, ເນື່ອງຈາກວ່າ, ມັນສາມາດນຳໄປສູ່ ການປະຕິຮູບ/ການທົບທວນຄືນ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+, ຊຶ່ງ ສປປ ລາວ ເລັງເປົ້າໝາຍໃສ່ ແລະ ຈຳເປັນຈະຕ້ອງໄດ້ກະກຽມ ສຳລັບ ຫຼັງຈາກ ການຫຼຸດພົ້ນອອກຈາກ ປະເທດດ້ອຍພັດທະນາ.

ໃນຂະນະທີ່ ອົງປະກອບສະເພາະ ຂອງການປະຕິຮູບ ຍັງບໍ່ທັນຈະແຈ້ງເທື່ອ, ການປະເມີນຜ່ານມາ ຊີ້ໃຫ້ເຫັນວ່າ ອາດຈະມີການປ່ຽນແປງ ຂອບເຂດ ຂອງຜະລິດຕະພັນ, ບາງທີອາດຈະແມ່ນການປະສົມປະສານກັນ ຂອງ ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+, ຊຶ່ງວ່າ ຈາກນັ້ນ ທັງສອງແຜນງານ ອາດຈະຕ້ອງການ ໃຫ້ມີການໃຫ້ສັດຕະຍາບັນ ແລະ ການຈັດຕັ້ງປະຕິບັດ ສົນທິສັນຍາສາກົນໃດໜຶ່ງ ລວມທັງ ການຂະ

ຫຍາຍບັນຊີລາຍຊື່ ສິນທີສັນຍາສາກົນດັ່ງກ່າວ, ໂດຍສະເພາະ, ສັນຍາດ້ານສິ່ງແວດລ້ອມ ທີ່ກ່ຽວຂ້ອງ. ຜູ້ມີສ່ວນກ່ຽວຂ້ອງ ໃນທົ່ວໂລກ ຄວນຕິດຕາມ ຂະບວນການ ຢ່າງໃກ້ຊິດ, ເນື່ອງຈາກວ່າ ມັນອາດສາມາດ ນຳມາ ຊຶ່ງການປ່ຽນແປງ ທີ່ສຳຄັນ ກ່ຽວກັບ ການເຂົ້າເຖິງຕະຫຼາດ EU.

### iii. ຜົນກະທົບ ຈາກການຖອນຕົວ ຂອງ ປະເທດສະຫະລາດຊະອານາຈັກອັງກິດ ແລະ ການເຂົ້າເຖິງ ຕະຫຼາດ ຂອງ ສະຫະລາດຊະອານາຈັກອັງກິດ ດ້ວຍສິດທິພິເສດ ຂອງ ສປປ ລາວ

ມັນຍັງມີຄວາມສຳຄັນ ທີ່ຄວນຈະຮັບຮູ້ວ່າ ແຜນງານ GSP ຂອງ ສະຫະພາບເອີຣົບ, ທີ່ມີຜົນນຳໃຊ້ນັບຕັ້ງແຕ່ ວັນທີ 31 ທັນວາ 2020, ແມ່ນບໍ່ມີຜົນນຳໃຊ້ ກັບ ປະເທດສະຫະລາດຊະອານາອັງກິດ ອີກຕໍ່ໄປ, ທີ່ຢຸດຕິ ການເປັນສະມາຊິກ ຂອງ EU ໃນວັນທີ 31 ມັງກອນ 2020. ເຖິງຢ່າງໃດກໍ່ຕາມ, ລັດຖະບານ ຂອງສະຫະລາດຊະອານາຈັກອັງກິດ ຮັບຮູ້ວ່າ ບັນດາປະເທດກຳລັງພັດທະນາ ທີ່ມີເງື່ອນໄຂ "*ຈະສາມາດໄດ້ຮັບ ສິດທິພິເສດ ທາງການຄ້າ ຜ່ານທາງ ແຜນງານການໃຫ້ສິດທິພິເສດທົ່ວໄປ (GSP) ຂອງ ປະເທດ ສະຫະລາດຊະອານາຈັກອັງກິດ ນັບຕັ້ງແຕ່ ວັນທີ 1 ມັງກອນ 2021 ເປັນຕົ້ນໄປ*".[26] ໃນສະພາບການດັ່ງກ່າວນີ້, ລັດຖະບານ ຂອງ ສະຫະລາດຊະອານາຈັກອັງກິດ ຮັບຮູ້ວ່າ ຕົນຈະສືບຕໍ່ ສະໜອງ ສິດທິພິເສດທາງການຄ້າ ແກ່ ບັນດາປະເທດດຽວກັນ ທີ່ໄດ້ຮັບສິດທິພິເສດ ຈາກ ແຜນງານ GSP ຂອງ ສະຫະພາບເອີຣົບ ແລະ ອາດຈະສືບຕໍ່ມີ 3 ກອບວຽກ: 1) ກອບປະເທດດ້ອຍພັດທະນາ (LDCF); 2) ກອບທົ່ວໄປ; ແລະ 3) ກອບການເພີ່ມພູນ. ກອບເຫຼົ່ານີ້ ຈະປະຕິບັດເຊັ່ນດຽວກັນ ກັບການເຂົ້າເຖິງຕະຫຼາດອັນດຽວກັນ ເໝືອນກັບຢູ່ພາຍໃຕ້ ແຜນງານ GSP ຂອງ ສະຫະພາບເອີຣົບ. ສະນັ້ນ, ສປປ ລາວ ຈະມີສິດໄດ້ຮັບການເຂົ້າເຖິງຕະຫຼາດ ຂອງ ປະເທດສະຫະລາດຊະອານາຈັກອັງກິດ ໃນລະດັບດຽວກັນ ພາຍໃຕ້ ກອບປະເທດດ້ອຍພັດທະນາ ຂອງ ສະຫະລາດຊະອານາຈັກອັງກິດ.

# ພາກ B: ບັນດາຫຼັກການທົ່ວໄປ – ການສົ່ງອອກໄປ ສະຫະພາບເອີຣົບ (EU)

ພາກນີ້ ນຳສະເໜີ ບັນດາຫຼັກການ ທີ່ມີຜົນນຳໃຊ້ທົ່ວໄປ ສຳລັບ ຜູ້ປະກອບການ ຢູ່ໃນ ສປປ ລາວ ທີ່ກຳລັງພະຍາຍາມ ຫາວິທີສົ່ງອອກໄປ ສະຫະພາບເອີຣົບ ແລະ ໄດ້ຮັບຜົນປະໂຫຍດ ຈາກ EBA. ພາກນີ້ ຍັງໃຫ້ເຫັນພາບລວມ ຂອງ ເຄື່ອງມືອື່ນໆ ສຳລັບຜູ້ປະກອບການ ເພື່ອໃຫ້ສາມາດປະຕິບັດຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການຕ່າງໆ ໃຫ້ໄດ້ດີຂຶ້ນກວ່າເກົ່າ ສຳລັບ ການສົ່ງອອກໄປ ສະຫະພາບເອີຣົບ ແລະ ໄດ້ຮັບຜົນປະໂຫຍດ ຈາກແຜນງານ EBA.

ຍ້ອນແນວນັ້ນ, ພາກນີ້ ຈຶ່ງຖືກຈັດອອກ ເປັນສາມໝວດຍ່ອຍ:

- ສັງລວມ ຂໍ້ກຳນົດ ຫຼື ຄວາມຕ້ອງການຕົ້ນຕໍ ຂອງ ສປປ ລາວ ເພື່ອໃຫ້ຜູ້ປະກອບການ ມີສ່ວນຮ່ວມໃນການສົ່ງອອກ;
- ອີງປະກອບຫຼັກ ທີ່ຈະປະຕິບັດຕາມ ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ EBA; ແລະ
- ເຄື່ອງມື/ຊັບພະຍາກອນອື່ນໆທີ່ມີ ສຳລັບ ຜູ້ປະກອບການ ເພື່ອເຂົ້າຮ່ວມໃນການສົ່ງອອກໄປ ສະຫະພາບເອີຣົບ.

ຖ້າຫາກມີຄວາມກ່ຽວຂ້ອງກັນ, ຈະມີການອ້າງອີງ ແບບສະເພາະເຈາະຈົງເຖິງດ້ານຕ່າງໆ ທີ່ພົວພັນກັບ ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+.

## 2.1. ສັງລວມ ບັນດາຂໍ້ກຳນົດ ຫຼື ຄວາມຕ້ອງການ ຕົ້ນຕໍ ຂອງ ສປປ ລາວ ສຳລັບ ຜູ້ປະກອບການທີ່ຈະເຂົ້າຮ່ວມໃນການສົ່ງອອກ

ຜູ້ປະກອບການ ຂອງ ສປປ ລາວ ທີ່ກຳລັງພະຍາຍາມ ເຂົ້າຮ່ວມໃນການສົ່ງອອກ ຈາກ ສປປ ລາວ ຕ້ອງຍອມຮັບບາດກ້າວຕ່າງໆ ທີ່ສາທິດໃຫ້ເຫັນໃນຮູບ 2, ແລະ ໄດ້ອະທິບາຍລະອຽດຕື່ມ ຢູ່ຂ້າງລຸ່ມນີ້

**ຮູບ 3: ບາດກ້າວຕົ້ນຕໍ ທີ່ຈະມີສ່ວນກ່ຽວຂ້ອງ ໃນການສົ່ງອອກ ຈາກ ສປປ ລາວ**

| | |
|---|---|
| i | ຮັບໃບຢັ້ງຢືນການຈົດທະບຽນວິສາຫະກິດ |
| ii | ຮັບເອກະສານສົ່ງອອກ ທີ່ກ່ຽວຂ້ອງ:<br>ໃບອະນຸຍາດສົ່ງອອກ ຈາກ ກົມນຳເຂົ້າ ແລະ ສົ່ງອອກ,<br>ເອກະສານອະນຸຍາດສົ່ງອອກ ຈາກກົມກອງທີ່ກ່ຽວຂ້ອງ ແລະ ໃບຢັ້ງຢືນສຸຂານາໄມພືດ |
| iii | ຄົ້ນຄ້ວາສຶກສາ ຄ່າທຳນຽມການສົ່ງອອກ: ພາສີ ແລະ ອາກອນ |
| iv | ອຳນວຍຄວາມສະດວກ ຂັ້ນຕອນການສະສາງຄ່າພາສີ ສຳລັບ ການສົ່ງອອກ ຜ່ານທາງລະບົບ ASYCUDA |

### i. ຮັບໃບຢັ້ງຢືນການຈົດທະບຽນວິສາຫະກິດ

*ຜູ້ນຳເຂົ້າ ແລະ ສົ່ງອອກທັງໝົດ ຢູ່ໃນ ສປປ ລາວ ຈະຕ້ອງໄດ້ຈົດທະບຽນ ກັບ ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ເພື່ອໃຫ້ໄດ້ຮັບໃບຢັ້ງຢືນການຈົດທະບຽນວິສາຫະກິດ.*

### ii. ຮັບເອົາ ເອກະສານສົ່ງອອກທີ່ກ່ຽວຂ້ອງ: ໃບອະນຸຍາດສົ່ງອອກ ຈາກ ກົມນຳເຂົ້າ ແລະ ສົ່ງອອກ, ເອກະສານການອະນຸຍາດການສົ່ງອອກ ແລະ ໃບຢັ້ງຢືນອື່ນໆ ທີ່ກ່ຽວຂ້ອງ

ໃບອະນຸຍາດການສົ່ງອອກ: ສຳລັບ ຜະລິດຕະພັນ ບາງປະເພດ, ມັນຈຳເປັນຕ້ອງໄດ້ຮັບ ໃບອະນຸຍາດສົ່ງອອກ ຈາກ ກົມນຳເຂົ້າ ແລະ ສົ່ງອອກ (DIMEX). ເພື່ອກຳນົດເງື່ອນໄຂມາດຖານ ສຳລັບ ຂໍ້ກຳນົດ ຫຼື ຄວາມຕ້ອງການດ້ານໃບອະນຸຍາດ, ສປປ ລາວ ນຳໃຊ້ 3 ປະເພດ ໂດຍອີງຕາມຜະລິດຕະພັນ ທີ່ຈະນຳເຂົ້າ ຫຼື ສົ່ງອອກ:

- ຜະລິດຕະພັນ ທີ່ບໍ່ຕ້ອງການ ໃບອະນຸຍາດ;
- ຜະລິດຕະພັນ ທີ່ຕ້ອງການໃບອະນຸຍາດ ພາຍໃຕ້ ເສັ້ນທາງແບບອັດຕະໂນມັດ; ແລະ
- ຜະລິດຕະພັນ ທີ່ຕ້ອງການ ໃບອະນຸຍາດ ພາຍໃຕ້ ເສັ້ນທາງ ແບບບໍ່ອັດຕະໂນມັດ.

ຜະລິດຕະພັນ ພາຍໃຕ້ເສັ້ນທາງແບບອັດຕະໂນມັດ ແມ່ນຈະໄດ້ຮັບໃບອະນຸຍາດ ສໍາລັບຈຸດປະສົງ ຂອງການເກັບກໍາຂໍ້ມູນສະຖິຕິ, ໃນຂະນະທີ່ ຜະລິດຕະພັນ ທີ່ຢູ່ພາຍໃຕ້ເສັ້ນທາງທີ່ບໍ່ແມ່ນອັດຕະໂນມັດ ຕ້ອງການ ການອະນຸຍາດ ຈາກ ກົມ DIMEX ເພື່ອທີ່ຈະຖືກນໍາເຂົ້າ ຫຼື ສົ່ງອອກ.

**<u>ເອກະສານອະນຸຍາດສົ່ງອອກ:</u>** ຜະລິດຕະພັນທັງໝົດທີ່ສົ່ງອອກຈາກ ສປປ ລາວ ຕ້ອງການ ເອກະສານອະນຸຍາດສົ່ງອອກ. ສໍາລັບບາງຜະລິດຕະພັນ, ເອກະສານອະນຸຍາດສົ່ງອອກແມ່ນອອກຢູ່ດ່ານຊາຍແດນ; ສໍາລັບຜະລິດຕະພັນອື່ນໆ, ຕ້ອງໄດ້ຂໍເອກະສານອະນຸຍາດສົ່ງອອກ ລ່ວງໜ້າ.

ເອກະສານອະນຸຍາດສົ່ງອອກ ແມ່ນຈະອອກໂດຍກະຊວງທີ່ແຕກຕ່າງກັນ ຊຶ່ງຂຶ້ນກັບຄວາມສາມາດຂອງຂະແໜງການ ຫຼື ຜະລິດຕະພັນໃດໜຶ່ງ. ຍົກຕົວຢ່າງ:

a) ຂະແໜງກະສິກໍາ: ເອກະສານອະນຸຍາດສົ່ງອອກ ແມ່ນຈະອອກໃຫ້ໂດຍ ກະຊວງກະສິກໍາ ແລະ ປ່າໄມ້ (ກົມປູກຝັງ ແລະ ກົມລ້ຽງສັດ ແລະ ການປະມົງ ຖ້າແມ່ນສັດທີ່ມີຊີວິດ);
b) ຂະແໜງອາຫານປຸງແຕ່ງ: ເອກະສານອະນຸຍາດສົ່ງອອກ ແມ່ນຈະອອກໃຫ້ໂດຍ ກະຊວງສາທາລະນະສຸກ (ກົມອາຫານ ແລະ ຢາ);
c) ຂະແໜງເສື້ອຜ້າ ແລະ ເຄື່ອງນຸ່ງຮົ່ມ: ເອກະສານອະນຸຍາດສົ່ງອອກ ແມ່ນຈະອອກໂດຍ ກະຊວງອຸດສາຫະກໍາ ແລະ ການຄ້າ (ກົມ DIMEX);
d) ຂະແໜງເກີບ: ເອກະສານອະນຸຍາດສົ່ງອອກ ແມ່ນຈະອອກໂດຍ ກະຊວງອຸດສາຫະກໍາ ແລະ ການຄ້າ (ກົມ DIMEX);
e) ຜະລິດຕະພັນໄມ້: ເອກະສານອະນຸຍາດສົ່ງອອກ ແມ່ນຈະອອກໃຫ້ໂດຍ ກະຊວງກະສິກໍາ ແລະ ປ່າໄມ້ (ກົມປ່າໄມ້); ແລະ
a) ຢາ ຫຼື ຜະລິດຕະພັນເຄມີ: ເອກະສານອະນຸຍາດສົ່ງອອກ ຈາກ ກົມອາຫານ ແລະ ຢາ ພາຍໃຕ້ ກະຊວງສາທາລະນະສຸກ.

**ໃບຢັ້ງຢືນສຸຂານາໄມພືດ:** ສໍາລັບສິນຄ້າ ທີ່ຢູ່ພາຍໃຕ້ມາດຕະການສຸຂາພິບານ ແລະ ສຸຂານາໄມພືດ, ຜູ້ສົ່ງອອກຕ້ອງປະຕິບັດຕາມ ລະບຽບການພິເສດ ທີ່ກ່ຽວຂ້ອງກັບຜະລິດຕະພັນເຫຼົ່ານີ້.

ສິນຄ້າຕໍ່ໄປນີ້ ແມ່ນຂຶ້ນກັບ *ການອອກໃບອະນຸຍາດແບບອັດຕະໂນມັດ* ສໍາລັບຈຸດປະສົງໃນການສົ່ງອອກ:

- ໄມ້ທ່ອນ, ໄມ້ ແລະ ຜະລິດຕະພັນໄມ້;
- ເຂົ້າ;
- ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ.

ສິນຄ້າຕໍ່ໄປນີ້ ແມ່ນຂຶ້ນກັບ *ການອອກໃບອະນຸຍາດແບບບໍ່ອັດຕະໂນມັດ* ສໍາລັບຈຸດປະສົງໃນການສົ່ງອອກ:

- ໄມ້ທ່ອນ, ໄມ້, ແລະ ຜະລິດຕະພັນໄມ້ ທີ່ມີແຫຼ່ງມາຈາກປ່າທໍາມະຊາດ; ແລະ
- ແທ່ງ ຄໍາ.

ເອກະສານອະນຸຍາດ ອາດຈະມີຄວາມຈໍາເປັນ ຈາກ ກະຊວງກະສິກໍາ ແລະ ປ່າໄມ້, ຊຶ່ງຂຶ້ນກັບ ຜະລິດຕະພັນ ທີ່ຖືກສົ່ງອອກ.

ໃນໄລຍະຜ່ານມາ, ການສົ່ງອອກຜັກ ຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ ໄດ້ຮັບຜົນກະທົບ ຈາກ ຜົນການນໍາໃຊ້ມາດຕະການສຸຂາພິບານ ແລະ ສຸຂານາໄມພືດ (SPS), ຊຶ່ງໄດ້ສົ່ງຜົນກະທົບ ຢ່າງຫຼວງຫຼາຍ ຕໍ່ ການສົ່ງອອກສິນຄ້າກະສິກໍາ ຂອງ ສປປ ລາວ. ການອອກໃບຢັ້ງຢືນສຸຂານາໄມພືດ (PC) ແບບບໍ່ຖືກຕ້ອງບາງໃດ ທີ່ບໍ່ໄດ້ປະຕິບັດຕາມ ມາດຕະຖານສາກົນ, ໂດຍສະເພາະ ລາຍລະອຽດການນໍາເຂົ້າ ແລະ ຄວາມຕ້ອງການຂອງ EU, ໄດ້ສົ່ງຜົນກະທົບທາງລົບ ຕໍ່ ຜູ້ສົ່ງອອກ ຈາກ ສປປ ລາວ.

ສະນັ້ນ, ກະຊວງກະສິກໍາ ແລະ ປ່າໄມ້ ຂອງ ສປປ ລາວ ຈຶ່ງໄດ້ອອກແຈ້ງການ ກ່ຽວກັບ ມາດຕະການສຸຂາພິບານ ແລະ ສຸຂານາໄມພືດ ສໍາລັບ ບັນດາປະເທດສະມາຊິກ EU ເພື່ອຮັບປະກັນວ່າໃບຢັ້ງຢືນສຸຂານາໄມພືດ ສໍາລັບການສົ່ງອອກ ຜະລິດຕະພັນກະສິກໍາ ຂອງ ສປປ ລາວ ໄປຫາ EU ແມ່ນຖືກອອກຢ່າງຖືກຕ້ອງ ແລະ ສອດຄ່ອງກັບ ມາດຕະການ ການນໍາເຂົ້າ ຂອງ EU.[27]

*ບັນຊີລາຍຊື່ສິນຄ້າ ທີ່ຄົບຖ້ວນ ພ້ອມລາຍລະອຽດ ກ່ຽວກັບເອກະສານເພີ່ມຕື່ມ ແລະ ຂັ້ນຕອນທີ່ກ່ຽວຂ້ອງທີ່ຈະຖືກປະຕິບັດຕາມ ແມ່ນມີຢູ່ໃນ ເວັບໄຊປະຕູການຄ້າ ຂອງ ສປປ ລາວ (Lao PDR Trade Portal).[28]*

### iii. ອໍານວຍຄວາມສະດວກ ຂັ້ນຕອນການສະສາງພາສີ ສໍາລັບ ການສົ່ງອອກ ຜ່ານທາງລະບົບ ASYCUDA

ນອກຈາກ, ເອກະສານອະນຸຍາດສົ່ງອອກ ແລະໃບອະນຸຍາດສົ່ງອອກແລ້ວ, ຫົວໜ່ວຍທຸລະກິດ ທີ່ສົ່ງອອກ ຈາກ

ສປປ ລາວ ຕ້ອງສະໜອງ ບັນດາເອກະສານ ດັ່ງຕໍ່ໄປນີ້ ກ່ອນທີ່ສິນຄ້າ ຂອງເຂົາເຈົ້າ ຈະສາມາດ ອອກເດີນທາງໄດ້:

- ໃບບິນຂົນສົ່ງ;
- ໃບແຈ້ງໜີ້ການຄ້າ;
- ບັນຊີກວດກາການແພັກເຄື່ອງ;
- ເອກະສານຜ່ານທາງ;
- ໃບແຈ້ງພາສີສົ່ງອອກ;
- ໃບອະນຸຍາດ/ເອກະສານອະນຸຍາດ ສົ່ງອອກ ທີ່ກ່ຽວຂ້ອງ;
- ສຳເນົາໃບທະບຽນອາກອນ; ແລະ
- ສຳເນົາໃບອະນຸຍາດ ດຳ ເນີນທຸລະກິດ.

ອີງຕາມເວັບໄຊປະຕູການຄ້າ ຂອງ ສປປ ລາວ (Lao PDR Trade Portal), ສປປ ລາວ ໄດ້ຈັດຕັ້ງປະຕິບັດ ລະບົບຄຸ້ມຄອງພາສີ ຜ່ານທາງຄອມພິວເຕີ (ASYCUDA) ຂອງ ອົງການການປະຊຸມ ຂອງ ສະຫະປະຊາຊາດ ວ່າດ້ວຍການຄ້າ ແລະ ການພັດທະນາ (UNCTAD) ຢູ່ທີ່ 11 ດ່ານສາກົນໃຫຍ່. ລະບົບ ASYCUDA ແມ່ນເປັນລະບົບການຄຸ້ມຄອງພາສີ ແບບເຊື່ອມສານ ສຳລັບດຳເນີນການຄ້າ ແລະ ການຂົນສົ່ງ ສາກົນ ໃນສະພາບແວດລ້ອມ ແບບອັດຕະໂນມັດ ແລະ ທີ່ທັນສະໄໝ.[29]

ການຂ້າມໄປ ສປປ ລາວ ຢູ່ທີ່ ໜຶ່ງ ໃນຈຳນວນດ່ານໃຫຍ່ເຫຼົ່ານີ້ ເຮັດໃຫ້ ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ໄດ້ຮັບຜົນປະໂຫຍດ ຈາກ ລະບົບການສະສາງ ຜ່ານປະຕູດຽວ ແບບດິຈິໂຕ.[30]

ມີ 4 ບາດກ້າວ ສຳລັບແຈ້ງເສຍພາສີສົ່ງອອກ ແລະ ສິນຄ້າຜ່ານແດນ ຢູ່ທີ່ດ່ານພາສີ:

- ການຕື່ມລາຍລະອຽດ ໃບແຈ້ງເສຍພາສີ;
- ທົບທວນ ການແຈ້ງເສຍພາສີ ແລະ ການກວດກາ ຈາກ ເຈົ້າໜ້າທີ່ພາສີ;
- ການຊຳລະ ຄ່າພາສີ ແລະ ພັນທະອື່ນໆ; ແລະ
- ການກວດກາ ການປ່ອຍສິນຄ້າ ແລະ ການເຄື່ອນຍ້າຍ ອອກຈາກ ດ່ານພາສີ.

*ອີງຕາມ ເວັບໄຊປະຕູການຄ້າ ຂອງ ສປປ ລາວ (Lao PDR Trade Portal) ສຳລັບ ພາບລວມ ລາຍລະອຽດ ຂອງ ຂະບວນການສະສາງພາສີ ສຳລັບ ການສົ່ງອອກ.*[31]

### iv. ການຄົ້ນຄ້ວາສຶກສາ ຄ່າທຳນຽມການສົ່ງອອກ: ພາສີ ແລະ ອາກອນ

ສປປ ລາວ ນຳໃຊ້ ລະຫັດຈັດປະເພດສິນຄ້າ (HS) 8 ຕົວເລກ ຂອງ ອົງການພາສີໂລກ. ການຈັດປະເພດ ອັດຕາພາສີ ຂອງ ສປປ ລາວ ແມ່ນສອດຄ່ອງກັບ ລະບົບການຈຳແນກສິນຄ້າ ທີ່ນຳໃຊ້ຮ່ວມກັນ ພາຍໃນອາຊຽນ (AHTN). ສິນຄ້າ ທີ່ສົ່ງອອກຈາກ ສປປ ລາວ ແມ່ນຈະບໍ່ໄດ້ເສຍອາກອນ. ສິ່ງດຽວທີ່ຍົກເວັ້ນ ແມ່ນກ່ຽວຂ້ອງກັບ ຊັບພະຍາກອນທຳມະຊາດ ຫຼື ສິນຄ້າທີ່ຍັງບໍ່ທັນສຳເລັດຮູບ ທີ່ຜະລິດຈາກ ຊັບພະຍາກອນທຳມະຊາດ, ຊຶ່ງຈະຕ້ອງເສຍ ອາກອນມູນຄ່າເພີ່ມ 10%. ເຖິງແນວໃດກໍ່ຕາມ, ອາດຈະມີຄ່າອື່ນໆ ທີ່ຈະຕ້ອງໄດ້ຄຳນຶງເຖິງ ສຳລັບ ຢູ່ໃນຕະຫຼາດ ຂອງ ສະຫະພາບເອີຣົບ - ຊຶ່ງຈະຖືກອະທິບາຍ ລາຍລະອຽດຕື່ມ ໃນໝວດຕໍ່ໄປ (ໝວດ 2.2 iv).

*ຂໍ້ມູນເພີ່ມຕື່ມ ສາມາດເອົາໄດ້ ຈາກ ກົມພາສີ ຫຼື ກົມ DIMEX ຂອງລາວ. ກ່ຽວກັບ ທຸກບາດກ້າວຂັ້ນຕອນ ແລະ ຂໍ້ກຳນົດ ຫຼື ຄວາມຕ້ອງການດ້ານເອກະສານ, ຂໍ້ມູນເພີ່ມຕື່ມ ສາມາດເອົາຈາກ ກົມພາສີ ຫຼື ກົມ DIMEX ຂອງລາວ, ລວມທັງ ເວັບໄຊປະຕູການຄ້າ ຂອງ ສປປ ລາວ (Lao PDR Trade Portal).*

## 2.2. ອົງປະກອບຕົ້ນຕໍ ສຳລັບ ຜູ້ສົ່ງອອກ ຈາກ ສປປ ລາວ ໄປຫາ EU ທີ່ຈະໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA

ເພື່ອທີ່ຈະສົ່ງອອກ ໄປຫາ EU ແລະ ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA, ພໍ່ຄ້າຈາກ ສປປ ລາວ ຈຳເປັນຈະຕ້ອງ ຄຳນຶງເຖິງ ດ້ານຕ່າງໆ ດັ່ງຕໍ່ໄປນີ້:[32]

(i) ກວດເບິ່ງການໄດ້ຕາມເງື່ອນໄຂ ຂອງຜະລິດຕະພັນ ແລະ ອັດຕາພາສີທີ່ກ່ຽວຂ້ອງ;

(ii) ກວດເບິ່ງ ເງື່ອນໄຂມາດຖານ ຂອງກົດລະບຽບວ່າດ້ວຍແຫຼ່ງກຳເນີດ;

(iii) ລົງທະບຽນກັບ ລະບົບລົງທະບຽນແຫຼ່ງກຳເນີດ ຂອງສິນຄ້າຂອງຜູ້ສົ່ງອອກ ຂອງ ສະຫະພາບເອີຣົບ;

(iv) ສຶກສາຄົ້ນຄ້ວາ ຄ່າທຳນຽມຕ່າງໆ ທີ່ກ່ຽວຂ້ອງ, ນອກເໜືອຈາກ ພາສີ;

(v) ນຳເຂົ້າ ເອກະສານ ໃສ່ໃນ ເອກະສານແຈ້ງເສຍພາສີ ຂອງສະຫະພາບເອີຣົບ; ແລະ

(vi) ທ່າແຮງ ສຳລັບນຳໃຊ້ ມາດຕະການປົກປ້ອງ ແບບພິເສດ.

ສິ່ງເຫຼົ່ານີ້ ຖືກອະທິບາຍລະອຽດ ຢູ່ຂ້າງລຸ່ມນີ້

## i. ເງື່ອນໄຂມາດຖານ ຂອງຜະລິດຕະພັນ ແລະ ອັດຕາພາສີ ທີ່ກ່ຽວຂ້ອງ

ສິນຄ້າ ສາມາດ ສົ່ງອອກໄປ ສະຫະພາບເອີຣົບ ພາຍໃຕ້ ລະບອບການຄ້າ ທີ່ແຕກຕ່າງກັນ ຊຶ່ງຂຶ້ນກັບ ຜະລິດຕະພັນ ແລະ ປະເທດຕົ້ນທາງ. ລະບອບການຄ້າທົ່ວໄປ ແມ່ນ ປະເທດທີ່ມີເງື່ອນໄຂໄດ້ຮັບສິດທິພິເສດຫຼາຍທີ່ສຸດ (MFN), ຊຶ່ງ ຕາມຫຼັກການແລ້ວ, ແມ່ນມີຜົນນຳໃຊ້ກັບ ໝົດທຸກປະເທດຄູ່ຄ້າ, ເວັ້ນເສຍແຕ່ວ່າ ມີສັນຍາການຄ້າດ້ວຍສິດທິພິເສດ ໄວ້ແລ້ວ ຫຼື ເວັ້ນເສຍແຕ່ວ່າ ການປະຕິບັດ ສິດທິພິເສດ ເຊັ່ນ: ແຜນງານ GSP ສຳລັບ ປະເທດກຳລັງພັດທະນາ ຫຼື ແຜນງານ EBA ຂອງ ສະຫະພາບເອີຣົບ ມີຜົນນຳໃຊ້. ໂດຍການ, ນຳໃຊ້. ບາງອັດຕາພາສີ MFN ຂອງສະຫະພາບເອີຣົບ ແມ່ນຢູ່ໃນລະດັບ 0% ເປັນທີ່ຮຽບຮ້ອຍແລ້ວ, ຊຶ່ງໝາຍຄວາມວ່າ ສິນຄ້ານັ້ນໆ ແມ່ນໄດ້ຮັບການ ປອດພາສີ ຈາກສະຫະພາບເອີຣົບ. ຍົກຕົວຢ່າງ: ສຳລັບກາເຟ (ທີ່ບໍ່ທັນຂົ້ວ, ບໍ່ທັນສະກັດເອົາສານກາເຟອິນອອກ, ລະຫັດແມ່ນ HS 090111), ອັດຕາພາສີ MFN ແມ່ນ 0%. ສິນຄ້າທີ່ອັດຕາ MFN 0% ມີຜົນນຳໃຊ້ ແມ່ນໄດ້ຮັບການປອດພາສີ ຈາກ ຕະຫຼາດ ຂອງ ສະຫະພາບເອີຣົບ ເຖິງແມ່ນວ່າ ຈະບໍ່ມີ ສັນຍາ ຫຼື ການຈັດສັນການຄ້າ ດ້ວຍສິດທິພິເສດ ເຊັ່ນ ແຜນງານ EBA ກໍຕາມ.

ໃນກໍລະນີ ທີ່ອາໄສການປະຕິບັດໃຫ້ສິດທິພິເສດ ຈາກ ສະຫະພາບເອີຣົບ, ບາດກ້າວທຳອິດ, ຜູ້ປະກອບການ ຕ້ອງຄົ້ນຄ້ວາ ລະບຽບການ GSP ກຳນົດວ່າ, ເພື່ອທີ່ຈະໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດທາງພາສີ, ຜະລິດຕະພັນ **ທີ່ອ້າງວ່າ** ມີສິດທິພິເສດທາງພາສີ **ຕ້ອງໄດ້ມີແຫຼ່ງກຳເນີດ ຢູ່ໃນປະເທດທີ່ໄດ້ຮັບຜົນປະໂຫຍດ**.[33] ເຖິງຢ່າງໃດກໍຕາມ, ມີຂໍ້ຍົກເວັ້ນ 2 ຢ່າງ ຕໍ່ກັບ ກົດລະບຽບນີ້: (a) ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ; ແລະ (b) ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ (General Tolerances).

ສຶກສາ ວ່າ ຜະລິດຕະພັນທີ່ກ່ຽວຂ້ອງ ທີ່ຈະສົ່ງອອກ ມີເງື່ອນໄຂ ທີ່ຈະໄດ້ຮັບການປະຕິບັດໃຫ້ສິດທິພິເສດ ພາຍໃຕ້ ແຜນງານການຄ້າດ້ວຍສິດທິພິເສດ ຂອງ ສະຫະພາບເອີຣົບ ຫຼື ບໍ່. ຖ້າມີເງື່ອນໄຂ, ບາດກ້າວຕໍ່ໄປ ແມ່ນໃຫ້ ຜູ້ປະກອບການ ກຳນົດ ອັດຕາພາສີ ທີ່ມີຜົນນຳໃຊ້.

ການໄດ້ຕາມເງື່ອນໄຂ ຂອງຜະລິດຕະພັນ ແລະ ອັດຕາພາສີທີ່ຕອບສະໜອງ ແມ່ນມີຄວາມແຕກຕ່າງກັນ ໂດຍອີງຕາມທີ່ວ່າ ຜູ້ປະກອບການ ແມ່ນກຳລັງສົ່ງອອກ ພາຍໃຕ້ແຜນງານ EBA, ແຜນງານ GSP ທີ່ເປັນມາດຕະຖານ ຫຼື ແຜນງານ GSP+ ຫຼື ບໍ່, ດັ່ງທີ່ໄດ້ສາທິດໃຫ້ເຫັນ ຢູ່ໃນຕາຕະລາງ 2.

***ໃນກໍລະນີ ຂອງ ສປປ ລາວ,*** ໃນຖານະເປັນຜູ້ໄດ້ຮັບຜົນປະໂຫຍດ ຈາກ EBA, ພໍ່ຄ້າ ສາມາດສົ່ງອອກ ຜະລິດຕະພັນທັງໝົດ (ນອກຈາກອາວຸດ, ລູກປືນ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ) ໃນອັດຕາພາສີເທົ່າສູນ ໄປຫາຕະຫຼາດ EU. ເຖິງຢ່າງໃດກໍຕາມ, ຂັ້ນຕອນທີ່ກ່ຽວຂ້ອງ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, ລະບົບ REX ແລະ ຄ່າທຳນຽມອື່ນໆທີ່ກ່ຽວຂ້ອງ ຈະຕ້ອງໄດ້ຖືກປະຕິບັດຕາມ ໂດຍ ຜູ້ປະກອບການ. ສິ່ງເຫຼົ່ານີ້ ແມ່ນຖືກອະທິບາຍລະອຽດ ຢູ່ໃນໝວດລຸ່ມນີ້.

## ii. ກອບ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຢູ່ໃນ EU

ຂໍ້ກຳນົດ ທີ່ຄວບຄຸມ ກົດລະບຽບ ທີ່ກ່ຽວຂ້ອງສະເພາະກັບແຫຼ່ງກຳເນີດ ສຳລັບຜູ້ໄດ້ຮັບຜົນປະໂຫຍດ GSP ແມ່ນນອນຢູ່ໃນລະບຽບການ EU 2 ຢ່າງ ທີ່ແຍກກັນ,[34] ຊຶ່ງຈຳເປັນຕ້ອງໄດ້ອ່ານພ້ອມກັນກັບ ບັນຊີລາຍຊື່ກົດລະບຽບ ແລະ ຂໍ້ຍົກເວັ້ນຕ່າງໆ ສຳລັບປະເທດດ້ອຍພັດທະນາ, ຊຶ່ງ ໃນບາງກໍລະນີ, ແມ່ນນຳໃຊ້ ກົດລະບຽບທີ່ມີຄວາມເຂັ້ມງວດໜ້ອຍລົງ.[35]

**ຕາຕະລາງ 2: ການໄດ້ຕາມເງື່ອນໄຂ ຂອງຜະລິດຕະພັນ ແລະ ອັດຕາພາສີ ໂດຍ ແຜນງານ GSP ຂອງ EU**

| | ແຜນງານ EBA | ແຜນງານ GSP ທີ່ເປັນມາດຕະຖານ | ແຜນງານ GSP+ |
|---|---|---|---|
| **ການໄດ້ຕາມເງື່ອນ** | ສິນຄ້າທັງໝົດ ຍົກເວັ້ນອາວຸດ ແລະ ລູກປືນ. | **ທຳອິດ:** ກວດເບິ່ງການຈັດປະເພດພາສີ ຂອງຜະລິດຕະພັນ ໂດຍອີງຕາມ ເຄື່ອງມືຈັດປະເພດສິນຄ້າ ຂອງສະຫະພາບເອີຣົບ. | **ທຳອິດ:** ກວດເບິ່ງການຈັດປະເພດພາສີ ຂອງຜະລິດຕະພັນ ໂດຍ |

| | ແຜນງານ EBA | ແຜນງານ GSP ທີ່ເປັນມາດຕະຖານ | ແຜນງານ GSP+ |
|---|---|---|---|
| **ໄຂ ຂອງຜະລິດພັນ** | | **ທີສອງ:** ແລ່ເບິ່ງ ການຈັດປະເພດພາສີ ກັບ ບັນຊີລາຍຊື່ ຂອງຜະລິດຕະພັນ ຢູ່ໃນເອກະສານຊ້ອນທ້າຍ V.<br>ຖ້າວ່າຢູ່ໃນບັນຊີລາຍຊື່, ຜະລິດຕະພັນ ແມ່ນນອນຢູ່ໃນແຜນງານ ຫຼື ບໍ. | ອີງຕາມ ເຄື່ອງມືຈັດປະເພດສິນຄ້າ ຂອງສະຫະພາບເອີຣົບ.<br>**ທີສອງ:** ແລ່ເບິ່ງ ການຈັດປະເພດພາສີ ກັບ ບັນຊີລາຍຊື່ ຂອງຜະລິດຕະພັນ ຢູ່ໃນເອກະສານຊ້ອນທ້າຍ IX.<br>ວ່າຢູ່ໃນບັນຊີລາຍຊື່, ຜະລິດຕະພັນ ແມ່ນນອນຢູ່ໃນແຜນງານ ຫຼື ບໍ. |
| **ອັດຕາພາສີ** | ຜະລິດຕະພັນທີ່ມີເງື່ອນໄຂທັງໝົດ ສາມາດຖືກສົ່ງອອກ ດ້ວຍພາສີເທົ່າສູນ. | ສຳລັບຜະລິດຕະພັນທີ່ມີເງື່ອນໄຂ:<br>**ທຳອິດ:** ກວດເບິ່ງອັດຕາ MFN ທົ່ວໄປ ທີ່ມີຜົນນຳໃຊ້ ກັບ ຜະລິດຕະພັນ ຕາມທີ່ໄດ້ກຳນົດໄວ້ ພາຍໃຕ້ ຖານຂໍ້ມູນລວມກ່ຽວກັບພາສີ ຂອງ EU (TARIC), ຊຶ່ງຕໍ່ຈາກນັ້ນ ແມ່ນຈະຫຼຸດລົງ ບົນພື້ນຖານຂອງ ລະບຽບການ GSP.[36]<br>**ທີສອງ:** ກວດເບິ່ງ ອົງປະກອບ ຂອງພາສີທີ່ກ່ຽວຂ້ອງ ຢູ່ໃນ ພາສີອາກອນນຳເຂົ້າທີ່ມີຜົນນຳໃຊ້ອັນດຽວ ຂອງ EU[37] ເຊັ່ນ ມັນອາດຈະເປັນພາສີຕາມມູນຄ່າໃນການຊື້ຂາຍ, ພາສີແບບສະເພາະ, ຫຼື ປະສົມປະສານເອົາທັງສອງຢ່າງ. ເມື່ອ ພາສີ ປະກອບດ້ວຍ ພາສີຕາມມູນຄ່າການຊື້ຂາຍ ແລະ ພາສີແບບສະເພາະ, ພາສີແບບສະເພາະ ຈະຕ້ອງບໍ່ໄດ້ຫຼຸດລົງ. | ຜະລິດຕະພັນ ທີ່ໄດ້ຕາມເງື່ອນໄຂທັງໝົດ ສາມາດ ຖືກສົ່ງອອກ ດ້ວຍພາສີ ເທົ່າ ສູນ. |

## iii. ກອບ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຢູ່ໃນ EU

ລະບຽບການ GSP ກຳນົດວ່າ, ເພື່ອທີ່ຈະໄດ້ຮັບຜົນປະໂຫຍດ ຈາກສິດທິພິເສດທາງພາສີ, ຜະລິດຕະພັນ ***ທີ່ອ້າງວ່າ*** ມີສິດທິພິເສດທາງພາສີ **ຕ້ອງໄດ້ມີແຫຼ່ງກຳເນີດ ຢູ່ໃນປະເທດທີ່ໄດ້ຮັບຜົນປະໂຫຍດ.**[38] ເຖິງຢ່າງໃດກໍ່ຕາມ, ມີຂໍ້ຍົກເວັ້ນ 2 ຢ່າງ ຕໍ່ກັບ ກົດລະບຽບນີ້: (a) ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ; ແລະ (b) ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ (General Tolerances)

ຂໍ້ກຳນົດ ທີ່ຄວບຄຸມ ກົດລະບຽບສະເພາະ ວ່າດ້ວຍແຫຼ່ງກຳເນີດສຳລັບຜູ້ໄດ້ຮັບຜົນປະໂຫຍດ GSP ແມ່ນນອນຢູ່ໃນ ລະບຽບການ EU 2 ຢ່າງ ທີ່ແຍກກັນ,[39] ຊຶ່ງຈຳເປັນຕ້ອງໄດ້ອ່ານ ພ້ອມກັນກັບ ບັນຊີລາຍຊື່ກົດລະບຽບ ແລະ ຂໍ້ຍົກເວັ້ນຕ່າງໆ ສຳລັບ ປະເທດດ້ອຍພັດທະນາ, ຊຶ່ງ ໃນບາງກໍລະນີ, ແມ່ນນຳໃຊ້ ກົດລະບຽບທີ່ມີຄວາມເຂັ້ມງວດໜ້ອຍລົງ.[40] ກົດລະບຽບເຫຼົ່ານີ້ ແມ່ນໄດ້ອະທິບາຍໄວ້ ຢູ່ຂ້າງລຸ່ມນີ້.

## ກົດລະບຽບ

### ຜະລິດຕະພັນ ທີ່ມີແຫຼ່ງກຳເນີດ ມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ

ເພື່ອທີ່ຈະໄດ້ຮັບຜົນປະໂຫຍດຈາກ ແຜນງານ GSP, ຕ້ອງຖືວ່າ ຜະລິດຕະພັນ ມີແຫຼ່ງກຳເນີດ ມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ, ຊຶ່ງເປັນກໍລະນີ ເມື່ອຜະລິດຕະພັນ:

> **2.** ໄດ້ຮັບຊິ້ນສ່ວນມາທັງໝົດ ຢູ່ໃນປະເທດນັ້ນໆ (ມາດຖານເງື່ອນໄຂ ທີ່ມີຜົນນຳໃຊ້ຕົ້ນຕໍ ກັບ ຜະລິດຕະພັນ ທີ່ເກີດຂຶ້ນເອງໂດຍທຳມະຊາດ ແລະ ກັບ ສິນຄ້າ ທີ່ຖືກສ້າງຂຶ້ນທັງໝົດ ຈາກໂຕມັນເອງ ເຊັ່ນ ແຮ່ທາດ ແລະ ຜະລິດຕະພັນກະສິກຳ).[41]

ຫຼື

> **3.** ໄດ້ຜ່ານການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ຢ່າງພຽງພໍ ຢູ່ໃນປະເທດນັ້ນໆ.[42] ຊຶ່ງຂຶ້ນກັບ ການຈັດປະເພດ ຂອງພວກມັນ ພາຍໃຕ້ ເຄື່ອງມືຈັດປະເພດສິນຄ້າ ຂອງ EU (EU's CN), ຜະລິດຕະພັນ ແມ່ນຈະຢູ່ພາຍໃຕ້ ກົດລະບຽບສະເພາະໃດໜຶ່ງ ທີ່ກ່ຽວຂ້ອງກັບ ການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ທີ່ໃຫ້ສະຖານະພາບ ການເປັນຜະລິດຕະພັນແຫຼ່ງກຳເນີດ ແກ່ ພວກມັນ.[43]
>
> ມີກົດລະບຽບ 4 ປະເພດ ທີ່ແຕກຕ່າງກັນ, ໂດຍສະເພາະ:
>
> 1) ການປ່ຽນແປງ ເງື່ອນໄຂມາດຖານ ຂອງຫົວຂໍ້ (ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຕ້ອງການ ໃຫ້ວັດສະດຸ ທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ໄປຜ່ານ ຂະບວນການປ່ຽນແປງ ຢູ່ໃນການຈັດປະເພດພາສີ ຈາກ ຫົວຂໍ້ອື່ນໃດກໍໄດ້);
> 2) ເງື່ອນໄຂມາດຖານດ້ານມູນຄ່າ (ເມື່ອມູນຄ່າ ຖືກເພີ່ມເຂົ້າໃສ່ໃນສິນຄ້າໜຶ່ງ ຜ່ານທາງ ການຜະລິດ ຢູ່ໃນປະເທດໜຶ່ງ ໄດ້ຕາມ ບາງຂໍ້ກຳນົດ ກ່ຽວກັບມູນຄ່າ, ສິນຄ້າ ສາມາດມີເງື່ອນໄຂ ມີແຫຼ່ງກຳເນີດ ມາຈາກປະເທດນັ້ນ ໄດ້);
> 3) ມາດຖານເງື່ອນໄຂອັນສະເພາະ ສຳລັບຂະບວນການຜະລິດຫຼືປຸງແຕ່ງ (ສິນຄ້າ ແມ່ນຈະຖືກພິຈາລະນາວ່າ ເປັນສິນຄ້າຈາກແຫຼ່ງກຳເນີດ ຖ້າຫາກວ່າ ສິນຄ້າ ໄດ້ຜ່ານການ ຂະບວນການຜະລິດ ຫຼື ປຸງແຕ່ງ ໃດໜຶ່ງ ເຊັ່ນ: ການປະຕິກິລິຍາທາງເຄມີ, ການກັ່ນ ຫຼື ການກັ່ນຕອງ, ແລະ ອື່ນໆ ຢູ່ໃນອະນາເຂດ ຂອງ ປະເທດໜຶ່ງ); ແລະ
> 4) ບ່ອນທີ່ດຳເນີນ ວຽກການຜະລິດ ຫຼື ປຸງແຕ່ງ ວັດສະດຸ ທີ່ໄດ້ຮັບມາທັງໝົດ

### ຂໍ້ຍົກເວັ້ນ ຕໍ່ກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ

ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ມີຂໍ້ຍົກເວັ້ນສອງຢ່າງ ຕໍ່ກັບ ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, ຄື **ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ (Cumulation)** ແລະ **ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ (General Tolerances)**. ສິ່ງເຫຼົ່ານີ້ ມີລາຍລະອຽດເພີ່ມຕື່ມ ຢູ່ຂ້າງລຸ່ມນີ້.

#### ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ (Cumulation)

Cumulation ສາມາດເກີດຂຶ້ນໄດ້ ໃນລັກສະນະ ທີ່ໄດ້ອະທິບາຍໄວ້ ຢູ່ໃນຕາຕະລາງ 3.

**ຕາຕະລາງ 3: ປະເພດ cumulation**

| | ຫຼັກການ | ຜົນນຳໃຊ້ ຕໍ່ກັບ ສປປ ລາວ |
|---|---|---|
| **Cumulation (ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ) 2 ປະເພດຕົ້ນຕໍ ປະກອບມີ:** | | |

| | ຫຼັກການ | ຜົນນຳໃຊ້ ຕໍ່ກັບ ສປປ ລາວ |
|---|---|---|
| **i. Bilateral Cumulation (ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກສອງແຫຼ່ງ)** | ຖ້າວ່າໄດ້ຕາມຄວາມຕ້ອງການຂອງຂໍ້ກຳນົດໃດໜຶ່ງ, ວັດຖຸດິບ **ທີ່ມີແຫຼ່ງກຳເນີດໃນ EU** (ຢູ່ໃນຄວາມໝາຍ ຂອງ ກົດລະບຽບ GSP ຂອງ ສະຫະພາບເອີຣົບ ວ່າດ້ວຍແຫຼ່ງກຳເນີດ), ແລະ ສືບຕໍ່ **ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ໃນປະເທດທີ່ໄດ້ຮັບຜົນປະໂຫຍດ** ແມ່ນຈະຖືກພິຈາລະນາວ່າ ມີແຫຼ່ງກຳເນີນ ໃນປະເທດທີ່ໄດ້ຮັບຜົນປະໂຫຍດ.[44] | ຖ້າ ສປປ ລາວ ນຳເຂົ້າ ວັດສະດຸ ທີ່ມີແຫຼ່ງກຳເນີດໃນ EU (ຖືກຕ້ອງຕາມ ກົດລະບຽບ GSP ຂອງ ສະຫະພາບເອີຣົບ ວ່າດ້ວຍແຫຼ່ງກຳເນີດ), ແລະ ວັດສະດຸເຫຼົ່ານີ້ ໄດ້ຮັບການສືບຕໍ່ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ໃນ ສປປ ລາວ, ຜະລິດຕະພັນທີ່ຜະລິດອອກມາ ສາມາດບອກໄດ້ວ່າ ມີແຫຼ່ງກຳເນີດມາຈາກ ສປປ ລາວ ແລະ ຈະມີສິດໄດ້ຮັບ ສິດທິພິເສດ EBA. |
| **ii. Regional Cumulation (ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ພາຍໃນພາກພື້ນ)** | ແຜນງານ GSP ຂອງ EU ຮັບຮູ້ 4 ກຸ່ມພາກພື້ນ.[45]<br><br>ດັ່ງນັ້ນ, ວັດສະດຸ ທີ່ມີແຫຼ່ງກຳເນີດ ໃນປະເທດໜຶ່ງ ທີ່ນອນໃນກຸ່ມພາກພື້ນ, ທີ່ສືບຕໍ່ ດຳເນີນວຽກຜະລິດ ຫຼື ປຸງແຕ່ງ ຢູ່ໃນອີກປະເທດໜຶ່ງທີ່ໄດ້ຮັບຜົນປະໂຫຍດ ທີ່ນອນໃນກຸ່ມພາກພື້ນດຽວກັນ, ແມ່ນຈະຖືກພິຈາລະນາວ່າ ມີແຫຼ່ງກຳເນີດ ໃນປະເທດທີ່ໄດ້ຮັບຜົນປະໂຫຍດ.[46] | ສປປ ລາວ ແມ່ນຖືກຈັດໃຫ້ຢູ່ໃນ ກຸ່ມ 1 ຈາກທັງໝົດ ມີ 4 ກຸ່ມພາກພື້ນ, ທີ່ປະກອບດ້ວຍ ປະເທດບຣູໄນ ດາຣູສະລາມ, ກຳປູເຈຍ, ອິນໂດເນເຊຍ, ມາເລເຊຍ, ມຽນມ້າ, ຟີລິບປິນ, ໄທ ແລະ ຫວຽດນາມ.[47]<br><br>ຖ້າ ສປປ ລາວ ນຳເຂົ້າ ວັດສະດຸ ຈາກທຸກປະເທດ ທີ່ໄດ້ກ່າວມາຂ້າງເທິງນັ້ນ (ພາຍໃຕ້ ກົດລະບຽບ GSP ຂອງ EU ວ່າດ້ວຍ ແຫຼ່ງກຳເນີດ), ແລະ ຜະລິດຕະພັນນີ້ ຖືກສືບຕໍ່ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ໃນ ສປປ ລາວ, ສາມາດບອກໄດ້ວ່າ ຜະລິດຕະພັນດັ່ງກ່າວ ມີແຫຼ່ງກຳເນີດ ໃນ ສປປ ລາວ ແລະ ຈະມີສິດ ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA. |
| **ນອກຈາກນີ້, ຍັງມີ ອີກສອງປະເພດ cumulation ທີ່ອາດສາມາດ ມີຜົນນຳໃຊ້:** | | |
| **iii. Extended Cumulation (ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບຜົນຂະຫຍາຍ)[48]** | ນີ້ ແມ່ນຈະມີຜົນນຳໃຊ້ ລະຫວ່າງ ປະເທດທີ່ໄດ້ຮັບຜົນປະໂຫຍດ ແລະ ປະເທດ ທີ່ມີສັນຍາການຄ້າເສລີ (FTA) ກັບ EU.<br><br>ເຖິງແມ◌່ນວ່າ, ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບຜົນຂະຫຍາຍ (Extended Cumulation) ບໍ່ມີຜົນນຳໃຊ້ກັບ ຜະລິດຕະພັນ ທີ່ຖືກຈັດປະເພດ ພາຍໃຕ້ພາກທີ 1–24 ຂອງ ເຄື່ອງມືຈັດປະເພດສິນຄ້າຂອງສະຫະພາບເອີຣົບ (CN), ທີ່ກ່ຽວຂ້ອງກັບ ຜະລິດຕະພັນ ກະສິກຳ ແລະ ອາຫານ.[49] | ຖ້າ ສປປ ລາວ ນຳເຂົ້າ ວັດສະດຸ ຈາກ ປະເທດ ທີ່ EU ມີສັນຍາການຄ້າເສລ◌ີນຳ ເຊັ່ນວ່າ ປະເທດຫວຽດນາມ,[50] ແລະ ມີການສືບຕໍ່ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ວັດສະດຸເຫຼົ່ານີ້ ຢູ່ ສປປ ລາວ, ສາມາດເວົ້າໄດ້ວ່າ ຜະລິດຕະພັນດັ່ງກ່າວ ມີແຫຼ່ງກຳເນີດ ຢູ່ ສປປ ລາວ ແລະ ສາມາດມີສິດ ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA (ໂດຍທີ່ ຜະລິດຕະພັນດັ່ງກ່າວ ແມ່ນບໍ່ໄດ້ນອນຢູ່ໃນພາກທີ 1–24 ຂອງ ເຄື່ອງມືຈັດປະເພດສິນຄ້າ ຂອງສະຫະພາບເອີຣົບ (CN). |
| **iv. Cross-regional cumulation (ລະບົບການປະ** | ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບຂ້າມພາກພື້ນ (Cross-regional cumulation) ອະນຸຍາດໃຫ້ບັນດາປະເທດທີ່ໄດ້ຮັບຜົນປະໂຫຍດ ຈາກແຜນງານ | ຖ້າວ່າ ສປປ ລາວ ນ້ຳເຂົ້າວັດສະດຸ ຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດຈາກແຜນງານ GSP ທີ່ຢູ່ພາກພື້ນອື່ນ (ເຊັ່ນ ປະເທດ ບັງກລາເດັດ ຫຼື ສີລັງກາ) ແລະ ສືບຕໍ່ດຳເນີນວຽກຜະລິດ ຫຼື ປຸງແຕ່ງ ວັດສະດຸ |

| | ຫຼັກການ | ຜົນນຳໃຊ້ ຕໍ່ກັບ ສປປ ລາວ |
| --- | --- | --- |
| ການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບຂ້າມພາກພື້ນ)[51] | GSP ທີ່ມາຈາກພາກພື້ນທີ່ໃກ້ຄຽງ (ນັ້ນກໍຄືກຸ່ມພາກພື້ນຕ່າງໆ) ສາມາດນຳໃຊ້ລະບົບ cumulation ເໝືອນກັບວ່າ ປະເທດດັ່ງກ່າວ ຢູ່ໃນພາກພື້ນດຽວກັນ.<br><br>ສຳລັບ ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ ແບບຂ້າມພາກພື້ນ (Cross-regional cumulation) ຈະມີຜົນນຳໃຊ້ໄດ້, ການດຳເນີນວຽກຜະລິດ ແລະ ປຸງແຕ່ງ ບໍ່ສາມາດຢູ່ເໜືອ ການດຳເນີນງານຕ່ຳສຸດ (Minimal operations) | ເຖິງນີ້ ຢູ່ ສປປ ລາວ, ສາມາດເວົ້າໄດ້ວ່າ ຜະລິດຕະພັນດັ່ງກ່າວ ມີແຫຼ່ງກຳເນີດ ຢູ່ ສປປ ລາວ ແລະ ສາມາດມີສິດ ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA. |

## *ກົດລະບຽບ ວ່າດ້ວຍການອະນຸຍາດ ໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ* (General tolerances)

ຄຳວ່າ Tolerance ໝາຍເຖິງ ການຜ່ອນຜັນ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ພາຍໃຕ້ ສະພາບເງື່ອນໄຂໃດໜຶ່ງ. ຖ້າເບິ່ງລະອຽດໄປກວ່ານັ້ນ ກໍແມ່ນວ່າ ເຖິງແມ່ນວ່າ ຜະລິດຕະພັນໜຶ່ງ ບໍ່ຖືກຕ້ອງຕາມ ກົດລະບຽບສະເພາະຜະລິດຕະພັນນັ້ນໆ ກໍຕາມ, ມັນຍັງສາມາດໄດ້ຮັບການພິຈາລະນາວ່າ ເປັນຜະລິດຕະພັນທີ່ມາຈາກແຫຼ່ງກຳເນີດໄດ້ ຖ້າຫາກວ່າ ມີການນຳໃຊ້ວັດສະດຸ ທີ່ມາຈາກແຫຼ່ງກຳເນີດອື່ນ ເຂົ້າໃນການຜະລິດ ຜະລິດຕະພັນດັ່ງກ່າວ ໃນຈຳນວນຈຳກັດເທົ່ານັ້ນ.

ອີງຕາມ ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ (General "Tolerance rule"), ພາຍໃຕ້ສະພາບເງື່ອນໄຂໃດໜຶ່ງ, **ວັດສະດຸທີ່ມີແຫຼ່ງກຳເນີດມາຈາກແຫຼ່ງອື່ນ ສາມາດຖືກນຳໃຊ້ ເຂົ້າໃນການຜະລິດ ຜະລິດຕະພັນນັ້ນໆ, ເຖິງແມ່ນວ່າ, ຈະບໍ່ໄດ້ຕາມ ກົດລະບຽບ ວ່າດ້ວຍ ບັນຊີລາຍການ ການດຳເນີນວຽກການຜະລິດ ຫຼື ການປຸງແຕ່ງ ທີ່ພຽງພໍ ກໍຕາມ.**[52] ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ (Tolerance rule) ແມ່ນຈະມີຜົນນຳໃຊ້ ພາຍໃຕ້ເງື່ອນໄຂ ຕໍ່ໄປນີ້:

ຂໍ້ຈຳກັດ ກ່ຽວກັບມູນຄ່າ ຂອງ ຜະລິດຕະພັນ ທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ: ມູນຄ່າທັງໝົດ ຂອງ ຜະລິດຕະພັນທີ່ມີຕົ້ນກຳເນີດ ມາຈາກບ່ອນອື່ນ ບໍ່ສາມາດເກີນ:

(a) 15% ຂອງນ້ຳໜັກ ຂອງຜະລິດຕະພັນ ສຳລັບ ຜະລິດຕະພັນ ທີ່ນອນຢູ່ໃນ ພາກທີ 2 ແລະ 4–24, ນອກຈາກຜະລິດຕະພັນການປະມົງທີ່ໄດ້ຮັບການປຸງແຕ່ງແລ້ວ ທີ່ກ່ຽວຂ້ອງກັບ ພາກທີ 16; ແລະ

(b) 15% ຂອງ ລາຄາການດຳເນີນວຽກຜ່ານມາ ຂອງຜະລິດຕະພັນ ສຳລັບຜະລິດຕະພັນອື່ນ, ຍົກເວັ້ນ ສຳລັບຜະລິດຕະພັນ ທີ່ນອນຢູ່ໃນ ພາກທີ 50–63 ຂອງ ເຄື່ອງມືຈັດປະເພດສິນຄ້າ ຂອງສະຫະພາບເອີຣົບ (CN).[53]

ກົດລະບຽບພິເສດ ແມ່ນສາມາດມີຜົນນຳໃຊ້ໄດ້ ສຳລັບ ຜະລິດຕະພັນແຜ່ນແພ - ຊຶ່ງໄດ້ກຳນົດໄວ້ ໃນຈຸດສັງເກດຂໍ້ 6 ແລະ 7 ຂອງ ພາກທີ I ຂອງ ເອກະສານຊ້ອນທ້າຍ 22-03.[54]

ຜົນນຳໃຊ້ ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ (Tolerance rule) ແມ່ນການລວມເອົາວັດສະດຸທີ່ຖືກນຳໃຊ້ ເຂົ້າໃນວຽກການຜະລິດ ແລະ ປຸງແຕ່ງ ຜະລິດຕະພັນ: ກົດລະບຽບ Tolerance rule ຈະບໍ່ມີຜົນນຳໃຊ້ກັບຜະລິດຕະພັນທີ່ໄດ້ຮັບຊິ້ນສ່ວນທັງໝົດ ຢູ່ພາຍໃນ ປະເທດທີ່ໄດ້ຮັບຜົນປະໂຫຍດ (ເນື່ອງຈາກວ່າ ຜະລິດຕະພັນທີ່ໄດ້ຮັບຊິ້ນສ່ວນທັງໝົດພາຍໃນປະເທດ ແມ່ນໄດ້ຕາມ ຄວາມຕ້ອງການ ຂອງ ກົດລະບຽບ ວ່າດ້ວຍ ແຫຼ່ງກຳເນີດ ເປັນທີ່ຮຽບຮ້ອຍແລ້ວ). ເຖິງຢ່າງໃດກໍ່ຕາມ, ຖ້າບໍ່ມີການ

ເຂົ້າມາແຊກແຊງຂອງຝ່າຍອື່ນ ຕໍ່ຂໍ້ກຳນົດ[55] ກ່ຽວກັບ ການດຳເນີນງານການຜະລິດ ຫຼື ການປຸງແຕ່ງ ທີ່ບໍ່ພຽງພໍ ແລະ ຫົວໜ່ວຍຂອງການມີເງື່ອນໄຂຄົບຖ້ວນ, ກົດລະບຽບ Tolerance ຍັງຄົງມີຜົນນຳໃຊ້ກັບ ການລວມໝົດທຸກວັດສະດຸ ທີ່ມາຈາກແຫຼ່ງທີ່ແຕກຕ່າງກັນ ທີ່ຖືກນຳໃຊ້ ໃນການດຳເນີນງານການຜະລິດ ຫຼື ປຸງແຕ່ງ ຜະລິດຕະພັນ ແລະ ສຳລັບ ກົດລະບຽບ ທີ່ຖືກກຳນົດໄວ້ ຢູ່ໃນບັນຊີລາຍຊື່ ໃນເອກະສານຊ້ອນທ້າຍ 22-03 ສຳລັບການທີ່ ຜະລິດຕະພັນ ຕ້ອງການໃຫ້ໄດ້ຮັບວັດສະດຸດັ່ງກ່າວທັງໝົດ ມາຈາກແຫຼ່ງດຽວ. ຖ້າຈະເວົ້າງ່າຍໆກໍຄືວ່າ, ຖ້າກົດລະບຽບ ສະເພາະຜະລິດຕະພັນ ມີຄວາມຕ້ອງການວ່າ ວັດສະດຸ ທີ່ຖືກນຳໃຊ້ ໃນການຜະລິດ ຜະລິດຕະພັນສຸດທ້າຍ ຕ້ອງໄດ້ມາທັງໝົດ ຈາກແຫຼ່ງດຽວ, ກົດລະບຽບ Tolerance ສາມາດມີຜົນນຳໃຊ້ ກັບວັດສະດຸດັ່ງກ່າວ ຊຶ່ງໝາຍຄວາມວ່າ ວັດສະດຸດັ່ງກ່າວ ໃນຈຳນວນເລັກນ້ອຍ ອາດຈະບໍ່ໄດ້ຮັບມາທັງໝົດ ຈາກແຫຼ່ງດຽວ.

## *ກໍລະນີອື່ນໆ ສຳລັບ ຂໍ້ຍົກເວັ້ນຫຼືການຜ່ອນຜັນ ຈາກ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ*

ຂໍ້ຍົກເວັ້ນຫຼືການຜ່ອນຜັນ ຈາກ ກົດລະບຽບ ວ່າດ້ວຍແຫຼ່ງກຳນເນ◌ີດ ຍັງສາມາດມອບໃຫ້ແກ່ ບັນດາປະເທດທີ່ໄດ້ຮັບຜົນປະໂຫຍດ ຕາມການລິເລີ່ມ ຂອງຄະນະກຳມະການ ຫຼື ເພື່ອຕອບສະໜອງ ກັບ ຄຳຮ້ອງຂໍ ຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ. ສິ່ງດັ່ງກ່າວນີ້ ສາມາດເປັນໄປໄດ້ ໃນກໍລະນີຂອງ:

- ປັດໃຈພາຍໃນ ຫຼື ພາຍນອກ ທີ່ເຮັດໃຫ້ປະເທດ ຂາດຄວາມສາມາດ ໃນການປະຕິບັດຕາມ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ທີ່ມີຜົນນຳໃຊ້ ຊຶ່ງອາດສາມາດປະຕິບັດໄດ້ ໃນເມື່ອກ່ອນ; ຫຼື
- ປະເທດ ຕ້ອງການເວລາ ໃນການກະກຽມຕົນເອງ ເພື່ອປະຕິບັດຕາມ ກົດລະບຽບທົ່ວໄປ ວ່າດ້ວຍແຫຼ່ງກຳເນີດ.[56]

ຍົກຕົວຢ່າງ, ປະເທດກຳປູເຈຍ ອາໃສ ຊິ້ນສ່ວນລົດຖີບ ຈາກປະເທດມາເລເຊຍ (ສ່ວນໃຫຍ່ ແມ່ນເກຍ) ແລະ ສາມາດປະຕິບັດຕາມ ກົດລະບຽບ ວ່າດ້ວຍ ຄວາມຕ້ອງການ ທາງດ້ານແຫຼ່ງກຳເນີດ ພາຍໃຕ້ ຂໍ້ກຳນົດ 'Regional Cumulation', ຈົນເຖິງ ປີ 2014 - ເມື່ອປະເທດມາເລເຊຍ ໄດ້ຫຼຸດພົ້ນອອກຈາກ ສະຖານະພາບຜູ້ໄດ້ຮັບຜົນປະໂຫຍດ. ລັດຖະບານ ແຫ່ງປະເທດກຳປູເຈຍ ໄດ້ຮ້ອງຂໍ ຂໍ້ຍົກເວັ້ນສອງຢ່າງ ຈາກ ຄະນະກຳມະການ ສະຫະພາບເອີຣົບ ເພື່ອສືບຕໍ່ພິຈາລະນາ ການປະກອບສ່ວນ ຂອງ ASEAN ຈາກ ປະເທດມາເລເຊຍ ເພື່ອໃຫ້ມີເງື່ອນໄຂ ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ (Cumulation) ໃນຊ່ວງໄລຍະການຂ້າມຜ່ານ. ໃນທີ່ສຸດ, ຄຳຮ້ອງຂໍດັ່ງກ່າວ ກໍໄດ້ຮັບການອະນຸມັດ ດ້ວຍໂກຕ້າ ກ່ຽວກັບ ຈຳນວນລົດຖີບ ທີ່ສາມາດນຳໃຊ້ ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ (Cumulation) ແລະ ມີກຳນົດເວລາ ສາມປີ ໃນການຍົກເວັ້ນຫຼືຜ່ອນຜັນ ຄັ້ງທຳອິດ, ແລະ ສອງ ປີ ໃນການຍົກເວັ້ນຫຼືຜ່ອນຜັນ ຄັ້ງທີສອງ.

ມັນມີຄວາມສຳຄັນ ທີ່ຈະຮູ້ວ່າ ຜະລິດຕະພັນ ທີ່ແຈ້ງປ່ອຍອອກ ໃນສະຫະພາບເອີຣົບ ຈະຕ້ອງເປັນອັນດຽວກັນ ກັບ ຜະລິດຕະພັນ ທີ່ສົ່ງອອກຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ ບ່ອນທີ່ພວກມັນ ໄດ້ຮັບການພິຈາລະນາ ວ່າເປັນແຫຼ່ງກຳເນີດ. ສິນຄ້າ ຈະຕ້ອງບໍ່ຜ່ານການປັບແຕ່ງ ຫຼື ປ່ຽນຮູບ ນອກເໜືອຈາກສິ່ງທີ່ຈຳເປັນ ໃນການເກັບຮັກສາ ສິນຄ້າ ໃຫ້ຢູ່ໃນສະພາບດີ. ການປະຕິບັດຕາມ ຄວາມຕ້ອງການຂອງຂໍ້ກຳນົດນີ້ ແມ່ນຖືວ່າ ເປັນທີ່ພໍໃຈ ເວັ້ນເສຍແຕ່ວ່າ ເຈົ້າໜ້າທີ່ພາສີ ມີເຫດຜົນທີ່ຈະມີຄວາມເຊື່ອ ໃນທາງກົງກັນຂ້າມ. ໃນກໍລະນີດັ່ງກ່າວ, ເຈົ້າໜ້າທີ່ພາສີ ອາດຈະຮ້ອງຂໍ ໃຫ້ຜູ້ແຈ້ງເສຍ ສະໜອງ ຫຼັກຖານການປະຕິບັດຕາມຂໍ້ກຳນົດທີ່ຕ້ອງການ, ຊຶ່ງສາມາດສະໜອງໃຫ້ໄດ້ ດ້ວຍວິທີໃດກໍໄດ້, ລວມທັງ ເອກະສານຂົນສົ່ງ ຕາມສັນຍາ ເຊັ່ນ: ໃບບິນຂົນສົ່ງ ຫຼື ຫຼັກຖານທີ່ເປັນຮູບປະທຳ ໂດຍອີງຕາມ ການໝາຍ ຫຼື ໃສເວກໝາຍ ກ່ອງບັນຈຸສິນຄ້າ ຫຼື ທຸກຫຼັກຖານທີ່ກ່ຽວຂ້ອງ ກັບສິນຄ້າເອງ.

---

*ສຳລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, ໃຫ້ອີງໃສ່:*

- *ລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງ ສະຫະພາບເອີຣົບ ສຳລັບ ແຜນງານ GSP. ຄູ່ມື ສຳລັບຜູ້ນຳໃຊ້ ກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງ ແຜນງານ GSP – ຊຶ່ງລວມມີ ເນື້ອໃນດ້ານນິຕິກຳ ທີ່ເປັນສະບັບລວບລວມ ແບບບໍ່ເປັນທາງການ ທີ່ກ່ຽວຂ້ອງກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງ ແຜນງານ GSP;*[57]
- ***ເວັບໄຊ** Access2Markets **ຂອງ** EU ສະໜອງ ຂໍ້ມູນກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ແລະ ເຄື່ອງມືປະເມີນຕົນເອງ ທີ່ຮຽກວ່າ ROSA (ກົດລະບຽບ ວ່າດ້ວຍການປະເມີນແຫຼ່ງກຳເນີດ ດ້ວຍຕົນເອງ), ທີ່ໃຫ້ການຊ່ວຍເຫຼືອ ໃນການກຳນົດ ກົດລະບຽບ ວ່າດ້ວຍຕົ້ນທາງ ທີ່ມີຜົນນຳໃຊ້;*[58] *ແລະ*

*ຜູ້ອຳນວຍຄວາມສະດວກ ກົດລະບຽບ ວ່າດ້ວຍ ແຫຼ່ງກຳເນີດ – ຊຶ່ງເປັນສະບັບພະຍາກອນທົ່ວໄປ ກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ.[59] ຂໍ້ມູນເພີ່ມຕື່ມ ກ່ຽວກັບກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ທີ່ຢູ່ພາຍໃຕ້ ແຜນງານ GSP ແມ່ນຍັງມີຢູ່ໃນ ໝວດທີ່ເວົ້າເຖິງສະເພາະຂະແໜງການ (ພາກ C ຂອງຄູ່ມືສະບັບນີ້).*

## iv. ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງ ສະຫະພາບເອີຣົບ (EU's Registered Exporter system ຫຼື REX)

ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງສະຫະພາບເອີຣົບ ມີຜົນບັງຄັບໃຊ້ ນັບຕັ້ງແຕ່ ວັນທີ 1 ມັງກອນ 2017. ລະບົບ REX ແມ່ນອີງໃສ່ ຫຼັກການ ຂອງ **ການຢັ້ງຢືນຕົນເອງ** ໂດຍ ຜູ້ປະກອບການເອອີໂອ ທີ່ຈະອອກ ຖະແຫຼງການ ກ່ຽວກັບແຫຼ່ງກຳເນີດ (Statement on Origin: ເປັນຂໍ້ຄວາມທີ່ລະບຸໃນໃບແຈ້ງໜີ້ ຫຼື ເອກະສານການຄ້າອື່ນໆ ເພື່ອບອກແຫຼ່ງກຳເນີດຂອງສິນຄ້າ) ດ້ວຍຕົນເອງ, ຢຸດຕິ ແບບພອມຢັ້ງຢືນແຫຼ່ງກຳເນີດ ທີ່ຜ່ານມາ.[60] **ເພື່ອທີ່ຈະມີສິດອອກຖະແຫຼງການກ່ຽວກັບແຫຼ່ງກຳເນີດ, ຜູ້ປະກອບການເອອີໂອ ຕ້ອງໄດ້ລົງທະບຽນ ຕາມມາດຕາ** 86 **ຂອງ ລະບຽບການຈັດຕັ້ງປະຕິບັດ ຂອງຄະນະກຳມະການ** (EU) 2015/2447 **ລົງວັນທີ** 24 **ພະຈິກ** 2015[61] ແລະ ມີການລົງທະບຽນທີ່ຖືກຕ້ອງ ຢູ່ໃນລະບົບ REX. ໂດຍສະເພາະ, ຜູ້ປະກອບການເອອີໂອ ຕ້ອງໄດ້ຖືກລົງທະບຽນ ຢູ່ໃນຖານຂໍ້ມູນ ໂດຍ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ທີ່ມີຄວາມສາມາດ - ແລະ ຜ່ານການປະຕິບັດເຊັ່ນນີ້, ກໍຈະກາຍເປັນຜູ້ສົ່ງອອກ ທີ່ໄດ້ຈົດທະບຽນແລ້ວ.[62]

ສຳລັບ ການສົ່ງສິນຄ້າ ທີ່ມີແຫຼ່ງກຳເນີດ ທີ່ມີມູນຄ່າຕ່ຳກວ່າ 6,000 ເອີໂຣ, ຖະແຫຼງການ ກ່ຽວກັບແຫຼ່ງກຳເນີດ (Statement on Origin) ສາມາດອອກໄດ້ ໂດຍ ຜູ້ສົ່ງອອກໃດໜຶ່ງ, ໂດຍບໍ່ມີພັນທະທີ່ຈະຖືກຈົດທະບຽນ. ມູນຄ່າ ຂອງຜະລິດຕະພັນ ທີ່ມີແຫຼ່ງກຳເນີດ ຢູ່ໃນການຂົນສົ່ງ ແມ່ນມູນຄ່າ ຂອງ ຜະລິດຕະພັນທັງໝົດທີ່ມີແຫຼ່ງກຳເນີດ ທີ່ຢູ່ພາຍໃນການຂົນສົ່ງດຽວ ທີ່ຢູ່ພາຍໃຕ້ ຖະແຫຼງການ ກ່ຽວກັບແຫຼ່ງກຳເນີດ (Statement on Origin) ທີ່ໄດ້ສ້າງຂຶ້ນ ຢູ່ໃນປະເທດທີ່ສົ່ງອອກ.[63]

ຍ້ອນແນວນັ້ນ, ພາຍໃຕ້ກອບນີ້:

- ຜູ້ສົ່ງອອກ ຈາກ ສປປ ລາວ (ເຊັ່ນດຽວກັນກັບ ປະເທດຜູ້ໄດ້ຮັບຜົນປະໂຫຍດອື່ນໆ), ໄດ້ລົງທະບຽນ ຫຼື ບໍ່, ຈະຕ້ອງອອກ ຖະແຫຼງການ ກ່ຽວກັບແຫຼ່ງກຳເນີດ (Statement on Origin) ແກ່ ຜະລິດຕະພັນທີ່ມີແຫຼ່ງກຳເນີດ ທີ່ຖືກຂົນສົ່ງ ເມື່ອມູນຄ່າທັງໝົດ ຂອງມັນ ແມ່ນບໍ່ເກີນ 6,000 ເອີໂຣ;[64]
- ຜູ້ສົ່ງອອກ, ເມື່ອໄດ້ລົງທະບຽນແລ້ວ, ຈະຕ້ອງອອກ ຖະແຫຼງການ ກ່ຽວກັບແຫຼ່ງກຳເນີດ (Statement on Origin) ສຳລັບ ຜະລິດຕະພັນທີ່ມີແຫຼ່ງກຳເນີດ ທີ່ຖືກຂົນສົ່ງ, ເມື່ອມູນຄ່າທັງໝົດຂອງມັນ ເກີນ 6,000 ເອີໂຣ, ຕາມວັນທີ ນັບຕັ້ງແຕ່ ການລົງທະບຽນ ຂອງມັນ ມີຜົນນຳໃຊ້ ຢ່າງຖືກຕ້ອງ.[65]

### ການຈັດຕັ້ງປະຕິບັດ ລະບົບ REX ຂອງ ສປປ ລາວ

ສປປ ລາວ ໄດ້ນຳໃຊ້ ລະບົບ REX ນັບຕັ້ງແຕ່ ວັນທີ 1 ມັງກອນ 2017 ແລະ ໄລຍະຂ້າມຜ່ານ ໃນຊ່ວງ ທີ່ໄດ້ນຳໃຊ້ ການຢັ້ງຢືນຕົນເອງ ແລະ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໄດ້ສິ້ນສຸດລົງ ໃນວັນທີ 31 ທັນວາ 2017.[66] ຂ້າງລຸ່ມນີ້ ແມ່ນບາດກ້າວຕົ້ນຕໍ ທີ່ ຜູ້ສົ່ງອອກ ຂອງ ສປປ ລາວ ໄດ້ນຳໃຊ້ ທີ່ກ່ຽວຂ້ອງກັບ ລະບົບ REX.

- **ການສະເໜີ ເປັນຜູ້ສົ່ງອອກ ທີ່ໄດ້ຈົດທະບຽນ:**

ເພື່ອທີ່ຈະໃຫ້ໄດ້ລົງທະບຽນ, ·ຜູ້ສົ່ງອອກ ຕ້ອງສົ່ງຄຳຮ້ອງ ໄປຫາ ເຈົ້າໜ້າທີ່ທີ່ ມີສິດອຳນາດ ຂອງ ປະເທດຜູ້ໄດ້ຮັບຜົນປະໂຫຍດ,[67] ໂດຍນຳໃຊ້ ແບບພອມທີ່ກ່ຽວຂ້ອງ.[68]

ຢູ່ໃນ ສປປ ລາວ, ກົມນຳເຂົ້າ ແລະ ສົ່ງອອກ ພາຍໃຕ້ ກະຊວງ ອຸດສາຫະກຳ ແລະ ການຄ້າ, ແມ່ນອົງການ ທີ່ສິດອຳນາດ ສຳລັບການຢັ້ງຢືນຕົນເອງ ກ່ຽວກັບແຫຼ່ງກຳເນີດ ພາຍໃຕ້ລະບົບ REX.[69]

ໝາຍເລກຜູ້ສົ່ງອອກທີ່ໄດ້ຈົດທະບຽນ ແມ່ນຈະຖືກມອບໃຫ້ຜູ້ສົ່ງອອກ ໂດຍ ກົມນຳເຂົ້າ ແລະ ສົ່ງອອກ ໂດຍແນ່ໃສ່ ການສົ່ງອອກ ພາຍໃຕ້ແຜນງານ GSP. ການຂຶ້ນທະບຽນ ມີຜົນນຳໃຊ້ໄດ້ ນັບຕັ້ງແຕ່ວັນທີ ທີ່ອົງການທີ່ມີສິດອຳນາດ ຂອງ ປະເທດທີ່ໄດ້ຮັບຜົນປະໂຫຍດ (ສຳລັບ ສປປ ລາວ ແມ່ນກົມນຳເຂົ້າ ແລະ ສົ່ງອອກ) ຫຼື ເຈົ້າໜ້າທີ່ພາສີ ຂອງປະເທດທີ່ເປັນສະມາຊິກ ຂອງ ສະຫະພາບເອີຣົບ ຮັບຄຳຮ້ອງສະເໜີຂໍລົງທະບຽນ ຢ່າງຄົບຖ້ວນ.

- **ການບັນທຶກ ທີ່ຈະໄດ້ສືບຕໍ່ປະຕິບັດ ໂດຍ ຜູ້ສົ່ງອອກ:**

ຜູ້ສົ່ງອອກ, ທີ່ໄດ້ລົງທະບຽນ ຫຼື ບໍ່ໄດ້ລົງທະບຽນ, ຈະຕ້ອງປະຕິບັດຕາມພັນທະຕໍ່ໄປນີ້:

(i) ຮັກສາ ການບັນທຶກບັນຊີການຄ້າ ຢ່າງເໝາະສົມ ສໍາລັບການຜະລິດ ແລະ ການສະໜອງ ສິນຄ້າທີ່ມີເງື່ອນໄຂ ໄດ້ຮັບການປະຕິບັດ ດ້ວຍສິດທິພິເສດ;

(ii) ຮັກສາ ໃຫ້ມີຫຼັກຖານທັງໝົດ ທີ່ກ່ຽວຂ້ອງກັບ ວັດສະດຸ ທີ່ຖືກໃຊ້ໃນການຜະລິດ;

(iii) ຮັກສາ ເອກະສານພາສີທັງໝົດ ທີ່ກ່ຽວຂ້ອງກັບ ວັດສະດຸທີ່ນໍາໃຊ້ ໃນການຜະລິດ; ແລະ

(iv) ຮັກສາໄວ້ ຢ່າງໜ້ອຍສາມປີ ນັບຕັ້ງແຕ່ທ້າຍປີ ທີ່ ຖະແຫຼງການ ກ່ຽວກັບແຫຼ່ງກໍາເນີດ (Statement on Origin) ໄດ້ຖືກຂຽນຂຶ້ນ, ຫຼື ດົນກວ່ານັ້ນ ຖ້າກົດໝາຍຕ້ອງການ ໃຫ້ມີການບັນທຶກ:

a) ຖະແຫຼງການ ກ່ຽວກັບແຫຼ່ງກໍາເນີດ (Statement on Origin) ທີ່ຕົນຂຽນຂຶ້ນ; ແລະ

b) ວັດສະດຸ ທີ່ມີແຫຼ່ງກໍາເນີດໃນປະເທດ ແລະ ທີ່ມີແຫຼ່ງກໍາເນີດ ມາຈາກບ່ອນອື່ນ ຂອງຕົນ, ການຜະລິດ ແລະ ບັນຊີສາງ.[70]

ການບັນທຶກ ທີ່ກ່າວເຖິງໃນຂໍ້ (d) ສາມາດ ເຮັດເປັນຮູບແບບເອເລັກໂຕຣນິກໄດ້, ແຕ່ຕອ້ງປ່ອຍໃຫ້ ວັດສະດຸ ທີ່ຖືກນໍາໃຊ້ໃນການຜະລິດ ຜະລິດຕະພັນສົ່ງອອກ ໄດ້ຮັບການຕິດຕາມ ແລະ ໃຫ້ສະຖານະພາບແຫຼ່ງກໍາເນີດຂອງມັນ ໄດ້ຮັບການຢືນຢັນ. ນອກຈາກນັ້ນ, ພັນທະຂອງຜູ້ສົ່ງອອກ ຈະຕ້ອງມີຜົນນໍາໃຊ້ກັບ ຜູ້ສະໜອງ ທີ່ສະໜອງ ໃບແຈ້ງ ຂອງຜູ້ສະໜອງ ໃຫ້ແກ່ຜູ້ສົ່ງອອກ ທີ່ຢັ້ງຢືນ ສະຖານະແຫຼ່ງກໍາເນີດ ຂອງສິນຄ້າ ທີ່ເຂົາເຈົ້າສະໜອງໃຫ້.

ມັນເປັນສິ່ງສໍາຄັນທີ່ ຜູ້ສົ່ງອອກ ເຂົ້າໃຈຢ່າງຄົບຖ້ວນ ກ່ຽວກັບເງື່ອນໄຂ ແລະ ຄວາມໝາຍ ຂອງການສົ່ງອອກ ພາຍໃຕ້ແຜນງານ GSP ຂອງ ສະຫະພາບເອີຣົບ. *ໃນບັນດາສິ່ງຕ່າງໆ*, ອົງການພາສີຂອງ ບັນດາປະເທດສະມາຊິກ EU ທີ່ກ່ຽວຂ້ອງ ອາດຈະຮຽກຮ້ອງໃຫ້ມີການກວດກາຕື່ມອີກ ຢູ່ໃນການຂົນສົ່ງສິນຄ້າ. ຖ້າວ່າ ການກວດສອບຫຼັງການສົ່ງອອກເຫຼົ່ານີ້ ສະແດງໃຫ້ເຫັນວ່າ ສິນຄ້າສົ່ງອອກ ບໍ່ປະຕິບັດຕາມ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ທີ່ໄດ້ມີຜົນນໍາໃຊ້, ຜູ້ນໍາເຂົ້າ ຈະຖືກບອກ ໃຫ້ຈ່າຍພາສີທັງໝົດ (ໂດຍບໍ່ມີສິດທິພິເສດ), ຊຶ່ງສາມາດນໍາໄປສູ່ ການຮຽກຮ້ອງຄ່າຊົດເຊີຍ ທີ່ພົວພັນກັບ ຜູ້ສົ່ງອອກ ໃນປະເທດຜູ້ໄດ້ຮັບຜົນປະໂຫຍດ *ໃນຈໍານວນບັນຫາອື່ນໆ.*

- **ການຮັກສາ ການບັນທຶກ ຂອງ ຜູ້ສົ່ງອອກທີ່ໄດ້ຈົດທະບຽນ:**

·ອົງການທີ່ມີສິດອໍານາດ (ກົມ DIMEX) ຂອງ ສປປ ລາວ ແມ່ນຈະຖືກຕ້ອງການ ໃຫ້ສ້າງຕັ້ງ ແລະ ເກັບຮັກສາ ການບັນທຶກຂໍ້ມູນທາງເອເລັກໂຕຣນິກ ແບບມີການອັບເດດຕະຫຼອດເວລາ ກ່ຽວກັບຜູ້ສົ່ງອອກທີ່ໄດ້ຈົດທະບຽນ ທີ່ຕັ້ງຢູ່ໃນປະເທດນັ້ນໆ ແລະ ຈະຕ້ອງອັບເດດການບັນທຶກທັນທີ ເມື່ອຜູ້ສົ່ງອອກ ຖືກຖອນອອກຈາກການຈົດທະບຽນ.[71]

ການບັນທຶກ ແມ່ນຈະຕ້ອງປະກອບດ້ວຍຂໍ້ມູນຕໍ່ໄປນີ້:

(a) ຊື່ ແລະ ທີ່ຢູ່ເຕັມ ຂອງບ່ອນທີ່ ຜູ້ສົ່ງອອກທີ່ໄດ້ລົງທະບຽນ ຖືກສ້າງຕັ້ງຂຶ້ນ /ອາໃສຢູ່, ລວມທັງຕົວລະບຸປະເທດ ຫຼື ອະນາເຂດ (ລະຫັດປະເທດ ISO alpha 2);

(b) ຈໍານວນຜູ້ສົ່ງອອກ ທີ່ໄດ້ຈົດທະບຽນ;

(c) ຜະລິດຕະພັນ ທີ່ຕັ້ງໃຈຈະສົ່ງອອກ ພາຍໃຕ້ ແຜນງານ (ບັນຊີລາຍການຊີ້ບອກ ຂອງ ພາກ ຫຼື ຫົວຂໍ້ ວ່າດ້ວຍລະບົບທີ່ສອດຄ່ອງກົມກຽວ ທີ່ພິຈາລະນາ ຈາກຜູ້ຮ້ອງຂໍ ວ່າ ມີຄວາມເໝາະສົມ);

(d) ວັນທີຕັ້ງແຕ່ ແລະ ຮອດເວລາ ທີ່ຜູ້ສົ່ງອອກ ຖືກຈົດທະບຽນ; ແລະ

(e) ເຫດຜົນ ສໍາລັບການຖອນຕົວ (ນັ້ນກໍຄື: ການສະເໜີ ຂອງຜູ້ສົ່ງອອກທີ່ໄດ້ລົງທະບຽນ ຫຼື ການຖອນອອກ ໂດຍ ອົງການທີ່ມີສິດອໍານາດ). ຂໍ້ມູນໂຕເລກນີ້ ຈະມີໄວ້ໃຫ້ສະເພາະ ອົງການທີ່ມີສິດອໍານາດເທົ່ານັ້ນ.

ອົງການທີ່ມີສິດອໍານາດ ຂອງ ບັນດາປະເທດທີ່ໄດ້ຮັບຜົນປະໂຫຍດ ແມ່ນຈະຕ້ອງ **ແຈ້ງໃຫ້ຄະນະກໍາມະການເອີຣົບ** ຮັບຊາບ ກ່ຽວກັບ **ລະບົບຕົວເລກແຫ່ງຊາດ** **ທີ່ຖືກນໍາໃຊ້ ສໍາລັບການກໍານົດ ຜູ້ສົ່ງອອກທີ່ໄດ້ຈົດທະບຽນ**. ຕົວເລກ ຈະຕ້ອງເລີ່ມຕົ້ນດ້ວຍ ລະຫັດປະເທດ ISO alpha 2.

## V. ຄ່າທໍານຽມຕ່າງໆ ນອກເໜືອຈາກ ພາສີອາກອນ

ນອກຈາກ ພາສີອາກອນທີ່ກ່ຽວຂ້ອງ (ຊຶ່ງໃນປັດຈຸບັນ ບໍ່ສາມາດມີຜົນນໍາໃຊ້ກັບ ສປປ ລາວ ໃນຖານະ ເປັນຜູ້ໄດ້ຮັບຜົນປະໂຫຍດ EBA), ຫົວໜ່ວຍທຸລະກິດ ທີ່ສົ່ງອອກໄປ ສະຫະພາບເອີຣົບ ຄວນຮູ້ເຖິງຄ່າໃຊ້ຈ່າຍອື່ນໆ ທີ່ເຂົາເຈົ້າ ອາດຈໍາເປັນຈະຕ້ອງໄດ້ຈ່າຍ ເພື່ອທີ່ຈະວາງຜະລິດຕະພັນ ຂອງເຂົາເຈົ້າ ໃສ່ໃນຕະຫຼາດ EU. ໂດຍສະເພາະ, ເບິ່ງເໝືອນກັບວ່າ ຜູ້ປະກອບການ ຈະຄົ້ນພົບວ່າ ເຂົາເຈົ້າ ຈໍາເປັນຈະຕ້ອງຈ່າຍ ອາກອນມູນຄ່າເພີ່ມ ລວມທັງ *ອາກອນຊົມໃຊ້ (Excise duties)*, ຊຶ່ງຂຶ້ນກັບ ກົດລະບຽບວ່າດ້ວຍໂຕ

ເລກງົບປະມານ ທີ່ມີຜົນນຳໃຊ້ ຢູ່ໃນປະເທດສະມາຊິກ ຂອງສະຫະພາບເອີຣົບ.

### ອາກອນມູນຄ່າເພີ່ມ (VAT)

ອາກອນມູນຄ່າເພີ່ມ ແມ່ນເປັນອາກອນການບໍລິໂພກທົ່ວໄປ ທີ່ຖືກປະເມີນມູນຄ່າ ເພີ່ມໃສ່ສິນຄ້າ ແລະ ການບໍລິການ. ມັນມີຜົນນຳໃຊ້ ຫຼາຍ ຫຼື ໜ້ອຍ ຕໍ່ກັບ ໝົດທຸກສິນຄ້າ ແລະ ການບໍລິການທີ່ຖືກຊື້ ແລະ ຂາຍ ສຳລັບການຊົມໃຊ້ ຫຼື ບໍລິໂພກ.

ເຫດຜົນ ສຳລັບການເກັບ ພາສີມູນຄ່າເພີ່ມ ກັບ ຜະລິດຕະພັນນຳເຂົ້າ ແມ່ນວ່າ ພາສີດັ່ງກ່າວ ຮັກສາລະບົບ ໃຫ້ມີຄວາມຍຸຕິທຳ ແກ່ ຜູ້ຜະລິດ ຂອງ EU, ຊຶ່ງປ່ອຍໃຫ້ເຂົາເຈົ້າສາມາດແຂ່ງຂັນ ໃນຂໍ້ກຳນົດທີ່ເທົ່າທຽມກັນ ໃນຕະຫຼາດ EU ກັບຜູ້ຜະລິດ ຈາກປະເທດທີສາມ. ຜູ້ສົ່ງອອກ ທີ່ມີພັນທະເສຍອາກອນທີ່ໄດ້ລົງທະບຽນ ອາກອນມູນຄ່າເພີ່ມແລ້ວ ແມ່ນຈະໄດ້ຮັບອະນຸຍາດໃຫ້ຫັກການຈ່າຍເງິນ ໃນເວລາເຂົາເຈົ້າສົ່ງຄືນ ອາກອນມູນຄ່າເພີ່ມ.

### ອາກອນຊົມໃຊ້ (Excise duties)

ອາກອນຊົມໃຊ້ (Excise duties) ແມ່ນອາກອນທາງອ້ອມຕໍ່ກັບການບໍລິໂພກ ຫຼື ຊົມໃຊ້ ຜະລິດຕະພັນໃດໜຶ່ງ. ໃນທາງກົງກັນຂ້າມ ກັບ ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ແມ່ນອາກອນສະເພາະ ແລະ ຍ້ອນແນວນັ້ນ ຈຶ່ງສະແດງອອກເປັນຈຳນວນເງິນ ຕໍ່ ປະລິມານ ຂອງ ຜະລິດຕະພັນ. ສຳລັບອາກອນປະເພດນີ້, ໂດຍປົກກະຕິ, ຜະລິດຕະພັນ ທີ່ນອນຢູ່ໃນ ອາກອນຊົມໃຊ້ ປະກອບມີ ເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບ ແລະ ຜະລິດຕະພັນພະລັງງານ (ເຊັ່ນ: ນ້ຳມັນເຊື້ອໄຟ).

## vi. ການນຳເຂົ້າສິນຄ້າ ໃນ EU – ເອກະສານແຈ້ງເສຍພາສີ

ຜູ້ປະກອບການທັງໝົດ **ທີ່ນຳເຂົ້າ**ສິນຄ້າ ເຂົ້າໄປໃນ EU ຈະຕ້ອງນຳໃຊ້ເອກະສານແຈ້ງເສຍພາສີ (SAD) ໃນການສະສາງພາສີ ຢູ່ໃນປະເທດທີ່ເປັນສະມາຊິກ EU ທີ່ກ່ຽວຂ້ອງ.[72]

SAD ແມ່ນແບບຟອມແຈ້ງການນຳເຂົ້ ທີ່ເປັນມາດຕະຖານທີ່ຖືກນຳໃຊ້ ໂດຍ ໝົດທຸກປະເທດ ທີ່ເປັນສະມາຊິກ EU. ພໍ່ຄ້າສາມາດສົ່ງ SAD ໃນລະບົບຄອມພິວເຕີທີ່ຖືກຮັບຮອງທີ່ເຊື່ອມຕໍ່ກັບ ອົງການພາສີທີ່ກ່ຽວຂ້ອງ ຫຼື ໂດຍການສະໜອງໂດຍກົງ ໃຫ້ກັບ ຫ້ອງການພາສີທີ່ກ່ຽວຂ້ອງ ໂດຍທົ່ວໄປແລ້ວ, ຕ້ອງໃຊ້ສຳເນົາສາມສະບັບ. ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ເກັບຮັກສາໄວ້ສະບັບໜຶ່ງ, ສ່ວນສະບັບທີສອງແມ່ນນຳໃຊ້ເພື່ອຈຸດປະສົງທາງສະຖິຕິ ຂອງປະເທດປາຍທາງ, ແລະ ສຳເນົາສະບັບທີສາມ ແມ່ນຖືກສົ່ງກັບຄືນໃຫ້ຜູ້ຮັບສົ່ງພາຍຫຼັງທີ່ຖືກເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ປະທັບຕາແລ້ວ.

SAD ອະນຸຍາດໃຫ້ພໍ່ຄ້າ ແຈ້ງ ຂໍ້ມູນຕໍ່ໄປນີ້ ທັນທີ:

- ຕົວຕົນ ແລະ ຂໍ້ມູນທີ່ກ່ຽວຂ້ອງອື່ນໆ ກ່ຽວກັບ ຜູ້ນຳເຂົ້າ, ຜູ້ສົ່ງອອກ, ຕົວແທນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ;
- ການປະຕິບັດ ທີ່ໄດ້ຮັບການຮັບຮອງ ຈາກອົງການພາສີທີ່ກ່ຽວຂ້ອງ (ຕົວຢ່າງ: ການປ່ອຍເພື່ອການໄຫຼວຽນແບບອິດສະຫຼະ, ປ່ອຍເພື່ອການບໍລິໂພກ, ການນຳເຂົ້າຊົ່ວຄາວ, ຫຼື ການຂົນສົ່ງຜ່ານແດນ, ແລະ ອື່ນໆ);
- ຂໍ້ມູນກ່ຽວກັບສິນຄ້າ ທີ່ຖືກຊື້ຂາຍ, ເຊັ່ນ: ລະຫັດ CN, ນ້ຳໜັກ, ຫົວໜ່ວຍ, ທີ່ຕັ້ງ ແລະ ການຫຸ້ມຫໍ່;
- ຂໍ້ມູນກ່ຽວກັບ ວິທີການຂົນສົ່ງ ທີ່ພໍ່ຄ້ານຳໃຊ້;
- ຂໍ້ມູນໂຕເລກ ກ່ຽວກັບປະເທດຕົ້ນທາງ, ປະເທດທີ່ສົ່ງອອກ ແລະ ປາຍທາງ;
- ຂໍ້ມູນທາງດ້ານການຄ້າ ແລະ ການເງິນ (ຕົວຢ່າງ ຄຳສັບການຄ້າສາກົນ, ມູນຄ່າໃນໃບແຈ້ງໜີ້, ສະກຸນເງິນໃນໃບແຈ້ງໜີ້, ອັດຕາແລກປ່ຽນ ແລະ ປະກັນໄພ, ແລະ ອື່ນໆ);
- ລາຍການ ເອກະສານທີ່ກ່ຽວຂ້ອງກັບ SAD (ຕົວຢ່າງ ໃບອະນຸຍາດນຳເຂົ້າ, ໃບຢັ້ງຢືນການກວດກາ, ເອກະສານແຫຼ່ງກຳເນີດ, ເອກະສານຂົນສົ່ງ ແລະ ໃບແຈ້ງໜີ້ການຄ້າ, ແລະ ອື່ນອື່ນໆ); ແລະ
- ການແຈ້ງ ແລະ ວິທີການຊຳລະ ອາກອນນຳເຂົ້າ (ຕົວຢ່າງ: ພາສີອາກອນ, ອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້, ແລະ ອື່ນໆ).

## vii. ຜົນນຳໃຊ້ ຂອງ ມາດຕະການປົກປ້ອງ ແບບພິເສດ

ໂດຍທົ່ວໄປແລ້ວ, ຜູ້ສົ່ງອອກ ຈາກ ສປປ ລາວ ຄວນຈະຮູ້ເຖິງ ຂໍ້ກຳນົດ ກ່ຽວກັບການປົກປ້ອງ ແລະ ການເຝົ້າລະວັງ ຢູ່ໃນພາກ VI ຂອງ ລະບຽບການ GSP ຂອງ ສະຫະພາບເອີຣົບ. ສິ່ງທີ່ສຳຄັນກໍຄືວ່າ, **ການປົກປ້ອງເຫຼົ່ານີ້ ບໍ່ມີຜົນນຳໃຊ້ກັບ ບັນດາປະເທດ**

**ທີ່ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ EBA.** ດັ່ງນັ້ນ, ໃນປັດຈຸບັນ, ຜະລິດຕະພັນ ຈາກ ສປປ ລາວ ບໍ່ມີຄວາມສ່ຽງທີ່ຈະຢູ່ພາຍໃຕ້ ການປົກປ້ອງ. **ເຖິງຢ່າງໃດກໍ່ຕາມ, ເມື່ອ ສປປ ລາວ ໄດ້ຫຼຸດພົ້ນອອກຈາກ ສະຖານະພາບ ຜູ້ໄດ້ຮັບຜົນປະໂຫຍດ EBA ແລະ ໃນກໍລະນີ ທີ່ລາວ ຈະໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ ຫຼື ແຜນງານ GSP+ ຂອງ ສະຫະພາບເອີຣົບ, ກົດລະບຽບ ກ່ຽວກັບການປົກປ້ອງ ອາດຈະມີຜົນນໍາໃຊ້.**

ເພາະສະນັ້ນ, ໃນກໍລະນີ ຂອງຜູ້ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ ຫຼື ແຜນງານ GSP+, ສະຫະພາບເອີຣົບ ສາມາດແນະນໍາຄືນ ອັດຕາພາສີອາກອນທົ່ວໄປ ຕໍ່ກັບ ຜະລິດຕະພັນ ທີ່ມີແຫຼ່ງກໍາເນີດ ມາຈາກປະເທດທີ່ໄດ້ຮັບຜົນປະໂຫຍດໃດໜຶ່ງ ໃນກໍລະນີຕໍ່ໄປນີ້:

ຖ້າຜະລິດຕະພັນ ຖືກ *"ນໍາເຂົ້າ ໃນປໍລິມາດ ແລະ/ຫຼື ໃນລາຄາ ທີ່ກໍ່ໃຫ້ເກີດ, ຫຼື ຂົ່ມຂູ່ທີ່ຈະກໍ່ໃຫ້ເກີດ ຄວາມຫຍຸ້ງຍາກທີ່ຮ້າຍແຮງ ຕໍ່ກັບ [ຜູ້ຜະລິດ ຂອງ EU] ໃນລັກສະນະນັ້ນ ຫຼື ເກີດມີ ການແຂ່ງຂັນຜະລິດຕະພັນ ໂດຍກົງ"*;[73] ຫຼື

- ໃນການລິເລີ່ມດ້ວຍຕົນເອງ, ໃນວັນທີ 1 ມັງກອນ ຂອງແຕ່ລະປີ, ຄະນະກໍາມະການເອີຣົບ ສາມາດ ຕັດສິດທິພິເສດທາງພາສີ ອອກໄດ້ ສໍາລັບ ຜະລິດຕະພັນແຜນແພ ແລະ ຜະລິດຕະພັນ ທີ່ໃນນອນໃນ ລະຫັດ CN 2207.10.00 (ເຫຼົ້າ ethyl ທີ່ບໍ່ໄດ້ປຸງແຕ່ງສະພາບຄວາມເປັນເຫຼົ້າ ຊຶ່ງມີຄວາມປຸກຂອງເຫຼົ້າ ຕໍ່ປໍລິມາດຢູ່ທີ່ 80% ຫຼື ສູງກວ່າ) ລະຫັດ 2207.20.00 (ເຫຼົ້າ Ethyl alcohol ແລະ ເຄື່ອງດື່ມທີ່ມີທາດເຫຼົ້າອື່ນໆ, ທີ່ໄດ້ປຸງແຕ່ງສະພາບຄວາມເປັນເຫຼົ້າ, ທີ່ມີທຸກລະດັບຄວາມປຸກ), ລະຫັດ 2909.19.10 (ສານເຄມີອິງຄະທາດ: Tert-butyl ethyl ether (ethyl-tertio-butyl-ether, ETBE)), ລະຫັດ 3814.00.90, 3820.00.00 ແລະ 3824.90.97 (ຜະລິດຕະພັນເຄມີຫຼາຍປະເພດ), ຖ້າສະພາບເງື່ອນໄຂ ການນໍາເຂົ້າໃດໜຶ່ງ ມີລະຫັດ 2207.20.00.[74] ເງື່ອນໄຂ ຈະແມ່ນ:
- ການເພີ່ມປະລິມານ (ເປັນປໍລິມາດ) ຂອງທຸກຜະລິດຕະພັນແຜ່ນແພ, ກະສິກໍາ ຫຼື ການປະມົງ ທີ່ກ່ຽວຂ້ອງ ຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ ຢ່າງໜ້ອຍ 13.5%, ເມື່ອທຽບກັບປີທີ່ຜ່ານມາ; ຫຼື
- ສໍາລັບຜະລິດຕະພັນແຜ່ນແພ (ນັ້ນກໍຄືຜະລິດຕະພັນທີ່ພົບເຫັນ ຢູ່ໃນພາກທີ 50–63 ຂອງ ລະຫັດ CN), ເມື່ອສ່ວນແບ່ງ ຜະລິດຕະພັນແຜ່ນແພ ຈາກປະເທດທີ່ໄດ້ຮັບຜົນປະໂຫຍດ ເກີນ 47.2% ຂອງມູນຄ່າຜະລິດຕະພັນແຜ່ນແພທີ່ກ່ຽວຂ້ອງ ທີ່ນໍາເຂົ້າຈາກໝົດທຸກປະເທດ ທີ່ໄດ້ຮັບຜົນປະໂຫຍດ ຈາກແຜນງານ GSP ແລະ GSP+ ໃນຊ່ວງໄລຍະ 12 ເດືອນໃດໜຶ່ງ.[75]

ເຖິງແນວໃດກໍ່ຕາມ, ມັນຄວນຈະໃຫ້ຂໍ້ສັງເກດວ່າ ຂໍ້ກໍານົດວ່າດ້ວຍການປົກປ້ອງ ມີຜົນນໍາໃຊ້ສະເພາະແຕ່ ຖ້າຜະລິດຕະພັນທີ່ກ່ຽວຂ້ອງ ຈາກປະເທດທີ່ໄດ້ຮັບຜົນປະໂຫຍດ ເກີນ 6% ຂອງການນໍາເຂົ້າທັງໝົດ ຂອງ EU ສໍາລັບຜະລິດຕະພັນນັ້ນໆ.

### ຫ້ອງ 2: ຂໍ້ກໍານົດທາງນິຕິກໍາ ຂອງ ສປປ ລາວ ຕໍ່ກັບ ການຢັ້ງຢືນຕົນເອງ ກ່ຽວກັບ ແຫຼ່ງກໍາເນີດ

ມາດຕາ 6 ວ່າດ້ວຍ ການອອກໃບຢັ້ງຢືນແຫຼ່ງກໍາເນີດ ຂອງຕົນເອງ ສໍາລັບ ຜູ້ສົ່ງອອກທີ່ໄດ້ຮັບອະນຸຍາດ ກໍານົດວ່າ:

> "ຜູ້ປະກອບການເອກະຊົນ ທີ່ຕ້ອງການກາຍເປັນ ຜູ້ສົ່ງອອກທີ່ໄດ້ຈົດທະບຽນ ພາຍໃຕ້ ໂຄງການທົດລອງ ການຢັ້ງຢືນຕົນເອງ ຂອງ ສະຫະພາບເອີຣົບ ຕ້ອງປະຕິບັດຕາມ ຂັ້ນຕອນຕໍ່ໄປນີ້:
>
> 1. ຜ່ານ ຂະບວນການຄັດເລືອກຜູ້ສົ່ງອອກ ທີ່ໄດ້ຮັບການຢັ້ງຢືນ, ຊຶ່ງຖືກກໍານົດໄວ້ ຢູ່ໃນ ຄໍາແນະນໍາ ກ່ຽວກັບ ກົດລະບຽບວ່າດ້ວຍແຫຼ່ງກໍາເນີດສິນຄ້າ ທີ່ພົວພັນກັບສິດທິເສດ, ເລກທີ 2225/MOIC.DIMEX, ລົງວັນທີ 5 ທັນວາ 2014;
> 2. ປະກອບແບບຟອມ ຕາມທີ່ໄດ້ລະບຸໄວ້ ໂດຍ ອົງການທີ່ມີສິດອໍານາດ ທີ່ຮັບຜິດຊອບ ການຢັ້ງຢືນແຫຼ່ງກໍາເນີດຂອງສິນຄ້າ ດ້ວຍຕົນເອງ ພາຍໃຕ້ ໂຄງການທົດລອງ ຂອງ ສະຫະພາບເອີຣົບ ພ້ອມທັງຄັດຕິດ ບັນດາເອກະສານຢັ້ງຢືນ ແລະ ອ້າງອີງຕ່າງໆ: ໃບຢັ້ງຢືນແຫຼ່ງກໍາເນີດ ຂອງສິນຄ້າ ແລະ ໜັງສືລາຍງານ ຄວາມອາດສາມາດສົ່ງອອກໃນແຕ່ລະປີ, ຈາກນັ້ນ ກໍສົ່ງເອກະສານທັງໝົດ ໄປຫາ ອົງການທີ່ມີອໍານາດ ທີ່ຮັບຜິດຊອບ ເລື່ອງການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ ໂຄງການທົດລອງ ຂອງ ສະຫະພາບເອີຣົບ;

3. ພາຍຫຼັງທີ່ສົ່ງແບບຟອມ ດ້ວຍເອກະສານຢັ້ງຢືນ ແລະ ອ້າງອີງ ທີ່ຖືກຕ້ອງ ແລະ ຄົບຖ້ວນແລ້ວ, ອົງການທີ່ມີສິດອຳນາດ ທີ່ຮັບຜິດຊອບເລື້ອງການຢັ້ງຢືນແຫຼ່ງກຳເນີດຂອງສິນຄ້າດ້ວຍຕົນເອງ ຕ້ອງພິຈາລະນາ ອອກໃບຢັ້ງຢືນຜູ້ສົ່ງອອກ ພາຍໃນ 3 ວັນລັດຖະການ."

ມາດຕາ 7 ວ່າດ້ວຍ ການລົງທະບຽນ ສຳລັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າ ດ້ວຍຕົນເອງ ຢູ່ໃນລະບົບ REX ກຳນົດວ່າ:

"ພາຍຫຼັງ ສຳເລັດ ໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບການຢັ້ງຢືນແລ້ວ, ຜູ້ສົ່ງອອກ ຕ້ອງສົ່ງໃບ ຄຳຮ້ອງລ່ວງໜ້າ ໄປໃຫ້ ອົງການທີ່ມີສິດອຳນາດ ທີ່ຮັບຜິດຊອບເລື່ອງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ເພື່ອລົງທະບຽນ ຢູ່ໃນລະບົບ REX. ຫຼັງຈາກການລົງທະບຽນ ຢູ່ໃນລະບົບ REX ສຳເລັດແລ້ວ, ຜູ້ສົ່ງອອກ ສາມາດດຳເນີນ ການຢັ້ງຢືນແຫຼ່ງກຳເນີດສິນຄ້າ ດ້ວຍຕົນເອງ."

## 2.3. ເຄື່ອງມື/ຊັບພະຍາກອນອື່ນໆ ທີ່ມີແກ່ ຜູ້ສົ່ງອອກ ຈາກ ສປປ ລາວ ໄປຫາ EU

ຜູ້ປະກອບການ ຈາກ ສປປ ລາວ ຍັງສາມາດ ນຳໃຊ້ ຊັບພະຍາກອນຫຼາຍຢ່າງ ທີ່ມີໃຫ້ ໂດຍ EU ແລະ ລັດຖະບານ ແຫ່ງ ສປປ ລາວ ເພື່ອເຮັດໃຫ້ເຂົາເຈົ້າສາມາດ ມີສ່ວນຮ່ວມ ໃນການສົ່ງອອກ.

### i. ເວັບໄຊ Access2Markets ຂອງ ສະຫະພາບເອີຣົບ

ເວັບໄຊ Access2Markets ຂອງ ສະຫະພາບເອີຣົບ ມີຈຸດປະສົງ ທີ່ຈະອະທິບາຍ ສັນຍາການຄ້າ ແລະ ແຜນງານ ການຄ້າດ້ວຍສິດທິພິເສດ ໄດ້ດີຂຶ້ນ ແລະ ຊ່ວຍໃຫ້ບໍລິສັດຕ່າງໆ ເຂົ້າໃຈວ່າ ຜະລິດຕະພັນຂອງເຂົາເຈົ້າ ມີເງື່ອນໄຂ ໄດ້ຮັບການຫຼຸດພາສີ ຫຼື ບໍ່.[76]

ເວັບໄຊ ອະນຸຍາດ ໃຫ້ຜູ້ໃຊ້ ຊອກຫາລາຍລະອຽດຕໍ່ໄປນີ້ ສຳລັບສິນຄ້ານຳເຂົ້າ ແລະ ສົ່ງອອກ:

a) ພາສີ;
b) ອາກອນ;
c) ·ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດສິນຄ້າ;
d) ຄວາມຕ້ອງການ ດ້ານຜະລິດຕະພັນ;
e) ຂັ້ນຕອນພາສີ;
f) ອຸປະສັກທາງການຄ້າ; ແລະ
g) ສະຖິຕິ ການໄຫຼວຽນການຄ້າ.

ເວັບໄຊໃໝ່ ຍັງປະກອບມີ:

- ພາບລວມ ຂອງ ກົດໝາຍ ຂອງ ສະຫະພາບເອີຣົບ ຕໍ່ກັບ ຜະລິດຕະພັນ ແລະ ການບໍລິການ;
- ລາຍລະອຽດການຕິດຕໍ່ ສຳລັບພາສີ ແລະ ເຈົ້າໜ້າທີ່ລັດ ອື່ນໆ ຢູ່ໃນ ບັນດາປະເທດທີ່ເປັນສະມາຊິກ EU ແລະ ຢູ່ໃນຄູ່ຄ້າ ຂອງ EU; ແລະ
- ຂໍ້ມູນ ກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ແລະ ເຄື່ອງມືປະເມີນຕົນເອງ ທີ່ຮຽກວ່າ ROSA (ກົດລະບຽບ ວ່າດ້ວຍ ການປະເພດແຫຼ່ງກຳເນີດ ດ້ວຍຕົນເອງ), ເຊິ່ງໃຫ້ການຊ່ວຍເຫຼືອ ໃນການກຳນົດ ກົດລະບຽບແຫຼ່ງກຳເນີດ ທີ່ສາມາດມີຜົນນຳໃຊ້ໄດ້.

**ຮູບ 4: ຮູບພາບ ຂອງ ເວັບໄຊ Access2Markets ຂອງ EU**




## ii. ເວັບໄຊ GSP Hub ຂອງ EU

ໂຄງການ GSP Hub, ໄດ້ເປີດຕົວໃນເດືອນກັນຍາ ປີ 2020, ເປັນໂຄງການທີ່ພະຍາຍາມ ສ້າງຄວາມເຂັ້ມແຂງ ແກ່ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ ແລະ ສຸມໃສ່ການຄ້າທີ່ມີຄວາມຍືນນານຂຶ້ນ. ໂດຍສະເພາະ, ໂຄງການຊອກຫາ ການເພີ່ມ ການນໍາໃຊ້ແຜນງານ GSP ໂດຍການນໍາເອົາ ການລົງທຶນໃໝ່ ຂອງ EU ເຂົ້າມາ, ທີ່ຊຸກຍູ້ໃຫ້ບໍລິສັດ ຂອງ ເອີຣົບ ນໍາເຂົ້າຈາກປະເທດທີ່ໄດ້ຮັບຜົນປະໂຫຍດ, ແລະ ສົ່ງເສີມມາດຕະຖານຄວາມຍືນຍົງສາກົນ. ໂຄງການ GSP Hub ນໍາສະເໜີເວັບໄຊທ GSP Hub (http://gsp-hub.eu/), ທີ່ສະໜອງຖານຂໍ້ມູນການຕິດຕາມ, ມີໜ້າເວັບໃຫ້ຂໍ້ມູນກ່ຽວກັບປະເທດ ສໍາລັບໝົດທຸກປະເທດທີ່ໄດ້ຮັບຜົນປະໂຫຍດ ຈາກແຜນງານ GSP, ມີເວທີສົນທະນາ ທີ່ດຶງເອົາການມີສ່ວນຮ່ວມ ຂອງທັງໜ່ວຍທຸລະກິດ ແລະ ຂໍ້ມູນທົ່ວໄປ ກ່ຽວກັບ ແຜນງານ GSP ຂອງສະຫະພາບເອີຣົບ ເວັບໄຊ ຍັງສະໜອງໜ້າເວັບ ທີ່ມີສົນທິສັນຍາທີ່ປະເທດ GSP ໄດ້ລົງນາມ. ສິ່ງດັ່ງກ່າວນີ້ຕົ້ນຕໍແມ່ນກ່ຽວຂ້ອງກັບ ແຜນງານ GSP+, ແຕ່ຈະມີການສະໜອງໃຫ້ກັບ ໝົດທຸກປະເທດ. ຈຸດປະສົງແມ່ນເພື່ອໃຫ້ມີຄວາມໂປ່ງໃສຫຼາຍຂຶ້ນ ແລະ ເພື່ອປັບປຸງການຕິດຕາມ.

ເວັບໄຊ GSP Hub ສະໜອງໜ້າເວັບ ທີ່ໃຫ້ຂໍ້ມູນສະເພາະ ສປປ ລາວ, ເຂົ້າເບິ່ງຢູ່ທີ່ https://gsphub.eu/country-info/Lao%20People's%20Democratic%20Republic.

**ຮູບ 5:** ຮູບພາບ ຈາກ ເວັບໄຊ GSP Hub ຂອງ EU




**ຮູບ 6:** ຮູບພາບ ສະແດງໜ້າເວັບ ຂອງເວັບໄຊ GSP Hub ທີ່ສະແດງຂໍ້ມູນກ່ຽວກັບ ສປປ ລາວ




## 1. ເວັບໄຊ Lao Quality Compass

ເວັບໄຊ Lao Quality Compass ທຳໜ້າທີ່ ເປັນສະເໝືອນຮ້ານຄ້າ ທີ່ມີຄົບທຸກຢ່າງ ຢູ່ບ່ອນດຽວ, ທີ່ປ່ອຍໃຫ້ຜູ້ຊົມໃຊ້ ຊອກຫາ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານຄຸນນະພາບ ທີ່ກ່ຽວຂ້ອງ ສຳລັບຜະລິດຕະພັນບູລິມະສິດ ຢູ່ໃນຕະຫຼາດ EU, ເພື່ອຮັບຄຳແນະນຳກ່ຽວກັບຫົວຂໍ້ ທີ່ກ່ຽວຂ້ອງກັບ ຄຸນນະພາບ, ແບ່ງປັນຫຼັກການປະຕິບັດ ທີ່ດີທີ່ສຸດ, ເຊື່ອມຕໍ່ກັບ ບັນດາສະຖາບັນທີ່ກ່ຽວຂ້ອງ ຫຼື ບຸກຄົນ ຜູ້ທີ່ສາມາດສະເໜີການຊ່ວຍເຫຼືອ ແລະ ໄດ້ຮັບຄວາມເຂົ້າໃຈທີ່ເລິກເຊິ່ງຈາກຜູ້ທີ່ປະສົບຜົນສຳເລັດມາແລ້ວ ໃນການສົ່ງອອກ ໄປສະຫະພາບເອີຣົບ.

ຖ້າເວົ້າສະເພາະ, ຜ່ານທາງເວທີນີ້, ຜູ້ປະກອບການ ສາມາດໄດ້ຮັບຂໍ້ມູນກ່ຽວກັບ ຂໍ້ກຳນົດ ຫຼື ຄວາມຕ້ອງການທີ່ກ່ຽວຂ້ອງສະເພາະ ກັບຄຸນນະພາບ, ລວມທັງຄວາມຕ້ອງການ ດ້ານນິຕິກຳ ແບບບັງຄັບ, ມາດຕະຖານທີ່ສຳຄັນ ແລະ ຕະຫຼາດ ທີ່ຕ້ອງການ ສຳລັບ ຜະລິດຕະພັນ ຫຼາຍຢ່າງ ຢູ່ໃນຕະຫຼາດ EU. ເຄື່ອງມືນີ້ ຈະສະໜອງ ຄວາມເຂົ້າໃຈອັນເລິກເຊິ່ງ ທີ່ເປັນມິດກັບຜູ້ຊົມໃຊ້ ເຂົ້າໄປໃນ ສິ່ງທີ່ຕ້ອງການ, ຂໍ້ມູນທີ່ມີຄວາມຫຼໍ່ແຫຼມ ສຳລັບຜູ້ສົ່ງອອກ, ລວມທັງ ການເຊື່ອມໂຍງກັບຊັບພະຍາກອນທີ່ມີມູນຄ່າເພີ່ມ ກ່ຽວກັບເລື່ອງນັ້ນ.

## 2. ແຜນທີ່ມາດຕະຖານ ຂອງ ສູນ ITC

ແຜນທີ່ມາດຕະຖານ ຂອງ ສູນການຄ້າສາກົນ ແມ່ນເຄື່ອງມືໜຶ່ງທີ່ມີປະໂຫຍດ ທີ່ຮັບຂໍ້ມູນທີ່ສາມາດເຂົ້າເຖິງໄດ້ ຢ່າງງ່າຍດາຍ ກ່ຽວກັບ ມາດຕະຖານຄວາມຍືນນານ ແບບສ່ວນຕົວ ແລະ ແບບສະໝັກໃຈ ແລະ ການຍັ້ງຍືນ ທີ່ອາດຈະກ່ຽວຂ້ອງກັບ ຜູ້ສົ່ງອອກ ຈາກ ສປປ ລາວ.[77] ຜູ້ໃຊ້ ສາມາດ ຄລິກໃສ່ແຖບ ທີ່ມີຊື່ວ່າ "Explore Standards Map" - ຜ່ານທາງນີ້, ເຂົາເຈົ້າສາມາດລະບຸມາດຕະຖານ ທີ່ກ່ຽວຂ້ອງ ຕາມແຕ່ລະຜະລິດຕະພັນ ທີ່ມີຜົນນຳໃຊ້ ຢູ່ໃນ ສປປ ລາວ ຕາມຕະຫຼາດປາຍທາງ (ເອີຣົບ).

ຮູບ 7: ຮູບພາບ ແຜນທີ່ມາດຕະຖານ ຂອງ ສູນ ITC




ຮູບ 8: ຮູບພາບ ສະແດງເວທີຕົວຊ່ວຍອຳນວຍຄວາມສະດວກ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງສູນ ITC




## 3. ຕົວຊ່ວຍອຳນວຍຄວາມສະດວກ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງ ສູນ ITC

ຕົວຊ່ວຍອຳນວຍຄວາມສະດວກ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຂອງ ສູນ ITC ສະໜອງ ການເຂົ້າເຖິງຖານຂໍ້ມູນ ຂອງ ສູນ ITC ແບບເປັນມິດຕໍ່ຜູ້ຊົມໃຊ້ ກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ແລະ ຂໍ້ກຳນົດວ່າດ້ວຍແຫຼ່ງກຳເນີດ ຢູ່ ໃນ ສັນຍາການຄ້າ. ໃນປັດຈຸບັນ, ຖານຂໍ້ມູນ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ປະກອບມີຂໍ້ມູນໂຕເລກ ສຳລັບ ຫຼາຍກວ່າ 350 ສັນຍາການຄ້າ ທີ່ມີຜົນບັງໃຊ້ ໂດຍຫຼາຍກວ່າ 190 ປະເທດ.[78]

ຕົວຊ່ວຍອຳນວຍຄວາມສະດວກ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ມີຄາດໝາຍ ທີ່ຈະຊ່ວຍໃຫ້ວິສາຫະກິດ ຂະໜາດນ້ອຍ ແລະ ກາງ (SMEs) ເພີ່ມການຄ້າ ໂດຍການນຳໃຊ້ຈຸດໄດ້ປຽບ ຈາກ ໂອກາດທາງການຄ້າທົ່ວໂລກ ໃນຮູບແບບຂອງ ອັດຕາພາສີຕໍ່າ ພາຍໃຕ້ ສັນຍາການຄ້າ. ເຄື່ອງມື ຍັງສາມາດ ຖືກນຳໃຊ້ ໂດຍ ຜູ້ກຳ

ນິດນະໂຍບາຍ, ຜູ້ເຈລະຈາການຄ້າ, ນັກເສດຖະສາດ ແລະ ຜູ້ຊົມໃຊ້ອື່ນອື່ນໆ.

## 4. ປະຕູການຄ້າ ຂອງ ສປປ ລາວ (Lao PDR Trade Portal)

ປະຕູການຄ້າ ຂອງ ສປປ ລາວ ແມ່ນເປັນເວທີ ທີ່ຜູ້ປະກອບການ ສາມາດຮັບເອົາ ຂໍ້ມູນທີ່ກ່ຽວຂ້ອງກັບ ການນຳເຂົ້າ ແລະ ການສົ່ງອອກ ຈາກ ສປປ ລາວ, ລວມທັງ ຄຳແນະນຳ ກ່ຽວກັບ ຂັ້ນຕອນການນຳເຂົ້າ/ສົ່ງອອກ, ລະບຽບການ ສຳລັບ ຜະລິດຕະພັນໃດໜຶ່ງ, ກົດໝາຍ ທີ່ກ່ຽວຂ້ອງ ແລະ ຂໍ້ມູນອື່ນໆ ທີ່ເປັນປະໂຫຍດ.

**ຮູບ 9:** ຮູບພາບ ຂອງ ປະຕູການຄ້າ ຂອງ ສປປ ລາວ




*The Lao PDR Trade Portal is available at https://www.laotradeportal.gov.la.*

# ພາກ C: ກົດລະບຽບ ສະເພາະຂະແໜງການ – ການສົ່ງອອກ ພາຍໃຕ້ EBA ຂອງ EU

ພາກນີ້ ຂອງ ຄູ່ມື ໃຫ້ຂໍ້ມູນສະເພາະເຈາະຈົງກັບ 5 ຂະແໜງການ ທີ່ກ່ຽວຂ້ອງ ທີ່ໄດ້ຕົກລົງກັບ ລັດຖະບານ ແຫ່ງ ສປປ ລາວ ໂດຍມີມຸມມອງ ກ່ຽວກັບ ການສົ່ງອອກ ແລະ ທ່າແຮງການສົ່ງອອກ ຂອງ ສປປ ລາວ ໄປຫາ ສະຫະພາບເອີຣົບ.

5 ຂະແໜງການຜະລິດຕະພັນ ທີ່ກວມຢູ່ໃນ ຄູ່ມືສະບັບນີ້ ປະກອບມີ:

1. ເຄື່ອງນຸ່ງຫົ່ມ/ແຜ່ນແພ;
2. ເກີບ;
3. ຜະລິດຕະພັນກະສິກຳດິບ;
4. ຜະລິດຕະພັນອາຫານທີ່ຜ່ານການປຸງແຕ່ງ;
5. ·ຜະລິດຕະພັນໄມ້ແປຮູບ.

ພາກທີ່ເວົ້າສະເພາະຂະແໜງການເຫຼົ່ານີ້ ສ້າງຂຶ້ນ ບົນພາບລວມທົ່ວໄປ ກ່ຽວກັບ ພາກ B, ແລະ ໃຫ້ຄຳແນະນຳລະອຽດ ກ່ຽວກັບ ສະພາບແວດລ້ອມດ້ານລະບຽບການ ຂອງ ສະຫະພາບເອີຣົບ ແລະ ຂໍ້ກຳນົດ ຫຼື ຄວາມຕ້ອງການ ໃນການສົ່ງອອກ ທີ່ຄຸ້ມຄອງ ຂະແໜງການທີ່ເລືອກ. ການປະຕິບັດຕາມ ລະບຽບການເຫຼົ່ານີ້ ແມ່ນມີຄວາມສຳຄັນ ສຳລັບຜູ້ປະກອບການ ທີ່ຕັ້ງໃຈຈະເອົາ ຜະລິດຕະພັນຂອງຕົນ ໄປວາງຂາຍ ຢູ່ໃນຕະຫຼາດ EU ແລະ ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງຕະຫຼາດ ດ້ວຍສິດທິພິເສດ ພາຍໃຕ້ ແຜນງານ EBA.

ການທົບທວນຄືນດ້ານເນື້ອໃນ ປະກອບດ້ວຍ ການສຶກສາ/ຂໍ້ມູນ ທີ່ຕີແຜ່ ໂດຍ EU ແລະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI), ພ້ອມທັງ ການວິເຄາະ ຂອງ ສູນ ITC ທີ່ອີງຕາມ ແຜນທີ່ທ່າແຮງການສົ່ງອອກ ຂອງສູນ ITC.[79]

ແຕ່ລະໝວດ ແມ່ນຖືກຈັດ ດັ່ງຕໍ່ໄປນີ້:

| | |
|---|---|
| **ບາດກ້າວຕົ້ນຕໍ** | ສັງລວມບາດກ້າວຕົ້ນຕໍ ທີ່ຈະຕ້ອງໄດ້ປະຕິບັດຕາມ ໂດຍ ຜູ້ສົ່ງອອກ ຂອງ ສປປ ລາວ ໄປຫາ ສະຫະພາບເອີຣົບ ສຳລັບ ຜະລິດຕະພັນທີ່ກ່ຽວຂ້ອງ. |
| **ເນື້ອໃນ** | ກຳນົດ ການສົ່ງອອກ ແລະ ທ່າແຮງການສົ່ງອອກ ໃນປະຈຸບັນ ຂອງ ສປປ ລາວ ສຳລັບຜະລິດຕະພັນທີ່ກ່ຽວຂ້ອງ, ແລະ ຂໍ້ມູນທົ່ວໄປອື່ນໆ ທີ່ກ່ຽວຂ້ອງກັບເລື່ອງນີ້. |
| **ຂໍ້ກຳນົດ ຫຼື ຄວາມຕ້ອງການດ້ານວິຊາການ** | ກວມເອົາ:<br>- ພາສີທີ່ກ່ຽວຂ້ອງ ທີ່ມີຜົນນຳໃຊ້;<br>- ຄວາມຕ້ອງການສະເພາະ ຂອງກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບຜະລິດຕະພັນ ທີ່ຢູ່ພາຍໃຕ້ຂະແໜງການ; ແລະ<br>- ກົດລະບຽບ ດ້ານວິຊາການ ການສົ່ງອອກ/ນຳເຂົ້າ ອື່ນໆ ທີ່ພົວພັນກັບ ເອກະສານອະນຸຍາດ/ໃບອະນຸຍາດ, ເອກະສານ ແລະ ການກວດສອບ ທີ່ດ່ານຊາຍແດນ. |
| **ຂໍ້ກຳນົດ ຫຼື ຄວາມຕ້ອງການຕົ້ນຕໍ ດ້ານລະບຽບການ** | ສະໜອງ ລາຍລະອຽດ ກ່ຽວກັບ ບັນຫາທີ່ພົວພັນກັບ ມາດຕະການ ສຸຂາພິບານ ແລະ ສຸຂານາໄມພືດ, ຂໍ້ຈຳກັດດ້ານເຄມີ ແລະ ການກວດກາສຸຂະພາບ ແລະ ອື່ນໆ. |

| | |
|---|---|
| **ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການຕິດສະຫຼາກ** | ກຳນົດຄວາມຕ້ອງການ ສຳລັບ ການຕິດສະຫຼາກ ຜະລິດຕະພັນ. |
| **ຂໍ້ມູນເພີ່ມຕື່ມ/ການຕິດຕໍ່ ທີ່ສຳຄັນ** | ສະໜອງ ລາຍລະອຽດ ສຳລັບການຕິດຕໍ່ ແກ່ ອົງການຕົວແທນທີ່ສຳຄັນ ຢູ່ໃນ ສະຫະພາບເອີຣົບ ທີ່ສາມາດຖືກຕິດຕໍ່ ສຳລັບຂະແໜງການ ທີ່ກ່ຽວຂ້ອງ. |

ນອກຈາກນັ້ນ, ສຳລັບຜະລິດຕະພັນກະສິກຳດິບ ແລະ ອາຫານທີ່ປຸງແຕ່ງແລ້ວ, ໝວດໜຶ່ງ ຍັງໄດ້ໃຫ້ລາຍລະອຽດ ກ່ຽວກັບ ຜະລິດຕະພັນປອດສານພິດ.

# 3.1. ຜະລິດຕະພັນ ເຄື່ອງນຸ່ງຫົ່ມ ແລະ ແຜ່ນແພ

## i. ບາດກ້າວຕົ້ນຕໍ ສໍາລັບ ສົ່ງອອກ ເຄື່ອງນຸ່ງຫົ່ມ ແລະ ແຜນແພ

### ປະຕິບັດຕາມ ບາດກ້າວ ທີ່ເປັນຂໍ້ກໍານົດ ຫຼື ເປັນຄວາມຕ້ອງການ ຢູ່ ສປປ

- ຈົດທະບຽນ ວິສາຫະກິດ ໂດຍອີງຕາມ ຂັ້ນຕອນທີ່ໄດ້ລະບຸໄວ້.
- ກະກຽມເອກະສານສົ່ງອອກ
- ສະເໜີຂໍ ແລະ ຮັບເອົາ ເອກະສານອະນຸຍາດສົ່ງອອກ
- ຕື່ມແບບຟອມ ລະບົບ ASYCUDA ສໍາລັບການສະສາງພາສີ.
- ກວດກາເບິ່ງ ການແຈ້ງການ ທີ່ເປັນນິຕິກໍາ ກ່ຽວກັບ ດ້ານໃດດ້ານໜຶ່ງ ທີ່ພົວພັນກັບ ການສົ່ງອອກ (ເຊັ່ນ ມາດຕະການ ສຸຂາພິບານ ແລະ ສຸຂານາໄມພືດ), ແລະ ທີ່ພົວພັນກັບ ຜະລິດຕະພັນໃດໜຶ່ງ.

### ປະຕິບັດຕາມ ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານການນໍາເຂົ້າ ຂອງ EU:

- ກວດກາ ແລະ ຮັບປະກັນ ໃຫ້ມີຄວາມຖືກຕ້ອງສອດຄ່ອງ ກັບ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດສິນຄ້າ ທີ່ມີຜົນນໍາໃຊ້.
- ຮັບປະກັນ ໃຫ້ມີການຈົດທະບຽນກັບ ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງສະຫະພາບເອີຣົບ (REX).
- ສະເໜີຂໍ ແລະ ຮັບເອົາ ໃບຢັ້ງຢືນສຸຂານາໄມ້ພືດ ສໍາລັບ ຜະລິດຕະພັນ ທີ່ມີພື້ນຖານມາຈາກພືດ.



### ປະຕິບັດຕາມ ທຸກກົດລະບຽບສະເພາະຜະລິດຕະພັນ ທີ່ມີຜົນນໍາໃຊ້ ກັບຜະລິດຕະພັນ ທີ່ຈະຖືກວາງ

- ກວດກາເບິ່ງ ບັນດາກົດລະບຽບ ທີ່ກ່ຽວຂ້ອງກັບ ການຕິດສະຫຼາກ.
- ກວດກາເບິ່ງ ຊື່ເສັ້ນໄຍ ຂອງແຜນແພ ທີ່ກ່ຽວຂ້ອງ.
- ກວດກາເບິ່ງ ຕົວເລືອກ ການຕິດສະຫຼາກ ສິ່ງແວດລ້ອມ.
- ກວດກາເບິ່ງ ຂໍ້ຈໍາກັດ ກ່ຽວກັບ ການນໍາໃຊ້ ສານເຄມີບາງຢ່າງ ຢູ່ໃນຜະລິດຕະພັນແຜ່ນແພ
- ກວດກາເບິ່ງ ຂໍ້ຈໍາກັດພິເສດ ທີ່ກ່ຽວຂ້ອງກັບ ປະເພດສັດ ທີ່ໃຊ້ຜະລິດແຜ່ນແພ.

## ii. ເນື້ອໃນ

ໃນປີ 2019, ສປປ ລາວ ໄດ້ສົ່ງອອກລາຍການສິນຄ້າຕ່າງໆ ພາຍໃຕ້ປະເພດ ຂອງ "ແຜ່ນແພ ແລະ ອົງປະກອບຂອງແຜ່ນແພ" ດ້ວຍມູນຄ່າ 174 ລ້ານເອີໂຣ ໄປຫາ EU, ຊຶ່ງກວມເອົາ 60.8% ຂອງການສົ່ງອອກທັງໝົດ ໄປຫາ EU.[80] ແຜ່ນແພ ແລະ ຜະລິດຕະພັນແຜ່ນແພ ເປັນຂະແໜງການສົ່ງອອກສູງສຸດ ຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ.

ມູນຄ່າການສົ່ງອອກ ແຜ່ນແພ ແລະ ອົງປະກອບແຜ່ນແພ ຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ ເພີ່ມຂຶ້ນຢ່າງຕໍ່ເນື່ອງ ຈາກ 135 ລ້ານເອີໂຣ ໃນປີ 2016 ໄປເປັນ 174 ລ້ານເອີໂຣ ໃນປີ 2019. ຕາຕະລາງ 4 ສະແດງໃຫ້ເຫັນ ລາຍລະອຽດຂອງການສົ່ງອອກ ຂອງ ສປປ ລາວ ຢູ່ໃນຂະແໜງນີ້, ແລະ ບັນດາປະເທດຕົ້ນຕໍ ທີ່ເປັນສະມາຊິກ EU ທີ່ນໍາເຂົ້າ ຜະລິດຕະພັນ ຂອງ ສປປ ລາວ.

**ຕາຕະລາງ 4: ການສົ່ງອອກ ຂອງ ສປປ ລາວ ໄປທົ່ວໂລກ ແລະ ໄປຫາ ບາງປະເທດ ທີ່ເປັນສະມາຊິກ EU (2019)**[81]

| ບົດ HS | ຂະແໜງການ | ການສົ່ງອອກ ຂອງ ສປປ ລາວ ໄປບາຍທາງທັງໝົດ (ເປັນເງິນໂດລາ) | ການສົ່ງອອກ ໄປຫາ ປະເທດທີ່ເປັນສະມາຊິກ EU (ເປັນເງິນໂດລາ) | |
|---|---|---|---|---|
| **ບົດທີ 61** | ອົງປະກອບ ຂອງ ເຄື່ອງແຕ່ງກາຍ ແລະ ອຸປະກອນເສື້ອຜ້າ, ທີ່ ຖັກ ຫຼື ແສ່ວ | 63,189,000 | ເຢຍລະມັນ | 22,010,000 |
| | | | ອີຕາລີ | 11,902,000 |
| | | | ຝຣັ່ງ | 3,108,000 |
| | | | ປັອກຕຸຍການ | 1,009,000 |
| | | | ໂຮນລັງ | 907,000 |
| | | | ຊູແອດ | 692,000 |
| | | | ເດັນມາກ | 559,000 |
| | | | ແບນຊິກ | 275,000 |
| | | | ໂອຕຣິດ | 118,000 |
| | | | ແອັດສະປາຍ | 29,000 |
| **ບົດທີ 62** | ອົງປະກອບ ຂອງ ເຄື່ອງແຕ່ງກາຍ ແລະ ອຸປະກອນເສື້ອຜ້າ, ທີ່ບໍ່ ຖັກ ຫຼື ບໍ່ແສ່ວ | 144,617,000 | ເຢຍລະມັນ | 51,783,000 |
| | | | ຊູແອດ | 20,938,000 |
| | | | ເດັນມາກ | 13,560,000 |
| | | | ປັອກຕຸຍການ | 11,067,000 |
| | | | ສະຫະລາດຊະອານາຈັກອັງກິດ | 10,342,000 |
| | | | ໂຮນລັງ | 4,753,000 |
| | | | ຟິນ | 1,266,000 |
| | | | ໂປໂລຍ | 814,000 |
| | | | ແອັດສະປາຍ | 779,000 |

ບັນດາປະເທດຕົ້ນຕໍ ທີ່ສົ່ງອອກ ກຸ່ມຜະລິດຕະພັນອັນດຽວກັນ ໄປຫາ EU ປະກອບມີ ຈີນ, ບັງກະລະເທດ, ແລະ ຕຸລະກີ (ອີງໃສ່ ຕາຕະລາງ 5).

**ຕາຕະລາງ 5: ບັນດາປະເທດຕົ້ນຕໍ ທີ່ເປັນແຫຼ່ງກໍາເນີດ ການສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019**[82]

| ບົດ HS | ຂະແໜງການ | ປະເທດ | ມູນຄ່ານໍາເຂົ້າ ໄປຫາ EU (ເປັນເງິນເອີໂຣ) |
|---|---|---|---|
| **ບົດທີ 61** | | ຈີນ | 12,684,179,307 |
| | | ບັງກະລາເທດ | 10,313,658,037 |

| ບົດ HS | ຂະແໜງການ | ປະເທດ | ມູນຄ່ານຳເຂົ້າ ໃນທາ EU (ເປັນເງິນເອີໂຣ) |
|---|---|---|---|
| | ອົງປະກອບ ຂອງ ເຄື່ອງແຕ່ງກາຍ ແລະ ອຸປະກອນເສື້ອຜ້າ, ທີ່ຖັກ ຫຼື ແສ່ວ | ຕຸລະກີ | 5,850,881,187 |
| | | ກຳປູເຈຍ | 2,743,272,867 |
| | | **ສປປ ລາວ** | **46,210,986** |
| **ບົດທີ 62** | ອົງປະກອບ ຂອງ ເຄື່ອງແຕ່ງກາຍ ແລະ ອຸປະກອນເສື້ອຜ້າ, ທີ່ບໍ່ຖັກ ຫຼື ບໍ່ແສ່ວ | ຈີນ | 14,157,869,930 |
| | | ບັງກະລາເທດ | 7,351,784,398 |
| | | ຕຸລະກີ | 4,331,213,093 |
| | | **ສປປ ລາວ** | **140,114,114** |

## iii. ກົດລະບຽບວິຊາການ ທີ່ມີຜົນນຳໃຊ້ກັບ ເຄື່ອງນຸ່ງຮົ່ມ ແລະ ຜະລິດຕະພັນແຜ່ນແພ

### a) ພາສີ ສຳລັບ ການສົ່ງອອກ ແຜນແພ ແລະ ເຄື່ອງນຸ່ງຫົ່ມ ພາຍໃຕ້ EBA

ພາຍໃຕ້ແຜນງານ EBA, ສິນຄ້າທັງໝົດ, ລວມທັງຜະລິດຕະພັນແຜ່ນແພ, ເຂົ້າສູ່ເງື່ອນໄຂການປອດພາສີ ຂອງ EU

### b) ກົດລະບຽບ ວ່າດ້ວຍ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານແຫຼ່ງກຳເນີດຂອງສິນຄ້າ ສຳລັບ ແຜນແພ ແລະ ເຄື່ອງນຸ່ງຫົ່ມ ທີ່ມາຈາກ ສປປ ລາວ

ດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງ (ອີງຕາມ ໝວດ 2.2 (ii)), ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດສິນຄ້າ ພາຍໃຕ້ ລະບຽບການ GSP ໃຫ້ຂໍ້ສັງເກດວ່າ ເພື່ອທີ່ຈະໄດ້ຮັບຜົນປະໂຫຍດ ຈາກສິດທິພິເສດ ດ້ານພາສີ, ຜະລິດຕະພັນ ***ທີ່ອ້າງວ່າ***ຈະໄດ້ຮັບສິດທິພິເສດຈາກພາສີ ***ຕ້ອງມີແຫຼ່ງກຳເນີດຢູ່ໃນປະເທດທີ່ໄດ້ຮັບຜົນປະໂຫຍດ***.[83] ຜະລິດຕະພັນດັ່ງກ່າວ ຖືວ່າມີຕົ້ນກຳເນີດ ມາຈາກປະເທດທີ່ໄດ້ຮັບຜົນປະໂຫຍດ ເມື່ອຜະລິດຕະພັນໄດ້ຮັບຊິ້ນສ່ວນທັງໝົດມາ ຈາກປະເທດນັ້ນໆ ຫຼື ມີການດຳເນີນວຽກຜະລິດ ຫຼື ປຸງແຕ່ງ ຢ່າງພຽງພໍ ຢູ່ໃນປະເທດນັ້ນ.

*ສຳລັບຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ, ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຖືກກຳນົດໄວ້ ຢູ່ໃນພາກທີ II ຂອງເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງ ຄະນະກຳມະການ (EU) 2015/2446.[84]*

*ເອກະສານຊ້ອນທ້າຍ 22-03 ແມ່ນຖືກຈັດອອກເປັນສາມຖັນ ດັ່ງທີ່ໄດ້ສະແດງໃຫ້ເຫັນ ຢູ່ໃນຮູບ 10, ຊຶ່ງສະໜອງ ສິ່ງທີ່ເອົາມາຈາກຕາຕະລາງ ທີ່ກຳນົດ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ບົດທີ 50," ຜ້າໄໝ".*

**ຮູບ 10:** ຂໍ້ມູນທີ່ຄັດລອບມາຈາກ ເອກະສານຊ້ອນທ້າຍ 22-03 ທີ່ກຳນົດ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ບົດທີ 50, ວ່າດ້ວຍເສັ້ນໄໝ

LIST OF PRODUCTS AND WORKING OR PROCESSING OPERATIONS WHICH CONFER ORIGINATING STATUS

| Harmonised System heading | Description of product | Qualifying operation (Working or processing, carried out on non-originating materials, which confers originating status) | |
|---|---|---|---|
| ex Chapter 50 | Silk; except for: | Manufacture from materials of any heading, except that of the product | |
| ex 5003 | Silk waste (including cocoons unsuitable for reeling, yarn waste and garnetted stock), carded or combed | Carding or combing of silk waste | |
| 5004 to ex 5006 | Silk yarn and yarn spun from silk waste | Spinning of natural fibres or extrusion of man-made fibres accompanied by spinning or twisting (7) | |
| 5007 | Woven fabrics of silk or of silk waste: | (a) LDCs<br>Weaving (7)<br>*or*<br>Printing accompanied by at least two preparatory or finishing operations (such as scouring, bleaching, mercerising, heat setting, raising, calendaring, shrink resistance processing, permanent finishing, decatising, impregnating, mending and burling) where the value of the unprinted fabric used does not exceed 47,5 % of the ex-works price of the product | (b) Other beneficiary countries<br>Spinning of natural and/or man-made staple fibres or extrusion of man-made filament yarn or twisting, in each case accompanied by weaving<br>*or*<br>Weaving accompanied by dyeing<br>*or*<br>Yarn dyeing accompanied by weaving<br>*or* |

ຖັນ 1: ບົດທີ.

ຖັນ 2: ລາຍລະອຽດຂອງຜະລິດຕະພັນ ຕາມທີ່ຢູ່ໃນ CN

ຖັນ 3: ການດຳເນີນງານ ທີ່ໄດ້ຕາມເງື່ອນໄຂທີ່ກ່ຽວຂ້ອງ

ເພື່ອທີ່ຈະຖືກພິຈາລະນາວ່າ ມີແຫຼ່ງກຳເນີດ ມາຈາກ ສປປ ລາວ, ວັດສະດຸທີ່ມີແຫຼ່ງກຳເນີດຈາກບ່ອນອື່ນ ທີ່ນຳໃຊ້ ເຂົ້າໃນການດຳເນີນງານການຜະລິດ ແລະ ປຸງແຕ່ງ ເປັນຜະລິດຕະພັນສຸດທ້າຍ ບໍ່ສາມາດເປັນ ລະຫັດ CN ດຽວກັນ ເໝືອນກັບ ຜະລິດຕະພັນສຸດທ້າຍ.
ເພື່ອສາທິດໃຫ້ເຫັນຕື່ມອີກ:'

**ສຳລັບຫົວຂໍ ex 5003:**

"ສິ່ງເສດເຫຼືອຈາກໄໝ (ລວມທັງ ຮັງໄຂ ທີ່ິິບໍ່ເໝາະສົມ ສຳລັບ ປັ່ນໄໝ, ເສດເສັ້ນໄໝ ແລະ ນອມທີ່ມາຈາກເສດຂອງເສັ້ນໄໝ), ທີ່ໄດ້ຜ່ານຂະບວນການປັ່ນໜີບ ຫຼື ຂະບວນການຫວີ"
*ອີງຕາມຖັນ 2*

**ເພື່ອໃຫ້ຖືວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ**

ວັດສະດຸ ທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ທີ່ຖືກນຳໃຊ້ ໃນການດຳເນີນງານການຜະລິດ ແລະ ປຸງແຕ່ງ ຜະລິດຕະພັນສຸດທ້າຍ ຕ້ອງໄດ້ດຳເນີນ "ຂະບວນການປັ່ນໜີບ ຫຼື ຂະບວນການຫວີ ສິ່ງເສດເຫຼືອຈາກໄໝ".

*ຕາມທີ່ໄດ້ກຳນົດໄວ້ ຢູ່ໃນຖັນ 3*

**ສຳລັບຫົວຂໍ້ 5004 ຫາ ex 5006:**

"ດ້າຍໄໝ ແລະ ດ້າຍທີ່ປັ່ນຈາກ ສິ່ງເສດເຫຼືອຈາກໄໝ."

*ອີງຕາມຖັນ 2*

**ເພື່ອໃຫ້ຖືວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ**

ຜູ້ຜະລິດ ຢູ່ໃນ ສປປລາວ ທີ່ນຳໃຊ້ວັດສະດຸ ທີ່ບໍ່ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ ຢ່າງໜ້ອຍຕ້ອງໄດ້ ສະໜອງ ການດຳເນີນງານການຜະລິດ ແລະ ປຸງແຕ່ງເພີ່ມຕື່ມ ຕໍ່ ກັບ ວັດສະດຸທີ່ເອົ້າເຖິງ "ການປັ່ນເສັ້ນໄຍທຳມະຊາດ ຫຼື ການຂຶ້ນຮູບ ເສັ້ນໄຍທີ່ຄົນສ້າງຂຶ້ນ ທີ່ຕາມດ້ວຍ ການໝຸນ ຫຼື ການບິດ". (ຟຸດໂບດ (Football) ທີ 9)
*ດັ່ງທີ່ໄດ້ກຳນົດ ຢູ່ໃນຖັນ 3*

ແລະກໍເຊັ່ນດຽວກັນ, ສໍາລັບຫົວຂໍ້ (Heading) 5007, ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ຄວນຖືກຕີຄວາມໝາຍ ໃນລັກສະນະດຽວກັນກັບທີ່ໄດ້ອະທິບາຍໄວ້ຂ້າງເທິງ. ເຖິງຢ່າງໃດກໍ່ຕາມ, ຄວນຈະຮັບຮູ້ວ່າ ຖັນ 3 ຖືກແຍກອອກ ສໍາລັບສະເພາະຜະລິດຕະພັນນີ້, ໂດຍມີກົດລະບຽບທີ່ແຍກຕ່າງຫາກ ສໍາລັບ ບັນດາປະເທດດ້ອຍພັດທະນາ (ນັ້ນກໍຄື ປະເທດທີ່ໄດ້ຮັບຜົນປະໂຫຍດ ຈາກ ສະຖານະພາບ EBA) ຢູ່ໃນຖັນທີ 3 (a), ແລະ ປະເທດອື່ນໆທີ່ໄດ້ຮັບຜົນປະໂຫຍດ (ນັ້ນກໍຄື ຜູ້ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+) ຢູ່ໃນຖັນທີ 3 (b). ດັ່ງນັ້ນ:

"ເນື້ອແພ ທີ່ຖືກທໍາຈາກໄໝ ຫຼື ສິ່ງເສດເຫຼືອຈາກໄໝ."

*ອີງຕາມ ຢູ່ໃນຖັນ 2*

**ເພື່ອໃຫ້ຖືວ່າ ມີແຫຼ່ງກໍາເນີດ ຢູ່ໃນ ສປປ ລາວ**

ຜູ້ຜະລິດ ຢູ່ໃນ ສປປ ລາວ ທີ່ນໍາໃຊ້ວັດສະດຸ ທີ່ບໍ່ມີແຫຼ່ງກໍາເນີດ ຢູ່ໃນ ສປປ ລາວ ຢ່າງໜ້ອຍຕ້ອງໄດ້ ດໍາເນີນການທໍ ຫຼື ພິມລາຍ ພ້ອມທັງ ຢ່າງໜ້ອຍ ຕ້ອງມີການກະກຽມສອງຢ່າງ ຫຼື ດໍາເນີນການສໍາເລັດການຜະລິດເປັນຜະລິດຕະພັນ ໂດຍທີ່ວ່າ ມູນຄ່າຂອງເນື້ອຜ້າທີ່ບໍ່ທັນພິມລາຍ ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 47.5% ຂອງລາຄາວຽກຜ່ານມາ ຂອງ ຜະລິດຕະພັນ.

ດັ່ງນັ້ນ, ຜູ້ຜະລິດ ຢູ່ ສປປ ລາວ ຈໍາເປັນຈະຕ້ອງ ທົບທວນຄືນ ບົດທີ່ກວມເອົາ ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ໃນເອກະສານຊ້ອນທ້າຍ 22-03 ຢູ່ໃນ ລະບຽບການ ທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ກໍານົດປະເພດ ຂອງການດໍາເນີນວຽກການຜະລິດ ແລະ ການປຸງແຕ່ງ ທີ່ຄວນຈະຖືກດໍາເນີນ ເພື່ອໃຫ້ຜະລິດຕະພັນສຸດທ້າຍ ຖືກພິຈາລະນາວ່າ ມີແຫຼ່ງກໍາເນີດມາຈາກ ສປປ ລາວ.

ຕາຕະລາງ 6 ສະຫຼຸບສັງລວມ ຂໍ້ກໍານົດ ຫຼື ຄວາມຕ້ອງການເຫຼົ່ານີ້ ສໍາລັບ ບົດທີ 50, 52 ແລະ 61, ຊຶ່ງກວມເອົາ ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ (ຕາມທີ່ໄດ້ກໍານົດໄວ້ ໃນ ເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງຄະນະກໍາມະການ (EU) 2015/2446)[85].

**ຕາຕະລາງ 6: ຂໍ້ກໍານົດ ຫຼື ຄວາມຕ້ອງການ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ຂອງສິນຄ້າ ສໍາລັບບົດ 50, 52 ແລະ 61 (ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ)**

| ບົດທີ | ລາຍລະອຽດ ຂອງຜະລິດຕະພັນ | ການດໍາເນີນງານທີ່ໄດ້ຕາມເງື່ອນໄຂ (ການດໍາເນີນວຽກການຜະລິດ ຫຼື ປຸງແຕ່ງ, ດ້ວຍວັດສະດຸ ທີ່ມີແຫຼ່ງກໍາເນີດຈາກບ່ອນອື່ນ, ທີ່ໃຫ້ສະຖານະພາບ ເປັນແຫຼ່ງກໍາເນີດ) |
|---|---|---|
| **Ex ບົດ 50** | ຜ້າໄໝ; ຍົກເວັ້ນສໍາລັບ | ຜະລິດຈາກ ວັດສະດຸ ທີ່ມາຈາກທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ |
| **Ex 5003** | ສິ່ງເສດເຫຼືອຈາກໄໝ ( ລວມທັງ ຮັງໄຂ ທີ່ບໍ່ເໝາະສົມ ສໍາລັບ ປັ່ນໄໝ, ເສດເສັ້ນໄໝ ແລະ ນວມທີ່ເປັນເສດຂອງເສັ້ນໄໝ), ສ່ວນເປັນຂົນ ຫຼື ສ່ວນທີ່ລຽບ | ສ່ວນທີ່ເປັນໄຍ ຫຼື ສ່ວນທີ່ລຽບ ຂອງສິ່ງເສດເຫຼືອຈາກເສັ້ນໄໝ |
| **5004 ຫາ ex 5006** | ເສັ້ນດ້າຍໄໝ ແລະ ກໍດ້າຍ ທີ່ມາຈາກສິ່ງເສດເຫຼືອຂອງເສັ້ນໄໝ | ປັ່ນເສັ້ນໄຍທໍາມະຊາດ ຫຼື ການອັດຂຶ້ນຮູບເສັ້ນໃຍ ທີ່ມະນຸດສ້າງຂຶ້ນ ຕາມດ້ວຍ ການໝຸນ ຫຼື ບິດ([7]) |

| ບົດທີ | ລາຍລະອຽດ ຂອງຜະລິດຕະພັນ | ການດຳເນີນງານທີ່ໄດ້ຕາມເງື່ອນໄຂ (ການດຳເນີນວຽກການຜະລິດ ຫຼື ບຸງແຕ່ງ, ດ້ວຍວັດສະດຸ ທີ່ມີແຫຼ່ງກຳເນີດຈາກບ່ອນອື່ນ, ທີ່ໃຫ້ສະຖານະພາບ ເປັນແຫຼ່ງກຳເນີດ) | |
|---|---|---|---|
| **5007** | ເນື້ອຜ້າທີ່ທໍຈາກເສັ້ນໄໝ ຫຼື ຈາກສິ່ງເສດເຫຼືອເສັ້ນໄໝ | **(a) ປະເທດດ້ອຍພັດທະນາ**<br>ການທໍາຜ້າ (7)<br>*ຫຼື*<br>ການພິມ ທີ່ຕາມດ້ວຍ ຢ່າງໜ້ອຍ ການດຳເນີນການກະກຽມ ຫຼື ສຳເລັດສອງຢ່າງ (ເຊັ່ນ ການກຳຈັດສິ່ງເປິເປື້ອນ, ການຟອກສີ, ການຈຸ່ມ, ການຕັ້ງຄ່າຄວາມຮ້ອນ, ການສຳເລັດຂະບວນການສຸດທ້າຍ, ການດຳເນີນຂະບວນການຕ້ານການຫົດຕົວ, ການສຳເລັດແບບຖາວອນ, ຂະບວນການສຳເລັດແຜນແພ, ການເຮັດໃຫ້ຈຸ່ມ, ການສ້ອມແຊມ ແລະ ກຳຈັດເສດຜ້າທີ່ຕິດອອກ) ເມື່ອມູນຄ່າ<br>ຂອງເນື້ອຜ້າທີ່ບໍ່ທັນພິມ ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 47.5% ຂອງລາຄາວຽກຜ່ານມາ ຂອງຜະລິດຕະພັນ. | **(b) *ບັນດາປະເທດອື່ນໆ ທີ່ໄດ້ຮັບຜົນປະໂຫຍດ***<br>ການປັ່ນ ເສັ້ນໄຍແຜ່ນແພ ທຳມະຊາດ ແລະ/ຫຼື ທີ່ຖືກສ້າງຂຶ້ນໂດຍມະນຸດ ຫຼື ການໜີບ<br>ກໍ້ເສັ້ນໄຍທີ່ຖືກສ້າງຂຶ້ນໂດຍມະນຸດ ຫຼື ການບິດ, ໃນແຕ່ລະກໍລະນີ ພ້ອມດ້ວຍການທໍ<br>*ຫຼື*<br>ການທໍ ທີ່ຕາມດ້ວຍ ການຍ້ອມສີ<br>*ຫຼື*<br>ການຍ້ອມສີເສັ້ນດ້າຍ ຕາມດ້ວຍ ການທໍ<br>*ຫຼື*<br>ການພິມລາຍ ຕາຍດ້ວຍ ການດຳເນີນການກະກຽມ ຫຼື ສຳເລັດ ຢ່າງໜ້ອຍສອງຢ່າງ (ເຊັ່ນ ການທຳຄວາມສະອາດ, ການຕິກສີ, ການເຮັດໃຫ້ສີເຂັ້ມ ແລະທົນທານ, ການກຳນົດຄ່າຄວາມຮ້ອນ, ການເຮັດໃຫ້ແຜ່ນແພງາມ, ຂະບວນການຕ້ານການຈີມ, ການສຳເລັດແບບຖາວອນ, ການສຳເລັດເປັນເຄື່ອງນຸ່ງຫົ່ມ, ການແຊ່ດ້ວຍສານ, ການແກ້ໄຂຫຼືແປງ ແລະ ການກຳຈັດສິ່ງເສດເຫຼືອຄົກຄ້າງໃນແຜນແພ) ເມື່ອມູນຄ່າ ຂອງແຜ່ນແພ ທີ່ບໍ່ທັນພິມລາຍ ທີ່ຖືກນໍາໃຊ້ ບໍ່ເກີນ 47.5% ຂອງ ລາຄາວຽກ ຜ່ານມາ ຂອງ ຜະລິດຕະພັນ. |
| **Ex ບົດ 52** | **ຜ້າຍ; ຍົກເວັ້ນ** | **ຜະລິດຈາກ ວັດສະດຸ ທີ່ມາຈາກທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ** | |
| **5204 ຫາ 5207** | ເສັ້ນດ້າຍ ແລະ ກໍ້ຜ້າຍ | ການປັ່ນເສັ້ນໄຍທຳມະຊາດ ຫຼື ການຂຶ້ນຮູບເສັ້ນໄຍ ທີ່ຄົບສ້າງຂຶ້ນ ທີ່ຕາມດ້ວຍການປັ່ນ(7) | |
| **5208 ຫາ 5212** | ແຜ່ນແພ ທີ່ຖືກທໍດ້ວຍຜ້າຍ | **a) ບັນດາປະເທດດ້ອຍພັດທະນາ**<br>ການທໍ(7)<br>*ຫຼື*<br>ການພິມ ທີ່ຕາມດ້ວຍ ຢ່າງໜ້ອຍ<br>ການດຳເນີນການກະກຽມ ຫຼື ສຳເລັດສອງຢ່າງ (ເຊັ່ນ ການກຳຈັດສິ່ງເປິເປື້ອນ, ການຟອກສີ, ການຈຸ່ມ, ການຕັ້ງຄ່າຄວາມຮ້ອນ, ການສຳເລັດຂະບວນການສຸດທ້າຍ, ການດຳເນີນຂະບວນການຕ້ານການຫົດຕົວ, ການສຳເລັດແບບຖາວອນ, ຂະບວນການສຳເລັດແຜນແພ, ການເຮັດໃຫ້ຈຸ່ມ, ການສ້ອມແຊມ ແລະ | **b) *ບັນດາປະເທດອື່ນໆ ທີ່ໄດ້ຮັບຜົນປະໂຫຍດ***<br>ການປັ່ນ ເສັ້ນໄຍແຜ່ນແພ ທຳມະຊາດ ແລະ/ຫຼື ທີ່ຖືກສ້າງຂຶ້ນໂດຍມະນຸດ ຫຼື ການໜີບ<br>ກໍ້ເສັ້ນໄຍທີ່ຖືກສ້າງຂຶ້ນໂດຍມະນຸດ ຫຼື ການບິດ, ໃນແຕ່ລະກໍລະນີ ພ້ອມດ້ວຍການທໍ<br>*ຫຼື*<br>ການທໍ ທີ່ຕາມດ້ວຍ ການຍ້ອມສີ<br>*ຫຼື*<br>ການຍ້ອມສີເສັ້ນດ້າຍ ຕາມດ້ວຍ ການທໍ |

| ບົດທີ | ລາຍລະອຽດ ຂອງຜະລິດຕະພັນ | ການດຳເນີນງານທີ່ໄດ້ຕາມເງື່ອນໄຂ (ການດ◌ໍາເນີນວຽກການຜະລິດ ຫຼື ປຸງແຕ່ງ, ດ້ວຍວັດສະດຸ ທີ່ມີແຫຼ່ງກຳເນີດຈາກບ່ອນອື່ນ, ທີ່ໃຫ້ສະຖານະພາບ ເປັນແຫຼ່ງກຳເນີດ) | |
|---|---|---|---|
| | | ກຳຈັດເສດຜ້າທີ່ຕິດອອກ) ເມື່ອມູນຄ່າ ຂອງເນື້ອຜ້າທີ່ບໍ່ທັນພິມ ທີ່ຖືກນຳໃຊ້ ແມ່ນບໍ່ເກີນ 47.5% ຂອງລາຄາວຽກຜ່ານມາ ຂອງ ຜະລິດຕະພັນ. | *ຫຼື*<br>ການພິມລາຍ ຕາມດ້ວຍ ການດຳເນີນການກະກຽມ ຫຼື ສຳເລັດ ຢ່າງໜ້ອຍສອງຢ່າງ (ເຊັ່ນ ການທຳຄວາມສະອາດ, ການຕົກສີ, ການເຮັດໃຫ້ສີເຂັ້ມ ແລະທົນທານ, ການກຳນົດຄ່າຄວາມຮ້ອນ, ການເຮັດໃຫ້ແຜ່ນແພງາມ, ຂະບວນການຕ້ານການຈີມ, ການສຳເລັດແບບຖາວອນ, ການສຳເລັດເປັນເຄື່ອງນຸ່ງຫົ່ມ, ການແຊ່ດ້ວຍສານ, ການແກ້ໄຂ ຫຼືແປງ ແລະ ການກຳຈັດສິ່ງເສດເຫຼືອ ຄົກຄ້າງໃນແຜນແພ) ເມື່ອມູນຄ່າ ຂອງແຜ່ນແພ ທີ່ບໍ່ທັນພິມລາຍ ທີ່ຖືກນຳໃຊ້ ບໍ່ເກີນ 47.5% ຂອງ ລາຄາວຽກ ຜ່ານມາ ຂອງ ຜະລິດຕະພັນ. |
| **ບົດ 61** | **ວັດຖຸ ເຄື່ອງແຕ່ງກາຍ ແລະ ອຸປະກອນເສື້ອຜ້າ, ທີ່ຖັກ ຫຼື ແສ່ວ** | | |
| | ໄດ້ຮັບມາ ໂດຍການເຫັບ ພ້ອມກັນ ຫຼືບໍ່ດັ່ງນັ້ນ ປະກອບ ສອງ ຫຼື ຫຼາຍ ຊິ້ນສ່ວນ ຂອງເນື້ອແພ ທີ່ຖ◌ືກຖັກ ຫຼື ແສ່ວ ທີ່ຖືກຕັດ ເພ◌ື◌່ອກໍ່ຮູບ ຫຼື ໄດ້ມາໂດຍກົງ ເພື່ອກໍ່ຮູບ | **(a) ບັນດາປະເທດດ້ອຍພັດທະນາ**<br><br>ຜະລິດຈາກເນື້ອຜ້າ | ***(b) ບັນດາປະເທດອື່ນໆ ທີ່ໄດ້ຮັບຜົນປະໂຫຍດ***<br>ການຖັກ ແລະ ການຕົກແຕ່ງ (ລວມທັງການຕັດ) (7) (9) |
| | ອື່ນໆ | ການປັ່ນເສັ້ນໄຍມຸ່ນທຳມະຊາດ ແລະ/ຫຼື ທີ່ຄົນສ້າງຂຶ້ນ ຫຼື ການຂຶ້ນຮູບ ເສັ້ນໄຍຊື່ຍາວ ທີ່ຄົນສ້າງຂຶ້ນ, ໃນແຕ່ລະກໍລະນີ ຊຶ່ງຕາມດ້ວຍ ການຖັກ (ຖັກ ເພື່ອສ້າງຮູບຮ່າງຜະລິດຕະພັນ)<br>*ຫຼື*<br>ການຍ້ອມເສົ້າດ້າຍ ທີ່ເປັນເສັ້ນໄຍທຳມະຊາດ ຊຶ່ງຕາມດ້ວຍ ການຖັກ (ຖັກ ເພື່ອສ້າງຮູບຮ່າງຜະລິດຕະພັ) (7) | |

**ຈຸດສຳຄັນ ທີ່ຈະຕ້ອງສັງເກດ:**

- ຢູ່ໃນບາງບົດຍ່ອຍ, ຄຳວ່າ "ຫຼື" ຖືກນຳໃຊ້ - ຊຶ່ງໝາຍເຖິງ ທາງເລືອກ ໂດຍຜູ້ສົ່ງອອກ ທີ່ຈະນຳໃຊ້ ກົດລະບຽບ ໃດໜຶ່ງ ໃນຈຳນວນ ສອງຢ່າງ.
- ດັ່ງທີ່ໄດ້ອະທິບາຍຂ້າງເທິງ, ບາງຖັນ ທີ່ກຳນົດ ການດຳເນີນງານທີ່ໄດ້ຕາມເງ◌ື◌່ອນໄຂຕ່ຳສຸດ (ນັ້ນກໍຄື ຖັນ 3) ແມ່ນຖືກແບ່ງອອກເປັນ ສອງຖັນຍ່ອຍ - ທີ່ຊີ້ໃຫ້ເຫັນ ກົດລະບຽບ ທີ່ຄຸ້ມຄອງ ປະເທດດ້ອຍພັດທະນາ, ຊຶ່ງມີຜົນນຳໃຊ້ກັບ ສປປ ລາວ, ແລະ ກົດລະບຽບ ສຳລັບ ປະເທດອື່ນໆ ທີ່ໄດ້ຮັບຜົນປະໂຫຍດ.

ຂໍ້ຍົກເວັ້ນ ຕໍ່ກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ - Tolerances (ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ) ແລະ Cumulation (ລະບົບການປະກອບເປັນຜະລິດຕະພັນ ໂດຍມີຊິ້ນສ່ວນມາຈາກແຫຼ່ງຕ່າງໆ) (ດັ່ງທີ່ໄດ້ເວົ້າເຖິງ ຢູ່ໃນໝວດ 2.2 (ii) ຂ້າງເທິງ) ຄວນຈະຖືກຮັບຮູ້ ໂດຍ ຜູ້ຜະລິດລາວ - ເຖິງແມ່ນວ່າ ສິ່ງເຫຼົ່ານີ້ ຈະຢູ່ພາຍໃຕ້ ກົດລະບຽບບາງຢ່າງກໍຕາມ.

### ລະດັບ Tolerance ສຳລັບຜະລິດຕະພັນແຜບແພ ແລະ ເຄື່ອງນຸ່ງຫົ່ມ

ດັ່ງທີ່ໄດ້ອະທິບາຍ ຢູ່ໃນໝວດ 2.2(ii) ຂ້າງເທິງ, "ກົດລະບຽບ tolerance" ທົ່ວໄປ ຊີ້ໃຫ້ເຫັນວ່າ, ພາຍໃຕ້ສະພາບການໃດໜຶ່ງ, **ສະພາບການສະເພາະໃດ ໜຶ່ງ, ວັດສະດຸ ທີ່ມີແຫຼ່ງກຳເນີດ ສາມາດຖືກນຳໃຊ້ ເຂົ້າໃນການຜະລິດ ຜະລິດຕະພັນດັ່ງກ່າວ, ເຖິງແມ່ນວ່າ ບໍ່ໄດ້ຕາມ ກົດລະບຽບ ວ່າດ້ວຍ ບັນຊີລາຍການ ການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ທີ່ພຽງພໍ**.[86] ກົດລະບຽບພິເສດ ແມ່ນສາມາດມີຜົນນຳໃຊ້ໄດ້ ກັບ ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ. ການອ້າງອີງເຖິງ ຂໍ້ຄວາມອ້າງອີງທີ່ຢູ່ລຸ່ມໜ້າເຈ້ຍ ໝາຍເລກ 7 ແລະ 9 ຢູ່ໃນຖັນຂ້າງເທິງນັ້ນ ໝາຍເຖິງບົດນຳສະເໜີແນະ ທີ 6 ແລະ 7, ຊຶ່ງກວມຢູ່ໃນຕາຕະລາງ 7 ແລະ 8, ທີ່ກຳນົດ ກົດລະບຽບ ກ່ຽວກັບ Tolerances (ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ) ທີ່ມີຜົນນຳໃຊ້ກັບ ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ.

ຖ້າເບິ່ງລະອຽດໄປກວ່ານັ້ນ, ຂໍ້ຄວາມທີ່ຂຽນໄວ້ ຢູ່ໃນຕາຕະລາງໄກ່ງອຂ້ອງຂ້າງເທິງ, ຄວນຈະຖືກອ່ານ ໄປພ້ອມກັບ ການໄດ້ຕາມເງື່ອນໄຂ ທີ່ຖືກລະບຸໄວ້ ໃນຕາຕະລາງ 7 ແລະ 8 ໂດຍຜູ້ສົ່ງອອກ ຜະລິດຕະພັນແຜ່ນແພ ຈາກ ສປປ ລາວ. ໃນເວລາຜະລິດ ຜະລິດຕະພັນແຜ່ນແພ ທີ່ເຮັດຈາກເນື້ອຜ້າທີ່ນຳເຂົ້າ, ຜູ້ສົ່ງອອກ ຕ້ອງຄຳນຶງເຖິງ Tolerances (ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ) ຕາມລາຍລະອຽດຂ້າງລຸ່ມນີ້. ຜູ້ຜະລິດ ຈາກ ສປປ ລາວ ສາມາດນຳໃຊ້ ວັດສະດຸນຳເຂົ້າ ສຳລັບ ຜະລິດຕະພັນແຜ່ນແພ ຂອງເຂົາເຈົ້າ, ແຕ່ໃນກໍລະນີນີ້, ເຂົາເຈົ້າ ຕ້ອງປະຕິບັດຕາມ ການດຳເນີນງານທີ່ໄດ້ຕາມເງື່ອນໄຂ ແລະ ຮັກສາໃຫ້ຢູ່ພາຍໃນ ກົດລະບຽບ Tolerances (ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ) ທີ່ກ່ຽວຂ້ອງ ເພື່ອທີ່ຈະຮັບ ຜະລິດຕະພັນ ທີ່ຈະຖືກພິຈາລະນາວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ.

**ຕາຕະລາງ 7: ການອະທິບາຍເພີ່ມຕື່ມ ກ່ຽວກັບ Tolerances (ກົດລະບຽບ ວ່າດ້ວຍການອະນຸຍາດໃຫ້ນຳໃຊ້ວັດຖຸດິບທີ່ມາຈາກແຫຼ່ງອື່ນ) – ທີ່ກຳນົດອອກ ຢູ່ໃນເອກະສານນຳສະເໜີແນະ ທີ 6 ຂອງ ລະບຽບການ (EU) 2015/2446**

| **ຈຸດສັງເກດ 6: Tolerances ທີ່ສາມາດມີຜົນນຳໃຊ້ກັບ ຜະລິດຕະພັນ ທີ່ຖືກສ້າງຂຶ້ນ ຈາກການປະສົມປະສານ ຂອງວັດສະດຸທີ່ເປັນແຜ່ນແພ** | |
|---|---|
| 6.1 *ເມື່ອ, ສຳລັບຜະລິດຕະພັນໃດໜຶ່ງ ທີ່ຢູ່ໃນບັນຊີລາຍການ, ແມ່ນໃຫ້ອ້າງອີງໃສ່ ຈຸດສັງເກດຂໍ້ນີ້,* ***ເງື່ອນໄຂມາດຖານ ທີ່ໄດ້ກຳນົດໄວ້ ຢູ່ໃນຖັນທີ 3 ຈະຕ້ອງບໍ່ມີຜົນນຳໃຊ້ກັບ*** | ***<u>ວັດສະດຸແຜ່ນແພພື້ນຖານ ທີ່ສາມາດ ຖືກນຳໃຊ້ໄດ້:</u>***<br>*ໄໝ;*<br>*ຂົນສັດ;*<br>*ຂົນສັດຫຍາບ;*<br>*ຂົນສັດງາມ;*<br>*ຂົນຫາງມ້າ;* |

| | |
|---|---|
| ***ວັດສະດຸແຜ່ນແພພື້ນຖານໃດໜຶ່ງ ທີ່ຖືກນຳໃຊ້ ຢູ່ໃນການຜະລິດ ຜະລິດຕະພັນ ນີ້ ແລະ ຊຶ່ງທັງໝົດ ເທົ່າກັບ 10% ຫຼື ໜ້ອຍກວ່າ ຂອງນ້ຳໜັກ ທັງໝົດ ຂອງ <u>ວັດສະດຸແຜ່ນແພພື້ນຖານທີ່ນຳໃຊ້</u>.*** *(ໃຫ້ເບິ່ງຕື່ມ ຈຸດສັງເກດທີ 6.3 ແລະ 6.4)* <br><br> *6.2 ເຖິງຢ່າງໃດກໍຕາມ, Tolerance ທີ່ໄດ້ກ່າວເຖິງ ຢູ່ໃນ ຈຸດສັງເກດທີ 6.1 ສາມາດມີຜົນນຳໃຊ້ສະເພາະກັບ ຜະລິດຕະພັນປະສົມ ທີ່ໄດ້ຖືກຜະລິດຂຶ້ນ ຈາກ ສອງ ຫຼື ຫຼາຍກວ່າສອງ ວັດສະດຸແຜ່ນແພພື້ນຖານ.* | *ຝ້າຍ;* <br> *ວັດສະດຸສຳລັບຜະລິດເຈ້ຍ ແລະ ເຈ້ຍ;* <br> *ເສັ້ນໄຍຈາກຕົ້ນດອກແຟລັກ (Flax).* <br> *ເສັ້ນໄຍຈາກຕົ້ນກັນຊາ (True hemp);* <br> *ປໍສາ ແລະ ພືດທີ່ໃຫ້ເສັ້ນໄຍ;* <br> *ຕົ້ນ Sisal ແລະ ເສັ້ນໄຍອື່ນໆ ຈາກຕົ້ນ Genus Agave;* <br> *ໝາກພ້າວ, ຕົ້ນກ້ວຍຊະນິດທີ່ມີຊື່ວ່າ abaca, ຕົ້ນ ramie ແລະ ເສັ້ນໄຍ ທີ່ມາຈາກພືດຜັກອື່ນໆ;* <br> *ເສັ້ນໄຍສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍທຽມທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍທີ່ຈັກນຳກະແສໄຟຟ້າໄດ້;* <br> *ເສັ້ນໄຍ polypropylene ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ polyester ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ polyamide ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ polyacrylonitrile ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ polyimide ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ polytetrafluoroethylene ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ poly (phenylene sulphide) ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ poly (vinyl chloride) ສັງເຄາະ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ ສັງເຄາະອື່ນໆ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ of viscose ທຽມ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນໄຍ ທຽມອື່ນໆ ທີ່ສ້າງຂຶ້ນໂດຍມະນຸດ;* <br> *ເສັ້ນດ້າຍ ທີ່ສ່ວນໜຶ່ງຜະລິດຈາກ polyurethane ແລະ ອີກສ່ວນໜຶ່ງຈາກ polyether, ຊຶ່ງອາດຈະຫຍິບ ຫຼື ບໍ່ຫຍິບກໍ່ຕາມ;* <br> *ເສັ້ນດ້າຍ ທີ່ສ່ວນໜຶ່ງຜະລິດຈາກ polyurethane ແລະ ສ່ວນໜຶ່ງຈາກ polyester, ຊຶ່ງອາດຈະຫຍິບ ຫຼື ບໍ່ຫຍິບກໍ່ຕາມ;* <br> *ຜະລິດຕະພັນ ຂອງ ຫົວຂໍ້ (Heading) 5605 (ເສັ້ນດ້າຍເຄືອບໂລຫະ) ທີ່ລວມເອົາ ເສັ້ນ ທີ່ປະກອບດ້ວຍ ເນື້ອຂອງ ແຜ່ນ aluminium ຫຼື ເນື້ອຂອງ ແຜ່ນຟີມ ພລາດສະຕິກ ອາດຈະເຄືອບຝຸ່ນ aluminium ຫຼື ບໍ່ເຄືອບຝຸ່ນ aluminium, ທີ່ມີຄວາມກວ້າງ ບໍ່ເກີນ 5 ມມ, ທີ່ໃສ່ສີໄສ ຫຼື ສີທົ່ວໄປ ດ້ວຍກາວ ຢູ່ລະຫວ່າງກາງ ຂອງ ສອງຊັ້ນ ຂອງ ຟີມພລາດສະຕິກ;* <br> *ຜະລິດຕະພັນອື່ນໆ ຂອງ ຫົວຂໍ້ (Heading) 5605;* <br> *ເສັ້ນໄຍແກ້ວ;* <br> *ເສັ້ນໄຍໂລຫະ.* |

| |
|---|
| *6.3 ໃນກໍລະນີ ຂອງ ຜະລິດຕະພັນ ທີ່ປະກອບດ້ວຍ "ເສັ້ນດ້າຍທີ່ສ່ວນໜຶ່ງເຮັດຈາກ polyurethane ແລະ ສ່ວນໜຶ່ງເຮັດຈາກ polyether, ຊຶ່ງອາດຈະຫຍຶບ ຫຼື ບໍ່ຫຍຶບກໍໄດ້, Tolerance ແມ່ນ 20% ກ່ຽວກັບ ເສັ້ນດ້າຍນີ້.* |
| *6.4 ໃນກໍລະນີ ຂອງຜະລິດຕະພັນ ທີ່ປະກອບດ້ວຍ "ເສັ້ນ ທີ່ປະກອບຂຶ້ນຈາກ ເນື້ອຂອງ ແຜນ aluminium ຫຼື ເນື້ອຂອງ ແຜ່ນຟິມພຼາດສະຕິກ ຊຶ່ງອາດຈະເຄືອບ ຫຼື ບໍ່ເຄືອບ ດ້ວຍຜົງ aluminium, ໂດຍມີຄວາມກວ້າງແມ່ນບໍ່ເກີນ 5 ມມ, ທີ່ໃສ່ສີໄສ ຫຼື ສີທົ່ວໄປ ດ້ວຍກາວ ຢູ່ລະຫວ່າງກາງ ຂອງ ສອງຊັ້ນ ຂອງ ຟິມພຼາດສະຕິກ, Tolerance ແມ່ນ 30% ກ່ຽວກັບເສັ້ນໄຍດັ່ງກ່າວນີ້.* |

ສໍາລັບສາທິດໃຫ້ເຫັນ:

| ຕົວຢ່າງ 1 | ຕົວຢ່າງ 2 |
|---|---|
| ເສັ້ນດ້າຍ, ຂອງ ຫົວຂໍ້ (Heading) 5205, ທີ່ເຮັດມາຈາກ ເສັ້ນໃຍຝ້າຍ ຂອງຫົວຂໍ້ 5203 ແລະ ເສັ້ນໄຍສັງເຄາະ ຂອງຫົວຂໍ້ 5506, ແມ່ນເປັນເສັ້ນດ້າຍປະສົມ.<br>ດັ່ງນັ້ນ, ເສັ້ນໄຍສັງເຄາະທີ່ບໍ່ມີແຫຼ່ງກໍາເນີດ ທີ່ບໍ່ໄດ້ຕາມ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ສາມາດຖືກນໍາໃຊ້ໄດ້, ໂດຍທີ່ ນໍ້າໜັກທັງໝົດ ຂອງມັນ ແມ່ນບໍ່ເກີນ 10% ຂອງນໍ້າໜັກ ເສັ້ນດ້າຍ. | ຜ້າແພທີ່ເຮັດດ້ວຍຂົນສັດ, ຂອງ ຫົວຂໍ້ (Heading) 5112, ທີ່ຜະລິດຈາກ ເສັ້ນດ້າຍຂົນສັດ ຂອງ ຫົວຂໍ້ 5107 ແລະ ເສັ້ນດ້າຍສັງເຄາະ ຂອງຫົວຂໍ້ 5509, ແມ່ນເປັນຜ້າແພປະສົມ.<br>ເພາະສະນັ້ນ, ເສັ້ນດ້າຍສັງເຄາະ ທີ່ບໍ່ໄດ້ຕາມ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ, ຫຼື ເສັ້ນດ້າຍທີ່ເຮັດດ້ວຍຂົນສັດ ທີ່ບໍ່ໄດ້ຕາມ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ, ຫຼື ປະສົມປະສານກັນສອງຢ່າງ, ແມ່ນສາມາດ ຖືກນໍາໃຊ້ໄດ້, ໂດຍທີ່ ນໍ້າໜັກລວມທັງໝົດ ຂອງພວກມັນ ແມ່ນບໍ່ເກີນ 10% ຂອງນໍ້າໜັກ ຂອງຜ້າແພ. |
| **ຕົວຢ່າງ 3** | **ຕົວຢ່າງ 4** |
| ຜ້າແພທີ່ເປັນຂົນຈຸກ (ຂົນແບບພົມ) ຂອງ ຫົວຂໍ້ (Heading) 5802, ທີ່ຜະລິດຈາກ ເສັ້ນດ້າຍຝ້າຍ ຂອງ ຫົວຂໍ້ 5205 ແລະ ຜ້າແພຝ້າຍ ຂອງ ຫົວຂໍ້ 5210, ແມ່ນຈະເປັນຜະລິດຕະພັນປະສົມ ກໍຕໍ່ເມື່ອ ຖ້າວ່າ ຜ້າແພຝ້າຍເອງ ເປັນແຜ່ນແພປະສົມ ທີ່ເຮັດມາຈາກ ເສັ້ນດ້າຍ ທີ່ຖືກຈັດເປັນ 2 ຫົວຂໍ້, ຫຼື ຖ້າວ່າ ເສັ້ນດ້າຍຝ້າຍ ທີ່ຖືກນໍາໃຊ້ນັ້ນ ແມ່ນເປັນຝ້າຍປະສົມ. | ຖ້າ ຜ້າແພທີ່ເປັນຂົນຈຸກ (ຂົນແບບພົມ) ທີ່ກ່ຽວຂ້ອງ ໄດ້ຖືກຜະລິດມາຈາກ ເສັ້ນຝ້າຍ ຂອງ ຂອງຫົວຂໍ້ (Heading) 5205 ແລະ ຜ້າແພສັງເຄາະ ຂອງຫົວຂໍ້ 5407, ເສັ້ນດ້າຍ ທີ່ຖືກນໍາໃຊ້ ແມ່ນເປັນສອງວັດສະດຸແຜ່ນແພພື້ນຖານ ທີ່ແຍກກັນ ແລະ ດັ່ງນັ້ນ, ແຜ່ນແພທີ່ເປັນຂົນຈຸກ (ຂົນແບບພົມ) ແມ່ນເປັນຜະລິດຕະພັນປະສົມ. |

**ຕາຕະລາງ 8:** **ຄໍາອະທິບາຍ ເພີ່ມຕື່ມ ກ່ຽວກັບ Tolerances – ທີ່ຖືກກໍານົດ ຢູ່ໃນ ໝາຍເຫດ ທີ່ໃຫ້ຄໍາແນະນໍາ ຂໍ້ 7 ຂອງ ລະບຽບການ (EU) 2015/2446**

**ຈຸດສັງເກດ 7: Tolerances ອື່ນໆ ທີ່ສາມາດມີຜົນນໍາໃຊ້ກັບ ບາງຜະລິດຕະພັນແຜ່ນແພ**

7.1 ເມື່ອ, ຢູ່ໃນບັນຊີລາຍການ, ມີການອ້າງອີງເຖິງ ຈຸດສັງເກດຂໍ້ນີ້, ວັດສະດຸແຜ່ນແພ ທີ່ບໍ່ໄດ້ຕາມ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ທີ່ຖືກກຳນົດໄວ້ ຢູ່ໃນ ລາຍຊື່ ຂອງ ຖັນທີ 3 ສຳລັບຜະລິດຕະພັນທີ່ສ້າງຂຶ້ນ ທີ່ກ່ຽວຂ້ອງ ແມ່ນສາມາດຖືກນຳໃຊ້ໄດ້, ໂດຍທີ່ວ່າ ພວກມັນຖືກຈັດຢູ່ໃນ ຫົວຂໍ້ອື່ນ ນອກເໜືອຈາກ ອັນທີ່ເປັນຂອງຜະລິດຕະພັນ ແລະ ທີ່ມູນຄ່າຂອງພວກມັນ ແມ່ນບໍ່ເກີນ 8% ຂອງລາຄາວຽກຜ່ານມາ ຂອງ ຜະລິດຕະພັນ.

---

7.2 ໂດຍບໍ່ມີການເຂົ້າແຊກແຊງ ຂອງ ຈຸດສັງເກດຂໍ້ 7.3, ວັດສະດຸ ທີ່ບໍ່ໄດ້ຖືກຈັດປະເພດ ຢູ່ພາຍໃນ ບົດທີ 50–63 ສາມາດຖືກນຳໃຊ້ໄດ້ຢ່າງອິດສະຫຼະພາບ ຢູ່ໃນການຜະລິດ ຜະລິດຕະພັນແຜ່ນແພ, ບໍ່ວ່າພວກມັນ ຈະປະກອບດ້ວຍແຜນແພ ຫຼື ບໍ່ກໍຕາມ.

**ຕົວຢ່າງ**

ຖ້າກົດລະບຽບ ຢູ່ໃນ ບັນຊີລາຍການ ທີ່, ສຳລັບລາຍການແຜ່ນແພໃດໜຶ່ງ (ເຊັ່ນ: ໂສ້ງຂາຍາວ), ຕ້ອງໄດ້ນຳໃຊ້ເສັ້ນດ້າຍ, ສິ່ງດັ່ງກ່າວນີ້ບໍ່ໄດ້ກີດກັ້ນ ຈາກ ການນຳໃຊ້ ລາຍການໂລຫະ ເຊັ່ນ ກະດຸມ, ເພາະວ່າ ກະດຸມຕ່າງໆ ບໍ່ໄດ້ຖືກຈັດ ຢູ່ພາຍໃນບົດທີ 50–63.

ສຳລັບເຫດຜົນອັນດຽວກັນ, ມັນບໍ່ໄດ້ກີດກັ້ນ ການນຳໃຊ້ຊິບ, ເຖິງແມ່ນວ່າ ໂດຍປົກກະຕິແລ້ວ ຊິບ ແມ່ນຈະປະກອບດ້ວຍແຜ່ນແພ.

---

7.3 ເມື່ອ ກົດລະບຽບ ວ່າດ້ວຍອັດຕາສ່ວນຮ້ອຍ ມີຜົນນຳໃຊ້, ມູນຄ່າ ຂອງ ວັດສະດຸ ທີ່ບໍ່ໄດ້ຖືກຈັດປະເພດ ຢູ່ໃນ ບົດທີ 50–63 ຕ້ອງໄດ້ຖືກນຳໄປພິຈາລະນາ ໃນເວລາຄິດໄລ່ ມູນຄ່າ ວັດສະດຸ ທີ່ມີຕົ້ນກຳເນີດມາຈາກບ່ອນອື່ນ ທີ່ໄດ້ກອມເອົາ.

---

### ການຍົກເວັ້ນ ຈາກ Regional cumulation

ດັ່ງທີ່ໄດ້ອະທິບາຍໄວ້ ຢູ່ໃນໝວດ 2.2 (ii) ຂ້າງເທິງ, cumulation ແມ່ນການຍົກເວັ້ນ ຕໍ່ກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ, ແລະ Regional cumulation ແມ່ນຖືກພິຈາລະນາວ່າ ມີແຫຼ່ງກຳເນີດ ຢູ່ໃນປະເທດສຸດທ້າຍ ເມື່ອວັດສະດຸ ທີ່ມີແຫຼ່ງກຳເນີດມາຈາກ ປະເທດໃດໜຶ່ງ ພາຍໃນກຸ່ມພາກພື້ນ (EU GSP ຮັບຮູ້ 4 ກຸ່ມພາກພື້ນ), ຊຶ່ງມີການສືບຕໍ່ ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ຢູ່ໃນປະເທດອື່ນ ທີ່ໄດ້ຮັບຜົນປະໂຫຍດ ທີ່ຢູ່ໃນກຸ່ມດຽວກັນ.[87]

ດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງ, ສປປ ລາວ ໄດ້ຖືກມອບໝາຍໃຫ້ຢູ່ໃນກຸ່ມ 1 ຈາກມີຈຳນວນກຸ່ມທັງໝົດ 4 ກຸ່ມພາກພື້ນ ທີ່ປະກອບດ້ວຍ ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ມາເລເຊຍ, ມຽນມາ, ຟີລິບປິນ, ໄທ ແລະ ຫວຽດນາມ.[88] ສະນັ້ນ, ຖ້າ ສປປ ລາວ ນຳເຂົ້າວັດສະດຸ ທີ່ມາຈາກປະເທດໃດໜຶ່ງ ໃນຈຳນວນປະເທດ ທີ່ໄດ້ກ່າວມາຂ້າງເທິງ (ພາຍໃຕ້ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດສິນຄ້າ ຂອງ ແຜນງານ GSP ຂອງສະຫະພາບເອີຣົບ), ແລະ ຜະລິດຕະພັນນີ້ ແມ່ນໄດ້ຖືກສືບຕໍ່ ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ຢູ່ ສປປ ລາວ, ຜະລິດຕະພັນດັ່ງກ່າວສາມາດເວົ້າໄດ້ວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ ແລະ ຈະມີສິດ ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ EBA.

ເຖິງຢ່າງໃດກໍ່ຕາມ, ມີບາງປະເພດວຽກ ຢູ່ໃນຂະແໜງແຜ່ນແພ ທີ່ຖືກຍົກເວັ້ນຈາກ Regional cumulation ປະກອບມີ ຄື:[89]

- ການຕິດກະດຸມ ແລະ/ຫຼື ປະເພດການຕິດສິ່ງອື່ນໆໃສ່ເສື້ອຜ້າ ທີ່ເຮັດໃຫ້ເຄື່ອງນຸ່ງຮົ່ມປົກປິດ;
- ເຮັດຮູກະດຸມເສື້ອ;
- ຫຍິບປາຍ ຂາສົ້ງ ແລະ ແຂນເຫຍື້ອ ຫຼື ຫຍິບ ພື້ນສະເກີດ ແລະ ຊຸດລ່າມ, ແລະ ອື່ນໆ.
- ຫຍິບອ້ອມຂອບຜ້າເຊັດໜ້າ ແລະ ຜ້າປູໂຕະ ແລະ ອື່ນໆ;
- ການຕິດ ອົງປະກອບພາຍໃນ ຂອງເຄື່ອງນຸ່ງຮົ່ມ ແລະ ອົງປະກອບພາຍນອກ ຂອງເຄື່ອງນຸ່ງຮົ່ມ ເຊັ່ນ ຖົງ, ກາສະຫຼາກ ແລະ ກາສັນຍາລັກຕ່າງໆ, ແລະ ອື່ນໆ;
- ການລີດຜ້າ ແລະ ການກະກຽມອື່ນໆ ຂອງ ເສື້ອຜ້າ ສຳລັບ ຂາຍແບບສຳເລັດຮູບ;
- ຫຼື ທຸກການປະສົມປະສານ ຂອງ ການເຮັດວຽກດັ່ງກ່າວ.

## iv. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ຜະລິດຕະພັນເຄື່ອງນຸ່ງຮົ່ມ ແລະ ແຜ່ນແພ

### a) ຂໍ້ຈຳກັດ ກ່ຽວກັບ ການນຳໃຊ້ ສານເຄມີ ຢູ່ໃນ ຜະລິດຕະພັນແຜ່ນແພ

ສ່ວນປະກອບຂອງແຜ່ນແພ ທີ່ບັນຈຸ ບາງ ສານເຄມີ, ກຸ່ມຂອງສານເຄມີ, ຫຼື ສານປະສົມ **ບໍ່ສາມາດວາງຂາຍ ຢູ່ໃນຕະຫຼາດ EU** ຫຼື ຖືກ**ຈໍາກັດຢ່າງເຂັ້ມງວດ.**

ສານເຄມີ, ກຸ່ມຂອງສານເຄມີ ຫຼື ອັນທີ່ປະສົມປະສານກັນ ຕໍ່ໄປນີ້ ແມ່ນບໍ່ອະນຸຍາດ ຕາມທີ່ໄດ້ກໍານົດໄວ້ ຢູ່ໃນ ລະບຽບການລົງທະບຽນ, ປະເມີນຜົນ, ການອະນຸຍາດ ແລະ ການຈໍາກັດສານເຄມີ (REACH):[90]

**ຕາຕະລາງ 9: ລາຍຊື່ ສານເຄມີ ທີ່ບໍ່ອະນຸຍາດ ສໍາລັບ ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ**

| ສານເຄມີ/ກຸ່ມຂອງສານເຄມີ/ສານປະສົມ | ລາຍລະອຽດ |
|---|---|
| **Tris(2,3 dibromopropyl) phosphate** | **ບໍ່ອະນຸຍາດ ໃນວັດຖຸທີ່ເປັນແຜ່ນແພ, ເຊັ່ນ: ເສື້ອຜ້າ, ຊຸດຊັ້ນໃນ ແລະ ຜ້າລີນິນ ທີ່ຜະລິດຂຶ້ນມາ ເພື່ອໃຫ້ສໍາພັດກັບຜິວໜັງ.** |
| **Tris(aziridinyl) phosphinoxide** | **ບໍ່ອະນຸຍາດ ໃນວັດຖຸທີ່ເປັນແຜ່ນແພ, ເຊັ່ນ: ເສື້ອຜ້າ, ຊຸດຊັ້ນໃນ ແລະ ຜ້າລີນິນ ທີ່ຜະລິດຂຶ້ນມາ ເພື່ອໃຫ້ສໍາພັດກັບຜິວໜັງ.** |
| **Polybrominated biphenyls (PBB)** | **ບໍ່ອະນຸຍາດ ໃນວັດຖຸທີ່ເປັນແຜ່ນແພ, ເຊັ່ນ: ເສື້ອຜ້າ, ຊຸດຊັ້ນໃນ ແລະ ຜ້າລີນິນ ທີ່ຜະລິດຂຶ້ນມາ ເພື່ອໃຫ້ສໍາພັດກັບຜິວໜັງ.** |
| **ສານປະສົມ *Mercury compounds*** | **ອາດຈະບໍ່ຖືກວາງຂາຍ ໃນຕະຫຼາດ, ຫຼື ຖືກນໍາໃຊ້, ເປັນສານ ຫຼື ຢູ່ໃນສານປະສົມ ເມື່ອ ຕັ້ງໃຈນໍາໃຊ້ ສານ ຫຼື ສານປະສົມ ຢູ່ໃນ ການແຊ່ ແຜ່ນແພອຸດສາຫະກໍາ ຂະໜາດໃຫຍ່ ແລະ ດ້າຍ ທີ່ຕັ້ງໃຈ ສໍາລັບການຜະລິດ ຂອງມັນ** |
| **ສານປະສົມ *Dioctyltin (DOT)*** | ອາດຈະບໍ່ຖືກນໍາໃຊ້ ນັບຕັ້ງແຕ່ 1 ມັງກອນ 2012, *ໃນຈໍານວນມາດຕາອື່ນໆ*, ຢູ່ໃນບັນດາມາດຕາຕໍ່ໄປນີ້ ສໍາລັບການສະໜອງໃຫ້ແກ່ ຫຼື ນໍາໃຊ້ໂດຍ ສາທາລະນະຊົນທົ່ວໄປ, ເມື່ອຄວາມເຂັ້ມຂຸ້ນ ຢູ່ໃນວັດຖຸ , ຫຼື ສ່ວນຂອງວັດຖຸ, ໃຫຍ່ກວ່າ ຄ່າທຽບເທົ່າ 0,1% ຂອງນໍ້າໜັກກົ່ວ:<br>▪ ຕັ້ງໃຈໃຫ້ວັດຖຸທີ່ເປັນແຜ່ນແພ ສໍາພັດກັບ ຜິວໜັງ; ແລະ<br>▪ ຖົງມື. |
| **Nickel** | ບໍ່ອະນຸຍາດ ໃຫ້ຢູ່ໃນວັດຖຸ ທີ່ຕັ້ງໃຈໃຫ້ສໍາພັດກັບຜິວໜັງໂດຍກົງ ແລະ ເປັນເວລາດົນນານ, ເຊັ່ນວ່າ:<br>▪ ຕຸ້ມຫູ;<br>▪ ສາຍຄໍ, ສາຍແຂນ ແລະ ໂສ້, ສ້ອຍຂໍ້ຕີນ ແລະ ແຫວນ;<br>▪ ເຄດໂມງໃສ່ມື, ສາຍໂມງ ແລະ ໂຕຮັດ; ແລະ<br>▪ ກະດຸມດັນ, ໂຕຮັດ, ໂຕຍຶງນ້ອດ, ຊິບ ແລະ ກາໝາຍໂລຫະ, ເມື່ອຖືກນໍາໃຊ້ ເຄື່ອງນຸ່ງຮົ່ມ. |
| **Azocolourants ແລະ azodyes** | *ສານປະສົມອີງຕະຫາດ Azodyes*, ຊຶ່ງ, ດ້ວຍການແບ່ງແຍກ ກ◌ຸ◌່ມ azo ໜຶ່ງ ຫຼື ຫຼາຍກວ່າໜຶ່ງ ທີ່ຫຼຸດລົງ, ອາດຈະປ່ອຍ ໜຶ່ງ ຫຼື ຫຼາຍກວ່າໜຶ່ງ ສານ *aromatic amines* ທີ່ນອນໃນບັນຊີລາຍຊື່ ໃນເອກະສານຊ້ອນທ້າຍ 8 ຂອງ *ລະບຽບການ* REACH , ຢູ່ໃນຄວາມເຂັ້ມຂຸ້ນ ທີ່ສາມາດກວດພົບໄດ້, ນັ້ນກໍຄື ຫຼາຍກວ່າ 30 mg/kg (0,003% ຂອງນໍ້າໜັກ) ຢູ່ໃນວັດຖຸ ຫຼື ສ່ວນທີ່ຖືກຍ້ອມສີ ຂອງມັນ, ໂດຍອີງຕາມ ວິທີການທົດສອບ ທີ່ນອນໃນລາຍຊື່ ເອກະສານຊ້ອນທ້າຍ 10 ຂອງ *ລະບຽບການ* REACH |

| ສານເຄມີ/ກຸ່ມຂອງສານເຄມີ/ສານປະສົມ | ລາຍລະອຽດ |
| --- | --- |
| | , ອາດຈະບໍ່ຖືກນໍາໃຊ້, ຢູ່ໃນວັດຖຸທີ່ເປັນແຜ່ນແພ ແລະ ໜັງ ທີ່ອາດຈະສໍາພັດໂດຍກົງ ແລະ ແກ່ຍາວ ກັບ ຜິວໜັງ ຂອງມະນຸດ ຫຼື ສ່ວນທີ່ຂຸດໂຊມຂອງປາກ, ເຊັ່ນ:<br>▪ ເສື້ອຜ້າ, ຜ້າປູບ່ອນນອນ, ຜ້າເຊັດໂຕ, ກິບຜົມ, ຜົມປອມ, ໝວກ, ຜ້າອ້ອມ ແລະ ສິ່ງຂອງສຸຂານາໄມ້ອື່ນໆ, ແລະ ຖົງນອນ;<br>▪ ເກີບ, ຖົງມື, ສາຍໂມງ, ກະເປົາຫິ້ວດ້ວຍມື, ກະເປົາຫິ້ວສໍາລັບໃສ່ເງິນຜູ້ຍິງ/ກະເປົາເງິນຜູ້ຊາຍ, ກະເປົາຫິ້ວຜູ້ຊາຍ, ຜ້າຄຸມຕັ່ງ ແລະ ກະເປົາເງິນຫ້ອຍຄໍ;<br>▪ ເຄື່ອງຫຼິ້ນທີ່ເຮັດດ້ວຍແຜ່ນແພ ຫຼື ດ້ວຍໜັງ ແລະ ໜັງທີ່ປະກອບດ້ວຍເຄື່ອງນຸ່ງຮົ່ມ ທີ່ເຮັດດ້ວຍແຜ່ນແພ ຫຼື ໜັງ; ແລະ<br>▪ ດ້າຍ ແລະ ເສັ້ນໄຍ ທີ່ຕັ້ງໃຈ ສໍາລັບຖືກໃຊ້ ໂດຍ ຜູ້ບໍລິໂພກຄົນສຸດທ້າຍ. |
| **Azocolourants ແລະ azodyes (ຕໍ່)** | ຍິ່ງໄປກວ່ານັ້ນ, ວັດຖຸທີ່ເປັນແຜ່ນແພ ແລະ ໜັງ ທີ່ໄດ້ກ່າວເຖິງ ຢູ່ໃນ ວັກທີ 1 ຈະຕ້ອງບໍ່ວາງຂາຍ ຢູ່ໃນຕະຫຼາດ ຍົກເວັ້ນແຕ່ ພວກມັນ ປະຕິບັດຕາມ ຂໍ້ກໍານົດ ຫຼື ຄວາມຕ້ອງການ ທີ່ກໍານົດໄວ້ ໃນວັກນັ້ນ.<br>*ສານປະສົມອົງຄະທາດ Azodyes, ທີ່ນອນຢູ່ໃນ* ເອກະສານຊ້ອນທ້າຍ 9 ຂອງ *ລະບຽບການ* REACH, "ບັນຊີລາຍຊື່ ສານປະສົມອົງຄະທາດ azodyes", ຈະຕ້ອງບໍ່ຖືກວາງຂາຍ ໃນຕະຫຼາດ, ຫຼື ຖືກນໍາໃຊ້, ໃນນາມເປັນສານ, ຫຼື້ ຢູ່ໃນສານປະສົມ ທີ່ມີຄວາມເຂັ້ມຂຸ້ນ ຫຼາຍກວ່າ 0,1% ຂອງນໍ້າໜັກ, ເມື່ອຕັ້ງໃຈ ໃຫ້ ສານ ຫຼື ສານປະສົມ ເປັນໂຕຍ້ອມສີ ວັດຖຸທີ່ເປັນແຜ່ນແພ ແລະ ໜັງ, ທີ່ອາດຈະປ່ອຍ ໜຶ່ງ ຫຼື ຫຼາຍກວ່າໜຶ່ງ ສານປະສົມອົງຄະທາດ *aromatic amines* ທີ່ມີລາຍຊື່ ໃນເອກະສານຊ້ອນທ້າຍ 8, ຢູ່ໃນວັດຖຸທີ່ເປັນແຜ່ນແພ ແລະ ໜັງ ທີ່ອາດຈະສໍາພັດ ກັບຜິວໜັງ ຫຼື ສ່ວນທີ່ຂຸດໂຊມຂອງປາກ ໂດຍກົງ ແລະ ແກ່ຍາວ. |
| **Nonylphenol ແລະ nonylphenol thoxylates** | ອາດຈະບໍ່ຖືກວາງຂາຍ ໃນຕະຫຼາດ, ຫຼື ຖືກນໍາໃຊ້, ເປັນສານ ຫຼື ຢູ່ໃນສານປະສົມ ທີ່ມີຄວາມເຂັ້ມຂຸ້ນເທົ່າກັບ ຫຼື ໃຫຍ່ກວ່າ 0,1% ຂອງນໍ້າໜັກ ສໍາລັບ, ຈຸດປະສົງຕໍ່ໄປນີ້ *ໃນຈໍານວນຈຸດປະສົງອື່ນໆ.* ການປຸງແຕ່ງ ແຜ່ນແພ ແລະ ໜັງ, ຍົກເວັ້ນ:<br>▪ ການປຸງແຕ່ງ ໂດຍບໍ່ມີການປ່ອຍສູ່ນໍ້າເປື້ອນ; ແລະ<br>▪ ລະບົບ ທີ່ມີການບໍາບັດແບບພິເສດ ເມື່ອນໍ້າທີ່ຜ່ານຂະບວນການ ຖືກບໍາບັດ ລ່ວງໜ້າ ເພື່ອເອົາ ເສດສ່ວນອິນຊີ ອອກຢ່າງສົມບູນແບບ ກ່ອນທີ່ຈະມີການບໍາບັດນໍ້າເສຍທາງຊີວະພາບ (ການລ້າງໄຂມັນໜັງແກະ). |

---

*ສໍາລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບ ສານເຄມີ:*

*ຜູ້ຜະລິດ ແລະ ຜູ້ປະກອບການ ສາມາດຕິດຕໍ່ຫາ ອົງການເຄມີເອີຣົບ (ECHA) ທີ່ຄຸ້ມຄອງ ແລະ ປະສານງານ ການຈົດທະບຽນ, ການປະເມີນຜົນ, ການອະນຸຍາດ ແລະ ການຈໍາກັດ ຂະບວນການຈໍາກັດສານເຄມີ ຢູ່ໃນ ສະຫະພາບເອີຣົບ.*

*ອົງການເຄມີ ແຫ່ງເອີຣົບ* | *P.O. Box 400, 00121 Helsinki, Finland*
*Swichboard: +358-9-686180*
*ໂຕະໃຫ້ບໍລິການຊ່ວຍເຫຼືອ ທາງອອນລາຍ://echa.europa.eu/contact/helpdesk-contact-form*

### b) ຂໍ້ຈຳກັດ ກ່ຽວກັບ ປະເພດສັດ ທີ່ຖືກນຳໃຊ້ ສຳລັບ ຜະລິດ ຜະລິດຕະພັນແຜ່ນແພ

ຜູ້ຜະລິດ ຜະລິດຕະພັນແຜ່ນແພ ທີ່ໄດ້ມາຈາກ ສັດແປກປະຫຼາດ ຄວນປະເມີນ ການປະຕິບັດຕາມ ກົດລະບຽບ ຂອງ ສະຫະພາບເອີຣົບ ໂດຍອີງຕາມ ສົນທິສັນຍາ ວ່າດ້ວຍ ການຄ້າສາກົນ ກ່ຽວກັບ ສັດປ່າ ແລະ ພືດປ່າ ທີ່ໃກ້ສູນພັນ (CITES).[91] ກົດລະບຽບ ບັງຄັບໃຫ້ກວດສອບ ການນຳເຂົ້າ ແລະ ສົ່ງອອກ ທັງໃນລະດັບ EU ແລະ ລະດັບປະເທດ ແຫຼ່ງກຳເນີດ ແລະ ແຕ່ລະປະເທດສະມາຊິກ EU ມີສິດອຳນາດ ໃນ ການຄຸ້ມຄອງ ເພື່ອອອກເອກະສານອະນຸຍາດ ແລະ ກວດກາການນຳເຂົ້າ, ພ້ອມທັງ ມີອຳນາດທາງວິທະຍາສາດ ເພື່ອເຮັດໜ້າທີ່ ເປັນອົງການໃຫ້ຄຳປຶກສາ.

ເຄື່ອງມືທາງນິຕິກຳ ຂອງ EU ກ ຳນົດລາຍຊື່ ຊະນິດພັນສັດທີ່ໃກ້ຈະສູນພັນ, ຊຶ່ງມີການພົວພັນ ແບບຄ້າວໆ ກັບ ເອກະສານຊ້ອນທ້າຍ ທີ່ພົບ ເຫັນ ຢູ່ໃນສົນທິສັນຍາ CITES, ແລະ ຖືກຈັດລະດັບ ທີ່ນັບຈາກ ລະດັບສູງສຸດ ຂອງ ຂໍ້ຈຳກັດທາງການຄ້າ ທີ່ມອບໝາຍ ໂດຍ EU ຈົ່ນຮອດ ລະ ດັບໜ້ອຍທີ່ສຸດ ຂອງ ຂໍ້ຈຳກັດທາງການຄ້າ. ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ທັງໝົດ ທີ່ມາຈາກຊະນິດພັນ ທີ່ນອນຢູ່ໃນລາຍຊື່ ຢ່າງໜ້ອຍ ຕ້ອງການໃຫ້ມີ ໃບອະນຸຍາດ ຫຼື ເອກະສານອະນຸຍາດ ນຳເຂົ້າ.

### c) ລະບຽບການ ທີ່ບັງຄັບໃຊ້ ກັບຜະລິດຕະພັນ ທີ່ບໍ່ແມ່ນອາຫານ ເພື່ອເພີ່ມການປົກປ້ອງຜູ້ບໍລິໂພກ

ໃນເດືອນມິຖຸນາ ປີ 2019, ໄດ້ອອກ ນິຕິກຳ EU ໂດຍມີຈຸດປະສົງ ເພື່ອໃຫ້ມີຄວາມສອດຄ່ອງກົມກຽວກັບ ຂໍກຳນົດ ຫຼື ຄວາມຕ້ອງການ ກ່ຽວ ກັບ ຜະລິດຕະພັນທີ່ບໍ່ແມ່ນອາຫານ ໃນລະດັບ EU ແລະ ເພື່ອເພີ່ມ ການປົກປ້ອງຜູ້ບໍລິໂພກ ຈາກ ຜະລິດຕະພັນ ທີ່ບໍ່ປອດໄພ ແລະ ບໍ່ປະຕິບັດ ຕາມຂໍ້ກຳນົດ.[92] **ນິຕິກຳ ສະບັບນີ້ ມີຜົນບັງຄັບໃຊ້ ໃນວັນທີ 16 ກໍລະກົດ 2021.**[93]

**ກ່ຽວກັບຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ**, ກົດລະບຽບ ຂອງ ສະຫະພາບເອີຣົບ ທີ່ໄດ້ຮັບການປັບປຸງ ຈະໃຫ້ສິດອຳນາດເພີ່ມຕື່ມ ແກ່ ບັນດາປະເທດສະມາຊິກ EU ເພື່ອຮັບປະກັນວ່າ ຜະລິດຕະພັນ ທີ່ວາງຂາຍຢູ່ໃນ ຕະຫຼາດ EU ແມ່ນໄດ້ປະຕິບັດຕາມ ນິຕິກຳ ທີ່ກ່ຽວຂ້ອງກັບ ຂໍ້ຈຳກັດ ສານທີ່ຈຳກັດ, ໂດຍສະເພາະ ກ່ຽວກັບ ເຄື່ອງມືທາງກົດໝາຍຕໍ່ໄປນີ້:

- ລະບຽບການ (EU) ເລກທີ 1007/2011 ວ່າດ້ວຍ ຊື່ເສັ້ນໄຍແຜ່ນແພ ແລະ ການຕິດສະຫຼາກ ທີ່ກ່ຽວຂ້ອງ ແລະ ການໝາຍ ອົງປະກອບ ເສັ້ນໄຍ ຂອງ ຜະລິດຕະພັນແຜ່ນແພ;
- ລະບຽບການ (EC) ເລກທີ 66/2010 ກ່ຽວກັບ EU's Ecolabel; ແລະ
- ລະບຽບການ REACH.

ຜະລິດຕະພັນ ທີ່ລະບຸວ່າ ບໍ່ສອດຄ່ອງ ແມ່ນຈະຖືກປະຕິເສດ ທີ່ຊາຍແດນ ແລະ ຖອນອອກຈາກ ຕະຫຼາດ EU.

## V. ການຕິດສະຫຼາກ ຜະລິດຕະພັນເຄື່ອງນຸ່ງຫົ່ມ ແລະ ແຜ່ນແພ

ເພື່ອທີ່ຈະຮັບປະກັນວ່າ ຜູ້ບໍລິໂພກ EU ໄດ້ຮັບການສະໜອງຂໍ້ມູນທີ່ຖືກຕ້ອງແມ້ນຢໍາ ກ່ຽວກັບ ອົງປະກອບ ຂອງຜະລິດຕະພັນແຜ່ນແພ ທີ່ເຂົາເຈົ້າຊື້, ຜູ້ຜະລິດ ແລະ ພໍ່ຄ້າ ທີ່ຕ້ອງການວາງຂາຍ ຜະລິດຕະພັນຂອງຕົນ ຢູ່ໃນຕະຫຼາດ EU ແມ່ນຕ້ອງ ສະແດງໃຫ້ເຫັນວ່າ ສິນຄ້າຂອງເຂົາເຈົ້າ ຖືກໝາຍ ຢ່າງຖືກຕ້ອງ ຫຼື ປະກອບດ້ວຍ ເອກະສານການຄ້າ ຕາມລະບຽບການ (EU) 1007/2001.[94]

## a. ຜະລິດຕະພັນ ທີ່ຈໍາເປັນຕ້ອງໄດ້ຕິດສະຫຼາກ

### ປະເພດ ຜະລິດຕະພັນ ທີ່ຕ້ອງການໃຫ້ມີສະຫຼາກ

- ມີພຽງແຕ່ ຜະລິດຕະພັນ ສໍາລັບຂາຍໃຫ້ກັບຜູ້ບໍລິໂພກຄົນສຸດທ້າຍເທົ່ານັ້ນ ທີ່ຈໍາເປັນຕ້ອງໄດ້ຕິດສະຫຼາກ.
- ສໍາລັບຜະລິດຕະພັນອື່ນ, ການຕິດສະຫຼາກ ຫຼື ການໝາຍ ສາມາດຖືກແທນທີ່ ຫຼື ເພີ່ມຕື່ມ ດ້ວຍເອກະສານການຄ້າ.
- ເອກະສານຊ້ອນທ້າຍ V ທີ່ຄັດຕິດກັບ ລະບຽບການ ເລກທີ 1007/2001 ກໍານົດລາຍຊື່ ຜະລິດຕະພັນ 42 ລາຍການ ທີ່ບໍ່ຕ້ອງການ ການຕິດສະຫຼາກ ທີ່ບົ່ງບອກຊື່ ຫຼື ສ່ວນປະກອບ.

### ຜະລິດຕະພັນອື່ນໆ ທີ່ຖືກປະຕິບັດ ໃນລັກສະນະດຽວກັນ ກັບ ຜະລິດຕະພັນແຜ່ນແພ ສໍາລັບຈຸດປະສົງການຕິດສະຫຼາກ

ພາຍໃຕ້ ຂອບເຂດ ຂອງລະບຽບການ ທີ່ກ່າວມາຂ້າງເທິງນັ້ນ[95] ມີຜະລິດຕະພັນອື່ນໆ ທີ່ຍັງຈະຖືກປະຕິບັດ ໃນລັກສະນະດຽວກັນກັບ ຜະລິດຕະພັນແຜ່ນແພ, ດັ່ງທີ່ໄດ້ກໍານົດໄວ້ ຢູ່ໃນຮູບທີ 11. ເຖິງຢ່າງໃດກໍ່ຕາມ, ກົດລະບຽບເຫຼົ່ານີ້ ບໍ່ສາມາດມີຜົນນໍາໃຊ້ໄດ້ ກັບ ຜະລິດຕະພັນທີ່ຖືກປັບແຕ່ງ ທີ່ຖືກຜະລິດຂຶ້ນ ໂດຍ ຊ່າງຕັດຫຍິບ ທີ່ຮັບຈ້າງທົ່ວໄປ.[96]

### ສະຫຼາກລວມ (Inclusive label)

*ສະຫຼາກລວມ ໝາຍເຖິງ ການນໍາໃຊ້ສະຫຼາກດຽວ ສໍາລັບຜະລິດຕະພັນ ຫຼື ສ່ວນປະກອບແຜ່ນແພ ຫຼາຍອັນ, ແລະ ສາມາດນໍາໃຊ້ໄດ້ ເມື່ອ ຜະລິດຕະພັນ ຫຼື ສ່ວນປະກອບ ຂອງແຜ່ນແພ ທັງໝົດ ເປັນປະເພດ ແລະ ອົງປະກອບເສັ້ນໃຍດຽວກັນ. ສິ່ງດັ່ງກ່າວນີ້ ສາມາດມີຜົນນໍາໃຊ້ກັບ ຜະລິດຕະພັນແຜ່ນແພ ທີ່ລະບຸໄວ້ຢູ່ໃນລາຍຊື່ ຂອງ ເອກະສານຊ້ອນທ້າຍ* VI *ຂອງ ລະບຽບການ* 1007/2001:

- ຜ້າປູພື້ນ;
- ຜ້າໃຊ້ທໍາຄວາມສະອາດ;
- ໃຊ້ເຮັດຂອບ ແລະ ການຕັດແຕ່ງ;
- ເຄື່ອງຕົກແຕ່ງ;
- ສາຍແອວ;
- ສາຍ ຫຼື ເຊືອກມັດ;
- ເຄື່ອງນຸ່ງພາຍໃນຜູ້ຍິງທີ່ມີສາຍຜູກ;
- ເກີບ ແລະ ເຊືອກຜູກເກີບ;
- ເຊືອກຫໍ່ຂອງຂວັນ ຫຼື ເຊືອກທີ່ໃຊ້ຕັດໃນງານເປີດພິທີຕ່າງໆ;
- ສາຍເຊືອກທີ່ຍືດໄດ້;
- ໃຊ້ສໍາລັບການຫຸ້ມຫໍ່ໃໝ່ ທີ່ຈະຖືກຂາຍ;
- ເຊືອກຫຸ້ມຫໍ່ ແລະ ເຊືອກເສັ້ນສໍາລັບກະສິກໍາ; ເຊືອກເສັ້ນນ້ອຍ, ສາຍເຊືອກເສັ້ນໃຫຍ່ ແລະ ເຊືອກອື່ນໆ ທີ່ບໍ່ນອນຢູ່ໃນລາຍການ 37 ຂອງ ເອກະສານຊ້ອນທ້າຍ V (1);
- ຜ້າປູໂຕະ;
- ຜ້າເຊັດມື ຫຼື ເຊັດໜ້າ;
- ຕາໜ່າງເກົ້າຜົມ ແລະ ຕາໜ່າງປົກຜົມ;
- ກາລະບັດ ແລະ ໂບກາລະບັດ ສໍາລັບເດັກນ້ອຍ;
- ຜ້າກັນເປື້ອນ, ຊິບມື ແລະ ຜ້າເຊັດໂຕ;
- ດ້າຍສໍາລັບ ຫຍິບ, ສ້ອມ ແລະ ເຫຍັບປັກຖັກຮ້ອຍ ທີ່ຖືກສະເໜີ ເພື່ອຂາຍຍ່ອຍ ໃນປະລິມານໜ້ອຍ ໂດຍມີນໍ້າ ໜັກ ສຸດທິ 1 ກຣາມ ຫຼື ຕໍ່າກວ່າ; ແລະ
- ສາຍແພ ສໍາລັບຜ້າກັ້ງ ແລະ ຜ້າກັ້ງເປັນລັ້ນ ແລະ ປະຕູ ຫຼື ປ້ອງຢ້ຽມເປັນລັ້ນເປັນປ່ອງ.

ຜະລິດຕະພັນ ທີ່ຂາຍເປັນແມັດ ຈໍາເປັນຕ້ອງມີການຕິດສະຫຼາກ ສະເພາະແຕ່ຊິ້ນສ່ວນ ຫຼື ມ້ວນ ທີ່ສະເໜີຂາຍ.[97]

## b. ຄໍາແນະນໍາ ກ່ຽວກັບ ການຕິດສະຫຼາກ, ການໝາຍ ແລະ ການຄັດຕິດສະຫຼາກ ສໍາລັບຜະລິດຕະພັນແຜ່ນແພ

### ຊື່ ແລະ ອົງປະກອບເສັ້ນໄຍແຜນແພ

ກ່ຽວກັບ ຊື່ຂອງເສັ້ນໄຍແຜ່ນແພ, *ມີພຽງແຕ່ຊື່ເສັ້ນໄຍແຜ່ນແພ ທີ່ມີລາຍຊື່ ຢູ່ໃນເອກະສານຊ້ອນທ້າຍ I ຂອງ ລະບຽບການ (EU) 1007/2011 ເທົ່ານັ້ນ ທີ່ສາມາດນຳໃຊ້ ສໍາລັບ ລາຍລະອຽດ ກ່ຽວກັບ* ອົງປະກອບຂອງເສັ້ນໄຍ ໃນສະຫຼາກ.

**ຊື່ໃໝ່ ແມ່ນລະນໍາໃຊ້ໄດ້ຢ່າງຖືກຕ້ອງ ກໍຕໍ່ເມື່ອ ຖ້າວ່າ ເສັ້ນໄຍ ບໍ່ສາມາດລັດອອກເປັນກຸ່ມໃດເລີຍ ທີ່ມີຢູ່ໃນປັດຈຸບັນ.** ການເພີ່ມຊື່ເສັ້ນໄຍໃໝ່ ຕ້ອງການຄື ບັນດາເອກະສານຊ້ອນທ້າຍທີ່ກ່ຽວຂ້ອງ ຂອງ ລະບຽບການ (EU) 1007/2011 ຖືກປັບປຸງດັດແກ້. ສໍາລັບສິ່ງດັ່ງກ່າວຈະເກີດຂຶ້ນໄດ້, ຄະນະກໍາມະການເອີຣົບ ຕ້ອງລິເລີ່ມ ຂັ້ນຕອນການປັບປຸງແກ້ໄຂ, ແຕ່ຈະເຮັດເຊັ່ນນັ້ນໄດ້ ກໍຕໍ່ເມື່ອຢູ່ໃນກໍລະນີທີ່ມັນເປັນປະໂຫຍດ ທີ່ຈະປັບປຸງ ການປົກປ້ອງຜູ້ບໍລິໂພກ. ການຄ້າ ຜະລິດຕະພັນແຜ່ນແພ ແມ່ນຕ້ອງການໃຫ້ມີການ ຕິດສະຫຼາກ ຫຼື ໝາຍຜະລິດຕະພັນຂອງຕົນ ເພື່ອສະແດງໃຫ້ເຫັນເຖິງ ອົງປະກອບຂອງເສັ້ນໄຍ ໃນລັກສະນະທີ່ຖືກຕ້ອງ, ບໍ່ເຂົ້າໃຈຜິດ ແລະ ເຂົ້າໃຈງ່າຍ. ·

---

**ຮູບ 11: ຜະລິດຕະພັນອື່ນໆ ທີ່ຖືກຕິດສະຫຼາກ ເໝືອນກັບ ຜະລິດຕະພັນແຜ່ນແພ**




ນອກຈາກນັ້ນ, ຍັງມີຂໍ້ກໍາຄວາມຕ້ອງການ ອື່ນໆ ທີ່ພໍ່ຄ້າຢູ່ໃນ ສປປ ລາວ ຄວນຈະຮັບຮູ້:

- ສະຫຼາກ ທີ່ຊີ້ບອກໃຫ້ເຫັນ ວ່າ "100%", "ບໍລິສຸດ" ຫຼື "ທັງໝົດ" ທັງໝົດ ຕ້ອງປະກອບດ້ວຍ ເສັ້ນໄຍດຽວກັນ ເທົ່ານັ້ນ;[98]
- ຜະລິດຕະພັນແຜ່ນແພ ທີ່ມີເສັ້ນໄຍຫຼາຍຢ່າງ ຈະຕ້ອງໄດ້ຕິດສະຫຼາກ ຫຼື ໝາຍ ດ້ວຍຊື່ ແລະ ອັດຕາສ່ວນຮ້ອຍ ເປັນນໍ້າໜັກຂອງເສັ້ນໄຍທີ່ປະກອບຂຶ້ນທັງໝົດ ຕາມລໍາດັບໃຫຍ່ຫານ້ອຍ. ເສັ້ນໄຍທີ່ມີຢູ່ໃນລາຍຊື່ ຂອງ ເອກະສານຊ້ອນທ້າຍ I ຂອງລະບຽບການ 1007/2001, ຫຼື ເສັ້ນໄຍທີ່ກວມໜ້ອຍກວ່າ 5% ຂອງນໍ້າໜັກທັງໝົດ, ສາມາດ ຖືກຕິດສະຫຼາກເປັນ "ເສັ້ນໄຍອື່ນໆ", ຕາບໃດທີ່ອັດຕາສ່ວນຮ້ອຍທັງໝົດຂອງມັນ ທີ່ເປັນນໍ້າໜັກຍັງລວມຢູ່ນໍາ;[99]
- ຜະລິດຕະພັນແຜ່ນແພ ທີ່ປະກອບດ້ວຍ ສອງ ຫຼື ຫຼາຍກວ່າສອງອົງປະກອບແຜ່ນແພ, ທີ່ມີເນື້ອເສັ້ນໄຍ ທີ່ແຕກຕ່າງກັນ, ແມ່ນໃຫ້ໃສ່ ສະຫຼາກ ຫຼື ໝາຍ ລະບຸເນື້ອຂອງເສັ້ນໄຍແຜ່ນແພ ຂອງ ແຕ່ລະອົງປະກອບ;[100]
- 
- ເສັ້ນໄຍປະດັບ ແລະ ເສັ້ນໄຍ ທີ່ມີຜົນຕ້ານສະຖິດໄຟຟ້າ ແມ່ນບໍ່ເກີນ 7% ແລະ 2%, ຕາມລໍາດັບ, ຂອງນໍ້າໜັກ ຂອງ ຜະລິດຕະພັນບໍ່ຈໍາເປັນຕ້ອງຊີ້ບອກ ເນື້ອຂອງເສັ້ນໄຍ;[101]

- ສະຫຼາກ ຫຼື ເຄື່ອງໝາຍ ທີ່ລະບຸວ່າ "ປະກອບດ້ວຍ ພາກສ່ວນທີ່ບໍ່ແມ່ນແຜ່ນແພ ທີ່ມີແຫຼ່ງກຳເນີດມາຈາກສັດ: Contains *non-textile parts of animal origin*" ຕ້ອງໄດ້ສະແດງ ເມື່ອຜະລິດຕະພັນ ປະກອບດ້ວຍ ສ່ວນທີ່ບໍ່ແມ່ນແຜ່ນແພ ທີ່ມີແຫຼ່ງກຳເນີດມາຈາກສັດ (*non-textile parts of animal origin*);[102] ແລະ
- ສຳລັບຜະລິດຕະພັນແຜ່ນແພ ທີ່ມີຄວາມຫຍຸ້ງຍາກ ທີ່ຈະກຳນົດ ສ່ວນປະກອບຂອງເສັ້ນໄຍ, ຄຳວ່າ "ເສັ້ນໄຍປະສົມ" ຫຼື "ອົງປະກອບແຜ່ນແພທີ່ບໍ່ໄດ້ລະບຸ" ແມ່ນອະນຸຍາດໃຫ້ນຳໃຊ້ໄດ້.[103]

ເພື່ອທີ່ຈະປົກປ້ອງ ຜູ້ຜະລິດ ແລະ ເພື່ອແຈ້ງຜູ້ບໍລິໂພກ, ຄຳວ່າ "ຝ້າຍ" ແມ່ນສະຫງວນໄວ້ ສະເພາະສຳລັບ ເສັ້ນໄຍ ທີ່ໄດ້ມາຈາກ ໝາກຝ້າຍ (*Gossypium*).[104] ຄຳວ່າ "*ຝ້າຍ linen union*" ແມ່ນສະຫງວນໄວ້ ສຳລັບ ຜະລິດຕະພັນ ທີ່ມີເສັ້ນຝ້າຍສົດ ແລະ ເສັ້ນຕົ້ນແຟລັກສົດ, ຊຶ່ງວ່າ ໃນນັ້ນ, ອັດຕາສ່ວນຂອງຕົ້ນແຟລັກ (flax) ກວມຢ່າງໜ້ອຍ 40% ຂອງນ້ຳໜັກທັງໝົດຂອງເນື້ອຜ້າ.[105] ຢູ່ໃນສະຫຼາກ ຂອງ ຜະລິດຕະພັນແຜ່ນແພ, ຊື່ນີ້ ຕ້ອງໄດ້ມາພ້ອມກັບ ລາຍລະອຽດ ຂອງອົງປະກອບ.

#### ສະຫຼາກເກາະ

ອີງຕາມ ມາດຕາ 14(1) ຂອງລະບຽບການ (EU) 1007/2011, ການສະຫຼາກ ໄດ້ເກາະຕິດຢ່າງຄົງແກ່ນ, ແລະ ທັງ ການສະຫຼາກ ແລະ ການໝາຍ ຕ້ອງທົນທານ, ອ່ານງ່າຍ ເປັນພາສາທາງການ ຂອງປະເທດສະມາຊິກ EU ທີ່ນຳເຂົ້າ, ແນມເຫັນງ່າຍ ແລະ ເຂົ້າເຖິງງ່າຍ. ມີພຽງອັກສອນຫຍໍ້ອັນດຽວ ທີ່ອະນຸຍາດໃຫ້ມີຢູ່ໃນການສະຫຼາກ ແມ່ນ ລະຫັດປຸງແຕ່ງທາງກົນຈັກ ແລະ ອັກສອນຫຍໍ້ ທີ່ຖືກກຳນົດ ຢູ່ໃນ ມາດຕະຖານສາກົນ.

#### ຂໍ້ກຳນົດພິເສດ ສຳລັບ ບາງຜະລິດຕະພັນແຜ່ນແພ

*ຂໍ້ກຳນົດພິເສດ ສຳລັບ ການຕິດສະຫຼາກ ແລະ ການໝາຍ ບາງຜະລິດຕະພັນແຜ່ນແພ ແມ່ນຖືກກຳນົດໄວ້ຢູ່ໃນ ເອກະສານຊ້ອນທ້າຍ*IV *ຂອງລະບຽບການ* 1007/2011. ຜະລິດຕະພັນ ທີ່ຍົກໃຫ້ເຫັນ ຢູ່ໃນ ເອກະສານຊ້ອນທ້າຍ IV ປະກອບມີ ຜະລິດຕະພັນປະເພດຂອງຮັດໜຸ່ນ, ແຜ່ນແພປະເພດພົມລາຍ, ແຜ່ນແພທີ່ປັກແສ່ວ, ເສັ້ນດ້າຍ ທີ່ປະກອບດ້ວຍ ແກ່ນ ແລະ ເສັ້ນປົກແກ່ນ ທີ່ເຮັດຈາກ ເສັ້ນໄຍທີ່ແຕກຕ່າງກັນ, ແຜ່ນແພກຳມະຢີ່ ແລະ ແພປະສົມ (ຫຼື ຜະລິດຕະພັນ ທີ່ຄ້າຍຄືກັບ ແພກຳມະຢີ່ ແລະ ແພປະສົມ) ແລະ ບາງຜ້າພົມປູພື້ນ ທີ່ມີເສັ້ນໄຍຫຼາຍຊະນິດ.

## c. ທາງເລືອກ ສຳລັບ ລວມເອົາ ການຕິດສະຫຼາກ ສິ່ງແວດລ້ອມ

ຢູ່ໃນສະຫະພາບເອີຣົບ, Ecolabel ແມ່ນເປັນການໝາຍທາງການ ສຳລັບຜະລິດຕະພັນ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມຕ່ຳສຸດ ຢູ່ໃນກຸ່ມຜະລິດຕະພັນສະເພາະ. ມັນເລັງໃສ່ ເພື່ອສົ່ງເສີມ ການປົກປັກຮັກສາ ສິ່ງແວດລ້ອມ, ພ້ອມທັງຊ່ວຍ ຜູ້ບໍລິໂພກ ໃນການລະບຸຜະລິດຕະພັນເຫຼົ່ານັ້ນ ທີ່ປະກອບສ່ວນອັນສຳຄັນ ເຂົ້າໃນ ການປັບປຸງ ທີ່ກ່ຽວຂ້ອງກັບ ດ້ານສິ່ງແວດລ້ອມທີ່ສຳຄັນ. **ການມີສ່ວນຮ່ວມ ຢູ່ໃນແຜນງານ ແມ່ນເປັນຄວາມສະໝັກໃຈ**, ຊຶ່ງໝາຍຄວາມວ່າ ຜະລິດຕະພັນ ສາມາດຖືກຂາຍ ພາຍໃນຕະຫຼາດ EU ໂດຍບໍ່ມີໂລໂກ້ Eco-label ແລະ ບໍ່ມີກົດລະບຽບ ທີ່ຕ້ອງການໃຫ້ພໍ່ຄ້ານຳໃຊ້ໂລໂກ້.

#### ການລວມເອົາ EU Ecolabel

ເມື່ອຜະລິດຕະພັນ ລວມຢູ່ໃນ ຄຳນິຍາມຂອງກຸ່ມຜະລິດຕະພັນ ແລະ ຖືກຕ້ອງຕາມມາດຖານເງື່ອນໄຂ ຂອງ Ecolabel, ຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ໃຫ້ບໍລິການ, ພໍ່ຄ້າ ຫຼື ຜູ້ຂາຍຍ່ອຍ ທີ່ຕ້ອງການວາງຂາຍຜະລິດຕະພັນຂອງຕົນໃນຕະຫຼາດ ຢູ່ ສະຫະພາບເອີຣົບ, ສາມາດສະເໜີຂໍ Ecolabel ໄດ້.[106] ຜູ້ຜະລິດ ຜະລິດຕະພັນແຜ່ນແພ ທີ່ຕ້ອງການ ນຳໃຊ້ EU Ecolabel ກັບ ຜະລິດຕະພັນຂອງຕົນ ຄວນກວດກາ ເງື່ອນໄຂມາດຖານອັນສະເພາະ.[107]

**ການສະເໜີຂໍ ແລະ ການນໍາໃຊ້ EU Ecolabel**

ໃບສະເໜີ ຈະຕ້ອງສົ່ງໄປຫາ ໜ່ວຍງານທີ່ມີສິດອໍານາດ ຂອງ ປະເທດທີ່ເປັນສະມາຊິກ ສະຫະພາບເອີຣົບ ໃດໜຶ່ງ ບ່ອນທີ່ຈະວາງຜະລິດຕະພັນ, ຫຼື ບ່ອນທີ່ໄດ້ວາງຜະລິດຕະພັນໄວ້ແລ້ວ ໃນຕະຫຼາດ.

ໃບສະເໜີ ຕ້ອງປະກອບມີ ໝົດທຸກເອກະສານທີ່ກ່ຽວຂ້ອງ ເພື່ອພິສູດວ່າ ຜະລິດຕະພັນ ແມ່ນຖືກຕ້ອງສອດຄ່ອງກັບ ມາດຖານເງື່ອນໄຂ ດ້ານນິເວດວິທະຍາ ແລະ ດ້ານການທໍາງານ. ໜ່ວຍງານທີ່ມີສ◌ິດອໍານາດ ຈະແຈ້ງໃຫ້ ຜູ້ສະເໜ◌ີ ຮູ້ ກ່ຽວກັບບັນດາເອກະສານທີ່ຈໍາເປັນທີ່ຈະຕ້ອງສົ່ງ, ກ່ຽວກັບຜົນຂອງການທົດສອບ ທີ່ຈະຕ້ອງໄດ້ຖືກສະໜອງ ແລະ ວິທີດໍາເນ◌ີນການ. ຖ້າການສະເໜີ ປະສົບຜົນສໍາເລັດ, ໜ່ວຍງານທີ່ມີສິດອໍານາດ ຈະມອບສັນຍາ ໃຫ້ກັບ ຜູ້ສະເໜີ ທີ່ປະກອບດ້ວຍ ຂໍ້ກໍານົດການນໍາໃຊ້ ກາສະຫຼາກ.

ຜະລິດຕະພັນ Ecolabel ສາມາດວາງຂາຍ ຢູ່ໃນ ທຸກປະເທດທີ່ເປັນສະມາຊິກ ຂອງ ສະຫະພາບເອີຣົບ. ການສະເໜີຂໍ ການມອບ Ecolabel ແມ່ນຂຶ້ນກັບ ການຈ່າຍຄ່າທໍານຽມ.ນອກຈາກນັ້ນ, ກໍມີຄ່າທໍານຽມປະຈໍາປີ ສໍາລັບ ການນໍາໃຊ້ກາສະຫຼາກ. ຂໍ້ມູນລາຍລະອຽດ ກ່ຽວກັບ ມາດຖານເງື່ອນໄຂ ໃນປັດຈຸບັນ ສາມາດຄົ້ນຫາໄດ້ ທີ່ www.ecolabel.eu.

---

**ຮູບ 12: ຄໍາແນະນໍາ ກ່ຽວກັບ ການຕິດສະຫຼາກ ສິ່ງແວດລ້ອມ**

- The official mark in the EU for products with the lowest environmental impact is the *Ecolabel*.
- The use of the *Ecolabel* scheme **is not mandatory**.
- For the use of the EU *Ecolabel*, exporters of textile products must submit an application including relevant documents proving that the product complies with the ecological and performance criteria.
- Textile products' manufacturers wishing to apply the EU Ecolabel to their products should check the specific criteria.

## vi. ຂໍ້ມູນເພີ່ມຕື່ມ/ ການຕິດຕໍ່ ທີ່ສໍາຄັນ

ສໍາລັບຂໍ້ມູນເພີ່ມຕື່ມ ກ່ຽວກັບອຸດສາຫະກໍາແຜ່ນແພ ແລະ ແຟຊັ່ນ ຢູ່ໃນສະຫະພາບເອີຣົບ, EC ສະໜອງຂໍ້ມູນ ດັ່ງຕໍ່ໄປນີ້:

| ຂໍ້ມູນກ່ຽວກັບ: | ລິ້ງ |
|---|---|
| **ອຸດສາຫະກໍາແຜ່ນແພ** | https://ec.europa.eu/growth/sectors/fashion/textiles-clothing_en |
| **ອຸດສາຫະກໍາ ແຟຊັ່ນ ແລະ ໄຮເອັນ** | https://ec.europa.eu/growth/sectors/fashion/high-end-industries_en |
| **ນິຕິກໍາ ທີ່ກ່ຽວຂ້ອງ ສໍາລັບ ແຜ່ນແພ** | https://ec.europa.eu/growth/sectors/fashion/textiles-clothing/legisla-tion_en<br>https://ec.europa.eu/growth/sectors/fashion/textiles-clothing/legisla-tion/other_en |

ສໍາລັບຂໍ້ມູນເພີ່ມຕື່ມ ກ່ຽວກັບ ສະມາຄົມທຸລະກິດ ແລະ ໜ່ວຍງານທີ່ກ່ຽວຂ້ອງອື່ນ, ໃນລະດັບພາກພື້ນ ແລະ ລະດັບປະເທດ, ໃຫ້ອີງຕາມຢູ່ລຸ່ມນີ້:

| ສະຖາບັນ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| ສະຫະພັນ ເຄື່ອງນຸ່ງຫົ່ມ ແລະ ແຜ່ນແພ ແຫ່ງ ທະວີບເອີຣົບ (EURATEX) | **ສະຫະພັນ ເຄື່ອງນຸ່ງຫົ່ມ ແລະ ແຜ່ນແພ ແຫ່ງທະວີບເອີຣົບ (EURATEX)** ເປັນຕົວແທນ ແກ່ ຜົນປະໂຫຍດ ຂອງ ອຸດສາຫະກຳ ແຜ່ນແພ ແລະ ເຄື່ອງນຸ່ງຮົ່ມ ຂອງເອີຣົບ ໃນລະດັບທະວີບເອີຣົບ. ສະຫະພັນແຫ່ງຊາດ EURATEX ເປັນຕົວແທນ ແກ່ ປະມານ 160,000 ບໍລິສັດ ຢູ່ໃນ EU ໂດຍມີ ມູນຄ່າຜົນປະກອບການ 162 ຕື້ ເອີໂຣ ແລະ ມີລູກຈ້າງ ຈຳນວນ 1.5 ລ້ານຄົນ. ນັບຕັ້ງແຕ່ ປີ 2008, ສະຫະພັນ EURATEX ແມ່ນເປັນສະມາຄົມທີ່ຖືກຈົດທະບຽນ ຕັ້ງຢູ່ທີ່ ນະຄອນບຣາໂຊ ແລະ, ໃນປີ 2010, ມັນໄດ້ກາຍເປັນ ອົງການສາກົນທີ່ບໍ່ຫວັງຜົນກຳໄລ (AISBL). | Rue Belliard, 40<br>1040 Brussels<br>Belgium<br><br>ໂທ: +32 2 285 48 83<br>ອີເມວ: info@euratex.eu<br>ເວັບໄຊ: www.euratex.eu |
| ສະມາຄົມ ແຟຊັ່ນ ແຫ່ງພາກພື້ນນໍດິກ **(NFA)** | **ສະມາຄົມ ແຟຊັ່ນ ແຫ່ງພາກພື້ນນໍດິກ (NFA) ໄດ້ຖືກເປີດໂຕ ໃນປີ** 2008 ໂດຍ ອົງການແຟຊັ່ນ 5 ອົງການ ຂອງພາກພື້ນນໍດິກ ໂດຍມີຈຸດປະສົງຫຼັກ ໃນການ ລວມຕົວ ອຸດສາຫະກຳແຟຊັ່ນ ຂອງພາກພື້ນນໍດິກ ແລະ ເລີ່ມລິງມື ໄປພ້ອມກັນ ຢູ່ໃນຂະບວນການເຮັດວຽກ ກັບ ແລະ ຈັດຕັ້ງປະຕິບັດ ບັນດາຫຼັກການ ແຟຊັ່ນ ແບບຍືນ ນານ. ຜ່ານທາງ ສະມາຄົມ NFA, 10 ອົງການຈັດຕັ້ງແຟເຊັ່ນ ແຫ່ງ ພາກພື້ນນໍດິກ ເລັງໃສ່ເພື່ອຮັດແໜ້ນ ການຮ່ວມມືທາງຍຸດທະສາດ ຂອງເຂົາເຈົ້າ. 5 ປະເທດ ແຫ່ງພາກພື້ນນໍດິກ ແມ່ນເປັນທີ່ຮູ້ຈັກໃນທົ່ວໂລກ ສຳລັບການເຄື່ອນໄຫວ ທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ, ແນວທາງປະຕິບັດ ຕາມໜ້າທີ່ ຕໍ່ ເຄື່ອງນຸ່ງຮົ່ມ ແລະ ລັກສະນະແຟເຊັ່ນທີ່ສາມາດເຂົ້າເຖິງໄດ້ ທີ່ໄດ້ຖືກແບ່ງປັນ. | Nordic Fashion Association (NFA)<br>Thorvald Meyers Gate 51<br>0555 Oslo<br>Norway<br><br>ໂທ: +47 486 09 101<br>ອີເມວ: hello@nordicfashionassociation.com<br>ເວັບໄຊ: www.nordicfashionassociation.com |

| ສະຖາບັນ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| The Federazione Imprese Sistema Moda Italia – Federazione Tessile E Moda (ສະຫະພັນ ບໍລິສັດແຜ່ນແພ ແລະ ແຟຊັນ ແຫ່ງປະເທດ ອີຕາລີ) | **Federazione Imprese Sistema Moda Italia (SMI)** ແມ່ນເປັນໜຶ່ງ ໃນຈໍານວນອົງການຈັດຕັ້ງທີ່ໃຫຍ່ທີ່ສຸດ ທີ່ເປັນຕົວແທນ ແກ່ ອຸດສາຫະກໍາ ແຜນແພ ແລະ ແຟຊັນ. ມັນເປັນຕົວແທນ ແກ່ ຕ່ອງໂສ້ການສະໜອງທັງໝົດ ໃນລະດັບຊາດ ແລະ ສາກົນ, ແລະ ຮັກສາສາຍພົວພັນກັບ ອົງການຈັດຕັ້ງຂອງລັດ, ອົງການບໍລິຫານລັດ, ແລະ ບັນດາອົງການຈັດຕັ້ງທາງເສດຖະກິດ, ການເມືອງ, ແຮງງານ ແລະ ສັງຄົມ. ສະຫະພັນ ສົ່ງເສີມຜົນປະໂຫຍດ ຂອງສະມາຊິກ ຂອງຕົນ ແລະ ເປັນຕົວແທນ ແກ່ ອຸດສາຫະກໍາ ແຜ່ນແພ ແລະ ເຄື່ອງນຸ່ງຮົ່ມ ຕໍ່ບັນຫາ ທີ່ພົວພັນກັບ ການຄ້າສາກົນ, ພາສີ ແລະ ໂກຕ້າການຄ້າ, ລະບຽບການ ເງິນຕາ ແລະ ພາສີ. ມັນສະໜອງການບໍລິການ ຝຶກອົບຮົມ ແລະ ໃຫ້ຄໍາປຶກສາ ແກ່ ສະມາຊິກຂອງຕົນ ແລະ ເປັນແຫຼ່ງຂໍ້ມູນໂຕເລກຂະໜາດໃຫຍ່ ໃນດ້ານເສດຖະກິດ ແລະ ສະຖິຕິ. ຄວາມພະຍາຍາມອັນໃຫຍ່ ທີ່ສະຫະພັນ ອຸທິດໃຫ້ແມ່ນການສົ່ງເສີມ ຜະລິດຕະພັນແຜ່ນແພ ທີ່ເຮັດມາຈາກຝ້າຍ ຢູ່ທີ່ ການສະແດງແຟຊັນ. | SMI - ATI<br>Via A. Riva Villasanta 3<br>Milano, Italy<br><br>ໂທ: +39 2 64 11 90 01<br>ອີເມວ: [direzione@sistema-modaitalia.it](mailto:direzione@sistemamodaitalia.it)<br>[crisfava@bravocomunica-zione.com](mailto:crisfava@bravocomunicazione.com)<br>ເວັບໄຊ: [https://sistemamodaita-lia.com/it/](https://sistemamodaitalia.com/it/) |
| **The Association Française Cotonnière** (ສະມາຄົມຝ້າຍແຫ່ງປະເທດຝຣັ່ງ) | **Association Française Cotonnière (AFCOT)** ໄດ້ກໍ່ຕັ້ງຂຶ້ນມາ ເປັນເວລາຫຼາຍກວ່າ 100 ປີ ແລະ ມີສະມາຊິກປະມານ 80 ຄົນ, ລວມທັງບັນດາບໍລິສັດ ທີ່ຕັ້ງຢູ່ໃນ ປະເທດຝຣັ່ງ ແລະ ຢູ່ປະເທດອື່ນໆອີກ. ປະມາຊິກ ປະກອບມີ ຜູ້ປະກອບການຊື້ຂາຍຝ້າຍ, ຕົວແທນ, ຜູ້ຂົນສົ່ງ, ຜູ້ຄວບຄຸມ, ອົງການຈັດຕັ້ງຂົນສົ່ງ, ທ່າເຮືອ, ທະນາຄານ ແລະ ຜູ້ຜະລິດກໍ້ຝ້າຍ. ສະມາຄົມ AFCOT ຕີແຜ່ ກົດລະບຽບ ທີ່ມີຊື່ວ່າ *Le Havre General Rules*, ທີ່ຄວບຄຸມ ບັນດາສັນຍາ ການຂາຍຝ້າຍ ແລະ ການໄກ່ເກ່ຍຂໍ້ຂັດແຍ່ງ. ສະມາຄົມ AFCOT ມີຫ້ອງແລັບ ທີ່ປະກອບດ້ວຍ ອຸປະກອນທົດລອງເສັ້ນໄຍ. | AFCOT<br>BP 143<br>76051 Le Havre CEDEX<br>France<br><br>ໂທ: +31 2 35 41 20 36<br>ເວັບໄຊ: [www.afcot.org](http://www.afcot.org) |

## 3.2 ຜະລິດຕະພັນປະເພດເກີບ

### i. ບາດກ້າວຕົ້ນຕໍ ສໍາລັບ ສົ່ງອອກ ຜະລິດຕະພັນປະເພດເກີບ ໄປຫາ EU



**ປະຕິບັດຕາມ ບາດກ້າວ ທີ່ເປັນຂໍ້ກໍານົດ ຫຼື ເປັນຄວາມຕ້ອງການ ຢູ່ ສປປ**

- ຈົດທະບຽນ ວິສາຫະກິດ ໂດຍອີງຕາມ ບັນດາຂັ້ນຕອນທີ່ໄດ້ກໍານົດໄວ້
- ກະກຽມເອກະສານສົ່ງອອກ
- ສະເໜີຂໍ ແລະ ຮັບເອົາ ເອກະສານອະນຸຍາດສົ່ງອອກ
- ຕື່ມແບບຟອມ ລະບົບ ASYCUDA ສໍາລັບ ການສະສາງພາສີ
- ກວດກາເບິ່ງ ການແຈ້ງການ ທີ່ເປັນນິຕິກໍາ ກ່ຽວກັບ ດ້ານໃດດ້ານໜຶ່ງ ທີ່ພົວພັນກັບ ການສົ່ງອອກ (ເຊັ່ນ ມາດຕະການ ສຸຂາພິບານ ແລະ ສຸຂານາໄມພືດ), ແລະ ທີ່ພົວພັນກັບ ຜະລິດຕະພັນໃດໜຶ່ງ



**ປະຕິບັດຕາມ ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານການນໍາເຂົ້າ ຂອງ EU:**

- ກວດກາ ແລະ ຮັບປະກັນ ໃຫ້ມີຄວາມຖືກຕ້ອງສອດຄ່ອງ ກັບ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດຂອງສິນຄ້າ ທີ່ມີຜົນນໍາໃຊ້.
- ຮັບປະກັນ ໃຫ້ມີການຈົດທະບຽນກັບ ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງສະຫະພາບເອີຣົບ (REX)
- ສະເໜີຂໍ ແລະ ຮັບເອົາ ໃບຢັ້ງຢືນສຸຂານາໄມພືດ ສໍາລັບ ຜະລິດຕະພັນ ທີ່ມີພື້ນຖານມາຈາກພືດ



**ປະຕິບັດຕາມ ທຸກກົດລະບຽບ ສະເພາະຜະລິດຕະພັນ ທີ່ມີຜົນນໍາໃຊ້ກັບ ຜະລິດຕະພັນ ທີ່ຈະຖືກວາງຂາຍ ໃນຕະຫຼາດ ຂອງ EU:**

- ກວດກາເບິ່ງ ບັນດາກົດລະບຽບ ທີ່ກ່ຽວຂ້ອງກັບ ການຕິດສະຫຼາກ
- ກວດກາເບິ່ງ ບັນດາກົດລະບຽບພິເສດ ສໍາລັບ ເກີບ ທີ່ນໍາໃຊ້ໂດຍ ບຸກຄົນ ສໍາລັບຈຸດປະສົງ ດ້ານສຸຂະພາບ ແລະ ຄວາມປອດໄພ ຢູ່ໃນສະຖານທີ່ເຮັດວຽກ
- ກວດກາເບິ່ງ ຕົວເລືອກ ການຕິດສະຫຼາກສິ່ງແວດລ້ອມ
- ກວດກາເບິ່ງ ຂໍ້ຈໍາກັດ ວ່າດ້ວຍການນໍາໃຊ້ ສານເຄມີບາງຢ່າງ ຢູ່ໃນຜະລິດຕະພັນແຜ່ນແພ
- ກວດກາເບິ່ງ ຂໍ້ຈໍາກັດພິເສດ ທີ່ພົວພັນກັບ ເກີບໜັງ
- ກວດກາເບິ່ງ ຂໍ້ກໍານົດ ຫຼື ຄວາມຕ້ອງການ ທີ່ກ່ຽວຂ້ອງກັບ ອາຍເຮືອນແກ້ວພຼູອໍຣາຍ (fluorinate greenhouse gases) ສໍາລັບເກີບທີ່ນໍາເຂົ້າ EU

## ii. ເນື້ອໃນ

ໃນປີ 2019, ການສົ່ງອອກ "ເກີບ, ໝວກ ແລະ ຜະລິດຕະພັນປະເພດທີ່ໃສ່ບົນຫົວ" ຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ ມີມູນຄ່າ 19 ລ້ານເອີໂຣ, ຊຶ່ງເທົ່າກັບ 6.6% ຂອງການສົ່ງອອກທັງໝົດ ໄປ EU,[108] ຊຶ່ງເປັນໜຶ່ງໃນຫ້າການສົ່ງອອກ ອັນດັບຕົ້ນໆ ທີ່ມາຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ. ມູນຄ່າການສົ່ງອອກ "ເກີບ, ໝວກ ແລະ ຜະລິດຕະພັນປະເພດທີ່ໃສ່ບົນຫົວ" ຈາກ ສປປ ລາວ ໄປຫາ EU ສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ຈາກ 4 ລ້ານເອີໂຣ ໃນປີ 2016 ໄປເປັນ 19 ລ້ານເອີໂຣ ໃນປີ 2019.

ຂະແໜງການເກີບ ຈາກ ສປປ ລາວ ສະແດງໃຫ້ເຫັນ ທ່າແຮງການສົ່ງອອກທີ່ເຂັ້ມແຂງ. ຂະແໜງການດັ່ງກ່າວ ແມ່ນຢູ່ພາຍໃຕ້ ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+ ຂອງ ສະຫະພາບເອີຣົບ, ຊຶ່ງໝາຍຄວາມວ່າ ຜູ້ສົ່ງອອກເກີບ ຂອງ ສປປ ລາວ ອາດຈະສືບຕໍ່ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງຕະຫຼາດ ສະຫະພາບເອີຣົບ ດ້ວຍສິດທິພິເສດ ເຖິງແມ່ນວ່າ ຈະຫຼຸດຈາກໝົດກຳນົດ ການຢູ່ໃນສະຖານະພາບ EBA ຂອງ ສປປ ລາວ ກໍຕາມ. ເຖິງຢ່າງໃດກໍ່ຕາມ, ຜູ້ສົ່ງອອກ ຄວນຈະຮັບຮູ້ວ່າ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ທີ່ເຂັ້ມງວດຂຶ້ນ ອາດຈະມີຜົນນຳໃຊ້ ພາຍໃຕ້ ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+.

ຕາຕະລາງ 10 ແມ່ນເປັນພາບລວມ ຂອງບັນດາປະເທດຕົ້ນຕໍ ທີ່ເປັນສະມາຊິກ EU ທີ່ ສປປ ລາວ ສົ່ງອອກ ຜະລິດຕະພັນເກີບ. ບັນດາປະເທດຕົ້ນຕໍອື່ນໆ ທີ່ສົ່ງອອກ ຜະລິດຕະພັນເກີບ ໄປຫາ EU ລວມມີ ປະເທດຈີນ, ຫວຽດນາມ, ອິນໂດເນເຊຍ, ກຳປູເຈຍ, ພະມ້າ ແລະ ຟີລິປິນ (ໃຫ້ເບິ່ງ ຕາຕະລາງ 11).

**ຕາຕະລາງ 10: ການສົ່ງອອກ ຂອງ ສປປ ລາວ ໄປຫາທົ່ວໂລກ ແລະ ບາງປະເທດ ທີ່ເປັນສະມາຊິກ EU ໃນປີ 2019**[109]

| ບົດ HS | ຂະແໜງການ | ການສົ່ງອອກ ຂອງ ສປປ ລາວ ໄປຫາ ໝົດທຸກປາຍທາງ (ເປັນເງິນໂດລາ) | ການສົ່ງອອກ ໄປຫາ ບາງປະເທດ ທີ່ເປັນສະມາຊິກ EU (ເປັນເງິນໂດລາ) | |
|---|---|---|---|---|
| **ບົດທີ 64** | ເກີບ, ຜ້າຫຸ້ມເກີບ ແລະ ສິ່ງທີ່ຄ້າຍໆກັນ; ສ່ວນຂອງອົງປະກອບດັ່ງກ່າວ | 73,142,000 | ສະຫະລາດຊະອານາຈັກອັງກິດ | 8,142,000 |
| | | | ໂຮນລັງ | 7,196,000 |
| | | | ເຢຍລະມັນ | 4,266,000 |
| | | | ອີຕາລີ | 1,104,000 |
| | | | ໂປໂລຍ | 1,095,000 |

**ຕາຕະລາງ 11: ປະເທດຕົ້ນຕໍ ທີ່ເປັນແຫຼ່ງກຳເນີດ ຂອງການສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019**[110]

| ບົດ HS | ຂະແໜງການ | ປະເທດ | ມູນຄ່ານຳເຂົ້າ ໄປໃນ EU (ເປັນເງິນເອີໂຣ) |
|---|---|---|---|
| **ບົດທີ 64** | ເກີບ, ຜ້າຫຸ້ມເກີບ ແລະ ສິ່ງທີ່ຄ້າຍກັນ/; ສ່ວນຂອງອົງປະກອບດັ່ງກ່າວ | ຈີນ | 9,054,117,727 |
| | | ຫວຽດນາມ | 4,461,895,004 |
| | | ອິນໂດເນເຊຍ | 1,562,782,214 |
| | | ກຳປູເຈຍ | 775,947,069 |
| | | ພະມ້າ | 177,334,360 |
| | | ຟີລິປິນ | 81,375,384 |
| | | **ສປປ ລາວ** | **28,592,612** |

## iii. ກົດລະບຽບ ວິຊາການ ທີ່ມີຜົນນຳໃຊ້ກັບ ຜະລິດຕະພັນປະເພດເກີບ

### a) ພາສີ ສຳລັບ ການສົ່ງອອກເກີບ ພາຍໃຕ້ EBA

ພາຍໃຕ້ແຜນງານ EBA, ສິນຄ້າທັງໝົດ ລວມທັງເກີດ ເຂົ້າໄປສູ່ການປອດພາສີ ຂອງ EU.

### b) ກົດລະບຽບ ວ່າດ້ວຍ ຄວາມຕ້ອງການ ດ້ານແຫຼ່ງກຳເນີດ ສຳລັບການສົ່ງອອກຜະລິດຕະພັນປະເພດເກີບ ຈາກ ສປປ ລາວ

ດັ່ງທີ່ໄດ້ອະທິບາຍໄວ້ ຢູ່ໃນໝວດ 2.2 (ii), ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດສິນຄ້າ ພາຍໃຕ້ ລະບຽບການ GSP ໃຫ້ຂໍ້ສັງເກດວ່າ, ເພື່ອທີ່ຈະໃຫ້ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດທາງພາສີ, ຜະລິດຕະພັນ **ທີ່ອ້າງວ່າ** ຈະໄດ້ຮັບສິດທິພິເສດທາງພາສີ **ຕ້ອງມີແຫຼ່ງກຳເນີດມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ.**[111] ຜະລິດຕະພັນ ຖືວ່າ ມີແຫຼ່ງກຳເນີດ ມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ ເມື່ອຜະລິດຕະພັນດັ່ງກ່າວ ໄດ້ຮັບຊິ້ນສ່ວນທັງໝົດ ຢູ່ໃນປະເທດນັ້ນ ຫຼື ມີການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ຢ່າງພຽງພໍ ຢູ່ໃນປະເທດນັ້ນ.

---

*ສຳລັບຜະລິດຕະພັນປະເພດເກີບ, ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ແມ່ນຖືກກຳນົດອອກ ຢູ່ໃນພາກທີ II ຂອງ ເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງຄະນະກຳມະການ (EU) 2015/2446.*[112]

*ເອກະສານຊ້ອນທ້າຍ 22-03 ຖືກຈັດອອກເປັນ 3 ຖັນ ດັ່ງຢູ່ໃນຕາຕະລາງ 12.*

---

**ຕາຕະລາງ 12: ຂໍ້ມູນຄັດຈ້ອນມາຈາກ ເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງ ຄະນະກຳມະການ (EU) 2015/2446 ສຳລັບຜະລິດຕະພັນປະເພດເກີດ**

| ຫົວຂໍ້ ລະບົບທີ່ສອດຄ່ອງກົມກຽວ | ລາຍລະອຽດ ຂອງຜະລິດຕະພັນ | ການດຳເນີນງານ ທີ່ໄດ້ຕາມເງື່ອນໄຂ (ການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ດ້ວຍວັດສະດຸ ທີ່ມີແຫຼ່ງກຳເນີດຈາກບ່ອນອື່ນ ທີ່ໃຫ້ສະຖານະພາບ ວ່າມີແຫຼ່ງກຳເນີດຂອງສິນຄ້າຢູ່ພາຍໃນປະເທດ) |
|---|---|---|
| **ບົດທີ 64 ຜ່ານມາ** | ຜະລິດຕະພັນປະເພດເກີບ, ຜ້າຫຸ້ມເກີບ ແລະ ຊິ້ນສ່ວນທີ່ຄ້າຍຄືກັນ ຂອງ ອົງປະກອບດັ່ງກ່າວ | ຜະລິດຈາກ ວັດສະດຸ ທີ່ມາຈາກທຸກຫົວຂໍ້ (Heading), ຍົກເວັ້ນ ຈາກການປະກອບສ່ວນເທິງຫົວຂອງເກີບ ທີ່ຕໍ່ກັບແຜ່ນຮອງຕີນດ້ານໃນ ຫຼື ອົງປະກອບອື່ນໆ ຂອງພື້ນເກີບ ທີ່ມາຈາກຫົວຂໍ້ (Heading) 6406. |
| **6406** | ຊິ້ນສ່ວນ ຂອງ ເກີບ (ທີ່ລວມມີ ສ່ວນເທິງຫົວຂອງເກີບ, ມັນຕິດ ຫຼື ບໍ່ຕິດກັບ ພື້ນເກີບ ນອກຈາກ ພື້ນດ້ານນອກ); ພື້ນດ້ານໃນທີ່ສາມາດເອົາອອກເອົາເຂົ້າໄດ້, ບ່ອນຮອງສົ້ນຕີນ ແລະ ອົງປະກອບທີ່ຄ້າຍຄືກັນ, ຜ້າຫຸ້ມເກີບ, ສິ່ງຮັດໜຸ່ນ ແລະ ຊິ້ນສ່ວນທີ່ຄ້າຍໆກັນ, ແລະ ຂອງຊິ້ນສ່ວນ ທີ່ຫາກໍກ່າວເຖິງ | ຜະລິດຈາກ ວັດສະດຸ ທີ່ມາຈາກທຸກຫົວຂໍ້ (Heading), ຍົກເວັ້ນອັນທີ່ເປັນຂອງຜະລິດຕະພັນ. |

ຖ້າເວົ້າແບບງ່າຍໆ, ສຳລັບຜູ້ສົ່ງອອກ ຈາກ ສປປ ລາວ, ຖັນທີ 3 ລະບຸ ການດຳເນີນງານທີ່ໄດ້ຕາມເງື່ອນໄຂຕໍ່າສຸດ ທີ່ຈຳເປັນ ສຳລັບວັດຖຸທີ່ບໍ່ໄດ້ມີແຫຼ່ງກຳເນີດມາຈາກ ສປປ ລາວ ເພື່ອຖືວ່າມີແຫຼ່ງກຳເນີດ ມາຈາກ ສປປ ລາວ ສຳລັບຈຸດປະສົງ ຂອງ ແຜນງານ EBA.

ສຳລັບສາທິດ:

**Ex *ບົດ* 64:**

| | | |
|---|---|---|
| ເກີບທີ່ມາຈາກ ສປປ ລາວ ທີ່ປະກອບດ້ວຍ ວັດສະດຸ ທີ່ບໍ່ມີແຫຼ່ງກໍາເນີດ ຢູ່ ສປປ ລາວ | **ເພື່ອໃຫ້ຖືວ່າມີແຫຼ່ງກໍາເນີດຢູ່ໃນ ສປປ ລາວ** | ໄດ້ກໍານົດ ວັດສະດຸທີ່ມີແຫຼ່ງກໍາເນີດມາຈາກບ່ອນອື່ນ ຖືກນໍາໃຊ້ ໃນດ້ານໃດໜຶ່ງ ຂອງ "ວຽກການຜະລິດ" ແລະ "ປຸງແຕ່ງ" ຜະລິດຕະພັນສຸດທ້າຍ – ຍົກເວັ້ນ ສໍາລັບ ການປະກອບສ່ວນເທິງຫົວເກີບ ທີ່ຕິດຢູ່ທາງໜ້າ ຂອງ ພື້ນດ້ານໃນ ຫຼື ອົງປະກອບພື້ນອື່ນໆ ຂອງ ຫົວຂໍ້ 6406. |

**ລະຫັດ HS 6406:**

| | | |
|---|---|---|
| ຊິ້ນສ່ວນຂອງເກີບ (ລວມມີ ສ່ວນເທິງ, ອາດຈະຕິດ ຫຼື ບໍ່ຕິດກັບ ພື້ນ ນອກຈາກ ພື້ນນອກ; ພື້ນໃນທີ່ສາມາດເອົາອອກໄດ້, ນອນສໍາລັບອີງສົ້ນຕີນ ແລະ ວັດຖຸທີ່ຄ້າຍຄືກັນ; ແພຫຸ້ມເກີບ, ສິ່ງທີ່ເປັນບາປີກຂາ ແລະ ວັດຖຸທີ່ຄ້າຍຄືກັນ, ແລະ ຊິ້ນສ່ວນຕ່າງໆຂອງມັນ – ພາຍໃຕ້ຫົວຂໍ້ 6406. | **ເພື່ອໃຫ້ຖືວ່າມີແຫຼ່ງກໍາເນີດຢູ່ໃນ ສປປ ລາວ** | ວັດສະດຸທີ່ມີແຫຼ່ງກໍາເນີດມາຈາກບ່ອນອື່ນ ທີ່ຖືກນໍາໃຊ້ ໃນການດໍາເນີນວຽກການຜະລິດ ແລະ ປຸງແຕ່ງ ເປັນຜະລິດຕະພັນສຸດທ້າຍ ບໍ່ສາມາດມີລະຫັດ CN ດຽວກັນ ກັບ ລະຫັດ CN ຂອງ ຜະລິດຕະພັນສຸດທ້າຍ. ຖ້າຈະໃຫ້ມີຜົນສັກສິດ, ຂະບວນການດໍາເນີນວຽກການຜະລິດ ແລະ ປຸງແຕ່ງທີ່ເຮັດຢູ່ ສປປ ລາວ ຕ້ອງ ພຽງພໍ ທີ່ຈະປ່ຽນ ການຈັດປະເພດ ລະຫັດ CN ຂອງ ວັດສະດຸທີ່ນໍາໃຊ້. |

ຂໍ້ຍົກເວັ້ນທົ່ວໄປ ຂອງກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ – ໃນດ້ານ Tolerances ແລະ Cumulation – ດັ່ງທີ່ໄດ້ອະທິບາຍຢູ່ໃນ ໝວດ 2.2(ii) ຂ້າງເທິງ ຈະມີຜົນນໍາໃຊ້ ກັບຜະລິດຕະພັນເກີບ.

## iv. ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສໍາລັບ ຜະລິດຕະພັນປະເພດເກີບ

### a) ຂໍ້ຈໍາກັດ ວ່າດ້ວຍ ການນໍາໃຊ້ ສານເຄມີ ຢູ່ໃນຜະລິດຕະພັນປະເພດເກີບ

Footwear products containing certain chemical substances, group of substances, or mixtures **may not be placed on the EU market** or are **severely restricted.**

ຜະລິດຕະພັນປະເພດເກີບ ທີ່ມີສານເຄມີ, ກຸ່ມຂອງສານເຄມີ, ຫຼື ສານປະສົມ ບາງຢ່າງ **ອາດຈະບໍ່ຖືກວາງຂາຍ ໃນຕະຫຼາດ EU ຫຼື ຖືກຈໍາກັດ ຢ່າງເຂັ້ມງວດ.**

ສານເຄມີ, ກຸ່ມຂອງສານເຄມີ ຫຼື ສານປະສົມ ຕໍ່ໄປນີ້ ແມ່ນບໍ່ອະນຸຍາດໃຫ້ນໍາໃຊ້, ຕາມທີ່ໄດ້ກໍານົດໄວ້ ຢູ່ໃນ ກົດລະບຽບ REACH (ໃຫ້ເບິ່ງຕາຕະລາງ 13).[113]

**ຕາຕະລາງ 13:** ສານເຄມີ ທີ່ບໍ່ອະນຸຍາດໃຫ້ນໍາໃຊ້ ສໍາລັບ ຜະລິດຕະພັນ ປະເພດເກີບ

| ສານເຄມີ/ກຸ່ມຂອງສານເຄມີ/ສານປະສົມ | ລາຍລະອຽດ |
|---|---|
| **Tris (2,3 dibromopropyl) phosphate** | ບໍ່ອະນຸຍາດ ໃນວັດຖຸທີ່ເປັນແຜ່ນແພ, ເຊັ່ນ: ເສື້ອຜ້າ, ຊຸດຊັ້ນໃນ ແລະ ຜ້າລິນິນ ທີ່ຜະລິດຂຶ້ນມາ ເພື່ອໃຫ້ສໍາພັດກັບຜິວໜັງ |

| **ສານເຄມີ/ກຸ່ມຂອງສານເຄມີ/ສານປະສົມ** | **ລາຍລະອຽດ** |
|---|---|
| **Tris (aziridinyl) phosphinoxide** | **ບໍ່ອະນຸຍາດ ໃນວັດຖຸທີ່ເປັນແຜ່ນແພ, ເຊັ່ນ: ເສື້ອຜ້າ, ຊຸດຊັ້ນໃນ ແລະ ຜ້າລີນິນ ທີ່ຜະລິດຂຶ້ນມາ ເພື່ອໃຫ້ສຳພັດກັບຜິວໜັງ** |
| **Polybrominated biphenyls (PBB)** | **ບໍ່ອະນຸຍາດ ໃນວັດຖຸທີ່ເປັນແຜ່ນແພ, ເຊັ່ນ: ເສື້ອຜ້າ, ຊຸດຊັ້ນໃນ ແລະ ຜ້າລີນິນ ທີ່ຜະລິດຂຶ້ນມາ ເພື່ອໃຫ້ສຳພັດກັບຜິວໜັງ** |
| **ສານປະສົມ *Mercury compounds*** | **ອາດຈະບໍ່ຖືກວາງຂາຍ ໃນຕະຫຼາດ, ຫຼື ຖືກນຳໃຊ້, ເປັນສານ ຫຼື ຢູ່ໃນສານປະສົມ ເມື່ອ ຕັ້ງໃຈນຳໃຊ້ ສານ ຫຼື ສານປະສົມ ຢູ່ໃນ ການແຊ່ ແຜ່ນແພອຸດສາຫະກຳ ຂະໜາດໃຫຍ່ ແລະ ດ້າຍ ທີ່ຕັ້ງໃຈ ສຳລັບການຜະລິດ ຂອງມັນ** |
| **ສານປະສົມ *Dioctyltin (DOT)*** | ອາດຈະບໍ່ຖືກນຳໃຊ້ ນັບຕັ້ງແຕ່ 1 ມັງກອນ 2012, *ໃນຈຳນວນມາດຕາອື່ນໆ*, ຢູ່ໃນບັນດາວັດຖຸຕໍ່ໄປນີ້ ສຳລັບການສະໜອງໃຫ້ແກ່ ຫຼື ນຳໃຊ້ໂດຍ ສາທາລະນະຊົນທົ່ວໄປ, ເມື່ອຄວາມເຂັ້ມຂຸ້ນ ຢູ່ໃນວັດຖຸ , ຫຼື ສ່ວນຂອງວັດຖຸ, ໃຫຍ່ກວ່າ ຄ່າທຽບເທົ່າ 0,1% ຂອງນ້ຳໜັກກົ່ວ:<br>ເກີບ ຫຼື ສ່ວນຂອງເກີບ ທີ່ຕັ້ງໃຈໃຫ້ສຳພັດກັບ ຜິວໜັງ. |
| **Azocolourants ແລະ azodyes** | *ສານປະສົມອົງຄະທາດ Azodyes*, ຊຶ່ງ, ດ້ວຍການແບ່ງແຍກ ກຸ່ມ azo ໜຶ່ງ ຫຼື ຫຼາຍກວ່າໜຶ່ງ ທີ່ຫຼຸດລົງ, ອາດຈະປ່ອຍ ໜຶ່ງ ຫຼື ຫຼາຍກວ່າໜຶ່ງ ສານປະສົມອົງຄະທາດ *aro-matic amines* ທີ່ນອນໃນບັນຊີລາຍຊື່ ໃນເອກະສານຊ້ອນທ້າຍ 8 ຂອງ *ລະບຽບການ* REACH , ຢູ່ໃນຄວາມເຂັ້ມຂຸ້ນ ທີ່ສາມາດກວດພົບໄດ້, ນັ້ນກໍຄື ຫຼາຍກວ່າ 30 mg/kg (0,003% ຂອງນ້ຳໜັກ) ຢູ່ໃນວັດຖຸ ຫຼື ສ່ວນທີ່ຖືກຍ້ອມສີ ຂອງມັນ, ໂດຍອີງຕາມ ວິທີການທົດສອບ ທີ່ນອນໃນລາຍຊື່ ເອກະສານຊ້ອນທ້າຍ 10 ຂອງ *ລະບຽບການ* REACH , ອາດຈະບໍ່ຖືກນຳໃຊ້, ຢູ່ໃນວັດຖຸ ທີ່ເປັນແຜ່ນແພ ແລະ ໜັງ ທີ່ອາດຈະສຳພັດໂດຍກົງ ແລະ ແກ່ຍາວ ກັບ ຜິວໜັງ ຂອງມະນຸດ ຫຼື ສ່ວນທີ່ຊຸດໂຊມຂອງປາກ, ເຊັ່ນ:<br>▪ ເສື້ອຜ້າ, ຜ້າປູບ່ອນນອນ, ຜ້າເຊັດໂຕ, ກິບຜົມ, ຜົມປອມ, ໝວກ, ຜ້າອ້ອມ ແລະ ສິ່ງຂອງສຸຂານາໄມ້ອື່ນໆ, ແລະ ຖົງນອນ;<br>▪ ເກີບ, ຖົງມື, ສາຍໂມງ, ກະເປົາຫິ້ວດ້ວຍມື, ກະເປົາຫິ້ວສຳລັບໃສ່ເງິນຜູ້ຍິງ/ກະເປົາເງິນຜູ້ຊາຍ, ກະເປົາຫິ້ວຜູ້ຊາຍ, ຜ້າຄຸມຕັ່ງ ແລະ ກະເປົາເງິນຫ້ອຍຄໍ;<br>▪ ເຄື່ອງຫຼິ້ນທີ່ເຮັດດ້ວຍແຜ່ນແພ ຫຼື ດ້ວຍໜັງ ແລະ ໜັງທີ່ປະກອບດ້ວຍເຄື່ອງນຸ່ງຮົ່ມ ທີ່ເຮັດດ້ວຍແຜ່ນແພ ຫຼື ໜັງ; ແລະ<br>▪ ດ້າຍ ແລະ ເສັ້ນໃຍ ທີ່ຕັ້ງໃຈ ສຳລັບຖືກໃຊ້ ໂດຍ ຜູ້ບໍລິໂພກຄົນສຸດທ້າຍ.<br>ຍິ່ງໄປກວ່ານັ້ນ, ວັດຖຸທີ່ເປັນແຜ່ນແພ ແລະ ໜັງ ທີ່ໄດ້ກ່າວເຖິງ ຢູ່ໃນ ວັກທີ 1 ຈະຕ້ອງບໍ່ວາງຂາຍ ຢູ່ໃນຕະຫຼາດ ຍົກເວັ້ນແຕ່ ພວກມັນ ປະຕິບັດຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ທີ່ກຳນົດໄວ້ ໃນວັກນັ້ນ. |

| ສານເຄມີ/ກຸ່ມຂອງສານເຄມີ/ສານປະສົມ | ລາຍລະອຽດ |
| --- | --- |
| | *ສານປະສົມອົງຄະທາດ Azodyes, ທີ່ນອນຢູ່ໃນ* ເອກະສານຊ້ອນທ້າຍ 9 ຂອງ *ລະບຽບການ* REACH, "ບັນຊີລາຍຊື່ ສານປະສົມອົງຄະທາດ azodyes", ຈະຕ້ອງບໍ່ຖືກວາງຂາຍໃນຕະຫຼາດ, ຫຼື ຖືກນໍາໃຊ້, ໃນນາມເປັນສານ, ຫຼື້ ຢູ່ໃນສານປະສົມ ທີ່ມີຄວາມເຂັ້ມຂຸ້ນຫຼາຍກວ່າ 0,1% ຂອງນໍ້າໜັກ, ເມື່ອຕັ້ງໃຈ ໃຫ້ ສານ ຫຼື ສານປະສົມ ເປັນໂຕຍ້ອມສີ ວັດຖຸທີ່ເປັນແຜ່ນແພ ແລະ ໜັງ, ທີ່ອາດຈະປ່ອຍ ໜຶ່ງ ຫຼື ຫຼາຍກວ່າໜຶ່ງ ສານປະສົມອົງຄະທາດ *aromatic amines* ທີ່ມີລາຍຊື່ ໃນເອກະສານຊ້ອນທ້າຍ 8, ຢູ່ໃນວັດຖຸທີ່ເປັນແຜ່ນແພ ແລະ ໜັງ ທີ່ອາດຈະສໍາພັດ ກັບຜິວໜັງ ຫຼື ສ່ວນທີ່ຊຸດໂຊມຂອງປາກ ໂດຍກົງ ແລະ ແກ່ຍາວ. |
| **Nonylphenol ແລະ nonylphenol ethoxylates** | ອາດຈະບໍ່ຖືກວາງຂາຍ ໃນຕະຫຼາດ, ຫຼື ຖືກນໍາໃຊ້, ເປັນສານ ຫຼື ຢູ່ໃນສານປະສົມ ທີ່ມີຄວາມເຂັ້ມຂຸ້ນເທົ່າກັບ ຫຼື ໃຫຍ່ກວ່າ 0,1% ຂອງນໍ້າໜັກ ສໍາລັບ, ຈຸດປະສົງຕໍ່ໄປນີ້ *ໃນຈໍານວນຈຸດປະສົງອື່ນໆ.* ການປຸງແຕ່ງ ແຜ່ນແພ ແລະ ໜັງ, ຍົກເວັ້ນ:<br>▪ ການປຸງແຕ່ງ ໂດຍບໍ່ມີການປ່ອຍສູ່ນໍ້າເປື້ອນ; ແລະ<br>▪ ລະບົບ ທີ່ມີການບໍາບັດແບບພິເສດ ເມື່ອນໍ້າທີ່ຜ່ານຂະບວນການ ຖືກບໍາບັດ ລ່ວງໜ້າ ເພື່ອເອົາ ເສດສ່ວນອິນຊີ ອອກຢ່າງສົມບູນແບບ ກ່ອນທີ່ຈະມີການບໍາບັດນໍ້າເສຍທາງຊີວະພາບ (ການລ້າງໄຂມັນໜັງແກະ). |

---

*ສໍາລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບ ສານເຄມີ:*

*ສໍາລັບຂໍ້ມູນເພີ່ມຕື່ມ ກ່ຽວກັບການນໍາໃຊ້ ສານເຄມີບາງຊະນິດ ຢູ່ໃນເກີບ, ຜູ້ປະກອບການ ແລະ ຜູ້ຜະລິດ ຢູ່ ສປປ ລາວ ຄວນຕິດຕໍ່ຫາ ອົງການເຄມີແຫ່ງເອີຣົບ (ECHA), ຊຶ່ງເປັນອົງການ ທີ່ຮັບຜິດຊອບ ໃນການຄຸ້ມຄອງ ແລະ ປະສານງານ ການຂຶ້ນທະບຽນ, ການປະເມີນຜົນ, ການອະນຸຍາດ ແລະ ຂະບວນການຈໍາກັດ ສານເຄມີ ຢູ່ໃນ EU. ສາມາດຕິດຕໍ່ ອົງການເຄມີແຫ່ງເອີຣົບ ໄດ້ທີ່:*

| | |
| --- | --- |
| | *P.O. Box 400, 00121 Helsinki, Finland* |
| *ອົງການເຄມີ ແຫ່ງເອີຣົບ* | *Swichboard: +358-9-686180* |
| | ໂຕະໃຫ້ບໍລິການຊ່ວຍເຫຼືອ ທາງອອນລາຍ: *http://echa.europa.eu/contact/helpdesk-contact-form* |

### b) ຂໍ້ຈໍາກັດ ວ່າດ້ວຍ ປະເພດສັດ ທີ່ຖືກນໍາໃຊ້ ໃນການຜະລິດ ເກີບໜັງ

*ວັດສະດຸ ທີ່ຖືກໃຊ້ ສໍາລັບ ການຜະລິດເກີບໜັງ ທີ່ໄດ້ມາຈາກສັດແປກປະຫຼາດ ຄວນກວດກາ ຄວາມຖືກຕ້ອງສອດຄ່ອງ ກັບ ກົດລະບຽບ ຂອງ ສະຫະພາບເອີຣົບ ທີ່ຈັດຕັ້ງປະຕິບັດ ສົນທິສັນຍາ ວ່າດ້ວຍການຄ້າ ສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງປະເທດ* (CITES).[114]

ກົດລະບຽບ ບັງຄັບໃຫ້ກວດສອບ ການນໍາເຂົ້າ ແລະ ສົ່ງອອກ ທັງໃນລະດັບ EU ແລະ ລະດັບປະເທດທີ່ເປັນແຫຼ່ງກໍາເນີດ ແລະ ແຕ່ລະປະເທດສະມາຊິກ EU ມີສິດດ້ານການຄຸ້ມຄອງ ໃນການອອກເອກະສານອະນຸຍາດ ແລະ ກວດກາການນໍາເຂົ້າ, ລວມທັງ ມີສິດອໍານາດທາງວິທະຍາສາດ ເພື່ອເຮັດໜ້າທີ່ ເປັນອົງການໃຫ້ຄໍາປຶກສາ. ເຄື່ອງມືທາງນິຕິກໍາ ຂອງ EU ກໍານົດບັນຊີລາຍຊື່ ຊະນິດພັນສັດ ທີ່ໃກ້ຈະສູນພັນ, ຊຶ່ງມີສາຍພົວພັນກັນ ແບບຄ້າວໆ ກັບ ເອກະສານຊ້ອນທ້າຍ ທີ່ພົບເຫັນ ຢູ່ໃນ ສົນທິສັນຍ CITES, ແລະ ຖືກຈັດລຽງ ຈາກ ລະດັບຂໍ້ຈໍາກັດທາງການຄ້າ ທີ່ໃຫຍ່ສຸດ ໄປຫາ ໜ້ອຍສຸດ ຕາມທີ່ EU ໄດ້ກໍານົດໃຫ້. ເກີບໜັງທັງໝົດ ທີ່ໄດ້ມາຈາກຊະນິດພັນ ທີ່ລະບຸໄວ້ໃນບັນຊີ ຢ່າງໜ້ອຍ ຈໍາເປັນຈະຕ້ອງ ມີໃບອະນຸຍາດ ຫຼື ເອກະສານອະນຸຍາດ ນໍາເຂົ້າ.

### c) ຂໍ້ຈຳກັດ ວ່າດ້ວຍ ອາຍເຮືອນແກ້ວ ທີ່ມາຈາກ ສານຟ◌ູອໍລາຍ ຢູ່ໃນເກີບ ທີ່ນຳເຂົ້າໄປ EU

ຜູ້ຜະລິດ ຈາກ ສປປ ລາວ ທີ່ຕ້ອງການສົ່ງອອກເກີບ ໄປຫາ EU ຈະຕ້ອງຄຳນຶງເຖິງ ຄວາມຕ້ອງການ ທາງດ້ານເຕັກນິກ ທີ່ກ່ຽວຂ້ອງກັບ ຜະລິດຕະພັນ ທີ່ມີທາດອາຍເຮືອນແກ້ວ ທີ່ມາຈາກສານຟ◌ູອໍໄລ.[115]

- ເກີບທີ່ມີທາດອາຍເຮືອນແກ້ວ ທີ່ປະກອບດ້ວຍຟ◌ູອໍໄລ (ເຊັ່ນ: ໄຮໂດຣຟ◌ູອໍໂຣຄາບອນ (hydrofluorocarbons – HFCs)), ເປີຟ◌ູອໍໂຣຄາບອນ (perfluorocarbons (PFCs)), ແລະ ຊັນເຟີ ເຮັກຊາຟ◌ູອໍໄຣ (sulphur hexafluoride (SF6)) ແມ່ນຖືກຫ້າມ ບໍ່ໃຫ້ວາງຂາຍໃນຕະຫຼາດ EU.
- ຜູ້ຜະລິດ ແລະ ຜູ້ປະກອບການ ທີ່ສົ່ງອອກ ເກີບ ຈາກ ສປປ ລາວ ແມ່ນຈະໄດ້ຮັບຄຳແນະນຳ ໃຫ້ກວດກາ ບັນຊີລາຍຊື່ ຂອງ ທາດອາຍເຮືອນແກ້ວທີ່ມີຟ◌ູອໍໄຣ ທີ່ບໍ່ອະນຸຍາດໃຫ້ເຂົ້າໄປໃນ ສະຫະພາບເອີຣົບ ເພື່ອຮັບປະກັນວ່າ ຜະລິດຕະພັນຂອງເຂົາເຈົ້າ ບໍ່ບັນຈຸ ທາດເຫຼົ່ານີ້.[116]

### d) ລະບຽບການ ທີ່ບັງຄັບໃຊ້ກັບ ຜະລິດຕະພັນທີ່ບໍ່ແມ່ນອາຫານ ເພື່ອເພີ່ມການປົກປ້ອງ ຜູ້ບໍລິໂພກ

ໃນເດືອນມິຖຸນາ 2019, ໄດ້ມີການອອກ ນິຕິກຳ ຂອງ EU ໂດຍມີຈຸດປະສົງ ທີ່ຈະສ້າງຄວາມສອດຄ່ອງກົມກຽວກັບ ຂໍ້ກຳນົດ ຫຼື ຄວາມຕ້ອງການ ກ່ຽວກັບ ຜະລິດຕະພັນທີ່ບໍ່ແມ່ນອາຫານ ໃນລະດັບ EU ແລະ ເພື່ອເພີ່ມ ການປົກປ້ອງ ຜູ້ບໍລິໂພກ ຈາກ ຜະລິດຕະພັນ ທີ່ບໍ່ປອດໄພ ແລະ ບໍ່ຖືກຕ້ອງສອດຄ່ອງກັບ ຂໍ້ກຳນົດຕ່າງໆ.[117] **ລະບຽບການນີ້ ມີຜົນບັງຄັບໃຊ້ ໃນວັນທີ 16 ກໍລະກົດ 2021.[118]**

**ກ່ຽວກັບເກີບ**, ກົດລະບຽບ ທີ່ໄດ້ຮັບການປັບປຸງ ຂອງ ສະຫະພາບເອີຣົບ ຈະໃຫ້ອຳນາດເພີ່ມຕື່ມ ແກ່ບັນດາປະເທດສະມາຊິກສະຫະພາບເອີຣົບ ເພື່ອຮັບປະກັນວ່າ ຜະລິດຕະພັນ ທີ່ວາງຂາຍ ຢູ່ໃນຕະຫຼາດ EU ແມ່ນໄດ້ປະຕິບັດຕາມ ນິຕິກຳທີ່ສອດຄ່ອງກັນ ທີ່ພົວພັນກັບ ຂໍຈຳກັດ ກ່ຽວກັບ ສານທີ່ຖືກຈຳກັດ.

ຖ້າເບິ່ງເລິກລົງຕື່ມອີກ, ຂໍ້ກຳນົດ ກ່ຽວກັບການເຝົ້າລະວັງຕະຫຼາດ ທີ່ຢູ່ພາຍໃຕ້ ນິຕິກຳ EU ທີ່ມີຜົນນຳໃຊ້ແລ້ວ ແມ່ນຈະມີຜົນນຳໃຊ້ກັບ ໝົດທຸກປະເພດຜະລິດຕະພັນ ທີ່ຢູ່ພາຍໃຕ້ ນິຕິກຳທີ່ສອດຄ່ອງກົມກຽວກັນ ຂອງ ສະຫະພາບເອີຣົບ ທີ່ໄດ້ລະບຸໄວ້ໃນບັນຊີລາຍຊື່ ໃນ ເອກະສານຊ້ອນທ້າຍ 1 ຂອງ ລະບຽບການ,[119] ໂດຍສະເພາະ ທີ່ກ່ຽວຂ້ອງກັບ ເຄື່ອງມືນິຕິກຳ ຕໍ່ໄປນີ້:

- *ຄຳແນະນຳ ເລກທີ* 94/11/EC *ຂອງ ລັດຖະສະພາ ແລະ ສະພາເອີຣົບ ລົງວັນທີ* 23 *ມີນາ* 1994 *ວ່າດ້ວຍ ຄວາມໃກ້ຄຽງກັນ ລະຫວ່າງ ກົດໝາຍ, ລະບຽບການ ແລະ ຂໍ້ກຳນົດດ້ານບໍລິຫານ ຂອງປະເທດ ທີ່ເປັນສະມາຊິກ ທີ່ພົວພັນກັບ ການຕິດສະຫຼາກ ວັດສະດຸ ທີ່ຖືກນຳໃຊ້ ຢູ່ໃນ ອົງປະກອບຕົ້ນຕໍ ຂອງເກີບ ສຳລັບຂາຍ ແກ່ ຜູ້ບໍລິໂພກ* (ຕາມທີ່ໄດ້ເອົ້າເຖິງ *ຢູ່ໃນໝວດ* iv *ຂ້າງລຸ່ມນີ້*);
- ລະບຽບການ (EU) 517/2014 ວ່າດ້ວຍ ທາດອາຍເຮືອນແກ້ວ ທີ່ມີຟ◌ູອໍໄຣ (ຕາມທີ່ໄດ້ເອົ້າເຖິງ ຢູ່ໃນໝວດ iii (c));
- ລະບຽບການ (EC) 66/2010 ວ່າດ້ວຍ EU Ecolabel (ຕາມທີ່ໄດ້ເອົ້າເຖິງ ຢູ່ໃນໝວດ iv (d) ຂ້າງລຸ່ມນີ້);
- *ລະບຽບການ* REACH (ຕາມທີ່ໄດ້ເອົ້າເຖິງ ຢູ່ໃນໝວດ iii (a) *ຂ້າງເທິງ*).

ຜະລິດຕະພັນ ທີ່ລະບຸວ່າ ບໍ່ສອດຄ່ອງ ແມ່ນຈະຖືກປະຕິເສດ ຢູ່ ທີ່ຊາຍແດນ ແລະ ຖອນອອກຈາກ ຕະຫຼາດ EU.

## v. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການຕິດສະຫຼາກ ແລະ ການຫຸ້ມຫໍ່ ສຳລັບ ຜະລິດຕະພັນປະເພດເກີບ

ການຕິດສະຫຼາກເກີບ ຢູ່ໃນ ສະຫະພາບເອີຣົບ ແມ່ນຖືກຄວບຄຸມ ໂດຍ *ຄຳແນະນຳ ເລກທີ 94/11/EC ຂອງ ລັດຖະສະພາ ແລະ ສະພາ ເອີຣົບ ລົງວັນທີ 23 ມີນາ 1994 ວ່າດ້ວຍ ຄວາມໃກ້ຄຽງກັນ ລະຫວ່າງ ກົດໝາຍ, ລະບຽບການ ແລະ ຂໍ້ກຳນົດ ດ້ານການບໍລິຫານ ຂອງ ບັນດາປະເທດສະມາຊິກ ທີ່ກ່ຽວຂ້ອງກັບ ວັດສະດຸທີ່ຖືກນຳໃຊ້ ຢູ່ໃນອົງປະກອບຕົ້ນຕໍ ຂອງເກີບ ສຳລັບ ຂາຍໃຫ້ຜູ້ບໍລິໂພກ*[120] (ຕ◌ໍ◌່ໄປນີ້, ຄຳແນະ ນຳເລກທີ 94/11/EC).

ການຕິດສະຫຼາກ ຂອງເກີບ ແລະ ສ່ວນປະກອບຂອງມັນ ມີຈຸດປະສົງ ທີ່ຈະສະໜອງຂໍ້ມູນ ແກ່ຜູ້ບໍລິໂພກ, ເພື່ອເຮັດໃຫ້ເຂົາເຈົ້າສາມາດຕັດສິນໃຈໄດ້ ໂດຍອີງໃສ່ຂໍ້ມູນ ທີ່ໄດ້ຮັບ. ນອກຈາກນັ້ນ, ມັນຍັງເປັນປະໂຫຍດ ຕໍ່ ອຸດສາຫະກຳ, ເພາະມັນສາມາດປ້ອງກັນການແຂ່ງຂັນທີ່ບໍ່ຍຸດຕິທຳ ແລະ ຫຼີກລ້ຽງ ການກີດກັ້ນ ຈາກ ຕະຫຼາດ ຂອງ ສະຫະພາບເອີຣົບ.

### a) ຜະລິດຕະພັນ ປະເພດເກີບ ທີ່ຈຳເປັນຈະຕ້ອງຖືກຕິດສະຫຼາກ

ກົດລະບຽບ EU ມີຜົນນຳໃຊ້ກັບ:

- ເກີບພື້ນລຽບ ຫຼື ສົ້ນສູງ ສຳລັບໃສ່ຕາມປົກກະຕິ ຢູ່ໃນເຮືອນ ຫຼື ກາງແຈ້ງ;
- ເກີບທີ່ປົກຮອດຂໍ້ຕີນ, ເກີບທີ່ປົກຮອດນ່ອງ, ເກີບທີ່ປົກຮອດຫົວເຂົ່າ ແລະ ເກີບທີ່ປົກຮອດຕົ້ນຂາ;
- ເກີບຊັນດານ ຫຼາຍປະເພດ, ເກີບຜ້າໃບຮັດຫົວຕີນ ແລະ ສົ້ນຕີນ (ເກີບທີ່ມີຜ້າໃບຢູ່ສ່ວນຫົວ ແລະ ພື້ນເຮັດຈາກວັດສະດຸທີ່ເປັນພືດມາເປຍເຂົ້າກັນ), ເກີບຕີເທັນນິດ, ເກີບແລ່ນ ແລະ ເກີດກິລາອື່ນໆ, ເກີບຊັນດານສຳລັບອາບນ້ຳ ແລະ ເກີບໃສ່ຫຼິ້ນອື່ນໆ;
- ເກີບກິລາພິເສດ ທີ່ຖືກອອກແບບມາ ສຳລັບ ກິດຈະກຳກິລາ, ແລະ ມີ, ຫຼື ມີຂໍ້ກຳນົດ ສຳລັບ ຄັດຕິດ ໜາມ, ປຸ່ມ, ປຸ່ມຍຸດ, ມີແນວຄັດ, ມີສາຍຮັດ ຫຼື ເກີບທີ່ຄ້າຍໆຄືກັນ ແລະ ເກີບສະເກັດ, ເກີບສະກີ ແລະ ເກີບໂດດສະກີຢູ່ຫິມະ, ເກີບມວຍປ້ຳ, ເກີບຕີມວຍ ແລະ ເກີບປັ່ນລົດຖີບ. ເກີບກິລາພິເສດທີ່ອອກແບບມາສຳລັບກິລາແລະມີຫຼືມີການສະ ໜອງ ການຕິດຮອງ, ຄ້ອນຕີ, ບ່ອນຍຸດ, ກົບ, ແຖບຫຼືສິ່ງທີ່ຄ້າຍຄືກັນແລະເກີບສະເກັດ, ເກີບສະກີແລະເກີບສະກີຂ້າມປະເທດ, ເກີບມວຍປ້ຳ, ຕີມວຍ ເກີບແລະເກີບຂີ່ລົດຖີບ. ນອກຈາກນັ້ນ ອັນທີ່ກວມ ແມ່ນ ສ່ວນປະກອບທີ່ເປັນຄອມໂປຣິດ ທີ່ຜະລິດເກີບ ໂດຍມີແຜນສະເກັດຕິດນ ຳ (ສຳລັບນ້ຳແຂງ ຫຼື ເປັນລູກກິ້ງ);
- ເກີບເຕັ້ນບັນເລ;
- ເກີບທີ່ສ້າງຂຶ້ນມາຈາກຊິ້ນສ່ວນດຽວ, ໂດຍສະເພາະ ດ້ວຍການອັດປັບ ຢາງ ຫຼື ພາດສະຕິກ ລົງແມ່ພິມ, ແຕ່ບໍ່ລວມເອົາສ່ວນປະກອບທີ່ໃຊ້ໄດ້ເທື່ອດຽວ (ເຈ້ຍ ຫຼື ຟິມພາດສະຕິກ, ແລະ ອື່ນໆ, ໂດຍບໍ່ມີການໃຊ້ແຜ່ນຮອງພື້ນ);
- ເກີບ ຫຼື ສິ່ງຫຸ້ມຕີນ ທີ່ໃສ່ເພື່ອຫຸ້ມເກີບໂຕອື່ນ, ຊຶ່ງໃນບາງກໍລະນີ ແມ່ນບໍ່ມີສົ້ນ;
- ເກີບທີ່ໃຊ້ເທື່ອດຽວ ແລ້ວຖິ້ມໄດ້, ໂດຍມີພື້ນເກີບຮອງ, ໂດຍທົ່ວໄປແລ້ວ ແມ່ນຖືກອອກແບບໃຫ້ໃຊ້ໄດ້ຄັ້ງດຽວເທົ່ານັ້ນ; ແລະ
- ເກີບທີ່ໃຊ້ໃສ່ເພື່ອດັດກະດູກ.

ເອກະສານຊ້ອນທ້າຍ II ໃຫ້ຕົວຢ່າງກ່ຽວກັບເກີບ ທີ່ນອນຢູ່ໃນ ຄຳແນະນຳ ສະບັບນີ້ ແລະ ໃຫ້ຂໍ້ສັງເກດວ່າ "ເກີບອາດຈະມີຫຼາຍປະເພດ ນັບຕັ້ງແຕ່ເກີບຊັນດານ ທີ່ສ່ວນເທິງຫົວ ທີ່ປະກອບດ້ວຍ ສາຍເຊືອກ ຫຼື ໂບ ທີ່ສາມາດປັບໄດ້ ຈົນເຖິງ ເກີບທີ່ປົກຮອດຕົ້ນຂາ ທີ່ປົກຫຸ້ມຂາ ແລະ ຕົ້ນຂາ".

### b) ຄຳແນະນຳ ວ່າດ້ວຍ ການຕິດສະຫຼາກ, ການໝາຍ ແລະ ການເກາະຕິດສະຫຼາກ ສຳລັບ ຜະລິດຕະພັນປະເພດເກີບ

**ການສະຫຼາກ ຢູ່ເທິງເກີບ ຕ້ອງໄດ້ຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການຕໍ່ໄປນີ້**

1. ໃຫ້ຂໍ້ມູນ ກ່ຽວກັບ ສາມອົງປະກອບ ຂອງເກີບ ຄື: *(i) ສ່ວນເທິງຫົວເກີບ; (ii) ພື້ນໃນ ແລະ ຖົງຕີນ; ແລະ (iii) ພື້ນດ້ານນອກ.*
2. ການສະຫຼາກ ຕ້ອງຢູ່ໃນຮູບແບບເປັນລາຍລັກອັກສອນ ຫຼື ຢູ່ໃນຮູບແບບເປັນກາສັນຍາລັກ ແລະ ຕ້ອງສາມາດແນມເຫັນໄດ້, ທີ່ຕິດ ຢ່າງໝັ້ນໜຽວ ແລະ ສາມາດເຂົ້າເຖິງໄດ້.
3. ການສະຫຼາກ ຕ້ອງຕໍ່ໃສ່ ຂໍ້ມູນທີ່ຕ້ອງການ ທີ່ຢ່າງໜ້ອຍ ຢູ່ໃນສ່ວນປະກອບໜຶ່ງ ຂອງເກີບ ແຕ່ລະຄູ່:

   (i) ພິມ ຫຼື ເຮັດເປັນໂຕໜັງສືນູນອອກມາ ໃສ່ໃນເກີບ;

(ii) ຕິດໃສ່ເກີບ ດ້ວຍວິທີ ເຊັ່ນວ່າ ເປັນການສະຫຼາກ ທີ່ມີການໜຽວແໜ້ນ; ຫຼື

(iii) ຕິດ ດ້ວຍວິທີ ເຊັ່ນວ່າ ການຮັດ ຫຼື ເຊືອກ.

ກ່ຽວກັບເກີບທີ່ນຳເຂົ້າ, ບຸກຄົນຜູ້ທຳອິດ ທີ່ວາງຂາຍໃນ ຕະຫຼາດ EU ແມ່ນມີຄວາມຮັບຜິດຊອບ ຕໍ່ ການເຮັດເຊັ່ນນັ້ນ. ຈາກນັ້ນ, ຜູ້ຂາຍຍ່ອຍ ເປັນຜູ້ທີ່ຮັບຜິດຊອບ ຕໍ່ ການຮັບປະກັນວ່າ ເກີບທີ່ເຂົາເຈົ້າຂາຍນັ້ນ ມີການຕິດສະຫຼາກ ຢ່າງເໝາະສົມ.

### ວັດສະດຸ ທີ່ຈະຖືກລະບຸ ຢູ່ໃນການສະຫຼາກ[121]

1. ມີພຽງແຕ່ວັດສະດຸ ທີ່ກວມສ່ວນໃຫຍ່ເທົ່ານັ້ນ - ນັ້ນກໍຄື ວັດສະດຸທີ່ກວມ 80% ຫຼື ຫຼາຍກວ່ານັ້ນ ຂອງເນື້ອທີ່ພື້ນຜິວ ຂອງສ່ວນເທິງທໍ່ເກີບ, ສ່ວນຮອງພື້ນດ້ານໃນ ແລະ ຖົງຕີນ ຂອງເກີບ ແລະ 80% ຫຼື ຫຼາຍກວ່ານັ້ນ ຂອງ ບໍລິມາດພື້ນຊັ້ນນອກ - ທີ່ຈຳເປັນຕ້ອງໄດ້ລະບຸ ຢູ່ໃນ ສະຫຼາກ.
2. ເມື່ອບໍ່ມີວັດສະດຸໃດໜຶ່ງ ທີ່ກວມຢ່າງໜ້ອຍ 80%, ຕ້ອງໄດ້ສະໜອງ ການສະຫຼາກ ທີ່ມີຂໍ້ມູນ ກ່ຽວກັບ ສອງວັດສະດຸຕົ້ນຕໍ.
3. ຄຳນິຍາມ, ຮູບສັນຍາລັກ ທີ່ກ່ຽວຂ້ອງ ແລະ ການຊີ້ບອກເປັນລາຍລັກອັກສອນ ແມ່ນຈະສະໜອງໃຫ້ ຢູ່ໃນ ເອກະສານຊ້ອນທ້າຍ 1 ຂອງ ຄຳແນະນຳທີ່ກ່ຽວຂ້ອງ[122] – ກ່ຽວກັບ ພາກສ່ວນ ຂອງເກີບ ທີ່ຈະຖືກລະບຸ.

**ພາກ 1: ກຳນົດນິຍາມ, ຮູບສັນຍາລັກທີ່ສອດຄ່ອງກັນ ແລະ ການຊີ້ບອກເປັນລາຍລັກອັກສອນ ເປັນໝົດທຸກພາສາ ຂອງ EU ກ່ຽວກັບ ສ່ວນຕ່າງໆ ຂອງເກີບ ທີ່ຈະຖືກກຳນົດ (ເອກະສານຊ້ອນທ້າຍ 1, ພາກ 1)**

---

**ຮູບ 13: ຂໍ້ມູນທີ່ຄັດລອກມາຈາກ ຄຳແນະນຳ ເລກທີ 94/11/EC-**

**ບົດແນະນຳ ສຳລັບ ການຕິດສະຫຼາກ ຜະລິດຕະພັນປະເພດເກີບ**



1. **Definition and corresponding pictograms or written indications concerning the parts of the footwear to be identified**

*Pictograms* *Written indications*

(a) **Upper**

This is the outer face of the structural element which is attached to the outersole.

F Tige
D Obermaterial
IT Tomaia
NL Bovendeel
EN Upper
DK Overdel
GR ΕΠΑΝΩ ΜΕΡΟΣ
ES Empeine
P Parte superior
►A1 CZ Vrch
EST Pealne
LV Virsa
LT Viršus
HU Felsőrész
M Wiċċ
PL Wierzch
SI Zgornji del
SK Vrch ◄
►M1 BG лицева част
RO Față ◄
►M2 HR Gornjište ◄



(b) **Lining and sock**

These are the lining of the upper and the insole, constituting the inside of the footwear article.

F Doublure et semelle de propreté
D Futter und Decksohle
IT Fodera e Sottopiede
NL Voering en inlegzool
EN Lining and sock
DK Foring og bindsål
GR ΦΟΔΡΕΣ
ES Forro y plantilla
P Forro e Palmilha
►A1 CZ Podšívka a stélka
EST Vooder ja sisetald
LV Odere un ieliekama zolīte
LT Pamušalas ir įklotė
HU Bélés és fedőtalpbélés
M Inforra u suletta
PL Podszewka z wyściółką
SI Podloga in vložek (steljka)
SK Podšívka a stielka ◄
►M1 BG подплата и стелка
RO Căptușeală și acoperiș de branț ◄
►M2 HR Podstava i uložna tabanica ◄



*Pictograms* *Written indications*

(c) **Outer sole**

This is the bottom part of the footwear article, which is subjected to abrasive wear and attached to the upper.

F Semelle extérieure
D Laufsohle
IT Suola esterna
NL Buitenzool
EN Outer sole
DK Ydersål
GR ΣΟΛΑ
ES Suela
P Sola
►A1 CZ Podešev
EST Välistald
LV Ārējā zole
LT Padas
HU Járótalp
M Pett ta' barra
PL Spód
SI Podplat
SK Podošva ◄
►M1 BG външно ходило
RO Talpă exterioară ◄
►M2 HR Potplat (donjište) ◄

**ພາກ II: ກຳນົດນິຍາມ, ຮູບສັນຍາລັກທີ່ສອດຄ່ອງກັນ ແລະ ການຊີ້ບອກເປັນລາຍລັກອັກສອນ ເປັນໝົດທຸກພາສາ ຂອງ EU ກ່ຽວກັບ ສ່ວນຕ່າງໆ ຂອງເກີບ ທີ່ຈະຖືກກຳນົດ (ເອກະສານຊ້ອນທ້າຍ I, ພາກ 2)**

---

**ຮູບ 14:** ຂໍ້ມູນຄັດລອກມາຈາກ ຄໍາແນະນໍາເລກທີ 94/11/EC – ບົດແນະນໍາ ວ່າດ້ວຍ ການກໍານົດ ສ່ວນຕ່າງໆ ຂອງເກີບ



(a) (i) **Leather**

A general term for hide or skin with its original fibrous structure more or less intact, tanned to be rot-proof. The hair or wool may or may not have been removed. Leather is also made from a hide or skin which has been split into layers or segmented either before or after tanning. However, if the tanned hide or skin is disintegrated mechanically and/or chemically into fibrous particles, small pieces or powders and then, with or without the combination of a binding agent, is made into sheets or other forms, such sheets or forms are not leather. If the leather has a surface coating, however applied, or a glued-on finish, such surface layers must not be thicker than 0,15 mm. Thus, all leathers are covered without prejudice to other legal obligations, e.g. the Washington Convention.

Should the term 'full grain leather' be used in the optional additional textual information referred to in Article 5, it will apply to a leather bearing the original grain surface as exposed by removal of the epidermis and with none of the surface removed by buffing, snuffing or splitting.

| | Written indications |
|---|---|
| F | Cuir |
| D | Leder |
| IT | Cuoio |
| NL | Leder |
| EN | Leather |
| DK | Læder |
| GR | ΔΕΡΜΑ |
| ES | Cuero |
| P | Couros e peles curtidas |
| ►A1 CZ | Useň |
| EST | Nahk |
| LV | Āda |
| LT | Oda |
| HU | Bőr |
| M | Ġilda |
| PL | Skóra |
| SI | Usnje |
| SK | Useň ◄ |
| ►M1 BG | кожа |
| RO | Piei cu față naturală ◄ |
| ►M2 HR | Koža ◄ |

(a) (ii) **Coated Leather**

leather where the surface coating applied to the leather does not exceed one third of the total thickness of the product but is in excess of 0,15 mm.

| | Written indications |
|---|---|
| F | Cuir enduit |
| D | Beschichtetes Leder |
| IT | Cuoio rivestito |
| NL | Gecoat leder |
| EN | Coated leather |
| DK | Overtrukket læder |
| GR | ΕΠΕΝΔΕΔΥ-ΜΕΝΟ ΔΕΡΜΑ |
| ES | Cuero untado |
| P | Couro revestido |
| ►A1 CZ | Povrstvená useň |
| EST | Kaetud nahk |
| LV | Pārklāta āda |
| LT | Padengta oda |
| HU | Bevonatos bőr |
| M | Ġilda miksija |
| PL | Skóra pokryta |
| SI | Krito usnje |
| SK | Povrstvená useň ◄ |
| ►M1 BG | кожа с покритие |
| RO | Piei cu față corectată ◄ |
| ►M2 HR | Koža korigiranog lica ◄ |

(b) **Natural textile materials and synthetic or non-woven textile materials**

'Textiles' shall mean all products covered by Directive 71/307/EEC and amendments thereof.

| | Written indications |
|---|---|
| F | Textile |
| D | Textil |
| IT | Tessili |
| NL | Textiel |
| EN | Textile |
| DK | Tekstil-materialer |
| GR | ΥΦΑΣΜΑ |
| ES | Textil |
| P | Têxteis |
| ►A1 CZ | Textilie |
| EST | Tekstiil |
| LV | Tekstilmateriāls |
| LT | Tekstilė |
| HU | Textil |
| M | Tessut |
| PL | Materiał włókienniczy |
| SI | Tekstil |
| SK | Textil ◄ |
| ►M1 BG | текстил |
| RO | Textile ◄ |
| ►M2 HR | Tekstil ◄ |

(c) **All other materials**

| | Written indications |
|---|---|
| F | Autres matériaux |
| D | Sonstiges Material |
| IT | Altre materie |
| NL | Overige materialen |
| EN | Other materials |
| DK | Andre materialer |
| GR | ΑΛΛΑ ΥΛΙΚΑ |
| ES | Otros materiales |
| P | Outros materiais |
| ►A1 CZ | Ostatní materiály |
| EST | Teised materjalid |
| LV | Citi materiāli |
| LT | Kitos medžiagos |
| HU | Egyéb anyag |
| M | Materjal ieħor |
| PL | Inny materiał |
| SI | Drugi materiali |
| SK | Iný materiál ◄ |
| ►M1 BG | всички други материали |
| RO | Alte materiale ◄ |
| ►M2 HR | Drugi materijali ◄ |

## c) ກົດລະບຽບພິເສດ ສໍາລັບເກີບ ທີ່ຖືກນໍາໃຊ້ ໂດຍ ບຸກຄົນ ສໍາລັບ ຈຸດປະສົງ ດ້ານສຸຂະພາບ ແລະ ຄວາມປອດໄພ ຢູ່ໃນ ສະຖານທີ່ເຮັດວຽກ

ຄໍາແນະນໍາ ເລກທີ 94/11/EC ບໍ່ກວມເອົາເກີບ ທີ່ຖືກນໍາໃຊ້ໂດຍ ບຸກຄົນ ສໍາລັບຈຸດປະສົງດ້ານສຸຂະພາບ ແລະ ຄວາມປອດໄພ ຢູ່ໃນສະຖານທີ່ເຮັດວຽກ. ໃນຄວາມເປັນຈິງ, ຜະລິດຕະພັນເຫຼົ່ານີ້ ແມ່ນນອນຢູ່ພາຍໃຕ້ ກົດລະບຽບ ຂອງ ສະຫະພາບເອີຣົບ ກ່ຽວກັບ ອຸປະກອນປົກປ້ອງສ່ວນບຸກຄົນ (PPE).[123]

ເກີບ ທີ່ຖືກອອກແບບມາໃຫ້ໃສ່ ໂດຍບຸກຄົນ ສໍາລັບ **ປົກປ້ອງ ບໍ່ໃຫ້ເກີດມີຄວາມອັນຕະລາຍ ຕໍ່ ສຸຂະພາບ ແລະ ຄວາມປອດໄພ ໜຶ່ງ ຫຼື ຫຼາຍກວ່າໜຶ່ງຢ່າງ** ແມ່ນຖືກຄວບຄຸມ ໂດຍ ລະບຽບການສະເພາະ ຂອງ EU ວ່າດ້ວຍ "ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານສຸຂະພາບ ແລະ ຄວາມປອດໄພ ທີ່ຈໍາເປັນ".[124] ກົດໝາຍ:

- ສະໜອງ ຂໍ້ກໍານົດ ຫຼື ຄວາມຕ້ອງການ ສໍາລັບ ການອອກແບບ ແລະ ການຜະລິດ PPE;
- ເລັງໃສ່ ເພື່ອຮັບປະກັນ ສຸຂະພາບ ແລະ ຄວາມປອດໄພ ຂອງ ຜູ້ນໍາໃຊ້; ແລະ
- ພະຍາຍາມ ອະນຸຍາດໃຫ້ອຸປະກອນ ຖືກວາງຂາຍ ຢູ່ໃນຕະຫຼາດ ແລະ ຖືກນໍາໃຊ້ໄດ້ ຢູ່ທົ່ວ EU

ໂດຍສະເພາະ, ມີຂໍ້ຄວາມ ຈາກ ກົດໝາຍ ຂອງ EU ວ່າດ້ວຍ "ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານສຸຂະພາບ ແລະ ຄວາມປອດໄພ ທີ່ຈຳເປັນ", ກ່ຽວກັບເກີບ:

> *3.1.2.1. ການປ້ອງກັນຈາກ ການຕົກ ຍ້ອນການມື່ນ*
> *ພື້ນຊັ້ນນອກ ຂອງເກີບປ້ອງກັນ ທີ່ມີຈຸດປະສົງ ເພື່ອປ້ອງກັນ ການມື່ນ ຕ້ອງໄດ້ຮັບການອອກແບບ ແລະ ຜະລິດ ຫຼື ຕິດຕັ້ງ ດ້ວຍວິທີການເພີ່ມຕື່ມ ເພື່ອຮັບປະກັນ ການໃຫ້ມີການຍຶດເກາະທີ່ພຽງພໍ, ໂດຍຄຳນຶງເຖິງລັກສະນະທຳມະຊາດ ຫຼື ສະຖານະຂອງພື້ນຜິວ.*[125]

## d) ທາງເລືອກ ສຳລັບລວມເອົາ ການຕິດສະຫຼາກສິ່ງແວດລ້ອມ (ຂໍ້ກຳນົດ ຫຼື ຄວາມຕ້ອງການ ແບບສະໝັກໃຈ)

ຢູ່ໃນ ສະຫະພາບເອີຣົບ, Ecolabel ແມ່ນເປັນເຄື່ອງໝາຍທາງການ ສຳລັບຜະລິດຕະພັນ ທີ່ມີຜົນກະທົບໜ້ອຍສຸດ ຕໍ່ສິ່ງແວດລ້ອມ ໃນກຸ່ມຜະລິດຕະພັນໃດໜຶ່ງ. ມັນມີເປົ້າໝາຍ ເພື່ອສົ່ງເສີມ ການປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງ ຊ່ວຍຜູ້ບໍລິໂພກ ໃນການລະບຸຜະລິດຕະພັນເຫຼົ່ານັ້ນ ທີ່ປະກອບສ່ວນອັນສຳຄັນ ເຂົ້າໃນການປັບປຸງ ທີ່ກ່ຽວຂ້ອງກັບ ດ້ານສິ່ງແວດລ້ອມທີ່ສຳຄັນ.

ການມີສ່ວນຮ່ວມ ຢູ່ໃນແຜນງານ ແມ່ນເປັນ**ຄວາມສະໝັກໃຈ.** ນີ້ກໍໝາຍຄວາມວ່າ ຜະລິດຕະພັນ ສາມາດຖືກຂາຍ ຢູ່ພາຍໃນ ຕະຫຼາດ EU ໂດຍບໍ່ມີໂລໂກ້ Ecolabel ແລະ ບໍ່ມີກົດລະບຽບ ທີ່ຕ້ອງການໃຫ້ ພໍ່ຄ້ານຳໃຊ້ ໂລໂກ້.

**ການນຳໃຊ້ ໂລໂກ້ Ecolabel:** ໂລໂກ້ Ecolabel ຂອງ EU (Ecolabel EU) ສຳລັບເກີບ ແມ່ນມີຜົນນຳໃຊ້ກັບ ເກີບໝົດທຸກປະເພດ, ລວມທັງຂອງກິລາ, ເກີບອາຊີບ, ຂອງເດັກນ້ອຍ, ຂອງຜູ້ຊາຍ, ເກີບຂອງຜູ້ຍິງ ແລະ ຂອງຜູ້ຊ່ຽວຊານ ສຳລັບອາກາດທີ່ເຢັນ, ໃຊ້ໃສ່ແບບທຳມະດາ, ໃສ່ເປັນແຟຊັ່ນ ແລະ ໃສ່ໃນຫ້ອງ.[126] ຜູ້ຜະລິດເກີບ ທີ່ຕ້ອງການນຳໃຊ້ ໂລໂກ້ Ecolabel ຂອງ EU ໃສ່ກັບຜະລິດຕະພັນຂອງຕົນ ຄວນກວດສອບເບິ່ງເງື່ອນໄຂສະເພາະ[127] ແລະ ເອກະສານ ທີ່ສະແດງຂໍ້ມູນທີ່ເປັນປະໂຫຍດ ທີ່ກ່ຽວຂ້ອງ.[128]

**ການສະເໜີຂໍ ແລະ ການນຳໃຊ້ ໂລໂກ້ EU Ecolabel:** ຜູ້ສົ່ງອອກເກີບ ຈາກ ສປປ ລາວ ທີ່ຕ້ອງການຕິດສະຫຼາກຜະລິດຕະພັນຂອງຕົນ ດ້ວຍໂລໂກ້ EU Ecolabel ຈະຕ້ອງສົ່ງຄຳຮ້ອງສະເໜີຫາອົງການທີ່ມີສິດອຳນາດ ຂອງ ປະເທດທີ່ເປັນສະມາຊິກ EU ໃດໜຶ່ງ ບ່ອນທີ່ຈະວາງຂາຍ ຜະລິດຕະພັນ, ຫຼື ບ່ອນທີ່ໄດ້ວາງຂາຍແລ້ວ, ຢູ່ໃນຕະຫຼາດ. ການສະໝັກ ຕ້ອງປະກອບມີ ເອກະສານທີ່ກ່ຽວຂ້ອງທັງໝົດ ເພື່ອພິສູດວ່າ ຜະລິດຕະພັນ ຖືກຕ້ອງ ສອດຄ່ອງກັບ ມາດຖານເງື່ອນໄຂ ດ້ານນິເວດວິທະຍາ ແລະ ດ້ານປະສິດທິພາບ.

ອົງການທີ່ມີສິດອຳນາດ ຈະແຈ້ງໃຫ້ ຜູ້ສະເໜີ ກ່ຽວກັບ ເອກະສານທີ່ຈຳເປັນ ທີ່ຈະຕ້ອງສົ່ງ, ຜົນການທົດສອບ ທີ່ຈະຕ້ອງໄດ້ສະໜອງ, ແລະ ວິທີ ທີ່ພວກມັນຈະຄວນຈະຖືກດຳເນີນການ. ຖ້າການສະເໜີ ປະສົບຜົນສຳເລັດ, ອົງການຈັດຕັ້ງທີ່ມີສິດອຳນາດ ຈະມອບ ສັນຍາໃຫ້ກັບ ຜູ້ສະເໜີ ທີ່ກວມເອົາຂໍ້ກຳນົດ ກ່ຽວກັບການນຳໃຊ້ ສະຫຼາກ.

ເກີບທີ່ມີໂລໂກ້ Ecolabel ສາມາດວາງຂາຍໄດ້ ໃນທຸກປະເທດ ທີ່ເປັນສະມາຊິກ EU. ການສະເໜີ ເພື່ອໃຫ້ໄດ້ຮັບມອບກາສະຫຼາກ Ecolabel ແມ່ນຂຶ້ນກັບການຈ່າຍຄ່າທຳນຽມ. ນອກຈາກນັ້ນ, ຍັງມີຄ່າທຳນຽມປະຈຳປີ ສຳລັບ ການນຳໃຊ້ສະຫຼາກ. ຂໍ້ມູນລາຍລະອຽດ ກ່ຽວກັບມາດຖານເງື່ອນໄຂ ໃນປັດຈຸບັນ ແມ່ນມີຢູ່ທີ່ www.ecolabel.eu.

## vi. ຂໍ້ມູນເພີ່ມຕື່ມ/ລາຍລະອຽດການຕິດຕໍ່ ທີ່ສຳຄັນ

ສຳລັບຂໍ້ມູນເພີ່ມຕື່ມ ກ່ຽວກັບ ຕະຫຼາດເກີບ ໃນ ສະຫະພາບເອີຣົບ, EC ສະໜອງຂໍ້ມູນຕໍ່ໄປນີ້:

| ຂໍ້ມູນກ່ຽວກັບ | ລິ້ງ |
|---|---|
| **ອຸດສາຫະກຳເກີບ** | https://ec.europa.eu/growth/sectors/fashion/footwear_en |
| **ນິຕິກຳ ທີ່ກ່ຽວຂ້ອງ ສຳລັບເກີບ** | https://ec.europa.eu/growth/sectors/fashion/footwear/legislation_en |

ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບສະມາຄົມທຸລະກິດ ແລະ ໜ່ວຍງານອື່ນໆ ທີ່ກ່ຽວຂ້ອງ, ໃນລະດັບພາກພື້ນ ແລະ ລະດັບປະເທດ, ແມ່ນໃຫ້ອີງຕາມຂ້າງລຸ່ມນີ້.

| ສະຖາບັນ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| **ສະຫະພັນເກີບເອີຣົບ** | **ສະຫະພັນເກີບເອີຣົບ (CEC) ເປັນຕົວແທນໃຫ້ແກ່ ອຸດສາຫະກຳເກີບ ຂອງເອີຣົບ ຢູ່ທີ່ ນະຄອນບຣາໂຊ.** ອົງການຈັດຕັ້ງ ລວມຕົວ ທັງສະມາຄົມ ແລະ ສະຫະພັນເກີບ ແຫ່ງຊາດ, ຊຶ່ງທຽບເທົ່າປະມານ 88% ຂອງການຜະລິດເກີບ ຢູ່ໃນລະດັບ EU. ສະຫະພັນ CEC ເວົ້າໃສ່ເພື່ອອຳນວຍຄວາມສະດວກການປະສານສົມທົບກັບ ຜູ້ມີສ່ວນກ່ຽວຂ້ອງໝົດທຸກປະເພດ ທີ່ຢູ່ໃນຕ່ອງໂສ້ການສະໜອງ, ນັບຕັ້ງແຕ່ການເກັບກຳອັດສະດຸ ແລະ ອົງປະກອບຕ່າງໆ ເພື່ອການຜະລິດ ແລະ ການນຳມຜະລິດຄືນໃໝ່. | CEC<br>Rue de la Science 14b<br>1040 Brussels<br>Belgium<br><br>ໂທ: +32 2 808 4452<br>ອີເມວ: info@cec-footwearindustry.eu<br>ເວັບໄຊ: www.cec-footwearindustry.eu |
| **ສະຫະພັນ ສະມາຄົມແຫ່ງຊາດ ຜູ້ຟອກ ແລະ ປຸງແຕ່ງໜັງ ແຫ່ງປະຊາຄົມເອີຣົບ** | **ສະຫະພັນ ສະມາຄົມແຫ່ງຊາດ ຜູ້ຟອກ ແລະ ປຸງແຕ່ງໜັງ ແຫ່ງປະຊາຄົມເອີຣົບ (COTANCE)** ແມ່ນອົງການຕົວແທນ ແກ່ອຸດສາຫະກຳໜັງເອີຣົບ. ມັນເປັນອົງການທີ່ບໍ່ຫວັງຜົນກຳໄລ ຊຶ່ງຖືກສ້າງຕັ້ງຂຶ້ນມາ ເພື່ອສົ່ງເສີມ ຜົນປະໂຫຍດ ຂອງອຸດສາຫະກຳການຟອກໜັງ ຢູ່ໃນລະດັບ EU ແລະ ສາກົນ. ນອກຈາກເປັນຕົວແທນ ແກ່ ຜູ້ຟອກ ແລະ ປຸງແຕ່ງໜັງ ເອີຣົບ ແລ້ວ, ມັນຍັງມີພາລະບົດບາດໃນການສົ່ງເສີມ ໜັງເອີຣົບ ທັງໃນ ຕະຫຼາດ EU ແລະ ຕະຫຼາດສາກົນ. | COTANCE<br>Rue Washington 40<br>1050 Brussels<br>Belgium<br><br>ໂທ: +32 2 512 77 03<br>ອີເມວ: cotance@euroleather.com<br>ເວັບໄຊ: www.euroleather.com |

| ສະຖາບັນ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| **ສະຫະພັນເກີບເອີຣົບ** | **ສະຫະພັນເກີບເອີຣົບ (CEC) ເປັນຕົວແທນໃຫ້ແກ່ ອຸດສາຫະກຳເກີບ ຂອງເອີຣົບ ຢູ່ທີ່ ນະຄອນບຣາໂຊ**. ອົງການຈັດຕັ້ງ ລວມຕົວ ທັງສະມາຄົມ ແລະ ສະຫະພັນເກີບ ແຫ່ງຊາດ, ຊຶ່ງທຽບເທົ່າປະມານ 88% ຂອງການຜະລິດເກີບ ຢູ່ໃນລະດັບ EU. ສະຫະພັນ CEC ເລັງໃສ່ເພື່ອອຳນວຍຄວາມສະດວກການປະສານສົມທົບກັບ ຜູ້ມີສ່ວນກ່ຽວຂ້ອງໝົດທຸກປະເພດ ທີ່ຢູ່ໃນຕ່ອງໂສ້ການສະໜອງ, ນັບຕັ້ງແຕ່ການເກັບກຳວັດສະດຸ ແລະ ອົງປະກອບຕ່າງໆ ເພື່ອການຜະລິດ ແລະ ການນຳມາຜະລິດຄືນໃໝ່. | CEC<br>Rue de la Science 14b<br>1040 Brussels<br>Belgium<br><br>ໂທ: +32 2 808 4452<br>ອີເມວ: info@cec-footwearindustry.eu<br>ເວັບໄຊ: www.cec-footwearindustry.eu |

# 3.3 ຜະລິດຕະພັນ ກະສິກໍາດິບ

## i. ມາດຕະການຕົ້ນຕໍ ສຳລັບ ສົ່ງອອກ ຜະລິດຕະພັນກະສິກໍາດິບ ໄປຫາ EU



### ປະຕິບັດຕາມ ມາດຕະການ ທີ່ເປັນຂໍ້ກໍານົດ ຫຼື ເປັນຄວາມຕ້ອງການ ຢູ່ໃນ ສປປ

- ຈົດທະບຽນ ວິສາຫະກິດ ໂດຍອີງຕາມ ຂັ້ນຕອນທີ່ໄດ້ລະບຸໄວ້.
- ກະກຽມເອກະສານສົ່ງອອກ
- ສະເໜີຂໍ ແລະ ຮັບເອົາ ເອກະສານອະນຸຍາດສົ່ງອອກ
- ຕື່ມແບບຟອມ ລະບົບ ASYCUDA ສໍາລັບການສະສາງພາສີ.
- ກວດກາເບິ່ງ ການແຈ້ງການ ທີ່ເປັນນິຕິກໍາ ກ່ຽວກັບ ດ້ານໃດດ້ານໜຶ່ງ ທີ່ພົວພັນກັບ ການສົ່ງອອກ (ເຊັ່ນ ມາດຕະການ ສຸຂານາໄມພືດ), ແລະ ທີ່ພົວພັນກັບ ຜະລິດຕະພັນໃດໜຶ່ງ.



### ປະຕິບັດຕາມ ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານການນໍາເຂົ້າ ຂອງ EU

- ກວດກາ ແລະ ຮັບປະກັນ ໃຫ້ມີຄວາມຖືກຕ້ອງສອດຄ່ອງ ກັບ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ຂອງສິນຄ້າ ທີ່ມີຜົນນໍາໃຊ້.
- ຮັບປະກັນ ໃຫ້ມີການຈົດທະບຽນກັບ ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງສະຫະພາບເອີຣົບ (REX).
- ສະເໜີຂໍ ແລະ ຮັບເອົາ ໃບຢັ້ງຢືນສຸຂານາໄມ້ພືດ ສໍາລັບ ຜະລິດຕະພັນ ທີ່ມີພື້ນຖານມາຈາກພືດ.



### ປະຕິບັດຕາມ ທຸກກົດລະບຽບສະເພາະຜະລິດຕະພັນ ທີ່ມີຜົນນໍາໃຊ້ ກັບ ຜະລິດຕະພັນ ທີ່ຈະຖືກວາງຂາຍ ຢູ່ໃນ ຕະຫຼາດ EU:

- ກວດກາເບິ່ງ ລະບອບການນໍາເຂົ້າ ທີ່ມີຜົນນໍາໃຊ້ ສໍາລັບ ຜະລິດຕະພັນ ທີ່ມີແຫຼ່ງກໍາເນີດ ບໍ່ໄດ້ມາຈາກສັດ
- ກວດກາເບິ່ງ ບັນດາກົດລະບຽບ ຂອງ EU ກ່ຽວກັບ ການສ້າງຕັ້ງ ສໍາລັບ ຜະລິດຕະພັນ ທີ່ມີແຫຼ່ງກໍາເນີດມາຈາກສັດ
- ກວດກາເບິ່ງ ລະດັບການຕົກຄ້າງສູງສຸດ ຂອງ EU ສໍາລັບ ສານປົນເປື້ອນ ທີ່ກ່ຽວຂ້ອງ
- ກວດກາເບິ່ງ ກົດລະບຽບທີ່ກ່ຽວຂ້ອງ ຂອງ EU ວ່າດ້ວຍ ການປົກປ້ອງພືດ ແລະ ລະດັບການຕົກຄ້າງສູງສຸດ
- ກວດເບິ່ງກົດລະບຽບພິເສດ, ເຊັ່ນ, ສໍາລັບ ຜະລິດຕະພັນປອດສານພິດ
- ກວດກາເບິ່ງ ທຸກ ຂໍ້ກໍານົດ ຫຼື ຄວາມຕ້ອງການ ກ່ຽວກັບ ການຕິດສະຫຼາກ

## ii. ເນື້ອໃນ

ສົນທິສັນຍາ ວ່າດ້ວຍ ການປະຕິບັດໜ້າທີ່ ຂອງ ສະຫະພາບເອີຣົບ (TFEU) ກຳນົດວ່າ ຜະລິດຕະພັນກະສິກຳ ແມ່ນເປັນ "ຜະລິດຕະພັນຂອງດິນ, ຂອງການລ້ຽງສັດ, ແລະ ຂອງການປະມົງ ແລະ ເປັນຜະລິດຕະພັນ ຈາກການປຸງແຕ່ງຂັ້ນຕອນທຳອິດ ທີ່ກ່ຽວຂ້ອງກັບຜະລິດຕະພັນເຫຼົ່ານີ້ໂດຍກົງ"[129] ເອກະສານຊ້ອນທ້າຍ I ຂອງ TFEU ກຳນົດ ບັນຊີລາຍຊື່ສິນຄ້າ ທີ່ພິຈາລະນາວ່າ ເປັນຜະລິດຕະພັນກະສິກຳ, ໂດຍນຳໃຊ້ການອ້າງອີງເຖິງ Tariff nomenclature. ໃນປີ 2019, ການສົ່ງອອກຜະລິດຕະພັນກະສິກຳທັງໝົດ ຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ ມີມູນຄ່າ 63 ລ້ານເອີໂຣ, ຊຶ່ງເທົ່າກັບ 22.1% ຂອງການຄ້າທັງໝົດ.[130]

**ຕາຕລາງ 14: ການສົ່ງອອກ ຈາກ ສປປ ລາວ ໄປຫາ EU ໃນປີ 2019[131]**

| ຜະລິດຕະພັນ | ມູນຄ່າການນຳເຂົ້າ ໄປຫາ EU (ເປັນເອີໂຣ) |
|---|---|
| ຜະລິດຕະພັນກະສິກຳ[132] | 63 ລ້ານ |
| ອາຫານ ແລະ ສັດທີ່ມີຊີວິດ | 61 ລ້ານ |
| ເຄື່ອງດື່ມ ແລະ ຢາສູບ | 1 ລ້ານ |

ການວິເຄາະ ຂອງ ສູນ ITC ຊີ້ໃຫ້ເຫັນວ່າ ກະສິກຳພິເສດ ຈາກ ສປປ ລາວ ມີທ່າແຮງການສົ່ງອອກທີ່ສຳຄັນ ທີ່ສູງເຖິງ 634 ລ້ານໂດລາ.[133] ພູມສັນຖານ ຂອງ ສປປ ລາວ ເຮັດໃຫ້ສາມາດປູກຜັກ ແລະ ໝາກໄມ້ພິເສດ ທີ່ຫຼາກຫຼາຍ, ແລະ ປະເທດຍັງຖືວ່າ ເປັນແຫຼ່ງກຳເນີດສິນຄ້າປອດສານພິດ ທີ່ສຳຄັນ ເນື່ອງຈາກມີປະເພນີປການນຳໃຊ້ປຸ໋ຍໜ້ອຍ.[134] **ຜະລິດຕະພັນ ທີ່ມີທ່າແຮງ ໃນການສົ່ງອອກ ປະກອບ ມີກາເຟ (ຄາດຄະເນການ ທ່າແຮງໃນການຂະຫຍາຍໂຕ ການສົ່ງອອກ ແມ່ນປະມານ 62 ລ້ານໂດລາ), ແລະ ຊາດຳ ແລະ ດອກໄມ້ສົດ.**[135] **ໃນປັດຈຸບັນ, ຜະລິດຕະພັນ ເຊັ່ນ ກາເຟ ຈາກ ສປປ ລາວ ຕົ້ນຕໍ ແມ່ນຖືກສົ່ງອອກ ໄປປະເທດແບນຊິກ ແລະ ເຢຍລະມັນ ຢູ່ໃນຕະຫຼາດ** EU (**ໝາຍເຖິງ ຍົກເວັ້ນ ການສົ່ງອອກຜະລິດຕະພັນກະສິກຳ ຂອງ ສປປ ລາວ ຢູ່ໃນຕາຕະລາ** 15).

*ຕາຕະລາງ 15: ການສົ່ງອອກ ຂອງ ສປປ ລາວ ໄປທົ່ວໂລກ ແລະ ບາງປະເທດທີ່ເປັນສະມາຊິກ EU ໃນປີ 2019*[136]

| ບົດ HS | ຂະແໜງການ | ການສົ່ງອອກທັງໝົດ ຂອງ ສປປ ລາວ ໄປຫາ ໝົດທຸກປາຍທາງ (ເປັນເງິນໂດລາ) | ການສົ່ງອອກ ໄປຫາ ບາງປະເທດທີ່ເປັນສະມາຊິກ ຂອງ EU (ເປັນເງິນ USD) | |
|---|---|---|---|---|
| **ບົດ 09** | ກາເຟ, ຖົກຂົ້ວ ຫຼື ເອົາສານຄາເຟອີນອອກ; ເປືອກ ແລະ ໜັງ ກາເຟ; ສິ່ງທີ່ທົດແທນກາເຟ ທີ່ປະກອບດ້ວຍກາເຟ ໃນອັດຕາສ່ວນໃດໜຶ່ງ | 69,506,000 | ແບນຊິກ | 5,236,000 |
| | | | ເຢຍລະມັນ | 1,441,000 |
| | | | ຊູແອດ | 483,000 |
| | | | ແອັດສະປາຍ | 269,000 |
| | | | ປ໊ອກຕຸຍການ | 268,000 |
| | | | ຝຣັ່ງ | 132,000 |
| **ບົດ 10** | ທັນຍາຫານ | 52,351,000 | ແບນຊິກ | 3,159,000 |
| | | | ໂຮນລັງ | 454,000 |
| | | | ອີຕາລີ | 379,000 |
| | | | ຝຣັ່ງ | 222,000 |
| | | | ເດັນມາກ | 134,000 |

**ສປປ ລາວ ກຳລັງແຂ່ງຂັນ ກັບ ຕະຫຼາດອື່ນທີ່ໃຫຍ່ກວ່າ ເຊັ່ນ ເປຣູ ແລະ ຫວຽດນາມ ໃນການສົ່ງອອກ ຜະລິດຕະພັນດັ່ງກ່າວ ໄປຫາ ຕະຫຼາດ** EU.

**ຕາຕະລາງ 16: ປະເທດທີ່ເປັນແຫຼ່ງກຳເນີດຕົ້ນຕໍ ຂອງການສົ່ງອອກ ບາງຜະລິດຕະພັນກະສິກຳ, ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019**[137]

| ບົດ HS | ຂະແໜງການ | ປະເທດ | ມູນຄ່ານຳເຂົ້າ ໄປຫາ EU (ເປັນເງິນເອີໂຣ) |
|---|---|---|---|
| **ບົດ 09** | ກາເຟ, ຖືກຂົ້ວ ຫຼື ເອົາສານຄາເຟອິນອອກ; ເປືອກ ແລະ ໜັງ ກາເຟ; ສິ່ງທີ່ທົດແທນ ກາເຟ ທີ່ປະກອບດ້ວຍກາເຟ ໃນອັດຕາສ່ວນໃດໜຶ່ງ | **ເປຣູ** | 1,953,564,837 |
| | | **ສະຫວິດສະແລນ** | 1,405,751,687 |
| | | **ຫວຽດນາມ** | 1,116,041,185 |
| | | **ສປປ ລາວ** | **15,433,743** |
| **ບົດ 10** | ທັນຍາຫານ | **ຢູເຄຣນ** | 2,872,497,843 |
| | | **ເປຣູ** | 833,839,012 |
| | | **ການາດາ** | 610,109,701 |
| | | **ສປປ ລາວ** | **4,827,637** |

ຍ້ອນ ທ່າອ່ຽງການບໍລິໂພກ ຂອງ ສະຫະພາບເອີຣົບ, ສປປ ລາວ ອາດສາມາດເນັ້ນໃສ່ສະເພາະ ຜະລິດຕະພັນປອດສານພິດ, ລວມທັງ ເນັ້ນໃສ່ ຜະລິດຕະພັນ ທີ່ມີຄວາມສຳຄັນໃນການສົ່ງອອກ ເຊັ່ນ: ກາເຟ, ຊາ, ສາລີ, ເຂົ້າ, ມັນຕົ້ນ ແລະ ຖົ່ວດິນ, ລວມທັງຜັກ ແລະ ໝາກໄມ້ ທີ່ຢູ່ໃນຂໍ້ກຳນົດທົ່ວໄປ ແລະ ດອກໄມ້. ໂດຍສະເພາະ, ຕະຫຼາດຜະລິດຕະພັນປອດສານພິດ ສືບຕໍ່ຂະຫຍາຍຕົວ ຢູ່ໃນ ສະຫະພາບເອີຣົບ ແລະ ອາດສາມາດນຳສະເໜີ ໂອກາດອັນສຳຄັນ ສຳລັບຜູ້ຜະລິດ ສປປ ລາວ.

ຢູ່ໃນສະຫະພາບເອີຣົບ, ຂະແໜງການອາຫານກະສິກຳ ແມ່ນຖືກຄວບຄຸມ ເປັນຢ່າງສູງ ແລະ ມັນຮຽກຮ້ອງໃຫ້ຜູ້ສົ່ງອອກ ໃຊ້ຄວາມພະຍາຍາມໃນການປະຕິບັດຕາມ ມາດຕະການທີ່ກ່ຽວຂ້ອງ ແລະ ວາງຂາຍ ຜະລິດຕະພັນ ຢູ່ໃນຕະຫຼາດ. ເຖິງແນວໃດກໍ່ຕາມ, ເນື່ອງຈາກມີກົດລະບຽບ ທີ່ເຂັ້ມງວດ ຂອງ EU ແລະ ມີກອບກ່ຽວກັບ ຜະລິດຕະພັນປອດສານພິດ, ປະກົດວ່າ ຈຳເປັນຕ້ອງມີຄວາມພະຍາຍາມເພີ່ມຕື່ມ ກ່ອນທີ່ຜະລິດຕະພັນ ຂອງ ສປປລາວ ສາມາດຖືກຕິດສະຫຼາກເປັນສິນຄ້າປອດສານພິດ ຢູ່ໃນ ສະຫະພາບເອີຣົບ.

## iii. ກົດລະບຽບວິຊາການ ທີ່ມີຜົນນຳໃຊ້ກັບ ຜະລິດຕະພັນກະສິກຳດິບ

### a) ພາສີ ສຳລັບ ການສົ່ງອອກ ຜະລິດຕະພັນກະສິກຳດິບ ພາຍໃຕ້ EBA

ພາຍໃຕ້ ແຜນງານ EBA ຂອງ ສະຫະພາບເອີຣົບ, ຜະລິດຕະພັນກະສິກຳດິບທັງໝົດ ແມ່ນຈະເຂົ້າສູ່ ການປອດພາສີ ຂອງ EU.

### b) ກົດລະບຽບ ວ່າດ້ວຍຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານແຫຼ່ງກຳເນີດ ສຳລັ ຜະລິດຕະພັນກະສິກຳດິບ ທີ່ມາຈາກ ສປປ ລາວ

ດັ່ງທີ່ໄດ້ອະທິບາຍໄວ້ ຂ້າງເທິງ ຢູ່ໃນໝວດ 2.2 (ii), ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດສິນຄ້າ ພາຍໃຕ້ ລະບຽບການ GSP ໃຫ້ຂໍ້ສັງເກດວ່າ, ເພື່ອທີ່ຈະໃຫ້ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດທາງພາສີ, ຜະລິດຕະພັນ ***ທີ່ອ້າງ***ວ່າ ໄດ້ຮັບສິດທິພິເສດທາງພາສີ ***ຕ້ອງມີແຫຼ່ງກຳເນີດ ມາຈາກປະເທດທີ່ໄດ້ຮັບຜົນປະໂຫຍດ***.[138] ຜະລິດຕະພັນ ຖືວ່າມີແຫຼ່ງກຳເນີດ ມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ ເມື່ອຜະລິດຕະພັນດັ່ງກ່າວ ໄດ້ຮັບຊື້ນສ່ວນທັງໝົດ ຢູ່ໃນປະເທດນັ້ນ ຫຼື ໄດ້ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ຢູ່ໃນປະເທດນັ້ນ.

---

*ສຳລັບຜະລິດຕະພັນກະສິກຳ, ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ແມ່ນ ໄດ້ກຳນົດໄວ້ ຢູ່ໃນພາກທີ II ຂອງ ເອກະສານຊ້ອນທ້າຍ 22-03 ລະບຽບການຕົວແທນ ຂອງ ຄະນະກຳມະການ (EU) 2015/2446.*[139]

*ເອກະສານຊ້ອນທ້າຍ 22-03 ແມ່ນຖືກຈັດອອກເປັນສາມຖັນ ດັ່ງທີ່ໄດ້ສະແດງໃຫ້ເຫັນ ໃນຮູບ 15, ທີ່ສະໜອງ ຂໍ້ມູນທີ່ຄັດຈ້ອນ ໃນຕາຕະລາງ ທີ່ກຳນົດ ກົດລະບຽບ ວ່າດ້ວຍ ແຫຼ່ງກຳເນີດ ສຳລັບ ບົດທີ 8, 9 ແລະ 10.*

---

**ຮູບ 15:** ຂໍ້ມູນທີ່ຄັດຈ້ອນ ຢູ່ໃນຕາຕະລາງ ທີ່ສະແດງໃຫ້ເຫັນ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບຜະລິດຕະພັນກະສິກຳ

**LIST OF PRODUCTS AND WORKING OR PROCESSING OPERATIONS WHICH CONFER ORIGINATING STATUS**

| Harmonised System heading | Description of product | Qualifying operation (Working or processing, carried out on non-originating materials, which confers originating status) |
|---|---|---|
| Chapter 8 | Edible fruit and nuts; peel of citrus fruits or melons | Manufacture in which:<br>— all the fruit, nuts and peels of citrus fruits or melons of Chapter 8 used are wholly obtained, and<br>— the weight of sugar (1) used does not exceed 40 % of the weight of the final product |
| Chapter 9 | Coffee, tea, maté and spices; | Manufacture from materials of any heading |
| Chapter 10 | Cereals | Manufacture in which all the materials of Chapter 10 used are wholly obtained |

| ຖັນ 1: ບົດທີ. | ຖັນ 2: ລາຍລະອຽດຂອງຜະລິດຕະພັນ ຕາມທີ່ຢູ່ໃນ CN | ຖັນ 3: ການດຳເນີນງານ ທີ່ໄດ້ຕາມເງື່ອນໄຂທີ່ກ່ຽວຂ້ອງ |
|---|---|---|

ຖ້າຈະເວົ້າແບບງ່າຍໆ, ສຳລັບຜູ້ສົ່ງອອກ ຈາກ ສປປ ລາວ, ຖັນທີ 3 ລະບຸ ການດຳເນີນການ ກວດສອບເງື່ອນໄຂຕໍ່າສຸດ ທີ່ຈຳເປັນ ສຳລັບ ຜະລິດຕະພັນກະສິກຳດິບ, ທີ່ບໍ່ໄດ້ມີແຫຼ່ງກຳເນີດ ມາຈາກ ສປປ ລາວ, ເພື່ອໃຫ້ຖືວ່າ ມີແຫຼ່ງກຳເນີດ ມາຈາກ ສປປ ລາວ ສຳລັບຈຸດປະສົງ ຂອງ ແຜນງານ EBA..

*ສຳລັບ ຜະລິດຕະພັນກະສິກຳດິບ ທີ່ຈະຖືວ່າ ມີແຫຼ່ງກຳເນີດ ມາຈາກ ສປປລາວ, ບົດສ່ວນໃຫຍ່ ຕ້ອງການໃຫ້ "ມີການຜະລິດ ຢູ່ບ່ອນ ທີ່ໄດ້ຮັບວັດສະດຸໝົດມາ"*. ຜະລິດຕະພັນ ແມ່ນຈະຖືວ່າໄດ້ຮັບຊິ້ນສ່ວນທັງໝົດ ກໍ່ຕໍ່ເມື່ອ ສິນຄ້າ ໄດ້ຮັບຊິ້ນສ່ວນທັງໝົດ ຢູ່ໃນອະນາເຂດ ຂອງປະເທດໜຶ່ງ ໂດຍບໍ່ມີການເພີ່ມ ວັດສະດຸໃດໜຶ່ງ ທີ່ມາຈາກແຫຼ່ງກຳເນີດອື່ນ. *ເຖິງຢ່າງໃດກໍ່ຕາມ, ມີຂໍ້ຍົກເວັ້ນບາງອັນ ຕໍ່ ກົດລະບຽບນີ້. ຍົກຕົວຢ່າງ,*

*ໃນບັນດາຜະລິດຕະພັນ ທີ່ກ່ຽວຂ້ອງ ສຳລັບຜູ້ສົ່ງອອກ ຈາກ ສປປ ລາວ ແມ່ນບົດທີ8, ຊຶ່ງກວມເອົາ" ໝາກໄມ້ ແລະ ຖົ່ວ ທີ່ກິນໄດ້, ເປືອກ ຂອງ ໝາກໄມ້ປະເພດໝາກນາວ ຫຼື ໝາກແຕງ".*[140]

**ເພື່ອສາທິດໃຫ້ເຫັນ ສຳລັບ ບົດທີ 8:**

| | | |
|---|---|---|
| "ໝາກໄມ້ ແລະ ຖົ່ວ ທີ່ກິນໄດ້; ເປືອກຂອງ ໝາກໄມ້ປະເພດໝາກນາວ ຫຼື ໝາກແຕງ." | **ເພື່ອໃຫ້ຖືວ່າມີແຫຼ່ງກຳເນີດຢູ່ໃນ ສປປ ລາວ** | 1. ໝາກໄມ້, ຖົ່ວ ແລະ ເປືອກ ຂອງໝາກໄມ້ປະເພດໝາກນາວ ຫຼື ໝາກແຕງ ຂອງ ບົດທີ 8 ທີ່ຖືກນຳໃຊ້ ແມ່ນໄດ້ຮັບມາທັງໝົດ – ນັ້ນກໍຄື ຄວນຈະໄດ້ຮັບມາ ຢູ່ໃນອະນາເຂດ ຂອງ ສປປ ລາວ; ແລະ<br>2. ອັດຕາສ່ວນ ຂອງນ້ຳຕານ ທີ່ຖືກນຳໃຊ້ ບໍ່ເກີນ 40% ຂອງ ອັດຕາສ່ວນ ຜະລິດຕະພັນສຸດທ້າຍ – ທີ່ຊີ້ໃຫ້ເຫັນວ່າ ອັດຕາສ່ວນ ຂອງ ນ້ຳຕານ ທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ຄວນຈະຢູ່ໃນຂອບເຂດ 40% ຂອງອັດຕາສ່ວນ ຂອງຜະລິດຕະພັນສຸດທ້າຍ (ຢູ່ພາຍໃຕ້ ເງື່ອນໄຂ ທີ່ຖືກກຳນົດ ຢູ່ໃນ ພຸດໂນດ (Footnote) ທີ່ກ່ຽວຂ້ອງ).<br>3. |

**ຈຸດສຳຄັນ ທີ່ຈະຕ້ອງໄດ້ສັງເກດ:**

- ເນື່ອງຈາກ ມີຜະລິດຕະພັນຈຳນວນຫຼວງຫຼາຍ ນອນຢູ່ພາຍໃຕ້ ຄຳວ່າ" ຜະລິດຕະພັນກະສິກຳ", ບົດແນະນຳນີ້ ບໍ່ໄດ້ສະໜອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດທີ່ກ່ຽວຂ້ອງ ທັງໝົດ ຢູ່ໃນບົດຄວາມ.
- ຜູ້ສົ່ງອອກ ແມ່ນຈະຖືກຊຸກຍູ້ ໃຫ້ນຳໃຊ້ ຄຳແນະນຳ/ຄຳອະທິບາຍ ທີ່ໄດ້ກຳນົດ ຢູ່ໃນບົດແນະນຳສະບັບນີ້ – ແລະ ກວດເບິ່ງ ບັນດາກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ທີ່ມີຜົນນຳໃຊ້ ສຳລັບ ຜະລິດຕະພັນກະສິກຳດິບ ຢູ່ໃນພາກ II ຂອງເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງ ຄະນະກຳມະການ (EU) 2015/2446.[141]
- ສປປລາວ ຜູ້ຜະລິດ ຈາກ ສປປ ລາວ ຄວນສັງເກດ ຂໍ້ຍົກເວັ້ນ ຕໍ່ກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ເຊັ່ນ Tolerances ແລະ Cumulation (ດັ່ງທີ່ໄດ້ກ່າວໄວ້ ໃນໝວດທີ 2.2 (ii) ຂ້າງເທິງ).

**ຮູບ 16:** ຂໍ້ມູນທີ່ຄັດລອນ ຈາກ ຕາຕະລາງ ທີ່ຢູ່ໃນ ເອກະສານຊ້ອນທ້າຍ 22-04 ວ່າດ້ວຍວັດສະດຸ ທີ່ແຍກຈາກ regional cumulation

ANNEX 22-04

Materials excluded from regional cumulation (1) (2)

| | | Group I: Brunei, Cambodia, Indonesia, Laos, Malaysia, Myanmar/Burma, Philippines, Thailand, Vietnam | Group III: Bangladesh, Bhutan, India, Nepal, Pakistan, Sri Lanka | Group IV (3) Argentina, Brazil, Paraguay, Uruguay |
|---|---|---|---|---|
| 0207 | Meat and edible meat offal, of the poultry of heading 0105, fresh, chilled or frozen | X | | |
| ex 0210 | Meat and edible meat offal of poultry, salted, in brine, dried or smoked | X | | |
| 0709 51<br>ex 0710 80<br>0710 40 00<br>0711 51<br>0712 31 | Mushrooms, fresh or chilled, frozen, provisionally preserved, dried Sweetcorn (uncooked or cooked by steaming or boiling in water) frozen | X | X | X |
| 1006 | Rice | X | X | |
| ex 1102 90<br>ex 1103 19<br>ex 1103 20<br>ex 1104 19<br>ex 1108 19 | Flours, groats, meal, pellets, rolled or flaked grains, starch of rice | X | X | |

## ຂໍ້ຍົກເວັ້ນ ຈາກ Regional cumulation

Regional cumulation ໝາຍເຖິງ ລະບົບໜຶ່ງ ທີ່ຜະລິດຕະພັນ ທີ່ມີແຫຼ່ງກຳເນີດ ມາຈາກ ປະເທດໜຶ່ງ ທີ່ເປັນສະມາຊິກ ຂອງ ກຸ່ມພາກພື້ນ ຈະຖືກພິຈາລະນາວ່າ ເປັນວັດສະດຸ ທີ່ມີແຫຼ່ງກຳເນີດ ມາຈາກ ປະເທດອື່ນ ທີ່ນອນໃນກຸ່ມພາກພື້ນດຽວກັນ (ຫຼື ປະເທດໜຶ່ງ ຂອງກຸ່ມພາກພື້ນອື່ນ ເມື່ອ cumulation ມີຄວາມເປັນໄປໄດ້), ເມື່ອ ມີການສືບຕໍ່ປຸງແຕ່ງ ຫຼື ປະກອບເຂົ້າເປັນຜະລິດຕະພັນໜຶ່ງ ຢູ່ທີ່ນັ້ນ.[142]

*ສິ່ງດັ່ງກ່າວນີ້ ເປັນສິ່ງສຳຄັນ ສຳລັບ ສປປ ລາວ, ເນື່ອງຈາກວ່າ ຜະລິດຕະພັນກະສິກຳດິບບາງຢ່າງ ແມ່ນຖືກຍົກເວັ້ນຈາກ* Regional cumulation.[143] ຖ້າເບິ່ງລະອຽດໄປກວ່ານີ້, ຜະລິດຕະພັນ ທີ່ປະກອບຢູ່ໃນ ຫົວຂໍ້ (Headings) 0207, ex 0210, 070951, ex 0710 80,

0710 40 00, 0711 51, 0712 31, 1006, ex 1102 90, ex 1103 19, ex 1103 20, ex 1104 19 ແລະ ex 1108 19 ທີ່ມາຈາກ ບັນດາປະເທດ ທີ່ຢູ່ໃນກຸ່ມ 1 (ທີ່ ສປປ ລາວ ເປັນສ່ວນໜຶ່ງ) ບໍ່ຜ່ານເງື່ອນໄຂ ສຳລັບ Regional cumulation. ນີ້ແມ່ນນອນຢູ່ໃນ ເອກະສານຊ້ອນທ້າຍ 22-04 ຂອງ *ລະບຽບການຕົວແທນ ຂອງ ຄະນະກຳມະການ* (EU) *ເລກທີ* 2015/2446 (*ອີງໃສ່ ຮູບ* 16).

ຜົນກໍຄືວ່າ, ຜະລິດຕະພັນ ທີ່ນອນໃນລາຍຊື່ ໃນຮູບ 16, ທີ່ໄດ້ມາຈາກ ປະເທດຕ່າງໆ ທີ່ບໍ່ແມ່ນ ສປປ ລາວ, ບໍ່ສາມາດຜ່ານເງື່ອນໄຂ ໃນນາມ ມີແຫຼ່ງກຳເນີດ ຈາກ ສປປ ລາວ (ເຖິງແມ່ນວ່າ ຈະຢູ່ພາຍໃນກຸ່ມ Regional cumulation).

## iv. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ຜະລິດຕະພັນກະສິກຳດິບ

### a) ກົດລະບຽບການນຳເຂົ້າ ຕໍ່ກັບ ຜະລິດຕະພັນກະສິກຳ ຢູ່ໃນຕະຫຼາດ EU

ລະບຽບການ ວ່າດ້ວຍອົງການຈັດຕັ້ງຕະຫຼາດທົ່ວໄປ ຂອງ ສະຫະພາບເອີຣົບ ສ້າງຕັ້ງ ອົງການຈັດຕັ້ງທົ່ວໄປ ຂອງຕະຫຼາດ ສຳລັບ ຜະລິດຕະພັນກະສິກຳ, ຊຶ່ງໝາຍເຖິງ ຜະລິດຕະພັນທັງໝົດ ທີ່ມີຢູ່ໃນລາຍຊື່ ຂອງ ເອກະສານຊ້ອນທ້າຍ I ຂອງ ສົນທິສັນຍາ ວ່າດ້ວຍ ການປະຕິບັດໜ້າທີ່ ຂອງ ສະຫະພາບເອີຣົບ, ໂດຍມີຂໍ້ຍົກເວັ້ນ ຜະລິດຕະພັນການປະມົງ ແລະ ສັດນ້ຳ.[144]

*ຢູ່ໃນຈຳນວນລະບຽບການຕ່າງໆ*, ລະບຽບການ ວ່າດ້ວຍອົງການຈັດຕັ້ງຕະຫຼາດທົ່ວໄປ ຂອງ EU ກຳນົດ ກົດລະບຽບ ສຳລັບ ການຄ້າຜະລິດຕະພັນກະສິກຳ ກັບ ປະເທດທີ່ບໍ່ແມ່ນສະມາຊິກ EU ເຊັ່ນ ສັດປະເພດງົວຄວາຍ, ເຫຼົ້າແວງ, ນົມ, ໄຂ່ ແລະ ນ້ຳຕານ. ຍົກຕົວຢ່າງ, ການນຳເຂົ້າ ແລະ ສົ່ງອອກ ບາງຜະລິດຕະພັນ ອາດຈະຕ້ອງການ ໃບອະນຸຍາດ ແລະ ໂດຍທົ່ວໄປແລ້ວ, ພາສີນຳເຂົ້າ ອາດສາມາດມີຜົນນຳໃຊ້ ບົນພື້ນຖານ ອັດຕາພາສີທົ່ວໄປຂອງສະຫະພາບເອີຣົບ (EU Common Customs Tariff). ຢູ່ໃນກອບພາສີນຳເຂົ້າ, ກົດລະບຽບສະເພາະ ແມ່ນໄດ້ຖືກວາງໄວ້ ສຳລັບບາງຜະລິດຕະພັນ ເຊັ່ນ: ກັນຊາ, ຕົ້ນຮ້ອບ, ເຫຼົ້າແວງ, ແລະ ນ້ຳຕານ ສຳລັບກັ່ນ.

ຄະນະກຳມະການເອີຣົບ ອາດຈະອອກໂກຕ້າພາສີນຳເຂົ້າ ແບບຕາຍໂຕ, ທີ່ໃຫ້ອະນຸຍາດໃນປະລິມານທີ່ທີ່ຕາຍໂຕ ສຳລັບ ສິນຄ້າ ທີ່ສາມາດນຳເຂົ້າ ດ້ວຍອັດຕາພາສີທີ່ຫຼຸດລົງ.[145] ເຖິງແນວໃດກໍ່ຕາມ, ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ພາຍໃຕ້ແຜນງານ EBA, ຜູ້ສົ່ງອອກ ຈາກ ສປປ ລາວ ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງຕະຫຼາດ EU ແບບປອດພາສີ ແລະ ປາສະຈາກໂກຕ້າ ສຳລັບຜະລິດຕະພັນກະສິກຳທັງໝົດ.

#### *ກົດລະບຽບການນຳເຂົ້າ ຂອງ EU ສຳລັບ ຜະລິດຕະພັນ ທີ່ມີແຫຼ່ງກຳເນີດຈາກສັດ*

ກົດລະບຽບທົ່ວໄປ ຂອງ ສະຫະພາບເອີຣົບ ນຳໃຊ້ ສຳລັບການຄວບຄຸມ ທີ່ຖືກດຳເນີນ ຢູ່ທີ່ຊາຍແດນ ກ່ຽວກັບ ການນຳເຂົ້າສັດ, ຜະລິດຕະພັນທີ່ມີແຫຼ່ງກຳເນີດຈາກສັດ, ແລະ ພືດ ກ່ອນທີ່ພວກມັນຈະເຂົ້າໄປໃນ ອະນາເຂດ ຂອງ EU.

ພາຍໃຕ້ ລະບຽບການຄວບຄຸມຢ່າງເປັນທາງການ ຂອງ ສະຫະພາບເອີຣົບ, ບັນດາປະເທດສະມາຊິກ EU ແມ່ນຈະຕ້ອງຮັບປະກັນວ່າ ການຄວບຄຸມຢ່າງເປັນທາງການ ແມ່ນໄດ້ຖືກດຳເນີນ ເປັນປົກກະຕິ, ບົນພື້ນຖານຄວາມສ່ຽງ ແລະ ດ້ວຍຄວາມຖີ່ທີ່ ທີ່ເໝາະສົມ ເພື່ອບັນລຸ ຈຸດປະສົງ ຂອງ ລະບຽບການຄວບຄຸມຢ່າງເປັນທາງການ, ໂດຍສະເພາະ ຈຸດປະສົງຂອງການປ້ອງກັນ, ກຳຈັດ ຫຼື ຫຼຸດຜ່ອນ ໃຫ້ໄປຢູ່ໃນລະດັບທີ່ຍອມຮັບໄດ້ ສຳລັບ ຄວາມສ່ຽງ ທີ່ມີຕໍ່ ມະນຸດ ແລະ ສັດ.[146]

**ສຳລັບ ສັດ ແລະ ສິນຄ້າ ທີ່ເຂົ້າໄປໃນ ສະຫະພາບເອີຣົບ,** ບົດທີ V ຂອງ ລະບຽບການຄວບຄຸມຢ່າງເປັນທາງການ ກຳນົດ ສຳລັບ ການຄວບຄຸມ ແລະ ການກວດກາ ຢ່າງເປັນທາງການ ທີ່ຖືກດຳເນີນ ໂດຍ ເຈົ້າໜ້າທີ່ມີສິດອຳນາດ ຂອງ ສະຫະພາບເອີຣົບ ຕໍ່ກັບ ຜູ້ປະກອບການທຸລະກິດອາຫານທັງໝົດ, ໂດຍມີຄວາມຖີ່ ຂອງການກວດກາເຫຼົ່ານີ້ ທີ່ຖືກກຳນົດ ບົນພື້ນຖານ ຄວາມສ່ຽງ.

#### ການສົ່ງອອກສັດ ແລະ ຜະລິດຕະພັນສັດ ໄປຫາ EU

ສະຫະພາບເອີຣົບ ຮັກສາ **ລະບົບການສ້າງຕັ້ງ ທີ່ຖືກຮັບຮອງ** ໃນກໍລະນີ ການສົ່ງອອກສັດ ແລະ ຜະລິດຕະພັນສັດ ໄປຫາ EU. ໂດຍສະເພາະ:

| | |
|---|---|
| **ແຫຼ່ງກຳເນີດທີ່ຖືກຮັບຮອງ ສຳລັບອາຫານປະເພດໃດໜຶ່ງ ທີ່ມີແຫຼ່ງກຳເນີດມາຈາກສັດ** | ປະເທດ ທີ່ບໍ່ແມ່ນສະມາຊິກ EU (ປະເທດທີສາມ) ຕ້ອງໄດ້ຖືກຮັບຮອງ ເພື່ອສົ່ງອອກ ປະເພດອາຫານໃດໜຶ່ງ ທີ່ມີແຫຼ່ງກຳເນີດມາຈາກສັດ ແລະ ຕອ້ງນອນຢູ່ໃນບັນຊີລາຍຊື່ ຂອງ ບັນດາປະເທດທີ່ບໍ່ແມ່ນສະມາຊິກ EU ທີ່ຖືກຮັບຮອງ ສຳລັບ ປະເພດອາຫານ ນັ້ນໆ. |
| **ການປະເມີນ ປະເທດ ແລະ ອົງການທີ່ມີສິດອຳນາດ** | ກ່ອນປະເທດ ຈະຖືກຮັບຮອງ ແລະ ສາມາດເລີ່ມສົ່ງອອກ ປະເພດອາຫານ ທີ່ມີແຫຼ່ງກຳເນີດມາຈາກສັດ, ຈະມີການດຳເນີນ ການປະເມີນ ປະເທດ ແລະ ອົງການທີ່ມີສິດອຳນາດ ຂອງປະເທດນັ້ນ ໂດຍ ຜູ້ກວດສອບດ້ານສຸຂະພາບ ແລະ ອາຫານ ແລະ ຫ້ອງການວິເຄາະ, ທີ່ຕັ້ງຢູ່ ແກຣງ, ປະເທດໄອແລນ (ຄະນະກຳມະການເອີຣົບ, ຫົວໜ້າກົມສະຂະພາບ ແລະ ຄວາມປອດໄພຂອງອາຫານ). |
| **ຂໍ້ກຳນົດ ຫຼື ຄວາມຕ້ອງການ ສະເພາະ ສຳລັບແຕ່ລະ ປະເພດ ຜະລິດຕະພັນອາຫານ** | ຂໍ້ກຳນົດ ຫຼື ຄວາມຕ້ອງການສະເພາະ ສຳລັບ ແຕ່ລະປະເພດ ຂອງ ຜະລິດຕະພັນອາຫານ ແມ່ນຖືກລະບຸໄວ້ ຢູ່ໃນ ເອກະສານຊ້ອນທ້າຍ III ຂອງລະບຽບການ (EC) ເລກທີ 853/2004.<br><br>*ຂໍ້ກຳນົດ ຫຼື ຄວາມຕ້ອງການ ເຫຼົ່ານີ້ ຕ້ອງໄດ້ຮັບການ ກວດກາ ແລະ ຮັບປະກັນ ໂດຍ ອົງການທີ່ມີສິດອຳນາດ ຂອງ ປະເທດ ທີ່ບໍ່ໄດ້ເປັນສະມາຊິກ ຂອງ EU ກ່ອນທີ່ ການສ້າງຕັ້ງ ສາມາດຖືກບັນທຶກ ຢູ່ໃນລາຍຊື່ ວ່າເປັນການສ້າງຕັ້ງ ທີ່ຖືກຮັບຮອງຈາກ EU.*<br><br>*ອົງການທີ່ມີສິດອຳນາດ ຂອງ ປະເທດທີ່ບໍ່ແມ່ນສະມາຊິກ EU ຍັງຕ້ອງໄດ້ລາຍງານ ຄະນະກຳມະການ ຖ້າວ່າ ການສ້າງຕັ້ງ ບໍ່ໄດ້ຕາມຂໍ້ກຳນົດ ຫຼື ຄວາມຕ້ອງການ ທີ່ໄດ້ກ່າວມາຂ້າງເທິງ ອີກແລ້ວ.* |
| **ແຜນການຕິດຕາມສານຕົກຄ້າງ** | ປະເທດທີ່ບໍ່ເປັນສະມາຊິກ ຂອງ EU ຕ້ອງມີ ແຜນການຕິດຕາມສານຕົກຄ້າງ (ໂດຍສອດຄ່ອງກັບ ຄຳແນະນຳ ຂອງສະພາ 96/23/EC) ສຳລັບ ປະເພດອາຫານ ທີ່ມີແຫຼ່ງກຳເນີດມາຈາກສັດ ແລະ ຕ້ອງປະກົດເຫັນຢູ່ໃນ ບັນຊີລາຍຊື່ ຂອງ ບັນດາປະເທດ ທີ່ມີແຜນຕິດຕາມສານຕົກຄ້າງ ທີ່ຖືກຮັບຮອງ.[147] |
| **ແຜນງານຄວບຄຸມ ແບັກທີເຣຍ ແຊະເມີເນະລາ** | ສຳລັບ ຜະລິດຕະພັນອາຫານ ທີ່ກ່ຽວຂ້ອງ, ປະເທດທີ່ບໍ່ເປັນສະມາຊິກ EU ຕ້ອງມີແຜນງານຄວບຄຸມ ແບັກທີເຣຍ ແຊະເມີເນະລາ ຢູ່ໃນປະຊາກອນ ຂອງສັດ ໂດຍສອດຄ່ອງກັບ ລະບຽບການ (EC) ເລກທີ 2160/2003. |
| **ບັນຊີລາຍຊື່ ການສ້າງຕັ້ງ ທີ່ອັບເດດ** | ອົງການທີ່ມີສິດອຳນາດ ມີໜ້າທີ່ຮັບຜິດຊອບ ໃນການຮັກສາ ບັນຊີລາຍຊື່ ການສ້າງຕັ້ງ ໃຫ້ອັບເດດຕະຫຼອດເວລາ ແລະ ລາຍງານ ຄະນະກຳມະການ ທຸກການປ່ຽນແປງທີ່ຈຳເປັນ.[148] |

ສຳລັບ ສປປ ລາວ, ໃນປັດຈຸບັນ, ມີພຽງແຕ່ການສ້າງຕັ້ງດຽວເທົ່ານັ້ນ, ນັ້ນກໍຄື ໂຮງງານປຸງແຕ່ງ ສຳລັບຊິ້ນສ່ວນທີ່ມາຈາກສັດທີ່ຄືນບໍ່ກິນ, ທີ່ຖືກຈົດເຂົ້າລາຍຊື່ ໃນເອກະສານ ທີ່ກ່ຽວຂ້ອງ ຂອງ ສະຫະພາບເອີຣົບ.[149]

**ການຄວບຄຸມ ຢ່າງເປັນທາງການ ແມ່ນຖືກດຳເນີນ ກັບປະເພດສັດ ແລະ ສິນຄ້າ ຕໍ່ໄປນີ້:**

- ສັດ;
- ຜະລິດຕະພັນ ທີ່ມີແຫຼ່ງກຳເນີດຈາກສັດ, ຜະລິດຕະພັນທີ່ເປັນເຊື້ອພະຍາດ, ຊິ້ນສ່ວນຂອງສັດທີ່ຄືນບໍ່ກິນ, ຫຍ້າແຫ້ງ ແລະ ເຟືອງ ແລະ ອາຫານ ທີ່ປະກອບດ້ວຍ ທັງຜະລິດຕະພັນທີ່ມີແຫຼ່ງກຳເນີດມາຈາກພືດ ແລະ ຜະລິດຕະພັນປຸງແຕ່ງ ທີ່ມີແຫຼ່ງກຳເນີດມາຈາກ (ຜະລິດຕະພັນປະສົມ);

- *ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ທີ່ໄດ້ກ່າວໄວ້ຢູ່ໃນ ບັນຊີລາຍຊື່ ທີ່ໄດ້ສ້າງຂຶ້ນ ໂດຍອີງຕາມ ມາດຕາ* 72 (1) *ແລະ* 74 (1) *ຂອງ ລະບຽບການ* (EU) 2016/2031 *ຂອງ ລັດຖະສະພາ ແລະ ສະພາເອີຣົບ, ລົງວັນທີ* 26 *ຕຸລາ* 2016 *ວ່າດ້ວຍ ມາດຕະການປ້ອງກັນ ຕ້ານສັດຕູພືດ,*
- ສິນຄ້າ ທີ່ມາຈາກປະເທດທີສາມ ບາງປະເທດ ທີ່ຄະນະກຳມະການເອີຣົບ ໄດ້ຕັດສິນໃຈວ່າ ມາດຕະການ ທີ່ຕ້ອງການໃຫ້ມີການເພີ່ມການຄວບຄຸມຢ່າງເປັນທາງ ແບບການຊົ່ວຄາວ ຢູ່ທີ່ຈຸດພວກມັນຈະເຂົ້າໄປ EU ແມ່ນເປັນສິ່ງທີ່ຈຳເປັນ ເນື່ອງຈາກວ່າ ມີຄວາມສ່ຽງ ທີ່ເປັນທີຮູ້ຈັກ ຫຼື ທີ່ກຳລັງຈະເກີດຂຶ້ນ ຫຼື ເນື່ອງຈາກ ມີຫຼັກຖານ ສະແດງໃຫ້ເຫັນວ່າ ມີການກະຈາຍ ການບໍ່ປະຕິບັດຕາມ ບັນດາກົດລະບຽບ ທີ່ກ່າວເຖິງ ໃນມາດຕາ 1 (2) ຢ່າງໜັກໜ່ວງ ທີ່ກ່ຽວຂ້ອງກັບອາຫານ ແລະ ຄວາມປອດໄພ ຂອງອາຫານ ທີ່ອາດຈະເກີດຂຶ້ນໄດ້; ແລະ
- ສັດ ແລະ ສິນຄ້າ ທີ່ຢູ່ພາຍໃຕ້ ມາດຕະການສຸກເສີນ ທີ່ກ່ຽວຂ້ອງກັບ ພະຍາດສັດຕິດຕໍ່ທາງສັດ ແລະ ສັດຕູພືດ ທີ່ຕ້ອງການ ການຂົນສົ່ງສັດ ຫຼື ສິນຄ້າ ເຫຼົ່ານັ້ນ.[150]

### ປະເພດການຄວບຄຸມ:

- ການຄວບຄຸມ ແບບເປັນທາງການ ກ່ຽວກັບ ປະເພດສັດ ແລະ ສິນຄ້າທີ່ກ່າວມາຂ້າງເທິງ ປະກອບມີ ການກວດກາເອກະສານ, ການກວດກາຕົວຕົນ ແລະ ການກວດກາທາງກາຍະພາບ.
- ສຳລັບສັດ ແລະ ສິນຄ້າອື່ນ ນອກເໜືອຈາກອັນທີ່ໄດ້ກ່າວມາຂ້າງເທິງ, ການຄວບຄຸມແບບພິເສດ ປະກອບດ້ວຍ ການກວດກາເອກະສານທຸກຄັ້ງ.[151] ການກວດກາຕົວຕົນ ແລະ ການກວດກາທາງກາຍະພາບ ແມ່ນຂຶ້ນກັບ ຄວາມສ່ຽງທີ່ມີຕໍ່ມະນຸດ, ຕໍ່ສຸຂະພາບຂອງສັດ ຫຼື ພືດ, ຕໍ່ຄວາມເປັນຢູ່ ຂອງສັດ ຫຼື ກ່ຽວກັບ ສິ່ງມີຊີວິດ ທີ່ຖືກດັດແປງພັນທຸກຳ (GMO) ແລະ ຜະລິດຕະພັນປົກປ້ອງພືດ, ຍັງຕໍ່ກັບສິ່ງແວດລ້ອມນຳອີກດ້ວຍ.

### ສະຖານທີ່ ບ່ອນກວດກາ:

- ການຄວບຄຸມຢ່າງເປັນທາງການ ພາຍໃຕ້ ບົດທີ V ຂອງ ລະບຽບການຄວບຄຸມຢ່າງເປັນທາງການ ແມ່ນຖືກດຳເນີນຢູ່ທີ່ດ່ານຄວບຄຸມຊາຍແດນ ແລະ ຈຸດອື່ນໆ ເຂົ້າໄປຫາ ສະຫະພາບເອີຣົບ.[152]
- ຍິ່ງໄປກວ່ານັ້ນ, ເມື່ອ ເຈົ້າໜ້າທີ່ ທີ່ມີສິດອຳນາດ ຂອງ ປະເທດສະມາຊິກ EU ມີເຫດຜົນ ທີ່ຈະເຊື່ອວ່າ ຈຸດເຂົ້າໄປຫາສະຫະພາບເອີຣົບຂອງເຂົາເຈົ້າ ສາມາດປະເຊີນກັບ ຄວາມສ່ຽງ ຕໍ່ກັບ ມະນຸດ, ສັດ ຫຼື ສຸຂະພາບຂອງພືດ, ຄວາມເປັນຢູ່ຂອງສັດ ຫຼື ກ່ຽວກັບ GMO ແລະ ຜະລິດຕະພັນປົກປ້ອງພືດ, ແລະ ຕໍ່ກັບ ສິ່ງແວດລ້ອມ, ເຂົາເຈົ້າ ຈະຕ້ອງ ດຳເນີນການຄວບຄຸມຢ່າງເປັນທາງ ຕໍ່ກັບ ວິທີການຂົນສົ່ງ, ລວມທັງ ບ່ອນທີ່ວ່າງເປົ່າ, ແລະ ຕໍ່ກັບການຫຸ້ມຫໍ່, ລວມທັງພາເລດ.[153]

## *ກົດລະບຽບການນຳເຂົ້າ ຂອງ* EU *ສຳລັບຜະລິດຕະພັນ ທີ່ບໍ່ມີແຫຼ່ງກຳເນີດຈາກສັດ*

*ລະບອບການຄວບຄຸມ ການນຳເຂົ້າສິນຄ້າ ຂອງສະຫະພາບເອີຣົບ ສຳລັບ ຜະລິດຕະພັນ ທີ່ບໍ່ມີແຫຼ່ງກຳເນີດຈາກສັດ ກ່ໍຍັງຈະ ຖືກຄວບຄຸມ ໂດຍ ລະບຽບການຄວບຄຸມຢ່າງເປັນທາງການ* (Official Control Regulation).

ໂດຍທົ່ວໄປແລ້ວ, ສະຫະພາບເອີຣົບ ນຳໃຊ້ 4 ລະບອບການຄວບຄຸມການນຳເຂົ້າ ທີ່ແຕກຕ່າງກັນ **ໂດຍອີງຕາມ ຄວາມສ່ຽງທີ່ຮັບຮູ້ ສຳລັບຜູ້ບໍລິໂພກ EU**:

1. ການກວດກາ ກ່ອນການສົ່ງອອກ ສຳລັບ ຜະລິດຕະພັນ ທີ່ມີຄວາມສ່ຽງຕ່ຳສຸດ
2. ບໍ່ມີລະບອບທີ່ສະເພາະເຈາະຈົງ
3. ການຄວບຄຸມ ທີ່ເພີ່ມຂຶ້ນ ໂດຍອີງໃສ່ ຄວາມສ່ຽງ ທີ່ໄດ້ປະກົດຂຶ້ນ ຫຼື ທີ່ຖືກຮັບຮູ້ ແລະ ຕາມທີ່ໄດ້ຕົກລົງ ໂດບ EU ບົນພື້ນຖານເປັນແຕ່ລະກໍລະນີ
4. ມາດຕະການປົກປ້ອງ ຢູ່ໃນກໍລະນີ ມີຄວາມສ່ຽງສູງສຸດ ທີ່ຖືກຮັບຮູ້

| | |
|---|---|
| **1. ການກວດກາ ກ່ອນການສົ່ງອອກ ສຳລັບ ຜະລິດຕະພັນ ທີ່ມີຄວາມສ່ຽງຕ່ຳສຸດ** | ▪ ການກວດສອບ ກ່ອນການສົ່ງອອກ ຖືກກຳນົດ ພາຍໃຕ້ ມາດຕາ 73 ຂອງ ລະບຽບການຄວບຄຸມ ທີ່ເປັນທາງການ. |

| | |
|---|---|
| | ▪ ພາຍຫຼັງມີການສະເໜີ ຈາກ ປະເທດທີສາມ ປະເທດໜຶ່ງ, EC ອາດຈະຮັບຮອງ ການຄວບຄຸມສະເພາະ ກ່ອນການສົ່ງອອກ ທີ່ປະເທດທີສາມ ສາມາດດຳເນີນ ໃນ ການຂົນສົ່ງສິນຄ້າ ກ່ອນສົ່ງອອກໄປຫາ EU.<br>▪ *ໃນປັດຈຸບັນ, ມີພຽງສະເພາະແຕ່ ການກວດກາ ກ່ອນການສົ່ງອອກ ທີ່ອະນຸຍາດ ໂດຍ EC ເທົ່ານັ້ນ ບົນພື້ນຖານ ລະບຽບການ ທີ່ໄດ້ກ່າວມາຂ້າງເທິງ ແມ່ນ:*<br>- *ຖົ່ວດິນ ແລະ ຜະລິດຕະພັນທີ່ໄດ້ມາ ທີ່ມີສານ aflatoxins – ທີ່ຖືກດຳເນີນ ໂດຍ ປະເທດສະຫະລັດອາເມລິກາ;*<br>- *ສາລີ ແລະ ແປ້ງສາລີ ທີ່ມີ ສານ ochratoxin – ທີ່ຖືກດຳເນີນໂດຍ ປະເທດການນາດາ.* |
| **2. ລະບອບທີ່ບໍ່ສະເພາະເຈາະຈົງ** | ກົດລະບຽບທ◌ົ◌ົ່ວໄປ ຂອງ ລະບຽບການຄວບຄຸມທີ່ເປັນທາງການ ມີຜົນນຳໃຊ້. |
| **3. ການຄວບຄຸມ ທີ່ເພີ່ມຂຶ້ນ ໂດຍອີງໃສ່ ຄວາມສ່ຽງ ທີ່ໄດ້ປະກົດຂຶ້ນ ຫຼ◌ື ທີ່ຖືກຮັບຮູ້ ແລະ ຕາມທີ່ໄດ້ຕົກລົງ ໂດບ EU ບົນພື້ນຖານເປັນແຕ່ລະກໍລະນີ** | ▪ EC ຕັດສິນໃຈ ກ່ຽວກັບ **ການເພີ່ມການຄວບຄຸມທີ່ເປັນທາງການ ແບບຊົ່ວຄາວ** ຢູ່ທີ່ການເຂົ້າໄປຫາ EU ສໍາລັບ ອາຫານຄົນ ແລະ ອາຫານສັດບາງຢ່າງ ທີ່ບໍ່ມີແຫຼ່ງກຳເນີດ ມາຈາກສັດ ຈາກ ປະເທດທີສາມ ເມື່ອມີ ຄວາມສ່ຽງເກີດຂຶ້ນ ຫຼື ທີ່ຖືກຮັບຮູ້ ຫຼື ເມື່ອ ມີຫຼັກຖານ ການແຜ່ການບໍ່ປະຕິບັດຕາມ ນິຕິກຳຕ່ອງໂສ້ອາຫານ ແລະ ກະສິກຳ ຂອງ EU ຢ່າງຮ້າຍແຮງ.<br>▪ ລາຍຊື່ຂອງຜະລິດຕະພັນເຫຼົ່ານີ້ ທີ່ຊີ້ໃຫ້ເຫັນ ລະຫັດ Combined Nomenclature (CN) ຂອງເຂົາເຈົ້າ ແມ່ນຖືກກຳນົດຂຶ້ນ ແລະ ຮັກສາ ຢູ່ໃນເຄື່ອງມືທາງນິຕິກຳ ຂອງ EU,[154] ໂດຍອີງຕາມ ມາດຕາ 47(2)(b) ຂອງລະບຽບການຄວບຄຸມ ຢ່າງເປັນທາງການ.[155]<br>▪ ເຈົ້າໜ້າທີ່ທີ່ມີສິດອຳນາດ ຂອງ ປະເທດທີ່ເປັນສະມາຊິກ EU ຢູ່ທີ່ດ່ານກວດກາຊາຍແດນ ແລະ ຢູ່ທີ່ ຈຸດຄວບຄຸມ ດຳເນີນ ການກວດກາຕົວຕົນ ແລະ ການກວດກາທາງກາຍະພາບ, ລວມທັງ ການເຮັດເອົາຕົວຢ່າງ ແລະ ການວິເຄາະໃນຫ້ອງແລັບ, ກ່ຽວກັບ ການສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນຢູ່ໃນບັນຊີລາຍຊື່ ຂອງ ນິຕິກຳຂອງ EU ແລະ ຢູ່ທີ່ຄວາມຖີ່ສະເພາະ.[156]<br>▪ *ໃນປັດຈຸບັນ, ບໍ່ມີຜະລິດຕະພັນກະສິກຳ ຈາກ ສປປ ລາວ ທີ່ຢູ່ພາຍໃຕ້ ການຄວບຄຸມທີ່ເພີ່ມຂຶ້ນ. ຢ່າງໜ້ອຍ ສອງຄັ້ງຕໍ່ປີ, ຄະນະກຳມະການເອີຣົບ ທົບທວນ ລາຍຊື່ ຂອງ ຜະລິດຕະພັນ ທີ່ຢູ່ພາຍໃຕ້ ການຄວບຄຸມທີ່ເພີ່ມຂຶ້ນ.* |
| **4. ມາດຕະການປົກປ້ອງ ຢູ່ໃນກໍລະນີ ມີຄວາມສ່ຽງສູງສຸດ ທີ່ຖືກຮັບຮູ້** | ▪ ອາຫານຄົນ ແລະ ອາຫານສັດ ທີ່ບໍ່ມີແຫຼ່ງກຳເນີດມາຈາກສັດ ທີ່ບັງຄັບໃຊ້ ການມີຄວາມສ່ຽງຢ່າງໜັກໜ່ວງ ຕໍ່ ສາທາລະນະສຸກ, ຊຶ່ງບໍ່ສາມາດ ຖືກບັນຈຸ ຢ່າງໜ້າພໍໃຈໄດ້ ດ້ວຍວິທີ ຂອງ ມາດຕະການ ທີ່ນຳໃຊ້ ໂດຍ ບັນດາປະເທດສະມາຊິກ EU, ແມ່ນນອນຢູ່ໃນລາຍຊື່ ໃນເຄື່ອງມືນິຕິກຳ ຂອງ EU ແລະ ຢູ່ພາຍໃຕ້ ມາດຕະການສຸກເສີນ.[157]<br>▪ ເຈົ້າໜ້າທີ່ ທີ່ມີສິດອຳນາດ ຂອງ ບັນດາປະເທດສະມາຊິກ EU ທີ່ຢູ່ດ່ານກວດກາຊາຍແດນ ແລະ ທີ່ຢູ່ທີ່ຈຸດຄວບຄຸມ ດຳເນີນການ ກວດກາຕົວຕົນ ແລະ ການກວດກາທາງກາຍະພາບ, ລວມທັງ ການເຮັດຕົວຢ່າງ ແລະ ການວິເຄາະ ໃນກ້ອງທົດລອງ ທີ່ຖືກຍອມຮັບ ກ່ຽວກັບ ການຂົນສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີນອນໃນບັນຊີລາຍການ ດ້ວຍຄວາມຖີ່ທີ່ກຳນົດໄວ້.[158]<br>▪ ແຕ່ລະການຂົນສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນໃນບັນຊີລາຍຊື່ ແມ່ນຈະຕ້ອງຖືກລະບຸຕົວຕົນ ດ້ວຍ ລະຫັດລະບຸຕົວຕົນ ແລະ ຈະຕ້ອງມີຜົນ ການເຮັດຕົວຢ່າງ ແລະ ການວິເຄາະ ທີ່ໄດ້ປະຕິບັດ ໂດຍ ເຈົ້າໜ້າທີ່ ທີ່ມີສິດອຳນາດ ຂອງ ປະເທດ ທີ່ເປັນແຫຼ່ງກຳເນີດ. ບົນພ◌ື້ນຖານ ການວິເຄາະເຮັດຕົວຢ່າງ ທີ່ໄດ້ປະຕິບັດ, ເຈົ້າໜ້າທີ່ ທີ່ມີສິດອຳນາດ ຂອງ EU ກຳນົດ:<br>1. ຄວາມຖືກຕ້ອງສອດຄ່ອງ ກັບ ບັນດາກົດລະບຽບ ຂອງ EU ວ່າດ້ວຍສານປົນເປື້ອນ ທີ່ມີຢູ່ໃນ ອາຫານ ແລະ ວ່າດ້ວຍ ສານທີ່ບໍ່ເພິ່ງປະສົງ ຢູ່ໃນ ອາຫານສັດ ສຳລັບ ການຂົນສົ່ງສິນ |

| | |
|---|---|
| | ຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນໃນລາຍຊື່ ຂອງ ເອກະສານຊ້ອນທ້າຍ II ຍ້ອນມີຄວາມສ່ຽງ ຈາກການປົນເປື້ອນ ດ້ວຍສານ mycotoxins;[159]<br>2. ຄວາມຖືກຕ້ອງສອດຄ່ອງກັບ ບັນດາກົດລະບຽບ ຂອງ EU ວ່າດ້ວຍ ລະດັບຕົກຄ້າງສູງສຸດ ຂອງຢາປາບສັດຕູພືດ ຢູ່ໃນອາຫານຄົນ ແລະ ອາຫານສັດ ທີ່ມີແຫຼ່ງກຳເນີດມາຈາກພືດ ແລະ ສັດ,[160] ສຳລັບ ການຂົນສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນໃນບັນຊີລາຍຊື່ ຂອງເອກະສານຊ້ອນທ້າຍ II ຍ້ອນຄວາມສ່ຽງທີ່ຈະເຈືອປົນກັບ ສານຕົກຄ້າງຈາກຢາປາບສັດຕູພືດ;<br>3. ທີ່ຜະລິດຕະພັນ ບໍ່ປະກອບດ້ວຍ ສານ pentachlorophenol (PCP) ທີ່ເກີນ 0,01 mg/kg, ສຳລັບການຂົນສົ່ງສິນຄ້າ ທີ່ເປັນອາຫານສັດ ແລະ ອາຫານຄົນ ທີ່ນອນຢູ່ໃນບັນຊີລາຍຊື່ ຂອງເອກະສານຊ້ອນທ້າຍ II ຍ້ອນຄວາມສ່ຽງທີ່ຈະເຈືອປົນກັບ ສານ pentachlorophenol ແລະ ສານ dioxins; ແລະ<br>4. ການບໍ່ມີ ເຊື້ອລາ salmonella ໃນປະລິມານ 25 g, ສຳລັບການຂົນສົ່ງສິນຄ້າ ທີ່ເປັນອາຫານ ທີ່ນອນໃນບັນຊີລາຍຊື່ ຂອງ ເອກະສານຊ້ອນທ້າຍ II ຍ້ອນຄວາມສ່ຽງທີ່ຈະເຈືອປົນທາງຈຸລິນຊີ ກັບ ເຊື້ອລາ salmonella.<br>▪ ແຕ່ລະ ການຂົນສົ່ງສິນຄ້າ ທີ່ເປັນອາຫານສັດ ແລະ ອາຫານຄົນ ທີ່ນອນຢູ່ໃນບັນຊີລາຍຊື່ ຂອງ ເອກະສານຊ້ອນທ້າຍ II ຂອງລະບຽບການ EU ວ່າດ້ວຍ ການເພີ່ມການຄວບຄຸມທີ່ເປັນທາງການແບບຊົ່ວຄາວ ຈະຕ້ອງມີ ໃບຢັ້ງຢືນທີ່ເປັນທາງການ ໂດຍສອດຄ່ອງກັບ ຕົວແບບ ທີ່ຖືກກຳນົດຢູ່ໃນ ເອກະສານຊ້ອນທ້າຍ IV ຂອງລະບຽບການນັ້ນ (ໃບຢັ້ງຢືນທີ່ເປັນທາງການ).<br>▪ *ໃນປັດຈຸບັນ ບໍ່ມີຜະລິດຕະພັນ ຈາກ ສປປ ລາວ ທີ່ນອນຢູ່ໃນ ເອກະສານຊ້ອນທ້າຍ I ແລະ II ຂອງ ລະບຽບການຈັດຕັ້ງປະຕິບັດ ຂອງ ຄະນະກຳມະການ (EU) 2019/1793 ສຳລັບ ການເພີ່ມການຄວບຄຸມ ຢ່າງເປັນທາງການ ແບບຊົ່ວຄາວ ຫຼື ມາດຕະການສຸກເສີນ. ເຖິງຢ່າງໃດກໍ່ຕາມ, ຜູ້ສົ່ງອອກ ຈາກ ສປປ ລາວ ໄດ້ຮັບຄຳແນະນຳ ໃຫ້ກວດເບິ່ງ ນິຕິກຳ ເລື້ອຍໆ, ທີ່ຢູ່ພາຍໃຕ້ ການປັບປຸງແປງ ຢ່າງໜ້ອຍທຸກສອງປີ.* |

## b) ກົດລະບຽບ ສຳລັບ ສານປົນເປື້ອນ ຢູ່ໃນອາຫານ

ສານປົນເປື້ອນ ສາມາດມີຢູ່ໃນອາຫານ ອັນເປັນຜົນມາຈາກ ຂັ້ນຕອນຕ່າງໆ ຂອງ ການຜະລິດ, ການຫຸ້ມຫໍ່, ການຂົນສົ່ງ ຫຼື ການເກັບຮັກສາ, ຫຼື ອາດເປັນຜົນມາຈາກ ການປົນເປື້ອນຢູ່ໃນສິ່ງແວດລ້ອມ. ເພື່ອຮັບປະກັນ ການປົກປ້ອງຜູ້ບໍລິໂພກ ໃນລະດັບສູງ, ການນຳເຂົ້າອາຫານ ເຂົ້າໄປໃນ ສະຫະພາບເອີຣົບ ແມ່ນຕ້ອງໄດ້ປະຕິບັດຕາມ ນິຕິກຳ ຂອງ ສະຫະພາບເອີຣົບ ທີ່ອອກແບບມາ ເພື່ອຮັບປະກັນວ່າ ອາຫານທີ່ວາງຂາຍໃນຕະຫຼາດ EU ແມ່ນປອດໄພ ທີ່ຈະບໍລິໂພກໄດ້ ແລະ ບໍ່ມີສານປົນເປື້ອນ ຢູ່ໃນລະດັບ ທີ່ອາດເປັນໄພຂົ່ມຂູ່ ຕໍ່ ສຸຂະພາບ ຂອງມະນຸດ.

ຜູ້ສົ່ງອອກ ຜະລິດຕະພັນກະສິກຳດິບ ຈາກ ສປປ ລາວ ຈະເບິ່ງ ໂດຍສະເພາະ ເອກະສານຊ້ອນທ້າຍ 1 ທີ່ກ່ຽວຂ້ອງ ກັບ ລະບຽບການ (EC) ເລກທີ 1881/2006, ທີ່ກຳນົດ 8 ໝວດ ທີ່ມີລາຍຊື່ ສານເຈືອປົນ ແລະ ລະດັບທີ່ກ່ຽວຂ້ອງສູງສຸດ (Respective maximum levels) ຂອງພວກມັນ. ຂໍ້ມູນທີ່ຄັດຈ້ອນມາຈາກ ລະບຽບການນີ້ ແມ່ນສະໜອງໃຫ້ເຫັນ ຢູ່ໃນ ຮູບ 17.

| | |
|---|---|
| **ກົດໝາຍ ຂອງ EU ຄວບຄຸມການມີສານປົນເປື້ອນ ໃນອາຫານ ຢູ່ໃນ EU.[161]**<br>**ໃນສ່ວນທີ່ກ່ຽວຂ້ອງ, ລະບຽບການ ກຳນົດດັ່ງຕໍ່ໄປນີ້:** | **ອາຫານ ທີ່ປະກອບດ້ວຍ ສານປົນເປື້ອນ ໃນຈຳນວນ ທີ່ຍອມຮັບບໍ່ໄດ້ ຈາກ ມຸມມອງ ຂອງ ສາທາລະນະສຸກ ແລະ, ໂດຍສະເພາະ, ໃນລະດັບທີ່ເປັນພິດ, ແມ່ນບໍ່ໃຫ້ວາງຂາຍ ຢູ່ໃນຕະຫຼາດ EU ແລະ ຈະຖືກປະຕິເສດ.**<br>ລະດັບສານປົນເປື້ອນ ແມ່ນຈະຖືກຮັກສາໃຫ້ຕ່ຳ ເທົ່າທີ່ຈະສາມາດບັນລຸໄດ້ ຫຼັງຈາກມີການແນະນຳຫຼັກການປະຕິບັດວຽກທີ່ດີ. |

ລະດັບສູງສ຺ດ ສາມາດຖືກກຳນົດ ສຳລັບ ບາງສານປົນເປື້ອນ ເພື່ອທີ່ຈະປົກປ້ອງສຸຂະພາບຂອງສາທາລະນະຊົນ. ໂດຍສະເພາະ, ລະດັບສູງສຸດ ໄດ້ຖືກກຳນົດຂຶ້ນສຳລັບ ສານປົນເປື້ອນຕໍ່ໄປນີ້:[162]

- ບາງສານປະເພດ mycotoxins (ເຊັ່ນ. aflatoxins, ochratoxin A, fusarium-toxins, patulin ແລະ citrinin);
- ບາງທາດໂລຫະ (ເຊັ່ນ. cadmium, lead, mercury, inorganic tin ແລະ arsenic);
- ບາງສານ dioxins ແລະ polychlorinated biphenyls (PCBs);
- Polycyclic aromatic hydrocarbons (PAH);
- 3-monochloropropane diol;
- Melamine;
- ອາຊິດ Erucic; ແລະ
- ບາງສານ nitrates.

**ຮູບ 17: ຂໍ້ມູນທີ່ຄັດລ້ອນ ມາຈາກ ເອກະສານຊ້ອນທ້າຍ 1 ຂອງລະບຽບການ (EC) ເລກທີ. 1881/2006 ທີ່ກຳນົດລາຍຊື່ ສານປົນເປື້ອນ ແລະ ລະດັບທີ່ກ່ຽວຂ້ອງ ສູງສຸດ (ລະດັບສູງສຸດຂອງແຕ່ລະລາຍການ)**

*ANNEX*

Maximum levels for certain contaminants in foodstuffs (9)

Section 2: Mycotoxins

| **Foodstuffs** ([1]) | | **Maximum levels (μg/kg)** | | |
|---|---|---|---|---|
| **▼M5** | | | | |
| 2.1. | **Aflatoxins** | $B_1$ | Sum of $B_1$, $B_2$, $G_1$ and $G_2$ | $M_1$ |
| 2.1.1. | Groundnuts (peanuts) and other oilseeds ([35]), to be subjected to sorting, or other physical treatment, before human consumption or use as an ingredient in foodstuffs, with the exception of:<br>— groundnuts (peanuts) and other oilseeds for crushing for refined vegetable oil production | 8,0 ([5]) | 15,0 ([5]) | — |
| 2.2 | **Ochratoxin A** | | | |
| 2.2.1 | Unprocessed cereals | 5,0 | | |
| **▼M11** | | | | |
| 2.2.2. | All products derived from unprocessed cereals, including processed cereal products and cereals intended for direct human consumption with the exception of foodstuffs listed in 2.2.9, 2.2.10 and 2.2.13 | 3,0 | | |

### c) ກົດລະບຽບ ວ່າດ້ວຍ ລະດັບສານຕົກຄ້າງສູງສຸດ

ກົດໝາຍ ຂອງສະຫະພາບເອີຣົບ ມີຊຸດກົດລະບຽບ ທີ່ສອດຄ່ອງກົມກຽວຢ່າງຄົບຖ້ວຍ ສຳລັບ ສານຕົກຄ້າງຂອງຢາປາບສັດຕູພືດ, ແລະ ໂດຍສະເພາະ ແມ່ນ ກຳນົດ ລະດັບຕົກຄ້າງສູງສຸດ (MRL) ສຳລັບຢາປາບສັດຕູພືດ ໃນອາຫານ ແລະ ອາຫານສັດ. ການນຳເຂົ້າ ຜະລິດຕະພັນພືດ ແລະ ສັດ ຕ້ອງປະຕິບັດຕາມ ລະດັບ MRL ທີ່ກຳນົດໄວ້ ໂດຍ EC ເພື່ອທີ່ຈະປົກປ້ອງ ຜູ້ບໍລິໂພກ ຈາກການສຳຜັດກັບ ສານຕົກຄ້າງ ໃນລະດັບສູງ.
**ການກຳນົດຢາປາບສັດຕູພືດ**: ຢາປາບສັດຕູພືດ ແມ່ນສານ ຫຼື ຜະລິດຕະພັນປະສົມ ໜ◌ີ◌່ງ ທີ່ປ້ອງກັນ, ທຳລາຍ ຫຼື ຄວບຄຸມສິ່ງມີຊີວິດ (ສັດຕູພືດ) ຫຼື ພະຍາດ ທີ່ເປັນອັນຕະລາຍ, ຫຼື ປົກປ້ອງພືດ ຫຼື ຜະລິດຕະພັນພືດ ໃນຊ່ວງໄລຍະ ການຜະລິດ, ການເກັບຮັກສາ ແລະ ການຂົນສົ່ງ. ຄຳສັບ ລວມມີ ຢາຂ້າຫຍ້າ, ຢາຂ້າເຊື້ອລາ, ຢາຂ້າແມງໄມ້, ຢາຂ້າໝັດ ຫຼື ເຫັບ, ຢາຂ້າພະຍາດໂຕກົມ, ຢາຂ້າຫອຍ, ຢາຂ້າໜູ, ຕົວຄວບຄຸມການຈະເລີນເຕີບໂຕ, ຢາຂັບໄລ່ແມ່ງໄມ້ຫຼືສັດຕູພືດບໍ່ໃຫ້ສັດເຂົ້າໃກ້ ແລະ ສານກຳຈັດຊີວະພາບ.

*ກົດໝາຍ EU ກວມເອົາຫຼາຍກວ່າ 1,100 ຢາປາບສັດຕູພືດ ທີ່ຖືກນຳໃຊ້ ໃນປັດຈຸບັນ ຫຼື ຜ່ານມາ ໃນການຜະລິດກະສິກຳ ທ◌ີ◌່ຢູ່ໃນ ຫຼື ຢູ່ນອກ EU.*

***MRL***: ລະດັບ MRL ແມ່ນເປັນລະດັບສູງສຸດ ຂອງ ສານຕົກຄ້າງ ທີ່ມາຈາກຢາປາບສັດຕູພືດ ທີ່ກົດໝາຍອະນຸຍາດ ໃຫ້ມີຢູ່ໃນ ຫຼື ຢູ່ເທິງອາຫານ ຫຼື ອາຫານສັດ ເມື່ອຢາປາບສັດຕູພືດ ຖືກນຳໃຊ້ ຢ່າງຖືກຕ້ອງ ແລະ ອີງຕາມ ຫຼັກການປະຕິບັດໃນການຜະລິດກະສິກຳທີ່ດີ (GAP).
*ຢູ່ໃນສະຫະພາບເອີຣົບ, ລະດັບ MRL ໄດ້ຖືກກຳນົດຂຶ້ນ ສຳລັບ ຜະລິດຕະພັນສົດ 315 ລາຍການ ແລະ ລະດັບ MRL ທີ່ເປັນມາດຕະຖານທົ່ວໄປ 0.01 mg/kg ມີຜົນນຳໃຊ້ບ່ອນ ເມື່ອ MRL ສຳລັບຢາປາບສັດຕູພືດ ບໍ່ໄດ້ກ່າວໄວ້ ຢູ່ໃນລາຍລະອຽດ.*
***ລາຍລະອຽດ ຂອງ ລະດັບ MRL***: ບັນຊີລາຍຊື່ ຜະລິດຕະພັນ ທີ່ຢູ່ພາຍໃຕ້ ການຄວບຄຸມ ແລະ ລະດັບ MRL ທີ່ສອດຄ່ອງ ທີ່ມີຜົນນຳໃຊ້ ແມ່ນ ຖືກກຳນົດໄວ້ ຢູ່ໃນ ເອກະສານຊ້ອນທ້າຍ ຂອງ ລະບຽບການ (EC) ເລກທີ 396/2005.

---

*ສຳລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບ MRL:*
*ຂໍ້ມູນເພີ່ມຕື່ມ ກ່ຽວກັບສານ ແລະ MRL ທີ່ລວມຢູ່ໃນ ບັນຊີລາຍຊື່ ຂອງ ເອກະສານຊ້ອນທ້າຍ II, III ແລະ IV ແມ່ນມີຢູ່ໃນ ເວັບໄຊຖານຂໍ້ມູນຢາປາບສັດຕູພືດ ຂອງ EU.*[163]

ເອກະສານຊ້ອນທ້າຍຕ່າງໆ ແມ່ນຖືກຈັດລຽງ ດັ່ງຕໍ່ໄປນີ້::

| | |
|---|---|
| **ເອກະສານຊ້ອນທ້າຍ I** | **ສ້າງລາຍຊື່ ຜະລິດຕະພັນ ທີ່ລະດັບ MRL ມີຜົນນຳໃຊ້ ຊຶ່ງກວມເອົາ ຜະລິດຕະພັນສັດ, ໝາກໄມ້, ພືດຜັກ, ທັນຍາພືດ, ເຄື່ອງເທດ ແລະ ບາງພືດທີ່ກິນໄດ້.** |
| **ເອກະສານຊ້ອນທ້າຍ II** | ປະກອບດ້ວຍ ລາຍຊື່ ລະດັບ MRL ສຸດທ້າຍ ຂອງ EU |
| **ເອກະສານຊ້ອນທ້າຍ III** | ສະໜອງລາຍຊື່ ລະດັບ MRL ຊົ່ວຄາວ ຂອງ of EU. |
| **ເອກະສານຊ້ອນທ້າຍ IV** | ສະໜອງລາຍຊື່ ຢາປາບສັດຕູພືດ ທີ່ບໍ່ຈຳເປັນຕ້ອງມີລະດັບ MRL ຍ້ອນຄວາມສ່ຽງຕ່ຳຂອງພວກມັນ |
| **ເອກະສານຊ້ອນທ້າຍ V** | ປະກອບດ້ວຍ ລາຍຊື່ ຢາປາບສັດຕູພືດ ທີ່ມີຂໍ້ຈຳກັດທົ່ວໄປ ນອກເໜືອຈາກ 0.01 mg ຕໍ່ kg ມີຜົນນຳໃຊ້. |
| **ເອກະສານຊ້ອນທ້າຍ VI** | ສະໜອງລາຍຊື່ ຂອງ ສານທີ່ນຳໃຊ້ຕົວຈິງ/ການລວມຕົວຂອງຜະລິດຕະພັນ, ຕາມທີ່ໄດ້ກ່າວເຖິງ ໃນມາດຕາ 18(3) ຂອງ ລະບຽບການ (EC) ເລກທ ີ 396/2005 ຂອງ ລັດຖະສະພາ ແລະ ສະພາ ເອີຣົບ, ລົງວັນທີ 23 ກຸມພາ 2005 ວ່າດ້ວຍລະດັບຕົກຄ້າງສູງສຸດ ຂອງ ຢາປາບສັດຕູພືດ ທີ່ຢູ່ໃນ ຫຼື ຢູ່ເທິງ ອາຫານຄົນ ແລະ ອາຫານສັດ ທີ່ມີແຫຼ່ງກຳເນີດ ມາຈາກພືດ ແລະ ສັດ. |
| **ເອກະສານຊ້ອນທ້າຍ VII** | ປະກອບດ້ວຍ ລາຍຊື່ ຢາປາບສັດຕູພືດ ທີ່ຖືກນຳໃຊ້ ໃນນາມເປັນ ຢາຂ້າເຊື້ອ ສຳລັບ ບັນດາປະເທດສະມາຊິກ EU ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ ເປັນຂໍ້ຍົກເວັ້ນພິເສດ ກ່ອນຜະລິດຕະພັນ ຖືກວາງຂາຍ ໃນຕະຫຼາດ. |

## d) ກົດລະບຽບ ວ່າດ້ວຍ ການປົກປ້ອງພືດ ແລະ ການກວດກາ ສຸຂານາໄມພືດ

*ຜູ້ສົ່ງອອກ ຜະລິດຕະພັນກະສິກຳດິບ ຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ ອາດຈະຢູ່ພາຍໃຕ້ ມາດຕະການຕ່າງໆ ທີ່ນອນຢູ່ໃນ ກົດລະບຽບ ຂອງ ສະຫະພາບເອີຣົບ ວ່າດ້ວຍ ມາດຕະການປົກປ້ອງ ດ້ານ ການແນະນຳ ສິ່ງມີຊີວິດ ທີ່ເປັນອັນຕະລາຍ ຕໍ່ ພືດ ຫຼື ຜະລິດຕະພັນພືດ ເຂົ້າໄປໃນ ສະຫະພາບເອີຣົບ ແລະ ຕ້ານການແຜ່ລະບາດ ຂອງພວກມັນ ຢູ່ພາຍໃນ ສະຫະພາບເອີຣົບ.*[164]
*ລັກສະນະດັ່ງຕໍ່ໄປນີ້ ແມ່ນມີຄວາມກ່ຽວຂ້ອງກັບ ຜູ້ສົ່ງອອກ ຈາກ ສປປ ລາວ.*

### i. *ໃບຢັ້ງຢືນສຸຂານາໄມພືດ*

| *ພືດທັງໝົດ* (ລວມທັງ ສ່ວນທີ່ມີຊີວິດ ຂອງພືດ) ຕ້ອງມີ **ໃບຢັ້ງຢືນສຸຂານາໄມພືດ** ເພື່ອທີ່ຈະສາມາດເຂົ້າໄປໃນ EU ໄດ້ ເວັ້ນເສຍແຕ່ວ່າ ພວກມັນ ນອນຢູ່ໃນບັນຊີລາຍຊື່ ຂອງເຄື່ອງມືທາງນິຕິກຳ ຂອງ EU ທີ່ຖືກຍົກເວັ້ນ ຈາກ ຂໍ້ກຳນົດ ຫຼື ຄວາມຕ້ອງການທົ່ວໄປນີ້.[165]

| ໃບຢັ້ງຢືນສຸຂານາໄມພືດ ມີຈຸດປະສົງ ທີ່ຈະຮັບປະກັນວ່າ ມີພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນໆ ປະກອບມ ີ:

- ມີການກວດກາຢ່າງຖືກຕ້ອງຄັກແນ່;
- ປາສະຈາກ ສັດຕູພືດທີ່ກັກກັນ ພາຍໃນ ຂໍ້ກຳນົດ ຫຼື ຄວາມຕ້ອງການ ສຳລັບ ສັດຕູພືດທີ່ບໍ່ໄດ້ກັກກັນ ທີ່ຖືກຄວບຄຸມ ແລະ ເກືອບປາສະຈາກສັດຕູພືດອື່ນໆ; ແລະ
- ສອດຄ່ອງກັບ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານສຸຂະພາບພືດ ຂອງ EU.[166]

| ໃບຢັ້ງຢືນສຸຂານາໄມພືດ ແມ່ນອອກໃຫ້ໂດຍ ອົງການປົກປ້ອງພືດແຫ່ງຊາດ ຂອງ ປະເທດສົ່ງອອກ. ເມື່ອຢູ່ໃນ EU, ບັດຜ່ານແດນພືດ ສາມາດປ່ຽນແທນ ໃບຢັ້ງຢືນສຸຂານາໄມພືດ ສຳລັບ ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນໆ ທີ່ຖືກນຳເຂົ້າ ທີ່ນອນໃນບັນຊີລາຍຊື່ ຂອງ ກົດໝາຍ EU.[167]

| ບໍ່ມີຂໍ້ກຳນົດ ຫຼື ຄວາມຕ້ອງການ ໃບຢັ້ງຢືນສຸຂານາໄມພືດ ສຳລັບ ການນຳເຂົ້າໝາກໄມ້ຕໍ່ໄປນີ້ ເຂົ້າໄປໃນ ສະຫະພາບເອີຣົບ ຄື: ໝາກນັດ, ໝາກກ້ວຍ, ໝາກພ້າວ, ໝາກທຸລຽນ ແລະ ໝາກເດດ (Dates).[168]

### ii. *ພືດທີ່ມີຄວາມສ່ຽງສູງ*

ມາດຕະການປ້ອງກັນທີ່ເພີ່ມຂຶ້ນ ກຳລັງສືບຕໍ່ ຕ້ານກັບ ການນຳເອົາສັດຕູພືດຊະນິດໃໝ່ເຂົ້າມາ ຜ່ານທາງການນຳເຂົ້າ ຈາກປະເທດທີສາມ ແລະ ສຳລັບບັນຫາດັ່ງກ່າວນັ້ນ, ກົດໝາຍ EU ກຳນົດ ບັນຊີລາຍຊື່ ພືດທີ່ມີຄວາມສ່ຽງສູງ, ການນຳເຂົ້າໄປໃນດິນແດນ ຂອງ ສະຫະພາບເອີຣົບ ແມ່ນຈະຖືກຫ້າມຊົ່ວຄາວ ນັບຕັ້ງແຕ່ ວັນທີ 14 ທັນວາ 2019 ຈົນກວ່າ ຈະໄດ້ມີການປະເມີນຄວາມສ່ຽງແບບຄົບຊຸດ.

### iii. *ໜັງສືຜ່ານແດນພືດ ແລະ ການຂຶ້ນທະບຽນ*

ກົດໝາຍ EU ກຳນົດ ໜັງສືຜ່ານແດນພືດ EU ແລະ ການຈົດທະບຽນ ຜູ້ປະກອບການທີ່ເປັນມືອາຊີບ ແລະ ບັນດາກົດລະບຽບ ທີ່ສອດຄ່ອງກົມກ່ຽວ ວ່າດ້ວຍ ຄວາມສາມາດໃນການຕິດຕາມໄດ້

### iv. *ການກວດສຸຂະພາບ ແບບບັງຄັບ*

ພືດ ແລະ ຜະລິດຕະພັນພືດ ທັງໝົດ ທີ່ນຳເຂົ້າຈາກ ບັນດາປະເທດທີ່ບໍ່ແມ່ນສະມາຊິກ EU ແມ່ນຈະຂຶ້ນກັບ ການກວດສຸຂະພາບ ແບບບັງຄັບ

**ປະເພດ ການກວດ:**

- ການກວດສອບຄວາມຖືກຕ້ອງ ໃບຢັ້ງຢືນ ສຸຂານາໄມພືດ ແລະ ເອກະສານ ທີ່ຈະຮັບປະກັນວ່າ ການຂົນສົ່ງສິນຄ້າ ໄດ້ຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງ EU.
- ການກວດສອບຄວາມຖືກຕ້ອງ ຂອງຕົວຕົນ ເພື່ອຮັບປະກັນວາ ການຂົນສົ່ງສິນຄ້າ ຕອບສະໜອງຕາມໃບຢັ້ງຢືນ.
- ການກວດກາ ການຂົນສົ່ງສິນຄ້າ ເພື່ອຮັບປະກັນ ໃຫ້ການຂົນສົ່ງສິນຄ້າ ປາສະຈາກ ສິ່ງມີຊີວິດ ທີ່ເປັນອັນຕະລາຍ.

**ທີ່ຕັ້ງ ແລະ ຄ່າທຳນຽມ:**

- ການກວດຕົວຕົນ ແລະ ສຸຂະພາບພືດ (ບໍ່ລວມ ການກວດກາເອກະສານ) ສາມາດ ຖືກດຳເນີນ ຢູ່ສະຖານທີ່ແຫຼ່ງກຳເນີດ (ຕົ້ນທາງ) ໄດ້ ໂດຍມີການຕົກລົງເຫັນດີ ກັບ ເຈົ້າໜ້າທີ່ສາທາລະນະສຸກພືດ ທີ່ຮັບຜິດຊອບ ຈຸດເຂົ້າ ແລະ ຈຸດປາຍທາງ. ຂັ້ນຕອນນີ້ ແມ່ນ ຈະໄດ້ຮັບອະນຸຍາດ ກໍຕໍ່ເມື່ອ ຖ້າວ່າ ຜູ້ນຳເຂົ້າ ໄດ້ຖືກຮັບຮອງ ຈາກ ເຈົ້າໜ້າທີ່ ຂອງ EU ໃນເມື່ອກ່ອນ ເທົ່ານັ້ນ.
- ບັນດາປະເທດສະມາຊິກ EU ເກັບຄ່າທຳນຽມ ສຳລັບເອກະສານ, ກວດກາຕົວຕົນ ແລະ ສຸຂະພາບພືດ ທີ່ຈະຖືກຈ່າຍ ຈາກ ຜູ້ນຳເຂົ້າ ຫຼື ຕົວແທນດ້ານພາສີຂອງເຂົາເຈົ້າ.[169]

**ຂອບເຂດ ການກວດການສຸຂະພາບ ທີ່ຫຼຸດໜ້ອຍລົງ (Reduced Health Checks):**

- ມີກົດລະບຽບ ຂອງ EU ສຳລັບ ການກວດສຸຂະພາບ ທີ່ຫຼຸດໜ້ອຍລົງ ສຳລັບ ບາງພືດ.[170]
- ອີງຕາມ ນິຕິກຳ ຂອງ EU, ສຳລັບໄລຍະ ລະຫວ່າງ 1 ກຸມພາ 2020 ຫາ 31 ທັນວາ 2020, ມີ 65 ຜະລິດຕະພັນ ທີ່ໄດ້ຖືກແນະນຳ ສຳລັບ ການກວດສຸຂະພາບທີ່ຫຼຸດໜອ້ຍລົງ (Reduced plant health checks) ໂດຍ ຄະນະກຳມະການເອີຣົບ.[171]
- ບໍ່ມີຜະລິດຕະພັນໃດ ທີ່ໄດ້ລວມຢູ່ໃນ ບັນຊີລາຍຊື່ ທີ່ມີແຫຼ່ງກຳເນີດຈາກ ສປປ ລາວ. ແຕ່ເຖິງຢ່າງໃດກໍຕາມ, ບັນຊີລາຍຊື່ ແນະນຳ ໃຫ້ມີການ ກວດສຸຂະພາບ ທີ່ຫຼຸດລົງ ສຳລັບ ຜະລິດຕະພັນ ທີ່ມາຈາກ *ໜຶ່ງທຸກ* ປະເທດ ທີ່ເປັນແຫຼ່ງກຳເນີດ, ຊຶ່ງໝາຍຄວາມວ່າ ພືດ, ຜະລິດຕະພັນພືດ ເຫຼົ່ານັ້ນ ແລະ ວັດຖຸອື່ນໆ ທີ່ມີແຫຼ່ງກຳເນີດຈາກ ສປປ ລາວ ສາມາດ ໄດ້ຮັບຜົນປະໂຫຍດ ຈາກ ລະບອບການນຳເຂົ້າ ແບບງ່າຍດາຍ ນີ້.

**ກົດລະບຽບ ທີ່ເຂັ້ມງວດ ມີຜົນນຳໃຊ້ ໃນກໍລະນີພິເສດ:**

- ບາງສິນຄ້າ ທີ່ມີແຫຼ່ງກຳເນີດ ມາຈາກ ບັນດາປະເທດ ທີ່ບໍ່ແມ່ນສະມາຊິກ EU ແມ່ນຈະຖືກຫ້າມສຳລັບ ແນະນຳ ຢູ່ພາຍໃນ EU ທັງໝົດ.[172]
- ບາງສິນຄ້າ ທີ່ມີແຫຼ່ງກຳເນີດ ມາຈາກບັນດາປະເທດທີ່ບໍ່ແມ່ນສະມາຊິກ EU ແມ່ນຈະຖືກຫ້າມ ຢູ່ໃນເຂດປົກປ້ອງທີ່ໄດ້ກຳນົດໄວ້ ຂອງ ສະຫະພາບເອີຣົບ.[173]
- ບາງສິນຄ້າ ທີ່ມີແຫຼ່ງກຳເນີດ ມາຈາກບັນດາປະເທດທີ່ບໍ່ແມ່ນສະມາຊິກ EU ແລະ ຖືກຈັດເປັນປະເພດພືດ ແລະ ຜະລິດຕະພັນພືດທີ່ມີຄວາມສ່ຽງສູງ, ແມ່ນຈະຖືກຫ້າມຊົ່ວຄາວ ຈາກ ການແນະນຳ ຢູ່ພາຍໃນ ທັງໝົດສະຫະພາບເອີຣົບ.[174]

- ຕ້ອງມີໜັງສືອະນຸຍາດ ສຳລັບ ພືດ, ຜະລິດຕະພັນພືດ ຫຼື ວັດຖຸອື່ນໆ ສຳລັບ ການທົດລອງ ຫຼື ຈຸດປະສົງທາງວິທະຍາສາດ ຫຼື ສຳລັບ ເຮັດວຽກກ່ຽວກັບ ການຄັດເລືອກແນວພັນ.[175]
- ຜູ້ສົ່ງອອກ ທີ່ມາ ຈາກ ສປປ ລາວ ຕ້ອງຮັບຮູ້ວ່າ ກົດລະບຽບພິເສດເພີ່ມຕື່ມ ອາດຈະສາມາດ ມີຜົນນຳໃຊ້ ພາຍໃຕ້ເງື່ອນໄຂສະເພາະໃດໜຶ່ງ ແລະ ສຳລັບໄລຍະເວລາຈຳກັດ ພາຍໃຕ້ ກົດໝາຍ ຂອງ EU.[176]

### ລະບຽບການສະເພາະ ສຳລັບ ຜູ້ສົ່ງອອກລາວ ທີ່ດ່ານຊາຍແດນ ຂອງ ສປປ ລາວ

ນອກຈາກທີ່ກ່າວມາຂ້າງເທິງແລ້ວ, ຜູ້ສົ່ງອອກຈາກ ສປປ ລາວ ຍັງຄວນຈະຮັບຮູ້ ບັນດາລະບຽບການ ທີ່ຄວບຄຸມ ການສົ່ງອອກ ຂອງຕົນ ໄປຫາ EU ທີ່ສາມາດສົ່ງຜົນກະທົບ ຕໍ່ການສົ່ງອອກ ຂອງຕົນ ໄປຫາ EU (ໃຫ້ເບິ່ງຕາຕະລາງ 17).

**ຕາຕະລາງ 17: ລະບຽບການສົ່ງອອກ ຂອງ ສປປ ລາວ ຕໍ່ກັບ ຜະລິດຕະພັນກະສິກຳ ທີ່ໄປຫາ EU**

| | |
|---|---|
| ແຈ້ງການ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການເພີ່ມຄວາມເອົາໃຈໃສ່ ໃນການຢັ້ງຢືນສຸຂານາໄມພືດ ແລະ ຜະລິດຕະພັນກະສິກຳ ຂອງ ສປປ ລາວ ທີ່ສົ່ງອອກ ໄປຫາ ສະຫະພາບເອີຣົບ – ເລກທີ. 1046/DOA, ລົງວັນທີ 26 ພຶດສະພາ 2016[177] | ກຳນົດວ່າ ຜະລິດຕະພັນພືດ ແລະ ກະສິກຳທັງໝົດ ຂອງ ສປປ ລາວ ທີ່ຈະຖືກສົ່ງອອກໄປຫາ EU ຕ້ອງຈົດທະບຽນ ສວນປູກ/ຟາມກະສິກຳ, ເຮືອນສຳລັບຫຸ້ມຫໍ່ ແລະ ບໍລິສັດສົ່ງອອກ ຂອງຕົນ ກັບ ຂະແໜງປູກຝັງ ຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງ. |
| ແຈ້ງການ ກ່ຽວກັບ ການກວດກາ ກາຈຳ ສຳລັບ ສົ່ງອອກ ຜະລິດຕະພັນໄມ້, ແຮ່ທາດ, ຜະລິດຕະພັນກະສິກຳ ແລະ ສິນຄ້າທົ່ວໄປ, ເລກທີ 10036/DC ລົງວັນທີ 11 ທັນວາ 2019[178] | ໃນກໍລະນີ ມີຄວາມຜິດປົກກະຕິ ກ່ຽວກັບ ການະທົບດ້ານຄວາມໝັ້ນຄົງ, ມັນເສຍຫາຍ, ເປເພ ຫຼື ສົງໄສ ແລະ ຖ້າວ່າ ແຫຼ່ງຂໍ້ມູນ ມີຄວາມໜ້າເຊື່ອຖື, ເຈົ້າໜ້າທີ່ພາສີຢູ່ທີ່ດ່ານຊາຍແດນ ຈະຕ້ອງປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ຫຼື ຄະນະກຳມະການກວດກາສິນຄ້າ ຢູ່ທີ່ສະຖານທີ່ແຫຼ່ງກຳເນີດ ຫຼື ຢູ່ທີ່ ການຄຸ້ມຄອງດ່ານກວດກາຊາຍແດນ ບ່ອນທີ່ສິນຄ້າຖືກສົ່ງອອກ, ເຈົ້າຂອງຜະລິດຕະພັນ, ຜູ້ຂົນສົ່ງ ຫຼື ບຸກຄົນທີ່ໄດ້ຮັບອະນຸຍາດ ຕ້ອງໄດ້ເຂົ້າພົບ, ເອົາກາຈຳອອກ ແລະ ກວດກາສິນຄ້ານຳກັນ. |
| ແຈ້ງການ ວ່າດ້ວຍ ມາດຕະການ ສຸຂາພິບານ ແລະ ສຸຂານາໄມພືດ (SPS) ສຳລັບ ບັນດາປະເທດ ທີ່ເປັນສະມາຊິກ EU, ເລກທີ. 0612 /DOA[179] | ແຈ້ງການສະບັບນີ້ ກຳນົດວ່າ ພືດຕ່າງໆ ຕ້ອງປາສະຈາກ ສັດຕູພືດ, ລວມທັງ ສານ moloch, Blanchard, Bemisia tabaci Genn ແລະ Thrips palmi Karny. |
| ແຈ້ງການ ວ່າດ້ວຍ ມາດຕະການຮີບດ່ວນ ວ່າດ້ວຍ ການອອກ ໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກພືດຜັກ ໄປຫາ ບັນດາປະເທດທີ່ເປັນສະມາຊິກ EU , ເລກທີ. 0140/DOA.[180] | ໂຈະການອອກ ໃບຢັ້ງຢືນ ສຸຂານາໄມພືດ ສຳລັບການສົ່ງອອກ ພືດຜັກ ໄປຫາ ບັນດາປະເທດ ທີ່ເປັນສະມາຊິກ EU ຍ້ອນບັນຫາ ທີ່ຖືກກຳນົດ ຜ່ານທາງ ການກວດສອບ ໂດຍອີງຕາມ ISPM ເລກທີ. 13 ແລະ ການອອກ ມາດຕະການ ກວດແກ້ ໂດຍກົມປູກຝັງ (DOA). |

## V. ການຕົດສະຫຼາກ ຜະລິດຕະພັນກະສິກຳດິບ

### a) ມາດຕະຖານ ການຕະຫຼາດ ສຳລັບ ໝາກໄມ້ ແລະ ຜັກ ບາງຊະນິດ

ໃນຂະນະທີ່ ບໍ່ມີຂໍ້ກຳນົດ ຫຼື ຄວາມຕ້ອງການທົ່ວໄປ ສຳລັບການຕິດສະຫຼາກ, ນິຕິກຳ ຂອງ EU ສະໜອງ ກົດລະບຽບລະອຽດ ສຳລັບການຕະຫຼາດ ຜັກ ແລະ ໝາກໄມ້ ທີ່ມີຢູ່ໃນ ມາດຕະຖານການຕະຫຼາດ ສຳລັບ ໝາກໄມ້ ແລະ ຜັກໃດໜຶ່ງ.[181] ມີ ມາດຕະຖານການຕະຫຼາດ ອັນສະເພາະໃດໜຶ່ງ ເກີດຂຶ້ນ ສຳລັບ ໝາກໂປມ (ແອັບເປີ້ນ), ໝາກໄມ້ທີ່ມີຣົດສົ້ມ, ໝາກກີວີ້, ຜັກສະຫຼັດ, ຜັກເອັນດິບ (Endives) ທີ່ມີໃບງໍກວ້າງ, ໝາກໝັ້ນ ແລະ ປະເພດໝາກໝັ້ນ, ໝາກຈອງ, ໝາກສະຕໍເບີຣີ, ໝາກເຜັດຫວານ, ໝາກອະງຸ່ນ ແລະ ໝາກເລັ່ນ.[182]

ມາດຕະຖານການຕະຫຼາດ ຂອງ EU ສຳລັບ ໝາກໄມ້ ແລະ ຜັກ ຍັງປະກອບດ້ວຍ ກົດລະບຽບ ວ່າດ້ວຍ ການຫຸ້ມຫໍ່ ແລະ ການຕິດສະຫຼາກ. ໂດຍສະເພາະ, ຂໍ້ມູນທີ່ຕ້ອງການ ຈະຕ້ອງສາມາດອ່ານອອກໄດ້ ຢ່າງຈັດເຈນ ແລະ ສາມາດແນມເຫັນໄດ້ ຢູ່ອີກຂ້າງໜຶ່ງ ຂອງບັນຈຸພັນ, ຍົກເວັ້ນໃນກໍລະນີ ທີ່ສິນຄ້າ ຖືກຂົນສົ່ງ ເປັນຈຳນວນຫຼາຍ ແລະ ໃນກໍລະນີ ທີ່ມີສັນຍາ ວ່າດ້ວຍ ໄລຍະທາງ, ທີ່ກົດລະບຽບແຕກຕ່າງກັນ ມີຜົນນຳໃຊ້.[183]

ກ່ຽວກັບ ການຂາຍຍ່ອຍ, ຂໍ້ມູນທີ່ຕ້ອງການ ຈະຕ້ອງສາມາດອ່ານໄດ້ ແລະ ຈັດເຈນ, ທີ່ສະແດງໃຫ້ເຫັນເຖິງ ປະເທດແຫຼ່ງກຳເນີດ ແລະ ຊັ້ນ ແລະ ຄວາມຫຼາກຫຼາຍ ຂອງ ຜະລິດຕະພັນ ເພື່ອຫຼີກລ່ຽງ ການເຮັດໃຫ້ຜູ້ບໍລິໂພກເຂົ້າໃຈຜິດ.[184]

ກົດລະບຽບ ແຕກຕ່າງກັນໄປ ຂຶ້ນກັບ ໝາກໄມ້ ຫຼື ຜັກໃດໜຶ່ງ, ແຕ່ໂດຍປົກກະຕິ ແມ່ນລວມມີສິ່ງຕໍ່ໄປນີ້:

- ຜະລິດຕະພັນ ຕ້ອງໄດ້ຖືກຫຸ້ມຫໍ່ ໃນລັກສະນະທີ່ປົກປ້ອງ ຜະລິດຕະພັນ ຢ່າງຖືກຕ້ອງ.
- ວັດສະດຸ ທີ່ຖືກໃຊ້ພາຍໃນກ່ອງຫຸ້ມຫໍ່ ຕ້ອງສະອາດ ແລະ ມີຄຸນນະພາບ ເພື່ອບໍ່ໃຫ້ເກີດທຸກຄວາມເສຍຫາຍ ທັງພາຍໃນ ຫຼື ພາຍນອກ ຕໍ່ວັດສະດຸຜະລິດຕະພັນ. ອະນຸຍາດໃຫ້ນຳໃຊ້ ວັດສະດຸ, ໂດຍສະເພາະແມ່ນ ເຈ້ຍ ຫຼື ສະແຕມ ທີ່ສະແດງບອກ ລາຍລະອຽດທາງການຄ້າ, ໂດຍທີ່ວ່າ ການພິມ ຫຼື ການຕິດສະຫຼາກ ໄດ້ເຮັດ ດ້ວຍ ນຳມຶກ ຫຼື ກາວ ທີ່ບໍ່ເປື້ອ.
- ສະຕິກເກີ ທີ່ຕິດໃສ່ ແຕ່ລະຜະລິດຕະພັນ ຈະຕ້ອງເປັນລັກສະນະທີ່ວ່າ, ໃນເວລາແກະອອກໄປແລ້ວ, ມັນຈະບໍ່ປະຮ່ອງຮອຍກາວໄວ້ໃຫ້ເຫັນ, ຫຼື ບໍ່ກໍ່ໃຫ້ເກີດຄວາມຜິດປົກກະຕິ ຂອງ ຜິວໜັງ. ຂໍ້ມູນທີ່ສ່ອງແສງເລເຊີໃສ່ໝາກໄມ້ ແຕ່ລະໜ່ວຍ ບໍ່ຄວນນຳໄປສູ່ ຄວາມຜິດປົກກະຕິ ຂອງຜິວໜັງ.

---

**ຮູບ 18:** **ໜັງສືຜ່ານແດນພືດ ຂອງ EU**



| 1 Name and address of exporter | 2 PHYTOSANITARY CERTIFICATE No EC / / |
|---|---|
| 3 Declared name and address of consignee | 4 Plant protection organisation of ... to plant protection organisation(s) of |
| | 5 Place of origin |
| 6 Declared means of conveyance | |
| 7 Declared point of entry | |
| 8 Distinguishing marks: number and description of packages; name of produce; botanical name of plants | 9 Quantity declared |
| 10 This is to certify that the plants or plant products described above: — have been inspected according to appropriate procedures, and — are considered to be free from quarantine pests, and practically free from other injurious pests, and — are considered to conform with the current phytosanitary regulations of the importing country | |
| 11 Additional declaration | |
| DISINFESTATION AND/OR DISINFECTION TREATMENT<br>12 Treatment<br>13 Chemical (active ingredient) / 14 Duration and temperature<br>15 Concentration / 16 Date<br>17 Additional information | Place of issue<br>Date<br>Name and signature of authorised officer<br>Stamp of organisation |

## vi. ການຕິດສະຫຼາກ ຜະລິດຕະພັນ ກະສິກຳດິບ

### b) ມາດຕະຖານ ການຕະຫຼາດ ສໍາລັບ ໝາກໄມ້ ແລະ ຜັກ ບາງຊະນິດ

ໃນຂະນະທີ່ ບໍ່ມີຂໍ້ກໍານົດ ຫຼື ຄວາມຕ້ອງການທົ່ວໄປ ສໍາລັບການຕິດສະຫຼາກ, ນິຕິກໍາ ຂອງ EU ກໍານົດ ກົດລະບຽບລະອຽດ ສໍາລັບ ການເຮັດການຕະຫຼາດ ຜັກ ແລະ ໝາກໄມ້ ທີ່ມີຢູ່ໃນ ມາດຕະຖານການຕະຫຼາດ ສໍາລັບ ໝາກໄມ້ ແລະ ຜັກ ຊະນິດໃດໜຶ່ງ.[185] ມີມາດຕະຖານດ້ານການຕະຫຼາດ ອັນສະເພາະໃດໜຶ່ງ ເກີດຂຶ້ນ ສໍາລັບ ໝາກໂປມ (ໝາກແອັບເປີ້ນ), ໝາກໄມ້ທີ່ມີຣິດສົ້ມ, ໝາກກີວີ້, ຜັກສະຫຼັດ, ຜັກເອັນດິບ (Endives) ທີ່ມີໃບງໍກວ້າງ, ໝາກໝັ້ນ ແລະ ປະເພດໝາກໝັ້ນ, ໝາກຈອງ, ໝາກສະຕໍເບີຣີ, ໝາກເຜັດຫວານ, ໝາກອະງຸ່ນ ແລະ ໝາກເລັ່ນ.[186]

ມາດຕະຖານການຕະຫຼາດ ຂອງ EU ສໍາລັບ ໝາກໄມ້ ແລະ ຜັກ ຍັງປະກອບດ້ວຍ ກົດລະບຽບ ວ່າດ້ວຍ ການຫຸ້ມຫໍ່ ແລະ ການຕິດສະຫຼາກ. ໂດຍສະເພາະ, ຂໍ້ມູນທີ່ຕ້ອງການ ຈະຕ້ອງສາມາດອ່ານອອກໄດ້ ຢ່າງຈະແຈ້ງ ແລະ ສາມາດເບິ່ງເຫັນໄດ້ ຢູ່ອີກຂ້າງໜຶ່ງ ຂອງບັນຈຸພັນ, ຍົກເວັ້ນໃນກໍລະນີ ທີ່ສິນຄ້າ ຖືກຂົນສົ່ງ ເປັນຈໍານວນຫຼາຍ ແລະ ໃນກໍລະນີ ທີ່ມີສັນຍາ ວ່າດ້ວຍ ໄລຍະທາງ, ທີ່ບັນດາກົດລະບຽບ ທີ່ແຕກຕ່າງກັນມີຜົນນໍາໃຊ້.[187]
ກ່ຽວກັບ ການຂາຍຍ່ອຍ, ຂໍ້ມູນທີ່ຕ້ອງການ ຈະຕ້ອງສາມາດອ່ານໄດ້ ແລະ ມີຄວາມກະຈ່າງແຈ້ງ, ທີ່ສະແດງໃຫ້ເຫັນເຖິງ ປະເທດແຫຼ່ງກໍາເນີດ ແລະ ຊັ້ນ ແລະ ຄວາມຫຼາກຫຼາຍ ຂອງ ຜະລິດຕະພັນ ເພື່ອຫຼີກລ່ຽງ ການເຮັດໃຫ້ຜູ້ບໍລິໂພກເຂົ້າໃຈຜິດ.[188]

ກົດລະບຽບຕ່າງໆ ແມ່ນມີຄວາມແຕກຕ່າງກັນໄປ ຂຶ້ນກັບ ໝາກໄມ້ ຫຼື ຜັກ ຊະນິດໃດໜຶ່ງ, ແຕ່ໂດຍປົກກະຕິ ແມ່ນປະກອບມີສິ່ງຕໍ່ໄປນີ້:

- ຜະລິດຕະພັນ ຕ້ອງໄດ້ຖືກຫຸ້ມຫໍ່ ໃນລັກສະນະທີ່ປົກປ້ອງ ຜະລິດຕະພັນ ຢ່າງຖືກຕ້ອງ.
- ວັດສະດຸ ທີ່ຖືກໃຊ້ພາຍໃນກ່ອງຫຸ້ມຫໍ່ ຕ້ອງສະອາດ ແລະ ມີຄຸນນະພາບ ເພື່ອບໍ່ໃຫ້ເກີດທຸກຄວາມເສຍຫາຍ ທັງພາຍໃນ ຫຼື ພາຍນອກ ຕໍ່ຜະລິດຕະພັນ. ອະນຸຍາດໃຫ້ນຳໃຊ້ ວັດສະດຸ, ໂດຍສະເພາະແມ່ນ ເຈ້ຍ ຫຼື ສະແຕມ ທີ່ສະແດງບອກ ລາຍລະອຽດທາງການຄ້າ, ໂດຍທີ່ວ່າ ການພິມ ຫຼື ການຕິດສະຫຼາກ ໄດ້ນຳໃຊ້ນຳມຶກ ຫຼື ກາວ ທີ່ບໍ່ເປື້ອ.
- ສະຕິກເກີ ທີ່ຕິດໃສ່ ແຕ່ລະຜະລິດຕະພັນ ຈະຕ້ອງເປັນລັກສະນະທີ່ວ່າ, ໃນເວລາແກະອອກໄປແລ້ວ, ມັນຈະບໍ່ປະຮ່ອງຮອຍກາວໄວ້ໃຫ້ເຫັນ, ຫຼື ບໍ່ກໍ່ໃຫ້ເກີດຄວາມຜິດປົກກະຕິ ຂອງ ຜິວໜັງ. ຂໍ້ມູນທີ່ຍິງດ້ວຍແສງເລເຊີໃສ່ໝາກໄມ້ ແຕ່ລະໜ່ວຍ ບໍ່ຄວນນຳໄປສູ່ ການເກີດຄວາມຜິດປົກກະຕິ ຂອງຜິວໜັງ.

### c) ຂໍ້ມູນທົ່ວໄປ ທີ່ຕ້ອງການໃຫ້ມີຢູ່ໃນກາສະຫຼາກ

*ໃນກໍລະນີທີ່ຜະລິດຕະພັນກະສິກຳ ຄວນຈະມີໃຫ້ກັບ ຜູ້ບໍລິໂພກ ໂດຍ ບໍ່ມີການປຸງແຕ່ງເພີ່ມຕື່ມໃດໆ, ກົດລະບຽບ ສະເພາະການຕິດສະຫຼາກ ແມ່ນຈະມີຜົນບັງໃຊ້ ຕາມ ລະບຽບການ ວ່າດ້ວຍ ຂໍ້ມູນຂ່າວສານອາຫານ ຂອງ ສະຫະພາບເອີຣົບ.* ມາດຕາ 9, ແລະ ມາດຕາ 10–35 ຂອງ ລະບຽບການ ວ່າດ້ວຍຂໍ້ມູນຂ່າວສານອາຫານ ຂອງ EU, **ກາສະຫຼາກ ຂອງອາຫານ** ທີ່ຕັ້ງໃຈເອົາໄປວາງຂາຍໃນ ຕະຫຼາດ EU ຕ້ອງປະກອບດ້ວຍ ອົງປະກອບຕໍ່ໄປນີ້:

**ລາຍລະອຽດ ຂອງ ຜະລິດຕະພັນ**

| | |
|---|---|
| **ຊື່ ຂອງຜະລິດຕະພັນ ທີ່ຈະຖືກຂາຍ** | ▪ ບໍ່ມີເຄື່ອງໝາຍການຄ້າ, ຊື່ຍີ່ຫໍ້ ຫຼື ຊື່ທີ່ເກົ່າໄກ່ໃດ ທີ່ສາມາດປ່ຽນແທນ ຊື່ພັນທຸກຳໄດ້, ແຕ່ມັນສາມາດຖືກນຳໃຊ້ ເພີ່ມຈາກຊື່ພັນທຸກຳ.<br>▪ ສະພາບເງື່ອນໄຂ ທາງກາຍະພາບ ອັນສະເພາະ ຂອງ ອາຫານ ຫຼື ການປະຕິບັດແບບສະເພາະ ທີ່ອາຫານໄດ້ໄປຜ່ານ (**ເຊັ່ນ.** ການໃສ່ແປ້ງ, ການແຊ່ແຂງແຫ້ງ, ການແຊ່ແຂງ, ການສະກັດ, ການຮົມຄວັນ, ການສາຍລັງສີ ຫຼື ການປະຕິບັດດ້ວຍ ການສາຍລັງສີໄອອນ) ຕ້ອງລວມຢູ່ນຳເມື່ອ ການຍົກເວັ້ນດັ່ງກ່າວ ອາດສາມາ ເຮັດໃຫ້ຜູ້ບໍລິໂພກງົງ. |
| **EU ລາຍລະອຽດການຕິດຕໍ່** | ▪ ຊື່ ຫຼື ຊື່ທຸລະກິດ ແລະ ທີ່ຢູ່ ຂອງ ຜູ້ຜະລິດ, ຜູ້ຫຸ້ມຫໍ່ ຫຼື ຜູ້ນຳເຂົ້າ ທີ່ສ້າງຕັ້ງ ໃນ EU. |
| **ລາຍລະອຽດ ວ່າດ້ວຍແຫຼ່ງກຳເນີດ** | ▪ ປະເທດ ທີ່ເປັນແຫຼ່ງກຳເນີດ ຫຼື ສະຖານທີ່ ທີ່ເປັນບ່ອນກຳເນີດ ເມື່ອມີການກຳນົດ ຢູ່ໃນມາດຕາ 26 ຂອງ ລະບຽບການ ວ່າດ້ວຍອາຫານ ຂອງ EU. |

## vii. ລະບຽບການສະເພາະ ກ່ຽວກັບ ຜະລິດຕະພັນປອດສານພິດ

### a) ກົດລະບຽບທົ່ວໄປ ທີ່ຄຸ້ມຄອງ ຜະລິດຕະພັນປອດສານພິດ

*ກົດລະບຽບທົ່ວໄປ ກ່ຽວກັບ ຜະລິດຕະພັນກະສິກຳປອດສານພິດ ແມ່ນຢູ່ພາຍໃຕ້ ກົດລະບຽບ* (EU) 2018/848 *ຂອງ ລັດຖະສະພາ ແລະ ສະພາເອີຣົບ, ລົງວັນທີ* 30 *ພຶດສະພາ* 2018 *ວ່າດ້ວຍ ການຜະລິດແບບປອດສານພິດ ແລະ ການຕິດສະຫຼາກ ຜະລິດຕະພັນປອດສານພິດ.*[189] ຜະລິດຕະພັນ ທີ່ມາຈາກ ປະເທດທີ່ຢູ່ນອກສະຫະພາບເອີຣົບ ສາມາດຖ◌ືກວາງຂາຍໄດ້ ຢູ່ໃນ ຕະຫຼາດ EU ໃນນາມເປັນສິນຄ້າປອດສານພິດ, ຕາບໃດທີ່ ພວກມັນ ຖືກຕ້ອງຕາມ ນິຕິກຳທີ່ກ່ຽວຂ້ອງ ຂອງ EU ແລະ ຖ້າພວກມັນ ຢູ່ພາຍໃຕ້ ການຄວບຄຸມ ແລະ ຖ້າ ກົດລະບຽບທີ່ທຽບເທົ່າກັນ ທີ່ມີຜົນບັງໃຊ້ ໃນປະເທດທີສາມນັ້ນ ໄດ້ຖືກຮັບຮູ້ໂດຍ EU.[190] ການຄວບຄຸມນີ້ ສາມາດດຳເນີນໄດ້ ໂດຍ ອົງການທີ່ຖືກຮັບຮູ້ໂດຍ EU ຫຼື, ໃນບາງກໍລະນີ, ໂດຍອົງການຈັດຕັ້ງ ຢູ່ໃນປະເທດແຫຼ່ງກຳເນີດ.

### ບັນດາກົດລະບຽບ ຂອງ EU ວ່າດ້ວຍ ການເຮັດກະສິກຳ ແບບປອດສານພິດ ກວມເອົາທຸກຂັ້ນ ຂອງ ຂະບວນການຜະລິດ

ນີ້ໝາຍຄວາມວ່າ ກົດລະບຽບ ມີຜົນນຳໃຊ້ໄດ້ ກັບໝົດທຸກຂັ້ນຕອນ ນັບຕັ້ງແຕ່ແກ່ນ ຈົນເຖິງ ອາຫານທີ່ໄດ້ຮັບການປຸງແຕ່ງຂັ້ນສຸດທ້າຍ. ໂດຍສະເພາະ, ກົດລະບຽບ ມີຜົນນຳໃຊ້ກັບ:

- ຜະລິດຕະພັນກະສິກຳ ທີ່ຍັງມີຊີວິດຢູ່ ຫຼື ບໍ່ໄດ້ຜ່ານການປຸງແຕ່ງ, ລວມທັງ ແກ່ນ ແລະ ວັດສະດຸການຈະເລີນພັນ ຂອງ ພືດຊະນິດອື່ນໆ;
- ຜະລິດຕະພັນກະສິກຳ ທີ່ໄດ້ຜ່ານການປຸງແຕ່ງ ສຳລັບນຳໃຊ້ເປັນອາຫານ.

ເອກະສານຊ້ອນທ້າຍ I ຂອງ ລະບຽບການ (EU) 2018/848 ກຳນົດ ລາຍຊື່ຜະລິດຕະພັນອື່ນໆ ນອກເໜືອຈາກ ອັນທີ່ໄດ້ກຳນົດໄວ້ໃນມາດຕາ 2 (1) ທີ່ຍັງສາມາດ ໄດ້ຮັບການຢັ້ງຢືນວ່າ ປອດສານພິດ, ທີ່ນຳສະເໜີ ສິ່ງແປກໃໝ່ ເມື່ອສົມທຽບກັບ ລະບຽບການ ວ່າດ້ວຍ ຜະລິດຕະພັນປອດສານພິດ ທີ່ຜ່ານມາ ຂອງ ສະຫະພາບເອີຣົບ. *ໃນຈຳນວນສິ່ງອື່ນໆ*, ບັນຊີລາຍຊື່ ປະກອບມີ, ເຊື້ອໂປ່ງ, ມາເຕ (mate), ໃບຂອງເຄືອ, ໃຈຕົ້ນປາມ, ໜໍ່ຫ້ອບ, ຮັງໜອນໄໝ, ຢາງທຳມະຊາດ ແລະ ນ້ຳມັນຍາງ, ນ້ຳມັນທີ່ສະກັດຈາກທຳມະຊາດ, ໄມ້ອັດຜາວາຍ, ຝ້າຍດິບ, ຂົນແກະດິບ, ໜັງດິບ ແລະ ການກຽມສະໝຸນໄພແບບດັ້ງເດີມຈາກພືດ.

ການຜະລິດແບບປອດສານພິດ ບໍ່ລວມເອົາ ຜະລິດຕະພັນ ທີ່ມາຈາກ ການຫາປາ ແລະ ການລ່າສັດຈາກປ່າ ແຕ່ກວມເອົາ ການເກັບກ່ຽວພືດປ່າ ເມື່ອມີການເຄົາລົບ ບາງສະພາບເງື່ອນໄຂ ທີ່ຢູ່ອາໄສທາງທຳມະຊາດ.[191] Specific ກົດລະບຽບອັນສະເພາະ ແມ່ນໄດ້ຖືກສ້າງຂຶ້ນ ສຳລັບສັດລ້ຽງນ້ຳ.

### ບັນດາຫຼັກການຕົ້ນຕໍ ທີ່ຄວບຄຸມ ການຜະລິດ ແບບປອດສານພິດ ຢູ່ໃນ EU

ກົດລະບຽບ ທີ່ຄວບຄຸມ ການຜະລິດແບບປອດສານພິດ ຢູ່ໃນສະຫະພາບເອີຣົບ ແມ່ນອີງໃສ່ ຫຼັກການສຳຄັນ ຫຼາຍຢ່າງ, ຊຶ່ງລວມມີ:

- ຫ້າມນຳໃຊ້ ສິ່ງທີ່ມີຊີວິດທີ່ຖືກດັດແກ້ພັນທຸກຳ (GMOs);[192]
- ຫ້າມນຳໃຊ້ ລັງສີໄອອອນໄນຊິງ (Ionizing radiation);[193]
- ຂໍ້ຈຳກັດ ໃນການນຳໃຊ້ ປຸ໋ຍທຽມ, ຢາຂ້າຫຍ້າ ແລະ ຢາປາບສັດຕູພືດ;[194]
- ຫ້າມນຳໃຊ້ ສານຮໍໂມນ ແລະ ຂໍ້ຈຳກັດ ໃນການໃຊ້ຢາຕ້ານເຊື້ອ ເມື່ອມີຄວາມຈຳເປັນ ຕໍ່ ສຸຂະພາບສັດ.[195]

ສິ່ງດັ່ງກ່າວນີ້ ໝາຍຄວາມວ່າ ຜູ້ຜະລິດແບບອິນຊີ ຈຳເປັນຕ້ອງໄດ້ຍອມນຳໃຊ້ ວິທີການທີ່ແຕກຕ່າງກັນ ເພື່ອຮັກສາ ຄວາມອຸດົມສົມບູນຂອງດິນ ແລະ ສຸຂະພາບ ຂອງ ສັດ ແລະ ພືດ, ທີ່ສາມາດລວມເອົາ:

- ການປູກພືດແບບໝູນວຽນ;[196]
- ການໄຖ ແລະ ການປະຕິບັດການປູກ ທີ່ຮັກສາ ຫຼື ເພີ່ມຄວາມອຸດົມສົມບູນຂອງດິນ;[197]
- ຫ້າມນຳໃຊ້ ປຸ໋ຍ ໄນໂຕຣເຈນແຮ່ທາດ (Mineral nitrogen fertilizers);[198]
- ຄັດເລືອກ ແນວພັນ ແລະ ສາຍພັນທີ່ທົນທານ ພ້ອມທັງ ເຕັກນິກການຊຸກຍູ້ ການຄວບຄຸມ ສັດຕູພືດ ແລະ ຫຍ້າທຳມະຊາດ;[199]
- ຊຸກຍູ້ ພູມຄຸ້ມກັນທຳມະຊາດ ຂອງສັດ;[200]
- ປ້ອງກັນຈາກ ການເກັບສັດໄວ້ບ່ອນດຽວຫຼາຍເກີນໄປ.[201]

### ກົດລະບຽບສະເພາະ ສຳລັບ ການວາງຂາຍສັດລ້ຽງ ປອດສານພິດ ຢູ່ໃນ EU

ກົດລະບຽບສະເພາະ ກໍຍັງໄດ້ຖືກສ້າງຂຶ້ນ ສຳລັບຊາວກະສິກອນ ທີ່ຕ້ອງການວາງຂາຍ ສັດລ້ຽງປອດສານພິດ ຢູ່ໃນ ສະຫະພາບເອີຣົບ, ລວມທັງ:

- ສັດທີ່ຖືກລ້ຽງ ແບບບໍ່ປອດສານພິດ ບໍ່ສາມາດຖືກນຳເຂົ້າໄປໃນອະນາເຂດໄດ້, ເວັ້ນເສຍແຕ່ວ່າ ເພື່ອຈຸດປະສົງການປັບປຸງພັນ ແລະ ພວກມັນ ກໍຖືກຕ້ອງຕາມ ກົດລະບຽບອັນສະເພາະເທົ່ານັ້ນ (ຂໍ້ 1.3.4. ຂອງ ພາກທີ II ຂອງ ເອກະສານຊ້ອນທ້າຍ II ຂອງ ລະບຽບການ (EU) 2018/848);
- ອາຫານ ຄວນໄດ້ຮັບມາຈາກຟາມ ບ່ອນທີ່ລ້ຽງສັດ ຫຼື ຈາກຟາມ ທີ່ຢູ່ໃນຂົງເຂດດຽວກັນ ເປັນຫຼັກ;[202]
- ການຄັດລອກສັດ ແລະ/ຫຼື ການໂອນຕົວອ່ອນ ແມ່ນຖືກຫ້າມ ຢ່າງເດັດຂາດ;[203]
- ສານກະຕຸ້ນການຈະເລີນເຕີບໂຕ ແລະ ກົດອະມິໂນສັງເຄາະ ແມ່ນຖືກຫ້າມບໍ່ໃຫ້ໃຊ້;[204]
- ສັດລ້ຽງລູກດ້ວຍນ້ຳນົມ ທີ່ຍັງດູດນົມ ຈະຕ້ອງຖືກລ້ຽງດ້ວຍ ນ້ຳນົມຈາກທຳມະຊາດ, ຊຶ່ງດີແທ້ ຕ້ອງເປັນນ້ຳນົມແມ່;[205]

- ຕ້ອງນຳໃຊ້ ວິທີການສືບພັນ ແບບທຳ  ມະຊາດ. ແຕ່ເຖິງຢ່າງໃດກໍ່ຕາມ, ການປະສົມພັນທຽມ ແມ່ນໄດ້ຮັບອະນຸຍາດ;[206]
- ວັດສະດຸປ້ອນອາຫານທີ່ບໍ່ປອດສານພິດ ທີ່ມາຈາກພືດ, ວັດສະດຸປ້ອນອາຫານ ທີ່ມາຈາກສັດ ແລະ ແຮ່ທາດ, ອາຫານເສີມ, ຜະລິດຕະພັນສະເພາະໃດໜຶ່ງ  ທີ່ນຳໃຊ້ເຂົ້າໃນໂພຊະນາການສັດ ແລະ ເຄື່ອງຊ່ວຍໃນການປຸງແຕ່ງ ແມ່ນຈະຖືກນຳໃຊ້ ກໍ່ຕໍ່ເມື່ອ ຖ້າພວກມັນ ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ສະເພາະ ເຂົ້າໃນການຜະລິດ ແບບປອດສານພິດ ເທົ່ານັ້ນ; ແລະ[207]
- ·ຕ້ອງຍອມປະຕິບັດຕາມ ຫຼັກການສະຫວັດດີການສັດບາງຢ່າງ ຕາມທີ່ໄດ້ກ່າວໄວ້ຂ້າງລຸ່ມນີ້:
    - ບຸກຄະລາກອນ ທີ່ຮັກສາສັດ ຕ້ອງມີຄວາມຮູ້ ແລະ ທັກສະພື້ນຖານ ທີ່ຈຳເປັນ ກ່ຽວກັບສຸຂະພາບ ແລະ ຄວາມຕ້ອງການດ້ານຄວາມເປັນຢູ່ ຂອງສັດ;[208]
    - ຄວນເອົາໃຈໃສ່ເປັນພິເສດ ຕໍ່ ສະພາບທີ່ຢູ່ອາໄສ, ການປະຕິບັດການລ້ຽງ ແລະ ຄວາມໜາແໜ້ນ ຂອງສັດ;[209]
    - ຈຳນວນສັດລ້ຽງ ຕ້ອງຖືກຈຳກັດ ເພື່ອຫຼຸດຜ່ອນ ການກິນຫຼາຍເກີນໄປ, ການກັດເຊາະ, ຫຼື ການສ້າງມົນລະພິດ ທີ່ເກີດຈາກສັດ ຫຼື ໂດຍການກະຈາຍ ຂອງມູນສັດ;[210]
    - ເມື່ອມ◌ີຄວາມເປັນໄປໄດ້, ໃຫ້ສັດເຂົ້າເຖິງອາກາດ ແບບປອດໂປ່ງ ຫຼື ທົ່ງຫຍ້າ;[211]
    - ການຜູກສັດ ຫຼື ການແຍກສັດໄປຢູ່ໂດດດ່ຽວ ແມ່ນຈະຖືກຫ້າມ ນອກເໜືອຈາກ ເປັນການແຍກອອກຈາກສັດໂຕໃດໂຕໜຶ່ງ ສຳລັບໄລຍະເວລາຈຳກັດໃດໜຶ່ງ ແລະ ເພື່ອຄວາມເປັນຢູ່ທີ່ດີ, ຄວາມປອດໄພ ຫຼື ເຫດຜົນທາງດ້ານສັດຕະວະແພດ;[212]
    - ບໍ່ອະນຸຍາດໃຫ້ໃຊ້ ສານຮໍໂມນ ຫຼື ສານທີ່ຄ້າຍຄືກັນ, ເວັ້ນເສຍແຕ່ເປັນຮູບແບບການປິ່ນປົວ ທາງສັດຕະວະແພດ ສຳລັບ ສັດໂຕໃດໂຕໜຶ່ງ;[213]
    - ເມື່ອສັດບໍ່ສະບາຍ, ຜະລິດຕະພັນຢາຂອງສັດຕະວະແພດ ສຳລັບການປິ່ນປົວທົ່ວໄປ, ລວມທັງຢາຕ້ານເຊື້ອ, ສາມາດຖືກນຳໃຊ້ໄດ້ເມື່ອຈຳເປັນ ແລະ ຢູ່ພາຍໃຕ້ເງື່ອນໄຂທີ່ເຄັ່ງຄັດ. ສິ່ງດັ່ງກ່າວນີ້ ອະນຸຍາດສະເພາະ ເມື່ອມີການເຮັດກາຍະພາບບຳບັດ, ສ່ວນສາດການແພດທຳມະຊາດ ແລະ ຜະລິດຕະພັນອື່ນໆ ແມ່ນບໍ່ເໝາະສົມ;[214] ແລະ
    - ການນຳໃຊ້ຢາສັດຕະວະແພດດ້ານພູມຄຸ້ມກັນ ແມ່ນໄດ້ຮັບອະນຸຍາດ.[215]

### ບັນດາສານ ທີ່ຖືກນຳໃຊ້ ຕໍ່ສູ້ກັບ ສັດຕູພືດ ຫຼື ພະຍາດພືດ ທີ່ຈະຕ້ອງໄດ້ຖືກຮັບຮອງລ່ວງໜ້າ

- ທຸກສານ ທີ່ຖືກນຳໃຊ້ ຢູ່ໃນການຜະລິດກະສິກຳອິນຊີ ເພື່ອຕໍ່ສູ້ກັບ ສັດຕູພືດ ຫຼື ພະຍາດພືດ ຕ້ອງໄດ້ຮັບການອະນຸມັດກ່ອນ ຈາກຄະນະກຳມະການເອີຣົບ.[216]
- *ລາຍລະອຽດເພີ່ມຕື່ມ ແມ່ນຖືກກຳນົດ ໂດຍ ລະບຽບການຂອງຄະນະກຳມະການ* (EC) 889/2007 *ລົງ ວັນທີ* 5 *ກັນຍາ* 2008 *ທີ່ວາງກົດລະບຽບລະອຽດ ສຳລັບ ການຈັດຕັ້ງປະຕິບັດ ລະບຽບການຂອງສະພາ* (EC) *ເລກທີ* 834/2007 *ວ່າດ້ວຍ ການຜະລິດແບບປອດສານພິດ ແລະ ການຕິດສະຫຼາກ ຜະລິດຕະພັນປອດສານພິດ ກ່ຽວກັບ ການຜະລິດແບບປອດສານພິດ, ການຕິດສະຫຼາກ ແລະ ການຄວບຄຸມ.*[217]
- ບັນດາກົດລະບຽບ ທີ່ຢູ່ໃນນີ້ ໃຫ້ຄຳແນະນຳ ກ່ຽວກັບ ການອະນຸມັດ ປັດໃຈນຳເຂົ້າຈາກພາຍນອກ ເຊັ່ນ: ປຸ໋ຍ, ຢາຂ້າແມງໄມ້, ແລະ ສິ່ງເພີ່ມໃສ່ອາຫານ ດັ່ງນັ້ນ ມີພຽງສະເພາະແຕ່ສານ ແລະ ທາດປະສົມ ທີ່ລະບຸໄວ້ໃນບັນຊີລາຍຊື່ ທີ່ຖືກຮັບຮອງ ຢູ່ໃນນິຕິກຳສະເພາະເທົ່ານັ້ນທີ່ສາມາດຖືກນຳໃຊ້ ເຂົ້າໃນ ການຜະລິດແບບປອດສານພິດ.

## b) ການຕິດສະຫຼາກ ຜະລິດຕະພັນປອດສານພິດ

ໂລໂກ້ປອດສານພິດ ຂອງ ສະຫະພາບເອີຣົບ ສາມາດ ຖືກນຳໃຊ້ ໂດຍ ຜູ້ຜະລິດ ທີ່ຕ້ອງການສົ່ງອອກ ສິນຄ້າຂອງຕົນ ເຂົ້າໄປໃນສະຫະພາບເອີຣົບ ເມື່ອ ຜະລິດຕະພັນ ຖືກຕ້ອງຕາມ ກົດລະບຽບ ຂອງ ສະຫະພາບເອີຣົບ ວ່າດ້ວຍ ການນຳເຂົ້າສິນຄ້າປອດສານພິດ.[218] ມາດຕາ 33 (1) ຂອງ ກົດລະບຽບ (EU) 2018/848 ອະນຸຍາດໃຫ້ນຳໃຊ້ໂລໂກ້ປອດສານພິດ ຂອງ EU.

ໂລໂກ້ ຕ້ອງສະແດງ ໂດຍອີງຕາມ ບັນດາກົດລະບຽບຕໍ່ໄປນີ້:

- ໂລໂກ້ ຕ້ອງບໍ່ນ້ອຍກວ່າ 13,5 ມມ x 9 ມມ. ໃນກໍລະນີ ທີ່ມີການຫຸ້ມຫໍ່ຂະໜາດນ້ອຍຫຼາຍ ຈົ່ນເຮັດໃຫ້ບໍ່ສາມາປະຕິບັດຕາມ ຂະໜາດຕໍ່າສຸດທີ່ກ່າວມາ, ແມ່ນອະນຸຍາດໃຫ້ໃຊ້ຂະໜາດ 9 ມມ x 6 ມມ.
- ໂລໂກ້ ຕ້ອງຖືກສະແດງອອກ ເປັນ ສີຂຽວ ແລະ ຂາວ ທີ່ເປັນມາດຕະຖານ ຫຼື ເປັນສີຂາວ ແລະ ດໍາ ຖ້າບໍ່ສາມາດນໍາໃຊ້ໂລໂກ້ສີໄດ້.
- ຖ້າສີພື້ນ ຂອງສະຫຼາກ ຫຼື ການຫຸ້ມຫໍ່ນັ້ນມືດ, ສັນຍາລັກຕ່າງໆ ສາມາດຖືກນໍາໃຊ້ ໃນຮູບແບບລົບໄດ້.
- ຖ້າໂລໂກ້ ຖືກນໍາໃຊ້ ເປັນໂລໂກ້ສີ ຢູ່ເທິງພື້ນຫຼັງສີ ທີ່ເຮັດໃຫ້ມັນເບິ່ງເຫັນໄດ້ຍາກ, ສາມາດນໍາໃຊ້ເສັ້ນຂີດອ້ອມໂລໂກ້ໄດ້.
- ຖ້າມີພຽງແຕ່ສີດຽວ ຢູ່ໃນບັນຈຸພັນ, ໂລໂກ້ປອດສານພິດ ສາມາດຖືກນໍາໃຊ້ໄດ້ ໃນສີນັ້ນ.
- ໂລໂກ້ ອາດຈະບໍ່ໃຫ້ເປັນແບບເກົ່າໄກ່ (ເຊັ່ນວ່າ, ການເຮັດໃຫ້ສີພື້ນເປັນສີໄສ ຫຼື ເພີ່ມເອັບເຟັກສາມມິຕິ).

ຂໍ້ມູນເພີ່ມຕື່ມ ກ່ຽວກັບລັກສະນະ ທີ່ໂລໂກ້ປອດສານພິດ ຈະຕ້ອງສະແດງອອກ ແມ່ນກໍານົດໄວ້ ຢູ່ໃນ ຄູ່ມືການນໍາໃຊ້ ວ່າດ້ວຍໂລໂກ້ປອດສານພິດ ຊຶ່ງຖືກຕີແຜ່ ໂດຍ ຄະນະກໍາມະການເອີຣົບ.[219]

## c) ການສົ່ງອອກ ຜະລິດຕະພັນປອດສານພິດ ໄປ EU

- ຜະລິດຕະພັນ ທີ່ມາຈາກປະເທດທີສາມ ສາມາດຂາຍໄດ້ ໃນ EU ໃນນາມເປັນຜະລິດຕະພັນປອດສານພິດ ເມື່ອພວກມັນ ຖືກຕ້ອງຕາມກົດລະບຽບ ວ່າດ້ວຍ ການຜະລິດ ແລະ ການຄວບຄຸມ ຂອງ ປະເທດທີ່ຢູ່ນອກ EU ທີ່ຖືກຮັບຮູ້ ພາຍໃຕ້ ສັນຍາການຄ້າ ທີ່ທຽບເທົ່າກັບສິນຄ້າຢູ່ໃນ EU;[220] ແລະ
- ຜະລິດຕະພັນ ທີ່ມາຈາກ ປະເທດທີສາມ ສາມາດຂາຍໄດ້ໃນ EU ໃນນາມເປັນ ຜະລິດຕະພັນປອດສານພິດ ເມື່ອພວກມັນ ມີໃບຢັ້ງຢືນທີ່ອອກໃຫ້ໂດຍ ເຈົ້າໜ້າທີ່ຄວບຄຸມ ຫຼື ອົງການຄວບຄຸມ ທີ່ກ່ຽວຂ້ອງ ຢູ່ໃນ ບັນດາປະເທດທີ່ຢູ່ນອກ EU ໂດຍຢືນຢັນວ່າ ຜະລິດຕະພັນ ຖືກຕ້ອງຕາມ ຕາມມາດຕະຖານ ຂອງ EU.[221]

## viii. ຂໍ້ມູນເພີ່ມຕື່ມ/ທີ່ຢູ່ຕິດຕໍ່ ທີ່ສຳຄັນ

ສຳລັບ ຂໍ້ມູນເພີ່ມຕື່ມ, ຫືວໜ່ວຍທຸລະກິດ ສາມາດ ອີງໃສ່ ຫືວໜ່ວຍການຈັດຕັ້ງ/ສະຖາບັນ ທີ່ຕັ້ງຢູ່ໃນ EU:

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| **ສະມາຄົມ ສຸຂະພາບສັດ ແຫ່ງເອີຣົບ (Animal-healthEurope)** | **AnimalhealthEurope** ແມ່ນເປັນສະມາຄົມ ທີ່ເປັນຕົວແທນ ແກ່ ຜູ້ຜະລິດ ຢາ, ວັກແຊງ ຂອງສັດ ແລະ ຜະລິດຕະພັນສຸຂະພາບສັດອື່ນໆ ອີກ ໃນທະວີບ ເອີຣົບ. ມັນເປັນອົງການຈັດຕັ້ງ ທີ່ບໍ່ຫວັງຜົນກຳໄລ ທີ່ເປັນຕົວແທນ ໃຫ້ແກ່ ທັງສະມາຊິກທີ່ເປັນບໍລິສັດ ແລະ ສະມາຄົມສຸຂະພາບສັດ ແຫ່ງຊາດເອີຣົບ ຢູ່ໃນ ທະວີບເອີຣົບ. ມັນເປັນຕົວແທນແກ່ ຜູ້ທີ່ມີຫົວຄິດປະດິດສ້າງ ແລະ ຜະລິດຕະພັນ ລວມທັງ ວິສາຫະກິດຂະໜາດໜ້ອຍ, ກາງ ແລະ ໃຫຍ່. ສະມາຊິກ ຂອງ Animal-healthEurope ກວມ 90% ຂອງ ຕະຫຼາດເອີຣົບ ສຳລັບ ຜະລິດຕະພັນສຸຂະພາບສັດ. | Avenue de Tervueren 68<br>1150 Brussels<br>Belgium<br><br>ໂທ: +32 2 543 75 60<br>ອີເມວ: info@animalhealtheurope.eu<br>ເວັບໄຊ: www.animalhealtheurope.eu |
| **ສະຫະພັນ Copa ແລະ Cogeca** | **ສະຫະພັນ Copa and Cogeca** ເປັນຕົວແທນ ແກ່ ຊາວກະສິກອນ ແລະ ສະຫະກອນຂອງເຂົາເຈົ້າ ໃນ EU. ສະຫະພັນ Copa ເປັນຕົວແທນ ແກ່ຊາວກະສິກອນ ຫຼາຍກວ່າ 23 ລ້ານ ແລະ Cogeca ເປັນຕົວແທນ ໃຫ້ແກ່ ສະຫະກອນກະສິກຳ ໃນ EU ຫຼາຍກວ່າ 22.000 ສະຫະກອນ. | Rue de Trèves 61<br>1040 Brussels<br>Belgium<br><br>ໂທ: +32 2 287 27 11<br>ອີເມວ:mail@copa-ogeca.eu<br>ເວັບໄຊ:www.copa-ogeca.eu |
| **ຄະນະກຳມະການປະສານງານ ແຫ່ງເອີຣົບ ສຳລັບການຄ້າກະສິກຳ ແລະ ອາຫານກະສິກຳ (CELCAA)** | **CELCAA** ແມ່ນເປັນອົງການຈັດຕັ້ງ ທີ່ເປັນຕົວແທນ ໃຫ້ແກ່ ບັນດາ ສະມາຄົມ ແລະ ບໍລິສັດ ທີ່ເຄື່ອນໄຫວ ໃນຂະແໜງການ ການຄ້າ ກະສິກຳ ແລະ ອາຫານກະສິກຳ ໃນລະດັບເອີຣົບ. ສະມາຊິກ ຂອງ CEL-CAA ປະກອບມີ ສະຫະກອນ ແລະ ຜູ້ປະກອບການຂາຍສົ່ງ ທີ່ບໍ່ແມ່ນສະຫະກອນ (ຜູ້ເກັບກຳ, ຜູ້ແຈກຢາຍ, ເຈົ້າຂອງຮ້ານ,ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ) ທີ່ນຳສົ່ງ ຜະລິດຕະພັນ ກະສິກຳ ແລະ ອາຫານກະສິກຳ ເຊັ່ນ ວັດສະດຸອາຫານສັດ ແລະ ອາຫານສັດປະສົມ ແລະ ວັດຖຸດິບ ສຳລັບ ຜູ້ປະກອບການທຸລະກິດອາຫານ. CELCAA ສົ່ງເສີມຜົນປະໂຫຍດ ຂອງ ຜູ້ປະກອບການກະສິກຳ ແລະ ອາຫານກະສິກຳເອີຣົບ ໃນລະດັບ EU. CELCAA ເປັນຕົວແທນໃຫ້ແກ່ ຜົນປະໂຫຍດ ຂອງ ຂະແໜງ | Rue de Tamines 10<br>1060 Brussels<br>Belgium<br><br>ໂທ: +32 2 537 37 11<br>ອີເມວ: p.rouhier@celcaa.eu<br>ເວັບໄຊ: www.celcaa.eu |

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| | ການ ກ່ອນ ສະຖາບັນການຈັດຕັ້ງ ຂອງ EU ລວມທັງ ສະມາຄົມອື່ນໆ ທີ່ເປັນຕົວແທນແກ່ ຂະແໜງການ ຕອ່ງໂສ້ສະໜອງອາຫານ. | |
| **COCERAL** | **COCERAL** ແມ່ນເປັນ ສະມາຄົມເອີຣົບ ທີ່ເປັນຕົວແທນ ການຄ້າທັນຍາຫານ, ເຂົ້າ, ອາຫານສັດ , ແກ່ນນ້ຳມັນ, ນ້ຳມັນມະກອກ, ນ້ຳມັນ ແລະ ໄຂມັນ ແລະ ການສະໜອງກະສິກຳ. COCERAL ແມ່ນຫາງສຽງ ຂອງ ຜູ້ເກັບກຳ, ຜູ້ແຈກຢາຍ, ຜູ້ສົ່ງອອກ, ຜູ້ນຳເຂົ້າ, ແລະ ຜູ້ເກັບຮັກສາສິນຄ້າທີ່ກ່າວມາຂ້າງເທິງ. | Rue Montoyer 23<br>1000 Brussels<br>Belgium<br><br>ໂທ: +32 2 502 08 08<br>ອີເມວ: secretariat@co-ceral.com<br>ເວັບໄຊ: www.coceral.com |
| **ສະມາຄົມປົກປ້ອງພືດ ແຫ່ງທະວີບເອີຣົບ (ECPA)** | **ສະມາຄົມປົກປ້ອງພືດ ແຫ່ງທະວີບເອີຣົບ (ECPA)** ເປັນຕົວແທນໃຫ້ແກ່ ອຸດສາຫະກຳ ການປົກປ້ອງພືດ ໃນ EU. ມັນສົ່ງເສີມການປະດິດຄິດສ້າງ ແລະ ການແກ້ໄຂທີ່ອີງໃສ່ວິທະຍາສາດ ຢູ່ໃນ ອຸດສາຫະກຳພືດ ສຳລັບ ຄວາມປອດໄພ, ສາມາດຊື້ໄດ້, ສຸຂະພາບດີ ແລະ ມີການສະໜອງອາຫານ ແບບຍືນຍາມ. ECPA ສົ່ງເສີມການປະຕິບັດເຮັດກະສິກຳ ແບບທັນສະໄໝ ແລະ ສະໜັບສະໜູນ ການນຳໃຊ້ ເຕັກໂນໂລຊີປົກປ້ອງພືດ ໃຫ້ເປັນແຫຼ່ງຕົ້ນຕໍ ສຳລັບ ການເຮັດກະສິກຳແບບລົ້ງເງີກ ທີ່ມີຄວາມຍືນຍາມ. ສະມາຄົມ ອຸທິດແກ່ ການນຳໃຊ້ຢາປາບສັດຕູພືດ ແບບຍືນຍາມ ຢູ່ໃນ EU, ທີ່ຊຸກຍູ້ ຫຼັກການປະຕິບັດ ໃນການຄຸ້ມຄອງ ທີ່ປົກປ້ອງ ການເກັບກູ້, ສະຂະພາບຂອງມະນຸດ ແລະ ສິ່ງແວດລ້ອມ. | Rue Guimard 9<br>1040 Brussels<br>Belgium<br><br>ໂທ: +32 2 663 15 50<br>ອີເມວ: ecpa@ecpa.eu<br>ເວັບໄຊ: www.ecpa.eu |
| **ສະມາຄົມເວທີເອີຣົບ ສຳລັບ ຜູ້ລ້ຽງສັດໃນຟາມ (EFFAB)** | ສະມາຄົມ **EFFAB** ເຕົ້າໂຮມ ບັນດາອົງການຈັດຕັ້ງ ແລະ ບໍລິສັດ ທີ່ເຄື່ອນໄຫວ ຢູ່ໃນຂົງເຂດການເພາະພັນສັດ ແລະ ການສືບພັນສັດ. ສະມາຊິກ ຂອງ EFFAB ແມ່ນເຂົ້າຮ່ວມ ຢູ່ໃນ ການປັບປຸງພັນທຸກຳ ແກ່ ຊະນິດພັນສັດໃນຟາມ ເຊັ່ນ ງົວຄວາຍ, ໝູ, ເປັດໄກ່, ປາ ແລະ ຫອຍ. | Rue de Trèves 61<br>1040 Brussels<br>Belgium<br><br>ໂທ: +32 2 725 34 30 |

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| | ສະມາຄົມ EFFAB ເປັນຕົວແທນ ແກ່ ບັນດາອົງການຈັດຕັ້ງ ແລະ ບໍລິສັດ ທີ່ທໍາການເພາະພັນ ແລະ ການສືບພັນສັດ ໃນເອີຣົບ. | ອີເມວ: effab@effab.info<br>ເວັບໄຊ: www.effab.info |
| **ສະມາຄົມ Euroseeds** | **Euroseeds** ແມ່ນເປັນທາງສຽງ ຂອງ ອຸດສາຫະກໍາ ແກ່ນພັນ ຂອງ ເອີຣົບ ທີ່ເປັນຕົວແທນໃຫ້ແກ່ ຜົນປະໂຫຍດ ຂອງ ຜູ້ທີ່ເຄື່ອນໄຫວ ໃນ ການຄົ້ນຄວ້າ, ເພາະພັນ, ຜະລິດ ແລະ ເຮັດການຕະຫຼາດ ແກ່ ແກ່ນພັນ ທີ່ເປັນຊະນິດພັນພືດ ກະສິກໍາ, ພືດສວນ ແລະ ໄມ້ປະດັບ. | Avenue des Arts 52<br>1000 Brussels<br>Belgium<br><br>ໂທ: +32 2 743 28 60<br>ອີເມວ: secretariat@euro-seeds.eu<br>ເວັບໄຊ: www.euroseeds.eu |
| **ສະຫະພັນ ຜູ້ຜະລິດອາຫານສັດແຫ່ງທະວີບເອີຣົບ (FEFAC)** | **FEFAC** ເປັນຕົວແທນ ແກ່ ອຸດສາຫະກໍາ ອາຫານສັດ ປະສົມ ແຫ່ງທະວີບເອີຣົບ, ທີ່ເຕົ້າໂຮມ 25 ສະມາຄົມແຫ່ງຊາດ ໃນ 24 ປະເທດທີ່ເປັນສະມາຊິກ EU ລວມທັງ ບັນດາສະມາຄົມ ຢູ່ປະເທດ ສະຫວິດສະແລນ, ຕຸລະກີ, ເຊີເບຍ, ສະຫະພັນລັດເຊຍ ແລະ ນໍອກແວ ໂດຍມີສະຖານະພາບ ເປັນ ຜູ້ສັງເກດ/ສະມາຊິກສະມາຄົມ. | FEFAC aisbl<br>Rue de la Loi, 223<br>1040 Brussels<br>Belgium<br><br>ໂທ: +32 2 285 00 50<br>ເວັບໄຊ: www.fefac.eu |
| **ສະມາຄົມ FEFANA** | **FEFANA** ເປັນຕົວແທນ ແກ່ ຫົວໜ່ວຍທຸລະກິດ ສ່ວນປະສົມອາຫານພິເສດ ຢູ່ໃນ EU. ສະມາຊິກ ຂອງ ສະມາຄົມ FEFANA ປະກອບດ້ວຍ ຜູ້ຜະລິດ ແລະ ຜູ້ປະກອບການ ທີ່ເຮັດທຸລະກິດກ່ຽວກັບ ສານເຕີມແຕ່ງອາຫານສັດ, ສ່ວນປະສົມອາຫານສັດ ເພື່ອໃຫ້ສັດທໍາງານ, ສານທີ່ໃຊ້ປະສົມລ່ວງໜ້າ ແລະ ສານປະສົມອື່ນໆ ຂອງສ່ວນປະສົມພິເສດ ທີ່ເຂົ້າໄປໃນຕ່ອງໂສ້ອາຫານ ຜ່ານທາງ ອາຫານສັດ. | FEFANA asbl<br>Rue de Trèves 45<br>1040 Brussels<br>Belgium<br><br>ໂທ: +32 (0)2 639 66 60<br>ອີເມວ: info@fefana.org<br>ເວັບໄຊ: www.fefana.org |
| **ສະມາຄົມ Fertilizers Europe** | **ສະມາຄົມ Fertilizers Europe** ເປັນຕົວແທນ ແກ່ ຜູ້ຜະລິດປຸ໋ຍສ່ວນໃຫຍ່ ຢູ່ໃນ ເອີຣົບ ແລະ ຖືກຮັບຮູ້ ເປັນອົງການຈັດຕັ້ງທີ່ອຸທິດຕົນສໍາລັບ ເປັນແຫຼ່ງຂໍ້ມູນກ່ຽວກັບ ປຸ໋ຍແຮ່ທາດ. ເປັນອົງການຈັດຕັ້ງ ທີ່ສື່ສານ ກັບ ສະຖາບັນການຈັດຕັ້ງ EU ແລະ ມີຫຼາຍ ສະຖາບັນການຈັດຕັ້ງ ທີ່ກໍາລັງຊອກຫາ ຂໍ້ມູນກ່ຽວກັບ ຫຼາຍຂະແໜງການ ເຊັ່ນ ກະສິກໍາ, ສິ່ງແວດລ້ອມ ແລະ ເສດຖະກິດ. ສະມາຊິກ ຂອງ ສະມາຄົມ ປະກອບດ້ວຍຜູ້ຜະລິດປຸ໋ຍ 17 ຫົວໜ່ວຍ ທີ່ມາຈາກ ບັນດາປະເທດ ໃນທົ່ວ EU ແລະ ມີ 8 ສະມາຄົມປຸ໋ຍແຫ່ງຊາດ. | Fertilizers Europe asbl,<br>Avenue des Nerviens 9-31<br>1040 Brussels<br>Belgium<br><br>ໂທ: +32 2 675 35 50 |

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| | | ອີເມວ: main@fertilizer-seurope.com<br>ເວັບໄຊ: www.fertilizer-seurope.com |

## 3.4 ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ

### i. ບາດກ້າວຕົ້ນຕໍ ສໍາລັບ ການສົ່ງອອກ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ໄປຫາ EU

**ປະຕິບັດຕາມ ບາດກ້າວ ທີ່ເປັນຂໍ້ກໍານົດ ຫຼື ຄວາມຕ້ອງການ ຢູ່ ສປປ ລາວ**

- ຈົດທະບຽນ ວິສາຫະກິດ ໂດຍອີງຕາມ ຂັ້ນຕອນ ທີ່ໄດ້ລະບຸໄວ້
- ກະກຽມ ເອກະສານສົ່ງອອກ
- ສະເໜີຂໍ ແລະ ຮັບເອົາ ເອກະສານອະນຸຍາດສົ່ງອອກ
- ຕື່ມແບບຟອມ ລະບົບ ASYCUDA ສໍາລັບ ການສະສາງພາສີ
- ກວດກາເບິ່ງ ການແຈ້ງການ ທີ່ເປັນນິຕິກຳ ກ່ຽວກັບດ້ານໃດດ້ານໜຶ່ງ ທີ່ພົວພັນກັບການສົ່ງອອກ (ເຊັ່ນ ມາດຕະການສຸຂາພິບານ ແລະ ສຸຂານາໄມພືດ), ແລະ ທີ່ພົວພັນກັບ ຜະລິດຕະພັນໃດໜຶ່ງ

### ປະຕິບັດຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການນຳເຂົ້າ ຂອງ EU

- ກວດກາ ແລະ ຮັບປະກັນ ຄວາມຖືກຕ້ອງສອດຄ່ອງກັບ ກົດລະບຽບວ່າດ້ວຍແຫຼ່ງກຳເນີດ ຂອງສິນຄ້າ ທີ່ມີຜົນນຳໃຊ້
- ຮັບປະກັນໃຫ້ມີການຈົດທະບຽນກັບ ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງສະຫະພາບເອີຣົບ (REX)
- ສະເໜີຂໍ ແລະ ຮັບເອົາ ໃບຢັ້ງຢືນສຸຂານາໄມພືດ ສໍາລັບ ຜະລິດຕະພັນ ທີ່ມີພື້ນຖານມາຈາກພືດ



### ປະຕິບັດຕາມ ທຸກກົດລະບຽບສະເພາະຜະລິດຕະພັນ ທີ່ມີຜົນນຳໃຊ້ກັບ ຜະລິດຕະພັນ ທີ່ຈະຖືກວາງຂາຍ ໃນຕະຫຼາດ EU

- ກວດກາເບິ່ງ ລະບອບການນຳເຂົ້າ ທີ່ມີຜົນນຳໃຊ້ ສໍາລັບ ຜະລິດຕະພັນ ທີ່ບໍ່ມີແຫຼ່ງກຳເນີດມາຈາກສັດ
- ກວດກາເບິ່ງ ກົດລະບຽບ ຂອງ EU ສໍາລັບ ການສ້າງຕັ້ງ ສໍາລັບ ຜະລິດຕະພັນ ທີ່ມີແຫຼ່ງກຳເນີດ ມາຈາກສັດ
- ກວດກາເບິ່ງ ລະດັບການຕົກຄ້າງສູງສຸດ ຂອງ EU ສໍາລັບ ສານປົນເປື້ອນ
- ກວດກາເບິ່ງ ກົດລະບຽບ ທີ່ກ່ຽວຂ້ອງ ຂອງ EU ວ່າດ້ວຍ ການປົກປ້ອງພືດ ແລະ ລະດັບການຕົກຄ້າງສູງສຸດ
- ກວດກາເບິ່ງ ກົດລະບຽບພິເສດ, ເຊັ່ນ, ສໍາລັບ ຜະລິດຕະພັນປອດສານພິດ
- ກວດກາເບິ່ງ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການຕິດສະຫຼາກທີ່ກ່ຽວຂ້ອງ

## ເນື້ອໃນ

ໃນປີ 2019, ສປປ ລາວ ໄດ້ສົ່ງອອກ "ອາຫານ, ເຄື່ອງດື່ມ, ແລະ ຢາສູບ" ຈາກ ສປປ ລາວ ໄປຫາ ສະຫະພາບເອີຣົບ ທີ່ຄິດເປັນເງິນເທົ່າກັບ 35 ລ້ານເອີໂຣ, ຊຶ່ງກວມເອົາ 12.2% ຂອງ ການສົ່ງອອກທັງໝົດ ໄປຫາ ສະຫະພາບເອີຣົບ.[222] "ອາຫານ ແລະ ເຄື່ອງດື່ມ" ແມ່ນເປັນຊຸດການສົ່ງອອກ ທີ່ສູງທີ່ສຸດເປັນອັນດັບສອງ ຂອງ ສປປ ລາວ ໄປຫາ ສະຫະພາບເອີຣົບ. ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ກວມເອົາ ບົດຕ່າງໆ ພາຍໃຕ້ ລະບຽບການຕົວແທນ ຂອງ ຄະນະກຳມະການ (EU) 2015/2446 ດັ່ງທີ່ໄດ້ສະແດງໃຫ້ເຫັນ ຢູ່ໃນ ຕາຕະລາງ 18.

ລາຍການສະເພາະ ທີ່ຖືກພິຈາລະນາວ່າ ເປັນຜະລິດຕະພັນກະສິກຳ ແມ່ນບໍ່ໄດ້ລວມເອົາ. ຍົກຕົວຢ່າງ, ໃນກໍລະນີຂອງບົດທີ 17, ຜະລິດຕະພັນ ທີ່ນອນຢູ່ພາຍໃຕ້ ລະຫັດ CN ຫົວຂໍ້ 1701, "*ນ້ຳຕານສະກັດຈາກຫົວຜັກກາດ ແລະ ອ້ອຍ, ແຂງ*" ແມ່ນຖືກພິຈາລະນາ ເປັນຜະລິດຕະພັນກະສິກຳ ແລະ, ໃນກໍລະນີ ຂອງ ບົດທີ 24, "*ຢາສູບ ແລະ ຜະລິດປ່ຽນແທນຢາສູບ*", ຜະລິດຕະພັນ ທີ່ນອນຢູ່ພາຍໃຕ້ ລະຫັດ

CN ຫົວຂໍ້ 2401, *"ຢາສູບທີ່ບໍ່ທັນໄດ້ຜ່ານການຜະລິດ ແລະ ເສດຢາສູບ"*, ແມ່ນພິຈາລະນາເປັນ ຜະລິດຕະພັນກະສິກຳ. (ສຳລັບລາຍຊື່ຜະລິດຕະພັນກະສິກຳທັງໝົດ - ໃຫ້ອ້າງອີງໃສ່ ເອກະສານຊ້ອນທ້າຍ I ຂອງ ສົນທິສັນຍາ ວ່າດ້ວຍ ການປະຕິບັດໜ້າທີ່ ຂອງ ສະຫະພາບເອີຣົບ.[223])

ມີຕະຫຼາດໃຫຍ່ໄວ້ແລ້ວ ທີ່ໄດ້ສົ່ງອອກ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ໄປຫາ ຕະຫຼາດ EU. ຕາຕະລາງ 19 ສະໜອງ ພາບລວມ ຂອງ ຕະຫຼາດໃຫຍ່ ທີ່ສົ່ງອອກ ຜະລິດຕະພັນ ພາຍໃຕ້ ບາງບົດ ທີ່ໄດ້ກ່າວມາຂ້າງເທິງ, ແລະ ສປປ ລາວ ສົ່ງອອກ ຢູ່ໃນການແຂ່ງຂັນນີ້. ການວິເຄາະ ຂອງສູນ ITC ຊີ້ໃຫ້ເຫັນວ່າ ທ່າແຮງການສົ່ງອອກ ຍັງປະກົດວ່າຍັງມີຢູ່ ສຳລັບຜະລິດຕະພັນພິເສດ ລວມທັງ ຜັກແຊ່ແຂງແຫ້ງ.[224]

**ຕາຕະລາງ 18: ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ແລະ ບົດຕ່າງໆ ທີ່ກ່ຽວຂ້ອງ**

| | |
|---|---|
| **ບົດ 15** | *ໄຂມັນ ແລະ ນ້ຳມັນ ຂອງ ສັດ ຫຼື ພືດຜັກ ແລະ ຜະລິດຕະພັນແຕ່ລະປະເພດ ຂອງພວກມັນ; ໄຂມັນກິນໄດ້ ທີ່ຖືກກະກຽມ; ໄຂສັດ ຫຼື ພືດ* |
| **ບົດ 17** | *ນ້ຳຕານ ແລະ ເຂົ້າໜົມປະເພດທີ່ມີນ້ຳຕານ* |
| **ບົດ 18** | *ໂກໂກ້ ແລະ ການກະກຽມ ໂກໂກ້* |
| **ບົດ 21** | *ການກະກຽມຕ່າງໆ ທີ່ກິນໄດ້* |
| **ບົດ 22** | *ເຄື່ອງດື່ມ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ນ້ຳສົ້ມສາຍຊູ* |
| **ບົດ 24** | *ຢາສູບ ແລະ ຜະລິດຕະພັນປ່ຽນແທນຢາສູບ ທີ່ຖືກຜະລິດ* |

**ຕາຕະລາງ 19: ບັນດາປະເທດຕົ້ນຕໍ ທີ່ເປັນແຫຼ່ງກຳເນີດສິນຄ້າສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019[225]**

| ບົດ HS | ຂະແໜງການ | ປະເທດ | ມູນຄ່າການນຳເຂົ້າ ໄປຫາ EU (ເອີໂຣ) |
|---|---|---|---|
| **ບົດ 21** | ການກະກຽມປະເພດຕ່າງໆ ທີ່ກິນໄດ້ | ສະຫາລັດ ອາເມລິກາ | 827,812,156 |
| | | ສະຫວິດສະແລນ | 650,498,770 |
| | | ຈີນ | 369,138,926 |
| | | ໄທ | 277,401,206 |
| | | ສປປ ລາວ | 1,152 |
| **ບົດ 22** | ເຄື່ອງດື່ມ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ນ້ຳສົ້ມສາຍຊູ | ສະຫາລັດ ອາເມລິກາ | 1,450,552,714 |
| | | ສະຫວິດສະແລນ | 743,483,430 |
| | | ຊິລີ | 591,479,831 |
| | | ສປປ ລາວ | 119,342 |
| **ບົດ 24** | ຢາສູບ ແລະ ຜະລິດຕະພັນທີ່ສາມາດປ່ຽນແທນຢາສູບໄດ້ ທີ່ຖືກຜະລິດ | ເບຼຊິນ | 543,296,321 |
| | | ສະຫາລັດ ອາເມລິກາ | 262,522,205 |
| | | ມາລາວີ | 234,001,648 |
| | | ສປປ ລາວ | 876,438 |

ຕະຫຼາດ EU ຕົ້ນ ສຳລັບ ສປປ ລາວ ປະກອບມີ ຝຣັ່ງ, ໂຣມານີ ແລະ ສະໂລເວັນເນຍ.

**ຕາຕະລາງ 20: ການສົ່ງອອກ ຂອງ ສປປ ລາວ ໄປທົ່ວໂລກ ແລະ ໄປຫາ ບາງປະເທດສະມາຊິກ EU ຢູ່ໃນ 2019[226]**

| ບົດ HS | ຂະແໜງການ | ການສົ່ງອອກທັງໝົດ ຂອງ ສ ປປ ລາວ ໄປຫາ ໝົດທຸກ ປາຍທາງ (ເປັນເງິນໂດລາ) | ການສົ່ງອອກ ໄປຫາ ບັນດາ ປະເທດ ທີ່ເປັນສະມາຊິກ EU (ເປັນເງິນໂດລາ) |
|---|---|---|---|
| **ບົດ 21** | ການກະກຽມປະເພດຕ່າງໆ ທີ່ກິນໄດ້ | 5,344,000 | N/A |
| **ບົດ 22** | ເຄື່ອງດື່ມ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ນ້ຳສົ້ມສາຍຊູ | 250,476,000 | ສະຫະລາດຊະອານາຈັກອັງກິດ 93,000<br>ຝຼັ່ງ 65,000 |
| **ບົດ 24** | ຢາສູບ ແລະ ຜະລິດຕະພັນທີ່ສາມາດປ່ຽນແທນຢາສູບໄດ້ ທີ່ຖືກຜະລິດ | 84,680,000 | ໂຮນລັງ 747,000<br>ສະໂລເວັນເນຍ 601,000<br>ແອັດສະປາຍ 61,000 |

ຢູ່ໃນສະຫະພາບເອີຣົບ, ຂະແໜງການອາຫານກະສິກຳ ແມ່ນໄດ້ຮັບການຄວບຄຸມ ເປັນຢ່າງສູງ. ດັ່ງນັ້ນ, ຜູ້ສົ່ງອອກ ຈາກ ສປປ ລາວ ຈຳເປັນຕ້ອງໄດ້ ດຳເນີນບາດກ້າວ ທີ່ສຳຄັນ ເພື່ອຮັບປະກັນ ໃຫ້ໄດ້ຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ທາງດ້ານເຕັກນິກ ແລະ ລະບຽບການ ທີ່ກ່ຽວຂ້ອງ, ໂດຍສະເພາະ, ຖ້າຄຳນຶງເຖິງ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານຄວາມຍືນຍົງ ແລະ ດ້ານການຜະລິດປອດສານພິດ.

## ii. ບັນດາກົດລະບຽບວິຊາການ ທີ່ມີຜົນບັງໃຊ້ກັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ

### a) ພາສີ ສຳລັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ພາຍໃຕ້ ແຜນງານ EBA

ພາຍໃຕ້ ແຜນງານ EBA ຂອງ EU, ໝົດ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ສາມາດເຂົ້າ EU ແບບປອດພາສີ.

### b) ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ທີ່ມາຈາກ ສປປ ລາວ

ດັ່ງທີ່ໄດ້ອະທິບາຍໄວ້ ໃນໝວດ 2.2 (ii), ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດສິນຄ້າ ທີ່ຢູ່ພາຍໃຕ້ ລະບຽບການ GSP ໃຫ້ຂໍ້ສັງເກດວ່າ, ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຈາກ ສິດທິພິເສດ ທາງພາສີ, ຜະລິດຕະພັນ **ທີ່ອ້າງວ່າ**ຈະໄດ້ຮັບສິດທິພິເສດທາງພາສີ **ຕ້ອງມີແຫຼ່ງກຳເນີດມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ**.[227] ຜະລິດຕະພັນ ທີ່ຖືວ່າ ມີແຫຼ່ງກຳເນີດ ມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດໄດ້ ກໍຕໍ່ເມື່ອ ຜະລິດຕະພັນ ໄດ້ຮັບຊິ້ນສ່ວນມາທັງໝົດ ຢູ່ໃນປະເທດນັ້ນ ຫຼື ໄດ້ດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ຢ່າງພຽງພໍ ຢູ່ໃນປະເທດນັ້ນ.

ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງກົດລະບຽບ ວ່າດ້ວຍແຫຼ່ງກຳເນີດຂອງສິນຄ້າ ສຳລັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ແມ່ນຖືກກຳນົດ ຢູ່ໃນ ພາກທີ II ຂອງ ເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງຄະນະກຳມະການ (EU) 2015/2446.[228]

ເອກະສານຊ້ອນທ້າຍ 22-03 ແມ່ນຖືກຈັດເປັນ 3 ຖັນ, ດັ່ງທີ່ໄດ້ສະແດງໃຫ້ເຫັນໃນຮູບ 19, ທີ່ສະໜອງ ຂໍ້ມູນຄັດຫຍໍ້ ມາຈາກ ຕາຕະລາງ ທີ່ກຳນົດ ກົດລະບຽບວ່າດ້ວຍແຫຼ່ງກຳເນີດ ສຳລັບບົດທີ 15.

**ຮູບ 19:** **ຂໍ້ມູນທີ່ຄັດລອກ ມາຈາກ ຕາຕະລາງ ໃນເອກະສານຊ້ອນທ້າຍ 22-03 ກ່ຽວກັບກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ຜະລິດຕະພັນອາຫານທີ່ໄດ້ຜ່ານການປຸງແຕ່ງ**

LIST OF PRODUCTS AND WORKING OR PROCESSING OPERATIONS WHICH CONFER ORIGINATING STATUS

| Harmonised System heading | Description of product | Qualifying operation (Working or processing, carried out on non-originating materials, which confers originating status) |
|---|---|---|
| ex Chapter 15 | Animal or vegetable fats and oils and their cleavage products; prepared edible fats; animal or vegetable waxes; except for: | Manufacture from materials of any sub-heading, except that of the product |
| 1505, 1506 and 1520 | Wool grease and fatty substances derived therefrom (including lanolin). Other animal fats and oils and their fractions, whether or not refined, but not chemically modified.. Glycerol, crude; glycerol waters and glycerol lyes. | Manufacture from materials of any heading |
| 1509 and 1510 | Olive oil and its fractions | Manufacture in which all the vegetable materials used are wholly obtained |
| 1516 and 1517 | Animal or vegetable fats and oils and their fractions, partly or wholly hydrogenated, inter-esterified, re-esterified or elaidinised, whether or not refined, but not further prepared<br>Margarine; edible mixtures or preparations of animal or vegetable fats or oils or of fractions of different fats or oils of this Chapter, other than edible fats or oils or their fractions of heading 1516 | Manufacture from materials of any heading, except that of the product, in which the weight of all the materials of Chapter 4 used does not exceed 40 % of the weight of the final product |

| ຖັນ 1: ບົດທີ. | ຖັນ 2: ລາຍລະອຽດ ຂອງຜະລິດຕະພັນ ຕາມທີ່ຢູ່ໃນ CN | ຖັນ 3: ການດຳເນີນງານ ທີ່ໄດ້ຕາມເງື່ອນໄຂທີ່ກ່ຽວຂ້ອງ |
|---|---|---|

ຖ້າເວົ້າງ່າຍໆ, ສຳລັບຜູ້ສົ່ງອອກ ຈາກ ສປປ ລາວ, ຖັນ 3 ລະບຸການດຳເນີນງານ ທີ່ຜ່ານເງື່ອນໄຂຕ່ຳສຸດ ທີ່ຈຳເປັນ ສຳລັບວັດສະດຸ ທີ່ບໍ່ມີແຫຼ່ງກຳເນີດຈາກ ສປປ ລາວ ທີ່ຈະຖືວ່າມີຕົ້ນກຳເນີດ ມາຈາກ ສປປ ລາວ ເພື່ອຈຸດປະສົງ ຂອງ ແຜນການ EBA.

ສຳລັບການສາທິດໃຫ້ເຫັນເພີ່ມຕື່ມ:

**ຫົວຂໍ້ 1501–1514:**

| "ໄຂມັນຈາກໝູ, ເປັດໄກ່, ງົວຄວາຍ, ແກະ ຫຼື ແບ້, ປາ, ແລະ ອື່ນໆ." | **ເພື່ອໃຫ້ຖືວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ** | ວັດສະດຸທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ທີ່ຖືກນຳໃຊ້ ຢູ່ໃນ ການດຳເນີນວຽກຜະລິດ ແລະ ປຸງແຕ່ງ ຜະລິດຕະພັນສຸດທ້າຍ **ບໍ່ສາມາດມີລະຫັດ CN ອັນດຽວກັນ ກັບ ລະຫັດ CN ຂອງ ຜະລິດຕະພັນສຸດທ້າຍ.** |
|---|---|---|

**ເຖິງແມ່ນວ່າ, ໃນກໍລະນີ ຂອງ ຫົວຂໍ້ 1505, 1506 ແລະ 1520:**

"ໄຂມັນຈາກຂົນແກະ ແລະ ສານໄຂມັນ ທີ່ມາຈາກພວກມັນ (ລວມທັງ lanolin).ໄຂມັນ ແລະ ນໍ້າມັນສັດອື່ນໆ ແລະ ເສດສ່ວນຂອງພວກມັນ, ຊຶ່ງອາດຈະຖືກກັ່ນ ຫຼື ບໍ່ຖືກກັ່ນ ແຕ່ບໍ່ໄດ້ຖືກດັດແປງທາງເຄມີ. Glycerol, crude; glycerol waters ແລະ glycerol lyes."

**ເພື່ອໃຫ້ຖືວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ**

ວັດສະດຸທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ທີ່ຖືກນຳໃຊ້ ຢູ່ໃນ ການດຳເນີນວຽກຜະລິດ ແລະ ປຸງແຕ່ງ ຜະລິດຕະພັນສຸດທ້າຍ **ອາດຈະເປັນ ລະຫັດ CN ໃດກໍໄດ້**, ລວມທັງ ເປັນລະຫັດ CN ອັນດຽວກັນ ກັບ ຂອງ ຜະລິດຕະພັນສຸດທ້າຍ.

ດັ່ງນັ້ນ, ຜູ້ຜະລິດ ຢູ່ ສປປ ລາວ ຈຳເປັນຈະຕ້ອງ ໄດ້ທົບທວນຄືນ ບົດຕ່າງໆ ທີ່ກວມເອົາ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ຢູ່ໃນເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການ ທີ່ໄດ້ກ່າວມາຂ້າງເທິງ ແລະ ກຳນົດປະເພດ ຂອງ ການດຳເນີນວຽກການຜະລິດ ແລະ ປຸງແຕ່ງ ທີ່ຄວນຈະຖືກດຳເນີນ ເພື່ອທີ່ຈະໃຫ້ ຜະລິດຕະພັນສຸດທ້າຍ ຖືກພິຈາລະນາວ່າ ມີແຫຼ່ງກຳເນີດມາຈາກ ສປປ ລາວ. ຕາຕະລາງ 21 ສັງລວມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ເຫຼົ່ານີ້ ສຳລັບ ບົດທີ 15, 17, 21, 22 ແລະ 24 ທີ່ກວມເອົາ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ (ດັ່ງທີ່ໄດ້ກຳນົດໄວ້ ຢູ່ໃນເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງ ຄະນະກຳມະການ (EU) 2015/2446).[229]

**ຕາຕະລາງ 21:** ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ດັ່ງທີ່ໄດ້ກຳນົດໄວ້ ຢູ່ໃນ ເອກະສານຊ້ອນທ້າຍ 22-03

| ບົດທີ. | ລາຍລະອຽດ ຂອງຜະລິດຕະພັນ | ການດຳເນີນງານທີ່ໄດ້ຕາມເງື່ອນໄຂ (ການດໍາເນີນວຽກການຜະລິດ ຫຼື ປຸງແຕ່ງ, ດ້ວຍວັດສະດຸ ທີ່ມີແຫຼ່ງກຳເນີດຈາກບ່ອນອື່ນ, ທີ່ໃຫ້ສະຖານະພາບ ເປັນແຫຼ່ງກຳເນີດ) |
|---|---|---|
| **Ex ບົດ 15** | ໄຂມັນ ແລະ ນໍ້າມັນ ຂອງ ສັດ ຫຼື ພືດຜັກ ແລະ ຜະລິດຕະພັນແຕ່ລະປະເພດ ຂອງ ພວກມັນ; ກະກຽມ ໄຂມັນທີ່ກິນໄດ້; ໄຂຂອງ ສັດ ຫຼື ພືດຜັກ; ຍົກເວັ້ນ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ |
| **1505, 1506 ແລະ 1520** | ໄຂມັນຂົນສັດ ແລະ ສານໄຂມັນ ທີ່ມາຈາກສິ່ງດັ່ງກ່າວນັ້ນ (ລວມທັງໄຂມັນຈາກຂົນແກະ). ໄຂມັນ ແລະ ນໍ້າມັນສັດອື່ນໆ ແລະ ເສດສ່ວນຂອງມັນ, ຊຶ່ງອາດຈະຖືກກັນ ຫຼື ບໍ່ຖືກກັນ, ແຕ່ບໍ່ມີການດັດແກ້ທາງເຄມີ. Glycerol, ນໍ້າມັນທຳມະຊາດ; ແລະ glycerol lyes. | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading) |
| **1509 ແລະ 1510** | ນໍ້າມັນມະກອກ ແລະ ເສດສ່ວນ ຂອງມັນ | ຜະລິດ ໂດຍທີ່ວ່າ ວັດສະດຸພືດຜັກທັງໝົດ ທີ່ຖືກນຳໃຊ້ ແມ່ນໄດ້ຮັບມາຈາກແຫຼ່ງດຽວທັງໝົດ |
| **1516 ແລະ 1517** | ໄຂມັນ ແລະ ນໍ້າມັນສັດ ຫຼື ພືດ ແລະ ເສດສ່ວນ ຂອງພວກມັນ, ທີ່ໄປຜ່ານຂະບວນການຫັນປ່ຽນ ເປັນບາງສ່ວນ ຫຼື ທັງໝົດ ທີ່ຮຽກວ່າ hydrogenated, inter-esterified, re-esterified relaidinized, ບໍ່ວ່າຈະຖືກກັ່ນ ຫຼື ບໍ່ກັ່ນ, ແຕ່ບໍ່ຖືກກະກຽມ ຕໍ່ໄປ.<br>ເນີຍທຽມ; ສານປະສົມທີ່ກິນໄດ້ ຫຼື ການກະກຽມ ໄຂມັນ ຫຼື ນໍ້າມັນ ສັດ ຫຼື ພືດ ຫຼື ຂອງ ເສດສ່ວນ ຂອງ ໄຂມັນ ຫຼື ນໍ້າມັນ ທີ່ແຕກຕ່າງກັນ ຂອງ ບົດນີ້, ນອກເໜືອຈາກ ໄຂ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ, ຊຶ່ງວ່າໃນນັ້ນ ນໍ້າໜັກ ຂອງໝົດທຸກວັດສະດຸ ຂອງ ບົດທີ 4 ທີ່ຖືກນຳໃຊ້ ແມ່ນບໍ່ເກີນ 40% ຂອງນໍ້າໜັກ ຂອງ ຜະລິດຕະພັນສຸດທ້າຍ |

| ບົດທີ. | ລາຍລະອຽດ ຂອງຜະລິດຕະພັນ | ການດໍາເນີນງານທີ່ໄດ້ຕາມເງື່ອນໄຂ (ການດໍາເນີນວຽກ ການຜະລິດ ຫຼື ປຸງແຕ່ງ, ດ້ວຍວັດສະດຸ ທີ່ມີແຫຼ່ງກໍາເນີດ ຈາກບ່ອນອື່ນ, ທີ່ໃຫ້ສະຖານະພາບ ເປັນແຫຼ່ງກໍາເນີດ) |
|---|---|---|
| | ມັນ ຫຼື ນໍ້າມັນ ທີ່ກິນໄດ້ ຫຼື ເສດສ່ວນຂອງ ມັນ ທີ່ເປັນຫົວຂໍ້ 1516. | |
| **Ex ບົດ 17** | ນໍ້າຕານ ແລະ ສິ່ງທີ່ມີສ່ວນປະສົມຂອງນໍ້າ ຕານ; ຍົກເວັ້ນ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading) ຍົກເວັ້ນ ອັນ ທີ່ເປັນຂອງຜະລິດຕະພັນ |
| **Ex 1702** | ນໍ້າຕານຊະນິດອື່ນໆ, ລວມທັງ ທາດແລັກ ໂຕດ (Lactose) ແລະ ກູໂຄດ (Glucose) ລວມທັງ ທາດແລັກໂຕດ (Lactose) ແລະ ກູໂຄດ (Glucose) ທີ່ມີຄວາມບໍລິສຸດທາງເຄ ມີ, ຢູ່ໃນຮູບແບບແຂງ; ນໍ້າເຊື່ອມ; ນໍ້າເຜີ້ງ ປອມ, ອາດຈະປະສົມ ຫຼື ບໍ່ປະສົມກັບ ນໍ້າ ເຜີ້ງທໍາມະຊາດ; ຄາຣາເມວ (Caramel) | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນ ທີ່ເປັນຂອງຜະລິດຕະພັນ, ຊຶ່ງວ່າໃນນັ້ນ ນໍ້າໜັກ ຂອງ ວັດສະດຸ ຂອງ ຫົວຂໍ້ (Heading) 1101 ແລະ 1108, 1701 ແລະ 1703 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 30% ຂອງນໍ້າໜັກ ຂອງ ຜະ ລິດຕະພັນສຸດທ້າຍ. |
| **Ex 1702** | ມໍໂຕດ (Maltose) ແລະ ຟຼຸກໂຕດ (Fructose) ທີ່ບໍ່ລິສຸດ ທາງເຄມີ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading) ລວມທັງ ວັດ ສະດຸອື່ນໆ ຂອງ ຫົວຂໍ້ 1702 |
| **1704** | ສິ່ງທີ່ມີສ່ວນປະສົມ ຂອງນໍ້າຕານ (ລວມທັງ ຊັອກໂກແລັດຂາວ), ທີ່ບໍ່ບັນຈຸ ໂກໂກ້ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນ ທີ່ເປັນຂອງຜະລິດຕະພັນ, ຊຶ່ງວ່າໃນນັ້ນ:<br>▪ ນໍ້າໜັກ ຂອງ ນໍ້າຕານແຕ່ລະຢ່າງ (1) ແລະ ຂອງ ວັດສະດຸ ຂອງ ບົດທີ 4 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 40% ຂອງນໍ້າ ໜັກ ຂອງ ຜະລິດຕະພັນສຸດທ້າຍ; ແລະ<br>▪ ນໍ້າໜັກສົມທົບລວມ ຂອງ ນໍ້າຕານ (1) ແລະ ວັດສະດຸ ຂອງ ບົດທີ 4 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 60% ຂອງ ນໍ້າ ໜັກ ຂອງ ຜະລິດຕະພັນສຸດທ້າຍ.[230] |
| **Ex ບົດ 21** | ການກະກຽມອື່ນໆ ທີ່ກິນໄດ້; ຍົກເວັ້ນ: | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນ ທີ່ເປັນຂອງຜະລິດຕະພັນ, ຊຶ່ງວ່າໃນນັ້ນ:<br>▪ ນໍ້າໜັກ ຂອງ ນໍ້າຕານແຕ່ລະຢ່າງ (1) ແລະ ຂອງ ວັດສະດຸ ຂອງ ບົດທີ 4 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 40% ຂອງນໍ້າ ໜັກ ຂອງ ຜະລິດຕະພັນສຸດທ້າຍ; ແລະ<br>▪ ນໍ້າໜັກສົມທົບລວມ ຂອງ ນໍ້າຕານ (1) ແລະ ວັດສະດຸ ຂອງ ບົດທີ 4 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 60% ຂອງນໍ້າ ໜັກ ຂອງ ຜະລິດຕະພັນສຸດທ້າຍ.[231] |
| **2103** | ຊອດ ແລະ ການກະກຽມ ຊອດ; ເຄື່ອງປຸງປະ ສົມ ແລະ ເຄື່ອງປຸງລົດປະສົມ; ແປ້ງມັດສະ ຕາດ (Mustard flour) ແລະ ອາຫານ ແລະ ມັດສະຕາດ (Mustard) ທີ່ຖືກກະກຽມ | |
| | ຊອດ ແລະ ການກະກຽມ ຊອດ; ເຄື່ອງປຸງປະ ສົມ ແລະ ເຄື່ອງປຸງລົດປະສົມ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນ ທີ່ເປັນຂອງຜະລິດຕະພັນ. ເຖິງຢ່າງໃດກໍຕາມ, ແປ້ງມັດສະຕາດ (Mustard flour) ຫຼື ອາຫານ ຫຼື ມັດສະຕາດ (Mustard) ທີ່ ຖືກກະກຽມ ສາມາດຖືກນໍາໃຊ້ໄດ້. |

| ບົດທີ. | ລາຍລະອຽດ ຂອງຜະລິດຕະພັນ | ການດໍາເນີນງານທີ່ໄດ້ຕາມເງື່ອນໄຂ (ການດໍາເນີນວຽກ ການຜະລິດ ຫຼື ປຸງແຕ່ງ, ດ້ວຍວັດສະດຸ ທີ່ມີແຫຼ່ງກໍາເນີດ ຈາກບ່ອນອື່ນ, ທີ່ໃຫ້ສະຖານະພາບ ເປັນແຫຼ່ງກໍາເນີດ) |
|---|---|---|
| | ແປ້ງມັດສະຕາດ (Mustard flour) ແລະ ອາຫານ ແລະ ມັດສະຕາດ (Mustard) ທີ່ ຖືກກະກຽມ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading) |
| **ບົດ 22** | ເຄື່ອງດື່ມ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ນໍ້າ ສົ້ມສາຍຊູ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ ແລະ ຫົວຂໍ້ 2207 ແລະ 2208, ຊຶ່ງວ່າໃນນັ້ນ:<br>▪ ໝົດທຸກຜະລິດຕະພັນ ຂອງ ຫົວຂໍ້ຍ່ອຍ 0806 10, 2009 61, 2009 69 ທີ່ຖືກນໍາໃຊ້ ແມ່ນໄດ້ຮັບມາທັງໝົດຈາກບ່ອນດຽວ; ແລະ<br>▪ ນໍ້າໜັກ ຂອງ ນໍ້າຕານແຕ່ລະຢ່າງ ແລະ ຂອງ ວັດສະດຸ ຂອງ ບົດທີ 4 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 40% ຂອງນໍ້າໜັກ ຂອງ ຜະລິດຕະພັນສຸດທ້າຍ; ແລະ<br>▪ ນໍ້າໜັກສົມທົບລວມ ຂອງ ນໍ້າຕານ ແລະ ວັດສະດຸ ຂອງ ບົດທີ 4 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 60% ຂອງນໍ້າໜັກ ຂອງ ຜະລິດຕະພັນສຸດທ້າຍ. |
| **Ex ບົດ 24** | ຢາສູບ ແລະ ຕົວປ່ຽນແທນຢາສູບທີ່ບໍ່ທັນຜ່ານການຜະລິດ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading) ຊຶ່ງວ່າໃນນັ້ນ ນໍ້າໜັກຂອງວັດສະດຸ ຂອງ ບົດທີ 24 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 30% ຂອງ ນໍ້າໜັກລວມ ຂອງວັດສະດຸ ຂອງ ບົດທີ 24 ທີ່ຖືກນໍາໃຊ້ |
| **2401** | ຢາສູບທີ່ບໍ່ທັນຜ່ານການຜະລິດ; ເສດຢາສູບ | ໝົດທຸກຢາສູບ ທີ່ບໍ່ທັນຜະລິດ ແລະ ເສດຢາສູບ ຂອງ ບົດທີ 24 ແມ່ນໄດ້ຮັບທັງໝົດ ມາຈາກບ່ອນດຽວ |
| **2402** | ຊີກາ, ຢາພັນທີ່ບໍ່ມີສ່ວນກັ້ນຄວັນ, ຢາສູບປະເພດ cigarillos ແລະ ຢາສູບທໍ່ວໄປ, ຂອງ ຢາສູບ ຫຼື ຂອງໂຕປ່ຽນຢາສູບ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ ຂອງຫົວຂໍ້ 2403, ແລະ ຊຶ່ງວ່າໃນນັ້ນ ນໍ້າໜັກຂອງວັດສະດຸ ຂອງ ຫົວຂໍ້ 2401 ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 50% ຂອງ ນໍ້າໜັກລວມ ຂອງວັດສະດຸ ຂອງຫົວຂໍ້ 2401 ທີ່ຖືກນໍາໃຊ້. |

**ຈຸດສໍາຄັນ ທີ່ຈະຕ້ອງໄດ້ສັງເກດ:**

- ຜູ້ສົ່ງອອກ ໄດ້ຖືກຊຸກຍູ້ ໃຫ້ນໍາໃຊ້ ຄໍາແນະນໍາ/ຄໍາອະທິບາຍ ທີ່ສະໜອງໃຫ້ ຢູ່ໃນ ຄູ່ມືສະບັບນີ້ ເພື່ອກໍານົດ ແລະ ເຂົ້າໃຈ ກົດລະບຽບວ່າດ້ວຍແຫຼ່ງກໍາເນີດ ທີ່ມີຜົນນໍາໃຊ້ ສໍາລັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ຢູ່ໃນພາກທີ II ຂອງ ເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງ ຄະນະກໍາມະການ (EU) 2015/2446.[232]
- ຜູ້ຜະລິດ ຈາກ ສປປ ລາວ ຄວນຈະສັງເກດ ຂໍ້ຍົກເວັ້ນ ຕໍ່ກັບ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ, ເຊັ່ນ Tolerances ແລະ Cumulation (ຕາມທີ່ໄດ້ເວົ້າມາ ໃນໝວດ 2.2(ii) ຂ້າງເທິງ).

**ການຍົກເວັ້ນຈາກ Regional cumulation**

Regional cumulation ໝາຍເຖິງ ລະບົບທີ່ ຜະລິດຕະພັນ ທີ່ມີແຫຼ່ງກຳເນີດ ຢູ່ໃນປະເທດ ທີ່ເປັນສະມາຊິກ ຂອງ ກຸ່ມພາກພື້ນໜຶ່ງ ຈະຖືກພິຈາລະນາວ່າ ເປັນວັດສະດຸ ທີ່ມີແຫຼ່ງກຳເນີດ ມາຈາກປະເທດອື່ນ ຂອງກຸ່ມພາກພື້ນດຽວກັນ (ຫຼື ປະເທດ ຂອງກຸ່ມພາກພື້ນອື່ນ ບ່ອນທີ່ cumulation ລະຫວ່າງກຸ່ມ ມີຄວາມເປັນໄປໄດ້), ເມື່ອມີການປຸງແຕ່ງຕື່ມ ຫຼື ລວມເຂົ້າໃນ ຜະລິດຕະພັນໜຶ່ງ ທີ່ຖືກຜະລິດຢູ່ທີ່ນັ້ນ.[233] *ອັນນີ້ແມ່ນສຳຄັນ ສຳລັບ ສປປ ລາວ, ເພາະວ່າ ບາງຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ແມ່ນຖືກຍົກເວັ້ນຈາກ* Regional cumulation.[234] *ຜະລິດຕະພັນເຫຼົ່ານີ້ ແມ່ນຖືກກຳນົດໄວ້ ຢູ່ໃນ ເອກະສານຊ້ອນທ້າຍ* 22-04 *ຂອງ ລະບຽບການຕົວແທນ ຂອງ ຄະນະກຳມະການ* (EU) *ເລກທີ* 2015/2446. (*ອີງໃສ່ຮູບ* 20). ພົບກໍຄືວ່າ, ຜະລິດຕະພັນ ທີ່ນອນໃນລາຍຊື່ ໃນ ຮູບທີ 20 ບໍ່ສາມາດ ຜ່ານເງື່ອນໄຂ ທີ່ຈະເປັນການມີແຫຼ່ງກຳເນີດ ມາຈາກ ສປປ ລາວ, ເຖິງແມ່ນວ່າ ຈະຖືກດຶງມາຈາກ ປະເທດອື່ນ ທີ່ບໍ່ແມ່ນ ສປປ ລາວ ກໍຕາມ (ເຖິງແມ່ນວ່າ ຈະຢູ່ພາຍໃນກຸ່ມ Regional cumulation ກໍ່ຕາມ).

---

**ຮູບ 20: ຂໍ້ມູນທີ່ຄັດລອກມາຈາກ ຕາຕະລາງ ແຕ່ ເອກະສານຊ້ອນທ້າຍ 22-04 ທີ່ໃຫ້ລາຍລະອຽດ ກ່ຽວກັບ ບັນດາຜະລິດຕະພັນ ທີ່ຍົກເວັ້ນຈາກ Regional cumulation**

*ANNEX 22-04*

**Materials excluded from regional cumulation** (1) (2)

| | | Group I: Brunei, Cambodia, Indonesia, Laos, Malaysia, Myanmar/Burma, Philippines, Thailand, Vietnam | Group III: Bangladesh, Bhutan, India, Nepal, Pakistan, Sri Lanka | Group IV (3) Argentina, Brazil, Paraguay, Uruguay |
|---|---|---|---|---|
| ex 2101 12 | Preparations with a basis of coffee | X | X | X |
| ex 2101 20 | Preparations with a basis of tea or maté | X | X | X |
| 2106 90 92<br>2106 90 98 | Food preparations not elsewhere specified, other than protein concentrates and textured protein substances and than compound alcoholic preparations (other than those based on odoriferous substances) of a kind used for the manufacture of beverages and other than flavoured or coloured sugar syrups | X | X | X |
| 3302 10 29 | Preparations of a kind used in the drink industries containing all flavouring agents characterising a beverage, other than of an actual alcoholic strength by volume exceeding 0,5 %, containing, by weight, more than 1,5 % milkfat, 5 % sucrose or isoglucose, 5 % glucose or starch | X | X | X |
| 3505 10 | Dextrins and other modified starches | X | X | X |

## iii. ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສຳລັບ ການສົ່ງອອກ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ

### a) ບັນດາກົດລະບຽບນຳເຂົ້າ ກ່ຽວກັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ຢູ່ໃນຕະຫຼາດ EU

ຜະລິດຕະພັນກະສິກຳ ທີ່ໄດ້ຜ່ານການປຸງແຕ່ງແລ້ວ (PAPs) ມັກຖືກເອີ້ນວ່າ "ສິນຄ້າທີ່ບໍ່ແມ່ນເອກະສານຊ້ອນທ້າຍ I", ທີ່ແຕກຕ່າງຈາກ ຜະລິດຕະພັນກະສິກຳທີ່ ນອນໃນບັນຊີລາຍຊື່ ໃນ ເອກະສານຊ້ອນທ້າຍ I ຂອງ ສົນທິສັນຍາ ວ່າດ້ວຍ ການປະຕິບັດໜ້າທີ່ ຂອງ ສະຫະພາບເອີຣົບ

(TFEU). PAP ແມ່ນນອນຢູ່ໃນລາຍຊື່ ຢູ່ໃນກົດໝາຍ ຂອງ EU ແລະ ປະກອບມີ ຜະລິດຕະພັນເຊັ່ນ: ຊັອກໂກແລັດ, ຂະໜົມທີ່ມີທາດຫວານ, ເຄື່ອງດື່ມຫວານ, ເບຍ, ເຄື່ອງດື່ມທີ່ມີທາດເຫຼົ້າ, ເຂົ້າໜົມປັງສະກຸດ ແລະ ຜະລິດຕະພັນປະເພດເຂົ້າຈີ່.[235]

ກ່ຽວກັບ ການນຳເຂົ້າ ໄປຫາ EU, ຜະລິດຕະພັນກະສິກຳ ແລະ ອາຫານ ສ່ວນໃຫຍ່ ແມ່ນບໍ່ຢູ່ພາຍໃຕ້ ການຄວບຄຸມແບບບັງຄັບ.

ເຖິງຢ່າງໃດກໍຕາມ, ມີກົດລະບຽບບາງຢ່າງ ທີ່ ບໍ່ຄ້າ ຂອງ ສປປ ລາວ ຄວນຈະຮັບຮູ້ ກ່ຽວກັບ ການຄວບຄຸມ ການສົ່ງອອກ ຜະລິດຕະພັນ ທີ່ມີແຫຼ່ງກຳເນີດມາຈາກສັດ ແລະ ບໍ່ມາຈາກສັດ.

## 1. ບັນດາກົດລະບຽບ ການນຳເຂົ້າ ຂອງ EU ສຳລັບຜະລິດຕະພັນ ທີ່ມີແຫຼ່ງກຳເນີດຈາກສັດ

ກົດລະບຽບທົ່ວໄປ ຂອງ ສະຫະພາບເອີຣົບ ມີຜົນນຳໃຊ້ກັບ ການຄວບຄຸມ ທີ່ດຳເນີນຢູ່ຊາຍແດນ ກ່ຽວກັບ ການນຳເຂົ້າສັດ, ຜະລິດຕະພັນ ທີ່ມີແຫຼ່ງກຳເນີດຈາກສັດ ແລະ ພືດ ກ່ອນທີ່ພວກມັນ ຈະສາມາດ ເຂົ້າໄປໃນ ດິນແດນ ຂອງ EU ໄດ້. ພາຍໃຕ້ ກົດລະບຽບ ວ່າດ້ວຍການຄວບຄຸມ ຢ່າງເປັນທາງການ ຂອງ ສະຫະພາບເອີຣົບ, ບັນດາປະເທດສະມາຊິກ ຂອງ ສະຫະພາບເອີຣົບ ແມ່ນຈະຕ້ອງຮັບປະກັນວ່າ ການຄວບຄຸມຢ່າງເປັນທາງການ ແມ່ນໄດ້ດຳເນີນ ເປັນປົກກະຕິ, ບົນພື້ນຖານ ຄວາມສ່ຽງ ແລະ ດ້ວຍຄວາມຖີ່ທີ່ເໝາະສົມ ເພື່ອບັນລຸຈຸດປະສົງ ຂອງ ລະບຽບການ ຄວບຄຸມ ຢ່າງເປັນທາງການ, ໂດຍສະເພາະ ຈຸດປະສົງ ຂອງການປົກປ້ອງ, ກຳຈັດ ຫຼື ຫຼຸດຜ່ອນ ລະດັບທີ່ຍອມຮັບໄດ້ ສຳລັບຄວາມສ່ຽງ ທີ່ມີຕໍ່ ມະນຸດ ແລະ ສັດ.[236]

**ສຳລັບ ສັດ ແລະ ສິນຄ້າ ທີ່ເຂົ້າໄປໃນ EU**, ບົດທີ V ຂອງ ລະບຽບການຄວບຄຸມ ຢ່າງເປັນທາງການ ສະໜອງແກ່ ການຄວບຄຸມ ແລະ ການກວດກາ ຢ່າງເປັນທາງການ ທີ່ຈະຖືກປະຕິບັດ ໂດຍ ເຈົ້າໜ້າທີ່ທີ່ມີສິດອຳນາດ ຂອງ EU ຕໍ່ກັບ ໝົດທຸກຜູ້ປະກອບການ ທຸລະກິດອາຫານ, ໂດຍມີຄວາມຖີ່ ຂອງການກວດກາ ເຫຼົ່ານີ້ ຖືກກຳນົດ ບົນພື້ນຖານຄວາມສ່ຽງ.

### *ການສົ່ງອອກ ສັດ ແລະ ຜະລິດຕະພັນສັດ ໄປຫາ* EU

ສະຫະພາບເອີຣົບ ຮັກສາ ລະບົບ **ການສ້າງຕັ້ງທີ່ໄດ້ຖືກຮັບຮອງ** ໃນກໍລະນີການສົ່ງອອກ ສັດ ແລະ ຜະລິດຕະພັນສັດ ໄປຫາ EU. ລາຍລະອຽດເພີ່ມຕື່ມ ມີດັ່ງຕໍ່ໄປນີ້:

| | |
|---|---|
| **ປະເພດອາຫານ ທີ່ມີແຫຼ່ງກຳເນີດ ມາຈາກສັດ ໂດຍສະເພາະ ຕ້ອງໄດ້ຖືກຮັບຮອງ** | ປະເທດທີ່ບໍ່ເປັນສະມາຊິກ EU (ປະເທດທີສາມ) ຕ້ອງຖືກຮັບຮອງ ເພື່ອສົ່ງອອກ ປະເພດອາຫານ ທີ່ມີແຫຼ່ງກຳເນີດມາຈາກສັດ ແລະ ຕ້ອງນອນຢູ່ໃນບັນຊີລາຍຊື່ ບັນດາປະເທດທີ່ບໍ່ແມ່ນສະມາຊິກ EU ສຳລັບ ສະເພາະປະເພດອາຫານດັ່ງກ່າວ. |
| **ການປະເມີນ ປະເທດ ແລະ ອົງການທີ່ມີສິດອຳນາດ** | ກ່ອນປະເທດ ຖືກຮັບຮອງ ແລະ ສາມາດ ເລີ່ມສົ່ງອອກ ປະເພດອາຫານ ທີ່ມີແຫຼ່ງກຳເນີດຈາກສັດ, ການປະເມີນປະເທດ ແລະ ອົງການທີ່ມີສິດອຳນາດ ຂອງປະເທດນັ້ນໆ ຈະຖືກດຳເນີນ ໂດຍ ຫ້ອງການກວດສອບ ແລະ ວິເຄາະ ສຸຂະພາບ ແລະ ອາຫານ, ທີ່ຕັ້ງຢູ່ ແກຣງ, ປະເທດໄອແລນ (ຄະນະກຳມະການເອີຣົບ, ຫົວໜ້າກົມ ສຸຂະພາບ ແລະ ຄວາມປອດໄພອາຫານ). |
| **ຂໍ້ກຳນົດ ຫຼື ຄວາມຕ້ອງການສະເພາະ ສຳລັບ ແຕ່ລະປະເພດ ຜະລິດຕະພັນອາຫານ** | ຂໍ້ກຳນົດ ຫຼື ຄວາມຕ້ອງການສະເພາະ ສຳລັບ ແຕ່ລະປະເພດ ຜະລິດຕະພັນອາຫານ ແມ່ນຖືກລະບຸໄວ້ຢູ່ໃນ ເອກະສານຊ້ອນທ້າຍ III ຂອງລະບຽບການ (EC) ເລກທີ. 853/2004.<br><br>*ຂໍ້ກຳນົດ ຫຼື ຄວາມຕ້ອງການ ຕ້ອງ ໄດ້ຮັບການກວດກາ ແລະ ຮັບປະກັນໂດຍ ອົງການທີ່ມີສິດອຳນາດ ຂອງ ປະເທດທີ່ບໍ່ໄດ້ເປັນສະມາຊິກ EU ກ່ອນການສ້າງຕັ້ງ ສາມາດຖືກບັນຈຸໃສ່ໃນ ບັນຊີລາຍຊື່ ໃນນາມເປັນການສ້າງຕັ້ງ ທີ່ຖືກຮັບຮອງຈາກ EU.* |

| | |
|---|---|
| | *ອົງການທີ່ມີສິດອຳນາດ ຂອງ ປະເທດ ທີ່ບໍ່ແມ່ນສະມາຊິກ EU ຍັງຈະຕ້ອງລາຍງານ ຄະນະກຳມະການ ຖ້າວ່າ ການສ້າງຕັ້ງ ບໍ່ສາມາດ ປະຕິບັດຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ທີ່ກ່າວມາຂ້າງເທິງ ອີກ ແລ້ວ.* |
| **ແຜນການຕິດຕາມສານຕົກຄ້າງ** | ປະເທດທີ່ບໍ່ແມ່ນສະມາຊິກ EU ຕ້ອງມີ ແຜນຕິດຕາມສານຕົກຄ້າງ (ໂດຍສອດຄ່ອງກັບ ຄຳແນະນຳ ຂອງສະພາ 96/23/EC) ສຳລັບ ປະເພດ ອາຫານ ທີ່ມີແຫຼ່ງກຳເນີດ ມາຈາກສັດ ແລະ ຕ້ອງປະກົດ ຢູ່ໃນ ບັນຊີລາຍຊື່ປະເທດ ທີ່ມີ ແຜນຕິດຕາມສານຕົກຄ້າງ ທີ່ຖືກຮັບຮອງ.[237] |
| **ແຜນງານ ຄວບຄຸມເຊື້ອແບັກທີເຣຍ Salmonella** | ສຳລັບຜະລິດຕະພັນ ທີ່ກ່ຽວຂ້ອງ, ປະເທດທີ່ບໍ່ເປັນສະມາຊິກ EU ຕ້ອງມີແຜນງານ ຄວບຄຸມເຊື້ອແບັກທີເຣຍ Salmonella ຢູ່ໃນປະຊາກອນສັດ ໂດຍສອດຄ່ອງກັບ ລະບຽບການ (EC) ເລກທີ 2160/2003. |
| **ບັນຊີລາຍຊື່ ການສ້າງຕັ້ງ ທີ່ຖືກອັບເດດ** | ອົງການທີ່ມີສິດອຳນາດ ມີໜ້າທີ່ຮັບຜິດຊອບ ເກັບຮັກສາ ບັນຊີລາຍຊື່ ການສ້າງຕັ້ງ ໃຫ້ອັບເດດຢູ່ຕະຫຼອດ ແລະ ລາຍງານ ຄະນະກຳມະການ ຕໍ່ກັບ ທຸກການປ່ຽນແປງ ທີ່ຈຳເປັນ.[238] |

ໃນປັດຈຸບັນ, ສຳລັບ ສປປ ລາວ, ມີພຽງແຕ່ການກໍ່ຕັ້ງດຽວເທົ່ານັ້ນ ຄື ໂຮງງານປຸງແຕ່ງ ສຳລັບ ຜະລິດຕະພັນຍ່ອຍ ຈາກສັດ, ທີ່ໄດ້ຖືກບັນທຶກໄວ້ຢູ່ໃນບັນຊີລາຍຊື່ ໃນເອກະສານທີ່ກ່ຽວຂ້ອງ ຂອງ ສະຫະພາບເອີຣົບ.[239]

## *ການຄວບຄຸມ ຢ່າງເປັນທາງການ ຖືກປະຕິບັດ ກັບ ປະເພດສັດ ແລະ ສິນຄ້າ ຕໍ່ໄປນີ້*

- ສັດ;
- ຜະລິດຕະພັນ ທີ່ມີແຫຼ່ງກຳເນີດຈາກສັດ, ຜະລິດຕະພັນເຊື້ອພະຍາດ, ຜະລິດຕະພັນຍ່ອຍຈາກສັດ, ຫຍ້າ ແລະ ເຟືອງ ແລະ ອາຫານ ທີ່ປະກອບດ້ວຍ ທັງ ຜະລິດຕະພັນ ທີ່ມີແຫຼ່ງກຳເນີດຈາກພືດ ແລະ ຜະລິດຕະພັນ ທີ່ມີຕົ້ນກຳເນີດມາຈາກສັດ ທີ່ໄດ້ຜ່ານການປຸງແຕ່ງ (ຜະລິດຕະພັນ ທີ່ມະນຸດບໍລິໂພກໄດ້);
- *ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນໆ ຕາມທີ່ໄດ້ກ່າວໄວ້ ຢູ່ໃນບັນຊີລາຍການ ທີ່ຖືກສ້າງຂຶ້ນ ຕາມ ມາດຕາ* 72 (1) *ແລະ* 74 (1) *ຂອງ ລະບຽບການ* (EU) 2016/2031 *ຂອງ ລັດຖະສະພາ ແລະ ສະພາ ເອີຣົບ, ລົງວັນທີ* 26 *ຕຸລາ* 2016 *ກ່ຽວກັບມາດຕະການປ້ອງກັນ ຕ້ານ ສັດຕູພືດຂອງພືດ;*
- ສິນຄ້າ ທີ່ມາຈາກບາງປະເທດທີສາມ ທີ່ຄະນະກຳມະການເອີຣົບ ໄດ້ຕັດສິນໃຈວ່າ ມາດຕະການ ທີ່ຕ້ອງການໃຫ້ມີການເພີ່ມການຄວບຄຸມ ຢ່າງເປັນທາງການ ແບບຊົ່ວຄາວ ຢູ່ທີ່ຈຸດເຂົ້າໄປຫາ EU ແມ່ນມີຄວາມຈຳເປັນ ເນື່ອງຈາກ ມີຄວາມສ່ຽງທີ່ຖືກຮັບຮູ້ ຫຼື ທີ່ເກີດຂຶ້ນ ຫຼື ຍ້ອນມີຫຼັກຖານວ່າ ມີການແຜ່ຂະຫຍາຍ ການບໍ່ປະຕິບັດ ບັນດາກົດລະບຽບຕ່າງໆ ຢ່າງຮຸນແຮງ ທີ່ໄດ້ກາວໄວ້ ຢູ່ໃນ ມາດຕາ 1 (2) ທີ່ກ່ຽວຂ້ອງກັບອາຫານ ແລະ ຄວາມປອດໄພຂອງອາຫານ ອາດຈະເກີດຂຶ້ນ; ແລະ
- ສັດ ແລະ ສິນຄ້າ ທີ່ຢູ່ພາຍໃຕ້ ມາດຕະການຮີບດ່ວນ ທີ່ພົວພັນກັບ ພະຍາດຕິດຕໍ່ທາງສັດ ແລະ ສັດຕູພືດ ທີ່ຕ້ອງການ ການຂົນສົ່ງ ສັດ ຫຼື ສິນຄ້າ ເຫຼົ່ານັ້ນ.[240]

## *ປະເພດການຄວບຄຸມ*

- ການຄວບຄຸມ ຢ່າງເປັນທາງການ ຕໍ່ກັບ ປະເພດສັດ ແລະ ສິນຄ້າ ທີ່ກ່າວມາຂ້າງເທິງນັ້ນ ປະກອບມີ ການກວດກາເອກະສານ, ການກວດຕົວຕົນ ແລະ ການກວດກາທາງກາຍະພາບ.
- ສຳລັບ ສັດ ແລະ ສິນຄ້າ ທີ່ນອກເໜືອຈາກ ສິ່ງທີ່ໄດ້ກ່າວມາຂ້າງເທິງ, ການຄວບຄຸມຢ່າງເປັນທາງການ ທຸກຄັ້ງ ປະກອບມີ ການກວດເອກະສານ.[241] ການກວດກາ ຕົວຕົນ ແລະ ການກວດກາທາງກາຍະພາບ ແມ່ນຂຶ້ນກັບ ຄວາມສ່ຽງ ຕໍ່ ສຸຂະພາບ ຂອງ ມະນຸດ, ຂອງ ສັດ ຫຼື ພືດ, ຕໍ່ຄວາມເປັນຢູ່ຂອງສັດ ຫຼື ກ່ຽວກັບ GMO ແລະ ຜະລິດຕະພັນປົກປ້ອງພືດ, ຍັງຕໍ່ກັບ ສິ່ງແວດລ້ອມ ນຳອີກດ້ວຍ.

## *ຈຸດກວດກາ*

- ການຄວບຄຸມຢ່າງເປັນທາງການ ພາຍໃຕ້ ບົດທີ V ຂອງ ລະບຽບການຄວບຄຸມແບບເປັນທາງການ ແມ່ນຖືກດຳເນີນ ຢູ່ດ່ານກວດກາຊາຍແດນ ແລະ ຈຸດອື່ນໆ ທີ່ເຂົ້າໄປຫາ EU.[242]
- ນອກຈາກນັ້ນ, ເມື່ອ ອົງການຈັດຕັ້ງ ຂອງ ປະເທດທີ່ເປັນສະມາຊິກ EU ມີເຫດຜົນທີ່ຈະເຊື່ອວ່າ ການເຂົ້າໄປໃນສະຫະພາບເອີຣົບ ຂອງສິນຄ້າ ອາດສາມາດ ນຳຄວາມສ່ຽງ ຕໍ່ ສຸຂະພາບ ຂອງ ມະນຸດ, ຂອງສັດ ຫຼື ຂອງພືດ, ຕໍ່ ຄວາມເປັນຢູ່ ຂອງສັດ ຫຼື ກ່ຽວກັບ GMO ແລະ ຜະລິດຕະພັນປົກປ້ອງພືດ, ແລະ ຕໍ່ກັບສິ່ງແວດລ້ອມ, ເຂົາເຈົ້າ ຕ້ອງປະຕິບັດ ການຄວບຄຸມແບບເປັນທາງການ ກ່ຽວກັບ ວິທີການຂົນສົ່ງ, ລວມທັງ ບ່ອນວ່າງເປົ່າ, ແລະ ຕໍ່ ການຫຸ້ມຫໍ່, ລວມທັງໄມ້ພາເລດ.243

## 2. ກົດລະບຽບ ວ່າດ້ວຍການນຳເຂົ້າ ຂອງ EU ສຳລັບ ຜະລິດຕະພັນ ທີ່ມີແຫຼ່ງກຳເນີດ ທີ່ບໍ່ແມ່ນສັດ

*ລະບອບການຄວບຄຸມການນຳເຂົ້າສິນຄ້າ ຂອງ ສະຫະພາບເອີຣົບ ສຳລັບ ຜະລິດຕະພັນ ທີ່ບໍ່ມີແຫຼ່ງກຳເນີດຈາກສັດ ກໍຍັງຖືກຄວບຄຸມ ໂດຍ ລະບຽບການຄວບຄຸມຢ່າງເປັນທາງການ.* ໂດຍທົ່ວໄປແລ້ວ, ສະຫະພາບເອີຣົບ ນຳໃຊ້ 4 ລະບອບການຄວບຄຸມການນຳເຂົ້າ ທີ່ແຕກຕ່າງກັນ **ໂດຍອີງໃສ່ ຄວາມສ່ຽງທີ່ຮັບຮູ້ ສຳລັບຜູ້ບໍລິໂພກ EU: ພວກມັນປະກອບມີ ຄື:**

1. ການກວດກາ ກ່ອນການສົ່ງອອກ ສຳລັບ ຜະລິດຕະພັນ ທີ່ມີຄວາມສ່ຽງຕ່ຳສຸດ
2. ລະບອບທີ່ບໍ່ສະເພາະເຈາະຈົງ
3. ການຄວບຄຸມ ທີ່ເພີ່ມຂຶ້ນ ໂດຍອີງໃສ່ ຄວາມສ່ຽງ ທີ່ເກີດປະກົດຂຶ້ນ ຫຼື ທີ່ຖືກຮັບຮູ້ ແລະ ຕາມທີ່ໄດ້ຕົກລົງ ໂດຍ EU ບົນພື້ນຖານເປັນແຕ່ລະກໍລະນີ
4. ມາດຕະການປົກປ້ອງ ຢູ່ໃນກໍລະນີ ມີຄວາມສ່ຽງສູງສຸດ ທີ່ຖືກຮັບຮູ້

| | |
|---|---|
| **1- ການກວດກາ ກ່ອນການສົ່ງອອກ ສຳລັບ ຜະລິດຕະພັນ ທີ່ມີຄວາມສ່ຽງຕ່ຳສຸດ** | ▪ **ການກວດສອບ ກ່ອນການສົ່ງອອກ ຖືກກຳນົດ ພາຍໃຕ້ ມາດຕາ 73 ຂອງ ລະບຽບການຄວບຄຸມ ທີ່ເປັນທາງການ.**<br>▪ **ພາຍຫຼັງມີການສະເໜີ ຈາກ ປະເທດທີສາມ ປະເທດໜຶ່ງ, EC ສາມາດຮັບຮອງການຄວບຄຸມສະເພາະ ກ່ອນການສົ່ງອອກ ທີ່ປະເທດທີສາມ ສາມາດດຳເນີນ ໃນການຂົນສົ່ງສິນຄ້າ ກ່ອນສົ່ງອອກໄປຫາ EU.**<br>▪ *ໃນປັດຈຸບັນ, ມີພຽງສະເພາະແຕ່ ການກວດກາ ກ່ອນການສົ່ງອອກ ທີ່ອະນຸຍາດ ໂດຍ EC ເທົ່ານັ້ນ ບົນພື້ນຖານ ລະບຽບການ ທີ່ໄດ້ກ່າວມາຂ້າງເທິງ ແມ່ນ:*<br>- *ຖົ່ວດິນ ແລະ ຜະລິດຕະພັນທີ່ໄດ້ມາ ທີ່ມີສານ aflatoxins – ທີ່ຖືກດຳເນີນ ໂດຍ ປະເທດສະຫະລັດອາເມລິກາ;*<br>- *ສາລີ ແລະ ແປ້ງສາລີ ທີ່ມີ ສານ ochratoxin – ທີ່ຖືກດຳເນີນໂດຍ ປະເທດການາດາ.* |
| **2- ລະບອບທີ່ບໍ່ສະເພາະເຈາະຈົງ** | ກົດລະບຽບທົ່ວໄປ ຂອງ ລະບຽບການຄວບຄຸມທີ່ເປັນທາງການ ມີຜົນນຳໃຊ້. |
| **3- ການຄວບຄຸມ ທີ່ເພີ່ມຂຶ້ນ ໂດຍອີງໃສ່ ຄວາມສ່ຽງ ທີ່ເກີດປະກົດຂຶ້ນ ຫຼື ທີ່ຖືກຮັບຮູ້ ແລະ ຕາມທີ່ໄດ້ຕົກລົງ ໂດຍ EU ບົນພື້ນຖານເປັນແຕ່ລະກໍລະນີ** | ▪ EC ຕັດສິນໃຈ ກ່ຽວກັບ **ການເພີ່ມການຄວບຄຸມທີ່ເປັນທາງການ ແບບຊົ່ວຄາວ** ຢູ່ທີ່ການເຂົ້າໄປຫາ EU ສຳລັບ ອາຫານຄົນ ແລະ ອາຫານສັດບາງຢ່າງ ທີ່ບໍ່ມີແຫຼ່ງກຳເນີດ ມາຈາກສັດ ຈາກ ປະເທດທີສາມ ເມື່ອມີ ຄວາມສ່ຽງເກີດຂຶ້ນ ຫຼື ທີ່ຖືກຮັບຮູ້ ຫຼື ເມື່ອ ມີຫຼັກຖານການແຜ່ ການບໍ່ປະຕິບັດຕາມ ນິຕິກຳຕ່ອງໂສ້ອາຫານ ແລະ ກະສິກຳ ຂອງ EU ຢ່າງນຮ້າຍແຮງ.<br>▪ ລາຍຊື່ຂອງຜະລິດຕະພັນເຫຼົ່ານີ້ ທີ່ຊີ້ໃຫ້ເຫັນ ລະຫັດ Combined Nomenclature (CN) ຂອງເຂົາເຈົ້າ ແມ່ນຖືກກຳນົດຂຶ້ນ ແລະ ຮັກສາ ຢູ່ໃນເຄື່ອງມືທາງນິຕິກຳ ຂອງ EU,[244] ໂດຍອີງຕາມ ມາດຕາ 47(2)(b) ຂອງລະບຽບການຄວບຄຸມ ຢ່າງເປັນທາງການ.[245] |

| | |
|---|---|
| | ▪ ເຈົ້າໜ້າທີ່ທີ່ມີສິດອຳນາດ ຂອງ ປະເທດທີ່ເປັນສະມາຊິກ EU ຢູ່ທີ່ດ່ານກວດກາຊາຍແດນ ແລະ ຢູ່ທີ່ ຈຸດຄວບຄຸມ ດຳເນີນ ການກວດກາຕົວຕົນ ແລະ ການກວດກາທາງກາຍະພາບ, ລວມທັງ ການເຮັດເອົາຕົວຢ່າງ ແລະ ການວິເຄາະໃນຫ້ອງແລັບ, ກ່ຽວກັບ ການສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນຢູ່ໃນບັນຊີລາຍຊື່ ຂອງ ເອກະສານຊ້ອນທ້າຍ I ແລະ ຢູ່ທີ່ຄວາມຖີ່ ທີ່ຖືກກຳນົດອອກ ຢູ່ໃນ ເອກະສານຊ້ອນທ້າຍນັ້ນ.[246]<br>▪ *ໃນປັດຈຸບັນ, ບໍ່ມີຜະລິດຕະພັນກະສິກຳ ຈາກ ສປປ ລາວ ທີ່ຢູ່ພາຍໃຕ້ ການຄວບຄຸມທີ່ເພີ່ມຂຶ້ນ. ຢ່າງໜ້ອຍ ສອງຄັ້ງຕໍ່ປີ, ຄະນະກຳມະການເອີຣົບ ທົບທວນ ລາຍຊື່ ຂອງ ຜະລິດຕະພັນທີ່ຢູ່ພາຍໃຕ້ ການຄວບຄຸມທີ່ເພີ່ມຂຶ້ນ.* |
| **4- ມາດຕະການປົກປ້ອງ ຢູ່ໃນກໍລະນີ ມີຄວາມສ່ຽງສູງສຸດ ທີ່ຖືກຮັບຮູ້** | ▪ ອາຫານຄົນ ແລະ ອາຫານສັດ ທີ່ບໍ່ມີແຫຼ່ງກຳເນີດມາຈາກສັດ **ທີ່ບັງຄັບໃຊ້ ການມີຄວາມສ່ຽງຢ່າງທັນການໜ່ວງ ຕໍ່ ສາທາລະນະສຸກ,** ຊຶ່ງບໍ່ສາມາດ ຖືກບັນຈຸ ຢ່າງໜ້າພໍໃຈໄດ້ ດ້ວຍວິທີ ຂອງ ມາດຕະການ ທີ່ນຳໃຊ້ ໂດຍ ບັນດາປະເທດສະມາຊິກ EU, ແມ່ນນອນຢູ່ໃນ ລາຍຊື່ ໃນເຄື່ອງມືນິຕິກຳ ຂອງ EU ແລະ ຢູ່ພາຍໃຕ້ **ມາດຕະການສຸກເສີນ**.[247]<br>▪ ເຈົ້າໜ້າທີ່ ທີ່ມີສິດອຳນາດ ຂອງ ບັນດາປະເທດສະມາຊິກ EU ທີ່ຢູ່ດ່ານກວດກາຊາຍແດນ ແລະ ທີ່ຢູ່ທີ່ຈຸດຄວບຄຸມ ດຳເນີນການ ກວດກາຕົວຕົນ ແລະ ການກວດກາທາງກາຍະພາບ, ລວມທັງ ການເຮັດຕົວຢ່າງ ແລະ ການວິເຄາະ ໃນຫ້ອງທົດລອງ ທີ່ຖືກຍອມຮັບ ກ່ຽວກັບ ການຂົນສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນໃນບັນຊີລາຍການ ດ້ວຍ ຄວາມຖີ່ທີ່ກຳນົດໄວ້.[248]<br>▪ ແຕ່ລະການຂົນສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນໃນບັນຊີລາຍຊື່ ແມ່ນຈະຕ້ອງຖືກລະບຸຕົວຕົນ ດ້ວຍ ລະຫັດລະບຸຕົວຕົນ ແລະ ຈະຕ້ອງມີພົນ ການເຮັດຕົວຢ່າງ ແລະ ການວິເຄາະ ທີ່ໄດ້ປະຕິບັດ ໂດຍ ເຈົ້າໜ້າທີ່ ທີ່ມີສິດອຳນາດ ຂອງ ປະເທດ ທີ່ເປັນແຫຼ່ງກຳເນີດ. ບົນພື້ນຖານ ການວິເຄາະເຮັດຕົວຢ່າງ ທີ່ໄດ້ປະຕິບັດ, ເຈົ້າໜ້າທີ່ ທີ່ມີສິດອຳນາດກຳນົດ:<br>(i) ຄວາມຖືກຕ້ອງສອດຄ່ອງ ກັບ ບັນດາກົດລະບຽບ ຂອງ EU ວ່າດ້ວຍສານປົນເປື້ອນ ທີ່ມີຢູ່ໃນ ອາຫານ ແລະ ວ່າດ້ວຍ ສານທີ່ບໍ່ເພິ່ງປະສົງ ຢູ່ໃນ ອາຫານສັດ ສຳລັບ ການຂົນສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນໃນລາຍຊື່ ຂອງ ເອກະສານຊ້ອນທ້າຍ II ຍ້ອນມີຄວາມສ່ຽງ ຈາກການປົນເປື້ອນ ດ້ວຍສານ mycotoxins;[249]<br>(ii) ຄວາມຖືກຕ້ອງສອດຄ່ອງກັບ ບັນດາກົດລະບຽບ ຂອງ EU ວ່າດ້ວຍ ລະດັບຕົກຄ້າງສູງສຸດ ຂອງຢາປາບສັດຕູພືດ ຢູ່ໃນອາຫານຄົນ ແລະ ອາຫານສັດ ທີ່ມີແຫຼ່ງກຳເນີດ ມາຈາກພືດ ແລະ ສັດ,[250] ສຳລັບ ການຂົນສົ່ງສິນຄ້າ ທີ່ເປັນອາຫານຄົນ ແລະ ອາຫານສັດ ທີ່ນອນໃນບັນຊີລາຍຊື່ ຂອງເອກະສານຊ້ອນທ້າຍ II ຍ້ອນຄວາມສ່ຽງທີ່ຈະເຈືອປົນກັບ ສານຕົກຄ້າງຈາກຢາປາບສັດຕູພືດ;<br>(iii) ທີ່ຜະລິດຕະພັນ ບໍ່ປະກອບດ້ວຍ ສານ pentachlorophenol (PCP) ທີ່ເກີນ 0,01 mg/kg, ສຳລັບການຂົນສົ່ງສິນຄ້າ ທີ່ເປັນອາຫານສັດ ແລະ ອາຫານຄົນ ທີ່ນອນຢູ່ໃນບັນຊີລາຍຊື່ ຂອງເອກະສານຊ້ອນທ້າຍ II ຍ້ອນຄວາມສ່ຽງທີ່ຈະເຈືອປົນກັບ ສານ pentachlorophenol ແລະ ສານ dioxins; ແລະ |

(iv) ການບໍ່ມີ ເຊື້ອລາ salmonella ໃນປະລິມານ 25 g, ສໍາລັບການຂົນສົ່ງສິນຄ້າ ທີ່ເປັນອາຫານ ທີ່ນອນໃນບັນຊີລາຍຊື່ ຂອງ ເອກະສານຊ້ອນທ້າຍ II ຍ້ອນ ຄວາມສ່ຽງທີ່ຈະເຈືອປົນທາງຈຸລິນຊີ ກັບ ເຊື້ອລາ salmonella.

- ແຕ່ລະ ການຂົນສົ່ງສິນຄ້າ ທີ່ເປັນອາຫານສັດ ແລະ ອາຫານຄົນ ທີ່ນອນຢູ່ໃນບັນຊີລາຍຊື່ ຂອງເອກະສານຊ້ອນທ້າຍ II ຂອງລະບຽບການ EU ວ່າດ້ວຍ ການເພີ່ມການຄວບຄຸມທີ່ເປັນທາງການ ແບບຊົ່ວຄາວ ຈະຕ້ອງມີ ໃບຢັ້ງຢືນທີ່ເປັນທາງການ ໂດຍສອດຄ່ອງກັບ ຕົວແບບ ທີ່ຖືກກໍານົດ ຢູ່ໃນ ເອກະສານຊ້ອນທ້າຍ IV ຂອງລະບຽບການນັ້ນ (ໃບຢັ້ງຢືນທີ່ເປັນທາງການ).
- *ໃນປັດຈຸບັນ ບໍ່ມີຜະລິດຕະພັນ ຈາກ ສປປ ລາວ ທີ່ນອນຢູ່ໃນ ເອກະສານຊ້ອນທ້າຍ I ແລະ II ຂອງ ລະບຽບການຈັດຕັ້ງປະຕິບັດ ຂອງ ຄະນະກໍາມະການ (EU) 2019/1793 ສໍາລັບ ການເພີ່ມການຄວບຄຸມ ຢ່າງເປັນທາງການ ແບບຊົ່ວຄາວ ຫຼື ມາດຕະການສຸກເສີນ. ເຖິງ ຢ່າງໃດກໍຕາມ, ຜູ້ສົ່ງອອກ ຈາກ ສປປ ລາວ ໄດ້ຮັບຄໍາແນະນໍາ ໃຫ້ກວດເບິ່ງ ນິຕິກໍາ ເລື້ອຍໆ, ທີ່ຢູ່ພາຍໃຕ້ ການປັບປຸງແປງ ຢ່າງໜ້ອຍທຸກສອງປີ.*

### b) ບັນດາກົດລະບຽບ ສໍາລັບ ສານປົນເປື້ອນ ທີ່ມີຢູ່ໃນອາຫານ

ສານປົນເປື້ອນ ອາດ ສາມາດມີຢູ່ໃນອາຫານ ອັນເປັນຜົນມາຈາກ ຂັ້ນຕອນຂອງການຜະລິດ, ການຫຸ້ມຫໍ່, ການຂົນສົ່ງ ຫຼື ການເກັບຮັກສາ, ຫຼື ອາດເປັນຜົນມາຈາກ ການປົນເປື້ອນ ຢູ່ໃນສິ່ງແວດລ້ອມ.

ເພື່ອຮັບປະກັນ ການປົກປ້ອງຜູ້ບໍລິໂພກໃນລະດັບສູງ, ການນໍາເຂົ້າອາຫານ ໄປຫາ ສະຫະພາບເອີຣົບ ແມ່ນຈໍາເປັນຕ້ອງ ປະຕິບັດຕາມ ນິຕິກໍາ ຂອງສະຫະພາບເອີຣົບ ທີ່ອອກແບບມາ ເພື່ອຮັບປະກັນວ່າ ອາຫານທີ່ວາງຂາຍ ໃນ ຕະຫຼາດ EU ແມ່ນປອດໄພທີ່ຈະບໍລິໂພກ ແລະ ບໍ່ມີສານປົນເປື້ອນ ຢູ່ໃນລະດັບທີ່ອາດເປັນໄພຂົ່ມຂູ່ຕໍ່ ສຸຂະພາບ ຂອງມະນຸດ.

| | |
|---|---|
| **ກົດໝາຍ EU ຄວບຄຸມ ການມີສານປົນເປື້ອນ ທີ່ມີຢູ່ໃນອາຫານ ໃນ EU.**[251] | ອາຫານ ທີ່ປະກອບດ້ວຍ ສານປົນເປື້ອນ ໃນປະລິມານ ທີ່ຍອມຮັບບໍ່ໄດ້ ໂດຍອີງຕາມ ມຸມມອງ ຂອງສາທາລະນະສຸກ ແລະ, ໂດຍສະເພາະ, ໃນລະດັບທີ່ເປັນພິດ, ແມ່ນຈະບໍ່ ຖືກວາງຂາຍ ຢູ່ໃນຕະຫຼາດ EU ແລະ ຈະຖືກປະຕິເສດ; |
| **ລະບຽບການ, ຢູ່ໃນພາກທີ່ກ່ຽວຂ້ອງ, ກໍານົດ ດັ່ງຕໍ່ໄປນີ້:** | ລະດັບສານປົນເປື້ອນ ແມ່ນຈະຖືກຮັກສາ ໃຫ້ຕໍ່າເທົ່າທີ່ຈະສາມາດເຮັດໄດ້ ພາຍຫຼັງ ການປະຕິບັດການເຮັດວຽກທີ່ດີ ທີ່ຖືກແນະນໍາ; |
| | ລະດັບສູງສຸດ ສາມາດ ຖືກກໍານົດ ສໍາລັບ ບາງສານປົນເປື້ອນ ເພື່ອທີ່ຈະປົກປ້ອງ ສາທາລະນະສຸຂະ. ໂດຍສະເພາະ, ລະດັບສູງສຸດ ໄດ້ຖືກກໍານົດ ສໍາລັບສານປົນເປື້ອນຕໍ່ໄປນີ້:[252]<br>▪ ບາງສານ Mycotoxins (ເຊັ່ນ aflatoxins, ochratoxin A, fusarium toxins, patulin ແລະ citrinin);<br>▪ ບາງສານໂລຫະ (ເຊັ່ນ cadmium, lead, mercury, inorganic tin, ແລະ arsenic);<br>▪ ສານ Dioxins ແລະ polychlorinated biphenyls (PCBs);<br>▪ ສານ Polycyclic aromatic hydrocarbons (PAH);<br>▪ ສານ 3-monochloropropane diol; |

- ສານ Melamine;
- ອາຊິດ Erucic acid; ແລະ
- ບາງສານ Nitrates.

*ຜູ້ສົ່ງອອກ* ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ *ຈາກ ສປປ ລາວ ສາມາດຊອກຫາຂໍ້ມູນ ທີ່ກ່ຽວຂ້ອງກ່ຽວກັບ ລະດັບການປົນເປື້ອນສູງສຸດ ທີ່ອະນຸຍາດໃຫ້ມີຢູ່ໃນອາຫານ ຢູ່ໃນ ເອກະສານຊ້ອນທ້າຍ ຂອງ ລະບຽບການ* (EC) 1881/2006. ຂໍ້ມູນທີ່ຄັດຈ້ອນ ມາຈາກ ລະບຽບການນີ້ ທີ່ກຳນົດລະດັບການປົນເປື້ອນສູງສຸດ (ລະບຸເປັນ µg/kg) ແມ່ນມີຢູ່ໃນ ຮູບ 21.

**ຮູບ 21: ຂໍ້ມູນທີ່ຄັດຈ້ອນມາຈາກ ເອກະສານຊ້ອນທ້າຍ ຂອງ ລະບຽບການ (EC) 1881/2006 ທີ່ກຳນົດ ລະດັບ ສູງສຸດ ຂອງ ສານປົນເປື້ອນ ສຳລັບ ຜະລິດຕະພັນອາຫານບາງຢ່າງ ທີ່ໄດ້ຜ່ານການປຸງແຕ່ງ**

| | | |
|---|---|---|
| 2.2 | **Ochratoxin A** | |
| 2.2.5 | Soluble coffee (instant coffee) | 10,0 |
| 3.4 | **Tin (inorganic)** | |
| 3.4.1 | Canned foods other than beverages | 200 |
| 3.4.2 | Canned beverages, including fruit juices and vegetable juices | 100 |

## c) ບັນດາກົດລະບຽບ ວ່າດ້ວຍ ລະດັບຕົກຄ້າງສູງສຸດ

ລະບຽບການ ຂອງ ສະຫະພາບເອີຣົບ (EC) ເລກທີ 396/2005 ວາງຂໍ້ກຳນົດ ສຳລັບ ການກຳນົດ ລະດັບສານຕົກຄ້າງສູງສຸດ ຂອງຢາປາບສັດຕູພືດ ຂອງ EU ຢູ່ໃນອາຫານຄົນ ແລະ ອາຫານສັດ.[253] ການນຳເຂົ້າ ຜະລິດຕະພັນພືດ ແລະ ສັດ ຕ້ອງປະຕິບັດຕາມ ລະດັບ MRL ທີ່ຖືກກຳນົດ ໂດຍ EC ເພື່ອທີ່ຈະປົກປ້ອງ ຜູ້ບໍລິໂພກ ຈາກການສຳຜັດກັບ ສານຕົກຄ້າງຈາກ ຢາປາບສັດຕູພືດ ໃນລະດັບສູງ.

***ການກຳນົດນິຍາມ ຂອງ ຢາປາບສັດຕູພືດ:*** ຢາປາບສັດຕູພືດ ແມ່ນສານ ຫຼື ຜະລິດຕະພັນສານປະສົມ ທີ່ປ້ອງກັນ, ທຳລາຍ ຫຼື ຄວບຄຸມ ສິ່ງທີ່ມີຊີວິດ (ສັດຕູພືດ) ຫຼື ພະຍາດ, ຫຼື ປົກປ້ອງພືດ ຫຼື ຜະລິດຕະພັນພືດ ໃນຊ່ວງໄລຍະ ການຜະລິດ, ການເກັບຮັກສາ ແລະ ການຂົນສົ່ງ. ຄຳສັບ ກວມເອົາ ສານກຳຈັດສັດຕູພືດ (herbicides), ສານຂ້າເຊື້ອລາ (fungicides), ຢາຂ້າແມງໄມ້ (insecticides), ຢາຂ້າໄຮ ຫຼື ເຫັບ (acaricides), ຢາຂ້າແມ່ທ້ອງໂຕກົມ (nematicides), ຢາຂ້າຫອຍ (molluscicides), ຢາຂ້າໜູ (rodenticides), ສານຄວບຄຸມການຈະເລີນເຕີບໂຕ (growth regulators), ສານຂັບໄລ່ແມງໄມ້ ແລະ ສັດຕູພືດ (repellents), ຢາຂ້າໜູ (rodenticides) ແລະ ສານກຳຈັດສິ່ງທີ່ມີຊີວິດ (biocides).

*ກົດໝາຍ ຂອງ ສະຫະພາບເອີຣົບ ກວມເອົາ ຢາປາບສັດຕູພືດ ທີ່ມີຫຼາຍກວ່າ 1,100 ຢ່າງ ທີ່ຖືກນຳໃຊ້ ໃນອະດີດ ແລະ ໃນປັດຈຸບັນ ໃນການຜະລິດກະສິກຳ ທີ່ຢູ່ໃນ ແລະ ຢູ່ນອກ ສະຫະພາບເອີຣົບ.*

***MRL:*** MRL ແມ່ນເປັນ ລະດັບການຕົກຄ້າງສູງທີ່ສຸດ ຈາກຢາຂ້າສັດຕູພືດ ຢູ່ໃນ ຫຼື ຢູ່ເທິງ ອາຫານຄົນ ຫຼື ອາຫານສັດ ທີ່ສາມາດຍອມຮັບໄດ້ ຕາມກົດໝາຍ ເມື່ອມີການນຳໃຊ້ຢາປາບສັດຕູພືດ ຢ່າງຖືກຕ້ອງ ແລະ ອີງຕາມ ຫຼັກການປະຕິບັດການກະສິກຳທີ່ດີ (GAP).

*ຢູ່ໃນສະຫະພາບເອີຣົບ, ລະດັບ MRL ໄດ້ຖືກສ້າງຕັ້ງຂຶ້ນ ສໍາລັບຜະລິດຕະພັນສັດ 315 ລາຍການ ແລະ ຕໍ່ກັບ ຜະລິດຕະພັນດຽວກັນ ຫຼັງຈາກມີການປຸງແຕ່ງ, ປັບປຽນ ເພື່ອຄໍານຶງເຖິງ ຄວາມຈືດຈາງ ຫຼື ຄວາມເຂັ້ມຂຸ້ນ ໃນຊ່ວງໄລຍະ ຂອງ ຂະບວນການ. ລະດັບ MRL ທີ່ເປັນ ມາດຕະຖານທົ່ວໄປ 0.01 mg/kg ມີຜົນ ນໍາໃຊ້ ບ່ອນທີ່ ລະດັບ MRL ສໍາລັບ ຢາປາບສັດຕູພືດ ບໍ່ໄດ້ຖືກກ່າວເຖິງ ໃນລາຍລະອຽດ.*

**ລາຍລະອຽດ ຂອງ ລະດັບ MRL:** ບັນຊີລາຍຊື່ ຂອງຜະລິດຕະພັນ ທີ່ຢູ່ພາຍໃຕ້ ການຄວບຄຸມ ແລະ ລະດັບ MRL ທີ່ຕອບສະໜອງ ທີ່ມີຜົນ ນໍາໃຊ້ ແມ່ນກໍານົດໄວ້ ຢູ່ໃນເອກະສານຊ້ອນທ້າຍ ຂອງ ລະບຽບການ (EC) ເລກທີ 396/2005. ເອກະສານຊ້ອນທ້າຍ ຖືກຈັດລຽງ ດັ່ງຕໍ່ໄປນີ້:

| | |
|---|---|
| **ເອກະສານຊ້ອນທ້າຍ I** | **ສະໜອງ ລາຍຊື່ ຜະລິດຕະພັນ ທີ່ລະດັບ MRL ມີຜົນນໍາໃຊ້ ທີ່ກວມເອົາ ຜະລິດຕະພັນ ສັດ, ໝາກໄມ້, ພືດຜັກ, ທັນຍາພືດ, ເຄື່ອງເທດ ແລະ ບາງພືດທີ່ກິນໄດ້.** |
| **ເອກະສານຊ້ອນທ້າຍ II** | ປະກອບດ້ວຍ ລາຍຊື່ ລະດັບ MRL ສຸດທ້າຍ ຂອງ EU. |
| **ເອກະສານຊ້ອນທ້າຍ III** | ສະໜອງລາຍຊື່ ລະດັບ MRL ຊົ່ວຄາວ ຂອງ of EU. |
| **ເອກະສານຊ້ອນທ້າຍ IV** | ສະໜອງລາຍຊື່  ຢາປາບສັດຕູພືດ ທີ່ບໍ່ຈໍາເປັນຕ້ອງມີລະດັບ MRL ຍ້ອນຄວາມສ່ຽງຕໍ່າຂອງພວກ ມັນ. |
| **ເອກະສານຊ້ອນທ້າຍ V** | ປະກອບດ້ວຍ ລາຍຊື່ ຢາປາບສັດຕູພືດ ທີ່ມີຂໍ້ຈໍາກັດທົ່ວໄປ ນອກເໜືອຈາກ 0.01 mg ຕໍ່ kg ມີ ຜົນນໍາໃຊ້. |
| **ເອກະສານຊ້ອນທ້າຍ VI** | ສະໜອງລາຍຊື່ ຂອງ ສານທີ່ນໍາໃຊ້ຕົວຈິງ/ການປະສົມປະສານ ຜະລິດຕະພັນ, ຕາມທີ່ໄດ້ກ່າວເຖິງ ໃນມາດຕາ 18(3) ຂອງ ລະບຽບການ (EC) ເລກທີ 396/2005 ຂອງ ລັດຖະສະພາ ແລະ ສະພາ ເອີຣົບ, ລົງວັນທີ 23 ກຸມພາ 2005 ວ່າດ້ວຍລະດັບຕົກຄ້າງສູງສຸດ ຂອງ ຢາປາບສັດຕູພືດ ທີ່ຢູ່ໃນ ຫຼື ຢູ່ບົນ ອາຫານຄົນ ແລະ ອາຫານສັດ ທີ່ມີແຫຼ່ງກໍາເນີດ ມາຈາກພືດ ແລະ ສັດ. |
| **ເອກະສານຊ້ອນທ້າຍ VII** | ປະກອບດ້ວຍ ລາຍຊື່ ຢາປາບສັດຕູພືດ ທີ່ຖືກນໍາໃຊ້ ໃນນາມເປັນ ຢາຂ້າເຊື້ອ ສໍາລັບ ບັນດາປະເທດ ສະມາຊິກ EU ໄດ້ຮັບອະນຸຍາດ ໃຫ້ນໍາໃຊ້ ເປັນຂໍ້ຍົກເວັ້ນພິເສດ ກ່ອນຜະລິດຕະພັນ ຖືກວາງຂາຍ ໃນຕະຫຼາດ. |

*ສໍາລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບ MRL:*
*ຂໍ້ມູນເພີ່ມຕື່ມ ກ່ຽວກັບສານ ແລະ ລະດັບ MRL ທີ່ລວມຢູ່ໃນ ບັນຊີລາຍຊື່ ໃນ ເອກະສານຊ້ອນທ້າຍ II, III ແລະ IV ແມ່ນມີຢູ່ໃນ ເວັບໄຊ ຖານຂໍ້ມູນຢາປາບສັດຕູພືດ ຂອງ ສະຫະພາບເອີຣົບ.*[254]

## d) ບັນດາກົດລະບຽບ ວ່າດ້ວຍ ການປົກປ້ອງພືດ ແລະ ການກວດກາ ໃບຢັ້ງຢືນ ສຸຂານາໄມ້ພືດ

*ຜູ້ສົ່ງອອກ ຜະລິດຕະພັນກະສິກໍາດິບ ຈາກ ສປປລາວ ໄປຫາ ສະຫະພາບເອີຣົບ ອາດຈະຢູ່ພາຍໃຕ້ ມາດຕະການ ທີ່ລວມຢູ່ໃນ ກົດລະບຽບ ຂອງ ສະຫະພາບເອີຣົບ ວ່າດ້ວຍ ມາດຕະການປ້ອງກັນ ການນໍາເຂົ້າ ສິ່ງມີຊີວິດ ທີ່ເປັນອັນຕະລາຍ ຕໍ່ ພືດ ຫຼື ຜະລິດຕະພັນພືດ ແລະ ຕ້ານກັບ ການແຜ່ລະບາດຂອງມັນ ພາຍໃນ ສະຫະພາບເອີຣົບ* the EU.[255]
*ດ້ານຕ່າງໆ ຕໍ່ໄປນີ້ ແມ່ນມີຄວາມກ່ຽວຂ້ອງກັບ ສໍາລັບ ຜູ້ສົ່ງອອກ ຈາກ ສປປ ລາວ.*

### *ໃບຢັ້ງຢືນສຸຂານາໄມພືດ*

*ໝົດທຸກພືດ* (ລວມມີ ສ່ວນ ຂອງພືດ ທີ່ມີຊີວິດ) ຕ້ອງໄດ້ມີ **ໃບຢັ້ງຢືນ ສຸຂານາໄມ້ພືດ** ເພື່ອທີ່ຈະເຂົ້າສູ່ EU ເວັ້ນເສຍແຕ່ວ່າ ພວກມັນ ນອນຢູ່ໃນບັນຊີລາຍຊື່ ເຄື່ອງມືທາງນິຕິກໍາ ຂອງ ສະຫະພາບເອີຣົບ ຕາມການຍົກເວັ້ນ ຈາກ ຂໍ້ກໍານົດ ຫຼື ຄວາມຕ້ອງການທົ່ວໄປ ນີ້.256

- ໃບຢັ້ງຢືນສຸຂານາໄມພືດ ເວັ້ງໃສ່ ເພື່ອຮັບປະກັນວ່າ ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນໆ ແມ່ນ:
  - ໄດ້ຮັບການກວດກາ ຢ່າງຄັກແນ່;
  - ປາສະຈາກ ພືດທີ່ຖືກກັກກັນ, ທີ່ຢູ່ພາຍໃນ ຂໍ້ກໍານົດ ຫຼື ຄວາມຕ້ອງການ ສໍາລັບ ສັດຕູພືດທີ່ບໍ່ໄດ້ຖືກກັກກັນ ທີ່ຢູ່ໃນການຄວບຄຸມ ແລະ ປາສະຈາກ ສັດຕູພືດຈະນິດອື່ນໆ. ແລະ
  - ສອດຄ່ອງກັບ ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານສຸຂະພາບພືດ ຂອງ EU.[257]
  - ໃບຢັ້ງຢືນສຸຂານາໄມພືດ ແມ່ນອອກໃຫ້ໂດຍ ອົງການປົກປ້ອງພືດແຫ່ງຊາດ ຂອງ ປະເທດສົ່ງອອກ. ເມື່ອຢູ່ໃນ ສະຫະພາບເອີຣົບ, ໜັງສືຜ່ານແດນ ຂອງພືດ ສາມາດ ປ່ຽນແທນ ໃບຢັ້ງຢືນສຸຂານາໄມພືດ ໄດ້ ສໍາລັບ ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນໆ ທີ່ຖືກນໍາເຂົ້າ, ທີ່ນອນໃນລາຍຊື່ ຢູ່ໃນກົດໝາຍ ຂອງ ສະຫະພາບເອີຣົບ.[258]
  - ບໍ່ຈໍາເປັນຕ້ອງມີ ໃບຢັ້ງຢືນສຸຂານາໄມພືດ ເພື່ອນໍາເຂົ້າ ໄປຫາ ສະຫະພາບເອີຣົບ ສໍາລັບ ໝາກໄມ້ຕໍ່ໄປນີ້: ໝາກນັດ, ໝາກກ້ວຍ, ໝາກພ້າວ, ໝາກທຸລຽນ ແລະ ໝາກເດດ (Dates).[259]

## ພືດທີ່ມີຄວາມສ່ຽງສ່ຽງສູງ

- ມາດຕະການປ້ອງກັນທີ່ເພີ່ມຂຶ້ນ ກໍາລັງດໍາເນີນ ຕ້ານກັບ ການນໍາເຂົ້າ ສັດຕູພືດຈະນິດໃໝ່ ເຂົ້າມາ ຜ່ານທາງ ການນໍາເຂົ້າ ຈາກ ປະເທດທີສາມ ແລະ ຢູ່ໃນນັ້ນ, ກົດໝາຍ ຂອງ ສະຫະພາບເອີຣົບ ໄດ້ກໍານົດລາຍຊື່ ພືດທີ່ມີຄວາມສ່ຽງສູງ, ການນໍາເຂົ້າໄປໃນ ອະນາເຂດ ຂອງ ສະຫະພາບເອີຣົບ ແມ່ນຈະຖືກຫ້າມ ຊົ່ວຄາວ ຕັ້ງແຕ່ວັນທີ 14 ທັນວາ 2019 ຈົນຮອດວັນທີ ທີ່ໄດ້ມີການດໍາເນີນ ການປະເມີນຄວາມສ່ຽງແບບຄົບຖ້ວນ.

## ໜັງສືຜ່ານແດນພືດ ແລະ ການຂຶ້ນທະບຽນ

- ກົດໝາຍ ຂອງ ສະຫະພາບເອີຣົບ ກໍານົດໜັງສືຜ່ານແດນພືດ ຂອງ ສະຫະພາບເອີຣົບ ແລະ ການລົງທະບຽນ ຂອງຜູ້ປະກອບການ ແລະ ກົດລະບຽບທີ່ສອດຄ່ອງ ວ່າດ້ວຍ ການຕິດຕາມ (ອີງໃສ່ ຮູບ 18).

## ການກວດກາ ສຸຂະພາບ ແບບບັງຄັບ

- ໝົດທຸກພືດ ແລະ ຜະລິດຕະພັນພືດ ທີ່ນໍາເຂົ້າຈາກ ບັນດາປະເທດທີ່ບໍ່ເປັນສະມາຊິກ EU ແມ່ນຈະຢູ່ພາຍໃຕ້ ການກວດກາສຸຂະພາບ ແບບບັງຄັບ.

ປະເພດການກວດກາ:

- ການກວດສອບໃບຢັ້ງຢືນສຸຂານາໄມພືດ ແລະ ເອກະສານຕ່າງໆ ເພື່ອຮັບປະກັນວ່າ ການຂົນສົ່ງສິນຄ້າ ໄດ້ຕາມ ຂໍ້ກໍານົດ ຫຼື ຄວາມຕ້ອງການ ຂອງ EU;
- ການກວດສອບຕົວຕົນ ເພື່ອຮັບປະກັນວ່າ ການຂົນສົ່ງສິນຄ້າ ຕອບສະໜອງຕາມ ໃບຢັ້ງຢືນ;
- ການກວດກາ ການຂົນສົ່ງສິນຄ້າ ເພື່ອຮັບປະກັນວ່າ ການຂົນສົ່ງສິນຄ້ ແມ່ນປາສະຈາກ ສິ່ງມີຊີວິດ ທີ່ເປັນອັນຕະລາຍ.

ທີ່ຕັ້ງ ແລະ ຄ່າທໍານຽມ:

- ການກວດກາຕົວຕົນ ແລະ ສຸຂະພາບພືດ (ບໍ່ລວມ ການກວດເອກະສານ) ສາມາດດໍາເນີນ ຢູ່ບ່ອນຕົ້ນທາງໄດ້ ໂດຍມີການຕົກລົງ ຈາກ ອົງການສຸຂະພາບພືດ ທີ່ຮັບຜິດຊອບ ຈຸດເຂົ້າ ແລະ ຈຸດປາຍທາງ. ຂັ້ນຕອນນີ້ ແມ່ນໄດ້ຮັບອະນຸຍາດ ສະເພາະ ຖ້າຜູ້ນໍາເຂົ້າ ໄດ້ຖືກຮັບຮອງຜ່ານມາແລ້ວ ຈາກ ເຈົ້າໜ້າທີ່ ຂອງ EU.
- ປະເທດສະມາຊິກ ສະຫະພາບເອີຣົບ ເກັບຄ່າທໍານຽມຄ່າເອກະສານ, ຄ່າກວດກາຕົວຕົນ ແລະ ສຸຂະພາບພືດ, ຊຶ່ງຈະໄດ້ຈ່າຍໂດຍ ຜູ້ນໍາເຂົ້າ ຫຼື ຕົວແທນດ້ານພາສີ ຂອງເຂົາເຈົ້າ.260

ຂອບເຂດ ສໍາລັບ ການກວດກາ ສຸຂະພາບ ແບບຫຼຸດລົງ:

- ມີກົດລະບຽບ EU ສໍາລັບ ການກວດສຸຂະພາບ ແບບຫຼຸດລົງ ສໍາລັບພືດ ບາງຊະນິດ.261
- ອີງຕາມ ນິຕິກໍາ ຂອງສະຫະພາບເອີຣົບ, ສໍາລັບຊ່ວງໄລຍະເວລາ ລະຫວ່າງວັນທີ 1 ກຸມພາ 2020 ຫາ ວັນທີ 31 ທັນວາ 2020, ມີ 65 ຜະລິດຕະພັນ ໄດ້ຖືກແນະນໍາໃຫ້ຫຼຸດການກວດສຸຂະພາບພືດ ໂດຍຄະນະກໍາມະການເອີຣົບ.262
- *ບໍ່ມີຜະລິດຕະພັນໃດ ທີ່ນອນຢູ່ໃນບັນຊີລາຍຊື່ ທີ່ມີແຫຼ່ງກໍາເນີດ ມາຈາກ ສປປ ລາວ. ເຖິງຢ່າງໃດກໍ່ຕາມ, ບັນຊີລາຍຊື່ ແນະນໍາ ໃຫ້ມີການກວດສຸຂະພາບ ແບບຫຼຸດລົງ ສໍາລັບຜະລິດຕະພັນ ທີ່ມາຈາກ ໝົດທຸກປະເທດ ທີ່ເປັນແຫຼ່ງກໍາເນີດ (ປະເທດຕົ້ນທາງ), ຊຶ່ງໝາຍຄວາມວ່າ ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນໆ ທີ່ມີແຫຼ່ງກໍາເນີດ ຈາກ ສປປ ລາວ ສາມາດໄດ້ຮັບຜົນປະໂຫຍດ ຈາກລະບອບການນໍາເຂົ້າ ທີ່ງ່າຍດາຍນີ້.*

## *ບັນດາກົດລະບຽບທີ່ເຂັ້ມງວດ ທີ່ມີຜົນນໍາໃຊ້ ໃນກໍລະນີພິເສດ*

- ສິນຄ້າບາງຊະນິດ ທີ່ມີແຫຼ່ງກໍາເນີດ ມາຈາກ ບັນດາປະເທດທີ່ບໍ່ແມ່ນສະມາຊິກ ຂອງ ສະຫະພາບເອີຣົບ ແມ່ນຈະຖືກຫ້າມບໍ່ໃຫ້ນໍາເຂົ້າມາພາຍໃນ ທົ່ວສະຫະພາບເອີຣົບ;[263]
- ສິນຄ້າບາງຊະນິດ ທີ່ມີແຫຼ່ງກໍາເນີດມາຈາກ ບັນດາປະເທດທີ່ບໍ່ແມ່ນສະມາຊິກ ຂອງ ສະຫະພາບເອີຣົບ ແມ່ນຈະຖືກຫ້າມ ຢູ່ໃນເຂດປົກປ້ອງທີ່ກໍານົດໄວ້ ຂອງສະຫະພາບເອີຣົບ;[264]
- ສິນຄ້າບາງຊະນິດ ທີ່ມີແຫຼ່ງກໍາເນີດ ມາຈາກບັນດາປະເທດ ທີ່ບໍ່ແມ່ນສະມາຊິກ ຂອງ ສະຫະພາບເອີຣົບ ແລະ ທີ່ຖືກຈັດປະເພດເປັນພືດ ແລະ ຜະລິດຕະພັນພືດ ທີ່ມີຄວາມສ່ຽງສູງ ແມ່ນຈະຖືກຫ້າມຊົ່ວຄາວ ຈາກການນໍາເຂົ້າມາພາຍໃນ ທົ່ວສະຫະພາບເອີຣົບ;265 ແລະ
- ຕ້ອງມີ ໜັງສືອະນຸຍາດ ສໍາລັບ ພືດ, ຜະລິດຕະພັນພືດ ຫຼື ວັດຖຸອື່ນໆ ສໍາລັບ ການທົດລອງ ຫຼື ຈຸດປະສົງທາງວິທະຍາສາດ ຫຼື ສໍາລັບວຽກກ່ຽວກັບ ການເລືອກແນວພັນ.[266]

ຜູ້ສົ່ງອອກ ຈາກ ສປປ ລາວ ຕ້ອງຮັບຮູ້ວ່າ ກົດລະບຽບພິເສດເພີ່ມຕື່ມ ອາດຈະສາມາດ ມີຜົນນໍາໃຊ້ ພາຍໃຕ້ ເງື່ອນໄຂສະເພາະ ແລະ ສໍາລັບເວລາທີ່ຈໍາກັດ ພາຍໃຕ້ ໝາຍ ຂອງ ສະຫະພາບເອີຣົບ.[267]

## *ບັນດາລະບຽບການສະເພາະ ສໍາລັບ ຜູ້ສົ່ງອອກລາວ ຢູ່ທີ່ ດ່ານຊາຍແດນ ຂອງ ສປປ ລາວ*

ນອກເໜືອທີ່ກ່າວມາຂ້າງເທິງ, ຜູ້ສົ່ງອອກ ຂອງ ສປປ ລາວ ຍັງຄວນຈະຮູ້ເຖິງ ລະບຽບການຄຸ້ມຄອງການສົ່ງອອກ ຂອງຕົນ ໄປຫາ ສະຫະພາບເອີຣົບ ແລະ ທີ່ສາມາດສົ່ງຜົນກະທົບ ຕໍ່ ການສົ່ງອອກ ຂອງຕົນ ໄປຫາ EU:

| *ບັນດາກົດລະບຽບ ວ່າດ້ວຍ ການສົ່ງອອກ ຂອງ ສປປ ລາວ* | |
|---|---|
| ແຈ້ງການ ຂອງ ກະຊວງກະສິກໍາ ແລະ ປ່າໄມ້ ວ່າດ້ວຍ ການເພີ່ມຄວາມເອົາໃຈໃສ່ ໃນການຍົ້ງຍືນສຸຂານາໄມ ພືດ ແລະ ຜະລິດຕະພັນກະສິກໍາ ຂອງ ສປປ ລາວ ທີ່ສົ່ງອອກ ໄປຫາ ສະຫະພາບເອີຣົບ – ເລກທີ. 1046/DOA, ລົງວັນທີ 26 ພຶດສະພາ 2016[268] | ກໍານົດວ່າ ພືດ ແລະ ຜະລິດຕະພັນກະສິກໍາ ທັງໝົດ ຂອງ ສປປ ລາວ ທີ່ຈະສົ່ງອອກໄປ EU ຕ້ອງຈົດທະບຽນສວນປູກຝັງ/ຟາມ, ເຮືອນສໍາລັບທໍາການຫຸ້ມຫໍ່ ແລະ ບໍລິສັດສົ່ງອອກ ຂອງຕົນ ກັບ ຂະແໜງກະສິກໍາ ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ. |
| ແຈງການ ກ່ຽວກັບ ການກວດກາ ສາຍມັດ ສໍາລັບ ສົ່ງອອກ ຜະລິດຕະພັນໄມ້, ແຮ່ທາດ, ຜະລິຕະພັນກະສິກໍາ ແລະ ສິນຄ້າທົ່ວໄປ, ເລກທີ 10036/DC ລົງວັນທີ 11 ທັນວາ 2019[269] | ໃນກໍລະນີ ມີຄວາມຜິດປົກກະຕິ ກ່ຽວກັບ ສາຍມັດປ້ອງກັນ, ມັນເສຍຫາຍ, ແຕກຫັກ ຫຼື ສົງໃສ, ແລະ ຖ້າວ່າ ແຫຼ່ງທີ່ມາຂອງຂໍ້ມູນ ມີຄວາມໜ້າເຊື່ອຖື, ເຈົ້າໜ້າທີ່ພາສີດ່ານຊາຍແດນ ແມ່ນຈະຕ້ອງສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ຫຼື ຄະນະກໍາມະການກວດກາສິນຄ້າ ຢູ່ສະຖານທີ່ແຫຼ່ງກໍາເກີດ ຫຼື ສະຖານທີ່ຄຸ້ມຄອງ ຈຸດກວດກາດ່ານຊາຍແດນ ບ່ອນທີ່ສິນຄ້າຖືກສົ່ງອອກ, ເຈົ້າຂອງສິນຄ້າ, ຜູ້ຂົນສົ່ງ ຫຼື ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຂົ້າພົບ ເປັນຜູ້ເອົາ **ສາຍມັດ**ອອກ **ແລະ ກວດກາສິນຄ້ານໍາກັນ**. |

| | |
|---|---|
| ແຈ້ງການ ວ່າດ້ວຍ ມາດຕະການ ສຸຂາພິບານ ແລະ ສຸຂານາໄມພືດ (SPS) ສຳລັບ ບັນດາປະເທດ ທີ່ເປັນ ສະມາຊິກ EU, ເລກທີ. 0612 /DOA[270] | ແຈ້ງການສະບັບນີ້ ກຳນົດວ່າ ພືດຕ້ອງບໍ່ມີສັດຕູພືດ, ລວມທັງ moloch, Blanchard, Bemisia tabaci Genn ແລະ Thrips palmi Karny. |
| ແຈ້ງການ ວ່າດ້ວຍ ມາດຕະການສຸກເສີນ ກ່ຽວກັບ ການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບ ການສົ່ງອອກພືດຜັກ ໄປຫາ ປະເທດສະມາຊິກ EU, ເລກທີ 0140/DOA [271] | ໂຈະການອອກໃບຢັ້ງຢືນສຸຂານາໄມພືດຊົ່ວຄາວ ສຳລັບ ສິ່ງອອກຜັກ ໄປ ປະເທດສະມາຊິກສະຫະພາບເອີຣົບ ເນື່ອງຈາກມີບັນຫາ ທີ່ໄດ້ຖືກກຳນົດ ຜ່ານທາງການສືບສວນ ໂດຍອີງຕາມ ISPM ເລກທີ 13 ແລະ ການອອກມາດຕະການແກ້ໄຂ ໂດຍ ກົມປູກຝັງ (DOA) |

### e) ບັນດາກົດລະບຽບ ວ່າດ້ວຍການສົ່ງອອກ ຂອງ ສປປ ລາວ ສຳລັບ ອາຫານ ທີ່ໄດ້ຜ່ານການປຸງແຕ່ງ

ນອກຈາກ ກົດລະບຽບ ທີ່ບັງຄັບໃຊ້ກັບ ການເຂົ້າສູ່ ຕະຫຼາດ EU ແລ້ວ, ຜູ້ສົ່ງອອກ ຜະລິດຕະພັນອາຫານທີ່ໄດ້ຜ່ານການປຸງແຕ່ງ ຈາກ ສປປ ລາວ ຄວນຮູ້ຈັກ ເຄື່ອງມືທາງນິຕິກຳ ຕໍ່ໄປນີ້ ທີ່ມີຜົນນຳໃຊ້ຢູ່ໃນ ສປປ ລາວ, ທີ່ຄວບຄຸມ ການສົ່ງອອກ ຜະລິດຕະພັນອາຫານ ໄປຫາ EU:

| *ບັນດາ ລະບຽບການສົ່ງອອກ ຂອງ ສປປ ລາວ ສຳລັບ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ ໄປຫາ* EU | |
|---|---|
| ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກຄຳແນະນຳ ວ່າດ້ວຍ ແຫຼ່ງກຳເນີດ ການສົ່ງອອກ ແລະ ນຳເຂົ້າ ພືດຜັກ, ຜະລິດຕະພັນພືດຜັກ ແລະ ຜະລິຕະພັນອາຫານ ໄປຫາ EU[272] | ເພື່ອຈັດຕັ້ງປະຕິບັດ ຂໍ້ກຳນົດ ພາຍໃຕ້ ລະບຽບການ ກ່ຽວກັບ ການຄວບຄຸມຜັກຢ່າງເຂັ້ມງວດ ເພື່ອທີ່ຈະ ສະກັດກັ້ນ ແລະ ລົບລ້າງ ການນຳເຂົ້າ ຜະລິດຕະພັນຜັກ ຈາກ ຕ່າງປະເທດ ແລະ ອ້າງອີງ ແຫຼ່ງກຳເນີດ ຈາກ ສປປ ລາວ ເພື່ອສົ່ງອອກຄືນ ສູ່ ປະເທດທີສາມ. |
| ລະບຽບການ ວ່າດ້ວຍການຄວບຄຸມ ການຜະລິດ, ອາຫານປອດໄພ ສຳລັບ ການສົ່ງອອກ-ນຳເຂົ້າ[273] | ຜູ້ສົ່ງອອກສະບຽງອາຫານ ແມ່ນຈະຕ້ອງ ສະໜອງເອກະສານ ທີ່ກ່ຽວຂ້ອງ ແລະ ສິ່ງເອກະສານດັ່ງກ່າວ ໃຫ້ ກົມອາຫານ ແລະ ຢາ ເພື່ອທົບທວນ ແລະ ເພື່ອໃຫ້ໄດ້ອອກໃບຢັ້ງຢືນການສົ່ງອອກ. |
| ແຈ້ງການ ກ່ຽວກັບ ລາຍລະອຽດ ການແຈ້ງພາສີ ນຳເຂົ້າ ແລະ ສົ່ງອອກ ເຊື້ອໄຟ, ພາຫານະ, ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ, ເລກທີ 01581/CD, ລົງວັນທີ 29 ມີນາ 2018[274] | ການນຳເຂົ້າ ແລະ ສົ່ງອອກ ນ້ຳມັນ, ພາຫະນະ, ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ແມ່ນໃຫ້ປະຕິບັດ ບົນພື້ນຖານໃບແຈ້ງເສຍພາສີ ຢູ່ທີ່ດ່ານຂາເຂົ້າຊາຍແດນ ໂດຍອີງຕາມ ມາດຕາ 14 ແລະ ມາດຕາ 15 ຂອງ ກົດໝາຍວ່າດ້ວຍພາສີ, ເພື່ອທີ່ຈະໄດ້ຮັບ ການອະນຸຍາດ ຈາກອົງການທີ່ກ່ຽວຂ້ອງ ກ່ອນ ການນຳເຂົ້າ ຫຼື ສົ່ງອອກ ແລະ ມີສັນຍາການຊື້ຂາຍ. ຫຼັງຈາກນັ້ນ, ບໍລິສັດຕ່າງໆ ແມ່ນຈະສາມາດ ດຳເນີນການ ເພື່ອອອກໃບແຈ້ງພາສີ |

## iv. ການຕິດສະຫຼາກ ຜະລິດຕະພັນອາຫານ ທີ່ໄດ້ຜ່ານການປຸງແຕ່ງ

ອາຫານທັງໝົດ ທີ່ໄດ້ວາງຂາຍ ຢູ່ໃນ ສະຫະພາບເອີຣົບ ຕ້ອງປະຕິບັດຕາມ ກົດລະບຽບ ໃດໜຶ່ງ ວ່າດ້ວຍ ການຕິດສະຫຼາກ ເພື່ອຮັບປະກັນວ່າ ຜູ້ບໍລິໂພກ ໄດ້ຮັບຂໍ້ມູນທີ່ຈຳເປັນທັງໝົດ ເພື່ອສາມາດເລືອກຊື້ ຕາມຂໍ້ມູນ ທີ່ໄດ້ມາ.

### a) ບັນດາກົດລະບຽບ ທີ່ຄວບຄຸມ ການຕິດສະຫຼາກອາຫານ

**ກົດໝາຍວ່າດ້ວຍອາຫານທົ່ວໄປ ຂອງ** EU[275] **ກຳນົດກົດລະບຽບທົ່ວໄປ ສຳລັບການຕິດສະຫຼາກ, ການໂຄສະນາ ແລະ ການນຳສະເໜີ ອາຫານ, ລວມທັງ ຮູບຮ່າງ, ຮູບລັກສະນະ ຫຼື ການຫຸ້ມຫໍ່ຂອງມັນ, ວັດສະດຸຫຸ້ມຫໍ່ ທີ່ຖືກນຳໃຊ້, ລັກສະນະ ທີ່ພວກ**

**ມັນຖືກຈັດສັນ ແລະ ການກຳນົດ ການທີ່ພວກມັນຈະຖືກວາງສະແດງ, ແລະ ຂໍ້ມູນທີ່ມີໃຫ້ ກ່ຽວກັບພວກມັນ ຜ່ານທາງສື່ໃດກໍ່ຕາມ, ເພື່ອບໍ່ໃຫ້ຜູ້ບໍລິໂພກເຂົ້າໃຈຜິດ.**

**ນອກຈາກ ກົດລະບຽບທົ່ວໄປ ກ່ຽວກັບ ການຕິດສະຫຼາກອາຫານ, ຄວນຈະສັງເກດເບິ່ງ ຂໍ້ກຳນົດສະເພາະ ສຳລັບ ການຕິດສະຫຼາກ ຂອງສິ່ງຕໍ່ໄປນີ້:**

- ອາຫານດັດແກ້ພັນທຸກຳ;
- ອາຫານທີ່ຖືກປຸງແຕ່ງແບບບໍ່ເຄີຍມີມາກ່ອນ;
- ອາຫານ ສະເພາະກຸ່ມ;
- ຕົວປັບປຸງອາຫານ (ເຊັ່ນ ສານເສີມແຕ່ງ ແລະ ເຄື່ອງປຸງ); ແລະ
- ວັດສະດຸທີ່ສາມາດສຳພັດກັບອາຫານໄດ້

ເຄື່ອງມືທາງດ້ານນິຕິກຳຕົ້ນຕໍ ຂອງ ສະຫະພາບເອີຣົບ ສຳລັບການຕິດສະຫຼາກ ອາຫານ ແມ່ນເປັນ ລະບຽບການ ວ່າດ້ວຍຂໍ້ມູນຂ່າວສານດ້ານອາຫານ ຂອງ ສະຫະພາບເອີຣົບ.[276]

## b) ຂໍ້ມູນທົ່ວໄປ ທີ່ເປັນຂໍ້ກຳນົດ ຫຼື ຄວາມຕ້ອງການ ກ່ຽວກັບ ການຕິດສະຫຼາກ

ອີງຕາມມາດຕາ 9, ລວມທັງ ມາດຕາ 10–35 ຂອງ ລະບຽບການ ວ່າດ້ວຍຂໍ້ມູນຂ່າວສານດ້ານອາຫານ ຂອງ ສະຫະພາບເອີຣົບ, **ການສະຫຼາກສຳລັບອາຫານ** ທີ່ມີຈຸດປະສົງ ເພື່ອວາງຂາຍ ຢູ່ໃນ ຕະຫຼາດ EU ຕ້ອງໄດ້ປະກອບດ້ວຍ ອົງປະກອບຕໍ່ໄປນີ້:

### ລາຍລະອຽດ ຂອງ ຜະລິດຕະພັນ

| | |
|---|---|
| **ຊື່ ຂອງຜະລິດຕະພັນ ທີ່ຈະຖືກຂາຍ** | ▪ ບໍ່ມີເຄື່ອງໝາຍການຄ້າ, ຊື່ຍີ່ຫໍ້ ຫຼື ຊື່ທີ່ເກົ່າໄກ່ໃດ ທີ່ສາມາດປ່ຽນແທນ ຊື່ພັນທຸກຳໄດ້, ແຕ່ມັນສາມາດຖືກນຳໃຊ້ ເພີ່ມຈາກຊື່ພັນທຸກຳ.<br>▪ ສະພາບເງື່ອນໄຂ ທາງກາຍະພາບ ອັນສະເພາະ ຂອງ ອາຫານ ຫຼື ການປະຕິບັດແບບສະເພາະ ທີ່ອາຫານໄດ້ໄປຜ່ານ (ເຊັ່ນ. ການໃສ່ແປ້ງ, ການແຊ່ແຂງແຫ້ງ, ການແຊ່ແຂງ, ການສະກັດ, ການຣົມຄວັນ, ການສາຍລັງສີ ຫຼື ການປະຕິບັດດ້ວຍ ການສາຍລັງສີໄອອອນ) ຕ້ອງລວມຢູ່ນຳ ເມື່ອ ການຍົກເວັ້ນດັ່ງກ່າວ ອາດສາມາ ເຮັດໃຫ້ຜູ້ບໍລິໂພກງົງ. |
| **EU ລາຍລະອຽດການຕິດຕໍ່** | ▪ ຊື່ ຫຼື ຊື່ທຸລະກິດ ແລະ ທີ່ຢູ່ ຂອງ ຜູ້ຜະລິດ, ຜູ້ຫຸ້ມຫໍ່ ຫຼື ຜູ້ນຳເຂົ້າ ທີ່ສ້າງຕັ້ງ ໃນ EU. |
| **ລາຍລະອຽດ ວ່າດ້ວຍແຫຼ່ງກຳເນີດ** | ▪ ປະເທດ ທີ່ເປັນແຫຼ່ງກຳເນີດ ຫຼື ສະຖານທີ່ ທີ່ເປັນບ່ອນກຳເນີ ເມື່ອມີການກຳນົດ ຢູ່ໃນ ມາດຕາ 26 ຂອງ ລະບຽບການ ວ່າດ້ວຍອາຫານ ຂອງ EU. |

### ສ່ວນປະສົມ ແລະ ອົງປະກອບທີ່ກ່ຽວຂ້ອງ

| | |
|---|---|
| **ລາຍຊື່ສ່ວນປະສົມ ທີ່ນຳໜ້າດ້ວຍ ຄຳວ່າ "ingredients"** | ▪ ລາຍຊື່ ຕ້ອງນຳໜ້າ ດ້ວຍຄຳວ່າ "ingredients".<br>▪ ຕ້ອງກຳນົດ ໝົດທຸກສ່ວນປະສົມ (ລວມທັງ ສານເຕີມແຕ່ງ) ເປັນລຳດັບແຕ່ໃຫຍ່ຫານ້ອຍ ຂອງ ນ້ຳໜັກ ຕາມທີ່ໄດ້ບັນທຶກ ໃນເວລາ ການນຳໃຊ້ຂອງມັນ ໃນການຜະລິດ ແລະ ກຳນົດ ໂດຍ ຊື່ສະເພາະ ຂອງພວກມັນ.<br>▪ ໃນກໍລະນີ ຜະລິດຕະພັນ ທີ່ອາດສາມາດ ປະກອບມີ ສ່ວນປະສົມ ທີ່ຮັບຜິດຊອບຕໍ່ ກໍລະນີເກີດມີການແພ້ ຫຼື ທົນບໍ່ໄຫວ, ຕາມທີ່ມີລາຍຊື່ ຢູ່ໃນ ເອກະສານຊ້ອນທ້າຍ II ຂອງ ລະບຽບການ ວ່າດ້ວຍຂໍ້ມູນຂ່າວສານດ້ານອາຫານ ຂອງ EU, ການຊີ້ບອກທີ່ຈະແຈ້ງ ຕ້ອງໄດ້ມີຢູ່ໃນ ການສະຫຼາກ ດ້ວຍຄຳສັບ "contains", ທີ່ຕາມດ້ວຍ ຊື່ ຂອງສ່ວນປະສົມ. ເຖິງຢ່າງໃດກໍ່ຕາມ, ການຊີ້ບອກນີ້ ແມ່ນບໍ່ຈຳເປັນ ເມື່ອຊື່ສະເພາະ ຖືກລວມຢູ່ໃນ ລາຍຊື່ ຂອງ ສ່ວນປະສົມ. |




| | |
|---|---|
| **ປະລິມານສ່ວນປະສົມ** | ▪ ປະລິມານສ່ວນປະສົມໃດໜຶ່ງ ຫຼື ປະເພດສ່ວນປະສົມ ຕ້ອງໄດ້ຮັບສະໜອງ ເມື່ອມັນ:<br>▪ ປະກົດຢູ່ໃນຊື່ ຂອງ ອາຫານ; ຫຼື<br>▪ ທີ່ໂດຍປົກກະຕິ ມີສາຍພົວພັນກັບ ຊື່ດັ່ງກ່າວ ໂດຍຜູ້ບໍລິໂພກ; ຫຼື<br>▪ ມີການເນັ້ນໜັກ ຢູ່ໃນການຕິດສະຫຼາກ ເປັນຂໍ້ຄວາມ, ຮູບພາບ ຫຼື ພາບກຣາບຟິກ; ຫຼື<br>▪ ມີຄວາມຈຳເປັນ ທີ່ຈະກຳນົດລັກສະນະ ອາຫານ ແລະ ສ້າງຄວາມແຕກຕ່າງໃຫ້ມັນ ກັບຜະລິດຕະພັນ ທີ່ມັນອາດຈະສັບສົນ ຍ້ອນ ຊື່ ຫຼື ຮູບລັກສະນະ ຂອງມັນ. |
| **ປະລິມານສຸດທິ ຂອງອາຫານ ທີ່ຖືກຫຸ້ມຫໍ່ລ່ວງໜ້າ** | ▪ ຕ້ອງສະໜອງເປັນຫົວໜ່ວຍວັດແທກມາດຕະຖານ ສຳລັບຂອງແຫຼວ (ເປັນລິດ, ຊັງຕີລິດ ຫຼື ມີລີລິດ) ແລະ ສຳລັບອັນທີ່ບໍ່ແມ່ນຂອງແຫຼວ (ເປັນກິໂລກຼາມ ຫຼື ກຼາມ). |
| **ຄວາມປຸກຂອງເຫຼົ້າ** | ▪ ຊີ້ບອກ ຄວາມປຸກ ຂອງເຫຼົ້າທີ່ໄດ້ຮັບ ສຳລັບ ເຄື່ອງດື່ມ ທີ່ບັນຈຸ ປໍລິມາດທາດເຫຼົ້າ ຫຼາຍກວ່າ 1.2%. |
| **ລາຍລະອຽດ ທາງໂພສະນາການ** | ▪ ແຈ້ງຂໍ້ມູນທາງໂພສະນາການ. |

## ຄຳແນະນຳ ກ່ຽວກັບ ການນຳໃຊ້

| | |
|---|---|
| **ອາຍຸ** | ▪ ວັນທີຕ່ຳສຸດ ຂອງອາຍຸ ທີ່ປະກອບດ້ວຍ ວັນ, ເດືອນ ແລະ ປີ ທີ່ຈັດລຽງແບບນັ້ນ; ແລະ<br>▪ ນຳໜ້າດ້ວຍຄຳສັບ "best before" ຫຼື "best before end" ຫຼື "Use by" ວັນທີ ສຳລັບສິນຄ້າທີ່ ເນົ່າເສຍງ່າຍ. |
| **ການເກັບຮັກສາ** | ▪ ທຸກສະພາບເງື່ອນໄຂ ການເກັບຮັກສາ ແບບພິເສດ ແລະ/ຫຼື ສະພາບເງື່ອນ ຂອງ ການນຳໃຊ້. |
| **ຄຳແນະນຳ ກ່ຽວກັບ ການນຳໃຊ້** | ▪ ຄຳແນະນຳ ສຳລັບ ການນຳໃຊ້ ເມື່ອມັນອາດຈະມີຄວາມຫຍຸ້ງຍາກ ທີ່ຈະທຳການນຳໃຊ້ຢ່າງເໝາະສົມ ສຳລັບ ອາຫານ ຖ້າຫາກຂາດຄຳແນະນຳດັ່ງກ່າວ. |

## ຂໍ້ກຳນົດ ແບບບັງຄັບ ສຳລັບອາຫານບາງປະເພດ

| | |
|---|---|
| **ອາຫານບາງຢ່າງ ແມ່ນຢູ່ພາຍໃຕ້ ຂໍ້ບັງຄັບເພີ່ມຕື່ມ ໂດຍສະເພາະ ທີ່ຕ້ອງຖືກລວມຢູ່ໃນການຕິດສະຫຼາກ** | ▪ ອັນສະເພາະ ທີ່ຈະລວມເອົາ ແມ່ນ ມີລາຍລະອຽດ ຢູ່ໃນ ເອກະສານຊ້ອນທ້າຍ III ຂອງ ລະບຽບການ ວ່າດ້ວຍຂໍ້ມູນຂ່າວສານ ດ້ານອາຫານ ຂອງ EU.[277] |
| | ອາຫານ ໄດ້ກອນເອົາ:<br>▪ ອາຫານ ທີ່ຖືກຫຸ້ມຫໍ່ ດ້ວຍອາຍແກັດບາງປະເພດ;<br>▪ ອາຫານ ທີ່ປະກອບດ້ວຍສານທີ່ເຮັດໃຫ້ຫວານ;<br>▪ ອາຫານ ທີ່ປະກອບດ້ວຍ ອາຊິດ *glycyrrhizic* ຫຼື ເກືອ *ammonium* ຂອງມັນ;<br>▪ ເຄື່ອງດື່ມ ທີ່ມີສ່ວນປະສົມຂອງຄາເຟອີນສູງ ຫຼື ອາຫານ ທີ່ໄດ້ເພີ່ມສານຄາເຟອີນ;<br>▪ ອາຫານ ທີ່ເພີ່ມສານ phytosterols, phytosterol esters, phytostanols ຫຼື phytostanol esters; ແລະ |

- ຊີ້ນແຊ່ແຂງ, ການກະກຽມຊີ້ນແຊ່ແຂງ ແລະ ຜະລິດຕະພັນການປະມົງແຊ່ແຂງ ທີ່ບໍ່ທັນໄດ້ປຸງແຕ່ງ.

ລາຍລະອຽດທີ່ຕັ້ງ:

- ຂໍ້ກໍານົດສະເພາະເຫຼົ່ານີ້ ຕ້ອງປະກົດ ຢູ່ເທິງການຫຸ້ມຫໍ່ ຫຼື ຢູ່ເທິງ ກາສະຫຼາກ ທີ່ຄັດຕິດກັບ ອາຫານ ທີ່ຖືກຫຸ້ມຫໍ່ລ່ວງໜ້າ.
- ໃນກໍລະນີ ຂອງ ອາຫານທີ່ຖືກຫຸ້ມຫໍ່ລ່ວງໜ້າ ທີ່ຕັ້ງໃຈ ສໍາລັບ ຜູ້ຂາຍອາຫານ ແກ່ ມວນຊົນ (ນັ້ນກໍຄື ອາຫານ ທີ່ຂາຍເປັນຈໍານວນຫຼາຍ), ຂໍ້ກໍານົດສະເພາະ ໃນການຕິດສະຫຼາກແບບບັງຄັບ ຕ້ອງໄດ້ປະກົດຢູ່ບົນ ເອກະສານການຄ້າ ໃນຄະນະທີ່ຊື່ ທີ່ໃຊ້ຂາຍ, ວັນທີຂອງອາຍຸ ຫຼື Usce-by date, ແລະ ຊື່ຜູ້ຜະລິດ ຕ້ອງປະກົດ ຢູ່ບົນການຫຸ້ມຫໍ່ທາງນອກ.

### c) ຂໍ້ກໍານົດສະເພາະອື່ນໆ ກ່ຽວກັບ ການຕິດສະຫຼາກ

**ນອກຈາກກົດລະບຽບທົ່ວໄປຂ້າງເທິງແລ້ວ, ຍັງມີກົດລະບຽບສະເພາະອື່ນ ສໍາລັບ ຜະລິດຕະພັນ ແລະ ປະເພດຂໍ້ມູນສະເພາະໃດ**ໜຶ່ງ, ດັ່ງລາຍລະອຽດຢູ່ລຸ່ມນີ້.

**ສິ່ງມີຊີວິດ ທີ່ຖືກດັດແກ້ພັນທຸກໍາ**

- ຜະລິດຕະພັນ ທີ່ປະກອບດ້ວຍ, ຫຼື ປະກອບມີສິ່ງມີຊີວິດ ທີ່ຖືກດັດແກ້ພັນທຸກໍາ (GMOs) ແລະ ຜະລິດຕະພັນອາຫານ ທີ່ໄດ້ຮັບຈາກ GMO, ຊຶ່ງໄດ້ຮັບສິດ ໃຫ້ວາງຂາຍ ໃນຕະຫຼາດ EU, ແມ່ນຢູ່ພາຍໃຕ້ ຂໍ້ກໍານົດ ຫຼື ຄວາມຕ້ອງການ ກ່ຽວກັບ ການຕິດສະຫຼາກ.[278]
- ໃນກໍລະນີ ຜະລິດຕະພັນທີ່ຖືກຫຸ້ມຫໍ່ລ່ວງໜ້າ, ຜູ້ປະກອບທຸລະກິດ ແມ່ນຈະຖືກຮຽກຮ້ອງໃຫ້ກ່າວໃນສະຫຼາກວ່າ "**ຜະລິດຕະພັນນີ້ ປະກອບດ້ວຍ ສິ່ງມີຊີວິດ ທີ່ຖືກດັດແກ້ພັນທຸກໍາ**". ຂໍ້ຜູກມັດ ໃນການຕິດສະຫຼາກນີ້ ຍັງມີຜົນນໍາໃຊ້ກັບ ຜະລິດຕະພັນທີ່ຖືກກັ່ນຕອງສູງ (***ເຊັ່ນ*** ນໍ້າມັນທີ່ໄດ້ຮັບຈາກ ສາລີທີ່ຖືກດັດແປງພັນທຸກໍາ), ລວມທັງສານເຕີມແຕ່ງ ແລະ ເຄື່ອງປຸງ ທີ່ຖືກດັດແປງພັນທຸກໍາ.

**ການຕິດສະຫຼາກ ສະເພາະອາຫານໃດໜຶ່ງ ສໍາລັບ ນໍາໃຊ້ໃນທາງໂພສະນາການ ເຊັ່ນ ອາຫານເດັກນ້ອຍ, ອາຫານການກິນ ສໍາລັບ ຈຸດປະສົງທາງການແພດ ແບບພິເສດ, ອາຫານສໍາລັບຫຼຸດນໍ້າໜັກ ແລະ ອາຫານ ສໍາລັບ ນັກກິລາ[279]**

- ນອກຈາກ ບັນດາກົດລະບຽບ ທີ່ມີຜົນນໍາໃຊ້ ກັບ ອາຫານ ໂດຍທົ່ວໄປແລ້ວ, ຂໍ້ກໍານົດສະເພາະຕ່າງໆ (ເຊັ່ນ ການແຈ້ງ ຄ່າພະລັງງານ, ຄາໂບໄຮເດຣດ, ໂປຣຕີນ ແລະ ສ່ວນປະກອບຂອງໄຂມັນ ແລະ ອື່ນໆ) ຂອງ ກົດໝາຍ EU ເກີດຂຶ້ນ ສໍາລັບກຸ່ມ ຂອງ **ອາຫານ ສໍາລັບ ນໍາໃຊ້ສະເພາະທາງໂພສະນາການ.** ຜະລິດຕະພັນເຫຼົ່ານີ້ ຕ້ອງເໝາະສົມ ສໍາລັບ ຈຸດປະສົງທາງໂພສະນາການ ຂອງພວກມັນ ແລະ ທໍາການຕະຫຼາດ ໃນລັກສະນະ ທີ່ຊີ້ໃຫ້ເຫັນ ຄວາມເໝາະສົມຂອງພວກມັນ.
- ກົດໝາຍ EU ກໍານົດກົດລະບຽບ ກ່ຽວກັບອົງປະກອບ ແລະ ການຕິດສະຫຼາກ ທົ່ວໄປ, ແລະ ຕ້ອງການໃຫ້ ຄະນະກໍາມະການ ຮັບຮອງ, ຜ່ານທາງ ກົດໝາຍຕົວແທນ, ກົດລະບຽບວ່າດ້ວຍ ອົງປະກອບ ແລະ ການຕິດສະຫຼາກສະເພາະ ສໍາລັບ, ດັ່ງຕໍ່ໄປນີ້: 1) ສູດສໍາລັບເດັກແດງ ແລະ ຕໍ່ເນື່ອງ; 2) ອາຫານຈາກພືດແປຮູບ ແລະ ອາຫານສໍາລັບເດັກແດງ ອື່ນໆ; 3) ອາຫານ ສໍາລັບຈຸດປະສົງ ທາງການແພດແບບພິເສດ; ແລະ 4) ການທົດແທນອາຫານທັງໝົດ ເພື່ອການຄວບຄຸມນໍ້າໜັກ.
- ຢູ່ໃນເນື້ອໃນນີ້, ມີການໃຫ້ຄໍາແນະນໍາ ດັ່ງຕໍ່ໄປນີ້:

a) **ສູດສໍາລັບເດັກແດງ ແລະ ຕໍ່ເນື່ອງ:** ກົດໝາຍ ຂອງ EU ສະໜອງ ຂໍ້ກໍານົດ ຫຼື ຄວາມຕ້ອງການດ້ານການຕິດສະຫຼາກແບບສະເພາະເຈາະຈົງ ທີ່ພົວພັນກັບ ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານອົງປະກອບ ແລະ ຂໍ້ມູນ ແບບສະເພາະເຈາະຈົງ.[280]

b) **ອາຫານ ສໍາລັບ ຫຼຸດນໍ້າໜັກ:** ກົດໝາຍ ຂອງ EU ກໍານົດ ກົດລະບຽບເພີ່ມຕື່ມ ກ່ຽວກັບການຕິດສະຫຼາກ ສໍາລັບອາຫານ ທີ່ຕັ້ງໃຈ ສໍາລັບ ນໍາໃຊ້ ໃນອາຫານທີ່ຈໍາກັດພະລັງງານ ສໍາລັບຫຼຸດນໍ້າ

| | |
|---|---|
| | ໜັກ.[281] ກົດລະບຽບ ຂອງ ຄຳແນະນຳ 96/8/EC ຍັງຄົງມີຜົນນຳໃຊ້ ຈົນກວ່າ ກົດໝາຍຕົວແທນ ສະບັບໃໝ່ ໄດ້ຖືກຮັບຮອງ ໂດຍ ຄະນະກຳມະການ ເອີຣົບ.<br>c) **ອາຫານ ສຳລັບ ຈຸດປະສົງທາງການແພດ ແບບພິເສດ:** ກົດໝາຍ ຂອງ EU ວ່າດ້ວຍ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານອົງປະກອບ ແລະ ຂໍ້ມູນສະເພາະ ສຳລັບ ອາຫານ ເພື່ອຈຸດປະສົງທາງການແພດ ແບບພິເສດ ສະໜອງ ຂໍ້ກຳນົດ ຫຼື ຄວາມຕ້ອງການແບບສະເພາະເຈາະຈົງ ສຳລັບ ການຕິດສະຫຼາກ ແກ່ ອາຫານດັ່ງກ່າວ.[282]<br><br>*ກ່ຽວກັບ ການຂາດ ຫຼື ການມີໂປຼຕີນຈາກທັນຍາຫານ* (Gluten) *ທີ່ຫຼຸດລົງ ຢູ່ໃນອາຫານ, ກົດໝາຍ ຂອງ* EU *ກຳນົດ ເງື່ອນໄຂ ພາຍໃຕ້ວ່າ ອາຫານໃດ ສາມາດໄດ້ຮັບການຕິດສະຫຼາກ ວ່າ* "ບໍ່ມີກູເຕັນ (gluten-free')" ຫຼື "ມີກູເຕັນຕ່ຳຫຼາຍ (very low gluten')":<br><br>▪ *"ຂໍ້ຄວາມ 'gluten-free' ອາດຈະຖືກຂຽນຂຶ້ນສະເພາະ ເມື່ອອາຫານ ທີ່ຈະຂາຍໃຫ້ ຜູ້ບໍລິໂພກຄົນສຸດທ້າຍ ປະກອບດ້ວຍ ກູເຕັນ ບໍ່ເກີນ 20 mg/kg."*<br>▪ *"ຂໍ້ຄວາມ 'very low gluten' ອາດຈະຖືກຂຽນຂຶ້ນສະເພາະ ເມື່ອອາຫານ, ທີ່ປະກອບດ້ວຍ ຫຼື ປະກອບມີ ໜຶ່ງ ຫຼື ຫຼາຍກວ່າໜຶ່ງ ສ່ວນປະສົມ ທີ່ເຮັດມາຈາກ ສາລີ, ເຂົ້າ rye, ເຂົ້າ barley, ໂອດ ຫຼື ແນວພັນປະສົມ ຂອງພວກມັນ ທີ່ໄດ້ຖືກປຸງແຕ່ງ ພິເສດ ເພື່ອຫຼຸດຜ່ອນ ສ່ວນປະກອບ ທີ່ມີກູເຕັນ, ປະກອບມີກູເຕັນ, ບໍ່ເກີນ 100 mg/kg ຢູ່ໃນອາຫານ ທີ່ຈະຂາຍໃຫ້ ຜູ້ບໍລິໂພກຄົນສຸດທ້າຍ."*[283]<br>  ▪ ກ່ຽວກັບ ການເພີ່ມສານຕ່າງໆ ສຳລັບ ຈຸດປະສົງສະເພາະໂພສະນາການ, ກົດໝາຍ ຂອງ EU ກຳນົດ ບັນຊີລາຍຊື່ດຽວ ຂອງ EU ກ່ຽວກັບ ບັນດາ**ສານຕ່າງໆ ທີ່ສາມາດຖືກເພີ່ມໃສ່ໃນອາຫານ ສຳລັບກຸ່ມພິເສດ**.[284] |
| **ການຕິດສະຫຼາກ ສານເຕີມແຕ່ງ ແລະ ເຄື່ອງປຸງ** | ▪ **ສານເຕີມແຕ່ງ ແລະ ເຄື່ອງປຸງ ທຸກຄັ້ງ ຕ້ອງຖືກຕິດກາສະຫຼາກ ໃສ່ໃນບັນຈຸພັນ ຂອງ ຜະລິດຕະພັນອາຫານ ຕາມປະເພດ ຂອງພວກມັນ** (ເຊັ່ນ ສານຕ້ານອະນຸມູນອິດສະຫຼະ, ສານກັນບູດ ຫຼື ສີອາຫານ, ແລະ ອື່ນໆ).<br>▪ ຂໍ້ກຳນົດ ເພີ່ມຕື່ມ ວ່າດ້ວຍ ການຕິດສະຫຼາກ ສານເຕີມແຕ່ງ ທີ່ຈະຖືກຂາຍໃຫ້ຜູ້ຜະລິດອາຫານ ແລະ ຜູ້ບໍລິໂພກ ແມ່ນຖືກກຳນົດ ຢູ່ໃນກົດໝາຍ ຂອງ EU.[285] |
| **ການຕິດສະຫຼາກ ວັດສະດຸ ທີ່ສຳພັດກັບອາຫານ** | ▪ **ວັດສະດຸ ທີ່ຕັ້ງໃຈເຂົ້າມາສຳພັດກັບອາຫານ**, ທີ່ລວມມີ ວັດສະດຸຫຸ້ມຫໍ່ ແລະ ເຄື່ອງບັນຈຸ, ຕ້ອງໄດ້ຮັບການຕິດສະຫຼາກ "for food contact" ຫຼື ຕ້ອງໄດ້ມີເຄື່ອງໝາຍ ຕໍ່ໄປນີ້ ທີ່ມີຮູບຈອກແກ້ວ ແລະ ສ້ອມ ຕາມທີ່ກຳນົດ ຢູ່ໃນ ກົດໝາຍ ຂອງ EU.[286]<br> |
| **ຂໍ້ມູນເພີ່ມຕື່ມ ສຳລັບ ອາຫານ ທີ່ສະໜອງໃຫ້ ດ້ວຍຄວາມສະໝັກໃຈ** | ▪ ນອກຈາກກົດລະບຽບ ແບບບັງຄັບແລ້ວ, ຍັງມີຂໍ້ມູນເພີ່ມຕື່ມ ທີ່ຜູ້ຜະລິດອາຫານ ສາມາດລວມເຂົ້ານຳ ບົນພື້ນຖານຄວາມສະໝັກໃຈ, ໂດຍທີ່ວ່າ ມັນຖືກຕ້ອງແມ່ນຍຳ ແລະ ບໍ່ໃຫ້ຜູ້ບໍລິໂພກເຂົ້າໃຈຜິດ.<br>▪ ຍົກຕົວຢ່າງ, ການອ້າງໂພສະນາການ ແລະ ສຸຂະພາບ ຕ້ອງໄດ້ປະຕິບັດຕາມ ລະບຽບການ (EC) **ເລກທີ.** 1924/2006 **ຂອງ ລັດຖະສະພາ ແລະ ສະພາເອີຣົບ, ລົງວັນທີ** 20 **ທັນວາ** 2006 **ວ່າດ້ວຍ ການອ້າງໂພສະນາການ ແລະ ສຸຂະພາບ ທີ່ສ້າງຂຶ້ນ ຕໍ່ກັບອາຫານ**.[287] |

*ສຳລັບຂໍ້ມູນເພີ່ມຕື່ມ ກ່ຽວກັບ ອາຫານ ແລະ ຜະລິດຕະພັນກະສິກຳ ທີ່ໄດ້ຜ່ານການປຸງແຕ່ງ:*
*ຄະນະກຳມະການ ເອີຣົບ ສະໜອງ ຂໍ້ມູນລະອຽດ ກ່ຽວກັບ ແລະ ສຳລັບ ອຸດສາຫະກຳ ອາຫານ ແລະ ຜະລິດຕະພັນກະສິກຳ ທີ່ໄດ້ຜ່ານການປຸງແຕ່ງ ຢູ່ໃນເວັບໄຊ ຂອງ ຄະນະກຳມະການເອງ:*

*https://ec.europa.eu/growth/sectors/food_en; and*
*https://ec.europa.eu/growth/sectors/food/processed-agricultural-products_en.*

## V. ກົດລະບຽບທົ່ວໄປ ທີ່ຄວບຄຸມ ຜະລິດຕະພັນປອດສານພິດ

### a) ກົດລະບຽບທົ່ວໄປ ທີ່ຄວບຄຸມ ຜະລິດຕະພັນປອດສານພິດ

*ກົດລະບຽບທົ່ວໄປ ກ່ຽວກັບ ຜະລິດຕະພັນກະສິກຳປອດສານພິດ, ທີ່ລວມມີ ສັດນໍ້າທີ່ລ້ຽງ ແລະ ເຊື້ອໂປ່ມ, ແມ່ນຢູ່ພາຍໃຕ້ ກົດລະບຽບ* (EU) 2018/848 *ຂອງ ລັດຖະສະພາ ແລະ ສະພາເອີຣົບ, ລົງວັນທີ* 30 *ພຶດສະພາ* 2018 *ວ່າດ້ວຍ ການຜະລິດແບບປອດສານພິດ ແລະ ການຕິດສະຫຼາກ ຜະລິດຕະພັນປອດສານພິດ.*

ຜະລິດຕະພັນ ທີ່ມາຈາກ ປະເທດທີ່ຢູ່ນອກສະຫະພາບເອີຣົບ ສາມາດຖືກວາງຂາຍໄດ້ ຢູ່ໃນ ຕະຫຼາດ EU ໃນນາມເປັນສິນຄ້າປອດສານພິດ, ຕາບໃດທີ່ ພວກມັນ ຖືກຕ້ອງຕາມ ນິຕິກຳທີ່ກ່ຽວຂ້ອງ ຂອງ EU ແລະ ຖ້າພວກມັນ ຢູ່ພາຍໃຕ້ ການຄວບຄຸມ ແລະ ຖ້າ ກົດລະບຽບທີ່ທຽບເທົ່າກັນ ທີ່ມີຜົນບັງຄັບໃຊ້ ໃນປະເທດທີສາມນັ້ນ ໄດ້ຖືກຮັບຮູ້ໂດຍ EU.[288] ການຄວບຄຸມ ສາມາດຖືກດຳເນີນໄດ້ ໂດຍ ອົງການທີ່ຖືກຮັບຮູ້ໂດຍ EU ຫຼື, ໃນບາງກໍລະນີ, ໂດຍອົງການຈັດຕັ້ງ ຢູ່ໃນປະເທດແຫຼ່ງກຳເນີດ.

### *ບັນດາກົດລະບຽບ ຂອງ EU ວ່າດ້ວຍ ການເຮັດກະສິກຳປອດສານພິດ ກວມເອົາທຸກຂັ້ນ ຂອງ ຂະບວນການຜະລິດ*

ນີ້ໝາຍຄວາມວ່າ ກົດລະບຽບ ມີຜົນບັງຄັບໃຊ້ໄດ້ ກັບໝົດທຸກຂັ້ນຕອນ ນັບຕັ້ງແຕ່ແກ່ນ ຈົນເຖິງ ອາຫານທີ່ໄດ້ຮັບການປຸງແຕ່ງຂັ້ນສຸດທ້າຍ. ໂດຍສະເພາະ, ກົດລະບຽບ ມີຜົນບັງຄັບໃຊ້ກັບ:

- ຜະລິດຕະພັນກະສິກຳ ທີ່ຍັງມີຊີວິດຢູ່ ຫຼື ບໍ່ໄດ້ຜ່ານການປຸງແຕ່ງ, ລວມທັງ ແກ່ນ ແລະ ວັດສະດຸການຈະເລີນພັນ ຂອງ ພືດຊະນິດອື່ນໆ;
- ຜະລິດຕະພັນກະສິກຳ ທີ່ໄດ້ຜ່ານການປຸງແຕ່ງ ສຳລັບນຳໃຊ້ເປັນອາຫານ;
- ອາຫານສັດ.[289]

ເອກະສານຊ້ອນທ້າຍ I ຂອງ ລະບຽບການ (EU) 2018/848 ກຳນົດ ລາຍຊື່ຜະລິດຕະພັນອື່ນໆ ນອກເໜືອຈາກ ອັນທີ່ໄດ້ກຳນົດໄວ້ໃນມາດຕາ 2 (1) ທີ່ຍັງສາມາດ ໄດ້ຮັບການຢັ້ງຢືນວ່າ ປອດສານພິດ, ທີ່ນຳສະເໜີ ສິ່ງແປກໃໝ່ ເມື່ອສົມທຽບກັບ ລະບຽບການ ວ່າດ້ວຍ ຜະລິດຕະພັນປອດສານພິດ ທີ່ຜ່ານມາ ຂອງ ສະຫະພາບເອີຣົບ. *ໃນຈຳນວນສິ່ງອື່ນໆ*, ບັນຊີລາຍຊື່ ປະກອບມີ, ເຊື້ອໂປ່ມ, ມາເຕ (mate), ໃບຂອງເຂືອ, ໃຈຕົ້ນປາມ, ໜໍ່ຫ້ອບ, ຮັງໜອນໄໝ, ຢາງທຳມະຊາດ ແລະ ນໍ້າມັນຍາງ, ນໍ້າມັນທີ່ສະກັດຈາກທຳມະຊາດ, ໄມ້ອັດຜາວາຍ, ຝ້າຍດິບ, ຂົນແກະດິບ, ໜັງດິບ ແລະ ການກຽມສະໝຸນໄພແບບດັ້ງເດີມຈາກພືດ.

ການຜະລິດແບບປອດສານພິດ ບໍ່ລວມເອົາ ຜະລິດຕະພັນ ທີ່ມາຈາກ ການຫາປາ ແລະ ການລ່າສັດຈາກປ່າ ແຕ່ກວມເອົາ ການເກັບກ່ຽວພືດປ່າ ເມື່ອມີການເຄົາລົບ ບາງສະພາບເງື່ອນໄຂ ທີ່ຢູ່ອາໄສທາງທຳມະຊາດ.[290] ກົດລະບຽບອັນສະເພາະ ແມ່ນໄດ້ຖືກສ້າງຂຶ້ນ ສຳລັບສັດລ້ຽງນໍ້າ.

### *ບັນດາຫຼັກການຕົ້ນຕໍ ທີ່ຄວບຄຸມ ການຜະລິດແບບປອດສານພິດ ຢູ່ໃນ EU*

ກົດລະບຽບ ທີ່ຄວບຄຸມ ການຜະລິດແບບປອດສານພິດ ຢູ່ໃນສະຫະພາບເອີຣົບ ແມ່ນອີງໃສ່ ຫຼັກການສຳຄັນ ຫຼາຍຢ່າງ, ຊຶ່ງລວມມີ:

- ຫ້າມນຳໃຊ້ ສິ່ງທີ່ມີຊີວິດທີ່ຖືກດັດແກ້ພັນທຸກຳ (GMO);[291]
- ຫ້າມນຳໃຊ້ ລັງສີໄອອອນໄນຊິງ (Ionizing radiation);[292]
- ຂໍ້ຈຳກັດ ໃນການນຳໃຊ້ ປຸ໋ຍທຽມ, ຢາຂ້າຫຍ້າ ແລະ ຢາປາບສັດຕູພືດ;[293]

- ຫ້າມນຳໃຊ້ ສານຮໍໂມນ ແລະ ຂໍ້ຈຳກັດ ໃນການໃຊ້ຢາຕ້ານເຊື້ອ ເມື່ອມີຄວາມຈຳເປັນ ຕໍ່ ສຸຂະພາບສັດ.[294]

ສິ່ງດັ່ງກ່າວນີ້ ໝາຍຄວາມວ່າ ຜູ້ຜະລິດແບບອິນຊີ ຈຳເປັນຕ້ອງໄດ້ຍອມນຳໃຊ້ ວິທີການທີ່ແຕກຕ່າງກັນ ເພື່ອຮັກສາ ຄວາມອຸດົມສົມບູນຂອງດິນ ແລະ ສຸຂະພາບ ຂອງ ສັດ ແລະ ພືດ, ທີ່ສາມາດລວມເອົາ:

- ການປູກພືດແບບໝູນວຽນ;[295]
- ການໄຖ ແລະ ການປະຕິບັດການປູກ ທີ່ຮັກສາ ຫຼື ເພີ່ມຄວາມອຸດົມສົມບູນຂອງດິນ;[296]
- ຫ້າມນຳໃຊ້ ປຸ໋ຍ ໄນເນີໂຣໄນໂຕຣເຈັນ (Mineral nitrogen fertilizers);[297]
- ຕົວເລືອກ ແນວພັນ ແລະ ສາຍພັນທີ່ທົນທານ ພ້ອມທັງ ເຕັກນິກການຊຸກຍູ້ ການຄວບຄຸມ ສັດຕູພືດ ແລະ ຫຍ້າທຳມະຊາດ;[298]
- ຊຸກຍູ້ ພູມຄຸ້ມກັນທຳມະຊາດ ຂອງສັດ;[299]
- ປ້ອງກັນຈາກ ການເກັບສັດໄວ້ບ່ອນດຽວຫຼາຍເກີນໄປ.[300]

## *ກົດລະບຽບສະເພາະ ສໍາລັບ ການວາງຂາຍ ສັດລ້ຽງປອດສານພິດ ໃນ* EU

ກົດລະບຽບສະເພາະ ກໍຍັງໄດ້ຖືກສ້າງຂຶ້ນ ສຳລັບຊາວກະສິກອນ ທີ່ຕ້ອງການວາງຂາຍ ສັດລ້ຽງປອດສານພິດ ຢູ່ໃນ ສະຫະພາບເອີຣົບ, ລວມທັງ:

- ສັດທີ່ຖືກລ້ຽງ ແບບບໍ່ປອດສານພິດ ອາດບໍ່ສາມາດຖືກນຳເຂົ້າໄປໃນອະນາເຂດໄດ້, ເວັ້ນເສຍແຕ່ວ່າ ເພື່ອຈຸດປະສົງການປັບປຸງພັນ ແລະ ພວກມັນ ກໍຖືກຕ້ອງຕາມ ກົດລະບຽບອັນສະເພາະເທົ່ານັ້ນ (ຂໍ້ 1.3.4. ຂອງ ພາກທີ II ຂອງ ເອກະສານຊ້ອນທ້າຍ II ຂອງ ລະບຽບການ (EU) 2018/848);
- ອາຫານສັດ ຄວນໄດ້ຮັບມາຈາກຟາມ ບ່ອນທີ່ລ້ຽງສັດ ຫຼື ຈາກຟາມ ທີ່ຢູ່ໃນຂົງເຂດດຽວກັນ ເປັນຫຼັກ;[301]
- ການຕັດລວກສັດ ແລະ/ຫຼື ການໂອນຕົວອ່ອນ ແມ່ນຖືກຫ້າມ ຢ່າງເດັດຂາດ;[302]
- ສານກະຕຸ້ນການຈະເລີນເຕີບໂຕ ແລະ ກົດອະມິໂນສັງເຄາະ ແມ່ນຖືກຫ້າມບໍ່ໃຫ້ໃຊ້;[303]
- ສັດລ້ຽງລູກດ້ວຍນໍ້ານົມ ທີ່ຍັງດູດນົມ ຈະຕ້ອງຖືກລ້ຽງດ້ວຍ ນໍ້ານົມຈາກທຳມະຊາດ, ຊຶ່ງດີແທ້ ຕ້ອງເປັນນໍ້ານົມແມ່;[304]
- ຕ້ອງນຳໃຊ້ ວິທີການສືບພັນ ແບບທຳ  ມະຊາດ. ແຕ່ເຖິງຢ່າງໃດກໍ່ຕາມ, ການປະສົມພັນທຽມ ແມ່ນໄດ້ຮັບອະນຸຍາດ;[305]
- ວັດສະດຸປ້ອນອາຫານທີ່ບໍ່ປອດສານພິດ ທີ່ມາຈາກພືດ, ວັດສະດຸປ້ອນອາຫານ ທີ່ມາຈາກສັດ ແລະ ແຮ່ທາດ, ອາຫານເສີມ, ຜະລິດຕະພັນສະເພາະໃດໜຶ່ງ ທີ່ນຳໃຊ້ເຂົ້າໃນໂພຊະນາການສັດ ແລະ ເຄື່ອງຊ່ວຍໃນການປຸງແຕ່ງ ແມ່ນຈະຖືກນຳໃຊ້ ກໍຕໍ່ເມື່ອ ຖ້າພວກມັນ ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ສະເພາະ ເຂົ້າໃນການຜະລິດ ແບບປອດສານພິດ ເທົ່ານັ້ນ;[306]
- ຕ້ອງຍອມປະຕິບັດຕາມ ຫຼັກການສະຫວັດດີການສັດບາງຢ່າງ ຕາມທີ່ໄດ້ກ່າວໄວ້ຂ້າງລຸ່ມນີ້:
- ບຸກຄະລາກອນ ທີ່ຮັກສາສັດ ຕ້ອງມີຄວາມຮູ້ ແລະ ທັກສະພື້ນຖານ ທີ່ຈຳເປັນ ກ່ຽວກັບສຸຂະພາບ ແລະ ຄວາມຕ້ອງການດ້ານຄວາມເປັນຢູ່ ຂອງສັດ;[307]
    - ຄວນເອົາໃຈໃສ່ເປັນພິເສດ ຕໍ່ ສະພາບທີ່ຢູ່ອາໄສ, ການປະຕິບັດການລ້ຽງ ແລະ ຄວາມໜາແໜ້ນ ຂອງສັດ;[308]
    - ຈຳນວນສັດລ້ຽງ ຕ້ອງຖືກຈຳກັດ ເພື່ອຫຼຸດຜ່ອນ ການກິນຫຼາຍເກີນໄປ, ການກັດເຊາະ, ຫຼື ການສ້າງມົນລະພິດທີ່ເກີດຈາກສັດ ຫຼື ໂດຍການກະຈາຍ ຂອງມູນສັດ;[309]
    - ເມື່ອມີຄວາມເປັນໄປໄດ້, ໃຫ້ສັດເຂົ້າເຖິງອາກາດ ແບບປອດໂປ່ງ ຫຼື ທົ່ງຫຍ້າ;[310]
    - ການຜູກສັດ ຫຼື ການແຍກສັດໄປຢູ່ໂດດດ່ຽວ ແມ່ນຈະຖືກຫ້າມ ນອກເໜືອຈາກ ເປັນການແຍກອອກຈາກສັດໂຕໃດໂຕໜຶ່ງ ສຳລັບໄລຍະເວລາຈຳກັດໃດໜຶ່ງ ແລະ ເພື່ອຄວາມເປັນຢູ່ທີ່ດີ, ຄວາມປອດໄພ ຫຼື ເຫດຜົນທາງດ້ານສັດຕະວະແພດ;[311]
    - ບໍ່ອະນຸຍາດໃຫ້ໃຊ້ ສານຮໍໂມນ ຫຼື ສານທີ່ຄ້າຍຄືກັນ, ເວັ້ນເສຍແຕ່ເປັນຮູບແບບການປິ່ນປົວ ທາງສັດຕະວະແພດ ສຳລັບສັດໂຕໃດໂຕໜຶ່ງ;[312]
    - ເມື່ອສັດບໍ່ສະບາຍ, ຜະລິດຕະພັນຢາຂອງສັດຕະວະແພດ ສຳລັບການປິ່ນປົວທົ່ວໄປ, ລວມທັງຢາຕ້ານເຊື້ອ, ສາມາດຖືກນຳໃຊ້ໄດ້ ເມື່ອຈຳເປັນ ແລະ ຢູ່ພາຍໃຕ້ເງື່ອນໄຂທີ່ເຄັ່ງຄັດ. ສິ່ງດັ່ງກ່າວນີ້ ອະນຸຍາດສະເພາະ ເມື່ອມີການເຮັດກາຍະພາບບຳບັດ, ສ່ວນສາດການແພດທຳມະຊາດ ແລະ ຜະລິດຕະພັນອື່ນໆ ແມ່ນບໍ່ເໝາະສົມ;[313] ແລະ
    - ການນຳໃຊ້ຢາສັດຕະວະແພດດ້ານພູມຄຸ້ມກັນ ແມ່ນໄດ້ຮັບອະນຸຍາດ.[314]

## *ບັນດາສານ ທີ່ຖືກນຳໃຊ້ຕໍ່ສູ້ກັບ ສັດຕູພືດ ຫຼື ພະຍາດພືດ ທີ່ຈະຕ້ອງໄດ້ຖືກຮັບຮອງລ່ວງໜ້າ*

- ທຸກສານ ທີ່ຖືກນໍາໃຊ້ ຢູ່ໃນການຜະລິດກະສິກໍາປອດສານພິດ ເພື່ອຕໍ່ສູ້ກັບ ສັດຕູພືດ ຫຼື ພະຍາດພືດ ຕ້ອງໄດ້ຮັບການອະນຸມັດກ່ອນ ຈາກຄະນະກໍາມະການເອີຣົບ.[315]
- *ລາຍລະອຽດເພີ່ມຕື່ມ ແມ່ນຖືກກໍານົດ ຢູ່ໃນລະບຽບການຂອງຄະນະກໍາມະການ* (EC) 889/2007 *ລົງ ວັນທີ* 5 *ກັນຍາ* 2008 *ທີ່ວາງກົດລະບຽບລະອຽດ ສໍາລັບ ການຈັດຕັ້ງປະຕິບັດ ລະບຽບການຂອງສະພາ* (EC) *ເລກທີ*834/2007 *ວ່າດ້ວຍ ການຜະລິດແບບປອດສານພິດ ແລະ ການຕິດສະຫຼາກ ຜະລິດຕະພັນປອດສານພິດ ກ່ຽວກັບ ການຜະລິດແບບປອດສານພິດ, ການຕິດສະຫຼາກ ແລະ ການຄວບຄຸມ.*[316]

- ບັນດາກົດລະບຽບ ທີ່ຢູ່ໃນນີ້ ໃຫ້ຄໍາແນະນໍາ ກ່ຽວກັບ ການອະນຸມັດ ປັດໃຈນໍາເຂົ້າຈາກພາຍນອກ ເຊັ່ນ: ປຸ໋ຍ, ຢາຂ້າແມງໄມ້, ແລະ ສິ່ງເພີ່ມໃສ່ອາຫານ ດັ່ງນັ້ນ ມີພຽງສະເພາະແຕ່ສານ ແລະ ທາດປະສົມ ທີ່ລະບຸໄວ້ໃນບັນຊີລາຍຊື່ ທີ່ຖືກຮັບຮອງ ຢູ່ໃນນິຕິກໍາສະເພາະເທົ່ານັ້ນ ທີ່ສາມາດຖືກນໍາໃຊ້ ເຂົ້າໃນ ການຜະລິດແບບປອດສານພິດ.

### b) ການຕິດສະຫຼາກ ຜະລິດຕະພັນປອດສານພິດ

ມາດຕາ 33 (1) ຂອງ ລະບຽບການ (EU) 2018/848 ອະນຸຍາດໃຫ້ນໍາໃຊ້ໂລໂກ້ປອດສານພິດ ຂອງ EU.

ໂລໂກ້ປອດສານພິດ ຂອງ ສະຫະພາບເອີຣົບ ສາມາດ ຖືກນໍາໃຊ້ ໂດຍ ຜູ້ຜະລິດ ທີ່ຕ້ອງການສົ່ງອອກ ສິນຄ້າຂອງຕົນ ເຂົ້າໄປໃນ ສະຫະພາບເອີຣົບ ເມື່ອ ຜະລິດຕະພັນ ຖືກຕ້ອງຕາມ ກົດລະບຽບ ຂອງ ສະຫະພາບເອີຣົບ ວ່າດ້ວຍ ການນໍາເຂົ້າສິນຄ້າປອດສານພິດ.[317]

ໂລໂກ້ ຕ້ອງສະແດງ ໂດຍອີງຕາມ ບັນດາກົດລະບຽບຕໍ່ໄປນີ້::

- ໂລໂກ້ ຕ້ອງມີຂະໜາດບໍ່ນ້ອຍກວ່າ 13,5 ມມ x 9 ມມ. ໃນກໍລະນີ ທີ່ການຫຸ້ມຫໍ່ມີຂະໜາດນ້ອຍຫຼາຍ ຈົນເຮັດໃຫ້ບໍ່ສາມາດປະຕິບັດຕາມຂະໜາດຕໍ່າສຸດທີ່ກ່າວມາໄດ້, ແມ່ນອະນຸຍາດໃຫ້ໃຊ້ຂະໜາດ 9 ມມ x 6 ມມ.
- ໂລໂກ້ ຕ້ອງຖືກສະແດງອອກ ເປັນ ສີຂຽວ ແລະ ຂາວ ທີ່ເປັນມາດຕະຖານ ຫຼື ເປັນສີຂາວ ແລະ ດໍາ ຖ້າບໍ່ສາມາດນໍາໃຊ້ໂລໂກ້ສີໄດ້.
- ຖ້າສີພື້ນ ຂອງສະຫຼາກ ຫຼື ການຫຸ້ມຫໍ່ນັ້ນມືດ, ສັນຍາລັກຕ່າງໆ ສາມາດຖືກນໍາໃຊ້ ໃນຮູບແບບລົບໄດ້.
- ຖ້າໂລໂກ້ ຖືກນໍາໃຊ້ ເປັນໂລໂກ້ສີ ຢູ່ເທິງພື້ນຫຼັງສີ ທີ່ເຮັດໃຫ້ມັນເບິ່ງເຫັນໄດ້ຍາກ, ສາມາດນໍາໃຊ້ເສັ້ນຂີດອ້ອມໂລໂກ້ໄດ້.
- ຖ້າມີພຽງແຕ່ສີດຽວ ຢູ່ໃນບັນຈຸພັນ, ໂລໂກ້ປອດສານພິດ ສາມາດຖືກນໍາໃຊ້ໄດ້ ໃນສີນັ້ນ.
- ໂລໂກ້ ອາດຈະບໍ່ໃຫ້ເປັນແບບເກົ່າໄກ່ (ເຊັ່ນວ່າ, ການເຮັດໃຫ້ສີພື້ນເປັນສີໄສ ຫຼື ເພີ່ມເອັບເຟັກສາມມິຕິ).

ຂໍ້ມູນເພີ່ມຕື່ມ ກ່ຽວກັບລັກສະນະ ທີ່ໂລໂກ້ປອດສານພິດ ຈະຕ້ອງສະແດງອອກ ແມ່ນກໍານົດໄວ້ ຢູ່ໃນ ຄູ່ມືການນໍາໃຊ້ ວ່າດ້ວຍໂລໂກ້ປອດສານພິດ ຊຶ່ງຖືກຕີແຜ່ ໂດຍ ຄະນະກໍາມະການເອີຣົບ.[318]

### c) ການສົ່ງອອກ ຜະລິດຕະພັນ ປອດສານພິດ ໄປ EU

ພາຍໃຕ້ລະບຽບການ (EU) 2018/848, ຕໍ່ໄປນີ້ ມີຜົນນໍາໃຊ້ ສໍາລັບ ການນໍາເຂົ້າ ຜະລິດຕະພັນປອດສານພິດ:

- ຜະລິດຕະພັນ ທີ່ມາຈາກປະເທດທີສາມ ສາມາດຂາຍໄດ້ ໃນ EU ໃນນາມເປັນຜະລິດຕະພັນປອດສານພິດ ເມື່ອພວກມັນ ຖືກຕ້ອງຕາມກົດລະບຽບ ວ່າດ້ວຍ ການຜະລິດ ແລະ ການຄວບຄຸມ ຂອງ ປະເທດທີ່ຢູ່ນອກ EU ທີ່ຖືກຮັບຮູ້ ພາຍໃຕ້ ສັນຍາການຄ້າ ທີ່ທຽບເທົ່າກັບອັນທີ່ຢູ່ໃນ EU;[319] ແລະ
- ຜະລິດຕະພັນ ທີ່ມາຈາກ ປະເທດທີສາມ ສາມາດຂາຍໄດ້ໃນ EU ໃນນາມເປັນ ຜະລິດຕະພັນປອດສານພິດ ເມື່ອພວກມັນ ມີໃບຢັ້ງຢືນທີ່ອອກໃຫ້ໂດຍ ເຈົ້າໜ້າທີ່ຄວບຄຸມ ຫຼື ອົງການຄວບຄຸມ ທີ່ກ່ຽວຂ້ອງ ຢູ່ໃນ ບັນດາປະເທດທີ່ຢູ່ນອກ EU ໂດຍຢືນຢັນວ່າ ຜະລິດຕະພັນ ຖືກຕ້ອງຕາມ ຕາມມາດຕະຖານ ຂອງ EU.[320]

## vi. ຂໍ້ມູນເພີ່ມຕື່ມ/ທີ່ຢູ່ຕິດຕໍ່ ທີ່ສໍາຄັນ

ສໍາລັບ ຂໍ້ມູນເພີ່ມຕື່ມ, ຫົວໜ່ວຍທຸລະກິດ ສາມາດ ອີງໃສ່ ຫົວໜ່ວຍການຈັດຕັ້ງ/ສະຖາບັນ ທີ່ຕັ້ງຢູ່ໃນ EU:

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| **ສະມາຄົມຜູ້ປຸງແຕ່ງ ໝາກໄມ້ ແລະ ຜັກ ແຫ່ງ ທະວີບເອີຣົບ (PROFEL)** | **PROFEL** ຕິດຕາມ ການພັດທະນາ ບັນດານິຕິກຳ ທີ່ກ່ຽວຂ້ອງກັບ ຂະແໜງການປຸງແຕ່ງ ໝາກໄມ້ ແລະ ຜັກ ແລະ ສະໜອງຊ່ອງທາງ ແລະ ບັດໃຈນຳເຂົ້າ ແກ່ ຜູ້ພັດທະນານິຕິກຳ ແລະ ຜູ້ຕັດສິນໃຈ ຢູ່ໃນ ຄະນະກຳມະການເອີຣົບ, ລັດຖະສະພາເອີຣົບ ແລະ ສະຖາບັນການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງ ທີ່ຢູ່ໃນ ບຣາໂຊ. | Avenue des Nerviens 9-31<br>1040 Brussels<br>Belgium<br><br>ໂທ: +32 2 500 87 59<br>ອີເມວ: profel@profel-europe.eu.Com<br>ເວັບໄຊ: www.profel-europe.eu |
| **ສະຫະພັນ ອຸດສາຫະກຳ ນ້ຳມັນພືດ ແລະ ອາຫານໂປຼຕີນ ແຫ່ງທະວີບເອີຣົບ (FEDIOL)** | **FEDIOL** ແມ່ນເປັນສະຫະພັນ ທີ່ເປັນຕົວແທນ ແກ່ ອຸດສາຫະກຳ ນ້ຳມັນພືດ ແລະ ອາຫານໂປຼຕີນ ຢູ່ໃນ ເອີຣົບ ຈົນເຖິງບັນດາອົງການຈັດຕັ້ງ ຂອງລັດ ແລະ ເອກະຊົນ, ໂດຍສະເພາະບັນດາສະຖາບັນການຈັດຕັ້ງ ຂອງ EU, ແຕ່ກໍຍັງລວມເຖິງບັນດາອົງການຈັດຕັ້ງສາກົນ ແລະ ພາກສ່ວນກ່ຽວຂ້ອງ ເຊັ່ນ ຜູ້ສະໜອງ, ລູກຄ້າ ແລະ ອົງການຈັດຕັ້ງ ທາງສັງຄົມ ໂດຍມີມຸມມອງ ທີ່ຈະຮັບປະກັນ ໃຫ້ມີ ສະພາບແວດລ້ອມທາງທຸລະກິດ ທີ່ເພິ່ງປະສົງ. | Avenue de Tervuren 168<br>1150 Brussels<br>Belgium<br><br>ໂທ: +32 2 771 53 30<br>ອີເມວ: fediol@fediol.eu<br>ເວັບໄຊ: www.fediol.eu |
| **ສະມາຄົມ ຜະລິດຕະພັນສົດ (Freshfel)** | ສະມາຊິກ **Freshfel** ເປັນຕົວແທນ ແກ່ ໝົດທຸກພາກສ່ວນການຄ້າຜະລິດຕະພັນສົດ, ທີ່ລວມທັງການນຳເຂົ້າ, ສົ່ງອອກ, ການຂາຍສົ່ງ, ແຈກຢາຍ ແລະ ຂາຍຍ່ອຍ. ສະມາຊິກ ຂອງສະມາຄົມ ປະກອບມີ ຫົວໜ່ວຍທຸລະກິດ ທີ່ຢູ່ນອກ ແລະ ຢູ່ໃນ EU. | Rue de Trèves 49-51<br>1040 Brussels<br>Belgium<br><br>ໂທ: +32 2 777 15 80<br>ອີເມວ: info@freshfel.org<br>ເວັບໄຊ: www.freshfel.org |
| **ສະຫະພັນກາເຟ ແຫ່ງທະວີບເອີຣົບ (ECF)** | ສະຫະພັນ **European Coffee Federation** (ECF) ເປັນຕົວແທນໃຫ້ແກ່ ການຄ້າກາເຟຂຽວຂອງ ເອີຣົບ, ອຸດສາຫະກຳການຂົ້ວເມັດກາເຟ, ຜູ້ຜະລິດກາເຟ ທີ່ລະລາຍນ້ຳໄດ້ ແລະ ການເອົາສານກາເຟອອກ. ບັນດາບໍລິສັດ ທີ່ເຂົ້າຮ່ວມກຸ່ມຂອງ ECF ເປັນຕົວແທນ ປໍລິມາດນຳເຂົ້າທັງໝົດປະມານ 40 ລ້ານຖົງ, ຫຼື ເທົ່າກັບ ເຄິ່ງໜຶ່ງ ຂອງ ປໍລິມາດການຊື້ຂາຍໃນທົ່ວໂລກ. | Avenue des Nerviens, 9-31<br>1040 Brussels<br>Belgium<br><br>ໂທ: +32 2 549 56 41<br>ອີເມວ: ecf@ecf-coffee.org<br>ເວັບໄຊ: www.ecf-coffee.org |
| **ສະມາຄົມໂກໂກ້ ແຫ່ງທະວີບເອີຣົບ (ECA)** | **ສະມາຄົມໂກໂກ້ ແຫ່ງທະວີບເອີຣົບ** (ECA) ມີພາລະກິດ *ສຶກສາ, ຄົ້ນຄົວ ແລະ ຈັດຕັ້ງປະຕິບັດ ຂໍ້ແກ້ໄຂ ທີ່ພຽງພໍ ຕໍ່ກັບທຸກບັນຫາ ທີ່ສົ່ງຜົນກະທົບ ຕໍ່ ອຸດສາຫະກຳ, ການຄ້າ ແລະ* | Avenue des Gaulois 3<br>1040 Brussels<br>Belgium |

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| | *ການຂົນສົ່ງ ຂອງ ຂະແໜງການໂກໂກ້.* ສະມາຊິກ ECA ມີການເຄື່ອນໄຫວ ຢູ່ໃນຂົງເຂດ ການຄ້າໂກໂກ້, ການຂົນສົ່ງ ແລະ ການປຸງແຕ່ງ ແລະ ການຜະລິດຊັອກໂກແລັດ ເປັນອຸດສາຫະກຳ. | ໂທ: +32 2 662 00 06<br>ອີເມວ: info@eurococoa.com<br>ເວັບໄຊ: www.eurococoa.com |
| **ສະມາຄົມ ເຄື່ອງດື່ມຊາ ແລະ ສະໝຸນໄພ ແຫ່ງເອີຣົບ (THIE)** | **ສະມາຄົມຊາ ແລະ ສະໝຸນໄພ ແຫ່ງເອີຣົບ** (THIE) ແມ່ນເປັນສະມາຄົມ ທີ່ເປັນຕົວແທນ ແກ່ ຜົນປະໂຫຍດ ຂອງ ຜູ້ຜະລິດ ແລະ ຜູ້ປະກອບການ ເຄື່ອງດື່ມຊາ ແລະ ສະໝຸນໄພ ລວມທັງ ການສະກັດຊາ ແລະ ສະໝຸນໄພ ໃນ EU. ຈຸດປະສົງຕົ້ນຕໍ ຂອງສະມາຄົມ ແມ່ນເພື່ອ ສ້າງນະໂຍບາຍອັນດຽວກັນ ທົ່ວເອີຣົບ ທີ່ກ່ຽວຂ້ອງກັບ ການຜະລິດເຄື່ອງດື່ມຊາ ແລະ ສະໝຸນໄພ ແລະ ເພື່ອຮັກສາການຕິດຕໍ່ກັບ ເຈົ້າໜ້າທີ່ EU ແລະ ຕົວແທນ ອົງການຈັດຕັ້ງອື່ນໆ ແລະ ປະສານສົມທົບ ກ່ຽວກັບບທຸກບັນຫາ ທີ່ພົວພັນກັບ ການຄ້າ ແລະ ອຸດສາຫະກຳ ການຜະລິດເຄື່ອງດື່ມ ຊາ ແລະ ສະໝຸນໄພ. | THIE<br>Sonninstraße 28<br>20097 Hamburg<br>Germany<br><br>ໂທ: +49 40 23 60 16- 21<br>ອີເມວ: thie@wga-hh.de<br>ເວັບໄຊ: http://www.thie-online.eu/ |
| **ສະມາຄົມກະແລັມ ແຫ່ງທະວີບເອີຣົບ (Euroglaces)** | **Euroglaces** ເປັນຕົວແທນ ແກ່ ອຸດສາຫະກຳກະແລັມ ຢູ່ໃນເອີຣົບ. ພາລະກິດ ຂອງສະມາຄົມ ແມ່ນເພື່ອເຮັດວຽກ ກ່ຽວກັບ ການສ້າງ ສະພາບແວດລ້ອມລະບຽບການທີ່ໄດ້ປຽບ ສຳລັບ ໝົດທຸກບໍລິສັດ ອຸດສາຫະກຳຜະລິດກະແລັມ ຂອງ ເອີຣົບ ແລະ ກ່ຽວກັບ ການສົ່ງເສີມ ຜົນປະໂຫຍດອັນສະເພາະຂອງອຸດສາຫະກຳກະແລັມ ໃນລະດັບ EU. | Euroglaces<br>c/o FEVIA<br>Rue de la Science 14<br>1040 Brussels<br>Belgium<br><br>ໂທ: +32 (0)2 213 84 78<br>ອີເມວ: info@euroglaces.eu<br>ເວັບໄຊ: www.euroglaces.eu |
| **ສະມາຄົມ FoodDrinkEurope** | **FoodDrinkEurope** ແມ່ນເປັນສະມາຄົມສາກົນ ທີ່ຕັ້ງຢູ່ນະຄອນ ບຣາໂຊ ທີ່ຮັກສາ ການຕິດຕໍ່ ຢ່າງໃກ້ຊິດ ກັບ EU ແລະ ສະຖາບັນການຈັດຕັ້ງສາກົນ. ສະມາຄົມ ແມ່ນເປັນຄູ່ຮ່ວມຕົ້ນຕໍ ຢູ່ໃນ ການປຶກສາຫາລື ກ່ຽວກັບ ໝົດທຸກບັນຫາທີ່ສົ່ງຜົນກະທົບ ຕໍ່ ອຸດສາຫະກຳ ອາຫານ ແລະ ເຄື່ອງດື່ມຂອງ EU. ສະມາຄົມ FoodDrinkEurope ປະສານງານວຽກສຳລັບ ຊ່ຽວຊານ ຫຼາຍກວ່າ 700 ຄົນ ເຖິງແມ່ນວ່າ ຄະນະກຳມະການ ແລະ ກຸ່ມຊ່ຽວຊານ ມີປະມານ 4 ກຸ່ມ: ນະໂຍບາຍອາຫານ ແລະ ຜູ້ບໍລິໂພກ, ຄວາມປອດໄພ ຂອງອາຫານ ແລະ ວິທະຍາສາດ, ໂພສະນາການ ແລະ ສຸຂະພາບ, ແລະ ຄວາມຍືນນານ ທາງດ້ານສິ່ງແວດລ້ອມ ແລະ ການແຂ່ງຂັນ. | Avenue des Nerviens 9-31<br>1040 Brussels<br>Belgium<br><br>ໂທ: +32 2 514 11 11<br>ອີເມວ: info@fooddrinkeurope.eu<br>ເວັບໄຊ: www.fooddrinkeurope.eu |

# 3.5 ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ

## i. ບາດກ້າວຕົ້ນຕໍ ສຳລັບ ການສົ່ງອອກ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ ໄປຫາ EU



### ປະຕິບັດຕາມ ບາດກ້າວ ທີ່ເປັນຂໍ້ກຳນົດ ຫຼື ຄວາມຕ້ອງການ ຢູ່ ສປປ ລາວ

- ຈົດທະບຽນ ວິສາຫະກິດ ໂດຍອີງຕາມ ຂັ້ນຕອນ ທີ່ໄດ້ກຳນົດໄວ້
- ກະກຽມ ເອກະສານສົ່ງອອກ
- ສະເໜີຂໍ ແລະ ຮັບເອົາ ເອກະສານອະນຸຍາດສົ່ງອອກ
- ຕື່ມແບບຟອມ ລະບົບ ASYCUDA ສຳລັບ ການສະສາງພາສີ
- ກວດກາເບິ່ງ ການແຈ້ງການ ທີ່ເປັນນິຕິກຳ ກ່ຽວກັບດ້ານໃດດ້ານໜຶ່ງ ທີ່ພົວພັນກັບການສົ່ງອອກ (ເຊັ່ນ ມາດຕະການສຸຂາພິບານ ແລະ ສຸຂານາໄມພືດ), ແລະ ທີ່ພົວພັນກັບ ຜະລິດຕະພັນໃດໜຶ່ງ



### ປະຕິບັດຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການນຳເຂົ້າ

- ກວດກາ ແລະ ຮັບປະກັນ ຄວາມຖືກຕ້ອງສອດຄ່ອງກັບ ກົດລະບຽບວ່າດ້ວຍແຫຼ່ງກຳເນີດສິນຄ້າ ທີ່ມີຜົນບັງໃຊ້
- ຮັບປະກັນໃຫ້ມີການຈົດທະບຽນກັບ ລະບົບການຂຶ້ນທະບຽນຜູ້ສົ່ງອອກ ຂອງສະຫະພາບເອີຣົບ (REX)
- ສະເໜີຂໍ ແລະ ຮັບເອົາ ໃບຢັ້ງຢືນສຸຂານາໄມພືດ ສຳລັບ ຜະລິດຕະພັນ ທີ່ມີພື້ນຖານມາຈາກພືດ



### ປະຕິບັດຕາມ ທຸກກົດລະບຽບສະເພາະຜະລິດຕະພັນ ທີ່ມີຜົນບັງໃຊ້ກັບ ຜະລິດຕະພັນ ທີ່ຈະຖືກວາງຂາຍ ໃນຕະຫຼາດ EU

- ກວດກາເບິ່ງ ກອບນິຕິກຳ ສຳລັບສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ໄປຫາ EU
- ກວດກາເບິ່ງ ຂໍ້ກຳນົດ ຫຼື ຄວາມຕ້ອງການພິເສດ ທີ່ກ່ຽວຂ້ອງກັບ ສົນທິສັນຍາ ວ່າດ້ວຍ ການຄ້າ ສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງປະເທດ (CITES)
- ກວດກາເບິ່ງ ຂໍ້ຈຳກັດ ກ່ຽວກັບ ການນຳໃຊ້ ສານເຄມີບາງປະເພດ ຢູ່ໃນ ໄມ້ ແລະ ຜະລິດຕະພັນໄມ້
- ກວດກາເບິ່ງ ຂໍ້ກຳນົດ ຫຼື ຄວາມຕ້ອງການສະເພາະ ກ່ຽວກັບການນຳໃຊ້ ສະຫຼາກ EU Ecolabel ສຳລັບ ເຟີນິເຈີ
- ໃນກໍລະນີສົ່ງອອກ ຊຸດຫຸ້ມຫໍ່ໄມ້, ໃຫ້ກວດເບິ່ງ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການນຳເຂົ້າ ທີ່ກ່ຽວຂ້ອງ ຂອງ EU

## ii. ເນື້ອໃນ

**ໃນປີ** 2019, **ຜະລິດຕະພັນໄມ້ ຂອງ ສປປ ລາວ ກວມ** 5% **ຂອງ ການສົ່ງອອກທັງໝົດ ຂອງລາວ** (**ຄິດເປັນມູນຄ່າປະມານ** 300 **ລ້ານໂດລາ**), **ຊຶ່ງເປັນຜະລິດຕະພັນສົ່ງອອກ ທີ່ໃຫຍ່ເປັນອັນດັບ** 6 **ຂອງປະເທດ**.[321] **ເຖິງຢ່າງໃດກໍ່ຕາມ, ການສົ່ງອອກ ຜະລິດຕະພັນໄມ້ ໄປຫາ ສະຫະພາບເອີຣົບ ຍັງມີຈຳກັດຢູ່ ດັ່ງທີ່ມີຫຼັກຖານ ຢູ່ໃນ ຕາຕະລາງ** 22.

**ຕາຕະລາງ 22:** **ບັນດາປະເທດຕົ້ນຕໍ ທີ່ເປັນແຫຼ່ງກຳເນີດ ຂອງສິນຄ້າສົ່ງອອກ ແລະ ການສົ່ງອອກ ຂອງ ສປປ ລາວ ໄປຫາ EU ໃນປີ 2019** [322]

| ບົດ HS | ຂະແໜງການ | ປະເທດ | ມູນຄ່າການນຳເຂົ້າ ໄປຫາ EU (ເປັນເງິນເອີໂຣ) |
|---|---|---|---|
| **ບົດ 44** | ໄມ້ ແລະ ອົງປະກອບຂອງໄມ້; ທ່ານໄມ້ | ຈີນ | 2,507,379,903 |
| | | ສະຫະພັນລັດເຊຍ | 2,293,446,511 |
| | | ສະຫະລັດອາເມລິກາ | 1,803,578,224 |
| | | ມາເລເຊຍ | 295,708,355 |
| | | ພະມ້າ | 42,981,938 |
| | | ຟີລິບປິນ | 5,749,870 |
| | | ສປປ ລາວ | 30,447 |

ໃນປັດຈຸບັນ, ສປປ ລາວ ກຳລັງສົ່ງອອກ ສິນຄ້າ ໃນຈຳນວນທີ່ຈຳກັດ ພາຍໃຕ້ ມາດຕາ HS ໝວດ IX, ບົດທີ 44, ໄມ້, ຖ່ານ ແລະ *ວັດສະດຸທີ່ໃຊ້ຜະລິດພາອັດແກ້ວອາຍ* ແລະ ວັດຖຸຕ່າງຂອງມັນ,, ແລະ ປະກົດວ່ າບໍ່ໄດ້ສົ່ງອອກຜະລິດຕະພັນໃດເລີຍ ພາຍໃຕ້ HS ໝວດ X, ເຍື່ອໄມ້, ເຈ້ຍ ແລະ ແຜ່ນເຈ້ຍແຂງ (ບົດທີ 47 ແລະ 48) ໄປຫາ EU.[323]

**ຢູ່ພາຍໃນ** EU, **ເຢຍລະມັນ ແມ່ນເປັນຕະຫຼາດຫຼັກ ສຳລັບ ການສົ່ງອອກ ຜະລິດຕະພັນໄມ້** (**ໃຫ້ເບິ່ງຕາຕະລາງ** 23)

**ຕາຕະລາງ 23:** **ການສົ່ງອອກ ຂອງ ສປປ ລາວ ໄປຫາ ບາງປະເທດ ທີ່ເປັນສະມາຊິກ EU ໃນປີ 2019**

| ບົດ HS | ຂະແໜງການ | ສປປ ລາວ ໄປຫາທັງໝົດທຸກ ປາຍທາງ (ເປັນເງິນໂດລາ) [324] | ການສົ່ງອອກ ໄປຫາ ບາງ ປະເທດ ທີ່ເປັນສະມາຊິກ EU (ເປັນເງິນເອີໂຣ)[325] | |
|---|---|---|---|---|
| **ບົດ 44** | ໄມ້ ແລະ ອົງປະກອບຂອງໄມ້; ທ່ານໄມ້ | 52,331,000 | ເຢຍລະມັນ | ບົດ 44 |
| | | | ຝຣັ່ງ | 1,534 |
| | | | ແບນຊິກ | 1,336 |
| | | | ໂອຕຼິດ | 448 |
| | | | ໂອແລນ | 249 |

**ໃນປີ** 2016, **ສປປ ລາວ ໄດ້ບັງຄັບໃຊ້ ການຫ້າມສົ່ງອອກ ຜະລິດຕະພັນໄມ້ ທີ່ຍັງບໍ່ທັນເວັດຮູບ ເພື່ອບໍ່ໃຫ້ມີແຮງຈູງໃຈ ຕໍ່ພຶດຕິກຳ ການຂຸດຄົ້ນໄມ້ແບບຜິດກົດໝາຍ, ແລະ ໄດ້ກຳນົດ ບັນຊີລາຍຊື່ຜະລິດຕະພັນ ທີ່ມີເງື່ອນໄຂສົ່ງອອກໄດ້. ສຳລັບພົນສັກສີດ, ຈຸດເນັ້ນໜັກ ແມ່ນເພື່ອສົ່ງເສີມ ການສົ່ງອອກ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ. ການວິເຄາະຂອງ ສູນ** ITC **ຊີ້ໃຫ້ເຫັນວ່າ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ ມີທ່າແຮງສົ່ງອອກລວມທັງໝົດ ແມ່ນ** 54 **ລ້ານໂດລາ, ຊຶ່ງໃນນັ້ນ** 31 **ລ້ານໂດລາ ແມ່ນຍັງບໍ່ທັນໄດ້ນຳໃຊ້ເທື່ອ**.[326]

## iii. ບັນດາກົດລະບຽບວິຊາການ ທີ່ມີຜົນນຳໃຊ້ກັບ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ

### a) ພາສີ ສຳລັບ ການສົ່ງອອກ ຜະລິດຕະພັນໄມ້ ພາຍໃຕ້ ແຜນງານ EBA

ພາຍໃຕ້ແຜນງານ EBA, ສິນຄ້າທັງໝົດ ລວມທັງ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ, ໄມ້ ແລະ ຜະລິດຕະພັນໄມ້ ແມ່ນຈະມີເງື່ອນໄຂ ໄດ້ຮັບສິດທິໃນການປອດພາສີ ຂອງ EU.

### b) ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ ຢູ່ໃນຕະຫຼາດ EU

ດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງ ຢູ່ໃນໝວດ 2.2 (ii), ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດສິນຄ້າ ທີ່ຢູ່ພາຍໃຕ້ ລະບຽບການ GSP ໃຫ້ຂໍ້ສັງເກດວ່າ, ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຈາກສິດທິພິເສດທາງພາສີ, ຜະລິດຕະພັນ **ທີ່ອ້າງວ່າ**ຈະໄດ້ຮັບສິດທິພິເສດທາງພາສີນັ້ນ **ຕ້ອງມີແຫຼ່ງກຳເນີດ ຢູ່ໃນປະເທດທີ່ໄດ້ຮັບຜົນປະໂຫຍດ**.[327] ຜະລິດຕະພັນ ແມ່ນຈະຖືວ່າມີແຫຼ່ງກຳເນີດ  ມາຈາກ ປະເທດທີ່ໄດ້ຮັບຜົນປະໂຫຍດ ເມື່ອຜະລິດຕະພັນໄດ້ຮັບຊິ້ນສ່ວນທັງໝົດ ຢູ່ໃນປະເທດນັ້ນ ຫຼື ໄດ້ມີການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ ຢ່າງພຽງພໍ ຢູ່ໃນປະເທດນັ້ນ.

**ເອກະສານຊ້ອນທ້າຍ ຂອງ ລະບຽບການໄມ້ ຂອງ ສະຫະພາບເອີຣົບ ກຳນົດລາຍຊື່ ຜະລິດຕະພັນໄມ້ຫຼາຍຊະນິດ ທີ່ກ່ຽວຂ້ອງກັບລະຫັດ** EU CN **ທີ່ກ່ຽວຂ້ອງຂອງ ພວກມັນ ເພື່ອໃຫ້ລະບຽບການ ມີຜົນນຳໃຊ້**.[328] **ສຳລັບໄມ້ແລະຜະລິດຕະພັນໄມ້, ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ຖືກກຳນົດໄວ້ ຢູ່ໃນພາກທີ** II **ຂອງ ເອກະສານຊ້ອນທ້າຍ** 22-03 **ຂອງ ລະບຽບການຕົວແທນ ຂອງ ຄະນະກຳມະການ** (EU) 2015/2446.[329]

ເອກະສານຊ້ອນທ້າຍ 22-03 ແມ່ນຖືກຈັດເປັນ 3 ຖັນ, ດັ່ງທີ່ສະແດງໃຫ້ເຫັນ ຢູ່ໃນຮູບ 22, ທີ່ສະໜອງ ຂໍ້ມູນທີ່ຄັດຈ້ອນ ມາຈາກ ຕາຕະລາງທີ່ກຳນົດ ບັນດາກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ລວມຢູ່ໃນບົດທີ 44.

**ຮູບ 22: ຂໍ້ມູນຄັດຫຍໍ້ຈາກເອກະສານຊ້ອນທ້າຍ 22-03 ກ່ຽວກັບ ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບໄມ້ ແລະ ຜະລິດຕະພັນໄມ້**

LIST OF PRODUCTS AND WORKING OR PROCESSING OPERATIONS WHICH CONFER ORIGINATING STATUS

| Harmonised System heading | Description of product | Qualifying operation (Working or processing, carried out on non-originating materials, which confers originating status) |
|---|---|---|
| ex Chapter 44 | Wood and articles of wood; wood charcoal; except for: | Manufacture from materials of any heading, except that of the product<br>*or*<br>Manufacture in which the value of all the materials used does not exceed 70 % of the ex-works price of the product |
| ex 4407 | Wood sawn or chipped lengthwise, sliced or peeled, of a thickness exceeding 6 mm, planed, | Planing, sanding or end-jointing |

| | | |
|---|---|---|
| ຖັນ 1: ບົດທີ. | ຖັນ 2: ລາຍລະອຽດ ຂອງຜະລິດຕະພັນ ຕາມທີ່ຢູ່ໃນ CN | ຖັນ 3: ການດຳເນີນງານ ທີ່ໄດ້ຕາມເງື່ອນໄຂທີ່ກ່ຽວຂ້ອງ |

ຖ້າເວົ້າງ່າຍ, ສຳລັບຜູ້ສົ່ງອອກ ຈາກ ສປປ ລາວ, ຖັນທີ 3 ລະບຸ ການດຳເນີນງານ ທີ່ຜ່ານເງື່ອນໄຂ ຕໍ່າສຸດ ທີ່ຈຳເປັນສຳລັບ ຜະລິດຕະພັນໄມ້ ທີ່ມີແຫຼ່ງກຳເນີດ ທີ່ບໍ່ໄດ້ມາຈາກ ສປປ ລາວ, ເພື່ອໃຫ້ ຖືວ່າມີ ແຫຼ່ງກຳເນີດມາຈາກ ສປປ ລາວ ສຳລັບ ຈຸດປະສົງຂອງ ແຜນງານ EBA.

ສຳລັບສາທິດໃຫ້ເຫັນຕື່ມອີກ:

**ສຳລັບບັນດາຜະລິດຕະພັນ ທີ່ກ່ຽວຂ້ອງກັບ ບົດ 44:**

| | | |
|---|---|---|
| "ໄມ້ ແລະ ວັດຖຸທີ່ເປັນໄມ້; ຖ່ານໄມ້." | **ເພື່ອໃຫ້ຖືວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ** | ວັດສະດຸ ທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ທີ່ຖືກນຳໃຊ້ ໃນການດຳເນີນວຽກການຜະລິດ ແລະ ບຸງແຕ່ງເປັນຜະລິດຕະພັນສຸດທ້າຍ ບໍ່ສາມາດມີລະຫັດ CN ອັນດຽວກັນກັບ ລະຫັດ CN ຂອງ ຜະລິດຕະພັນສຸດທ້າຍ; ຫຼື<br>ວັດສະດຸ ທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ຕ້ອງ ດຳເນີນການຜະລິດ ຊຶ່ງວ່າໃນນັ້ນ ມູນຄ່າຂອງວັດສະດຸທັງໝົດ ທີ່ຖືກນຳໃຊ້ ແມ່ນບໍ່ໃຫ້ເກີນ 70% ຂອງ ລາຄາວຽກຜ່ານມາ ຂອງະ ຜະລິດຕະພັນ. |

**ເຖິງຢ່າງໃດກໍຕາມ, ມີຂໍ້ຍົກເວັ້ນຈຳນວນຫນ້ອຍໜຶ່ງ ຕໍ່ກັບ ກົດລະບຽບນີ້. ຕົວຢ່າງ, ໃນເງື່ອນໄຂຂອງ ex 4407, ດັ່ງທີ່ໄດ້ກ່າວໄວ້ໃນ ຂໍ້ມູນທີ່ຄັດລ້ອນຂ້າງເທິງ:**

| | | |
|---|---|---|
| "ໄມ້ທີ່ຖືກເລື່ອຍ ຫຼື ຫັ່ນເປັນຊິ້ນສ່ວນນ້ອຍໆ ຕາມລວງຍາວ, ຖືກປາດ ຫຼື ລອກເປືອກ, ທີ່ມີຄວາມໜາເກີນ 6 ມມ, ທີ່ຖືກກົບ, ຂັດດ້ວຍກະດາດຊາຍ ຫຼື ຕໍ່ສົ້ນເຂົ້າກັນ." | **ເພື່ອໃຫ້ຖືວ່າ ມີແຫຼ່ງກຳເນີດ ຢູ່ໃນ ສປປ ລາວ** | ວັດສະດຸ ທີ່ມີແຫຼ່ງກຳເນີດມາຈາກບ່ອນອື່ນ ທີ່ຖືກນຳໃຊ້ ໃນການດຳເນີນວຽກການຜະລິດ ແລະ ບຸງແຕ່ງເປັນຜະລິດຕະພັນສຸດທ້າຍ ຕ້ອງດຳເນີນການ "*ກົບ, ຂັດດ້ວຍກະດາດຊາຍ ຫຼື ຕໍ່ສົ້ນເຂົ້າກັນ.*" |

Funded by the European Union

ຕາຕະລາງ 24 ກຳນົດ ຜະລິດຕະພັນທີ່ກ່ຽວຂ້ອງ ແລະ 'ການດຳເນີນງານທີ່ຜ່ານເງື່ອນໄຂ' ຕໍ່າສຸດ ສຳລັບໄມ້ ແລະ ຜະລິດຕະພັນໄມ້ ຕາມທີ່ໄດ້ກຳນົດໄວ້ ໃນເອກະສານຊ້ອນທ້າຍ 22-03:

**ຕາຕະລາງ 24: ກົດລະບຽບ ວ່າດ້ວຍແຫຼ່ງກຳເນີດ ສຳລັບ ຜະລິດຕະພັນໄມ້ ຕາມທີ່ກຳນົດ ຢູ່ໃນ ເອກະສານຊ້ອນທ້າຍ 22-03**

| ຫົວຂໍ້ລະບົບທີ່ສອດຄ່ອງກົມກຽວກັນ | ລາຍລະອຽດ ຂອງ ຜະລິດຕະພັນ | ການດຳເນີນງານທີ່ຜ່ານເງື່ອນໄຂ (ການດຳເນີນວຽກການຜະລິດ ຫຼື ປຸງແຕ່ງ, ທີ່ຖືກດຳເນີນ ກັບ ວັດສະດຸ ທີ່ມີແຫຼ່ງກຳເນີດຈາກບ່ອນອື່ນ, ທີ່ມອບ ສະຖານະພາບເປັນແຫຼ່ງກຳເນີດ) |
|---|---|---|
| **Ex ບົດ 44** | ໄມ່ ແລະ ສ່ວນປະກອບ ຂອງໄມ້; ຖ່ານໄມ້; ຍົກເວັ້ນ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນ ຂອງ ຜະລິດຕະພັນ<br>ຫຼື<br>ຜະລິດ ໃນລັກສະນະທີ່ ມູນຄ່າ ຂອງໝົດທຸກຜະລິດຕະພັນ ທີ່ຖືກນຳໃຊ້ ບໍ່ເກີນ 70% ຂອງ ລາຄາອຸງກຜ່ານມາ ຂອງ ຜະລິດຕະພັນ |
| **Ex 4407** | ໄມ້ທີ່ຖືກເລື່ອຍ ຫຼື ສອຍ ຕາມລວງຍາວ, ຜານ ຫຼື ປອກເປືອກ, ທີ່ມີຄວາໜ້າເກີນ 6 ມມ, ທີ່ຖືກກົບ, ຂັດດ້ວຍກະດາດຊາຍ ຫຼື ຕໍ່ສົ້ນເຂົ້າກັນ | ການກົບ, ການຂັດດ້ວຍກະດາດຊາຍ ຫຼື ການຕໍ່ສົ້ນ |
| **Ex 4408** | ແຜ່ນ ສຳລັບໄມ້ອັດທົ່ວໄປ (ລວມທັງ ອັນທີ່ໄດ້ມາຈາກ ການປາດໄມ້ທີ່ເຄືອບເງົາ) ແລະ ສຳລັບໄມ້ອັດ, ທີ່ມີຄວາມໜ້າ ແມ່ນບໍ່ເກີນ 6 ມມ, ທີ່ຖືກຕໍ່, ແລະ ໄມ້ອື່ນໆ ທີ່ຖືກເລື່ອຍ ຕາມລວງຍາວ, ປາດ ຫຼື ປອກເປືອກ ທີ່ມີຄວາມໜ້າບໍ່ເກີນ 6 ມມ, ທີ່ຖືກກົບ, ຂັດດ້ວຍກະດາດຊາຍ, ຫຼື ຕໍ່ສົ້ນ | ການຕໍ່, ການກົບ, ການຂັດດ້ວຍກະດາດຊາຍ ຫຼື ການຕໍ່ສົ້ນ |
| **Ex 4410 ຫາ ex 4413** | ບົວຂອບເພດານ ແລະ ບົວກັນເປື້ອນ, ທີ່ລວມມີ ບົວກັນເປື້ອນ ແລະ ແຜ່ນບົວອື່ນໆ | ບົວຂອບເພດານ ແລະ ບົວກັນເປື້ອນ |
| **Ex 4415** | ຫີບບັນຈຸເຄື່ອງ, ກ່ອງ, ກະຕ່າ, ກອງ ແລະ ເຄື່ອງຫຸ້ມຫໍ່ ທີ່ຄ້າຍໆກັນ ທີ່ເຮັດຈາກໄມ້ | ຜະລິດຈາກແຜ່ນໄມ້ ບໍ່ໄດ້ຕັດເປັນຂະໜາດ |

| ຫົວຂໍ້ລະບົບທີ່ສອດຄ່ອງກົມກຽວກັນ | ລາຍລະອຽດ ຂອງ ຜະລິດຕະພັນ | ການດຳເນີນງານທີ່ຜ່ານເງື່ອນໄຂ (ການດຳເນີນວຽກການ ຜະລິດ ຫຼື ປຸງແຕ່ງ, ທີ່ຖືກດຳເນີນ ກັບ ວັດສະດຸ ທີ່ມີແຫຼ່ງກຳເນີດຈາກບ່ອນອື່ນ, ທີ່ມອບ ສະຖານະພາບເປັນແຫຼ່ງກຳເນີດ) |
|---|---|---|
| **Ex 4418** | ອົງປະກອບທີ່ເປັນເຄື່ອງໄມ້ ຂອງຜູ້ກໍ່ສ້າງ ແລະ ງານໄມ້<br><br>ບົວຂອບເພດານ ແລະ ບົວກັນເປື້ອນ | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ. ເຖິງຢ່າງໃດກໍ່ຕາມ, ແຜນໄມ້ເຊວລູໂຫຼດ, ແຜ່ນມຸງຫຼັງຄ່າແບບລຽບ ແລະ ແຜ່ນມຸງຫຼັງຄ່າແບບບໍ່ລຽບ ສາມາດຖືກນໍາໃຊ້ໄດ້.<br>ບົວຂອບເພດານ ແລະ ບົວກັນເປື້ອນ |
| **ບົດ 47** | ເຍື່ອຂອງໄມ້ ຫຼື ຂອງ ວັດສະດຸເຊວລູໂຫຼດ ທີ່ເປັນເສັ້ນໄຍອື່ນໆ; ເຈ້ຍ ຫຼື ແຜ່ນເຈ້ຍແຂງ ທີ່ຖືກນໍາມາຜະລິດຄືນ (ເຈ້ຍທີ່ຖິ້ມແລ້ວ ແລະ ເຈ້ຍເສດ) | ຜະລິດຈາກ ວັດສະດຸ ຂອງ ທຸກຫົວຂໍ້ (Heading), ຍົກເວັ້ນ ອັນທີ່ເປັນຂອງຜະລິດຕະພັນ<br>ຫຼື<br>ຜະລິດ ໂດຍທີ່ວ່າໃນນັ້ນ ມູນຄ່າ ຂອງວັດສະດຸທັງໝົດ ທີ່ຖືກນໍາໃຊ້ ແມ່ນບໍ່ເກີນ 70% ຂອງ ລາຄາອອກຜ່ານມາ ຂອງຜະລິດຕະພັນ |
| **Ex 1702** | ນ້ຳຕານອື່ນໆ, ລວມທັງ lactose ແລະ glucose ບໍລິສຸດທາງເຄມີ, ໃນຮູບແບບແຂງ; ນໍ້າເຊື່ອມ; ນໍ້າເຜິ້ງທຽມ, ອາດຈະປະສົມ ຫຼື ບໍ່ປະສົມກັບ ນໍ້າເຜິ້ງທໍາມະຊາດ; ຄາລາເມວ | ຜະລິດມາຈາກ ວັດສະດຸຂອງຫົວຂໍ້ໃດໜຶ່ງ, ຍົກເວັ້ນ ຂອງຜະລິດຕະພັນ, ຊຶ່ງວ່າ ໃນນັ້ນ ນ້ຳໜັກຂອງວັດສະດຸ ຂອງຫົວຂໍ້ 1101 ຫາ 1108, 1701 ແລະ 1703 ທີ່ທີ່ຖືກນໍາໃຊ້ ບໍ່ເກີນ 30% ຂອງນ້ຳໜັກ ຂອງ ຜະລິດຕະພັນສຸດທ້າຍ. |

**ຈຸດສໍາຄັນ ທີ່ຈະຕ້ອງສັງເກດ:**

- ຜູ້ສົ່ງອອກ ໄດ້ຮັບການຊຸກຍູ້ ໃຫ້ນໍາໃຊ້ ຄໍາແນະນໍາ/ຄໍາອະທິບາຍ ທີ່ສະໜອງ ຢູ່ໃນຄູ່ມືນີ້, ແລະ ກວດເບິ່ງ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ ທີ່ມີຜົນບັງຄັບໃຊ້ ສໍາລັບ ຜະລິດຕະພັນໄມ້ ຢູ່ໃນ ພາກ II ຂອງ ເອກະສານຊ້ອນທ້າຍ 22-03 ຂອງ ລະບຽບການຕົວແທນ ຂອງ ຄະນະກໍາມະການ (EU) 2015/2446.[330]
- ຜູ້ຜະລິດ ຂອງ ສປປ ລາວ ຄວນສັງເກດເບິ່ງ ຂໍ້ຍົກເວັ້ນ ທີ່ມີຜົນບັງຄັບໃຊ້ໄດ້ ກັບ ກົດລະບຽບ ວ່າດ້ວຍແຫຼ່ງກໍາເນີດ, ຄື Tolerances ແລະ Cumulation, ດັ່ງທີ່ໄດ້ກ່າວໄວ້ ໃນພາກ 2.2 (ii) ຂ້າງເທິງ.

## iv. ຂໍ້ກໍານົດ ຫຼື ຄວາມຕ້ອງການ ດ້ານລະບຽບການ ຕົ້ນຕໍ ສໍາລັບ ການສົ່ງອອກ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ

## a) ກອບນິຕິກຳ ທີ່ຄວບຄຸມ ການນຳເຂົ້າໄມ້ ແລະ ຜະລິດຕະພັນໄມ້ ໄປຫາ EU

ກົດລະບຽບໄມ້ ຂອງ ສະຫະພາບເອີຣົບ ກວມເອົາ ຜະລິດຕະພັນໄມ້ທີ່ຫຼາກຫຼາຍ, ຊຶ່ງມີລາຍຊື່ຢູ່ໃນ ເອກະສານຊ້ອນທ້າຍ ຂອງ ລະບຽບການນັ້ນ, ແລະ ຄວາມກ່ຽວຂ້ອງກັບ ລະຫັດ CN ທີ່ກ່ຽວຂ້ອງ ຂອງ ສະຫະພາບເອີຣົບ. ຜະລິດຕະພັນ ປະກອບມີ ຜະລິດຕະພັນໄມ້ແຂງ, ພື້ນ, ໄມ້ອັດ, ເຍື່ອໄມ້ ແລະ ເຈ້ຍ, ແຕ່ບໍ່ລວມເອົາ ຜະລິດຕະພັນທີ່ນຳກັບມາຜະລິດຄືນໃໝ່ (Recycled products) ຫຼື ເຈ້ຍທີ່ພິມແລ້ວ ເຊັ່ນ: ປຶ້ມ, ວາລະສານ ແລະ ໜັງສືພິມ.

ລະບຽບການໄມ້ ຂອງສະຫະພາບເອີຣົບ ໄດ້ຖືກອອກແບບມາ ເພື່ອແກ້ໄຂ ບັນຫາການຄ້າຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຂຸດຄົ້ນແບບຜິດກົດາຍ.[331] ຢູ່ໃນເນື້ອໃນນີ້, ມາດຕາ 6 ຂອງລະບຽບການ ກຳນົດ 3 ອົງປະກອບຫຼັກ ຂອງ ລະບົບ ການກວດສອບ ສະຖານະພາບ (Due diligence):

| | |
|---|---|
| ຂໍ້ມູນຂ່າວສານ | **ຜູ້ປະກອບການ ຕ້ອງເຂົ້າເຖິງ ຂໍ້ມູນ ທີ່ອະທິບາຍກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້, ປະເທດບ່ອນທີ່ຂຸດຄົ້ນ, ຊະນິດພັນ, ປະລິມານ, ລາຍລະອຽດ ກ່ຽວກັບຜູ້ສະໜອງ ແລະ ຂໍ້ມູນ ກ່ຽວກັບ ຄວາມຖືກຕ້ອງສອດຄ່ອງ ກັບ ນິຕິກຳແຫ່ງຊາດ.** |
| ການປະເມີນຄວາມສ່ຽງ | ຜູ້ປະກອບການ ຄວນປະເມີນ ຄວາມສ່ຽງ ຂອງໄມ້ຜິດກົດໝາຍ ຢູ່ໃນ ຕອງໂສ້ການສະໜອງ ຂອງຕົນ ໂດຍອີງໃສ່ ຂໍ້ມູນ ທີ່ຖືກກຳນົດຂ້າງເທິງ ແລະ ຄຳນຶງເຖິງ ມາດຖານເງື່ອນໄຂ ທີ່ກຳນົດອອກ ຢູ່ໃນລະບຽບການ. |
| ການຫຼຸດຜ່ອນຄວາມສ່ຽງ | ເມື່ອການປະເມີນ ສະແດງໃຫ້ເຫັນວ່າ ມີຄວາມສ່ຽງ ທີ່ໄມ້ຜິດກົດໝາຍ ຈະຢູ່ໃນ ຕ່ອງໂສ້ການສະໜອງ, ຄວາມສ່ຽງ ສາມາດຫຼຸດຜ່ອນໄດ້ ໂດຍການຮັບຂໍ້ມູນເພີ່ມຕື່ມ ແລະ ການກວດສອບ ຈາກ ຜູ້ສະໜອງ. |

ອົງປະກອບຫຼັກ ຂອງແນວຄວາມຄິດ ກ່ຽວກັບ ການກວດສອບ ສະຖານະພາບ (Due diligence) ແມ່ນວ່າ ຜູ້ປະກອບການ ດຳເນີນການຄຸ້ມຄອງຄວາມສ່ຽງ ເພື່ອຫຼຸດຜ່ອນຄວາມສ່ຽງ ທີ່ຈະມີການວາງຂາຍ ໄມ້ທີ່ຖືກຂຸດຄົ້ນ ແບບຜິດກົດໝາຍ, ຫຼື ຜະລິດຕະພັນໄມ້ທີ່ບັນຈຸໄມ້ທີ່ຖືກຂຸດຄົ້ນ ແບບຜິດກົດໝາຍ ຢູ່ໃນຕະຫຼາດ EU.

## b) ການຜ່ານເງື່ອນໄຂ ພາຍໃຕ້ ສັນຍາ ວ່າດ້ວຍການເປັນຄູ່ຮ່ວມ ແບບສະໝັກໃຈ ຂອງ FLEGT

**ແຜນປະຕິບັດງານ ການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການຄ້າໄມ້ ຂອງ ສະຫະພາບເອີຣົບ (FLEGT)** ແມ່ນເປັນແຜນງານ ແບບສະໝັກໃຈ ເພື່ອຮັບປະກັນວ່າ ມີພຽງແຕ່ໄມ້ທີ່ຖືກຂຸດຄົ້ນ ຢ່າງຖືກຕ້ອງຕາມກົດໝາຍເທົ່ານັ້ນ ທີ່ຈະຖືກນຳເຂົ້າໄປໃນສະຫະພາບເອີຣົບ ຈາກບັນດາປະເທດ ທີ່ຕົກລົງເຂົ້າຮ່ວມຢູ່ໃນແຜນງານນີ້. ດັ່ງນັ້ນ, ສະຫະພາບເອີຣົບ ໄດ້ສ້າງກອບນິຕິກຳ ເພື່ອເຮັດໃຫ້ສາມາດຄວບຄຸມ ການເຂົ້າຂອງໄມ້ ໄປຫາ ສະຫະພາບເອີຣົບ ທີ່ມາຈາກ ບັນດາປະເທດທີ່ເຂົ້າຮ່ວມໃນ ສັນຍາ ວ່າດ້ວຍການເປັນຄູ່ຮ່ວມແບບສະໝັກໃຈ ຂອງ FLEGT ກັບສະຫະພາບເອີຣົບ ຄື ລະບຽບການ FLEGT[332] ແລະ ລະບຽບການ ຂອງແຜນງານ ວ່າດ້ວຍການອອກໃບອະນຸຍາດ FLEGT.[333]

ໂດຍສະເພາະ, ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ນອນຢູ່ໃນ FLEGT ຢ່າງຖືກຕ້ອງ ແມ່ນຈະໄດ້ຮັບການພິຈາລະນາ ແບບໂອໂຕແມັດຕິກ ເພື່ອປະຕິບັດຕາມ ຂໍ້ກຳນົດ ຫຼື ຄວາມຕ້ອງການ ຂອງ ລະບຽບການໄມ້ ຂອງ EU.

**ການເຈລະຈາ ຂອງ ສປປ ລາວ ກັບ EU ວ່າດ້ວຍ FLEGT VPA:** ການເຈລະຈາ ສຳລັບ FLEGT VPA ລະຫວ່າງ EU ແລະ ລັດຖະບານແຫ່ງ ສປປ ລາວ ໃນປັດຈຸບັນ ແມ່ນກຳລັງສືບຕໍ່ຢູ່ ແລະ ມີຄວາມຄືບໜ້າ ທີ່ສຳຄັນ ໃນຫຼາຍດ້ານ.[334]

- ພາຍຫຼັງທີ່ VPA ມີຜົນບັງຄັບໃຊ້ ລະຫວ່າງ ສະຫະພາບເອີຣົບ ແລະ ສປປ ລາວ, ຜູ້ສົ່ງອອກ ຈາກ ສປປ ລາວ ສາມາດສົ່ງອອກຜະລິດຕະພັນໄມ້ໄດ້ ໂດຍພຽງແຕ່ໄດ້ຮັບ**ໃບອະນຸຍາດ FLEGT** ເທົ່ານັ້ນ (ອະທິບາຍເພີ່ມຕື່ມຢູ່ຂ້າງລຸ່ມນີ້).

- ເຖິງຢ່າງໃດກໍ່ຕາມ, ຜູ້ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຈາກ ສປປ ລາວ ຕ້ອງໄດ້ຮັບຮູ້ວ່າ, ຈົນກ່ວາ ການເຈລະຈາສິ້ນສຸດລົງ ແລະ VPA ມີຜົນບັງຄັບໃຊ້ ລະຫວ່າງ ສະຫະພາບເອີຣົບ ແລະ ສປປ ລາວ, ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານນິຕິກຳ ທີ່ຖືກກຳນົດ ໂດຍ ລະບຽບການໄມ້ ຂອງ ສະຫະພາບເອີຣົບ, ໂດຍສະເພາະແມ່ນ ການກວດສອບ ສະຖານະພາບ (Due Diligence) ທີ່ຈະຕ້ອງໄດ້ປະຕິບັດ ໃນນາມເປັນສ່ວນໜຶ່ງ ຂອງ ຂັ້ນຕອນການສົ່ງໄມ້ອອກໄປຫາ EU.

## i. ການສຳເລັດ ແລະ ຈັດຕັ້ງປະຕິບັດ VPA

ສັນຍາ VPA (ສັນຍາ ວ່າດ້ວຍການເປັນຄູ່ຮ່ວມ ແບບສະໝັກໃຈ) ປະກອບມີ ຄຳໝັ້ນສັນຍາ ແລະ ການກະທຳ ຈາກທັງສອງຝ່າຍ ເພື່ອຢຸດຕິການຄ້າໄມ້ທີ່ຜິດກົດາຍ, ໂດຍສະເພາະກັບ ແຜນງານກ່ຽວກັບໃບອະນຸຍາດ ຢູ່ໃນປະເທດ ຂອງຄູ່ຮ່ວມງານ ທີ່ຢັ້ງຢືນ ຄວາມຖືກຕ້ອງຕາມກົດໝາຍຂອງໄມ້ ທີ່ສົ່ງອອກໄປຫາ ສະຫະພາບເອີຣົບ..

**ການອອກໃບອະນຸຍາດ FLEGT** ແມ່ນຢູ່ພາຍໃຕ້ ການຈັດຕັ້ງປະຕິບັດ ໂດຍປະເທດທີ່ເປັນຄູ່ຮ່ວມສັນຍາ VPA, **ການສ້າງລະບົບການຮັບປະກັນ ຄວາມຖືກຕ້ອງຕາມກົດໝາຍຂອງໄມ້ (TLAS)**, ແລະ ມາດຕະການອື່ນໆ ທີ່ໄດ້ລະບຸ ຢູ່ໃນສັນຍາ VPA.

ເມື່ອໃດ ທີ່ສາມາດດຳເນີນການ ໄດ້ຢ່າງເຕັມທີ່, ລະບົບ TLAS ແມ່ນຈະປະກອບດ້ວຍ ການຄວບຄຸມຕ່ອງໂສ້ການສະໜອງ ທີ່ມີປະສິດທິພາບ, ກົນໄກສຳລັບການກວດສອບຄວາມຖືກຕ້ອງສອດຄ່ອງ, ແລະ ການກວດສອບ ແບບອິດສະຫຼະ. ລະບົບ TLAS ແມ່ນຖືກສ້າງຂຶ້ນ ໂດຍຍຶດຖືນິຍາມ ຂອງ ຄວາມຖືກຕ້ອງຕາມກົດໝາຍ (Legality) ທີ່ຈະມີຜົນນຳໃຊ້ ທີ່ໄດ້ຕົກລົງກັນ ຜ່ານຂະບວນການ ແບບມີສ່ວນຮ່ວມ ທີ່ມີການເຂົ້າຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ທີ່ມາຈາກ ພາກລັດ, ພາກສ່ວນເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ.

ສັນຍາ VPA ຍັງມີເຈດຈຳນົງ ທີ່ຈະສົ່ງເສີມ ການບັງຄັບໃຊ້ກົດໝາຍປ່າໄມ້ ໃຫ້ໄດ້ດີກວ່າເກົ່າ ແລະ ມີວິທີການແບບກວມລວມ ທີ່ດຶງການມີສ່ວນຮ່ວມ ຂອງ ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ຢູ່ໃນປະເທດທີ່ເປັນຄູ່ຮ່ວມສັນຍາ.

**ສະຖານະພາບ ຂອງ ລະບົບ TLAS ຢູ່ ສປປ ລາວ:** ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍຂອງໄມ້ (TLAS) ແມ່ນເປັນໝາກຫົວໃຈ ຂອງສັນຍາ VPA ແລະ ມັນເປັນໂຕ ຢັ້ງຢືນວ່າຜະລິດຕະພັນໄມ້ ປະຕິບັດຕາມ ກົດພາຍໃນປະເທດທີ່ເປັນຄູ່ຮ່ວມສັນຍາ. ເມື່ອໃດທີ່ໄດ້ຮັບການຢັ້ງຢືນວ່າ ຖືກຕ້ອງຕາມກົດໝາຍແລ້ວ, ປະເທດຄູ່ຮ່ວມງານ ສາມາດອອກ ໃບອະນຸຍາດ FLEGT ສຳລັບຜະລິດຕະພັນໄມ້ທີ່ມີຈຸດາຍໄປຫາ ຕະຫຼາດ EU. ໃນປີ 2019, ສປປ ລາວ ໄດ້ສ້າງຕັ້ງ ລະບົບ TLAS, ຊຶ່ງປະກອບດ້ວຍ 5 ອົງປະກອບດັ່ງຕໍ່ໄປນີ້:

- **ນິຍາມຄວາມຖືກຕ້ອງຕາມກົດໝາຍ** (TLD) –ຊຶ່ງກຳນົດຄວາມຖືກຕ້ອງທາງດ້ານກົດໝາຍ ຂອງ ໄມ້ ທີ່ມາຈາກ 6 ແຫຼ່ງ ຄືຈາກປ່າຜະລິດ, ປ່າສະຫງວນ, ປ່າປູກ, ປ່າຊົມໃຊ້ຂອງບ້ານ, ການຍຶດ ແລະ ການນຳເຂົ້າ, ແລະ ສອງຄຳນິຍາມຄວາມຖືກຕ້ອງຕາມກົດໝາຍຂອງໄມ້ ເພີ່ມເຂົ້າມາໃໝ່ ທີ່ພົວພັນກັບ ພັນທະທາງດ້ານ ແຮງງານ, ແລະ ການປຸງແຕ່ງໄມ້ ແລະ ການດຳເນີນການຄ້າຂາຍໄມ້;
- **ການຄວບຄຸມ ຕ່ອງໂສ້ການສະໜອງໄມ້** – ຊຶ່ງເລັງໃສ່ ເພື່ອຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ຂອງແຫຼ່ງໄມ້ ເພື່ອທີ່ຈະຫຼີກເວັ້ນການປະສົມປົນເປກັນ ລະຫວ່າງ ໄມ້ຜິດກົດໝາຍ ກັບ ໄມ້ທີ່ຖືກກົດໝາຍ. ສິ່ງດັ່ງກ່າວນີ້ ສາມາດປະຕິບັດໄດ້ ຜ່ານທາງການຄວບຄຸມການດຳເນີນງານ ໂດຍຜູ້ປະກອບການ ແລະ ການກວດສອບ ໂດຍເຈົ້າໜ້າທີ່;
- **ການກວດສອບ ຄວາມຖືກຕ້ອງສອດຄ່ອງ** – ລະບົບ TLAS ສະໜອງຂັ້ນຕອນລະອຽດ ໂດຍແນໃສ່ກວດສອບ ຄວາມຖືກຕ້ອງສອດຄ່ອງ ຂອງ ນິຍາມ TLD ແລະ ກຳນົດ ຂັ້ນຕອນຕົ້ນຕໍ ຂອງການຄວບຄຸມ ຕ່ອງໂສ້ການສະໜອງ ໂດຍ ຜູ້ປະກອບການ.;
- **ລະບົບ ອອກໃບອະນຸຍາດ FLEGT** – ກຳນົດຂັ້ນຕອນ ການອອກໃບອະນຸຍາດ FLEGT ແລະ ອົງການທີ່ມີສິດອຳນາດ ຂອງ ສປປ ລາວ ໃນການອອກໃບອະນຸຍາດ FLEGT; ແລະ
- **ການຕິດຕາມແບບອິສະຫຼະ** – ສປປ ລາວ ຈະປຶກສາຫາລືກັບ ສະຫະພາບເອີຣົບ ກ່ຽວກັບການສ້າງຕັ້ງ ອົງການເອກະລາດໂດຍມີພາລະກິດ ຕິດຕາມກວດກາ ການເຮັດວຽກທີ່ມີປະສິດທິພາບ ຂອງ ລະບົບ TLAS ຂອງ ສປປ ລາວ.

ສຳລັບ ລາຍລະອຽດ ເພີ່ມຕື່ມ ກ່ຽວກັບ ສັນຍາ ວ່າດ້ວຍການເປັນຄູ່ຮ່ວມແບບສະໝັກໃຈ FLEGT ລະຫວ່າງ ສປປ ລາວ - EU ແມ່ນມີຢູ່ທີ່ https://flegtlaos.com/.

## ii. ການໄດ້ຮັບ ໃບອະນຸຍາດ FLEGT

### ຈຸດປະສົງ ຂອງໃບອະນຸຍາດ FLEGT

ເມື່ອ ສັນຍາ FLEGT VPA ມີຜົນບັງຄັບໃຊ້, ໃບອະນຸຍາດ FLEGT ເປັນໂຕຮັບປະກັນວ່າ ໄມ້ທີ່ສົ່ງອອກຈາກ ສປປ ລາວ ໄປຫາ EU ແມ່ນໄດ້ຖືກຂຸດຄົ້ນ, ປຸງແຕ່ງ ແລະ ສົ່ງອອກ ໂດຍອີງຕາມກົດໝາຍຂອງຊາດ. ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ເມື່ອໃດ ທີ່ປະເທດຄູ່ຮ່ວມສັນຍາ VPA ເລີ່ມຈັດຕັ້ງປະຕິບັດ ລະບົບການອອກໃບອະນຸຍາດ FLEGT, ສະຫະພາບເອີຣົບ ຈະຍອມຮັບສະເພາະ ຜະລິດຕະພັນໄມ້ ຈາກປະເທດນັ້ນ ຖ້າມັນມີໃບອະນຸຍາດ FLEGT.

ໃບອະນຸຍາດ FLEGT ບໍ່ແມ່ນສະຫຼາກ ທີ່ມີຈຸດປະສົງ ເພື່ອສະໜອງ ຂໍ້ມູນກ່ຽວກັບ ຜະລິດຕະພັນ ທີ່ສົ່ງໄປຫາ ຜູ້ບໍລິໂພກ ຂອງ ສະຫະພາບເອີຣົບ. ໃບອະນຸຍາດ FLEGT ແມ່ນເປັນເອກະສານ ທີ່ອອກໃຫ້ພຽງແຕ່ ສຳລັບການສົ່ງອອກສິນຄ້າ ແລະ ທຳໜ້າທີ່ ເພື່ອຕອບສະໜອງຕາມ ການຄວບຄຸມທີ່ດ່ານຊາຍແດນ.

ລະບຽບການໄມ້ ຂອງ ສະຫະພາບເອີຣົບ ຕ້ອງການໃຫ້ ຜູ້ປະກອບການ ປະຕິບັດ ການກວດສອບ ສະຖານະພາບ (Due diligence) ໃນເວລາທີ່ ເອົາໄມ້ ແລະ ຫຼື ຜະລິດຕະພັນໄມ້ ໄປວາງຂາຍ ຢູ່ໃນຕະຫຼາດ ຂອງ ສະຫະພາບເອີຣົບ. ເຖິງຢ່າງໃດກໍ່ຕາມ, ຜູ້ປະກອບການທຸລະກິດ ທີ່ຄ້າຂາຍ ຜະລິດຕະພັນ ທີ່ໄດ້ຮັບໃບອະນຸຍາດ FLEGT ບໍ່ຈຳເປັນຕ້ອງດຳເນີນ ການກວດສອບ ສະຖານະພາບ (Due diligence) ທີ່ກິນເວລາ ແລະ ມີຄ່າໃຊ້ຈ່າຍຕື່ມອີກແລ້ວ. ເຈົ້າໜ້າທີ່ ທີ່ຮັບຜິດຊອບ ໃນການບັງຄັບໃຊ້ກົດລະບຽບໄມ້ ຂອງ ສະຫະພາບເອີຣົບ ໃນປະເທດສະມາຊິກສະຫະພາບເອີຣົບ ຮັບຮູ້ ໃບອະນຸຍາດ FLEGT ວ່າເປັນຫຼັກຖານຢັ້ງຢືນ ຄວາມຖືກຕ້ອງທາງດ້ານກົດໝາຍ.

### ການຄ້າ ໂດຍ ປະເທດທີ່ເປັນຄູ່ຮ່ວມ VPA ກ່ອນຈະອອກ ໃບອະນຸຍາດ FLEGT

ຖ້າສິນຄ້າ ທີ່ຖືກຊື້ຂາຍ ຈາກປະເທດ ທີ່ເປັນຄູ່ຮ່ວມ VPA ກ່ອນທີ່ຈະເລີ່ມອອກໃບອະນຸຍາດ FLEGT, ບໍ່ຈຳເປັນຕ້ອງມີໃບອະນຸຍາດ FLEGT ສຳລັບ ການວາງຂາຍສິນຄ້າເຫຼົ່ານີ້ ໃນຕະຫຼາດ EU. ໃບອະນຸຍາດ FLEGT ກາຍເປັນຂໍ້ບັງຄັບ ສຳລັບການວາງຜະລິດຕະພັນ ຢູ່ໃນ ຕະຫຼາດ ຂອງ ສະຫະພາບເອີຣົບ ກໍຕໍ່ເມື່ອ ລະບົບການອອກໃບອະນຸຍາດ FLEGT ໃນປະເທດຄູ່ຮ່ວມງານ ໄດ້ຖືກສ້າງຕັ້ງຂຶ້ນ ຢ່າງເປັນທາງການແລ້ວ.

### ບັນດາກົດລະບຽບ ທີ່ຄວບຄຸມ ການສົ່ງອອກ ທີ່ມີໃບອະນຸຍາດ FLEGT

ເມື່ອປະເທດໃດໜຶ່ງ ເລີ່ມການອອກໃບອະນຸຍາດ FLEGT, ສະຫະພາບເອີຣົບ ຈະຍອມຮັບພຽງແຕ່ ການນຳເຂົ້າ ທີ່ມີໃບອະນຸຍາດ FLEGT ເທົ່ານັ້ນ ຈາກປະເທດດັ່ງກ່າວ ສຳລັບ ປະເພດຜະລິດຕະພັນ ທີ່ນອນຢູ່ໃນຂອບເຂດ ຂອງ ສັນຍາ FLEGT VPA ຂອງປະເທດນັ້ນ ກັບ EU.

ຮູບແບບໃບອະນຸຍາດ FLEGT ແມ່ນອີງໃສ່ ຮ່າງ ຂອງ ສະຫະພາບເອີຣົບ, ທີ່ຮັບປະກັນວ່າ ເອກະສານໃບອະນຸຍາດ ແມ່ນໄດ້ອອກໃນຮູບແບບທີ່ເປັນເອກະລັກ ແຕກຕ່າງກັນ ສະເພາະຢູ່ໃນຂົງເຂດ ທີ່ຕ້ອງການຂໍ້ມູນສະເພາະຂອງປະເທດ.

### ການປຸງແຕ່ງຜະລິດຕະພັນ ໃນປະເທດ ທີ່ບໍ່ອອກ ໃບອະນຸຍາດ FLEGT

ຖ້າຜະລິດຕະພັນ ທີ່ມີໃບອະນຸຍາດ FLEGT ຖືກປຸງແຕ່ງ ຢູ່ໃນປະເທດອື່ນ, ທີ່ບໍ່ໄດ້ອອກໃບອະນຸຍາດ FLEGT, ແລະ ຈາກນັ້ນ ກໍຖືກສົ່ງອອກຄືນ ໄປຫາ ສະຫະພາບເອີຣົບ, ຜະລິດຕະພັນ ດັ່ງກ່າວ ບໍ່ສາມາດ ຮັກສາໃບອະນຸຍາດ FLEGT ຂອງຕົນໄດ້. ຜູ້ປະກອບການ ທີ່ວາງຂາຍ ຜະລິດຕະພັນດັ່ງກ່າວ ຢູ່ໃນຕະຫຼາດ EU ເປັນຄັ້ງທຳອິດ ແມ່ນຕ້ອງໄດ້ນຳໃຊ້ ການກວດສອບ ສະຖານະພາບ (Due diligence) ຊຶ່ງເປັນທີ່ຕ້ອງການ ໂດຍ ລະບຽບການໄມ້ ຂອງ ຂອງ ສະຫະພາບເອີຣົບ. ລະບຽບການໄມ້ ຂອງ ສະຫະພາບເອີຣົບ ກຳນົດວ່າ ຂະບວນການໃດໜຶ່ງ ທີ່ຖືກດຳເນີນ ຢູ່ໃນ ປະເທດທີສາມ ທີ່ບໍ່ເປັນຄູ່ຮ່ວມສັນຍາ VPA ຕ້ອງໄດ້ນອນຢູ່ໃນ ການກວດສອບ ສະຖານະພາບ (Due diligence) ຕາມທີ່ຕ້ອງການ ພາຍໃຕ້ ກົດລະບຽບໄມ້ ຂອງ ສະຫະພາບເອີຣົບ. ແຕ່ເຖິງຢ່າງໃດກໍ່ຕາມ, ຖ້າການຂົນສົ່ງ ທີ່ມີໃບອະນຸຍາດ FLEGT ຖືກຂົນສົ່ງໄປຫາ

ປະເທດທີສາມທີ່ບໍ່ເປັນຄູ່ຮ່ວມສັນຍາ VPA ເທົ່ານັ້ນ, ແລະ ບໍ່ໄດ້ຜ່ານ ຂະບວນການປະສົມ ຫຼື ປ່ຽນຮູບໃດທັງສິ້ນ, ຄວາມຖືກຕ້ອງ ຂອງ ໃບອະນຸຍາດ FLEGT ແມ່ນຈະບໍ່ໄດ້ຮັບຜົນກະທົບ.

## c) ລະບຽບການພິເສດ ທີ່ພົວພັນກັບ ສົນທິສັນຍາ ວ່າດ້ວຍການຄ້າສາກົນ ຕໍ່ກັບ ພັນສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ (CITES)

ສົນທິສັນຍາ ວ່າດ້ວຍການຄ້າສາກົນ ຕໍ່ກັບ ພັນສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ (CITES) ມີຈຸດປະສົງ ເພື່ອຮັບປະກັນວ່າ ການຄ້າຂາຍສັດ ແລະ ພືດປ່າ ລະຫວ່າງປະເທດ ບໍ່ເປັນໄພຂົ່ມຂູ່ ຕໍ່ ການຢູ່ລອດຂອງພວກມັນ.

### *ກອບການອອກໃບອະນຸຍາດ ພາຍໃຕ້ ສົນທິສັນຍາ* CITES

ສົນທິສັນຍາ CITES ໃຫ້ການປົກປ້ອງຫຼາຍລະດັບບ ທີ່ແຕກຕ່າງກັນ ແກ່ ຫຼາຍກ່ວາ 30,000 ຊະນິດພັນ ສັດ ແລະ ພືດ. ສົນທິສັນຍາ CITES ທຳງານ ໂດຍການເຮັດໃຫ້ການຄ້າ ລະຫວ່າງປະເທດ ກ່ຽວກັບ ຕົວຢ່າງ ຂອງ ຊະນິດພັນ ທີ່ຖືກເລືອກ ຢູ່ພາຍໃຕ້ການຄວບຄຸມບາງຢ່າງ. ສິ່ງເຫຼົ່ານີ້ ລວມມີ ລະບົບການອອກໃບອະນຸຍາດ ທີ່ຕ້ອງການ ການອະນຸຍາດນຳເຂົ້າ ແລະ ສົ່ງອອກ (ຄືນ) ຊະນິດພັນ ທີ່ນອນຢູ່ພາຍໃຕ້ສົນທິສັນຍາ. **ໂດຍສະເພາະ, *ໄມ້ ແລະ ຜະລິດຕະພັນໄມ້ ທີ່ນອນຢູ່ໃນ ໃບອະນຸຍາດ* CITES *ທີ່ຖືກຕ້ອງ ແມ່ນຈະຖືກພິຈາລະນາ ໂດຍອັດຕະໂນມັດ ເພື່ອປະຕິບັດຕາມ* ຂໍ້ກຳນົດ ຫຼື ຄວາມຕ້ອງການ *ຂອງລະບຽບການໄມ້ ຂອງ ສະຫະພາບເອີຣົບ.***
ໄມ້ ຫຼື ຜະລິດຕະພັນໄມ້ ທັງໝົດ ທີ່ໄດ້ມາຈາກ ຊະນິດພັນໜຶ່ງ ທີ່ນອນໃນບັນຊີລາຍຊື່ ຂອງໜຶ່ງ ໃນຈຳນວນ ບັນດາເອກະສານຊ້ອນທ້າຍ ຈຳເປັນຈະຕ້ອງ ມີໃບອະນຸຍາດ ຫຼື ເອກະສານອະນຸຍາດ ການນຳເຂົ້າ ແລະ ແມ່ນຈະຕ້ອງຢູ່ພາຍໃຕ້ ຂໍ້ກຳນົດ ຫຼື ຄວາມຕ້ອງການ ດ້ານການແຈ້ງການນຳເຂົ້າ ທີ່ໄດ້ກຳນົດຂຶ້ນ ຢູ່ໃນມາດຕາ 4 ຂອງ ລະບຽບການ. ລະບຽບການ ຂອງສະພາ (EC) ເລກທີ 338/97 ບັງຄັບ ໃຫ້ມີການກວດກາ ການນຳເຂົ້າ ແລະ ການສົ່ງອອກ ທັງໃນລະດັບ EU ແລະ ລະດັບປະເທດແຫຼ່ງກຳເນີດ (ຕົ້ນທາງ) ແລະ ແຕ່ລະປະເທດສະມາຊິກ EU ໄດ້ກຳນົດ ສິດອຳນາດໃນການຄຸ້ມຄອງ ເພື່ອອອກເອກະສານອະນຸຍາດ ແລະ ກວດກາການນຳເຂົ້າ, ພ້ອມທັງມີສິດອຳນາດ ທາງວິທະຍາສາດ ເພື່ອເຮັດໜ້າທີ່ ເປັນອົງການໃຫ້ຄຳປຶກສາ.

### *ຜະລິດຕະພັນ ທີ່ນອນຢູ່ພາຍໃຕ້* CITES

ຊະນິດພັນ ທີ່ກວມເອົາ ໂດຍ ສົນທິສັນຍາ CITES ແມ່ນນອນຢູ່ໃນບັນຊີລາຍຊື່ ໃນເອກະສານຊ້ອນທ້າຍ, ທີ່ໃຫ້ລະດັບການປົກປ້ອງ ທີ່ແຕກຕ່າງກັນ ແກ່ພວກມັນ. 4 ເອກະສານຊ້ອນທ້າຍ ຂອງ ລະບຽບການ ຂອງສະພາ (EC) 338/97 ກຳນົດລາຍຊື່ ຊະນິດພັນ ສັດ ແລະ ພືດ ທີ່ໃກ້ຈະສູນພັນ, ຊຶ່ງສ່ວນໃຫຍ່ ມີຄວາມສຳພັນກັບ ເອກະສານຊ້ອນທ້າຍ ຂອງ ສົນທິສັນຍາ CITES. ເອກະສານຊ້ອນທ້າຍ A, B, C ແລະ D ແມ່ນຖືກຈັດລຽງ ຈາກລະດັບສູງສຸດ ຂອງ ການຈຳກັດດ້ານການຄ້າ (ເອກະສານຊ້ອນ A) ທີ່ສະຫະພາບເອີຣົບ ມອບໃຫ້ເຂົາເຈົ້າ ດ້ວຍຂໍ້ຈຳກັດການຄ້າ ທີ່ໜ້ອຍທີ່ສຸດ (ເອກະສານຊ້ອນທ້າຍ D).

ຫົວໜ່ວຍທຸລະກິດ ຢູ່ໃນ ສປປ ລາວ ທີ່ຕັ້ງໃຈຈະສົ່ງອອກ ໄມ້ ແລະ ຜະລິດຕະພັນໄມ້ ໄປຫາ ສະຫະພາບເອີຣົບ ຄວນກຳນົດວ່າ ຜະລິດຕະພັນຂອງຕົນ ຖືກຕ້ອງແລ້ວບໍ ກັບ ລະບຽບການ ຂອງສະພາ (EC) 338/97 ລົງວັນທີ 9 ທັນວາ 1996 ວ່າດ້ວຍການປົກປ້ອງຊະນິດພັນ ສັດ ແລະ ພືດປ່າ ໂດຍການຄວບຄຸມການຄ້າ ດັ່ງກ່າວນັ້ນ, ຊຶ່ງອີງໃສ່ ສົນທິສັນຍາ CITES.[335]

### *ຜົນກະທົບ ຂອງ* FLEGT VPA *ວ່າດ້ວຍຜົນການນຳໃຊ້ ຂອງ ສົນທິສັນຍາ* CITES *ສຳລັບ ສປປ ລາວ*

ໃນອະນາຄົດ, ລະບຽບການຂອງສະພາ (EC) 2173/2005 (ລະບຽບການ FLEGT), ທີ່ຈະມີຜົນນຳໃຊ້ກັບ ຜູ້ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຂອງ ສປປ ລາວ ໂດຍອີງໃສ່ ສັນຍາ VPA ທີ່ຈະມາເຖິງ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ, ຊຶ່ງກຳນົດວ່າ ຜະລິດຕະພັນໄມ້ ໄດ້ລວມຢູ່ໃນ, ເອກະສານຊ້ອນທ້າຍ A, B ແລະ C ຂອງ ລະບຽບການຂອງສະພາ (EC) ເລກທີ 338/97 ຈະບໍ່ຢູ່ພາຍໃຕ້ ຂັ້ນຕອນ ທີ່ໄດ້ອະທິບາຍໄວ້ ໂດຍມາດຕາ 4 (1) ຂອງ ລະບຽບການ FLEGT ສຳລັບ ຜະລິດຕະພັນ ທີ່ໄດ້ຮັບໃບອະນຸຍາດ FLEGT ກ່ຽວກັບການນຳເຂົ້າໄປໃນ ສະຫະພາບເອີຣົບ,

ຊຶ່ງໝາຍຄວາມວ່າ, ອີງຕາມຂໍ້ກໍານົດ ຫຼື ຄວາມຕ້ອງການທີ່ມີໄວ້ແລ້ວ ວ່າດ້ວຍການຄ້າທີ່ມີຂໍ້ຈໍາກັດ ສໍາລັບຜະລິດຕະພັນທີ່ມີລາຍຊື່ຢູ່ໃນເອກະສານຊ້ອນທ້າຍ A, B ແລະ C, ມີພຽງສະເພາະແຕ່ ຜະລິດຕະພັນໄມ້ ທີ່ນອນໃນລາຍຊື່ ໃນ ເອກະສານຊ້ອນທ້າຍ D ເທົ່ານັ້ນທີ່ຈະຢູ່ພາຍໃຕ້ ຂໍ້ຫ້າມເພີ່ມຕື່ມ ຖ້າບໍ່ມີ ໃບອະນຸຍາດ FLEGT ມານໍາ ຜະລິດຕະພັນນັ້ນ.

---

*ສໍາລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບ ກອບ ຂອງ ສົນທິສັນຍາ CITES:*
*ໃນກໍລະນີ ທີ່ມີຄວາມບໍ່ແນ່ນອນ ກ່ຽວກັບ ຄວາມຖືກຕ້ອງທາງດ້ານກົດໝາຍ ຂອງໄມ້ ທີ່ຈະຖືກຊື້ຂາຍ ພາຍໃຕ້ກອບ CITES, ຄະນະກໍາມະການເອີຣົບໄດ້ອອກເອກະສານແນະນໍາລະອຽດ ສໍາລັບ ບັນດາປະເທດສະມາຊິກ EU, ຊຶ່ງຍັງສາມາດເປັນປະໂຫຍດ ສໍາລັບພໍ່ຄ້າ ຢູ່ໃນ ສປປ ລາວ.*[336]

## d) ບັນດາກົດລະບຽບ ວ່າດ້ວຍ ການນໍາໃຊ້ ສານເຄມີ ຢູ່ໃນໄມ້ ແລະ ຜະລິດຕະພັນໄມ້ໄມ້

ຜະລິດຕະພັນໄມ້ ທີ່ບັນຈຸສານເຄມີບາງຊະນິດ, ກຸ່ມຂອງສານ ຫຼື ສານສ່ວນປະສົມ ອາດຈະບໍ່ສາມາດວາງຂາຍ ໃນຕະຫຼາດ EU ໄດ້ ຫຼື ຖືກຈໍາກັດຢ່າງຮຸນແຮງ. ເອກະສານຊ້ອນທ້າຍ XVII ໄປຫາ ລະບຽບການ REACH ຂອງ ສະຫະພາບເອີຣົບ ກໍານົດວ່າ ສານເຄມີ, ກຸ່ມຂອງສານ ຫຼື ສານປະສົມ ທີ່ມີລາຍຊື່ ໃນຕາຕະລາງ 25 ແມ່ນຈະບໍ່ໄດ້ຮັບອະນຸຍາດ ກ່ຽວກັບໄມ້ ຫຼື ຜະລິດຕະພັນໄມ້.[337]

**ຕາຕະລາງ 25: ສານເຄມີ ທີ່ບໍ່ອະນຸຍາດ ສໍາລັບ ໄມ້ ແລະ ຜະລິດຕະພັນໄມ້**

| | |
|---|---|
| **ສານປະສົມ *Mercury compounds*** | ບໍ່ໃຫ້ໃຊ້ ເປັນສານ ແລະ ອົງປະກອບ ຂອງກະກຽມ ທີ່ມີຄວາມຕັ້ງໃຈ ສໍາລັບໃຊ້ ປ້ອງກັນບໍ່ໃຫ້ເກີດຄວາມເປິເປື້ອນ ຍ້ອນ ຈຸລິນຊີ, ພືດ ຫຼື ສັດ ຂອງ ບາງຜະລິດຕະພັນ; ແລະ ໃນການຮັກສາໄມ້ບໍ່ໃຫ້ເສຍຄຸນນະພາບ.<br><br>*ສໍາລັບຂໍ້ມູນເພີ່ມຕື່ມ, ໃຫ້ອີງໃສ່ໝວດ 18 ຂອງ ເອກະສານຊ້ອນທ້າຍ XVII ຂອງ ລະບຽບການ REACH ຂອງ EU.* |
| **ສານປະສົມ *Arsenic compounds*** | (1) ບໍ່ວາງຂາຍໃນຕະຫຼາດ, ຫຼື ຖືກນໍາໃຊ້ເປັນສານ ຫຼື ຢູ່ໃນສານປະສົມ ເມື່ອ ມີຄວາມຕັ້ງໃຈ ໃຊ້ ສານ ຫຼື ສານປະສົມ ສໍາລັບ ປ້ອງກັນ ບໍ່ໃຫ້ເກີດຄວາມເປິເປື້ອນ ຍ້ອນ ຈຸລິນຊີ, ພືດ ຫຼື ສັດ ຂອງ ບາງຜະລິດຕະພັນ; ແລະ **ໃນການຮັກສາໄມ້ ບໍ່ໃຫ້ເສຍຄຸນນະພາບ.**<br><br>**ເຖິງຢ່າງໃດກໍຕາມ, ມີຂໍ້ຍົກເວັ້ນບາງຢ່າງ ໃນກໍລະນີ ການຮັກສາໄມ້ ບໍ່ໃຫ້ເສຍຄຸນນະພາບ – ໂດຍສະເພາະ ໃນເວລາຖືກນໍາໃຊ້ ໃນການຕິດຕັ້ງອຸດສາຫະກໍາ ທີ່ຢູ່ພາຍໃຕ້ ເງື່ອນໄຂສະເພາະໃດໜຶ່ງ ກ່ຽວກັບການນໍາໃຊ້ ແລະ ປະຕິບັດຕາມ ຂໍ້ກໍານົດ ຫຼື ຄວາມຕ້ອງການ ສະເພາະດ້ານການຕິດສະຫຼາກ**<br>*ສໍາລັບຂໍ້ມູນເພີ່ມຕື່ມ, ໃຫ້ອີງໃສ່ ໝວດ 4 ຂອງເອກະສານຊ້ອນທ້າຍ XVII ຂອງ ລະບຽບການ REACH ຂອງ EU.* |
| **ສານປະສົມ *Arsenic compounds* (ຕໍ່)** | (2) ໄມ້ທີ່ຖືກຮັກສາ ດ້ວຍສານປະສົມ *arsenic compounds* – ທີ່ຢູ່ໃນການນໍາໃຊ້ ໃນ EU ກ່ອນວັນທີ 30 ກັນຍາ 2007 ຫຼື ທີ່ຖືກວາງຂາຍ ໃນຕະຫຼາດ ໂດຍສອດຄ່ອງກັບສະພາບການທີ່ຍົກເວັ້ນ ທີ່ໄດ້ກ່າວມາຂ້າງເທິງ – ສາມາດຮັກສາ ໃຫ້ຢູ່ໃນສະຖານທີ່ ແລະ ສືບຕໍ່ ຖືກນໍາໃຊ້ ຈົນກວ່າ ຮອດຕອນທ້າຍ ຂອງອາຍຸການບໍລິການຂອງມັນ.<br>*ສໍາລັບຂໍ້ມູນເພີ່ມຕື່ມ, ໃຫ້ອີງໃສ ໝວດ 19 ຂອງ ເອກະສານຊ້ອນທ້າຍ XVII ຂອງ ລະບຽບການ REACH ຂອງ EU.* |

| | |
|---|---|
| | (3) ໄມ້ທີ່ຖືກຮັກສາດ້ວຍ ສານ *chromated copper arsenate* (CCA) ປະເພດ C – ໄດ້ຖືກນຳໃຊ້ ໃນ EU ກ່ອນວັນທີ 30 ກັນຍາ 2007, ຫຼື ທີ່ໄດ້ຖືກວາງຂາຍ ຢູ່ໃນຕະຫຼາດ ໂດຍສອດຄ່ອງກັບ ສະພາບການທີ່ຍົກເວັ້ນ ທີ່ໄດ້ກ່າວມາຂ້າງເທິງ – ສາມາດຖືກນຳໃຊ້ ຫຼື ນຳໃຊ້ຄືນ ພາຍໃຕ້ ຄວາມຖືກຕ້ອງສອດຄ່ອງ ກັບ ສະພາບເງື່ອນໄຂສະເພາະ.<br><br>*ສຳລັບຂໍ້ມູນເພີ່ມຕື່ມ, ໃຫ້ອີງໃສ່ ໝວດ 19 ຂອງເອກະສານຊ້ອນທ້າຍ XVII ຂອງ ລະບຽບການ REACH ຂອງ EU.* |
| **ບັນດາສານ ທີ່ຢູ່ພາຍໃຕ້ Entry 31 ຂອງ ເອກະສານຊ້ອນທ້າຍ XVII ຂອງລະບຽບການ REACH** | 9 ສານທີ່ນອນໃນບັນຊີລາຍຊື່ ພາຍໃຕ້ Entry 31 ຂອງ ເອກະສານຊ້ອນທ້າຍ XVII ຂອງ ລະບຽບການ REACH – ທີ່ຈະບໍ່ຖືກວາງຂາຍ ຢູ່ໃນຕະຫຼາດ, ຫຼື ຖືກນຳໃຊ້, ເປັນສານ ຫຼື ຢູ່ໃນສານປະສົມ ເມື່ອ ສານ ຫຼື ສານປະສົມ ມີເຈດຈຳນົງ ສຳລັບ ໃຊ້ຮັກສາໄມ້.<br><br>ເຖິງຢ່າງໃດກໍຕາມ, ມີຂໍ້ຍົກເວັ້ນ ໃນກໍລະນີ ສານ ແລະ ສານປະສົມ ຖືກນຳໃຊ້ ສຳລັບຮັກສາໄມ້ ໃນການຕິດຕັ້ງຂອງອຸດສາຫະກຳ ຫຼື ໂດຍ ຜູ້ຊ່ຽວຊານ ທີ່ຖືກກວມເອົາ ໂດຍ ນິຕິກຳ ຂອງ EU ວ່າດ້ວຍການປົກປ້ອງແຮງງານ.<br><br>ຜະລິດຕະພັນ ທີ່ຢູ່ພາຍໃຕ້ການຍົກເວັ້ນເຫຼົ່ານີ້ ແມ່ນຍັງຄົງຖືກຫ້າມ ສຳລັບ ການນຳໃຊ້ ຢູ່ໃນເງື່ອນໄຂອັນສະເພາະ (ທີ່ຢູ່ໃນຕຶກອາຄານ, ເຄື່ອງຫຼິ້ນ, ສະໜາມເດັກນ້ອຍຫຼິ້ນ ແລະ ການຜະລິດ ເຟີນີເຈີທີ່ຈະໃຊ້ໃນເດີນ, ແລະ ອື່ນໆ.).<br><br>*ສຳລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບຂໍ້ຍົກເວັ້ນເຫຼົ່ານີ້ ແລະ ວິທີນຳໃຊ້ພວກມັນ, ໃຫ້ອີງໃສ່ ໝວດ 31 ຂອງ ເອກະສານຊ້ອນທ້າຍ XVII ຂອງລະບຽບການ REACH ຂອງ EU.* |

**ຜູ້ປະກອບການ ຂອງ ສປປລາວ ແມ່ນຈະຖືກຮ້ອງຂໍ ໃຫ້ອ້າງອີງເຖິງ ໝວດທີ່ກ່ຽວຂ້ອງ ພາຍໃຕ້ ເອກະສານຊ້ອນທ້າຍ XVII ຂອງ ລະບຽບການ REACH ຂອງ ສະຫະພາບເອີຣົບ ເພື່ອຮັບ ລາຍລະອຽດສະເພາະ ກ່ຽວກັບຂໍ້ຈຳກັດ ໃນການນຳໃຊ້ທາດປະສົມເຄມີ ສຳລັບ ຜະລິດຕະພັນໄມ້, ເພື່ອສົ່ງອອກໄປຫາ ສະຫະພາບເອີຣົບ..**
ສຳລັບຂໍ້ມູນເພີ່ມຕື່ມ ກ່ຽວກັບເລື່ອງນີ້, ຜູ້ຜະລິດ ແລະ ພໍ່ຄ້າ ສາມາດຕິດຕໍ່ຫາ ອົງການເຄມີເອີຣົບ (ECHA), ທີ່ຄຸ້ມຄອງ ແລະ ປະສານງານ ການຈົດທະບຽນ, ການປະເມີນຜົນ, ການອະນຸຍາດ ແລະ ຂະບວນການຈຳກັດສານເຄມີ ຢູ່ໃນ ສະຫະພາບເອີຣົບ.[338]

## e) ບັນດາກົດລະບຽບ ທີ່ຄວບຄຸມ ວັດສະດຸຫຸ້ມຫໍ່ ທີ່ເປັນໄມ້

ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ທັງໝົດ ທີ່ຖືກນຳເຂົ້າ ໄປໃນ EU ຕ້ອງຢູ່ພາຍໃຕ້ ມາດຕະການປົກປ້ອງ ຕ້ານກັບ ສັດຕູພືດ ໂດຍສອດຄ່ອງກັບ ລະບຽບການ (EU) 2016/2031.[339] ກົດລະບຽບ ແມ່ນອີງໃສ່ ມາດຕະຖານສາກົນ ສຳລັບ ສຸຂານາໄມພືດ (ISPM) ເລກທີ 15 ປີ 2002 ຂອງ ອົງການອາຫານ ແລະ ກະສິກຳ (FAO) ແລະ ຕ້ອງການໃຫ້ ໝົດທຸກວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ແລະ ໄມ້ສຳລັບຫຸ້ມຫໍ່ ທີ່ມາຈາກ ບັນດາປະເທດທີ່ບໍ່ເປັນສະມາຊິກ EU ຢູ່ພາຍໃຕ້ ຂໍ້ກຳນົດ ຫຼື ຄວາມຕ້ອງການຕໍ່ໄປນີ:[340]

| ຂໍ້ກຳນົດ ຫຼື ຄວາມຕ້ອງການ ສຳລັບ ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ | ບໍ່ມີຜົນນຳໃຊ້ກັບ |
|---|---|

| | |
|---|---|
| ບໍ່ວ່າຈະໄດ້ຮັບການອົບດ້ວຍຄວາມຮ້ອນ ຫຼື ອົບດ້ວຍຄວັນໄຟ ໂດຍສອດຄ່ອງກັບ ຂັ້ນຕອນ ISPM 15 | ຂໍ້ກໍານົດ ຫຼື ຄວາມຕ້ອງການ ແມ່ນບໍ່ມີຜົນນໍາໃຊ້ກັບ:<br>▪ ໄມ້ທີ່ມີຄວາມໜາ 6 ມມ ຫຼື ບາງກວ່ານັ້ນ;<br>▪ ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ທີ່ຖືກສ້າງຂຶ້ນທັງໝົດ ຈາກ ໄມ້ທີ່ຜ່ານການປຸງແຕ່ງ ທີ່ນໍາໃຊ້ ກາວ, ຄວາມຮ້ອນ ແລະ ຄວາມດັນ ເຊັ່ນ. ໄມ້ອັດ (ຈາກການອັດແຜ່ນໄມ້ຫຼາຍແຜ່ນເຂົ້າກັນ), ໄມ້ອັດ (ຈາກການອັດໄມ້ຝອຍໃຫ້ເປັນແຜ່ນ) ແລະ ໄມ້ອັດທົ່ວໄປ; ຫຼື<br>▪ ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ທີ່ຖືກນໍາໃຊ້ ໃນການຄ້າ ຢູ່ພາຍໃນ EU. |
| ໝາຍ ຢ່າງເປັນທາງການ ດ້ວຍກາຈ້ຳ ISPM 15 ທີ່ປະກອບດ້ວຍ ສາມລະຫັດ (ປະເທດ, ຜູ້ຜະລິດ ແລະ ມາດຕະການທີ່ໄດ້ນໍາໃຊ້) ແລະ ໂລໂກ້ ຂອງ ສົນທິສັນຍາການປົກປ້ອງພືດສາກົນ (IPPC) | |
| ທີ່ໄດ້ຖືກເອົາເປືອກອອກ | |

ຂ້າງລຸ່ມນີ້ ແມ່ນເປັນຕົວຢ່າງ ຂອງກາຈ້ຳ **ISP M15** ທີ່ຖືກໃຊ້ ເພື່ອຢັ້ງຢືນວ່າ ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ແມ່ນຢູ່ພາຍໃຕ້ ການປະຕິບັດທີ່ໄດ້ຜ່ານການຮັບຮອງແລ້ວ.

**ຮູບ 23:** **ຕົວຢ່າງ ຂອງ ກາຈ້ຳ ISPM 15 ທີ່ຖືກນໍາໃຊ້ ສໍາລັບ ວັດສະດຸຫຸ້ມຫໍ່ອາຫານ**




*ແຫຼ່ງຂໍ້ມູນ:* GreenLabel Packaging and NordPal

ກາຈ້ຳ **ISPM 15** ປະກອບດ້ວຍ:

- ສັນຍາລັກ ການຢັ້ງຢືນ ຂອງ ສົນທິສັນຍາ ວ່າດ້ວຍການປົກປ້ອງພືດສາກົນ (IPPC);
- XX (ຫຼື DE ຢູ່ໃນຮູບພາບທີສອງ[341]) ໝາຍເຖິງ ລະຫັດປະເທດ ISO ສອງໂຕອັກສອນ ຫຼື ລະຫັດ ISO 3166-1 alpha-2;
- 000 ໝາຍເຖິງ ຕົວເລກຢັ້ງຢືນທີ່ເປັນເອກະລັກ ທີ່ອອກໃຫ້ແກ່ ອົງການປົກປ້ອງພືດແຫ່ງຊາດ (NPPO), ທີ່ຄວບຄຸມ ຜູ້ຜະລິດບັນຈຸພັນໄມ້. ການລວມເອົາ ຕົວເລກຢັ້ງຢືນນີ້ ມີຈຸດປະສົງ ເພື່ອຮັບປະກັນວ່າ ວັດສະດຸຫຸ້ມຫໍ່ໄມ້ ສາມາດຕິດຕາມຄືນຫຼັງ ໄປຫາ ອົງການປົກປ້ອງພືດແຫ່ງຊາດ (NPPO)/ອົງການກວດສອບ;
- 1111 (ຕົວເລກຫຼັງຈາກ XX/DE-NW) ໝາຍເຖິງ ຕົວເລກການຢັ້ງຢືນ ທີ່ເປັນເອກະລັກ ທີ່ອອກໃຫ້ ຜູ້ໃຫ້ການບະຕິບັດ ແລະ/ຫຼື ຜູ້ຜະລິດ. ການລວມເອົາຕົວເລກການຢັ້ງຢືນນີ້ ຮັບປະກັນວ່າ ວັດສະດຸຫຸ້ມຫໍ່ໄມ້ ສາມາດຖືກຕິດຕາມຄືນຫຼັງ ໄປຫາ ຜູ້ໃຫ້ການປະຕິບັດ ແລະ/ຫຼື ຜູ້ຜະລິດ;
- YY ໝາຍເຖິງ ການປະຕິບັດ ທີ່ມີຜົນນຳໃຊ້ກັບ ວັດສະດຸຫຸ້ມຫໍ່ໄມ້:
  - HT ແມ່ນລະຫັດ ສຳລັບການຮັກສາຄວາມຮ້ອນ ໃຫ້ຕ່ຳສຸດ 56 ° C (133 ° F) ສຳລັບໄລຍະເວລາຕ່ຳສຸດ 30 ນາທີ; ແລະ
  - MB ແມ່ນລະຫັດ ສຳລັບ ການຮົມຄວັນ ດ້ວຍອາຍ ເມທິນ ໂບຣໄມ (methyl bromide);
  - DB ໝາຍເຖິງ ໄມ້ທີ່ຖືກປອກເປືອກອອກ;

- DUN ເພີ່ມຕື່ມ (ບໍ່ໄດ້ສະໜອງໃຫ້ເຫັນ ຢູ່ໃນຮູບ ຂ້າງເທິງ) ໝາຍເຖິງ ລະຫັດ ສຳລັບ ໃນເວລາທີ່ ວັດສະດຸທີ່ເປັນໄມ້ແຂງ ຖືກນຳໃຊ້ ສຳລັບເຮັດເປັນໄມ້ຫຸ້ມຫໍ່ສິນຄ້າ. ລະຫັດໄມ້ຫຸ້ມຫໍ່ "DUN" ບໍ່ມີຜົນນຳໃຊ້ກັບ ການຫຸ້ມຫໍ່ດ້ວຍໄມ້ທີ່ຖືກຜະລິດ, ມີພຽງແຕ່ໄມ້/ໄມ້ທີ່ ຖືກຊອຍ ທີ່ຈະຊ່ວຍຮັບປະກັນ ໃຫ້ຜະລິດຕະພັນ ຖືກຂົນສົ່ງ.

ກາຈ້ຳສະແດງການປະຕິບັດຕາມ ISPM 15 ສາມາດລວມເອົາ ຂໍ້ມູນເພີ່ມຕື່ມ, ເນື່ອງຈາກ ຜູ້ຜະລິດ ແລະ ຜູ້ສະໜອງ ສາມາດເລືອກ ທີ່ຈະລວມເອົາ ຂໍ້ມູນເພີ່ມຕື່ມ ສຳລັບຈຸດປະສົງ ໃນການລະບຸຕົວຕົນ.

## f) ບັນດາກົດລະບຽບສົ່ງອອກ ຈາກ ສປປ ລາວ ສຳລັບ ຜະລິດຕະພັນໄມ້

ຜູ້ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຈາກ ສປປ ລາວ ຄວນຈະຮູ້ຈັກ ເຄື່ອງມືທາງນິຕິກຳ ຕໍ່ໄປນີ້:

| | |
|---|---|
| **ບົດແນະນຳ ວ່າດ້ວຍ ລາຍຊື່ ຜະລິດຕະພັນໄມ້ສົ່ງອອກ ເລກທີ. 186/DIH, ລົງວັນທີ 27 ກຸມພາ 2018[342]** | ເຟີນີເຈີໄມ້ (**ນິຍາມສັບ:** ຜະລິດຕະພັນໄມ້ສຳເລັດຮູບ) ປະກອບດ້ວຍ ຫຼາຍປະເພດ ແລະ ຮູບຮ່າງ ທີ່ສາມາດຖືກນຳໃຊ້, ແຍກອອກ ຫຼື ມ້າງອອກໄດ້. ຜະລິດຕະພັນໄມ້ເຫຼົ່ານີ້ ສາມາດສົ່ງອອກ ເປັນຊິ້ນສ່ວນ, ແຕ່ຕ້ອງໄດ້ບັນຈຸເປັນ ຫົວໜ່ວຍ ຜ່ານທາງ ຂະບວນການຜະລິດ, ເຊັ່ນ: ເລື່ອຍ ຫຼື ບາດ, ຕັດ, ອົບຢ່າງນຸ້ມນວນ, ຂັດດ້ວຍກະດາດຊາຍ, ເຈາະ ແລະ ທາສີ ຫຼື ບໍ່ທາສີ ຊຶ່ງຂຶ້ນຢູ່ກັບ ຮູບແບບ ຂອງແຕ່ລະຜະລິດຕະພັນໄມ້ ເຊັ່ນ ໂຕະ, ຕັ່ງອີ້, ຊັ້ນວາງ, ຕຽງ ແລະ ອື່ນໆ. ໃນກໍລະນີນີ້, ຜະລິດຕະພັນ ບໍ່ໄດ້ຮັບອະນຸຍາດໃຫ້ສົ່ງອອກ ເປັນຊິ້ນດຽວ, ເຊັ່ນ ຂາຂອງໂຕະ ຫຼື ຂາຂອງຕັ່ງ. |
| **ຄຳສັ່ງ ຂອງ ນາຍົກລັດຖະມົນຕີ, ເລກທີ 15 ວ່າດ້ວຍ ການເພີ່ມທະວີ ຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ການຂົນສົ່ງໄມ້ ແລະ ທຸລະກິດໄມ້[343]** | ຄຳສັ່ງສະບັບນີ້ ໂຈະການສົ່ງອອກໄມ້ທ່ອນ, ໄມ້ແປຮູບຂະໜາດໃຫຍ່, ໄມ້ທີ່ເລື່ອຍແລ້ວ, ໄມ້ທີ່ຖືກຜ່າ, ຮາກ, ເຫງົ້າ, ງ່າ, ງ່າໄມ້ ແລະ ຕົ້ນໄມ້ຢືນຕົ້ນ ຫຼື ຕົ້ນໄມ້ປະດັບທີ່ ຖືກຂຸດຄົ້ນ ມາຈາກປ່າທຳມະຊາດ ບໍ່ວ່າໃນກໍລະນີໃດກໍ່ຕາມ. |
| **ແຈ້ງການ ວ່າດ້ວຍການຍົກເວັ້ນ ການກຳນົດ ມູນຄ່າພາສີ ຂອງ ຜະລິດຕະພັນໄມ້ທີ່ຖືກ ສົ່ງອອກ ສຳລັບ ພື້ນຖານການຄິດໄລ່ ຄ່າທຳ ນຽມສົ່ງອອກ, ເລກທີ 0403/CD[344]** | ໝົດທຸກຜະລິດຕະພັນ ທີ່ມາຈາກຮາກໄມ້ ແມ່ນຈະຖືກຍົກເວັ້ນພິເສດ ຈາກຄ່າທຳ ນຽມສົ່ງອອກ ດັ່ງທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ 1.7, ວັກທີ 9 ຂອງ ຄຳແນະນຳ ຂອງ ລັດຖະມົນຕີການເງິນ, ເລກທີ 230/MOF. |

| | |
|---|---|
| **ແຈ້ງການ ວ່າດ້ວຍ ລະບຽບການ ກ່ຽວກັບ ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ແລະ ຜະລິດຕະພ ັນໄມ້ ສຳລັບ ການສົ່ງອອກ ຈາກ ສປປ ລາວ ໄປຕ່າງປະເທດ[345]** | ແຈ້ງການສະບັບນີ້ ແມ່ນກ່ຽວກັບ ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ແລະ ຜະລິດຕະພັນໄມ້ ທີ່ມີຄວາມໜາ ໜ້ອຍກວ່າ 6 ມມ ແລະ ຂັ້ນຕອນ ທີ່ຖືກນຳໃຊ້ ກ່ອນສົ່ງອອກ ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ແລະ ຜະລິດຕະພັນໄມ້. |
| **ຄຳແນະນຳ ກ່ຽວກັບ ການສົ່ງອອກ ຜະລິດຕະພັນໄມ້ສຳເລັດຮູບ ທີ່ງານວາງສະແດງສິນຄ້າ ເລກທີ 1027/TF.DIMEX ລົງວັນທີ 25 ພຶດສະພາ 2015 [346]** | ມູນຄ່າຜະລິດຕະພັນໄມ້ ທີ່ຊື້ຈາກ ງານວາງສະແດງ ສຳລັບການສົ່ງອອກ ແມ່ນບໍ່ເກີນ 160.000.000 ກີບ ຕໍ່ ຜູ້ສົ່ງອອກ (ໃນຄັ້ງດຽວ). ຖ້າມູນຄ່າ ຂອງຜະລິດຕະພັນໄມ້ ເກີນ 160.000.000 ກີບ ຕໍ່ ຊຸດ, ການສົ່ງອອກ ແມ່ນບໍ່ໃຫ້ເກີນ ໜຶ່ງຊຸດ. |
| **ຄຳແນະນຳເພີ່ມຕື່ມ ວ່າດ້ວຍ ຜະລິດຕະພັນເຄິ່ງສຳເລັດຮູບ ສຳລັບສົ່ງອອກ, ເລກທີ 2156/MOIC.DIMEX ລົງວັນທີ 19 ຕຸລາ 2015[347]** | ໂດຍມີການຍົກເວັ້ນໄມ້ເສົາ, ພະແນກອຸດສາຫະກຳ ແລະ ການຄ້າ ຢູ່ແຂວງ ແລະ ນະຄອນຫຼວງ ແມ່ນຈະຕ້ອງເຮັດວຽກ ກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອກວດສອບແຫຼ່ງກຳເນີດ ແລະ ລາຍງານຫາ ກົມນຳເຂົ້າ ແລະ ສົ່ງອອກ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ. |
| **ແຈ້ງການ ວ່າດ້ວຍ ການສົ່ງອອກໄມ້, ໄມ້ທ່ອນ (ໄມ້ເລື່ອຍ), ຜະລິດຕະພັນເຄິ່ງສຳເລັດຮູບ (ເຟີນີເຈີເຮືອນ) ຈະຕ້ອງຖືກລວມເຂົ້າກັນ ຢູ່ທີ່ ກົມພາສີ ເພື່ອທີ່ຈະອອກ ແຈ້ງການ ວ່າດ້ວຍ ການຈັດຕັ້ງປະຕິບັດ ເລກທີ 1324/CD[348]** | ຫຼັງຈາກລັດຖະບານ ໄດ້ຮັບຮອງ ການສົ່ງອອກໄມ້, ໄມ້ທ່ອນທີ່ຖືກເລື່ອຍແລ້ວ (ໄມ້ທີ່ຖືກເລື່ອຍ) ຫຼື ຜະລິດຕະພັນເຄິ່ງສຳເລັດຮູບ, ສຳເນົາແຈ້ງການ ຈາກ ລັດຖະບານ ຕ້ອງໄດ້ສະໜອງ ແກ່ກົມພາສີ ສຳລັບໃຫ້ອອກ ແຈ້ງການພາສີ ໄປຫາ ໜົດທຸກດ່ານພາສີສາກົນ ບ່ອນທີ່ມີການສົ່ງອອກສິນຄ້າ. |
| **ຂໍ້ຕົກລົງ ວ່າດ້ວຍຜະລິດຕະພັນໄມ້ ເລກທີ 2005/MoIC. DoIH ລົງວັນທີ 28 ກັນຍາ 2015[349]** | ເຈົ້າຂອງ ໂຮງງານປຸງແຕ່ງໄມ້ ທີ່ດຳເນີນທຸລະກິດຂອງຕົນ ໂດຍສອດຄ່ອງກັບ ລະບຽບການ ແລະ ມີຜົນງານທີ່ໂດດເດັ່ນ ໂດຍນຳໃຊ້ ວັດຖຸດິບ ທີ່ມີມູນຄ່າເພີ່ມ ສຳລັບປຸງແຕ່ງຜະລິດຕະພັນໄມ້ ທີ່ໄດ້ຕາມ ມາດຕະຖານ ສຳລັບ ການນຳໃຊ້ພາຍໃນ ແລະ ສົ່ງອອກ ແມ່ນຈະໄດ້ຮັບການສົ່ງເສີມ ຕາມທີ່ໄດ້ກ່າວໄວ້ ຢູ່ໃນ ກົດໝາຍ ວ່າດ້ວຍ ການປຸງແຕ່ງອຸດສາຫະກຳ. |

## V. ການຕິດສະຫຼາກ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການປຸງແຕ່ງ

### a) ການຕິດສະຫຼາກ ທີ່ກ່ຽວຂ້ອງກັບຄວາມຍືນຍາວ ສຳລັບ ຜະລິດຕະພັນໄມ້

ຜູ້ສົ່ງອອກ ຈາກ ສປປ ລາວ ທີ່ກຳລັງຊອກຫາ ການມີສ່ວນຮ່ວມ ໃນການສົ່ງອອກ ໄມ້ ແບບຍືນຍົງ ອາດຈະສາມາດວາງຂາຍ ຜະລິດຕະພັນ ໂດຍນຳໃຊ້ ກາສະຫຼາກທີ່ກ່ຽວຂ້ອງ ເຊັ່ນ: ກາສະຫຼາກ EU Ecolabel ແລະ ກາສະຫຼາກ ຂອງ ສະພາຄຸ້ມຄອງປ່າໄມ້ (FSC).

## b) ການນຳໃຊ້ ສະຫຼາກ EU Ecolabel ສຳລັບ ໄມ້ ແລະ ຜະລິດຕະພັນໄມ້

ຢູ່ໃນ ສະຫະພາບເອີຣົບ, Ecolabel ແມ່ນເປັນເຄື່ອງໝາຍທາງການ ສຳລັບຜະລິດຕະພັນ ທີ່ມີຜົນກະທົບໜ້ອຍສຸດ ຕໍ່ສິ່ງແວດລ້ອມ ທີ່ນອນຢູ່ໃນກຸ່ມຜະລິດຕະພັນໃດໜຶ່ງ. ມັນມີເປົ້າໝາຍເພື່ອສົ່ງເສີມ ການປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງ ຊ່ວຍຜູ້ບໍລິໂພກ ໃນການລະບຸຕົວຕົນຜະລິດຕະພັນເຫຼົ່ານັ້ນ ທີ່ປະກອບສ່ວນອັນສຳຄັນ ເຂົ້າໃນການປັບປຸງ ທີ່ກ່ຽວຂ້ອງກັບດ້ານສິ່ງແວດລ້ອມທີ່ສຳຄັນ. ການມີສ່ວນຮ່ວມ ຢູ່ໃນແຜນງານ ແມ່ນເປັນຄວາມສະໝັກໃຈ. ນີ້ກໍໝາຍຄວາມວ່າ ຜະລິດຕະພັນ ສາມາດຖືກຂາຍ ຢູ່ໃນຕະຫຼາດ ຂອງ EU ໂດຍບໍ່ມີ ໂລໂກ (ກາສະຫຼາກ) Ecolabel ແລະ ບໍ່ມີລະບຽບການ ທີ່ຕ້ອງການໃຫ້ ພໍ່ຄ້າ ນຳໃຊ້ໂລໂກ (ກາສະຫຼາກ).

ເມື່ອຜະລິດຕະພັນ ລວມຢູ່ໃນ ຄຳນິຍາມ ຂອງ ກຸ່ມຜະລິດຕະພັນ ແລະ ປະຕິບັດຕາມ ມາດຖານເງື່ອນໄຂ ສຳລັບສະຫຼາກ Ecolabel ທີ່ໄດ້ຖືກເຜີຍແຜ່, ຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ໃຫ້ບໍລິການ, ພໍ່ຄ້າ ຫຼື ຜູ້ຂາຍຍ່ອຍ ທີ່ຕັ້ງໃຈ ຈະຂາຍຜະລິດຕະພັນຂອງຕົນ ຢູ່ໃນສະຫະພາບເອີຣົບ ສາມາດສະເໜີຂໍໃຊ້ ສະຫຼາກ Ecolabel ໄດ້.[350]

ຜູ້ຜະລິດ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຕັ້ງໃຈຈະນຳໃຊ້ ກາສະຫຼາກ EU's Ecolabel ກັບຜະລິດຕະພັນຂອງຕົນ ຄວນກວດກາເງື່ອນໄຂແບບສະເພາະເຈາະຈົງ[351] ແລະ ເອກະສານໃຫ້ຂໍ້ມູນໂດຍຫຍໍ້ ທີ່ກ່ຽວຂ້ອງ.[352]

ສຳລັບຜູ້ຜະລິດໄມ້ ແລະ ຜະລິດຕະພັນໄມ້ ຈາກ ສປປ ລາວ, ຄຳຮ້ອງສະເໜີ ຕ້ອງຍື່ນໄປຫາ ອົງການຈັດຕັ້ງທີ່ມີສິດອຳນາດ ຂອງ ປະເທດທີ່ເປັນສະມາຊິກ EU ໃດໜຶ່ງ ບ່ອນທີ່ຜະລິດຕະພັນ ຈະຖືກວາງຂາຍ, ຫຼື ໄດ້ວາງຂາຍແລ້ວ ຢູ່ໃນຕະຫຼາດ. ການສະເໜີ ຕ້ອງປະກອບມີເອກະສານທີ່ກ່ຽວຂ້ອງທັງໝົດ ເພື່ອພິສູດວ່າ ຜະລິດຕະພັນ ຖືກຕ້ອງສອດຄ່ອງກັບ ມາດຖານເງື່ອນໄຂ ທາງດ້ານນິເວດວິທະຍາ ແລະ ການປະຕິບັດ ທີ່ກ່ຽວຂ້ອງ. ອົງການຈັດຕັ້ງທີ່ມີສິດອຳນາດ ຈະແຈ້ງ ຜູ້ສະເໜີ ກ່ຽວກັບ ບັນດາເອກະສານທີ່ຈຳເປັນ ທີ່ຈະຕ້ອງສົ່ງ, ກ່ຽວກັບຜົນການທົດສອບ ທີ່ຈະຕ້ອງໄດ້ສະໜອງ ແລະ ວິທີການດຳເນີນການທົດສອບ. ຖ້າຄຳສະເໜີ ປະສົບຜົນສຳເລັດ, ອົງການຈັດຕັ້ງທີ່ມີສິດອຳນາດ ຈະມອບສັນຍາ ທີ່ປະກອບດ້ວຍ ຂໍ້ກຳນົດ ວ່າດ້ວຍການນຳໃຊ້ ກາສະຫຼາກ ແກ່ ຜູ້ສະເໜີທີ່ຍື່ນຄຳຮ້ອງ.

ຜະລິດຕະພັນ ທີ່ຕິດກາສະຫຼາກ Ecolabel ສາມາດວາງຂາຍໄດ້ ຢູ່ໃນທຸກປະເທດສະມາຊິກ EU. ການສະເໜີຂໍ ໃຫ້ມີການມອບ ການສະຫຼາກແມ່ນຂຶ້ນກັບ ການຈ່າຍຄ່າທຳນຽມ. ນອກຈາກນັ້ນ, ຍັງມີຄ່າທຳນຽມປະຈຳປີ ສຳລັບການນຳໃຊ້ ສະຫຼາກ.
ຂໍ້ມູນລະອຽດ ກ່ຽວກັບ ມາດຖານເງື່ອນໄຂ ໃນປັດຈຸບັນ ແມ່ນຢູ່ທີ່ www.ecolabel.eu.

## c) ການນຳໃຊ້ ສະຫຼາກ EU Ecolabel ສຳລັບ ເຟີນີເຈີ

*ການນຳໃຊ້ ກາສະຫຼາກ* EU Ecolabel *ສຳລັບ ເຟີນີເຈີ ແມ່ນຖືກຄວບຄຸມ ໂດຍ ຂໍ້ຕົກລົງຂອງຄະນະກຳມະການ* (EU) 2016/1332 *ລົງວັນທີ* 28 *ກໍລະກົດ* 2016 *ທີ່ກຳນົດເງື່ອນໄຂທາງດ້ານນິເວດວິທະຍາ ສຳລັບ ການມອບ ກາສະຫຼາກ* EU Ecolabel *ແກ່ ເຟີນີເຈີ.*[353]
*ອີງຕາມ ຂໍ້ຕົກລົງ ຂອງ ຄະນະກຳມະການ* (EU) 2016/1332," *ກຸ່ມຜະລິດຕະພັນ 'ເຟີນີເຈີ ຈະຕ້ອງປະກອບດ້ວຍ ເຟີນີເຈີທີ່ຜະລິດມາເພື່ອເອົາໄປໃຊ້ເລີຍ ຫຼື ເຟີນີເຈີທີ່ສ້າງຂຶ້ນໃນສະຖານທີ່ນັ້ນເລີຍ ຊຶ່ງມີໜ້າທີ່ຫຼັກ ແມ່ນເພື່ອຖືກນຳໃຊ້ ສຳລັບເກັບມ້ຽນ, ວາງຂອງ ຫຼື ຫ້ອຍເຄື່ອງ ແລະ/ ຫຼື ເປັນພື້ນຜິວ ທີ່ຜູ້ໃຊ້ ສາມາດພັກຜ່ອນ, ນັ່ງ, ກິນເຂົ້າ, ຮຽນໜັງສື ຫຼື ເຮັດວຽກ, ບໍ່ວ່າຈະໃຊ້ພາຍໃນ ຫຼື ພາຍນອກກໍ່ໄດ້.* ຂອບເຂດ ຂອງຂໍ້ຕົກລົງ ຍັງໄດ້ຂະຫຍາຍໄປກວມເອົາ ລາຍການເຟີນີເຈີພາຍໃນ ແລະ ລາຍການເຟີນີເຈີຕາມສັນຍາ ສຳລັບໃຊ້ໃນສະພາບແວດລ້ອມພາຍໃນ ຫຼື ບໍ່ພາຍໃນປະເທດ. ຂອບຕຽງ, ຂາ, ຖານ, ແລະ ຫົວກະດານ ແມ່ນລວມຢູ່ໃນຂອບເຂດ".

ກອບດັ່ງກ່າວນີ້ ຄຳນຶງເຖິງ ການຂະຫຍາຍ ຂອບເຂດຂອງເຟີນີເຈີ ເພື່ອອະນຸຍາດ ໃຫ້ມີການນຳໃຊ້ວັດສະດຸອື່ນ ທີ່ບໍ່ແມ່ນໄມ້. ຄວາມສັບສົນທີ່ເພີ່ມຂຶ້ນ ຂອງມາດຖານໃໝ່ ໄດ້ຄຳນຶງເຖິງ ຜົນກະທົບຕໍ່ສິ່ງແວດລ້ອມ ຂອງວັດສະດຸໃໝ່ ເຊັ່ນ: ແຜ່ນແພ, ໜັງ, ໂລຫະ ແລະ ພາດສະຕິກ, ຊຶ່ງຍັງຈະຕ້ອງໄດ້ຮັບການພິຈາລະນາ ສຳລັບຜະລິດຕະພັນເຟີນີເຈີ ທີ່ຄວນຈະມີ ກາສະຫຼາກ EU Ecolabel.

### *ການອະນຸຍາດ ໃຫ້ນຳໃຊ້ ການສະຫຼາກ EU Ecolabel ຕໍ່ ເຟີນີເຈີ*

*ການນຳໃຊ້ ການສະຫຼາກ Eu Ecolabel ຕໍ່ເຟີນີເຈີ ແມ່ນຈະໄດ້ຮັບອະນຸຍາດ ຈາກ ອົງການທີ່ມີສິດອຳນາດ ຂອງ EU ພາຍຫຼັງ ທີ່ມີການປະເມີນທາງດ້ານເຕັກນິກ ໂດຍອີງໃສ່ ບັນດາມາດຖານເງື່ອນໄຂ ທີ່ມອບໃນລາຍຊື່ ຂອງ ເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງ ຂອງ ຄະນະກຳມະການ* (EU) 2016/1332.

### *ຜູ້ສົ່ງອອກ ເຟີນີເຈີໄມ້ ຈາກ ສປປ ລາວ ຍັງຈະຕ້ອງຮັບຮູ້ ດ້ານຕ່າງໆ ດັ່ງຕໍ່ໄປນີ້*

| | |
|---|---|
| **ມາດຖານເງື່ອນໄຂ 2 – ຂໍ້ກຳນົດ ຫຼື ຄວາມຕ້ອງການ ທົ່ວໄປ ສຳລັບ ສານ ແລະ ສ່ວນປະສົມ ທີ່ເປັນອັນຕະລາຍ** | ຈຳກັດ ສິ່ງທີ່ມີຢູ່ໃນຜະລິດຕະພັນ ແລະ ທຸກສ່ວນປະກອບ/ວັດສະດຸ ຂອງສານ ທີ່ຖືກກຳນົດ ຕາມມາດຕາ 59 (1) ຂອງ ລະບຽບການ REACH ທີ່ເປັນສານ ມີຄວາມກັງວົນສູງຫຼາຍ (SVHCs) *ຫຼື ສານ ແລະ ສ່ວນປະສົມ ທີ່ໄດ້ຕາມມາດຖານເງື່ອນໄຂ ສຳລັບ **ການຈັດປະເພດ, ການຕິດສະຫຼາກ ແລະ ການຫຸ້ມຫໍ່ (CLP) ຕາມລະບຽບການ (EC) ເລກທີ 1272/2008 ຂອງ ລັດຖະສະພາ ແລະ ສະພາເອີຣົບ ລົງວັນທີ 16 ທັນວາ 2008 ວ່າດ້ວຍ ການຈັດປະເພດ, ການຕິດສະຫຼາກ ແລະ ການຫຸ້ມຫໍ່ສານ ແລະ ສ່ວນປະສົມ.***<br><br>ກຸ່ມສານຕົ້ນຕໍ ທີ່ມີຄວາມກັງວົນ ແມ່ນຖືກລະບຸວ່າ ເປັນຜະລິດຕະພັນຊີວະພາບ, ທາດລະງັບໄຟ, ກາວ/ຢາງ, ສີ/ສີຂັດ/ນ້ຳມຶກ/ສີຍ້ອມ, ນ້ຳຢາເຮັດໃຫ້ປລັດສະຕິກອ່ອນຕົວ ແລະ ສານເຮັດໃຫ້ເກີດໂຟມ.<br><br>ສຳລັບຈຸດປະສົງ ຂອງ ມາດຕະຖານເງື່ອນໄຂ 2, ບັນຊີລາຍຊື່ຄົບຖ້ວນ ຂອງສານ ທີ່ມີຄວາມກັງວົນສູງຫຼາຍ (SVHCs) ແລະ ການຈັດປະເພດ, ການຕິດສະຫຼາກ ແລະ ການຫຸ້ມຫໍ່ (CLP) ຂອງ ການຈັດປະເພດອັນຕະລາຍ ທີ່ມີໄອອອນບອກ ແມ່ນສະແດງຟໃຫ້ເຫັນ ໃນຕາຕະລາງ 1 ພາຍໃນເອກະສານຊ້ອນທ້າຍ ຂອງ **ຂໍ້ຕົກລົງ ຂອງຄະນະກຳມະການ (EU) 2016/1332** ແລະ ອີງຕາມ ຄວາມເປັນອັນຕະລາຍຂອງພວກມັນ. |
| **ມາດຖານເງື່ອນໄຂ 3 – ໄມ້, ວັດສະດຸທີ່ໃຊ້ຜະລິດຜາອັດແກ້ວວາຍ, ໄມ້ໄຜ່ ແລະ ຫວາຍ** | ຢູ່ໃນສ່ວນທີ່ກ່ຽວຂ້ອງຫຼາຍທີ່ສຸດ, ກຳນົດວ່າ:<br>▪ ໄມ້, ວັດສະດຸທີ່ໃຊ້ຜະລິດຜາປິດແກ້ວວາຍ, ໄມ້ໄຜ່ ແລະ ຫວາຍ ຈະຕ້ອງມອບຢູ່ໃນ ໃບຍັ້ງຢືນ ຕ່ອງໂສ້ການເບິ່ງແຍງຮັກສາ ທີ່ອອກໂດຍ ແຜນງານການຍັ້ງຢືນຈາກ ຝ່າຍທີສາມ ເຊັ່ນ ສະພາຄຸ້ມຄອງປ່າໄມ້ (FSC), ແຜນງານຮັບຮອງ ການຍັ້ງຢືນປ່າໄມ້ (PEFC) ຫຼື ທຽບເທົ່າ, ແລະ<br>▪ ໄມ້, ວັດສະດຸທີ່ໃຊ້ຜະລິດຜາປິດແກ້ວວາຍ, ໄມ້ໄຜ່ ແລະ ຫວາຍ ທີ່ບໍລິສຸດທັງໝົດ ຈະຕ້ອງບໍ່ມີແຫຼ່ງກຳເນີດມາຈາກ ຊະນິດພັນ GMO ແລະ ຈະຕ້ອງມອບຢູ່ໃນ ໃບຍັ້ງຢືນປ່າໄມ້ແບບຍືນນານ ທີ່ມີຜົນນຳໃຊ້ໄດ້ ທີ່ອອກໂດຍ ແຜນງານຍັ້ງຢືນຍ່າງເອກະລາດ ຈາກຝ່າຍທີສາມ ເຊັ່ນ FSC, PEFC ຫຼື ທຽບເທົ່າ. |

ກ່ຽວກັບສານທີ່ຖືກຈຳກັດ, ນອກຈາກ ເງື່ອນໄຂທົ່ວໄປ ກ່ຽວກັບສານອັນຕະລາຍ ທີ່ຖືກກຳນົດຂຶ້ນ ໂດຍມາດຕະຖານເງື່ອນໄຂ 2, ພາຍຫຼັງ ທີ່ເງື່ອນໄຂສະເພາະຕໍ່ໄປນີ້ ທີ່ໄດ້ກຳນົດໄວ້ໃນ ມາດຕະຖານ 3 ມີຜົນນຳໃຊ້ກັບ ອົງປະກອບ ຂອງເຟີນີເຈີ ທີ່ເຮັດດ້ວຍໄມ້, ວັດສະດຸທີ່ໃຊ້ຜະລິດຜາອັດແກ້ວວາຍ, ໄມ້ໄຜ່ ຫຼື ຫວາຍ:

**ສານປົນເປື້ອນ ທີ່ຢູ່ໃນ ໄມ້ຣີຊາຍໂຄ (Recycled) ທີ່ຖືກນຳໃຊ້ ຢູ່ໃນແຜ່ນໄມ້:** ທຸກ ·ເສັ້ນໃຍໄມ້ ຫຼື ໄມ້ພອຍ ທີ່ຖືກຜ່ານຂະບວນການນຳມາຜະລິດໃຊ້ຄືນ (ຮຽກວ່າ Recycled) ທີ່ຖືກນຳໃຊ້ ຢູ່ໃນການຜະລິດ ແຜ່ນໄມ້ ແມ່ນຕ້ອງການໃຫ້ດຳເນີນການທົດສອບ ຕາມ ມາດຕະຖານ

ຂອງ ສະຫະພັນໄມ້ແປ້ນ ແຫ່ງເອີຣົບ[354] ສຳລັບ ເງື່ອນໄຂການຈັດສິ່ງໄມ້ recycled ແລະ ເພື່ອປະຕິບັດຕາມ ຂອບເຂດຈຳກັດ ສຳລັບສານປົນເປື້ອນ ຕາມທີ່ມີລາຍຊື່ ໃນຕາຕະລາງ 3 ຂອງ ເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງ ຂອງຄະນະກຳມະການ (EU) 2016/1332;

**ໂລຫະໜັກ ທີ່ຢູ່ໃນ ສີ, ສີຮອງພື້ນ ແລະ ສີຂັດເງົາ:** ສີ, ສີຮອງພື້ນ ຫຼື ສີຂັດເງົາ ທີ່ຖືກນຳໃຊ້ ຢູ່ໃນໄມ້ ຫຼື ວັດສະດຸໄມ້ ແມ່ນຈະຕ້ອງບໍ່ໃຫ້ມີສານຕ່າງໆ ໂດຍອີງຕາມ cadmium, lead, chromium VI, mercury, arsenic ຫຼື selenium, ທີ່ມີຄວາມເຂັ້ມຂຸ້ນ ເກີນ 0,010% w/ w ສຳລັບແຕ່ລະໂລຫະ ທີ່ຢູ່ໃນການທາສີກະປ໋ອງ, ສີຮອງພື້ນ ຫຼື ສີຂັດເງົາ. *ກົດລະບຽບສະບັບນີ້ ມີຜົນນຳໃຊ້ ຢູ່ໃນສະພາບເງື່ອນໄຂ ທີ່ໄດ້ກຳນົດໄວ້ ຢູ່ໃນມາດຖານເງື່ອນໄຂຍ່ອຍ* 3.2 (c) *ຂອງເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງ ຂອງຄະນະກຳມະການ* (EU) 2016/1332;

**ສ່ວນປະກອບ ທາດປະສົມອົງຄະທາດ ທີ່ລະເຫີຍອາຍ (VOC) ທີ່ມີຢູ່ໃນ ສີ, ສີຮອງພື້ນ ແລະ ສີຂັດເງົາ:** ສ່ວນປະກອບ ຢູ່ໃນທາດປະສົມອົງຄະທາດ ທີ່ລະເຫີຍອາຍ (VOC) ຂອງ ສີ, ສີຮອງພື້ນ ແລະ ສີຂັດເງົາ ທີ່ຖືກນຳໃຊ້ເຄືອບ ໄມ້ ຫຼື ແຜ່ນໄມ້ໃດໜຶ່ງ ເພື່ອການຜະລິດ ຜະລິດຕະພັນເຟີນີເຈີ ແມ່ນບໍ່ໃຫ້ເກີນ 5 % (ຄວາມເຂັ້ມຂຸ້ນໃນກະປ໋ອງ). *ເຖິງແນວໃດກໍ່ຕາມ, ການເຄືອບເນື້ອຜິວ ທີ່ມີ* VOC *ທີ່ສູງຂຶ້ນ ສາມາດຖືກນຳໃຊ້ໄດ້ ໃນບາງເງື່ອນໄຂ ທີ່ຢູ່ໃນລາຍຊື່ ຂອງ ເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງ ຂອງຄະນະກຳມະການ* (EU) 2016/1332;

**ການປ່ອຍອາຍ ຟໍມາດີໄຮ (Formaldehyde emissions) ຈາກແຜ່ນໄມ້:** *ການປ່ອຍອາຍຟໍມາດີໄຮ ຈາກແຜ່ນໄມ້ ແມ່ນຖືກຄວບຄຸມ ບົນພື້ນຖານ ມາດຖານເງື່ອນໄຂຍ່ອຍ* 3.3 *ຂອງ ເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງ ຂອງຄະນະກຳມະການ* (EU) 2016/1332.

### *ການລວມເອົາ ຂໍ້ຄວາມໂຕໜັງສື ທີ່ເປັນທາງເລືອກ ໃສ່ໃນ ກາສະຫຼາກ* Ecolabel *ສຳລັບ ເຟີນີເຈີ*

ໃນແງ່ຂອງຂໍ້ມູນ ທີ່ປະກົດຢູ່ໃນ ສະຫຼາກ EU Ecolabel ສຳລັບ ເຟີນີເຈີ, ຖ້າ "ກາສະຫຼາກທີ່ເປັນທາງເລືອກ" ທີ່ມີຫ້ອງຂໍ້ຄວາມໂຕໜັງສືເພີ່ມຕື່ມເຂົ້າມາ ຖືກນຳໃຊ້, ມາດຖານເງື່ອນໄຂ 11 ຂອງເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງ ຂອງຄະນະກຳມະການ (EU) 2016/1332 ຈະຕ້ອງໄດ້ນຳສິ່ງດັ່ງກ່າວນີ້ ໄປພິຈາລະນາ.




ຖ້າເວົ້າລົງເລິກໄປອີກ, ສາມຂໍ້ຄວາມຕໍ່ໄປນີ້ ສາມາດຖືກບັນຈຸ ຢູ່ໃນ ກາສະຫຼາກ ທີ່ເປັນທາງເລືອກ, ຕາມທີ່ກ່ຽວຂ້ອງ:

- ໄມ້, ວັດສະດຸທີ່ນຳໃຊ້ຜະລິດຜາອັດປາກແກ້ວອາຍ, ໄມ້ໄຜ່ ແລະ ຫວາຍ ທີ່ມາຈາກປ່າໄມ້ ທີ່ໄດ້ຮັບການຄຸ້ມຄອງ ແບບຍືນຍົງ;
- ສ່ວນປະກອບ ທີ່ຖືກ Recycled (ໄມ້ ຫຼື ພາດສະຕິກ, ຖ້າເໝາະສົມ);
- ສານອັນຕະລາຍ ທີ່ຖືກຈຳກັດ;
- ບໍ່ໄດ້ນຳໃຊ້ ຜະລິດຕະພັນຊີວະພາບ (ຖ້າກ່ຽວຂ້ອງກັນ);
- ບໍ່ໄດ້ນຳໃຊ້ ດ້ວຍຢາດັບໄຟ (ຖ້າກ່ຽວຂ້ອງກັນ);
- ຜະລິດຕະພັນ ທີ່ມີການປ່ອຍອາຍ ຟໍມາດີໄຮ ຕ່ຳ;
- ຜະລິດຕະພັນການປ່ອຍ ສານປະສົມອົງຄະທາດ (VOC) ທີ່ລະເຫີຍໄດ້ຕ່ຳ;
- ຜະລິດຕະພັນ ທີ່ຖືກອອກແບບມາ ສຳລັບ ການຖອດມ້າງ ແລະ ງ່າຍຕໍ່ການສ້ອມແປງ.

ເມື່ອວັດສະດຸແຜ່ນແພທີ່ເຮັດດ້ວຍຝ້າຍ ໄດ້ຖືກໃຊ້ຢູ່ໃນ ການຜະລິດເຟີນີເຈີ ທີ່ມີນວມ ທີ່ນຳໃຊ້ ຝ້າຍ ທີ່ມີການຄຸ້ມຄອງສັດຕູພືດ ແບບປອດສານພິດ ຫຼື ເຊື່ອມໂຍງກັນ (IPM), ຂໍ້ຄວາມ ສາມາດສະແດງຢູ່ໃນຫ້ອງ 2 ຂອງ ກາສະຫຼາກ EU Ecolabel ດັ່ງຕໍ່ໄປນີ້:

ຂໍ້ມູນ ທີ່ສາມາດປະກົດ ນໍາກັນກັບ ກາສະຫຼາກ EU Ecolabel ທີ່ກ່ຽວຂ້ອງກັບ ຜ້າຍ ໃນແຜນແຜ

| ລາຍລະອຽດ ຂອງ ການຜະລິດ | ຂໍ້ຄວາມໂຕຫັນງສື ທີ່ສາມາດ ສະແດງໄດ້ |
|---|---|
| ສ່ວນປະກອບອິງຄະທາດ ທີ່ມີຫຼາຍກວ່າ 95% | ແຜ່ນແຜ ທີ່ຜະລິດຂຶ້ນ ດ້ວຍຝ້າຍປອດສານພິດ |
| ສ່ວນປະກອບ ທີ່ມີການຄຸ້ມຄອງສັດຕູພືດ ແບບເຊື່ອມໂຍງກັນ (IPM) ຫຼາຍກວ່າ 70% | ຝ້າຍ ທີ່ປູກ ໂດຍມີການຫຼຸດຜ່ອນ ການນໍາໃຊ້ ຢາປາບສັດຕູພືດ |

*ສໍາລັບ ຂໍ້ມູນເພີ່ມຕື່ມ:*

- *ບົດແນະນໍາ ສໍາລັບການໃຊ້ ປ້າຍສະຫຼາກທີ່ເປັນທາງເລືອກ ທີ່ມີຫ້ອງຂໍ້ຄວາມໂຕຫນັງສື ສາມາດພົບເຫັນໄດ້ ຢູ່ໃນ 'ບົດແນະນໍາ ວ່າດ້ວຍ ໂລໂກ້ກາສະຫຼາກ EU Ecolabel', ຊຶ່ງມີຢູ່ທີ່ http://ec.europa.eu/environment/ecolabel/documents/logo_guidelines.pdf.*
- *ຜູ້ສົ່ງອອກ ເຟີນິເຈີ ແລະ ຜະລິດຕະພັນ ແລະ ສ່ວນປະກອບ ເຟີນິເຈີ ຈາກ ສປປ ລາວ ທີ່ມີຄວາມຕັ້ງໃຈ ນໍາໃຊ້ ສະຫຼາກ EU ແມ່ນຈະຖືກແນະນໍາໃຫ້ສ້າງຄວາມລຶ້ງເຄີຍ ດ້ວຍຕົນເອງ ກັບ ບັນດາເງື່ອນໄຂ ສໍາລັບ ມອບກາສະຫຼາກ EU Ecolabel ສໍາລັບ ຜະລິດຕະພັນ ເຟີນິເຈີ ທີ່ຖືກກໍານົດ ຢູ່ໃນ ເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງ ຂອງຄະນະກໍາມະການ (EU) 2016/1332*

## d) ກາສະຫຼາກ ຂອງ ສະພາຄຸ້ມຄອງປ່າໄມ້ (FSC)

ສະພາຄຸ້ມຄອງປ່າໄມ້ (FSC) ແມ່ນເປັນອົງການຈັດຕັ້ງສາກົນ ທີ່ບໍ່ຫວັງຜົນກໍາໄລ ແລະ ເປັນອົງການຈັດທີ່ມີຫຼາຍພາກສ່ວນເຂົ້າຮ່ວມ ຖືກສ້າງຕັ້ງຂຶ້ນໃນປີ 1993, ຊຶ່ງມີຈຸດປະສົງ ເພື່ອສົ່ງເສີມ ການຄຸ້ມຄອງປ່າໄມ້ຂອງໂລກ ຢ່າງມີຄວາມຮັບຜິດຊອບ ຜ່ານທາງ ການກວດສອບ ແລະ ການຢັ້ງຢືນ ຈາກເອກະຊົນ. FSC ເປັນເຈົ້າຂອງ ເຄື່ອງໝາຍການຄ້າ ທີ່ຈົດທະບຽນແລ້ວ ທີ່ສາມາດນໍາໃຊ້ກັບ ໄມ້ ແລະ ຜະລິດຕະພັນປ່າໄມ້ອື່ນໆ ຢູ່ທົ່ວໂລກ ເມື່ອຜະລິດຕະພັນ ໄດ້ຜ່ານການກວດສອບ ແລະ ຢັ້ງຢືນ ຕາມຄວາມເໝາະສົມ.[355]

ການຢັ້ງຢືນ ຂອງ FSC ອາດສາມາດເປັນປະໂຫຍດ ຕໍ່ກັບ ຜູ້ສົ່ງອອກ ຂອງ ສປປ ລາວ ໃນດ້ານການຕະຫຼາດ ແລະ ອາດຈະເປັນທີ່ຕ້ອງການ ຂອງລູກຄ້າບາງປະເທດ ໃນສະຫະພາບເອີຣົບ.

ດັ່ງນັ້ນ, ຜູ້ສົ່ງອອກ ຈາກ ສປປ ລາວ ທີ່ປະຕິບັດຕາມເງື່ອນໄຂຄວາມຕ້ອງການ ຂອງ FSC ສາມາດໄດ້ຮັບການອະນຸມັດ ໃຫ້ນໍາໃຊ້ກາສະຫຼາກ ຕໍ່ໄປນີ້.

**FSC 100%**

FSC www.fsc.org 100% From well-managed forests FSC® C000000

*'ວັດສະດຸທັງໝົດ ທີ່ໃຊ້ຢູ່ໃນຜະລິດຕະພັນ ທີ່ຕິດປ້າຍສະຫຼາກນີ້ ແມ່ນໄດ້ມາຈາກປ່າໄມ້ ທີ່ໄດ້ຜ່ານການກວດສອບ ໂດຍບຸກຄົນທີສາມທີ່ ເປັນເອກະລາດ ເພື່ອຢືນຢັນວ່າ ພວກມັນຖືກຄຸ້ມຄອງ ຕາມມາດຕະຖານທາງສັງຄົມ ແລະ ສິ່ງແວດລ້ອມ ຂອງ FSC. ໃນຈໍານວນກາສະຫຼາກທັງໝົດ ຂອງ FSC, FSC 100% ປະກອບສ່ວນຫຼາຍທີ່ສຸດ ໂດຍກົງກັບ ຕໍ່ກັບ ຈຸດປະສົງຂອງ FSC ກ່ຽວກັບ "ປ່າໄມ້ເພື່ອໝົດທຸກຄົນ, ຕະຫຼອດໄປ" ແລະ ດັ່ງນັ້ນ, ຈຶ່ງເປັນເຄື່ອງາຍສູງສຸດ ທີ່ສະແດງຄວາມແຕກຕ່າງ ສໍາລັບ ຜະລິດຕະພັນທີ່ໄດ້ຮັບການຢັ້ງຢືນ.'*

**FSC RECYCLED**

FSC www.fsc.org RECYCLED Made from recycled material FSC® C000000

*'ຜະລິດຕະພັນ ທີ່ມີປ້າຍສະຫຼາກນີ້ ແມ່ນໄດ້ຮັບການກວດສອບວ່າ ຜະລິດມາຈາກ ວັດສະດຸທີ່ຖືກນໍາມາໃຊ້ຄືນ (ບໍ່ວ່າຈະເປັນ ວັດສະດຸ ທີ່ຖືກນໍາມາໃຊ້ຄືນ ຫຼັງຜູ້ບໍລິໂພກ ຫຼື ກ່ອນຜູ້ບໍລິໂພກ). ການນໍາໃຊ້ຜະລິດຕະພັນ ທີ່ມີກາສະຫຼາກ FSC Recycled ສາມາດຊ່ວຍຫຼຸດຜ່ອນ ຄວາມກົດດັນ ຂອງ ຄວາມຕ້ອງການ ຈາກແຫຼ່ງ ວັດສະດຸອັນບໍລິສຸດ, ສະນັ້ນ ຈຶ່ງຊ່ວຍປົກປ້ອງປ່າໄມ້ຂອງໂລກ.'*

**FSC MIX**

*'ຜະລິດຕະພັນ ທີ່ໃສ່ປ້າຍສະຫຼາກນີ້ ແມ່ນຜະລິດຂຶ້ນ ໂດຍການປະສົມວັດສະດຸ ທີ່ມາຈາກປ່າທີ່ ໄດ້ຖືກຮັບຮອງຈາກ FSC, ວັດສະດຸທີ່ນໍາກັບມາໃຊ້ຄືນໃໝ່ ແລະ/ຫຼື ໄມ້ທີ່ຖືກຄວບຄຸມໂດຍ FSC. ໃນຂະນະທີ່ໄມ້ທີ່ຖືກຄວບຄຸມ ບໍ່ໄດ້ມາຈາກປ່າທີ່ໄດ້ຖືກຮັບ ຈາກ FSC, ມັນຫຼຸດຜ່ອນ ຄວາມສ່ຽງ ຂອງວັດສະດຸ ທີ່ມາຈາກແຫຼ່ງ ທີ່ບໍ່ສາມາດຍອມຮັບໄດ້. '*

## vi. ຂໍ້ມູນເພີ່ມຕື່ມ/ບັນດາອົງການຈັດຕັ້ງທີ່ສໍາຄັນ

ສໍາລັບ ຂໍ້ມູນເພີ່ມຕື່ມ, ຫົວໜ່ວຍທຸລະກິດ ສາມາດ ອີງໃສ່ ຫົວໜ່ວຍການຈັດຕັ້ງ/ສະຖາບັນ ທີ່ຕັ້ງຢູ່ໃນ EU:

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| ສະຫະພັນການຄ້າໄມ້ ແຫ່ງທະວີບເອີຣົບ (ETTF) | **ສະຫະພັນການຄ້າໄມ້ ແຫ່ງທະວີບເອີຣົບ (ETTF)** ເປັນຕົວແທນ ແກ່ຜົນປະໂຫຍດຂອງ ຂະແໜງການໄມ້ ຢູ່ໃນຕະຫຼາດ EU ແລະ ຢູ່ຕ່າງປະເທດ. ສະມາຄົມ ສ່ວນໃຫຍ່ ແມ່ນກອມເອົາກິດຈະກໍາການຄ້າໄມ້ ແລະ ກຸ່ມຜະລິດຕະພັນຫຼັກຂອງ ໄມ້, ເຊັ່ນ ການນໍາເຂົ້າ ແລະ ສົ່ງອອກ ໄມ້ເນື້ອອ່ອນ, ໄມ້ເນື້ອແຂງ ແລະ ຜະລິດຕະພັນໄມ້ເປັນແຜ່ນ. ໃນປັດປະຈຸບັນ, ETTF ປະກອບດ້ວຍ ສະມາຊິກສະຫະພັນແຫ່ງຊາດ 15 ຄົນ ແລະ 5 ສະມາຄົມ, ທີ່ປະກອບດ້ວຍ ສາມບໍລິສັດເອກະລາດ ໃນປະເທດ ນໍອກແວ, ຊູແອດ ແລະ ໂມຣັອກໂກ, ສະຫະພັນຜູ້ນໍາເຂົ້າໄມ້ປາເກ ແຫ່ງ ທະວີບເອີຣົບ ແລະ ສະມາຄົມເຕັກນິກໄມ້ເຂດຮ້ອນສາກົນ. | ETTF<br>Am Weidendamm 1A<br>10117 Berlin,<br>Germany<br><br>ໂທ: +49 30 7262 58 00<br>ອີເມວ: goebel@ettf.info<br>ເວັບໄຊ: www.ettf.info |
| ສະຫະພັນ ອຸດສາຫະກໍາໄມ້ປາເກ ແຫ່ງທະວີບເອີຣົບ (FEP) | **ສະຫະພັນ ອຸດສາຫະກໍາໄມ້ປາເກ ແຫ່ງທະວີບເອີຣົບ (FEP)** ປະກອບມີ ສະຫະພັນ ໄມ້ປາເກແຫ່ງຊາດເອີຣົບ, ຜູ້ຜະລິດໄມ້ປາເກ ແລະ ຜູ້ສະໜອງ ໃຫ້ກັບອຸດສາຫະກໍາ. ມັນເປັນອົງການຫຼັກ ທີ່ເປັນຕົວແທນ ແລະ ປົກປ້ອງ ຜົນປະໂຫຍດ ຂອງ ອຸດສາຫະກໍາໄມ້ປາເກ ແຫ່ງທະວີບເອີຣົບ ໃນທຸກລະດັບທີ່ກ່ຽວຂ້ອງ. ກິດຈະກໍາຂອງ FEP ແມ່ນຕັ້ງຢູ່ໃນພື້ນທີ່ ສະໜອງ ວັດຖຸດິບ, ການຜະລິດ, ຕະຫຼາດ ແລະ ງານພາຍໃນ. ກິດຈະກໍາຕົ້ນຕໍ ຂອງ FEP ລວມມີ ການເກັບກໍາຂໍ້ມູນຕະຫຼາດ, ການຕິດຕາມກົດໝາຍ ແລະ ມາດຕະຖານ ທີ່ກ່ຽວຂ້ອງ ຂອງ ເອີຣົບ, ການສົ່ງເສີມການຕິດຕໍ່ ແລະ ການສື່ສານ ສ່ວນບຸກຄົນ ຂອງບັນດາມາຊິກ. | FEP<br>Rue Montoyer 24/box 20<br>1000 Brussels<br>Belgium<br><br>ໂທ: +32 2 556 25 87<br>ອີເມວ: info@parquet.net<br>ເວັບໄຊ: http://www.parquet.net/ |

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| **ອົງການກໍ່ສ້າງດ້ວຍໄມ້ ແຫ່ງເອີຣົບ (TCE)** | **ອົງການກໍ່ສ້າງດ້ວຍໄມ້ ແຫ່ງເອີຣົບ (TCE)** ແມ່ນອົງການຫຼັງຄາ ຂອງ ເອີຣົບ ທີ່ເຕົ້າໂຮມ ສະມາຄົມແຫ່ງຊາດ ທີ່ເປັນຕົວແທນໃຫ້ແກ່ ວິສາຫະກິດຂະໜາດກາງ ແລະ ນ້ອຍ ຢູ່ໃນການກໍ່ສ້າງດ້ວຍໄມ້. ໃນປັດຈຸບັນ, TCE ເປັນຕົວແທນໃຫ້ແກ່ 22,000 ບໍລິສັດ ທີ່ເປັນສະມາຊິກ ຜ່ານທາງ ການເປັນສະມາຊິກ ຂອງ ສະມາຄົມແຫ່ງຊາດໃນອີຕາລີ, ລຸກແຊມບວກ, ເຢຍລະມັນ, ສະຫວິດສະແລນ ແລະ ໂອຕຣິດ. ສະມາຄົມ ມີຈຸດປະສົງ ເພື່ອສົ່ງເສີມ ການກໍ່ສ້າງດ້ວຍໄມ້ ແລະ ສະຖາປັດຕະຍະກຳໄມ້ ຢູ່ໃນ ເອີຣົບ ແລະ ມີການເຄື່ອນໄຫວ ໃນການກຳນົດລະບຽບ ແລະ ມາດຕະຖານຕ່າງໆ ຂອງເອີຣົບ ຜ່ານທາງ ການເຂົ້າຮ່ວມ ໃນຄະນະກຳ ມະການມາດຕະຖານເອີຣົບ ທີ່ກ່ຽວຂ້ອງ. | TCE<br>Generalsekretariat<br>Kronenstraße 55–58<br>10117 Berlin<br>Germany<br><br>ໂທ: +49(30)20314-533<br>ອີເມວ: info@timber-construction.eu<br>ເວັບໄຊ: www.timber-construction.eu |
| **ສະມາພັນ ອຸດສາຫະກຳເຟີນີເຈີ ແຫ່ງທະວີບເອີຣົບ (EFIC)** | **ສະມາພັນ ອຸດສາຫະກຳເຟີນີເຈີ ແຫ່ງທະວີບເອີຣົບ (EFIC)** ແມ່ນເປັນຕົວແທນສຽງ ຂອງ ອຸດສາຫະກຳເຟີນີເຈີ ໃນສະຫະພາບເອີຣົບ. EFIC ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2006 ແລະ ເປັນຕົວແທນ 70% ຂອງຜົນກອບການທັງໝົດ ຂອງຂະແໜງການ ໃນລະດັບ EU. EFIC ສົ່ງເສີມ ທັດສະນະຂອງສະມາຊິກ ຂອງຕົນ ກັບ ສະຖາບັນການຈັດຕັ້ງ ສະຫະພາບເອີຣົບ ແລະ ໃຫ້ຄຳແນະນຳດ້ານນິຕິກຳ ແລະ ລະບຽບການ ແກ່ ສະມາຊິກຂອງຕົນ ກ່ຽວກັບ ການລິເລີ່ມນະໂຍບາຍ ຂອງ ສະຫະພາບເອີຣົບ. | EFIC<br>Rue Montoyer 24<br>BE-1000 Bruxelles<br>Belgium<br><br>ໂທ: +32 2 2870886<br>ເວັບໄຊ: www.efic.eu |
| **ສະພາຄຸ້ມຄອງປ່າໄມ້ (FSC)** | **ສະພາຄຸ້ມຄອງປ່າໄມ້ (FSC)** ສົ່ງເສີມ ການຄຸ້ມຄອງປ່າໄມ້ ຂອງໂລກ ທີ່ເໝາະສົມກັບສິ່ງແວດລ້ອມ, ມີປະໂຫຍດຕໍ່ສັງຄົມ ແລະ ມີຄວາມເປັນໄປໄດ້ ທາງດ້ານເສດຖະກິດ. FSC ເປັນຜູ້ບຸກເບີກ ການຍັ້ງຢືນປ່າໄມ້, ມີປະສົບການ 25 ປີ ໃນການຄຸ້ມຄອງປ່າໄມ້ແບບຍືນຍົງ. FSC ສົ່ງເສີມ ການຄຸ້ມຄອງປ່າໄມ້ ຂອງໂລກ ຢ່າງມີຄວາມຮັບຜິດຊອບ, ເຕົ້າໂຮມຜູ້ຊ່ຽວຊານ ຈາກຂົງເຂດສິ່ງແວດລ້ອມ, ເສດຖະກິດ ແລະສັງຄົມ. FSC ໄດ້ພັດທະນາຫຼັກການ 10 ຂໍ້ ແລະ 70 ມາດຖານ ທີ່ມີຜົນນຳໃຊ້ກັບ ປ່າທີ່ໄດ້ຮັບການຮັບຮອງຈາກ FSC ຢູ່ທົ່ວໂລກ. FSC ສາມາດພົບໄດ້ ຢູ່ໃນຫຼາຍລ້ານຜະລິດຕະພັນ ໃນທົ່ວໂລກ ແລະ ພວກມັນຕັ້ງໃຈຮັບປະກັນ ຜູ້ບໍລິໂພກວ່າ ພວກມັນຊ່ວຍຮັກສາປ່າໄມ້ ຂອງ ໂລກ. | FSC<br>Adenauerallee 134<br>53113 Bonn<br>Germany<br><br>ໂທ: +49 228 367 66 0<br>ອີເມວ: mailto:info@fsc.org<br>ເວັບໄຊ: www.fsc.org |

| ສະຖາບັນການຈັດຕັ້ງ | ລາຍລະອຽດ | ລາຍລະອຽດການຕິດຕໍ່ |
|---|---|---|
| **ແຜນງານຮັບຮອງ ການຍັ້ງຢືນປ່າໄມ້ (PEFC)** | **ແຜນງານຮັບຮອງ ການຍັ້ງຢືນປ່າໄມ້ (PEFC)** ຮັບຮອງ ລະບົບການຍັ້ງຢືນປ່າໄມ້ແຫ່ງຊາດ ທີ່ໄດ້ຮັບການພັດທະນາ ໂດຍຜ່ານຂະບວນການ ທີ່ມີຫຼາຍພາກສ່ວນເຂົ້າຮ່ວມ ແລະ ອອກແບບມາໃຫ້ເໝາະສົມກັບ ບູລິມະສິດ ແລະ ເງື່ອນໄຂ ຂອງທ້ອງຖິ່ນ. ນອກຈາກນັ້ນ, PEFC ຍັງພັດທະນາ ມາດຕະຖານສໍາລັບລະບົບຕ່ອງໂສ້ການຄຸ້ມຄອງດູແລ, ແລະ ເຄື່ອງໝາຍການຄ້າ ແລະ ຂໍ້ກໍານົດ ຫຼື ຄວາມຕ້ອງການ ຂອງອົງການຍັ້ງຢືນສໍາລັບລະບົບຕ່ອງໂສ້ການຄຸ້ມຄອງດູແລ, ທີ່ຖືກນໍາໃຊ້ ໂດຍຫຼາຍພັນບໍລິສັດ, ອົງການຍັ້ງຢືນ ແລະ ອົງການຮັບຮອງທົ່ວໂລກ. | PEFC<br>ICC Building C<br>Route de Pré-Bois 20<br>Case Postale 1862<br>1215 Geneva 15<br>Switzerland<br><br>ໂທ: +41 22 799 4540<br>ອີເມວ: info@pefc.org<br>ເວັບໄຊ: www.pefc.org |

# ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ I

## ລາຍລະອຽດ ເພີ່ມຕື່ມ ກ່ຽວກັບ ການຈັດສັນ ຂອງ ແຜນງານ GSP ທີ່ເປັນມາດຕະຖານ ແລະ ແຜນງານ GSP+

## ແຜນງານ GSP ທີ່ເປັນມາດຕະຖານ

### ເງື່ອນໄຂ ທີ່ຈະໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ

ບັນດາປະເທດກຳລັງພັດທະນາ ແມ່ນຈະໄດ້ຮັບ ຜົນປະໂຫຍດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ ແບບອັດຕະໂນມັດ ເມື່ອປະຕິບັດໄດ້ຕາມ 2 ເງື່ອນໄຂ ທີ່ກຳນົດໄວ້ຂ້າງລຸ່ມນີ້:

- ການຈັດປະເພດ ລະດັບລາຍຮັບ - ແມ່ນຕ່ຳກວ່າ ລາຍຮັບປານກາງ - ລະດັບສູງ ໂດຍ ທະນາຄານໂລກ; ແລະ
- ບໍ່ໄດ້ຮັບຜົນປະໂຫຍດ ຈາກ ການຈັດສັນອື່ນ ເຊັ່ນ ສັນຍາການຄ້າເສລີ ດ້ວຍສິດທິພິເສດ, ທີ່ໃຫ້ການເຂົ້າເຖິງ ຕະຫຼາດ EU ດ້ວຍສິດທິພິເສດ.

ບໍ່ຕ້ອງມີການຍື່ນຄຳຮ້ອງຕ່າງຫາກ ເພື່ອທີ່ຈະໃຫ້ໄດ້ຮັບຜົນປະໂຫຍດ ຈາກ ແຜນງານ GSP ທີ່ເປັນມາດຕະຖານ.

### ບັນດາຜະລິດຕະພັນ ທີ່ຖືກກວມເອົາ ແລະ ອັດຕາພາສີທີ່ ທີ່ຕອບສະໜອງ ພາຍໃຕ້ແຜນງານ GSP ທີ່ເປັນມາດຕະຖານ

ຜະລິດຕະພັນ ທີ່ ແຜນງານ GSP ທີ່ເປັນມາດຕະຖານ ມີຜົນນຳໃຊ້ ແມ່ນມີລາຍຊື່ ຢູ່ໃນເອກະສານຊ້ອນທ້າຍ V ຂອງ ລະບຽບການ GSP. ການຫຼຸດອັດຕາພາສີ ແມ່ນຂຶ້ນກັບ ປັດໃຈຫຼາຍຢ່າງ, ໂດຍສະເພາະແມ່ນວ່າ ຜະລິດຕະພັນໃດໜຶ່ງ ຖືວ່າມີຄວາມອ່ອນໄຫວ ຫຼື ບໍ່.[356]

ບັນດາຜະລິດຕະພັນ ທີ່ໄດ້ຕາມເງື່ອນໄຂ GSP ແມ່ນມີລາຍຊື່ ໃນກຸ່ມ ແລະ ປະກອບມີ ຄື:

- ບາງ ຜະລິດຕະພັນກະສິກຳ ແລະ ການປະມົງ;
- ກາເຟ ແລະ ຊາ;
- ຜະລິດຕະພັນເຄມີ;
- ທາດນ້ຳຕານສົດ ຟຼຸກໂຕດ (Fructose), ມໍໂຕດ (Maltose) ແລະ ທາດນ້ຳຕານປະເພດໃຊ້ຂະໜົມປັງ (Confectionary);
- ບາງເຄື່ອງດື່ມ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ;
- ຢາສູບ;
- ເຊື້ອໄຟແຮ່ທາດ;
- ຊີມັງ;
- ທາດປະສົມທີ່ມີກາກບອນ (Organic chemicals);
- ພຣາດສະຕິກ;
- ສ່ວນປະກອບຂອງໜັງ;
- ໄມ້ ແລະ ສ່ວນປະກອບຂອງໄມ້, ຖ່ານໄມ້;
- ແຜ່ນແພ (ລວມທັງ ໄໝ, ຂົນສັດ, ຝ້າຍ, ແລະ ເສັ້ນໃຍແຜທີ່ເຮັດຈາກພືດ, ເສັ້ນໃຍສັງເຄາະ);
- ເສື້ອຜ້າເຄື່ອງນຸ່ງຫົ່ມ;
- ເກີບ;
- ສ່ວນປະກອບ ຂອງຫີນ, ປູນ, ຊີມັງ ແລະ ເສັ້ນໃຍແກ້ວ;
- ຜະລິດຕະພັນເຊລາມິກ, ແກ້ວ ແລະ ສ່ວນປະກອບທີ່ມາຈາກແກ້ວ;
- ເຕົາປະຕິກອນນິວເຄຣຍ, ເຄື່ອງຕົ້ມ, ເຄື່ອງຈັກ ແລະ ເຄື່ອງກົນຈັກ ແລະ ຊິ້ນສ່ວນຂອງມັນ; ແລະ
- ເຄື່ອງຈັກ ແລະ ອຸປະກອນ ໄຟຟ້າ.

ປະລິມານການຫຼຸດອັດຕາພາສີ ພາຍໃຕ້ ການຈັດສັນ ຂອງ ແຜນງານ GSP ທີ່ເປັນມາດຕະຖານ ແມ່ນຂຶ້ນກັບ ຫຼາຍປັດໃຈ, ໂດຍສະເພາະແມ່ນວ່າ ຜະລິດຕະພັນ ຖືກພິຈາລະນາວ່າ ມີຄວາມອ່ອນໄຫວ ຫຼື ບໍ່. ເອກະສານຊ້ອນທ້າຍ V ຂອງ ລະບຽບການ GSP ກຳນົດລະອຽດວ່າ ຜະລິດຕະພັນ ຖືກພິຈາລະນາວ່າ ມີຄວາມອ່ອນໄຫວ ຫຼື ບໍ່. ຢູ່ໃນສະພາບເງື່ອນໄຂນີ້, ການຫຼຸດພາສີ ຖືກຈັດລຽງ ດັ່ງຕໍ່ໄປນີ້:

| | |
|---|---|
| ຜະລິດຕະພັນທີ່ອ່ອນໄຫວ | ພາສີສະເພາະ (ນອກເໜືອຈາກ ພາສີຕ່ຳສຸດ ແລະ ສູງສຸດ) ແມ່ນຈະຫຼຸດລົງ 30% ຫຼື |

| | |
|---|---|
| | *ພາສີຕາມອັດຕາສ່ວນມູນຄ່າ ຂອງສິນຄ້າ (Ad valorem duties) ແມ່ນຈະຫຼຸດລົງ* 3.5% ແລະ ໃນກໍລະນີ ຂອງ ຜະລິດຕະພັນ ແຜ່ນແພ ແລະ ເຄື່ອງນຸ່ງຮົ່ມ ແມ່ນຈະຫຼຸດລົງ 20%. |
| ຜະລິດຕະພັນທີ່ບໍ່ຫຼໍ່ແຫຼມ | ພາສີ ແມ່ນຈະຖືກໂຈະທັງໝົດ |

## ຂະແໜງການຜະລິດຕະພັນ – ການຫຼຸດພົ້ນ

ອີງຕາມມາດຕາ 8 (1) ຂອງ ລະບຽບການ GSP, ສິດທິພິເສດທາງພາສີ ແມ່ນຢູ່ພາຍໃຕ້ ການຫຼຸດພົ້ນຂອງຂະແໜງການ, ຊຶ່ງໝາຍຄວາມວ່າ ໂດຍທົ່ວໄປແລ້ວ, ສິດທິພິເສດ ຈະຖືກໂຈະໃນກໍລະນີທີ່ ມູນຄ່າສະເລ່ຍ ຂອງ ການນໍາເຂົ້າສິນຄ້າດັ່ງກ່າວຂອງສະຫະພາບເອີຣົບ ໃນສາມປີຕິດຕໍ່ກັນ, ເກີນ 57% ຂອງການນໍາເຂົ້າທັງໝົດ ຂອງ EU ຕໍ່ກັບ ຜະລິດຕະພັນດັ່ງກ່າວ ທີ່ມາຈາກ ໝົດທຸກປະເທດທີ່ໄດ້ຮັບຜົນປະໂຫຍດ ຈາກແຜນງານ GSP. ລະດັບອ້າງອີງພື້ນຖານ (Threshold) ນີ້ ແມ່ນຖືກກໍານົດໄວ້ 47.2% ກ່ຽວກັບສິນຄ້າແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ແລະ 17.5% ກ່ຽວກັບ ຕົ້ນໄມ້ ແລະ ພືດ, ໄຂມັນ ແລະ ນໍ້າມັນ, ແລະ ສານເຄມີບາງຊະນິດ.

